**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ
ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ

# ບົດແນະນຳດ້ານວິຊາການ

## ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ

**ເດືອນ ພະຈິກ 2009**

# ສາລະບານ


ພາກທີ I. ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ ........................................................ 10

ໝວດທີ 1. ຄຳນຳ ........................................................................................................................ 10

1.1. ຈຸດປະສົງ .................................................................................................................................. 10

1.2. ຫຼັກການຂອງການຍົກຍ້າຍຈັດສັນປະຊາຊົນ .................................................................................. 10

1.3. ໂຄງສ້າງຂອງປຶ້ມແນະນຳສະບັບນີ້ ................................................................................................ 11

1.4. ຄຳຂອບໃຈ ................................................................................................................................. 11

ໝວດທີ 2. ວົງຈອນຂະບວນການໂຄງການ ....................................................................................... 13

2.1 ບາດກ້າວສຳຄັນໃນຂະບວນການໂຄງການ .................................................................................... 13

2.1.1 ການສະເໜີໂຄງການ ................................................................................................................ 13

2.1.2 ການເຮັດບົດວິພາກເສດຖະກິດ-ເຕັກນິກ ເບື້ອງຕົ້ນ ...................................................................... 13

2.1.3 ການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ ແລະ ການອອກໂຄງການແບບລະອຽດ..14

2.1.4 ການຈັດຕັ້ງປະຕິບັດ ..................................................................................................................... 15

2.2 ການຍົກຍ້າຍຈັດສັນປະຊາຊົນໃນຂະບວນການໂຄງການ ................................................................... 15

2.2.1 ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ....................................................................................... 16

2.2.2 ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ .................................................................................. 17

2.2.3 ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ/ແຜນຍົກຍ້າຍ
ຈັດສັນປະຊາຊົນ ........................................................................................................................... 17

2.2.4 ແຜນພັດທະນາຊົນເຜົ່າ .................................................................................................................. 17

2.3 ຂະບວນການໂຄງການ ແລະ ຜົນໄດ້ຮັບຈາກການຍົກຍ້າຍຈັດສັນປະຊາຊົນ ....................................... 18

ພາກທີ II ການປະກອບເອກະສານສຳລັບການຍົກຍ້າຍຈັດສັນປະຊາຊົນ ............................................ 19

ໝວດທີ 3. ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ......................................................................... 19

3.1 ຈຸດປະສົງ ແລະ ຂອບເຂດ ............................................................................................................ 19

3.2 ຂໍ້ມູນຂ່າວສານທີ່ຕ້ອງການ ............................................................................................................ 20

3.3 ການວິໃຈໂຄງການ ........................................................................................................................ 20

3.4 ຄວາມສະເໝີພາບຍິງຊາຍໃນການຍົກຍ້າຍຈັດສັນປະຊາຊົນ ........................................................... 23

ໝວດທີ 4. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ........................................ 25
4.1 ນິຍາມ ແລະ ຂອບເຂດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ........................................ 25
4.1.1 ນິຍາມ ........................................ 25
4.1.2 ຂອບເຂດ ........................................ 26
4.2 ການຈັດຕັ້ງຂະບວນການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ........................................ 29

ໝວດທີ 5. ແຜນຍົກຍ້າຍຈັດສັນປະຊາຊົນ ........................................ 32
5.1 ຈຸດປະສົງ ແລະ ຂອບເຂດ ........................................ 32
5.2 ປະເພດຂອງແຜນການຍົກຍ້າຍຈັດສັນປະຊາຊົນ ........................................ 32
5.2.1 ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ ........................................ 32
5.2.2 ແຜນການຍົກຍ້າຍຈັດສັນປະຊາຊົນ ........................................ 33

ໝວດທີ 6. ແຜນພັດທະນາຊົນເຜົ່າ ........................................ 36
6.1 ຈຸດປະສົງແລະຂອບເຂດ ........................................ 36
6.2 ການສຳຫຼວດ ແລະ ຂໍ້ມູນຂ່າວສານທີ່ຈຳເປັນ ........................................ 36
6.3 ການຮ່າງທາງເລືອກໃນການພັດທະນາ ........................................ 37
6.4 ການປະກອບເອກະສານ/ແຜນພັດທະນາຊົນເຜົ່າ ........................................ 37

ພາກທີ III ການວາງແຜນການຍົກຍ້າຍຈັດສັນປະຊາຊົນ ........................................ 38
ໝວດທີ 7. ການສຳຫຼວດເພື່ອວາງແຜນການຍົກຍ້າຍຈັດສັນປະຊາຊົນ ........................................ 38
7.1 ການສຳຫຼວດເພື່ອການຍົກຍ້າຍຈັດສັນປະຊາຊົນ ........................................ 38
7.2 ການສຳຫຼວດພົນລະເມືອງ ແລະ ການກຳນົດວັນເລີ້ມຕົ້ນໂຄງການ ........................................ 38
7.2.1 ການສຳຫລວດພົນລະເມືອງເພື່ອກຳນົດວັນເລີ້ມຕົ້ນໂຄງການ ແລະການກຳນົດຜູ້ທີ່ມີສິດໄດ້ຮັບການທົດແທນຄ່າເສຍຫາຍ ........................................ 39
7.2.2 ການໃຊ້ເຄື່ອງໝາຍ ແລະ ການເກັບພາບຖ່າຍເປັນຫລັກຖານ ........................................ 39
7.3 ການຂຶ້ນບັນຊີຊັບສິນທີ່ຖືກກະທົບ ........................................ 40
7.4 ການສຳຫຼວດຂໍ້ມູນພື້ນຖານດ້ານ ເສດຖະກິດ-ສັງຄົມ ........................................ 40
7.5 ບັນຫາສຳຄັນໃນການລົງສຳຫຼວດຢູ່ພາກສະໜາມ ........................................ 41

7.5.1 ວັນເວລາ ແລະທຶນຮອນທີ່ຕ້ອງການສໍາລັບການສໍາຫລວດ .................................................... 41

7.5.2 ມັນມີຄວາມຈໍາເປັນຫລືບໍ່ໃນການປັບປຸງໃນກໍລະນີທີ່ມີການແກ່ຍາວເວລາ? .............................. 41

7.5.3 ການສໍາຫລວດພົນລະເມືອງ ແລະການຂຶ້ນບັນຊີຊັບສິນສໍາລັບໂຄງການ

ທີ່ມີການກໍ່ສ້າງຍາວເປັນແລວ ................................................................................................ 42

7.5.4 ປະຊາຊົນເຈົ້າພາບ ................................................................................................ 43

7.6 ຈັດຕັ້ງການສໍາຫຼວດ ............................................................................................ 43

7.6.1 ແບບຟອມ ແລະ ໃບສອບຖາມ ................................................................................ 43

7.6.2 ການປະກອບພະນັກງານ ......................................................................................... 43

7.6.3 ການຈັດຕັ້ງປະຕິບັດງານໃນພາກສະໜາມ ................................................................ 44

7.6.4 ການເຂົ້າລະຫັດ ແລະ ການຈົດບັນທຶກ ..................................................................... 44

7.6.5 ລະບົບການຄຸ້ມຄອງຂໍ້ມູນດ້ວຍຄອມພິວເຕີ ............................................................. 44

7.7 ແກ້ໄຂບັນຫາຄວາມສະເໝີພາບຍິງຊາຍໃນການເກັບກໍາຂໍ້ມູນ .............................................. 45

ໝວດທີ 8. ສິດທິໃນການໄດ້ຮັບການທົດແທນຄ່າເສຍຫາຍ ..................................................... 46

8.1 ປະເພດສິດທິໃນການໄດ້ຮັບການທົດແທນຄ່າເສຍຫາຍ ....................................................... 46

8.1.1 ສ່ວນບຸກຄົນ ............................................................................................................ 46

8.1.2 ກຸ່ມ ຫຼື ຊຸມຊົນ ........................................................................................................ 47

8.1.3. ອົງການຈັດຕັ້ງຂອງລັດ ............................................................................................ 47

8.2. ການກໍານົດປະເພດຜູ້ທີ່ຖືກກະທົບ ............................................................................ 47

8.2.1 ລະດັບຂອງຜົນກະທົບ ............................................................................................. 48

8.2.2 ປະເພດຜູ້ທີ່ຖືກກະທົບ ....................................................................................... 49

8.3. ປະເພດການໄດ້ຮັບສິດທົດແທນຄ່າເສຍຫາຍ ................................................................... 51

8.3.1 ການທົດແທນຄ່າເສຍຫາຍ ........................................................................................ 51

8.3.2 ການໃຫ້ການອຸດໜູນ ................................................................................................ 54

8.3.3. ການໃຫ້ການຊ່ວຍເຫຼືອໃນການຟື້ນຟູເສດຖະກິດ ....................................................... 55

8.3.4.ການໃຫ້ການຊ່ວຍເຫຼືອອື່ນໆ ລວມທັງປະເພດຂອງການຊ່ວຍເຫຼືອພິເສດໃຫ້ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ .................................................................................................................. 55

8.4. ຕາຕະລາງກ່ຽວກັບສິດທິທີ່ຈະໄດ້ຮັບການທົດແທນຄວາມເສຍຫາຍ ........................................ 56

8.5 ວິທີການປະເມີນການທົດແທນຄ່າເສຍຫາຍ ................................................................ 56

8.5.1. ການທົດແທນຄ່າເສຍຫາຍສຳລັບທີ່ດິນ ..................................................................... 56

8.5.2. ການທົດແທນຄ່າເສຍຫາຍສຳລັບສິ່ງປຸກສ້າງ ............................................................. 57

8.5.3. ການທົດແທນຄ່າເສຍຫາຍສຳລັບພືນລະປູກ, ຕົ້ນໄມ້ ແລະ ພືດຕ່າງໆ ................................ 60

8.5.4. ການທົດແທນຄ່າເສຍຫາຍສຳລັບຊັບສິນຄົງທີ່ອື່ນໆ ..................................................... 60

8.6 ເລື້ອງລະອຽດອ່ອນຂອງຄວາມສະເໝີພາບຍິງຊາຍ: ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຄວາມເໝາະສົມ ..................................................................................................... 60

ໝວດທີ 9. ການຟື້ນຟູເສດຖະກິດ ........................................................................................ 61

9.1. ຄຳນຳ .......................................................................................................................... 61

9.2 ຜູ້ໄດ້ຮັບສິດທິຕໍ່ການຟື້ນຟູເສດຖະກິດ .............................................................................. 62

9.3 ບັນຫາກ່ຽວກັບການວາງແຜນ ແລະ ຈັດຕັ້ງປະຕິບັດການຟື້ນຟູເສດຖະກິດ .................................. 62

9.4 ຍຸດທະສາດໃນການຟື້ນຟູ ແລະ ບັນຫາຕ່າງໆທີ່ປະກົດຂຶ້ນ ...................................................... 65

9.4.1 ການຟື້ນຟູລາຍຮັບໃນເຂດຊົນນະບົດ ............................................................................ 66

9.4.2 ການຟື້ນຟູລາຍຮັບໃນຂະແໜງການບໍ່ແມ່ນກະສິກຳ ............................................................ 67

9.4.3 ການຝຶກອົບຮົມດ້ານການປະກອບການ ......................................................................... 69

9.4.4 ການໃຫ້ສິນເຊື່ອຂະໜາດນ້ອຍ .................................................................................... 70

9.5 ຄວາມຮຽກຮ້ອງທາງດ້ານການຈັດຕັ້ງ ............................................................................... 70

9.6 ບົດບາດຂອງ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະຂະແໜງການເອກກະຊົນ ............................. 70

9.7. ວິທີການ ແລະ ບາດກ້າວໃນການວາງແຜນສຳລັບໃຫ້ການຊ່ວຍເຫຼືອດ້ານວຽກງານຟື້ນຟູ ............... 71

ໝວດທີ 10. ການຍົກຍ້າຍ ແລະ ການເອົາ “ດິນປ່ຽນດິນ” ........................................................ 73

10.1 ວິທີການທົ່ວໄປສຳລັບການຍົກຍ້າຍຈັດສັນ ........................................................................ 73

10.2 ມາດຖານສຳລັບການຍົກຍ້າຍຈັດສັນ ແລະການເອົາທີ່ດິນມາແທນ ........................................... 74

10.2.1 ມາດຖານທົ່ວໄປ ................................................................................................... 74

10.2.2. ມາດຖານສຳລັບການເອົາທີ່ດິນກະສິກຳມາປ່ຽນແທນ ..................................................... 75

10.2.3 ມາດຖານສຳລັບການເອົາທີ່ດິນມາປ່ຽນທີ່ດິນປຸກສ້າງ ..................................................... 76

10.3 ມາດຖານລວມ ສຳລັບການຂົນຍ້າຍເຮືອນ ແລະ ຫ້າງຮ້ານ ..................................................... 77

10.4 ຫຼັກການລວມ ແລະ ຂັ້ນຕອນການວາງແຜນການຍົກຍ້າຍຈັດສັນປະຊາຊົນ ................................ 78

10.4.1 ການຄັດເລືອກພື້ນທີ່ .................................................................................... 79

10.4.2 ມາດຖານສໍາລັບທີ່ດິນເອົາມາປ່ຽນແທນ ............................................................ 80

10.4.3 ປະເພດ ແລະ ມາດຖານສໍາລັບສິ່ງອໍານວຍຄວາມສະດວກຕ່າງໆ ................................... 80

10.4.4. ບັນຫາແລະມາດຕະການສະເພາະໃນການວາງແຜນການຍົກຍ້າຍຈັດສັນປະຊາຊົນ ............. 82

10.4.5. ຂັ້ນຕອນການວາງແຜນສໍາລັບເຂດຍົກຍ້າຍຈັດສັນ ................................................ 83

10.5. ການມີສ່ວນຮ່ວມຂອງມວນຊົນໃນວຽກງານການຍົກຍ້າຍຈັດສັນ ...................................... 84

ໝວດທີ 11. ການເຂົ້າຮ່ວມ ແລະການປຶກສາຫາລື ກັບມວນຊົນ ............................................ 85

11.1. ເຫດຜົນເພື່ອໃຫ້ຊຸມຊົນເຂົ້າຮ່ວມ ........................................................................ 85

11.2. ການປຶກສາຫາລື ແລະການເຂົ້າຮ່ວມໃນຖານະເປັນຂະບວນການທີ່ມີການຈັດຕັ້ງ ................... 85

11.3. ຈຸດປະສົງຂອງການໃຫ້ຂໍ້ມູນຂ່າວສານ ແລະການປຶກສາຫາລືກັບມວນຊົນ ........................ 86

11.4. ຄວາມສໍາຄັນຂອງການປຶກສາຫາລື ແລະການເຂົ້າຮ່ວມ ໃນການຍົກຍ້າຍຈັດສັນປະຊາຊົນ .......... 86

11.5. ການເຂົ້າຮ່ວມຂອງປະຊາຊົນໃນວົງຈອນໂຄງການ ..................................................... 87

ໝວດທີ 12. ການແກ້ໄຂຂໍ້ຂັດແຍ່ງ ............................................................................. 89

12.1.ຄໍານໍາ ....................................................................................................... 89

12.2. ກົນໄກແກ້ໄຂຂໍ້ຂັດແຍ່ງ .................................................................................... 89

12.2.1. ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງ ................................................................... 89

12.2.2. ຂະບວນການແກ້ໄຂຂໍ້ຂັດແຍ່ງ ......................................................................... 90

12.2.3. ວິທີການທີ່ດີ .............................................................................................. 91

ໝວດທີ 13. ການຕິດຕາມກວດກາ .............................................................................. 92

13.1. ຈຸດປະສົງ ຂອງການຕິດຕາມກວດກາ ..................................................................... 92

13.2. ການຊີ້ນໍາ ແລະການຕິດຕາມກວດກາ ...................................................................... 92

13.3. ການຕິດຕາມກວດກາ ພາຍໃນ ............................................................................. 95

13.3.1 ຕົວຊີ້ບອກຂອງການຕິດຕາມກວດກາ ................................................................ 95

13.3.2. ບົດລາຍງານການຕິດຕາມກວດກາ .................................................................... 96

13.4. ການຕິດຕາມກວດກາຈາກພາຍນອກ ........................................................................ 96

13.5. ການຕີລາຄາ ຫຼັງຈາກດໍາເນີນການຍົກຍ້າຍຈັດສັນປະຊາຊົນ ..................................................... 97

ໝວດທີ 14. ມູນຄ່າ ແລະງົບປະມານສໍາລັບການຍົກຍ້າຍຈັດສັນປະຊາຊົນ ........................................... 98

14.1. ຄ່າຍົກຍ້າຍຈັດສັນປະຊາຊົນ ........................................................................................ 98

14.1.1. ມູນຄ່າ ສໍາລັບການສຶກສາ ແລະລາຍງານ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ .............. 98

14.1.2. ຄາດຄະເນມູນຄ່າສໍາລັບການຍົກຍ້າຍຈັດສັນປະຊາຊົນ ..................................................... 100

14.2. ການຂຶ້ນງົບປະມານສໍາລັບການຍົກຍ້າຍຈັດສັນປະຊາຊົນ ................................................ 102

14.3. ການສະໜອງທຶນ ສໍາລັບການຍົກຍ້າຍຈັດສັນປະຊາຊົນ ................................................... 104

14.4. ປະສານງານກ່ຽວກັບຄວາມຮັບຜິດຊອບທາງດ້ານບໍລິຫານ ແລະການເງິນ ................................... 106

ໝວດທີ 15. ຕາຕະລາງຈັດຕັ້ງປະຕິບັດ ....................................................................................... 108

15.1.ບັນຫາຕົ້ນຕໍ ໃນການຈັດຕັ້ງປະຕິບັດ ................................................................................... 108

15.2. ກິດຈະກໍາ ກ່ອນການຈັດຕັ້ງປະຕິບັດ .................................................................................. 109

15.3. ກິດຈະກໍາຈັດຕັ້ງປະຕິບັດ ການຍົກຍ້າຍຈັດສັນປະຊາຊົນ ................................................... 110

ພາກທີ IV ການຈັດຕັ້ງປະຕິບັດການຍົກຍ້າຍຈັດສັນປະຊາຊົນ ................................................... 113

ໝວດທີ 16. ກົນໄກ ກ່ອນມີການຈັດຕັ້ງປະຕິບັດ ........................................................................ 113

16.1. ສະພາບການຈັດຕັ້ງປະຕິບັດ ............................................................................................ 113

16.1.1. ພະແນກສິ່ງແວດລ້ອມ ແລະສັງຄົມ/ ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ .......................... 114

16.1.2. ຄະນະກໍາມະການໄກ່ເກ່ຍຂໍ້ຂັດແຍ່ງ ............................................................................ 115

16.1.3. ອົງການປົກຄອງ ຂັ້ນແຂວງແລະຂັ້ນຮາກຖານ ................................................................ 115

16.1.4. ອົງການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລ, ອົງການຈັດຕັ້ງມະຫາຊົນ ແລະໜ່ວຍງານຂອງພາກ ເອກະຊົນ ................................................................................................................. 116

16.2. ປັບປຸງຄວາມສາມາດ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ............................................. 116

16.3. ການຄຸ້ມຄອງຂໍ້ມູນ, ຂັ້ນຕອນການລາຍງານ ........................................................................ 117

16.4. ການສ້າງຕັ້ງຂັ້ນຕອນຈັດຕັ້ງປະຕິບັດ ................................................................................. 118

16.4.1. ການຢັ້ງຢືນວ່າ ຜົນກະທົບ ແລະໄດ້ຮັບສິດທິດແທນຄ່າເສຍຫາຍ ........................................ 118

16.4.2. ປັບປຸງແຜນການຍົກຍ້າຍຈັດສັນປະຊາຊົນ ..................................................................... 118

16.4.3. ຂັ້ນຕອນ ຈ່າຍຄ່າທົດແທນຄ່າເສຍຫາຍ ........ 118

16.5. ສັນຍາວ່າຈ້າງອີງການຕິດຕາມກວດກາພາຍນອກ ........ 120

16.6. ຂໍ້ຕົກລົງທີ່ຖືກຕ້ອງຕາມກົດໝາຍ ........ 120

ໝວດທີ 17. ການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ........ 123

17.1. ຂັ້ນຕອນຂອງການດໍາເນີນການຍົກຍ້າຍຈັດສັນປະຊາຊົນ ........ 123

17.2. ຕາຕະລາງຈັດຕັ້ງປະຕິບັດ ........ 123

17.3. ການຕິດຕາມກວດກາແລະການຊີ້ນໍາ ........ 123

17.4. ທຶນຮອນ ........ 124

ພາກທີ V ບັນຫາສະເພາະຂະແໜງການໃນການຍົກຍ້າຍຈັດສັນປະຊາຊົນ ........ 125

ໝວດທີ 18 ຍົກຍ້າຍຈັດສັນປະຊາຊົນໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ ........ 125

18.1 ຄໍານໍາ ........ 125

18.2 ລັກສະນະຂອງການຍົກຍ້າຍຈັດສັນປະຊາຊົນ ແບບຍາວເປັນແລວ ........ 125

18.3. ການົດແລວຜົນກະທົບ ........ 126

18.4. ຜົນກະທົບຕໍ່ກິດຈະກໍາ ເສດຖະກິດ ແລະ ຜູ້ທີ່ລັກລອບເຂົ້າມາຢູ່ ........ 130

18.4.1. ພໍ່ຄ້າຊາວຂາຍຍ່ອຍແລະເຄື່ອນທີ່ ........ 130

18.4.2. ຜູ້ລັກລອບ ແລະບຸກລຸກເຂົ້າມາຢູ່ ........ 131

18.5. ບັນຫາສໍາຄັນທີ່ສຸດໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ ........ 132

18.5.1. ການປະສານງານແລະການປຶກສາຫາລື ກັບ ປະຊາຊົນ ........ 132

18.5.2. ການທົດແທນຄ່າເສຍຫາຍ ........ 133

18.5.3. ການຕິດຕາມກວດກາ ແລະການຊີ້ນໍາດູແລ ........ 134

18.6. ວິທີການທີ່ດີໃນການວາງແຜນແລະຈັດຕັ້ງປະຕິບັດ ........ 134

18.7. ສະຫຼຸບວຽກຕົ້ນຕໍ ........ 136

ໝວດທີ 19. ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການກໍ່ສ້າງຕົວເມືອງ ........ 138

19.1. ສະພາບຂອງການຍົກຍ້າຍຈັດສັນປະຊາຊົນ ໃນຕົວເມືອງ ........ 138

19.2. ຄວາມສໍາຄັນໃນການວາງແຜນເບື້ອງຕົ້ນ ........ 138

19.3. ຍົກຍ້າຍຈັດສັນຜູ້ລັກລອບເຂົ້າມາຢູ່ໃນຕົວເມືອງ ........ 140

19.4. ຜົນກະທົບໜ້ອຍໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວໃນຕົວເມືອງ ........................................ 142

19.5. ການຍ້າຍອອກຈາກໂຄງການ ໃນຕົວເມືອງ ........................................................................ 143

19.6. ການຟື້ນຟູ ເສດຖະກິດ ສຳລັບໂຄງການຕົວເມືອງ .......................................................... 146

ພາກທີ 20 ກຸ່ມທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ແລະການຍົກຍ້າຍຈັດສັນປະຊາຊົນ ............................ 149

20.1. ກຸ່ມທຸກຍາກ ........................................................................................................ 149

ເອກະສານຄັດຕິດ 1 - ເອກະສານຄັດຕິດ 34 ........................................................................ 154 - 234

# ພາກທີ I

## ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ

## ໝວດທີ 1 : ຄຳນຳ

### 1.1. ຈຸດປະສົງ

ຈຸດປະສົງຕົ້ນຕໍ ຂອງປຶ້ມແນະນຳສະບັບນີ້ ແມ່ນເພື່ອໃຫ້ທິດທາງລະອຽດແກ່ເຈົ້າຂອງໂຄງການ, ຂະແໜງການລັດ ແລະ ເອກກະຊົນ, ຕະຫຼອດທັງພາກສ່ວນທີ່ກ່ຽວຂ້ອງທັງໝົດ ກ່ຽວກັບ ການແກ້ໄຂບັນຫາສັງຄົມ ຢູ່ໃນໂຄງການພັດທະນາຕ່າງໆ ນັບຕັ້ງແຕ່ໄລຍະການວາງແຜນ ແລະ ການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ແຜນພັດທະນາຊົນເຜົ່າ ສຳລັບ ໂຄງການໃດທີ່ເຫັນວ່າມີຄວາມຈຳເປັນທີ່ຕ້ອງໄດ້ເຮັດ. ປຶ້ມແນະນຳນີ້ ຍັງໃຫ້ທິດທາງລະອຽດເພີ້ມເຕີມ ກ່ຽວກັບການດຳເນີນການປະເມີນຜົນກະທົບທາງອ້ອມຕໍ່ປະຊາຊົນຢູ່ໃນ ແລະ ນອກຂອບເຂດຂອງໂຄງການ. ນອກນີ້ ຍັງໄດ້ອະທິບາຍຢ່າງລະອຽດ ກ່ຽວກັບຂະບວນການ ແລະ ຂັ້ນຕອນຕ່າງໆ ທີ່ຈຳເປັນ ສຳລັບ ການເກັບກຳຂໍ້ມູນ, ການສຳຫຼວດ ແລະ ການກະກຽມເອກະສານຕ່າງໆ ທີ່ສອດຄ່ອງກັບເນື້ອໃນ ຂອງ ດຳລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ສະບັບເລກທີ 192/ນຍ ຊຶ່ງຕໍ່ໄປຈະເອີ້ນວ່າ **ດຳລັດ** 192. ປຶ້ມແນະນຳສະບັບນີ້ ໄດ້ກວມເອົາທຸກຂັ້ນຕອນຂອງຂະບວນການໂຄງການ ໂດຍເລີ້ມຕົ້ນ ຈາກຂັ້ນຕອນການສະເໜີຈົນເຖິງການຈັດຕັ້ງປະຕິບັດ ແລະ ການຕີລາຄາໂຄງການ ພາຍຫຼັງທີ່ໄດ້ສຳເລັດການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ.

ຢູ່ໃນ ສ ປປ ລາວ, ວິທີການ ແລະ ການດຳເນີນວຽກງານຕົວຈິງ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ ແມ່ນ ກຳລັງມີການວິວັດທະນາການ, ມີການດັດແກ້ ແລະ ປັບປຸງຢ່າງເປັນປະຈຳ ໂດຍອີງໃສ່ ຕາມປະສົບການທີ່ໄດ້ຮັບຫຼາຍຂຶ້ນ ຈາກໂຄງການພັດທະນາຕ່າງໆ. ຍ້ອນເຫດຜົນດັ່ງກ່າວ, ປຶ້ມແນະນຳສະບັບນີ້ ຈຶ່ງຖືເປັນເອກະສານທີ່ດີ ແລະ ຈະມີການປັບປຸງໃຫ້ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະເຊິ່ງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ (**ອຊນສ**) ຈະໃຊ້ທຸກຄວາມພະຍາຍາມ ເພື່ອປັບປຸງປຶ້ມແນະນຳສະບັບນີ້ໃນແຕ່ລະໄລຍະ ແລະ ອອກປຶ້ມແນະນຳສະບັບປັບປຸງ ຫາກເຫັນວ່າມີຄວາມຈຳເປັນ.

### 1.2. ຫຼັກການຂອງການຍົກຍ້າຍຈັດສັນປະຊາຊົນ

ປຶ້ມແນະນຳສະບັບນີ້ ໄດ້ຮ່າງຂຶ້ນໂດຍສອດຄ່ອງກັບເນື້ອໃນຂອງດຳລັດ ວ່າດ້ວຍ ການທົດແທນຄ່າເສຍ ຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ 192?? ແລະ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ຊຶ່ງປະ ກອບດ້ວຍ ຈຸດປະສົງ ແລະ ຫຼັກການຕ່າງໆ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ, ການໃຫ້ສິດທົດແທນ, ການໃຫ້ອຸດໜູນ ແລະ ການຟື້ນຟູເສດຖະກິດ, ການຕິດຕາມກວດກາ ແລະ ກົນໄກການຈັດຕັ້ງປະຕິບັດ.

### 1.3. ໂຄງສ້າງຂອງປຶ້ມແນະນຳ

ປຶ້ມແນະນຳສະບັບນີ້ ແບ່ງອອກເປັນ 5 ພາກໃຫຍ່. ພາກທີ I ປະກອບດ້ວຍ 2 ໝວດ. ໝວດທີ 1 ໄດ້ມີຄຳນຳ ແລະ ການອະທິບາຍ ກ່ຽວກັບຄວາມເປັນມາຂອງປຶ້ມແນະນຳສະບັບນີ້. ໝວດທີ 2 ໄດ້ອະທິບາຍ ກ່ຽວກັບວົງ ຈອນ

ຂອງຂະບວນການໂຄງການ ແລະ ວຽກງານຍົກຍ້າຍຈັດສັນປະຊາຊົນ ຊຶ່ງເກີດຂຶ້ນໃນວົງຈອນດັ່ງກ່າວ. ໝວດນີ້ ຍັງໄດ້ ສະເໜີ ກ່ຽວກັບ ບັນດາຜົນທີ່ຕ້ອງໄດ້ຮັບໃນແຕ່ລະຂັ້ນຕອນ ໃນຂະບວນການຂອງໂຄງການ.

ພາກທີ II ປະກອບມີ 4 ໝວດ (ໝວດ 3 ຫາ 6), ແຕ່ລະໝວດໄດ້ສະເໜີ ກ່ຽວກັບ ບັນດາຜົນທີ່ຕ້ອງການ ໄດ້ຮັບ ເພື່ອບັນລຸການແກ້ໄຂບັນຫາສັງຄົມໃນໂຄງການພັດທະນາຕ່າງໆ, ອະທິບາຍ ກ່ຽວກັບ ລະດັບຄາດໝາຍ ແລະ ຈຸດປະສົງຂອງແຕ່ລະຜົນທີ່ຕ້ອງໄດ້ຮັບຕົ້ນຕໍ ພ້ອມທັງສະເໜີໂຄງຮ່າງລວມເຊິ່ງປະກອບມີ: ການສຶກສາຜົນກະທົບຕໍ່ສັງ ຄົມເບື້ອງຕົ້ນ, ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ, ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ແຜນພັດທະນາຊົນເຜົ່າ.

ພາກທີ III ປະກອບດ້ວຍ 9 ໝວດ (ແຕ່ ໝວດທີ 7 ຫາ ໝວດທີ 15) ພາກນີ້ ແມ່ນເລັ່ງໃສ່ວຽກງານການ ວາງແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ບັນຫາທີ່ເກີດຂຶ້ນ ໂດຍເນັ້ນໜັກໃສ່ລັກສະນະຕ່າງໆຂອງການວາງ ແຜນ ການຍົກຍ້າຍຈັດສັນປະຊາຊົນ ແລະ ວຽກງານຕ່າງໆທີ່ຈຳເປັນ ເພື່ອສ້າງແຜນດັ່ງກ່າວ, ລວມທັງການສຳຫຼວດ ສຳລັບ ວາງແຜນການຍົກຍ້າຍຈັດສັນປະຊາຊົນ, ການໃຫ້ສິດທົດແທນຄ່າເສຍຫາຍ, ການຟື້ນຟູເສດຖະກິດ, ຍຸດທະສາດການ ຍົກຍ້າຍເຮືອນຊານ ແລະ ການທົດແທນຄ່າເສຍຫາຍແບບ "ດິນປ່ຽນດິນ", ການເຂົ້າຮ່ວມ ແລະ ການປຶກສາຫາລືກັບ ປະຊາຊົນ, ກົນໄກການແກ້ໄຂຂໍ້ຂັດແຍ່ງ, ການຕິດຕາມກວດກາ, ຄ່າໃຊ້ຈ່າຍ ແລະ ງົບປະມານ, ແລະ ການຈັດຕັ້ງປະ ຕິບັດວຽກຍົກຍ້າຍຈັດສັນປະຊາຊົນ.

ພາກທີ IV ປະກອບດ້ວຍ 2 ໝວດ (ໝວດທີ 16 ແລະ 17). ພາກນີ້ ໄດ້ເລັ່ງໃສ່ບັນຫາການ ຈັດຕັ້ງປະຕິບັດ ວຽກງານຍົກຍ້າຍຈັດສັນປະຊາຊົນ, ໃນນັ້ນ ໝວດທີ 16 ໄດ້ໃຫ້ລາຍລະອຽດ ກ່ຽວກັບ ການກະກຽມວຽກງານທີ່ຈຳເປັນ ກ່ອນລົງມືຈັດຕັ້ງປະຕິບັດໂຄງການພັດທະນາ ໂດຍແນໃສ່ຮັບປະກັນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການຍົກຍ້າຍຈັດ ສັນປະຊາຊົນ ໃຫ້ມີປະສິດທິພາບ, ໝວດທີ 17 ໄດ້ສະເໜີລາຍລະອຽດ ກ່ຽວກັບກິດຈະການທີ່ຈຳເປັນ ໃນໄລຍະຈັດ ຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ.

ພາກທີ V ປະກອບດ້ວຍ 3 ໝວດ(ໝວດທີ 18,19 ແລະ 20). ພາກນີ້ໄດ້ເລັ່ງໃສ່ບັນຫາສະ ເພາະຂອງ ຂະ ແໜງການ ໃນການວາງແຜນການ ແລະ ການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ, ໃນນັ້ນ ໝວດທີ 18 ໄດ້ ໃຫ້ລາຍລະອຽດ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ ສຳລັບ ໂຄງການພັດທະນາທີ່ມີການກໍ່ສ້າງຍາວເປັນແລວ, ໝວດທີ 19 ໄດ້ສຸມໃສ່ບັນຫາສະເພາະຂອງການຍົກຍ້າຍຈັດສັນປະຊາຊົນ ໃນໂຄງການຕົວເມືອງ, ໝວດທີ 20 ໄດ້ສັງ ລວມບັນຫາຫຼັກ ທີ່ກ່ຽວຂ້ອງກັບກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ໂດຍສະເພາະແມ່ນກຸ່ມຄົນທຸກຍາກ ແລະ ບັນດາ ມາດຕະການຫຼຸດຜ່ອນຜົນກະທົບຕ່າງໆ.

## 1.4. ຄຳຂອບໃຈ

ປຶ້ມແນະນຳສະບັບນີ້ ໄດ້ຮ່າງຂຶ້ນໂດຍສອດຄ່ອງກັບເນື້ອໃນ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ສະບັບເລກທີ 192/ນຍ, ລົງວັນທີ 7/7/05 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ດຳລັດດັ່ງກ່າວ ທີ່ອອກໂດຍ ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ(ອວຕສ) ໃນເມື່ອກ່ອນ ແລະ ນະ ໂຍບາຍແຫ່ງຊາດ ສະບັບເລກທີ561/ຄຜຮ, ລົງວັນທີ 7/6/05 ກ່ຽວກັບຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງຂະແໜງການໄຟຟ້ານ້ຳຕົກ ຢູ່ໃນ ສປປ ລາວ. ເນື້ອໃນ ຂອງເອກະສານສະບັບນີ້ ໄດ້ຄັດຈ້ອນ ແລະ ສັງລວມ ມາຈາກຫຼາຍແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ. ເອກກະສານຕົ້ນຕໍມີຄື: ປຶ້ມຄູ່ມື ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນແບບບໍ່ສະ ໝັກໃຈ ຂອງທະນາຄານພັດທະນາອາຊີ; ລາຍການກວດສອບບັນຫາຄວາມສະເໝີພາບດ້ານຍິງຊາຍ ແລະ ການຍົກ ຍ້າຍຈັດສັນປະຊາຊົນ ຂອງທະນາຄານພັດທະນາອາຊີ ສະບັບອອກໃນເດືອນ ກຸມພາ ປີ 2003; ເອກກະສານອ້າງອີງ

ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ ຂອງທະນາຄານໂລກ; ບົດແນະນຳ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ ທີ່ໄດ້ກະກຽມໃນໂຄງການຊ່ວຍເຫຼືອດ້ານວິຊາການຂອງທະນາຄານພັດທະນາອາຊີ (TA3133-LAO): "ການສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງວຽກງານສິ່ງແວດລ້ອມ ແລະ ສັງຄົມ ໃນ ສປປ ລາວ", ເດືອນກໍລະກົດ ປີ 2000; ແລະ ບົດແນະນຳ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ທີ່ທະນາຄານໂລກ ໄດ້ໃຫ້ການສະໜັບສະໜູນໃນໂຄງການ "ຍຸດທະສາດການພັດທະນາພະລັງງານໄຟຟ້ານ້ຳຕົກ ສຳລັບ ສປປ ລາວ", ເດືອນກັນຍາ 2000. ນອກນັ້ນ, ຂໍ້ມູນຂ່າວສານຕ່າງໆ ທີ່ນຳສະເໜີ ໃນບົດແນະນຳ ສະບັບນີ້ ກໍຍັງໄດ້ມາຈາກ ຫຼາຍໂຄງການພັດທະນາທີ່ດຳເນີນການຢູ່ໃນ ສປປ ລາວ ແລະ ປະເທດໃກ້ຄຽງ. ນອກນັ້ນ ຍັງໄດ້ ຍົກ ເອົາຕົວຢ່າງຈາກບົດຮຽນຂອງສາກົນ ທີ່ເຫັນວ່າແທດເໝາະກັບສະພາບຕົວຈິງຂອງ ສ ປປ ລາວ ມາໃສ່ ເພື່ອເຮັດໃຫ້ບົດແນະນຳສະບັບນີ້ ໄດ້ລະດັບມາດຕະຖານສາກົນ ແລະ ສອດຄ່ອງກັບຈຸດພິເສດສະເພາະ ແລະຄວາມເປັນຈິງຂອງປະເທດ.

# ໝວດທີ 2. ວົງຈອນຂອງຂະບວນການໂຄງການ

## 2.1 ບາດກ້າວສຳຄັນໃນຂະບວນການໂຄງການ

ໂຄງການພັດທະນາຕ່າງໆ ລ້ວນແຕ່ຜ່ານວົງຈອນຂອງຂະບວນການໂຄງການທີ່ໄດ້ກຳນົດໄວ້ ໂດຍເລີ່ມຕັ້ງແຕ່ຂັ້ນຕອນກະກຽມຈົນເຖິງຂັ້ນຕອນຈັດຕັ້ງປະຕິບັດ ຊຶ່ງໃນນັ້ນ ປະກອບມີ: ການສະເໜີໂຄງການ, ການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ, ການເຮັດບົດວິພາກເສດຖະກິດ-ເຕັກນິກ ແບບລະອຽດ ຫຼື ການອອກແບບໂຄງການເບື້ອງຕົ້ນ, ການອອກແບບໂຄງການແບບລະອຽດ ແລະ ການຈັດຕັ້ງປະຕິບັດໂຄງການ. ລະດັບຄວາມຊັດເຈນຂອງຂໍ້ມູນຂ່າວສານດ້ານສັງຄົມ, ເສດຖະກິດ, ສິ່ງແວດລ້ອມ ແລະດ້ານເຕັກນິກ ຈະແຕກຕ່າງກັນ ຈາກລັກສະນະລວມໆ ໃນຂັ້ນຕອນການສະເໜີໂຄງການ ໄປຈົນເຖິງ ລັກສະນະລະອຽດ ແລະສະເພາະເຈາະຈົງ ໃນຂັ້ນຕອນການເຮັດບົດວິພາກເສດຖະກິດ-ເຕັກນິກ ແລະ ການອອກແບບໂຄງການ. ການວາງແຜນ ແລະການດຳເນີນວຽກຍົກຍ້າຍຈັດສັນປະຊາຊົນ ແມ່ນຈັດຕັ້ງປະຕິບັດຄຽງຄູ່ກັນໄປ ກັບວຽກເຕັກນິກ ແລະວິສະວະກຳຂອງໂຄງການ ໂດຍອີງໃສ່ວົງຈອນຂອງຂະບວນການໂຄງການອັນດຽວກັນ. ກິດຈະການຕ່າງໆ ດັ່ງກ່າວນີ້ ໄດ້ສະຫຼຸບໄວ້ດັ່ງນີ້:

### 2.1.1 ການສະເໜີໂຄງການ

ບາດກ້າວທຳອິດໃນການວາງແຜນພັດທະນາໂຄງການ ແມ່ນ **ການສະເໜີໂຄງການ**. ໃນຂັ້ນຕອນນີ້ ຈະມີພຽງແຕ່ຂໍ້ມູນເບື້ອງຕົ້ນ ກ່ຽວກັບທີ່ຕັ້ງ ແລະ ຂອບເຂດຂອງໂຄງການເທົ່ານັ້ນ ແລະ ເຈົ້າຂອງໂຄງການສ່ວນຫຼາຍ ແມ່ນຍັງບໍ່ທັນສາມາດຮູ້ລະອຽດ ກ່ຽວກັບທີ່ຕັ້ງ ຫຼືເຂດແດນຂອງໂຄງການ. ໃນຂັ້ນຕອນນີ້, ເຈົ້າຂອງໂຄງການ ຈຳເປັນຕ້ອງໄດ້ເກັບກຳຂໍ້ມູນພື້ນຖານຈຳນວນໜຶ່ງ ກ່ຽວກັບຜົນກະທົບດ້ານລົບຕໍ່ສັງຄົມທີ່ອາດຈະເກີດຂຶ້ນຈາກໂຄງການ ແລະ ດຳເນີນການປະເມີນເບື້ອງຕົ້ນ ກ່ຽວກັບ ຜົນໄດ້ ແລະ ຜົນເສຍດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ.

ກິດຈະການຕົ້ນຕໍຕ້ອງໄດ້ດຳເນີນການໃນຂັ້ນຕອນການສະເໜີໂຄງການ ມີຄື:

- ຊອກຮູ້ຜົນກະທົບຕໍ່ສັງຄົມ ທີ່ອາດຈະເກີດຂຶ້ນ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງກັບໂຄງການ;
- ທົບທວນຄືນ ແລະ ວິໃຈຂໍ້ມູນຕ່າງໆ ທີ່ມີຢູ່;
- ກຳນົດລະດັບ ແລະ ປະລິມານຂໍ້ມູນຂ່າວສານ ທີ່ຕ້ອງການ ໃນຂັ້ນຕອນຕໍ່ໄປຂອງໂຄງການ;
- ກຳນົດເປົ້າໝາຍໃນການເກັບກຳຂໍ້ມູນເພື່ອການວາງແຜນ, ການຕິດຕາມກວດກາ ແລະ ການກະກຽມຮ່າງແຜນວຽກ

ໜ້າວຽກຕົ້ນຕໍ ໃນຂັ້ນຕອນພິຈາລະນາ ວຽກຍົກຍ້າຍຈັດສັນປະຊາຊົນນີ້ ແມ່ນການດໍາເນີນການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ເພື່ອເປັນພື້ນຖານສໍາລັບການປະເມີນຜົນເບື້ອງຕົ້ນ ກ່ຽວກັບຄວາມຈໍາເປັນທີ່ຕ້ອງເວນຄືນທີ່ດິນ ແລະ ຄວາມຕ້ອງການສໍາລັບການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ.

### 2.1.2 ການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ

ການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ ແມ່ນບາດກ້າວໜຶ່ງທີ່ເຮັດຕໍ່ຈາກການສະເໜີໂຄງການ ໂດຍມີເປົ້າໝາຍເພື່ອກໍານົດຈຸດປະສົງຂອງໂຄງການໃຫ້ລະອຽດ, ດໍາເນີນການສຶກສາທາງດ້ານເຕັກນິກສະເພາະ, ການວິໄຈທາງດ້ານເສດຖະກິດ ແລະ ການກະກຽມການອອກແບບໂຄງການເບື້ອງຕົ້ນ. ການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ ແມ່ນການພິຈາລະນາ ກ່ຽວກັບ ຂອບເຂດຂອງໂຄງການ ແລະ ທຶນຮອນ ທີ່ຕ້ອງການ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວ. ຂໍ້ມູນຂ່າວສານສະເພາະ ກ່ຽວກັບ ຂອບເຂດຂອງໂຄງການ ແລະເຂດທີ່ອາດຖືກກະທົບ ແມ່ນສາມາດກໍານົດໄດ້ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນນີ້ ເຖິງແມ່ນວ່າຂໍ້ມູນລະອຽດກ່ຽວກັບເຂດແດນຂອງໂຄງການ ຍັງບໍ່ທັນມີຄວາມຊັດເຈນກໍ່ຕາມ. ບົນພື້ນຖານ ຂໍ້ມູນທີ່ໄດ້ຈາກການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນນີ້ ແມ່ນສາມາດກໍານົດໄດ້ ກ່ຽວກັບ ຄວາມຮຸນແຮງ ຂະໜາດ?? ຂອງຜົນກະທົບ ທີ່ອາດຈະເກີດຂຶ້ນຈາກໂຄງການ. ໃນຂັ້ນຕອນນີ້ໄດ້ມີການກໍານົດ ຜູ້ມີສ່ວນຮ່ວມ ລວມທັງປະຊາຊົນທີ່ຖືກກະທົບ ແລະຜູ້ໄດ້ຮັບຜົນປະໂຫຍດ ພ້ອມທັງໄດ້ມີການເກັບກໍາຂໍ້ມູນຂ່າວສານສະເພາະ ກ່ຽວກັບລະດັບ ແລະ ຂະໜາດ ຂອງຜົນກະທົບຕໍ່ສັງຄົມທີ່ອາດເກີດຂຶ້ນ ໂດຍຜ່ານການລົງ ກວດກາພາກສະໜາມ, ການສໍາຫຼວດແລະສໍາພາດ ປະຊາຊົນທີ່ອາໄສຢູ່ໃນເຂດໂຄງການແລະບໍລິເວນໃກ້ຄຽງ. ເນື່ອງຈາກການເກັບກໍາ ແລະວິໄຈຂໍ້ມູນຂ່າວສານ ໄດ້ດໍາເນີນໄປຄຽງຄູ່ກັບການກະກຽມອອກແບບໂຄງການ ເບື້ອງຕົ້ນ, ວຽກງານນີ້ຈຶ່ງຕ້ອງໄດ້ມີການ ຕີລາຄາທາງເລືອກຕ່າງໆ ກ່ຽວກັບຮູບແບບຂອງໂຄງການ ເພື່ອຫຼີກລ້ຽງ ຫຼື ຫຼຸດຜ່ອນຜົນກະທົບທີ່ບໍ່ດີລົງໃຫ້ໜ້ອຍທີ່ສຸດ ໂດຍທັງເລືອກເຟັ້ນເອົາ ຮູບແບບທີ່ເໝາະສົມ ສໍາລັບການ ພັດທະນາໂຄງການ.

### 2.1.3 ການເຮັດບົດວິພາກ ເສດຖະກິດ-ເຕັກນິກ ແບບລະອຽດ ແລະ ການອອກແບບໂຄງການ ແບບລະອຽດ

ການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ ແລະ ແບບລະອຽດ ແມ່ນຂັ້ນຕອນທີ່ຕໍ່ເນື່ອງກັນ ເພື່ອກໍານົດວຽກເຕັກນິກຂອງໂຄງການໃຫ້ລະອຽດຕື່ມ. ເຈົ້າຂອງໂຄງການ ຫຼືອົງການທີ່ຖືກມອບໝາຍ ໃຫ້ເປັນຜູ້ເຮັດການສຶກສາດັ່ງກ່າວລະອຽດ ແມ່ນຕ້ອງໄດ້ເອົາອົງປະກອບ ແລະລັກສະນະຕ່າງໆຂອງໂຄງການ ລວມເຂົ້າກັນທັງໝົດ. ໃນຂັ້ນຕອນເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດນີ້ ເຂດແດນຂອງໂຄງການ ແມ່ນຈະໄດ້ຖືກກໍານົດອອກມາ ແລະມັນອາດຈະມີການດັດແກ້ຕື່ມ ຫຼັງຈາກສໍາເລັດການເຮັດບົດວິພາກເສດ ຖະກິດ-ເຕັກນິກແບບລະອຽດ, ຖ້າຈໍາເປັນຈະແມ່ນຢູ່ໃນຊ່ວງອອກແບບເຕັກນິກລະອຽດ. ວຽກເຕັກນິກຈະໄດ້ກໍານົດໃຫ້ສໍາເລັດ ແລະ ຈາກນັ້ນແມ່ນຈະໄດ້ກະກຽມ ສໍາລັບການອອກແບບເຕັກນິກລະອຽດ.

ຄຽງຄູ່ກັບການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ ແລະການກະກຽມການອອກແບບ ເຕັກນິກ, ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ຄວນຖືກຈັດຕັ້ງປະຕິບັດໃຫ້ສໍາເລັດ. ເພື່ອແກ້ໄຂບັນຫາການຍົກຍ້າຍຈັດສັນປະຊາຊົນ ແລະ ບັນຫາສັງຄົມອື່ນໆ ໃຫ້ໄດ້ດີ, ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ ຄວນໄດ້ສໍາເລັດ ການສໍາຫຼວດປະຊາກອນ ແລະ ສະພາບເສດຖະກິດ-ສັງຄົມ ຢ່າງລະອຽດ ພ້ອມທັງດໍາເນີນ ການຂຶ້ນບັນຊີຊັບສິນທີ່ຖືກກະທົບ ຊຶ່ງເປັນສ່ວນໜຶ່ງທີ່ມີຄວາມສໍາຄັນ ໃນການກະກຽມການຍົກຍ້າຍຈັດສັນປະຊາຊົນ. ໃນກໍລະນີມີຄວາມຈໍາເປັນ ໂຄງການຕ້ອງໄດ້ມີການເກັບກໍາຂໍ້ມູນເພີ່ມເຕີມກ່ຽວກັບຊົນເຜົ່າ. ຄວນໄດ້ມີການປຶກສາຫາລືກັບຜູ້ມີສ່ວນຮ່ວມ ຕະຫຼອດໃນໄລຍະກະກຽມການຍົກຍ້າຍຈັດສັນປະຊາຊົນ. ບັນຫາພື້ນຖານການສໍາຫຼວດ ແລະກວດກາລະອຽດໃນພາກສະ ໜາມ,

ເຈົ້າຂອງໂຄງການ ຕ້ອງໄດ້ມີການກະກຽມ ແລະ ປະກອບເອກະສານທີ່ສຳຄັນໃຫ້ສຳເລັດ ເຊັ່ນ: ແຜນການຍົກຍ້າຍຈັດສັນປະຊາຊົນ, ແຜນພັດທະນາຊົນເຜົ່າ ແລະ ບົດລາຍງານ ການສຶກສາຜົນກະທົບຕໍ່ສັງ ຄົມ ແບບລະອຽດ.

ຕາມຫລັກການລວມແລ້ວ, ລັດຖະບານແມ່ນຈະໄດ້ມີການຮັບຮອງເອົາໂຄງການ ໃນເມື່ອການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການໄດ້ສຳເລັດ ແລະ ຖັດມາ ກໍຈະແມ່ນການກະກຽມການອອກແບບທາງດ້ານວິສະວະກຳລະອຽດ ແລະເອກກະສານປະມູນໂຄງການ

### 2.1.4 ການຈັດຕັ້ງປະຕິບັດ

ຂັ້ນຕອນສຸດທ້າຍໃນວົງຈອນຂອງໂຄງການ ແມ່ນການຈັດຕັ້ງປະຕິບັດໂຄງການ. ແຕ່ໃນຂັ້ນຕອນນີ້ການຍົກຍ້າຍຈັດສັນປະຊາຊົນ ແມ່ນຖືວ່າເປັນວຽກບຸລິມະສິດສູງ. ການເວນຄືນທີ່ດິນ, ການຈ່າຍຄ່າທົດແທນ ແລະ ການຈັດສັນເຂດສຳລັບຍົກຍ້າຍປະຊາຊົນທີ່ຖືກກະທົບໄປຢູ່ ແມ່ນຕ້ອງໄດ້ດຳເນີນໃຫ້ສຳເລັດກ່ອນວຽກງານກໍ່ສ້າງໂຄງການຈະເລີ້ມຕົ້ນດຳເນີນການ, ຍົກເວັ້ນບາງໂຄງການທີ່ມີການກໍ່ສ້າງຍາວເປັນແລວ (ເຊັ່ນ: ໂຄງການກໍ່ສ້າງທາງ, ໂຄງການກໍ່ສ້າງສາຍສົ່ງໄຟຟ້າ,...???) ຊຶ່ງວຽກງານກໍ່ສ້າງໃນບາງສ່ວນຂອງໂຄງການ ອາດມີການເລີ້ມຕົ້ນໄດ້ເຖິງແມ່ນວ່າວຽກຍົກຍ້າຍຈັດສັນປະ ຊາຊົນ ຍັງດຳເນີນການຢູ່. ຜົນສຳເລັດຂອງການຈັດຕັ້ງປະຕິບັດໂຄງການແມ່ນຂຶ້ນຢູ່ກັບການເບີກຈ່າຍງົບປະມານໃຫ້ ທ່ວງທັນເວລາ, ມີການຈັດຕັ້ງ ມີລະບົບການຄຸ້ມຄອງ ແລະຊັບພະຍາກອນມະນຸດ ທີ່ມີປະສິດທິພາບ, ມີການປຶກສາຫາລືຢ່າງກ້ວາງຂວາງ ແລະ ມີການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບຈາກໂຄງການເປັນຢ່າງດີ ແລະ ທັງໄດ້ມີການທົດແທນຄ່າເສຍຫາຍ ຢ່າງທັນການ ແລະ ທັງມີການ ຈັດຕັ້ງ ການຕິດຕາມກວດກາກິດຈະກຳຕ່າງໆ ເປັນຢ່າງດີ.

## 2.2 ການຍົກຍ້າຍຈັດສັນປະຊາຊົນໃນຂະບວນການໂຄງການ

ການວາງແຜນແລະການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ແມ່ນເປັນກິດຈະກຳໜຶ່ງ ແມ່ນເປັນວຽກງານສຳຄັນໜຶ່ງ?? ທີ່ຕິດພັນກັບໂຄງການ ພັດທະນາ ແລະ ດຳເນີນໄປຄຽງຄູ່ກັນກັບການວາງແຜນ ແລະ ການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຕາມວົງຈອນຂອງ ໂຄງການ. ຕົວຢ່າງ: ສະເພາະກ່ຽວກັບຂັ້ນຕອນຕ່າງໆໃນຂະບວນການໂຄງການ ແລະ ກິດຈະກຳ ກໍຄືຜົນໄດ້ຮັບ ໃນວຽກ ຍົກຍ້າຍຈັດສັນປະຊາຊົນໄດ້ສະເໜີໃນຮູບ 1?? ແລະ ເນື້ອໃນສຳຄັນໄດ້ສະຫລຸບໃນວັກຕໍ່ໄປ.




ຮູບ 1: ວົງຈອນຂອງຂະບວນການໂຄງການ ແລະວຽກຍົກຍ້າຍຈັດສັນປະຊາຊົນ

## ວບົກກ ໍ ່ສ ້າງ ຄອນປ ່ບົນເປ ້ນວບົກງານພ ັດທະນາ

### 2.2.1 ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ

ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນກຳນົດບັນຫາ ແລະ ຜົນກະທົບຕໍ່ສັງຄົມທີ່ອາດເກີດຂຶ້ນ ຈາກໂຄງການ ແລະ ບັນດາຜູ້ທີ່ຈະມີສ່ວນຮ່ວມຕົ້ນຕໍ ຊຶ່ງດຳເນີນໃນຂັ້ນຕອນ ການສະເໜີໂຄງການ. ນອກນີ້ ກໍຍັງໄດ້ມີການວິໃຈຂໍ້ມູນຂ່າວສານທີ່ມີຢູ່ ເພື່ອຈັດປະເພດ, ຂະໜາດແລະລະດັບຂອງຜົນກະທົບ (ລວມທັງຜົນກະທົບດ້ານການເວນຄືນທີ່ດິນ) ແລະ ກຳນົດຄວາມຕ້ອງການທາງດ້ານເອກະສານຕ່າງໆ ທີ່ອາດມີຄວາມຈຳເປັນສຳລັບຂະບວນການໂຄງ

ການ. ອີງໃສ່ຜົນຂອງວຽກງານວິໃຈ, ແມ່ນຈະໄດ້ມີການຕັດສິນໃຈ ກ່ຽວກັບລະດັບການສຳຫຼວດ ແລະ ປະເພດຂໍ້ມູນ ຂ່າວສານທີ່ຕ້ອງການ ເພື່ອເອົາມາຂຽນ ບົດລາຍງານ ແລະ ຮ່າງແຜນວຽກສຳລັບເຮັດການສຶກສາຕ່າງໆໃນຂັ້ນຕໍ່ໄປ.

### 2.2.2 ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ

ບົນພື້ນຖານຂໍ້ແນະນຳ ຈາກຜົນການວິໃຈ ແລະ ບ່ອນໃດທີ່ໂຄງການ?? ອາດກໍ່ໃຫ້ເກີດຜົນກະທົບຕໍ່ສັງຄົມ ແລະ ປະຊາຊົນ ໂດຍທາງອ້ອມຕໍ່ປະຊາຊົນພາຍໃນເຂດໂຄງການ ຫຼື ໃນເຂດໃກ້ຄຽງ, ໂຄງການນັ້ນ ແມ່ນອາດມີຄວາມຈຳເປັນ ຈະຕ້ອງໄດ້ ດຳເນີນການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນຈະໄດ້ດຳເນີນ ໃນຂັ້ນຕອນ ເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນຂອງໂຄງການ. ການສຳຫຼວດ ແລະ ສຶກສາຜົນກະທົບ ~~ລາຍລະອຽດ ສຳລັບເຮັດການ ສຶກສາຜົນກະທົບຕໍ່ສັງຄົມ~~ ແບບລະອຽດ ແມ່ນການກຳນົດປະເພດ ແລະ ຂະໜາດ ຂອງຜົນກະທົບຕໍ່ສັງຄົມ, ການວິເຄາະ ຜູ້ທີ່ມີສ່ວນຮ່ວມ ແລະການຈັດຕັ້ງ. ການສຶກສາເຫຼົ່ານີ້ ແມ່ນຈະຊ່ວຍ ກຳ ນົດມາດຕະການຫຼຸດຜ່ອນຜົນກະທົບໃຫ້ເໝາະ ສົມ ແລະ ເປັນເຄື່ອງມື ທີ່ຈຳເປັນເພື່ອແກ້ໄຂບັນຫາສັງຄົມ ໃນ ໂຄງການ. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ໂດຍລວມແລ້ວ ແມ່ນກວມເອົາບັນຫາສິ່ງຄົມໃນລະ ດັບມະຫາພາກ ແລະ ທັງເປັນການວາງໂຄງຮ່າງ ເພື່ອເຮັດການສຳຫຼວດລະອຽດ ທັງການວາງແຜນ ແລະ ຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບໃນການແກ້ໄຂບັນຫາສະເພາະໃດໜຶ່ງ.

### 2.2.3 ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ/ ແຜນການຍົກຍ້າຍຈັດສັນປະຊາຊົນ

ບົດລາຍງານການເວນຄືນທີ່ດິນ ແລະການທົດແທນຄ່າເສຍຫາຍ ຫຼື ແຜນການຍົກຍ້າຍຈັດສັນປະຊາຊົນ, ອີງຕາມແຕ່ລະກໍລະນີ, ແມ່ນສ້າງຂຶ້ນໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການ. ເອກກະສານ ດັ່ງກ່າວ ສ້າງຂຶ້ນບົນພື້ນຖານຜົນຂອງການສຳຫຼວດພາກສະໜາມ ຊຶ່ງລວມເອົາທັງການສຳຫຼວດ ປະຊາກອນທີ່ຖືກກະທົບ ແລະ ການຂຶ້ນບັນຊີຊັບສິນທີ່ຖືກກະທົບພາຍໃນເຂດໂຄງການ. ສຳລັບໂຄງການທີ່ຍັງມີຂໍ້ມູນບໍ່ພຽງພໍ ກ່ຽວກັບ ການສະຫຼຸບເຂດແດນຂັ້ນສຸດທ້າຍຂອງໂຄງການ, ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ, ມັນຍິ່ງມີຄວາມຈຳເປັນຈະຕ້ອງໄດ້ປະກອບເອກກະສານດັ່ງກ່າວ ທີ່ເປັນພາກສ່ວນໜຶ່ງຂອງການກະກຽມໂຄງການ ແລະ ເພື່ອແນໃສ່ການຕົກລົງບັນຫາ ກ່ຽວກັບ ທາງດ້ານທຶນຮອນ.

ຕາມທຳມະດາ ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກົກແບບລະອຽດ ແລະ ການອອກແບບໂຄງການລະອຽດນັ້ນ ແມ່ນຈະບໍ່ມີການປ່ຽນແປງຫຍັງຫຼາຍ ກ່ຽວກັບມາດຖານການອອກແບບ. ເຖິງຢ່າງໃດກໍຕາມ, ໃນກໍລະນີທີ່ມີການປ່ຽນແປງອັນໃດອັນໜຶ່ງ ກ່ຽວກັບຕົວຊີ້ວັດຂອງການອອກແບບ ຊຶ່ງສິ່ງຜົນບວກ?? ຫຼື ລົບ??ຕໍ່ເຂດແດນໂຄງການ ແມ່ນມັນອາດມີ ຄວາມຈຳເປັນ ທີ່ຕ້ອງໄດ້ມີການດັດແກ້ ການວາງແຜນການຍົກຍ້າຍຈັດສັນປະຊາຊົນ. ສຳລັບຂໍ້ມູນຂ່າວສານຕ່າງໆໃນເອກກະສານເຫຼົ່ານີ້ ກໍຈະໄດ້ມີການປັບປຸງເພີ້ມເຕີມ ພາຍຫຼັງວຽກງານການອອກແບບໂຄງກການແບບລະອຽດໄດ້ສຳເລັດ ຫຼື ໃນເວລາຈັດຕັ້ງປະຕິບັດໂຄງການ. ໃນກໍລະນີທີ່ມີການປ່ຽນແປງໜ້ອຍ ກ່ຽວກັບຕົວຊີ້ວັດໃນການອອກແບບ, ການ ປ່ຽນແປງເພີ້ມເຕີມໃນແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນສາມາດ ເຮັດໄດ້ ໃນເວລາຈັດຕັ້ງປະຕິບັດວຽກຍົກຍ້າຍ ຈັດສັນປະຊາຊົນ ໂດຍບໍ່ຈຳເປັນຕ້ອງປັບປຸງບົດລາຍງານດັ່ງກ່າວ.

### 2.2.4 ແຜນພັດທະນາຊົນເຜົ່າ

ໃນກໍລະນີການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ໄດ້ກຳນົດ

ໃຫ້ເຫັນວ່າໂຄງການໄດ້ມີຜົນກະທົບອັນໃຫຍ່ຫຼວງ ຕໍ່ຊົນເຜົ່າບາງກຸ່ມ ແລະກໍໄດ້ສະເໜີໃຫ້ໂຄງການດັ່ງກ່າວ ເຮັດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແລະ ໃນນັ້ນ ຕ້ອງໄດ້ ສ້າງແຜນພັດທະນາຊົນເຜົ່າເປັນແຜນໜຶ່ງສະເພາະ. ເຈົ້າຂອງໂຄງການມີຄວາມຈຳເປັນຈະຕ້ອງໄດ້ເຮັດການສຳ ຫຼວດ ແລະ ການສຶກສາ ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການ. ວຽກສ້າງແຜນພັດທະ ນາຊົນເຜົ່າ ແມ່ນດຳເນີນໄປຄຽງຄູ່ກັບ ການວາງແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ແຜນພັດທະນາຊົນເຜົ່າກໍ ເປັນ ພາກສ່ວນໜຶ່ງສຳຄັນຂອງວຽກງານກະກຽມໂຄງການ.

## 2.3 ຂະບວນການໂຄງການ ແລະ ຜົນໄດ້ຮັບຈາກການຍົກຍ້າຍຈັດສັນປະຊາຊົນ

ບັນດາຜົນໄດ້ຮັບ ແລະ ວຽກງານສະເພາະຂອງການຍົກຍ້າຍຈັດສັນປະຊາຊົນ ທີ່ຮຽກຮ້ອງຕ້ອງການໃນແຕ່ລະ ຂັ້ນຕອນ ໃນວົງຈອນຂອງໂຄງການ ແມ່ນໄດ້ສະແດງອອກໃນຕາຕະລາງ 1 ລຸ່ມນີ້:

ຕາຕະລາງ 1: ວົງຈອນຂອງໂຄງການ ແລະຜົນໄດ້ຮັບຈາກການຍົກຍ້າຍຈັດສັນປະຊາຊົນ

| ອ/ດ | ຂັ້ນຕອນຂອງໂຄງການໂດຍທົ່ວໄປ | ວຽກງານ/ຜົນໄດ້ຮັບຈາກການຍົກຍ້າຍຈັດສັນປະຊາຊົນ |
|---|---|---|
| | ການສະເໜີໂຄງການ | ▪ ດຳເນີນການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ<br>▪ ກະກຽມຮ່າງແຜນວຽກ ສຳລັບແຜນການຍົກຍ້າຍຈັດສັນປະຊາຊົນ/ແຜນພັດທະນາຊົນເຜົ່າ/ການສຶກສາຜົນຕໍ່ສັງຄົມແບບລະອຽດ ຕາມຄວາມຈຳເປັນ |
| | ການເຮັດບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ | ▪ ດຳເນີນການສຳຫຼວດໃນພາກສະໜາມ (ການຂຶ້ນບັນຊີ, ຖານະທາງດ້ານເສດຖະກິດ-ສັງຄົມ) |
| | ການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ | ▪ ສ້າງແຜນການຍົກຍ້າຍຈັດສັນປະຊາຊົນ/ແຜນພັດທະນາຊົນເຜົ່າ /ການສຶກສາຜົນຕໍ່ສັງຄົມແບບລະອຽດ ຕາມຄວາມຈຳເປັນ |
| | ການຮັບຮອງເອົາໂຄງການ | ▪ ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ເອກະສານອື່ນໆ ໄດ້ຮັບການຮັບຮອງຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ອວຕສ |
| | ການອອກແບບໂຄງການລະອຽດ | ▪ ປັບປຸງແຜນການຍົກຍ້າຍຈັດສັນປະຊາຊົນ (ເປັນສະບັບສຸດທ້າຍ) ແລະ ເອກະສານອື່ນໆ ຫຼັງຈາກການອອກແບບໂຄງການລະອຽດ ໂດຍກຳນົດເຂດແດນໂຄງການສະເພາະ, ຖ້າຈຳເປັນ. |
| | ການຈັດຕັ້ງປະຕິບັດໂຄງການ | ▪ ການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນປະຊາຊົນ/ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ/ແຜນພັດທະນາຊົນເຜົ່າ<br>▪ ການຕິດຕາມກວດກາ ແລະ ການຊີ້ນຳ |

# ພາກທີ II

## ການປະກອບເອກກະສານສໍາລັບການຍົກຍ້າຍຈັດສັນປະຊາຊົນ

## ໝວດທີ 3. ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ

### 3.1 ຈຸດປະສົງ ແລະ ຂອບເຂດ

ດໍາລັດ 192 ໄດ້ເນັ້ນໜັກເຖິງຄວາມສໍາຄັນ ແລະຄວາມຈໍາເປັນ ໃນການສັງລວມເອົາບັນຫາສັງຄົມ ເຂົ້າໃນໂຄງການພັດທະນາ. ໃນໄລຍະເຮັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນຕ້ອງໄດ້ມີການເກັບກໍາ ແລະ ວິເຄາະຂໍ້ມູນກ່ຽວກັບບັນຫາສັງຄົມ ແລະ ຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ. ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ເປັນວຽກພື້ນຖານສໍາຄັນ ໃຫ້ແກ່ການສຶກສາຂັ້ນລະອຽດ ໃນໄລຍະກະກຽມໂຄງການ.

ນະໂຍບາຍ ແລະບັນຫາສັງຄົມຕົ້ນຕໍ ທີ່ຕິດພັນກັບການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ມີ: ບົດບາດຍິງຊາຍ, ການຍົກຍ້າຍຈັດສັນປະຊາຊົນ, ຊົນເຜົ່າ, ແລະ ກຸ່ມທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ລວມທັງກຸ່ມຄົນຜູ້ທຸກຍາກອື່ນໆ. ຈຸດປະສົງ ຂອງການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນເພື່ອປະເມີນຂອບເຂດ ຂອງບັນຫາສັງຄົມໃນໂຄງການ ແລະ ກໍານົດຄວາມຕ້ອງການ ເພື່ອເຮັດການສໍາຫຼວດລະອຽດ ແລະ ເປັນເອກກະສານທີ່ຕ້ອງໄດ້ປະກອບ ໃນໄລຍະກະກຽມໂຄງການ. ນອກນັ້ນ, ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນຍັງຕ້ອງໄດ້ມີການກໍານົດເພີ້ມເຕີມອີກວ່າມີບັນຫາສັງຄົມຫຫຍັງແດ່ ທີ່ສາມາດລວມເຂົ້າກັນໄດ້ ຫຼື ຈັດເຂົ້າໃນເອກກະສານດຽວສະເພາະ. ຕົວຢ່າງ, ນອກຈາກບັນຫາກ່ຽວກັບການຍົກຍ້າຍຈັດສັນປະຊາຊົນແລ້ວ, ຖ້າມີບັນຫາຕໍ່ຊົນເຜົ່າໃນໂຄງການ, ແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນກໍຈະໄດ້ມີການປະກອບທັງ 'ແຜນພັດທະນາຊົນເຜົ່າ' ເຂົ້ານໍາ ຊຶ່ງຈັດເປັນເອກກະສານຊ້ອນທ້າຍຂອງແຜນການນັ້ນ. ແຕ່ກົງກັນຂ້າມ, ຖ້າໂຄງການຫາກມີບັນຫາໜ້ອຍ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ແຕ່ພັດມີບັນຫາຫຼາຍກ່ຽວກັບຊົນເຜົ່າ, ໃນກໍລະນີນີ້ ເອກກະສານຕົ້ນຕໍ ຈະເປັນ "ແຜນພັດທະນາຊົນເຜົ່າ". ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນຈະໄດ້ຊີ້ແຈງໃຫ້ເຫັນວ່າ ໂຄງການມີຄວາມສາມາດຈະແກ້ໄຂຄວາມບໍ່ສະເໝີພາບຍິງຊາຍ ຫຼື ມີບັນຫາຄວາມສະເໝີພາບຍິງຊາຍຫຼາຍ ຫຼືມີຜົນກະທົບຕໍ່ ຄວາມສະເໝີພາບຍິງຊາຍຫຼາຍ ຊຶ່ງທັງໝົດນີ້ ແມ່ນເຫັນວ່າມີຄວາມຈໍາເປັນ ຈະຕ້ອງໄດ້ເຮັດການປະເມີນບັນຫາບົດບາດຍິງ-ຊາຍ ໃນໄລຍະເວລາການອອກແບບໂຄງການ ເພື່ອສ້າງແຜນດໍາເນີນງານສະເພາະ ກ່ຽວກັບ ບັນຫາດັ່ງກ່າວນີ້. ການລວມເອົາບັນຫາສັງຄົມເຂົ້າໃນເອກກະສານສະບັບດຽວກັນ ໄດ້ຖືວ່າເປັນການດີທີ່ສຸດ ໃນຂັ້ນຕອນກະກຽມໂຄງການ, ໂດຍສະເພາະການສໍາຫຼວດ, ການເກັບກໍາຂໍ້ມູນ ແລະ ການຈັດຕັ້ງປະຕິບັດໂຄງການ.

*ຄວາມຈໍາເປັນ ແລະ ກົນໄກເພື່ອສັງລວມເອົາບັນຫາດ້ານສັງຄົມເຂົ້າກັນ ແມ່ນຈະມີຄວາມແຕກຕ່າງກັນຕາມແຕ່ລະໂຄງການ ແລະຄວນແມ່ນນັກສັງຄົມວິທະຍາ ຫລື ຊ່ຽວຊານດ້ານວິຊາການຍົກຍ້າຍຈັດສັນປະຊາຊົນ ທີ່ເຮັດວຽກໃນໂຄງການເທົ່ານັ້ນ ເປັນຜູ້ປະເມີນບົນພື້ນຖານແຕ່ລະກໍລະນີ ໃນໄລຍະເຮັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ.*

### 3.2 ຂໍ້ມູນຂ່າວສານທີ່ຕ້ອງການ

ໃນຊ່ວງໄລຍະດໍາເນີນການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ຂໍ້ມູນຂ່າວສານທີ່ເກັບກໍາໄດ້ ຈາກການລົງຢ້ຽມຢາມພາກສະໜາມໃນເຂດເປົ້າໝາຍ ແລະ ການແລກປ່ຽນສົນທະນາກັບຜູ້ທີ່ກ່ຽວຂ້ອງຕົ້ນຕໍ ແມ່ນຈະເປັນພື້ນຖານສໍາລັບການຕີລາຄາປະເພດຂໍ້ມູນ ແລະ ຄວາມລະອຽດທີ່ຕ້ອງການ ຂອງການວິໄຈ ແລະ ການປະກອບເອກກະສານ ທີ່ຈໍາເປັນ ເພື່ອເຮັດໃຫ້ໂຄງການມີຄວາມຄືບໜ້າໄປ, ໄດ້ຮັບການປະກອບຄໍາເຫັນຂອງນັກວິຊາການ ແລະ ໄດ້ກໍານົດ

ຄວາມຕ້ອງການດ້ານຄວາມຊຳນິຊຳນານງານຕ່າງໆ ແລະ ເພື່ອສ້າງແຜນວຽກ ຮັບປະກັນຜົນສຳເລັດວຽກງານໃນໄລຍະກະກຽມໂຄງການ. ເພື່ອກຳນົດບັນຫາສັງຄົມໄດ້ຢ່າງຖືກຕ້ອງ, ລວມທັງບັນຫາສ່ຽງດ້ານສັງຄົມທີ່ອາດເກີດຂຶ້ນໄດ້ຈາກໂຄງການ ແລະ ທັງເພື່ອການປະເມີນປະເພດ ແລະລະດັບ ຂອງ ຂໍ້ມູນຂ່າວສານທີ່ຈຳເປັນ, ຈຶ່ງເຫັນວ່າ ຂອບເຂດຂອງການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນຕ້ອງໄດ້ມີການຂະຫຍາຍອອກຢ່າງກວ້າງຂວາງຕື່ມ ເພື່ອໃຫ້ໄດ້ຂໍ້ມູນເພີ້ມເຕີມ ກ່ຽວກັບລະດັບ ແລະ ຂະໜາດຂອງຜົນກະທົບທີ່ອາດເກີດຂຶ້ນກັບກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ຊຶ່ງອາດສາມາດຈັດປະເພດໂຄງການໄດ້ ແລະຮູ້ ປະເພດເອກກະສານທີ່ຕ້ອງການ. *<u>ໃນເອກກະສານຄັດຕິດ 1</u> ໄດ້ສະເໜີລາຍການຂໍ້ມູນຂ່າວສານຕ່າງໆທີ່ຕ້ອງໄດ້ເກັບກຳ ໃນການແກ້ໄຂບັນຫາການຍົກຍ້າຍຈັດສັນປະຊາຊົນ ແລະ ແບບຟອມສະຫຼຸບທີ່ຕ້ອງໄດ້ເຮັດພາຍ ຫຼັງສຳເລັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ.* ໃນລາຍການດັ່ງກ່າວ ແມ່ນໄດ້ກວມເອົາທັງບັນຫາຄວາມສ່ຽງຕ່າງໆດ້ານສັງຄົມ ຊຶ່ງອາດເກີດຂຶ້ນກັບຄອບຄົວທີ່ຖືກຍົກຍ້າຍເຮືອນຊານຍ້ອນໂຄງການ. "ຂໍ້ມູນຂ່າວສານທີ່ສັງລວມ" ດັ່ງທີ່ແນະນຳໃນ*<u>ເອກກະສານຄັດຕິດ 1</u>* ແມ່ນຈະຊ່ວຍໃຫ້ມີການຕັດສິນໃຈໄດ້ງ່າຍຂຶ້ນ ກ່ຽວກັບຄວາມຈຳເປັນຂອງການຊ່ວຍເຫຼືອດ້ານເຕັກນິກ ແລະ ທຶນຮອນ ເພື່ອດຳເນີນການສຶກສາເພີ້ມເຕີມ ໃນການກະກຽມໂຄງການ. ການຈັດສັນທຶນຮອນ ທີ່ຈຳເປັນລວມທັງພະນັກງານເພີ້ມກໍເປັນສິ່ງທີ່ຈຳເປັນ ເພື່ອໃຫ້ໄດ້ຊ່ຽວຊານດ້ານຍົກຍ້າຍຈັດສັນປະຊາຊົນເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນ ນັບຕັ້ງແຕ່ໄລຍະກະກຽມ ຈົນຮອດໄລຍະຈັດຕັ້ງປະຕິບັດໂຄງການ.

*ການເຮັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ຕ້ອງມີຊ່ຽວຊານດ້ານຍົກຍ້າຍຈັດສັນປະຊາຊົນ ຫຼື ຊ່ຽວຊານດ້ານສັງຄົມວິທະຍາ ທີ່ມີປະສົບການໃນວຽກງານຍົກຍ້າຍຈັດສັນປະຊາຊົນ ເຂົ້າຮ່ວມໃນທີມງານສຶກສາລວມທັງວຽກງານຕ່າງໆໃນໄລຍະກະກຽມ ແລະ ຈັດຕັ້ງປະຕິບັດໂຄງການ.*

## 3.3 ການວິໃຈບັນຫາສັງຄົມຂອງໂຄງການ

ຫຼັງຈາກເຮັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນແລ້ວ ແມ່ນຕ້ອງໄດ້ເຮັດການວິໃຈຂໍ້ມູນຂ່າວສານທີ່ເກັບກຳໄດ້ ເພື່ອກຳນົດປະເພດ, ລະດັບ ແລະ ຂະໜາດຂອງຜົນກະທົບ ແລະ ທັງກຳນົດລະດັບການສຳຫຼວດ ທີ່ຈຳເປັນ ໃນຂັ້ນຕອນຕໍ່ໄປຂອງໂຄງການ.

### *ການມີສ່ວນຮ່ວມຂອງມວນຊົນ*

ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນ ຕ້ອງໄດ້ມີການດຳເນີນ ຂະບວນການປຶກສາຫາລື ແລະ ການມີສ່ວນຮ່ວມຂອງມວນຊົນ. ໃນຂັ້ນຕອນເຮັດການວິໃຈໂຄງການ ຄວນໄດ້ມີການປະເມີນວ່າໂຄງການ ໄດ້ດຳເນີນການປຶກສາຫາລືຢ່າງເໝາະສົມແລ້ວບໍ ກັບພາກສ່ວນກ່ຽວຂ້ອງຕ່າງໆ ແລະ ປະຊາຊົນຜູ້ທີ່ຖືກກະທົບ ແລະ ໄດ້ພິຈາລະນາບັນດາຄຳຄິດຄຳເຫັນຕ່າງໆເຫຼົ່ານັ້ນແລ້ວບໍ. ໃນບັນດາຄຳຄິດຄຳເຫັນຕ່າງໆ ທີ່ໄດ້ຈາກການປຶກສາຫາລື ແມ່ນຄວນໄດ້ກວມລວມເອົາທັງບັນດາຂໍ້ແນະນຳຕ່າງໆ ເພື່ອປັບປຸງຂະບວນການດຳເນີນການມີສ່ວນຮ່ວມຂອງມວນຊົນ ໃນເມື່ອໂຄງການມີຄວາມຄືບໜ້າໄປ.

### *ລະດັບຂອງຜົນກະທົບຕໍ່ສັງຄົມ*

ຂໍ້ມູນທີ່ເກັບກຳໄດ້ຈາກການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແມ່ນຈະເປັນພື້ນຖານໃນການກຳນົດຄວາມຮຸນແຮງຂອງຜົນກະທົບ, ລະດັບ ແລະ ຄວາມລະອຽດຂອງການສຳຫຼວດໃນພາກສະໜາມ, ການສຳຫຼວດ ແລະການບັນທຶກຂໍ້ມູນຕ່າງໆ (ເຊັ່ນ: ແຜນການຍົກຍ້າຍຈັດສັນປະຊາຊົນ, ແຜນພັດທະນາຊົນເຜົ່າ, ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດໆ).

*ຜົນກະທົບ 'ຫຼາຍ' ແລະ 'ໜ້ອຍ"*

ໂດຍທົ່ວໄປແລ້ວ ມາດຖານທີ່ນຳໃຊ້ເພື່ອກຳນົດລະດັບຂອງຜົນກະທົບເຊັ່ນ: "ຫຼາຍ" ແລະ "ໜ້ອຍ" ແມ່ນອີງໃສ່ຈຳນວນປະຊາຊົນທີ່ຖືກກະທົບຈາກໂຄງການ. ສຳລັບໂຄງການທີ່ມີຜົນກະທົບຫຼາຍ ແມ່ນຕ້ອງໄດ້ມີການກະກຽມແຜນການຍົກຍ້າຍຈັດສັນປະຊາຊົນແບບລະອຽດຄົບຖ້ວນ. ສຳລັບໂຄງການທີ່ມີຜົນກະທົບໜ້ອຍ ແມ່ນຕ້ອງໄດ້ມີການກະກຽມແຜນການຍົກຍ້າຍຈັດສັນປະຊາຊົນແບບງ່າຍດາຍ ຫຼື ບົດລາຍງານການປະເມີນການເວນຄືນທີ່ດິນ ແລະ ຊັບສິນທີ່ຖືກເສຍຫາຍກໍຖືວ່າພຽງພໍແລ້ວ. ເຖິງຢ່າງໃດກໍຕາມ, ການຖືເອົາຈຳນວນປະຊາຊົນທີ່ຖືກກະທົບເປັນບ່ອນອີງນັ້ນ ແມ່ນຍັງຖືວ່າບໍ່ທັນໄດ້ມີການພິຈາລະນາ 'ລະດັບ' ຂອງຜົນກະທົບເທື່ອ. ສຳລັບໂຄງການທີ່ສ້າງຜົນກະທົບໜ້ອຍ ຕໍ່ປະຊາຊົນທີ່ມີຈຳນວນຫລວງຫລາຍເຫັນວ່າມີຄວາມຈຳເປັນຈະຕ້ອງໄດ້ເຮັດແຜນການຍົກຍ້າຍຈັດສັນປະຊາຊົນແບບລະອຽດຄົບຖ້ວນ. ກົງກັນຂ້າມ, ໂຄງການທີ່ສ້າງຜົນກະທົບຫຼາຍຕໍ່ຄອບຄົວທີ່ມີຈຳນວນໜ້ອຍ ຍ້ອນການສູນເສຍພື້ນຖານການຜະລິດທັງໝົດ ຫຼື ຊັບສິນຖືກກະທົບພຽງສ່ວນໃດສ່ວນໜຶ່ງ ແຕ່ສ່ວນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ອີກຕໍ່ໄປ ຊຶ່ງຕ້ອງໄດ້ຍົກຍ້າຍອອກໄປກໍລະນີນີ້ຈະໄດ້ເຮັດ ແຜນການຍົກຍ້າຍຈັດສັນປະຊາຊົນແບບງ່າຍດາຍ ກໍເຫັນວ່າບໍ່ແທດເໝາະ. *ດັ່ງນັ້ນ, ມາດຖານການວິໃຈ ຈຶ່ງຕ້ອງໄດ້ມີການພິຈາລະນາ ບໍ່ພຽງແຕ່ຂະໜາດຜົນກະທົບເທົ່ານັ້ນ (ເຊັ່ນ: ຈຳນວນປະຊາຊົນທີ່ຖືກກະທົບ, ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້, ປະຊາຊົນບັນດາເຜົ່າ) ແຕ່ຕ້ອງໄດ້ ພິຈາລະນາເຖິງລະດັບຂອງຜົນກະທົບອີກ (ເຊັ່ນ: ຄວາມຮຸນແຮງ ຫລື ຄວາມເບົາບາງ).*

*ຜົນກະທົບຕໍ່ຊັບສິນດ້ານວັດທະນະທຳ ແລະ ສິ່ງປຸກສ້າງທາງສາດສະໜາ*

ໃນກໍລະນີທີ່ມີຜົນກະທົບໃດໜຶ່ງ ຕໍ່ພື້ນຖານດ້ານວັດທະນະທຳ ແລະ ສິ່ງປຸກສ້າງທາງສາດສະໜາ ເຊັ່ນ: ວັດວາອາຮາມ, ສິ່ງສັກສິດ ແລະ ອື່ນໆ, ເຈົ້າຂອງໂຄງການຕ້ອງໄດ້ພະຍາຍາມທົບທວນຕົວຊີ້ວັດຂອງການອອກແບບ ເພື່ອຫຼີກລ້ຽງຜົນກະທົບ ທີ່ຈະເກີດຂຶ້ນຕໍ່ໂຄງສ້າງດັ່ງກ່າວ. ການປຶກສາຫາລືກັບ ຜູ້ທີ່ຖືກກະທົບຈາກໂຄງການຄວນແນໃສ່ການຍາດແຍ່ງ ເອົາຄວາມຄິດຄວາມເຫັນຂອງເຂົາເຈົ້າ ກ່ຽວກັບຜົນກະທົບ ທີ່ອາດ ເກີດຂຶ້ນຕໍ່ສິ່ງດັ່ງກ່າວ.

ເພື່ອເປັນທິດທາງໃນການຈັດໂຄງການ ໃຫ້ເປັນໄປຕາມປະເພດທີ່ໄດ້ຈັດສຳລັບສິ່ງແວດລ້ອມ ເຈົ້າຂອງໂຄງການອາດນຳໃຊ້ມາດຖານສຳຄັນດັ່ງຕໍ່ໄປນີ້:

<u>ບັນຫາສັງຄົມປະເພດ 1</u> : ເປັນໂຄງການທີ່ມີຜົນກະທົບຕໍ່ປະຊາຊົນທີ່ມີຈຳນວນຫຼວງຫຼາຍຄື:

ກ. ຈຳນວນ 200 ຄົນ (40-50 ຄອບຄົວ) ຫຼື ຫຼາຍກວ່ານັ້ນ[1] ທີ່ໄດ້ຮັບຜົນກະທົບຮຸນແຮງ ເນື່ອງຈາກ:

i. > 20% ໄດ້ສູນເສຍພື້ນຖານການຜະລິດ ຫຼືບ່ອນໃດທີ່ການສູນເສຍຕ່ຳກວ່າ 20% ແຕ່ສ່ວນທີ່ຍັງ ເຫຼືອບໍ່ສາມາດນຳໃຊ້ທາງເສດຖະກິດໄດ້ອີກຕໍ່ໄປ;

ii. ຖືກຍົກຍ້າຍເນື່ອງຈາກການສູນເສຍທີ່ດິນ, ສິ່ງປຸກສ້າງ;

iii. ສູນເສຍລາຍຮັບ ແລະ ວຽກເຮັດງານທຳຕະຫຼອດໄປ.

ຂ. ຈຳນວນ 200 ຄົນ (40-50 ຄອບຄົວ) ຫຼື ຫຼາຍກວ່ານັ້ນ ທີ່ປະກອບດ້ວຍຈຳນວນກຸ່ມຄົນໃນປະເພດລຸ່ມນີ້ ແລະໄດ້ຮັບຜົນກະທົບຮຸນແຮງ[2] ຈາກໂຄງການ:

---

[1] ບ່ອນໃດທີ່ມີປະຊາຊົນຫຼາຍກວ່າ 200 ຄົນ ໄດ້ຮັບຜົນກະທົບຈາກໂຄງການ ແຕ່ຜູ້ທີ່ຖືກຜົນກະທົບ ຮຸນແຮງມີໜ້ອຍກວ່າ 200 ຄົນ, ໂຄງການນັ້ນ ອາດຖື ວ່າເປັນໂຄງການປະເພດ 2.

[2] ການສູນເສຍລາຍຮັບ ເນື່ອງຈາກມີຂໍ້ຈຳກັດໃນການນຳໃຊ້ຊັບພະຍາກອນຂອງຊຸມຊົນ, ການສູນເສຍສາຍພົວພັນ ພາຍໃນຊຸມຊົນ, ໄດ້ມີການຍົກຍ້າຍ ແລະ ມີຂໍ້ຈຳກັດຕໍ່ຮີດຄອງປະເພນີທາງດ້ານວັດທະນະທຳ.

- ຊົນເຜົ່າ[3];
- ຜູ້ທີ່ອາໄສຢູ່ດິນລັດແບບບໍ່ໄດ້ຮັບອະນຸຍາດ ແລະ ພວກທີ່ມີກຳມະສິດບໍ່ໝັ້ນຄົງ;
- ຄົນພື້ນເມືອງ (ຄົນດັ້ງເດີມ);
- ກຸ່ມຜູ້ທຸກຍາກ;
- ຄອບຄົວທີ່ມີແມ່ຮ້າງນາງໝ້າຍເປັນຫົວໜ້າຄອບຄົວ.

ໂຄງການທີ່ຖືກຈັດເປັນປະເພດ 1 ແມ່ນຕ້ອງໄດ້ເຮັດແຜນການຍົກຍ້າຍຈັດສັນປະຊາຊົນແບບລະອຽດຄົບຖ້ວນ ຫຼື ແຜນພັດທະນາຊົນເຜົ່າຕ່າງຫາກ ຂຶ້ນກັບແຕ່ລະກໍລະນີ. ຜົນກະທົບໂຄງການທີ່ຈັດຢູ່ໃນໂຄງ ການ ປະເພດ 1 ຖືວ່າ "ຫຼາຍ".

<u>ບັນຫາສັງຄົມປະເພດ 2 </u>: ແມ່ນໂຄງການທີ່ມີຜົນກະທົບໜ້ອຍ:

ຜົນກະທົບມີໜ້ອຍ[4] ເຖິງແມ່ນວ່າຈຳນວນຜູ້ທີ່ຖືກກະທົບຈາກໂຄງການຈະມີຫຼາຍກວ່າ 200 ຄົນກໍຕາມ ໃນກໍລະນີທີ່ມີການສູນເສຍພື້ນຖານການຜະລິດ ຫຼື ສຳລັບກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້.

ສຳລັບໂຄງການປະເພດ 2 ແມ່ນຮຽກຮ້ອງພຽງແຕ່ ໃຫ້ເຮັດແຜນການຍົກຍ້າຍຈັດສັນປະຊາຊົນແບບງ່າຍດາຍ ຫຼື ເຮັດບົດລາຍງານການປະເມີນການເວນຄືນທີ່ດິນ ແລະ ຊັບສິນທີ່ຖືກເສຍຫາຍເທົ່ານັ້ນ. ຜົນກະທົບສຳລັບໂຄງການທີ່ຈັດຢູ່ໃນໂຄງການປະເພດ 2 ຖືວ່າມີພຽງ "**ເລັກໜ້ອຍ**" ຫຼື "ບໍ່ຫຼາຍ".

<u>ບັນຫາສັງຄົມປະເພດ 3</u>: ເປັນໂຄງການທີ່ບໍ່ໄດ້ສ້າງຜົນກະທົບ ຕໍ່ການເວນຄືນຊັບສິນ, ການຍົກຍ້າຍຈັດສັນປະຊາຊົນ, ການສູນເສຍລາຍໄດ້ ແລະ ວຽກເຮັດງານທຳ, ການຈຳກັດການນຳໃຊ້ຊັບພະຍາກອນທຳມາຫາກິນຂອງຊຸມຊົນ, ການພົວພັນພາຍໃນຊຸມຊົນ ແລະ ການຈຳກັດຮີດຄອງປະເພນີ ທາງດ້ານວັດທະນະທຳຂອງກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ແລະ/ຫຼື ຊົນເຜົ່າ. ໂຄງການທີ່ຈັດເປັນໂຄງການປະເພດນີ້ ແມ່ນບໍ່ຈຳເປັນຕ້ອງໄດ້ດຳເນີນການສຶກສາບັນຫາການຍົກຍ້າຍຈັດສັນປະຊາຊົນ.

### *ການສ້າງ ແລະ ການທົບທວນຄືນ ແຜນວຽກ*

ອີງໃສ່ການລົງສຳຫຼວດເກັບກຳຂໍ້ມູນ ແລະ ການຂຶ້ນບັນຊີຄວາມເສຍຫາຍ, ເຈົ້າຂອງໂຄງການຕ້ອງໄດ້ກະກຽມບົດລາຍງານຕ່າງໆ ເຊັ່ນ: ບົດລາຍງານການສຶກສາຜົນກະທົບຕສັງຄົມແບບລະອຽດ, ບົດລາຍງານການປະເມີນການເວນຄືນທີ່ດິນ ແລະ ຊັບສິນທີ່ຖືກເສຍຫາຍ, ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ແຜນພັດທະນາຊົນເຜົ່າ. ພ້ອມນັ້ນ ເຈົ້າຂອງໂຄງການກໍຈະຕ້ອງໄດ້ສ້າງແຜນວຽກ. ອົງການຮັບຜິດຊອບໂຄງການ ແມ່ນຈະເປັນຜູ້ພິຈາລະນາແຜນວຽກລວມທັງງົບປະມານ ສຳລັບການສ້າງບົດລາຍງານຕ່າງໆທີ່ໄດ້ກ່າວມາເທິງນັ້ນ.

---

[3] ຖ້າຢູ່ໃນໂຄງການໜຶ່ງ, ຊົນເຜົ່າໝົດທັງເຜົ່າ ແລະ/ຫຼື ທັງໝົດບ້ານໄດ້ຮັບຜົນກະທົບ, ເຖິງວ່າຈະມີຈຳນວນ ໜ້ອຍ ກວ່າ 200 ຄົນກໍຕາມ, ໂຄງການນີ້ ຕ້ອງຖືວ່າເປັນໂຄງການປະເພດ 1 ແລະຕ້ອງໄດ້ເຮັດແຜນພັດທະນາຊົນເຜົ່າ.

[4] ໂຄງການທີ່ມີການກໍ່ສ້າງຍາວເປັນແລວເຊັ່ນ: ໂຄງການກໍ່ສ້າງທາງ, ກໍ່ສ້າງແລວສາຍສົ່ງໄຟຟ້າ... ສ່ວນຫຼາຍຈະນອນໃນປະເພດນີ້. ໃນກໍລະນີມີສ່ວນກ່ຽວຂ້ອງກັບຊົນເຜົ່າ, ຖ້າປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການຫາກກະຈາຍຢູ່ໃນບໍລິເວນທີ່ກວ້າງຂວາງ (ຕົວຢ່າງ ຕະຫຼອດເສັ້ນທາງ), ໂດຍບໍ່ໄດ້ຢູ່ເປັນບ້ານ ແລະກໍເຊື່ອມໂຍງ ເຂົ້າກັບ ກຸ່ມອື່ນທີ່ມີຖານະທາງດ້ານເສດຖະກິດແລະສັງຄົມດີແດ່, ເວລານັ້ນຜົນກະທົບກໍບໍ່ຖືວ່າ ຮຸນແຮງ ເຖິງ ແມ່ນວ່າຈຳນວນຜູ້ໄດ້ຮັບຜົນກະທົບຈະຫຼາຍກວ່າ 200 ຄົນກໍຕາມ. ແຕ່ຢ່າງໃດກໍຕາມ, ອາດຈຳເປັນຕ້ອງສ້າງ 'ແຜນພັດທະນາຊົນເຜົ່າ' ໃຫ້ເປັນສ່ວນໜຶ່ງຂອງແຜນການຍົກຍ້າຍຈັດສັນປະຊາຊົນ.

*ຫຼັງຈາກການວິໃຈໂຄງການ, ເຈົ້າຂອງໂຄງການ ຕ້ອງໄດ້ດຳເນີນການສຶກສາພາກສະໜາມອັນຈຳເປັນ ແລະ ສຳຫຼວດຂໍ້ມູນພື້ນຖານ ຕາມຜົນການວິໃຈໂຄງການທີ່ໄດ້ກຳນົດອອກມາ. ກ່ອນທີ່ຈະລົງດຳເນີນວຽກ ພາກສະໜາມ, ເຈົ້າຂອງໂຄງການຕ້ອງໄດ້ຈັດຕັ້ງຂະບວນການປະຊາສຳພັນ ເພື່ອອະທິບາຍເຖິງອົງປະກອບຕ່າງໆຂອງໂຄງການ, ປະເພດຂອງຜົນກະທົບ, ເນື້ອໃນ ແລະ ກຳນົດເວລາໃນການສຳຫຼວດພົນລະເມືອງ ແລະ ການຂຶ້ນບັນຊີ ຫຼື ການສຳຫຼວດ ເພື່ອໄດ້ຂໍ້ມູນພື້ນຖານອື່ນໆ.*

## 3.4 ຄວາມສະເໝີພາບຍິງຊາຍໃນການຍົກຍ້າຍຈັດສັນປະຊາຊົນ

ການຂາດກຳມະສິດຄອບຄອງ ແລະ ນຳໃຊ້ທີ່ດິນ ແມ່ນການປະຕິເສດແມ່ຍິງບໍ່ໃຫ້ໄດ້ການທົດແທນຄ່າເສຍຫາຍ ການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນ ແລະການຟື້ນຟູເສດຖະກິດ ສ່ວນໃຫຍ່ແມ່ນໄດ້ປະຕິບັດກັບຜູ້ທີ່ມີກຳມະສິດຄອບຄອງ ແລະນຳໃຊ້ທີ່ດິນ ແລະຊັບສິນທີ່ຖືກຕ້ອງຕາມກົດໝາຍ. ແມ່ຍິງອາດບໍ່ມີສິດຕໍ່ການຄອບຄອງ ແລະນຳໃຊ້ທີ່ດິນ ແລະຊັບສິນ, ທັງໆທີ່ເຂົາເຈົ້າມີສິດນຳໃຊ້ ຫຼື ອາໄສຢູ່. ດັ່ງນັ້ນ ເຂົາເຈົ້າຈະບໍ່ມີສິດໄດ້ຮັບຄ່າທົດແທນ ແລະ ຜົນປະໂຫຍດອື່ນໆທີ່ອາດມີ.

ການຟື້ນຟູຊີວິດການເປັນຢູ່ ແລະລາຍຮັບແມ່ນມີຄວາມສຳຄັນເທົ່າທຽມກັນ ລະຫວ່າງ ຜູ້ຊາຍ ແລະແມ່ຍິງ. ແມ່ຍິງສ່ວນໃຫຍ່ເຮັດວຽກບໍ່ມັກຢູ່ໃນຫ້ອງລ້າຫ້ອງການລັດຖະບານ ເຊັ່ນ: ເກັບເຄື່ອງປ່າຂອງດົງ, ເຮັດວຽກຕາມໄຮ່ນາ ຫຼື ຂາຍຜົນຜະລິດ. ກິດຈະການທີ່ມີລັກສະນະເສດຖະກິດຂອງແມ່ຍິງ ແມ່ນອາດເປັນແຫຼ່ງລາຍຮັບທີ່ສຳຄັນຕໍ່ລາຍຮັບຂອງຄອບຄົວ. ການຍົກຍ້າຍອາດເຮັດໃຫ້ແມ່ຍິງມີການສູນເສຍວິທີທຳມາຫາກິນ ແລະ ພົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ. ດັ່ງນັ້ນ, ມັນຈຶ່ງຈຳເປັນທີ່ຕ້ອງໄດ້ເອົາກິດຈະການ ທີ່ມີລັກສະນະເສດຖະກິດຂອງແມ່ຍິງ ເຂົ້າໃນການວາງແຜນ ແລະ ຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ.

ລະດັບການຝຶກອົບຮົມ ແລະ ການສຶກສາທີ່ຕ່ຳ ໃນກຸ່ມແມ່ຍິງ ແມ່ນມີການຈຳກັດທາງເລືອກ. ເງື່ອນໄຂການຟື້ນຟູເສດຖະກິດ ແມ່ນອາດລວມເອົາໂອກາດ ທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ສຳລັບອາຊີບຕ່າງໆ. ທາງເລືອກໃນການຫາອາຊີບໃໝ່ ແລະການທຳມາຫາກິນຂອງແມ່ຍິງ ແມ່ນມີຄວາມຈຳກັດ ຍ້ອນລະດັບການຝຶກອົບຮົມແລະການສຶກສາ ແລະ ການສຳພັດກັບພາຍນອກຍັງຕ່ຳ. ການວາງແຜນເພື່ອສ້າງອາຊີບ ແລະ ການທຳມາຫາກິນສຳລັບແມ່ຍິງຈຶ່ງມີຄວາມສຳຄັນຫຼາຍ.

ການຍົກຍ້າຍແບບບໍ່ສະໝັກໃຈ ອາດເພີ້ມພາລະໃຫ້ແມ່ຍິງ. ໂດຍທົ່ວໄປແລ້ວ, ແມ່ຍິງແມ່ນຮັບຜິດຊອບໃນການຫາອາຫານ, ຫາຟືນ ແລະ ລ້ຽງສັດໃນຄອບຄົວ. ສ່ວນຫຼາຍການຫາຟືນແລະອາຫານໃຫ້ສັດລ້ຽງ ແມ່ນພົບຄວາມຫຍຸ້ງຍາກ ຍ້ອນຜົນກະທົບທີ່ບໍ່ດີຕໍ່ຊັບພະຍາກອນທຳມະຊາດ ເຊັ່ນ: ປ່າໄມ້, ນ້ຳ ແລະ ດິນ. ບັນຫານີ້ອາດມີຜົນກະທົບໂດຍກົງຕໍ່ແມ່ຍິງ ຍ້ອນວ່າເຂົາເຈົ້າເປັນຜູ້ຮັບຜິດຊອບໃນການຫາຟືນ ແລະ ອາຫານມາລ້ຽງສັດ. ເຖິງແມ່ນວ່າຜົນກະທົບ ດັ່ງກ່າວ ໄດ້ຮັບການແກ້ໄຂໂດຍແຜນການຍົກຍ້າຍຈັດສັນປະຊາຊົນກໍດີ, ແຕ່ແມ່ຍິງແມ່ນຍັງຕ້ອງໄດ້ໃຊ້ເວລາ ແລະ ເຫື່ອແຮງຫຼາຍຂຶ້ນ ເພື່ອຫາສິ່ງທີ່ຈຳເປັນພື້ນຖານເຫລົ່ານັ້ນ. ການສູນເສຍປ່າຫຍ້າທີ່ເປັນບ່ອນລ້ຽງສັດ ກໍເຮັດໃຫ້ມີຜົນສະທ້ອນຕໍ່ຊີວິດການເປັນຢູ່ຂອງປະຊາຊົນໄດ້ເຊັ່ນດຽວກັນ.

ຜົນກະທົບຕໍ່ສັງຄົມຍ້ອນການຍົກຍ້າຍຈັດສັນປະຊາຊົນນີ້ມັກເຮັດໃຫ້ແມ່ຍິງໄດ້ຮັບຜົນກະທົບຫຼາຍກວ່າຜູ້ຊາຍ. ການແຍກບ້ານ ແລະ ເຄືອຂ່າຍສັງຄົມອື່ນໆ ຍ້ອນການຍົກຍ້າຍນີ້ ແມ່ນອາດສົ່ງຜົນກະທົບຕໍ່ແມ່ຍິງຫຼາຍກວ່າຜູ້ຊາຍ ຍ້ອນແມ່ຍິງຂຶ້ນກັບຊຸມຊົນ ແລະເຄືອຂ່າຍສັງຄົມອື່ນໆ ທີ່ສະໜັບສະໜູນທາງດ້ານຈິດໃຈກໍຄືວັດຖຸ ເຊັ່ນການເບິ່ງແຍງລູກເຕົ້າ. ການຍົກຍ້າຍດັ່ງກ່າວ ອາດມີຄວາມຮ້າຍແຮງເພີ້ມຂຶ້ນ ຖ້າເຄືອຂ່າຍເຫຼົ່ານີ້ ຫາກຖືກຕັດຂາດ.

ບັນຫາສັງຄົມແລະຄວາມຮຸນແຮງຕໍ່ແມ່ຍິງ ອາດເພີ້ມຂຶ້ນຕື່ມຍ້ອນການຍົກຍ້າຍຈັດສັນປະຊາຊົນ. ການເມົາເຫຼົ້າ, ໂສເພນີ ແລະຂີ້ລັກ ທີ່ມາຈາກການຍົກຍ້າຍຈັດສັນປະຊາຊົນ ມັກແຕະຕ້ອງຕໍ່ຊີວິດແລະຖານະຂອງແມ່ຍິງ. ແມ່ຍິງ ບາງ

ເທື່ອກໍຈຳເປັນຕ້ອງໄດ້ປະເຊີນກັບຄວາມຮຸນແຮງທາງດ້ານສັງຄົມປະເພດໃໝ່ ເຊັ່ນການລ່ວງເກີນທາງເພດແລະການຂາຍຕົວ. ຄວາມເລື່ອມລ້ຳທາງເພດທີ່ບົ່ມຊ້ອນໃນສັງຄົມ ແລະຮີດຄອງປະເພນີນັ້ນ ຍິ່ງຈະເຮັດໃຫ້ແມ່ຍິງຖືກທາລຸນທາງເພດ ແລະ ຮ່າງກາຍ.

## ໝວດທີ 4. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ

*ເວລາໃດຈຶ່ງມີຄວາມຈຳເປັນເຮັດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ?*

ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ໃນຂັ້ນຕອນສະໜີໂຄງການ ແມ່ນໄດ້ມີການກຳນົດບັນຫາດ້ານສັງຄົມຕ່າງໆ ທີ່ອາດເກີດຂຶ້ນ, ປະເພດການສຳຫຼວດລະອຽດ ແລະ ການສຶກສາພາກສະໜາມ ແລະ ການປະກອບເອກະສານຕ່າງໆ (ເຊັ່ນ: ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ/ຫຼື ແຜນພັດທະນາຊົນເຜົ່າ) ໂດຍສອດຄ່ອງກັບນະໂຍບາຍ ແລະ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະການຍົກຍ້າຍຈັດສັນປະຊາຊົນ. ເຖິງຢ່າງໃດກໍຕາມ, *ໃນໄລໂຄງການຖ້າການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ໄດ້ຊີ້ແຈງໃຫ້ເຫັນວ່າ ຜົນກະທົບຕໍ່ສັງຄົມ ຂອງໂຄງການມີຄວາມສະລັບສັບຊ້ອນ ລວມທັງມີຜົນກະທົບທາງອ້ອມ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງປະຊາຊົນ ທີ່ອາໃສຢູ່ພາຍໃນຫຼື ຢູ່ອ້ອມແອ້ມໂຄງການ ແລະ ມີຜົນກະທົບຕ່າງໆຕໍ່ຊົນເຜົ່າ ຊຶ່ງດຳລັດ 192 ອາດກວມເອົາບັນຫາ ນີ້ບໍ່ໝົດ, ກໍລະນີນີ້ ເຈົ້າຂອງໂຄງການ ແມ່ນຄວນໄດ້ດຳເນີນການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແລະ ເຮັດຢ່າງເອກະລາດ ໃນໄລຍະກະກຽມໂຄງການ.*

### 4.1 ນິຍາມ ແລະ ຂອບເຂດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ

#### 4.1.1 ນອໍຍາມ

ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນວິທີການໜຶ່ງທີ່ລວມເອົາການວິໄຈບັນຫາທາງດ້ານສັງຄົມ ແລະ ຂະບວນການມີສ່ວນຮ່ວມຂອງມວນຊົນ ເຂົ້າໃນການອອກແບບແລະຈັດຕັ້ງປະຕິບັດໂຄງການ. ເຖິງແມ່ນວ່າຈະຂາດຄຳນິຍາມທີ່ເປັນເອກກະພາບນຳກັນກໍຕາມ, ແຕ່ກໍມີຄວາມເຫັນດີເຫັນພ້ອມນຳກັນທາງດ້ານຫລັກການ ກ່ຽວກັບແນວຄວາມຄິດຂອງການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນຂະບວນການວິໄຈ (ການຄາດຄະເນ, ການຕີລາຄາ ແລະ ການສະທ້ອນກັບ) ແລະຄຸ້ມຄອງຜົນສະທ້ອນທີ່ຕາມມາທັງທີ່ເຈດຕະນາ ແລະ ບໍ່ໄດ້ເຈດຕະນາຕໍ່ສິ່ງແວດລ້ອມຂອງຄົນ ທີ່ເຄື່ອນໄຫວ ຕາມແຜນການທີ່ວາງໄວ້ (ເຊັ່ນ: ນະໂຍບາຍ, ແຜນງານ, ແຜນການ, ໂຄງການ) ແລະ ຂະບວນການປ່ຽນແປງ ທາງສັງຄົມທີ່ຕາມມາ ແນໃສ່ ສ້າງສິ່ງແວດລ້ອມຂອງຄົນທາງດ້ານຊີວະກາຍຍະພາບໃຫ້ຍືນຍົງຂຶ້ນໄປເລື້ອຍໆ.

ການດຳເນີນການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນສາມາດຍົກສູງທາງດ້ານຄຸນນະພາບໃນການລົງທະບຽນ, ຍົກຜົນໄດ້ທາງດ້ານເສດຖະກິດສູງຂຶ້ນ ແລະ ເຮັດໃຫ້ໂຄງການໄດ້ຮັບການພັດທະນາມີຄວາມ ຍືນຍົງຫລາຍຂຶ້ນ ຍ້ອນໂຄງການໄດ້ມີການແກ້ໄຂຜົນກະທົບຕໍ່ຊຸມຊົນໃນທ້ອງຖິ່ນ. ຜົນຂອງການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນການກຳນົດຮູບຖານຂໍ້ມູນທາງດ້ານສັງຄົມ ຊຶ່ງເປັນບ່ອນອີງໃນການສົມທຽບກັບການປ່ຽນແປງ ຍ້ອນການເຄື່ອນໄຫວວຽກງານຕ່າງໆ ໃນອະນາຄົດ.

***ໜ້າທີ່ຂອງການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ***

ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດມີ 3 ໜ້າທີ່ສະເພາະ ຄື:

(i) ປະເມີນບັນຫາແລະຜົນກະທົບຕໍ່ສັງຄົມ, ຕໍ່ປະຊາຊົນທີ່ຖືກກະທົບຍ້ອນໂຄງການ ຊຶ່ງຕ້ອງມີການລົງທຶນແບບມີເປົ້າໝາຍ ແລະເພື່ອຊອກຮູ້ຜູ້ມີສ່ວນກ່ຽວຂ້ອງຫຼັກໃນສັງຄົມ ແລະສາຍພົວພັນ ຂອງເຂົາເຈົ້າ;

(ii) ຊ່ວຍໃນການອອກແບບສຳລັບການບໍລິການດ້ານສັງຄົມ ເພື່ອຕອບສະໜອງໃນການປັບປຸງຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນ ແລະ ເພື່ອບັນລຸຕາມເປົ້າໝາຍຂອງໂຄງການທາງດ້ານເສດຖະກິດ ແລະ ສັງຄົມໂດຍຜ່ານການຈັດຕັ້ງປະຕິບັດແຜນງານ ແລະ ວຽກງານວິຊາການທີ່ກ່ຽວຂ້ອງ; ແລະ

(iii) ຊ່ວຍໃນການສ້າງຍຸດທະສາດທາງດ້ານສັງຄົມ ທີ່ຈະໄດ້ຈັດຕັ້ງປະຕິບັດແບບໃຫ້ມີຫລາຍພາກສ່ວນ ມີສ່ວນຮ່ວມ ຍ້ອນໜ້າທີ່ສຳຄັນດັ່ງກ່າວນີ້, ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ຈຶ່ງຖືວ່າເປັນການຊອກຫາຈຸດບົກພ່ອງຂອງການພັດທະນາ (ໝາຍຄວາມວ່າ ຜົນກະທົບ), ເປົ້າໝາຍຂອງການພັດທະນາ (ເຊັ່ນ: ການຫຼຸດຜ່ອນຄວາມທຸກຍາກ), ແລະ ຂະບວນການໃນການພັດທະນາ (ຕົວຢ່າງ: ການເຂົ້າຮ່ວມ, ການສ້າງຄວາມສາມາດ). ດັ່ງນັ້ນຈຶ່ງຕ້ອງໄດ້ນຳໃຊ້ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ເພື່ອຊ່ວຍຊຸມຊົນໃນການກຳນົດບຸລິມະສິດ ຂອງເຂົາເຈົ້າທາງດ້ານການພັດທະນາ ແລະ ຖືວ່າເປັນຂະບວນການ ເພື່ອສັງລວມເອົາບັນຫາສັງຄົມເຂົ້າໃນໂຄງການພັດ ທະນາ.

ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ເປັນກອບດຳເນີນງານລວມອັນໜຶ່ງ ຊຶ່ງກວມລວມເອົາທັງໝົດຜົນກະທົບຕ່າງໆທີ່ຈະເກີດມີຕໍ່ມະນຸດ ລວມທັງຜົນກກະທົບຕໍ່ຄວາມສວຍງາມຂອງທຳມະຊາດ, ມໍລະດົກທາງດ້ານວັດຖຸບູຮານ ແລະ ວັດທະນະທຳ, ຜົນກະທົບທາງດ້ານປະຊາກອນ ແລະ ຊຸມຊົນ, ຜົນກະທົບທາງດ້ານການພັດທະນາ ແລະ ເສດຖະກິດ, ການປະເມີນບົດບາດຍິງຊາຍ, ຜົນກະທົບຕໍ່ສຸກຂະພາບ, ສິດທິຂອງຊົນເຜົ່າ, ຜົນກະທົບດ້ານການຈັດຕັ້ງ ແລະການເມືອງ, ການປະເມີນຄວາມທຸກຍາກ, ບັນຫາກ່ຽວກັບຊັບພະຍາ ກອນ (ຄວາມສາມາດເຂົ້ານຳໃຊ້ ແລະ ການມີກຳມະສິດຕໍ່ຊັບພະຍາກອນ) ແລະ ຜົນກະທົບຂອງສິ່ງດັ່ງກ່າວ ຕໍ່ສັງຄົມ.

### 4.1.2 ຂອບÀຂດ

ຂອບເຂດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດດັ່ງນີ້:

ກ. **ສະພາບ/ລັກລະນະທົ່ວໄປທາງດ້ານເສດຖະກິດ-ສັງຄົມໃນເຂດໂຄງການ:** ບັນຫານີ້ລວມມີ 4 ອົງປະກອບຍ່ອຍດັ່ງລຸ່ມນີ້:

(i). **ຜົນກະທົບຕໍ່ກິດຈະກຳທາງດ້ານເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ການທຳມາຫາກິນຂອງປະຊາຊົນທີ່ຖືກກະທົບ.** ຈຸດປະສົງ ແມ່ນເພື່ອເກັບກຳສະພາບຂອງປະຊາຊົນທີ່ຖືກກະທົບ ໂດຍແຍກອອກຕາມເກນອາຍຸ, ເພດ, ຊົນເຜົ່າ, ໂຄງປະກອບທາງດ້ານສັງຄົມ, ອາຊີບ ແລະ ປະເພດການອອກແຮງງານ, ແຫຼ່ງລາຍຮັບ (ລວມທັງ ການຜະລິດ ແລະ ການຕະຫຼາດ), ກົນໄກ ກ່ຽວກັບການຄອບຄອງທີ່ດິນ ແລະ ສິດເປັນເຈົ້າຂອງ, ຄວາມສາມາດນຳໃຊ້ການບໍລິການ ແລະ ສິ່ງອຳນວຍຄວາມສະດວກທາງດ້ານສັງຄົມ (ຄື ສາທາລະນະສຸກ, ການສຶກສາ, ການສົ່ງເສີມກະສິກຳ ແລະ ສິນເຊື່ອ); ການນຳໃຊ້ຊັບພະຍາກອນຂອງຊຸມຊົນ ແລະ ທຳມະຊາດທີ່ກ່ຽວຂ້ອງກັບການສ້າງຍຸດທະສາດດ້ານການພັດທະນາ ເພື່ອຊ່ວຍໃນການກຳນົດຜົນກະທົບຂອງໂຄງການຕໍ່ສັງຄົມ, ເສດຖະກິດ, ວັດທະນະທຳ, ການທຳມາຫາກິນຂອງຊຸມຊົນທີ່ຖືກຜົນກະທົບ;

(ii). **ຜົນກະທົບຕໍ່ການເຄື່ອນຍ້າຍເຂົ້າມາຢູ່ໃໝ່ຂອງປະຊາຊົນເຂດນອກໂຄງການ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດໃນອະນາຄົດ.** ຕ້ອງໄດ້ກຳນົດ ແລະ ປະເມີນຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ ກ່ຽວກັບບັນຫາການເຄື່ອນຍ້າຍເຂົ້າມາຢູ່ໃໝ່ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ອັນເນື່ອງມາຈາກ

ນະໂຍບາຍຂອງລັດຖະບານ, ການເຄື່ອນຍ້າຍຂອງປະຊາຊົນມາຈາກເຂດອື່ນ ພາຍໃນແຂວງທີ່ໂຄງການຕັ້ງຢູ່, ການ ຂະຫຍາຍຕົວຂອງຊຸມຊົນ, ຜົນກະທົບຂອງໂຄງການຕໍ່ຊຸມຊົນທີ່ຢູ່ຫ່າງໄກຊອກຫຼີກ (ໂດຍສະເພາະຊົນເຜົ່າ, ຊາວກະສິກອນ ແລະ ອື່ນໆ).

(iii). **ຜົນກະທົບຕໍ່ປະຊາຊົນທີ່ບໍ່ສາມາດຊ່ວຍຕົນເອງໄດ້.** ຕ້ອງໄດ້ກຳນົດ, ວິໄຈ ແລະ ມີມາດຕະການແກ້ໄຂຜົນກະທົບ ຂອງໂຄງການຢ່າງເໝາະສົມຕໍ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ເຊັ່ນ: ຊົນເຜົ່າ, ແມ່ຍິງ, ປະຊາຊົນທີ່ຖືກຍົກຍ້າຍ, ໄວໜຸ່ມ ແລະ ກຸ່ມຜູ້ສູງອາຍຸ. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ຕ້ອງມີການວິໄຈບົດບາດຍິງຊາຍ, ຕ້ອງໄດ້ສຶກສາລົງເລິກ ກ່ຽວກັບຜົນກະທົບຕໍ່ສັງຄົມທີ່ອາດຈະເກີດຂຶ້ນ ແລະ ບັນຫາກ່ຽວຂ້ອງກັບຄວາມສາມາດໃນການເຂົ້າເຖິງຕະຫຼາດ, ການເຄື່ອນຍ້າຍຂອງປະຊາຊົນ, ການຍົກຍ້າຍຄົນທາງນອກເຂົ້າມາຢູ່ເຂດໂຄງການ, ມົນລະພິດທາງອາກາດ ແລະ ສຽງດັງ ແລະ ການແຜ່ລະບາດຂອງພະຍາດຕິດແປດຕ່າງໆ (ລວມທັງໂລກເອດ). ຜົນການວິໄຈຈາກການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດຕ້ອງເປັນຍຸດທະສາດເພື່ອກຳນົດມາດຕະການແກ້ໄຂ ແລະຫຼຸດຜ່ອນຜົນກະທົບທາງລົບໃຫ້ມີໜ້ອຍທີ່ສຸດ

(iv). **ຜົນກະທົບຕໍ່ການພັດທະນາ ແລະ ການຫຼຸດຜ່ອນຄວາມທຸກຍາກ.** ອີງໃສ່ຜົນກະທົບທີ່ອາດເປັນໄປໄດ້ທາງດ້ານສັງຄົມ ແລະ ເສດຖະກິດ, ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດແມ່ນຕ້ອງໄດ້ມີການກຳນົດມາດຕະຖານ ເພື່ອຊ່ວຍໃນການສ້າງຍຸດທະສາດດ້ານການພັດທະນາ ແລະ ຖ້າເປັນໄປໄດ້ແມ່ນສ້າງຍຸດທະສາດ ກ່ຽວກັບການຈັດສັນຜົນປະໂຫຍດຢ່າງເປັນທຳ ຈາກການພັດທະນາໂຄງການ, ໂດຍສະເພາະເຮັດໃຫ້ມີຜົນດີຫລາຍທີ່ສຸດຕໍ່ການແກ້ໄຂຄວາມທຸກຍາກ.

ຂ. **ການວິໄຈກ່ຽວກັບຜູ້ມີສ່ວນຮ່ວມ:** ຕ້ອງມີການປຶກຫາລືກັບບັນດາຜູ້ມີສ່ວນຮ່ວມຫຼັກ ແລະ ນຳເອົາຄຳຄິດຄຳເຫັນ

ຂອງເຂົາເຈົ້າເຂົ້າໃນການອອກແບບ ແລະ ຕີລາຄາໂຄງການຢ່າງແທ້ຈິງ. ອົງປະກອບຕົ້ນຕໍ ຂອງການວິໄຈຜູ້ມີສ່ວນຮ່ວມມີຄື:

(i). ກຳນົດບັນດາຜູ້ມີສ່ວນຮ່ວມຕົ້ນຕໍທີ່ຈະເຂົ້າຮ່ວມໃນໂຄງການແຕ່ລະດ້ານ (ເຊັ່ນ: ອົງການຄຸ້ມຄອງ ແລະ ຈັດຕັ້ງ"ປະຕິບັດໂຄງການ ແລະ ກຸ່ມຕ່າງໆຈາກອົງການຈັດຕັ້ງສັງຄົມ);

(ii). ອະທິບາຍ ກ່ຽວກັບອົງການຈັດຕັ້ງຂອງຊຸມຊົນໃນທ້ອງຖິ່ນ ທີ່ພົວພັນກັບບັນຫາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ມີບົດບາດຕໍ່ຜົນໄດ້ຮັບຂອງໂຄງການ;

(iii). ກຳນົດພາລະບົດບາດການຈັດຕັ້ງຕ່າງໆ ທີ່ເປັນທາງການ ແລະ ບໍ່ເປັນທາງການ ທີ່ກຳລັງເຄື່ອນໄຫວຢູ່ໃນລະດັບບ້ານ ແລະ ລະດັບເຂດ ເຊິ່ງມີຜົນຕໍ່ການຕັດສິນໃຈຂອງຊຸມຊົນ ເນື່ອງຈາກວ່າ ສິ່ງດັ່ງກ່າວຈະສົ່ງຜົນສະທ້ອນຕໍ່ວຽກງານຂອງໂຄງການ; ແລະ

(iv). ປະເມີນຄວາມອາດສາມາດຂອງທ້ອງຖິ່ນ ກ່ຽວກັບ ການເຂົ້າຮ່ວມໃນການວາງແຜນ, ການຈັດຕັ້ງປະຕິບັດ, ການຊີ້ນຳ ແລະ ການຕີລາຄາໂຄງການ.

ວິທີການວິໄຈຜູ້ມີສ່ວນຮ່ວມ ແມ່ນຄວນໄດ້ມີການສຳພາດແບບມີສ່ວນຮ່ວມທີ່ມີຄຸນນະພາບ ແລະ ການສົນທະນາເປັນຈຸແບບມີຈຸດສຸມກັບຊຸມຊົນ ແລະ ບຸກຄົນຕ່າງໆ.

ຄ. **ການວິໄຈດ້ານການຈັດຕັ້ງ:** ການວິໄຈດ້ານການຈັດຕັ້ງ ແມ່ນການວິໄຈທີ່ກວມລວມເອົາທັງສະຖາບັນ/ອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງກັບອົງປະກອບຕ່າງໆຂອງໂຄງການ ລວມທັງບັນດາການຈັດຕັ້ງທີ່ເປັນທາງການ ແລະ ບໍ່ເປັນທາງການທັງໃນລະດັບບ້ານ ແລະ ລະດັບເຂດ ຊຶ່ງໃນນັ້ນຄວນລວມເອົາບັນຫາສຳຄັນ ດັ່ງນີ້:

(i). ກຳນົດບັນດາເງື່ອນໄຂພາຍໃນແລະພາຍນອກ, ປັດໄຈ ແລະ ຂະບວນການຕ່າງໆ ຊຶ່ງສິ່ງຜົນສະທ້ອນຕໍ່ປະສິດທິຜົນຂອງການຈັດຕັ້ງ ໃນການແກ້ໄຂບັນຫາຕ່າງໆທາງດ້ານສັງຄົມ;

(ii). ການປະເມີນອົງການທີ່ຮັບຜິດຊອບແກ້ໄຂບັນຫາສັງຄົມ (ໂດຍສະເພາະແມ່ນບັນຫາຂອງຊົນເຜົ່າ ແລະ ຜູ້ທີ່ຖືກຍົກຍ້າຍ) ໂດຍຮັບປະກັນໄດ້ວ່າອົງການຈັດຕັ້ງເຫລົ່ານັ້ນມີຄວາມເຂົ້າໃຈ, ມີພັນທະ, ມີບຸກຄະລາກອນ, ມີທຶນຮອນ ແລະ ຄວາມສາມາດ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດແຜນງານດ້ານສັງຄົມ ທີ່ຕອບສະໜອງກັບຄວາມຕ້ອງການຂອງພວກເຂົາ;

(iii). ການປະເມີນຄວາມສາມາດຂອງເຈົ້າຂອງໂຄງການ ແລະ ອົງການຮັບຜິດຊອບການຈັດຕັ້ງປະຕິບັດໂຄງການ ໃນດ້ານການດຳເນີນງານ ແລະ ການຄຸ້ມຄອງວຽກງານໂຄງການ, ລວມທັງກຳນົດບັນດາມາດຕະການ ແລະ ຄວາມຕ້ອງການໃນການຝຶກອົບຮົມຕ່າງໆ ເພື່ອປັບປຸງຄວາມສາມາດທີ່ມີຢູ່ໃຫ້ເຂັ້ມແຂງເພື່ອແກ້ໄຂບັນຫາສັງຄົມ ໃຫ້ມີຄວາມຍືນຍົງ;

(iv). ຂໍ້ສະເໜີແນະນຳ ແລະ ມາດຕະການຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງທີ່ມີຢູ່ແນໃສ່ຍົກສູງການເຂົ້າຮ່ວມຂອງຊຸມຊົນໃນທ້ອງຖິ່ນ ເພື່ອແກ້ໄຂບັນຫາສັງຄົມ, ການວິໄຈດ້ານການຈັດຕັ້ງຕ້ອງລວມເອົາວຽກງານການປະເມີນບົດບາດ ຂອງອົງການຈັດຕັ້ງໃນລະດັບຊຸມຊົນ ໃນການຕັດສິນບັນຫາຂອງຊຸມຊົນ.

໑. **ການມີສ່ວນຮ່ວມຂອງມວນຊົນ ແລະ ການປຶກສາຫາລື:** ຂະບວນການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດຕ້ອງໄດ້ຮັບປະກັນໃຫ້ມີການປຶກສາຫາລືກັບຜູ້ມີສ່ວນຮ່ວມຕົ້ນຕໍ (ລວມທັງສະມາຊິກຂອງຊຸມຊົນ ທີ່ໄດ້ຮັບຜົນກະທົບ), ໂດຍສະເພາະ ຜູ້ນຳຊຸມຊົນແບບບໍ່ເປັນທາງການ ລວມທັງຫົວໜ້າຝ່າຍສາດສະໜາ ຜູ້ຊຶ່ງມັກມີບົດບາດຕັດສິນຊີ້ຂາດໃນການປຸກລະດົມປະຊາຊົນ, ແນໃສ່ການຍາດແຍ່ງເອົາຄຳຄິດຄຳເຫັນຂອງເຂົາເຈົ້າ ໃນການກຳນົດບັນຫາ ແລະ ບຸລິມະສິດຕ່າງໆ, ການສ້າງຍຸດທະສາດດ້ານການພັດທະນາ ເພື່ອຍົກສູງຄວາມເປັນເຈົ້າ ແລະ ການຕັດສິນໃຈຂອງຊຸມຊົນ, ອຳນວຍຄວາມສະດວກໃຫ້ຂະບວນການຮັບຮອງເອົາຄຳເຫັນ ແລະ ຮັບປະກັນການເຂົ້າມາມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານ. ຂະບວນການປຶກສາຫາລືທີ່ສາມາດຮັບປະກັນວ່າ ຈຸດປະສົງ ຂອງໂຄງການຕ້ອງເປັນທີ່ຮັບໄດ້ຂອງກຸ່ມເປົ້າໝາຍທີ່ຈະໄດ້ຮັບຜົນປະໂຫຍດຕ້ອງມີການກຳນົດ:

(i). ຄວາມຂັດແຍ່ງທີ່ອາດເກີດຂຶ້ນ ແລະ ສະເໜີແນວທາງແກ້ໄຂຂໍ້ຂັດແຍ່ງນັ້ນ;

(ii). ກົນໄກ ສຳລັບການມີສ່ວນຮ່ວມຂອງຊຸມຊົນໃນການຈັດບຸລິມະສິດ, ການຈັດຕັ້ງປະຕິບັດວຽກງານຟື້ນຟູ, ການຂະຫຍາຍພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກທາງດ້ານສາທາລະນະ;

(iii). ຂໍ້ສະເໜີແນະນຳຕ່າງໆ ກ່ຽວກັບ ມາດຕະການທີ່ຈຳເປັນ ສຳລັບຫຼຸດຜ່ອນຜົນກະທົບດ້ານລົບ, ໂດຍຜ່ານການປຶກສາຫາລືກັບຜູ້ມີສ່ວນຮ່ວມຕົ້ນຕໍ ກ່ຽວກັບ ບັນຫາຕົ້ນຕໍດ້ານສັງຄົມ.

ເມື່ອຮູ້ຂະໜາດຂອງບັນຫາສັງຄົມ ຊຶ່ງຈຳເປັນຕ້ອງໄດ້ມີການພິຈາລະນາ, ການສຶກສາຜົນກກະທົບຕໍ່ສັງຄົມແບບລະອຽດ ແມ່ນຄວນມີລັກສະນະຍຸດທະສາດ ແລະ ເລືອກເຟັ້ນ. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ຕ້ອງເລີ້ມຕົ້ນຈາກການກຳນົດປະຊາຊົນ ແລະ ຊຸມຊົນ ລວມທັງຊົນເຜົ່າ ແລະ ຄົນດັ້ງເດີມ ຊຶ່ງອາດຖືກກະທົບຈາກໂຄງການ ແລະ ກຳນົດບັນຫາສັງຄົມທີ່ກ່ຽວຂ້ອງ ທີ່ສາມາດສົ່ງຜົນຕໍ່ການອອກແບບ, ການນຳສົ່ງ ແລະ ຜົນໄດ້ຮັບໂຄງການ.

## 4.2 ຂັ້ນຕອນ ໃນຂະບວນການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ

ວຽກງານການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ໂດຍທົ່ວໄປແລ້ວແມ່ນປະກອບດ້ວຍ: (ກ) ການກະກຽມ ແລະ ການທົບທວນຄືນບັນດາເອກກະສານໃນຫ້ອງການ; (ຂ) ການເກັບກຳຂໍ້ມູນ; (ຄ) ການວິໄຈ ແລະ ການຂຽນບົດ; ແລະ (ງ) ການປະກອບເອກກະສານ.

ກ. <u>ການກະກຽມ ແລະ ການທົບທວນບັນດາເອກກະສານໃນຫ້ອງການ:</u> ການກະກຽມທີ່ດີ ແລະ ພຽງພໍ ສຳລັບການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນມີຄວາມສຳຄັນຫລາຍໃນການບັນລຸຜົນທີ່ມີຄຸນນະພາບ. ກິດຈະກຳຕົ້ນຕໍໃນນີ້ລວມມີ:

(i) ການທົບທວນຄືນແຜນພັດທະນາຕ່າງໆ ຂອງອົງການການຈັດຕັ້ງທີ່ບໍ່ຫວັງຜົນປະໂຫຍດ ແລະ ແຜນພັດທະນາທີ່ລັດຖະບານໄດ້ວາງໄວ້;

(ii) ການທົບທວນຄືນກ່ຽວກັບສະພາບເງື່ອນໄຂເບື້ອງຕົ້ນຂອງຊຸມຊົນ, ສະພາບການຈັດຕັ້ງຂອງລັດເຂດໂຄງການ ລວມທັງຄວາມສາມາດຂອງເຂົາເຈົ້າໃນການແກ້ໄຂບັນຫາສັງຄົມ;

(iii) ການກຳນົດປະເດັນ ແລະ ບັນຫາຕ່າງໆຊຶ່ງຕ້ອງການກວດກາຕື່ມໃນໄລຍະເກັບກຳຂໍ້ມູນຢູ່ພາກສະໜາມ, ການສຳພາດທາງການ ແລະ ບໍ່ເປັນທາງການ ແລະ ການປຶກສາຫາລືກັບຜູ້ມີສ່ວນຮ່ວມຕົ້ນຕໍ.

(iv) ການເລືອກເຟັ້ນເອົາເປົ້າໝາຍ ສຳລັບການສຳຫຼວດຕົວແບບ ແລະ ວຽກສະໜາມ ໂດຍສະເພາະຈຳນວນການຈັດຕັ້ງເຂົ້າຮ່ວມ ແລະ ຂໍ້ຈຳກັດອື່ນໆຫລາຍຢ່າງ ຕ້ອງໄດ້ນຳໃຊ້ຕົວແບບທີ່ໄດ້ຄັດເລືອກຢ່າງລະອຽດແລ້ວ; ການຈັດຕັ້ງທີ່ໄດ້ຮັບການຄັດເລືອກມາຕ້ອງເປັນຕົວແທນສິດຜົນປະໂຫຍດຂອງຜູ້ມີສ່ວນຮ່ວມສ່ວນໃຫຍ່ໃນລະດັບຕ່າງໆ ແລະ ມາຈາກເຂດຕ່າງໆ; ແລະ

(v) ການກະກຽມວຽກສະໜາມ (ການສຳຫຼວດຕົວແບບ) ໃນພື້ນທີ່ທີ່ໄດ້ກຳນົດໄວ້ ແມ່ນຈະຕ້ອງກວມເອົາເປົ້າໝາຍ, ຂອບເຂດ, ວິທີການ ກ່ຽວກັບ ການປະເມີນທີ່ຈະນຳໃຊ້, ອົງການຈັດຕັ້ງ ທີ່ຈະມີສ່ວນກ່ຽວຂ້ອງ, ຕາຕະລາງເວລາ, ການກຳນົດເວລາສຳພາດ, ກຳລັງຄົນ ແລະ ທຶນຮອນຕ່າງໆ ທີ່ຕ້ອງການ ແລະ ທັງຜົນໄດ້ຮັບທີ່ຄາດໝາຍໄວ້.

ຂ. <u>ວຽກເກັບກຳຂໍ້ມູນພາກສະໜາມ:</u> ວຽກພາກສະໜາມຢ່າງໜ້ອຍຕ້ອງປະກອບດ້ວຍບັນດາກິດຈະກຳລຸ່ມນີ້:

(i) ການສ້າງຄຳຖາມ ກ່ຽວກັບ ບັນຫາສັງຄົມທີ່ກ່ຽວຂ້ອງກັບອົງປະກອບ/ອົງປະກອບຍ່ອຍ ຂອງໂຄງການ ລວມທັງສິ່ງທີ່ໄດ້ກຳນົດເປັນບັນຫາຕົ້ນຕໍຜ່ານມາແລ້ວໃນຕອນຕົ້ນໆ (ຜົນກະທົບຕໍ່ປະຊາຊົນ, ຜູ້ມີສ່ວນຮ່ວມ, ອົງການຈັດຕັ້ງ ແລະ ວິທີການປຶກສາຫາລື ແລະ ເຂົ້າຮ່ວມຂອງປະຊາຊົນ).

(ii) ການສົນທະນາປຶກສາຫາລື ແລະ ການສຳພາດກຸ່ມຄົນທີ່ເປັນຈຸດສຸມ (ຕົວຢ່າງ ກຸ່ມຜູ້ນຳໃຊ້ເສັ້ນທາງຕ່າງໆ, ກຸ່ມຊົນເຜົ່າ ແລະ ຜູ້ອື່ນໆທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ) ເພື່ອຂໍຄວາມຄິດຄວາມເຫັນນຳເຂົາເຈົ້າ ກ່ຽວກັບ ອົງປະກອບຕ່າງໆຂອງໂຄງການ, ຂໍ້ຈຳກັດ, ລະດັບຄວາມພໍໃຈ ແລະ ຄວາມຕ້ອງການໃຫ້ມີການປ່ຽນແປງ, ທັງຄວາມຮັບຮູ້ໂດຍລວມ ກ່ຽວກັບ ໂຄງການ.

(iii) ຕາຕະລາງການສຳພາດ ແລະ ເຄື່ອງມືອື່ນໆໃນການເກັບກຳຂໍ້ມູນຂ່າວສານ.

(iv) ການສົນທະນາປຶກສາຫາລືກັບພະນັກງານລັດທີ່ຮັບຜິດຊອບໂຄງການ ລວມທັງການຄຸ້ມຄອງການຈັດຕັ້ງ ແລະ ພະນັກງານ ເພື່ອຊອກຫາເຫດຜົນຊຶ່ງອຳນວຍຄວາມສະດວກ ຫຼື ຂັດຂວາງການເຂົ້າເຖິງສິ່ງອຳນວຍຄວາມສະດວກດ້ານສາທາລະນະ, ຕະຫຼາດ ແລະ ໂອກາດການສ້າງລາຍຮັບອື່ນໆ ທັງຊອກ

ຫາທົບທາງ ເພື່ອແກ້ໄຂຂໍ້ຈຳກັດທາງດ້ານການຈັດຕັ້ງ ແລະ ອື່ນໆທີ່ອາດມີຢູ່ ແລະ ປະເມີນຄວາມອາດສາມາດ ແລະ ຄວາມສົນໃຈໃນການແກ້ໄຂບັນຫາສັງຄົມ.

ຄ. <u>ການວິໄຈ ແລະ ເຜີຍແຜ່ຂໍ້ມູນທີ່ໄດ້ມາ:</u> ການວິໄຈຂໍ້ມູນ ຄວນສຸມໃສ່ຄວາມສຳຄັນໃນການດຳເນີນງານ. ມັນຈຳເປັນທີ່ຕ້ອງໄດ້ນຳເອົາຜົນຂອງການສຳຫຼວດ ແລະ ສຳພາດ ໄປສົນທະນາກັບຜູ້ມີສ່ວນຮ່ວມຕົ້ນຕໍ ເພື່ອເຮັດໃຫ້ຂໍ້ສະຫຼຸບ ແລະ ຂໍ້ສະເໜີແນະນຳມາ ມີຄວາມເໝາະສົມ ແລະ ເປັນທີ່ຍອມຮັບໄດ້ ເພື່ອຈະນຳໄປຈັດຕັ້ງປະຕິບັດ (ໂດຍສະເພາະ ແມ່ນຈາກອົງການຮັບຜິດຊອບທີ່ຮ່ວມງານ).

ງ. <u>ການປະກອບເອກກະສານ ແລະ ຜົນໄດ້ຮັບຂອງການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ:</u> ຜົນທີ່ຄາດໄວ້ຈາກການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນສ້າງເປັນບົດລາຍງານໂດຍມີເນື້ອໃນລະອຽດ ກ່ຽວກັບຜົນການສຳຫຼວດ. ບົດລາຍງານການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ຫຼື ແຜນດຳເນີນງານດ້ານສັງຄົມຄວນປະກອບສ່ວນເຂົ້າໃນການກຳນົດຈຸດປະສົງຂອງໂຄງການ ແລະ ການອອກແບບໂຄງການໃຫ້ສອດຄ່ອງກັບຈຸດປະສົງດັ່ງກ່າວ. ບົດລາຍງານຄວນປະກອບດ້ວຍ ເນື້ອໃນດັ່ງນີ້:

(i) ປະຫວັດຄວາມເປັນມາຂອງໂຄງການ, ການກຳນົດຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ ພ້ອມທັງສະພາບດ້ານສັງຄົມທີ່ກ່ຽວຂ້ອງຕ່າງໆ (ຈຸດພິເສດດ້ານສັງຄົມ-ວັດທະນະທຳ ແລະ ປະຊາກອນ, ຄວາມຫຼາກຫຼາຍດ້ານຊົນເຜົ່າ ແລະ ການຈັດຕັ້ງສັງຄົມ);

(ii) ອະທິບາຍ ກ່ຽວກັບ ຂະບວນການ ແລະ ໜ້າທີ່ຂອງການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ, ລວມທັງ ຍຸດທະສາດ ແລະ ວິທີການຕ່າງໆທີ່ຈະນຳມາໃຊ້;

(iii) ກຳນົດຜູ້ມີສ່ວນຮ່ວມ, ຄວາມຕ້ອງການ, ຄວາມກຽມພ້ອມຂອງພວກເຂົາເຈົ້າ ເພື່ອໃຫ້ການສະໜັບສະໜູນໂຄງການ, ການຕ້ອມບັນຫາເຂົ້າກັນລະຫວ່າງບຸລິມະສິດຕ່າງໆ ຂອງໂຄງການກັບຂອງກຸ່ມຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ;

(iv) ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາສັງຄົມ ແລະ ຜົນກະທົບດ້ານເສດຖະກິດ-ສັງຄົມ ທີ່ຈຳເປັນຕ້ອງໄດ້ແກ້ໄຂ, ກຸ່ມຕ່າງໆຂອງຊຸມຊົນ ລວມທັງກຸ່ມຊົນເຜົ່າພື້ນເມືອງ ແລະ ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ (ເຊັ່ນ: ຄອບຄົວແມ່ຮ້າງນາງໝ້າຍ, ກຸ່ມຜູ້ທຸກຍາກ, ຄອບຄົວທີ່ມີຜູ້ຕິດໂລກເອດ, ແລະ ອື່ນໆ), ທີ່ອາດຖືກກະທົບຈາກໂຄງການ ແລະ ບັນດາມາດຕະການຕ່າງໆ ເພື່ອຫລຸດຜ່ອນຄວາມບໍ່ສະເໝີພາບ ທາງດ້ານເສດຖະກິດ-ສັງຄົມລົງໃຫ້ເຫລືອໜ້ອຍທີ່ສຸດ ແລະ ເພື່ອເຮັດໃຫ້ການແຈກຢາຍຜົນປະໂຫຍດແບບສົມສ່ວນໃຫ້ຫລາຍຂຶ້ນ ແລະ ຜົນກະທົບຕໍ່ການຫຼຸດຜ່ອນຄວາມທຸກຍາກຈາກການລົງທຶນທີ່ໄດ້ສະເໜີມາ;

(v) ການອະທິບາຍ ກ່ຽວກັບການຈັດຕັ້ງສຳຄັນທີ່ມີສ່ວນຮ່ວມໃນໂຄງການ ຊຶ່ງຄາດວ່າຈະມີບົດບາດສຳຄັນໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ, ພ້ອມລາຍລະອຽດຂອງໂຄງປະກອບການຈັດຕັ້ງ, ສາຍພົວພັນດ້ານໜ້າທີ່ວຽກງານກັບການຈັດຕັ້ງອື່ນໆ, ຄວາມຊຳນານງານ ແລະ ຄວາມສາມາດໃນການແກ້ໄຂບັນຫາສັງຄົມ ແລະ ມາດຕະການຕ່າງໆ ເພື່ອຍົກສູງຄວາມສາມາດ ແລະ ຄວາມຊຳນານງານຂອງເຂົາເຈົ້າຂຶ້ນຕື່ມ;

(vi) ຂໍ້ສະເໜີແນະນຳສຳລັບຜູ້ມີສ່ວນຮ່ວມຕ່າງໆລວມທັງຊົນເຜົ່າ ເພື່ອຮັບປະກັນວ່າພວກເຂົາເຈົ້າຈະໄດ້ປະຕິບັດຕາມພັນທະຂອງພວກເຂົາ ແລະ ເພື່ອສ້າງຄວາມສາມາດຂອງເຂົາເຈົ້າ ໃນການເຂົ້າຮ່ວມວຽກງານໂຄງການ.

*ແຜນດຳເນີນງານດ້ານສັງຄົມ*

ແຜນດຳເນີນງານດ້ານສັງຄົມເປັນຜົນໄດ້ໂດຍກົງ ຂອງການສຶກສາຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ. ແຜນດັ່ງກ່າວ ຈະປະກອບດ້ວຍ: ພາກສະຫຼຸບສັງລວມ ກ່ຽວກັບການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ, ພາກອະທິບາຍກ່ຽວກັບ ຜູ້ມີສ່ວນຮ່ວມ ແລະ ອົງການຈັດຕັ້ງຕົ້ນຕໍຕ່າງໆ, ບັນຫາທີ່ເຫັນວ່າຈະສົ່ງຜົນກະທົບໂດຍກົງ ຕໍ່ຜູ້ທີ່ຖືກກະທົບຈາກໂຄງການຄຽງຄູ່ກັບພາກສ່ວນທີ່ຕ້ອງໄດ້ຍົກຍ້າຍ (ການເວນຄືນທີ່ດິນແບບຊົ່ວຄາວ, ຄຸນນະພາບຂອງສາຍນ້ຳຕອນລຸ່ມສ້າງຜົນເສຍຫາຍຕໍ່ການປະມົງ, ຜົນກະທົບຊົ່ວຄາວຕໍ່ການສະໜອງນ້ຳກິນນ້ຳໃຊ້ຂອງປະຊາຊົນ ແລະ ອື່ນໆ), ມາດຕະການ ຫຼຸດຜ່ອນຕໍ່ບັນຫາດັ່ງກ່າວ, ອົງການຈັດຕັ້ງປະຕິບັດ (ເຈົ້າຂອງໂຄງການ), ຕາຕະລາງເວລາ, ງົບປະມານ ແລະ ການຕິດຕາມກວດກາ. ເຖິງແມ່ນວ່າ ແຜນດຳເນີນງານດ້ານສັງຄົມຈະກວມລວມເອົາບາງບັນຫາ ກ່ຽວກັບວຽກຍົກຍ້າຍຈັດສັນປະຊາຊົນ ແລະ ຊົນເຜົ່າຢູ່ນຳຈຳນວນໜຶ່ງກໍຕາມ, ແຕ່ຈຸດສຸມແມ່ນຄວນເລັ່ງໃສ່ບັນຫາ ທີ່ອາດຈະຍັງບໍ່ທັນໄດ້ເອົາເຂົ້າຢ່າງພຽງພໍ ໃນແຜນການຍົກຍ້າຍຈັດສັນປະຊາຊົນ ແລະ/ຫຼື ແຜນພັດທະນາຊົນເຜົ່າ.

## ໝວດທີ 5. ແຜນການຍົກຍ້າຍຈັດສັນປະຊາຊົນ

### 5.1 ຈຸດປະສົງ ແລະ ຂອບເຂດ

ເມື່ອໃດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແລະ ການວິໄຈໂຄງການ ຫາກເຫັນໄດ້ຜົນກະທົບໂດຍກົງທີ່ພາໃຫ້ມີການສູນເສຍຊັບສິນຂອງສ່ວນຕົວ, ລາຍໄດ້ ແລະ ທຸລະກິດ ຍ້ອນກການເວນເອົາຊັບສິນ ແລະ ມີການປ່ຽນແປງການນຳໃຊ້ທີ່ດິນ ຫຼື ຈຳກັດການເຂົ້ານຳໃຊ້ຊັບພະຍາກອນຂອງຊຸມຊົນຕາມລະດັບ ແລະ ຂະໜາດຂອງຜົນກະທົບ, ເວລານັ້ນ ເຈົ້າຂອງໂຄງການຕ້ອງໄດ້ສ້າງເອກກະສານໃຫ້ສອດຄ່ອງຄື: ແຜນການຍົກຍ້າຍຈັດສັນປະຊາຊົນ. ແຜນດັ່ງກ່າວ ຕ້ອງສອດຄ່ອງກັບຂໍ້ກຳນົດໃນດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໂດຍອີງໃສ່ 3 ຫຼັກການພື້ນຖານຄື:

1. ຍົກສູງຄຸນນະພາບຊີວິດຂອງຜູ້ທີ່ຖືກກະທົບຈາກໂຄງການ,
2. ປ້ອງກັນ ຫຼື ຫລຸດຜ່ອນຜົນກະທົບດ້ານລົບຕໍ່ສັງຄົມໃຫ້ມີໜ້ອຍ ເທົ່າທີ່ເປັນໄປໄດ້,
3. ຫຼຸດຜ່ອນຜົນກະທົບດ້ານສັງຄົມທີ່ອາດເກີດຂຶ້ນ.

ໂດຍປະຕິບັດຕາມຫຼັກການຂ້າງເທິງນັ້ນ, ແຜນການຍົກຍ້າຍຈັດສັນປະຊາຊົນ ຕ້ອງລວມເອົາມາດຕະການຕ່າງໆກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ ເພື່ອຮັບປະກັນໃຫ້ຊັບສິນທີ່ຖືກກະທົບ ໄດ້ຮັບການທົດແທນຕາມມູນຄ່າປ່ຽນແທນ ແລະ ໃຫ້ມີການຟື້ນຟູເສດຖະກິດ ຫຼື ການປັບປຸງຊີວິດການເປັນຢູ່ ສຳລັບຜູ້ທີ່ຖືກກະທົບທຸກຄົນຈາກໂຄງການ.

### 5.2 ປະເພດຂອງແຜນການຍົກຍ້າຍຈັດສັນປະຊາຊົນ

ຕາມຫຼັກການແລ້ວ, ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ ແມ່ນມີຈຸດປະສົງຄ້າຍຄືກັນກັບແຜນການຍົກຍ້າຍຈັດສັນປະຊາຊົນ. ມັນມີພຽງແຕ່ຄວາມແຕກຕ່າງອັນດຽວ ຄືມັນຈະມີເນື້ອໃນສັ້ນກະທັດລັດກວ່າທາງດ້ານຂອບເຂດ ແລະ ເນື້ອໃນ. ແຜນການຍົກຍ້າຍຈັດສັນປະຊາຊົນ ເປັນຂໍ້ບັງຄັບທີ່ຕ້ອງໄດ້ປະຕິບັດສຳລັບ

ໂຄງການທີ່ຈັດຢູ່ໃນໂຄງການປະເພດ 1 ຊຶ່ງຖືວ່າເປັນໂຄງການທີ່ມີຜົນກະທົບຢ່າງຫຼວງຫຼາຍ. ສ່ວນບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ ກໍຄືແຜນການຍົກຍ້າຍຈັດສັນປະຊາຊົນ ແບບມີເນື້ອໃນສັ້ນກະທັດລັດກວ່ານັ້ນ ແມ່ນຈະເປັນຂໍ້ບັງຄັບສຳລັບໂຄງການທີ່ຈັດຢູ່ໃນໂຄງການປະເພດ 2 ຊຶ່ງຖືວ່າເປັນໂຄງການທີ່ມີຜົນກະທົບຕໍ່ສັງຄົມບໍ່ຫລວງຫລາຍ.

### 5.2.1 ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ

ໃນກໍລະນີ ໂຄງການມີຜົນກະທົບບໍ່ຫລວງຫລາຍ ເຊັ່ນ ມີປະຊາຊົນໜ້ອຍກວ່າ 200 ຄົນ (40-50 ຄອບຄົວ) ຖືກກະທົບຫລວງຫລາຍ ຫຼື ຖືກຍົກຍ້າຍ ຫຼື ກໍລະນີມີຜົນກະທົບເລັກໜ້ອຍ ແຕ່ຈຳນວນຫຼາຍກວ່າ 200 ຄົນ ຖືກກະທົບກໍຕາມ (ໂຄງການປະເພດ 2), ເຈົ້າຂອງໂຄງການຕ້ອງໄດ້ເຮັດບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍທີ່ກະທັດລັດກວ່າ. ບົດລາຍງານດັ່ງກ່າວນີ້ ຈະມີຂໍ້ມູນປະເພດດຽວກັບແຜນການຍົກຍ້າຍຈັດສັນປະຊາຊົນແບບລະອຽດ, ແຕ່ລະດັບຂອງລາຍລະອຽດຈະແຕກຕ່າງກັນ.

### 5.2.2 ແຜນການຍົກຍ້າຍຈັດສັນປະຊາຊົນ

ໂຄງການທີ່ຈັດຢູ່ໃນບັນຊີໂຄງການປະເພດ 1 ຊຶ່ງຕ້ອງໄດ້ຍົກຍ້າຍປະຊາຊົນຈຳວນຫຼາຍກວ່າ 200 ຄົນ (40-50 ຄອບຄົວ) ຫລື ຜູ້ຖືກກະທົບໄດ້ຮັບຜົນກະທົບຫຼວງຫຼາຍ ຄື ມີການສູນເສຍຊັບສິນ ການຜະລິດ ຫຼື ລາຍຮັບ ແລະ ທຸລະກິດຫຼາຍກວ່າ 20%, ໂຄງການນັ້ນ ຕ້ອງໄດ້ເຮັດແຜນການຍົກຍ້າຍຈັດສັນປະຊາຊົນແບບລະອຽດຄົບຖ້ວນຕາມເວລາທີ່ໄດ້ກຳນົດໄວ້ ໂດຍສອດຄ່ອງກັບຂໍ້ກຳນົດໃນ ດຳລັດວ່າ ດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ. ແຜນການຍົກຍ້າຍຈັດສັນປະຊາຊົນຄວນສ້າງຂຶ້ນ ໂດຍສອດຄ່ອງກັບຍຸດທະສາດດ້ານການພັດທະນາ. ການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນແລະການຟື້ນຟູຊີວິດການເປັນຢູ່ ຄວນໄດ້ຮັບການອອກແບບທີ່ດີ ເພື່ອປັບປຸງ ຫລື ຢ່າງໜ້ອຍກໍຟື້ນຟູພື້ນຖານດ້ານສັງຄົມ ແລະ ເສດຖະກິດ ຂອງຜູ້ທີ່ຖືກກະທົບຢ່າງໜັກໜ່ວງ. ຄວນໃຫ້ໂອກາດແກ່ຜູ້ທີ່ຖືກຍົກ ຍ້າຍອອກຈາກແບບແຜນການດຳລົງຊີວິດດ້ວຍການຜະລິດກະສິກຳ ໄປສູ່ແບບແຜນການທຳມາຫາກິນທີ່ຄ້າຍຄືກັນ.

ການເຮັດແຜນການຍົກຍ້າຍຈັດສັນປະຊາຊົນ ເປັນໜ້າວຽກທີ່ສຳຄັນອັນໜຶ່ງທີ່ຕ້ອງດຳເນີນໃນຂັ້ນຕອນການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດຕາມວົງຈອນໂຄງການ, ຖ້າຫາກບໍ່ແມ່ນຈຳເປັນຕ້ອງໄດ້ດຳເນີນຕັ້ງແຕ່ ໃນຂັ້ນຕອນກ່ອນໜ້ານັ້ນ. ແຜນງານ ແລະ ກິດຈະການຕ່າງໆ ໃນແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນເລັ່ງໃສ່ຫຼີກລ້ຽງຄວາມສ່ຽງຕ່າງໆ ທີ່ຈະເຮັດໃຫ້ຜູ້ທີ່ຖືກກະທົບ ຈາກໂຄງການທຸກຍາກລົງກວ່າເກົ່າ ແລະ ເພື່ອໃຫ້ການສະໜັບສະໜູນສຳລັບ ປັບປຸງຊີວິດການເປັນຢູ່ ແລະໂອກາດຫາລາຍຮັບ ຂອງເຂົາເຈົ້າ ໃຫ້ຢູ່ໃນລະດັບກ່ອນມີໂຄງການ.

***ຂໍ້ມູນຂ່າວສານທີ່ຕ້ອງການ ແລະ ໂຄງຮ່າງຂອງແຜນການຍົກຍ້າຍຈັດສັນປະຊາຊົນ***

ຂໍ້ມູນຂ່າວສານ ທີ່ຕ້ອງການ ສຳລັບການກະກຽມ ບົດລາຍງານການເວນຄືນທີ່ດິນ, ການທົດແທນຄ່າເສຍຫາຍ, ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ໂຄງຮ່າງຂອງແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນໄດ້ສະເໜີໃນ *ເອກກະສານຄັດຕິດ 2 ແລະ 3* ຕາມລຳດັບ. ລາຍລະອຽດເພີ້ມເຕີມ ກ່ຽວກັບປະເພດຂໍ້ມູນ ທີ່ຕ້ອງການໃນການກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ ໄດ້ສະເໜີຢູ່ໃນໝວດທີ 7.

ການສ້າງແຜນການຍົກຍ້າຍຈັດສັນປະຊາຊົນ, ເຈົ້າຂອງໂຄງການ ຫຼື ທີ່ປຶກສາ ຕ້ອງໄດ້ດຳເນີນໄປຕາມບາດກ້າວຕ່າງໆ ເພື່ອເຮັດໃຫ້ແຜນການດັ່ງກ່າວ ເປັນທີ່ຍອມຮັບໄດ້.

ບາດກ້າວຕ່າງໆປະກອບດ້ວຍ:

- ການທົບທວນຄືນລະບຽບກົດໝາຍຕ່າງໆຂອງ ສປປລາວ;
- ການທົບທວນຄືນ ການອອກແບບຂອງໂຄງການ, ຜົນໄດ້ ແລະ ຂໍ້ແນະນໍາໃນບົດລາຍງານ ການສຶກສານກະທົບຕໍ່ສັງຄົມເບື້ອງຕົ້ນ;
- ດໍາເນີນການສົນທະນາປຶກສາຫາລືກັບອົງການປົກຄອງທ້ອງຖິ່ນຂັ້ນເມືອງ ແລະ ແຂວງ ທີ່ຖືກກະທົບ ເພື່ອການເຫັນດີເຫັນພ້ອມນໍາວິທີການວາງແຜນສໍາລັບການຍົກຍ້າຍຈັດສັນປະຊາຊົນ. ອົງການປົກຄອງທ້ອງຖິ່ນ ຈະມີບົດບາດຫ້າວຫັນໃນຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດການຍົກຍ້າຍຈັດສັນປະຊາຊົນ;
- ດໍາເນີນການສໍາຫຼວດ[5]ຜູ້ທີ່ຖືກກະທົບທັງໝົດຈາກໂຄງການ (ໃຫ້ກວມເອົາ 100%), ຂຶ້ນບັນຊີຊັບສິນທີ່ຖືກກະທົບ ແລະ ດໍາເນີນການສໍາຫຼວດເສດຖະກິດ-ສັງຄົມຕົວແບບ[6] ໃນເຂດໂຄງການ ແລະ ເຂດທີ່ສະເໜີເປັນບ່ອນຕັ້ງບ້ານໃໝ່, ບ່ອນໃດທີ່ມີຄວາມຈໍາເປັນຕ້ອງ ໄດ້ຍົກຍ້າຍຈັດສັນຜູ້ທີ່ຖືກກະທົບຈາກໂຄງການ, ຕ້ອງສ້າງຂໍ້ມູນພື້ນຖານ ກ່ຽວກັບປະຊາຊົນທີ່ຖືກກະທົບ ແລະ ປະຊາຊົນເຈົ້າພາບ. ສໍາລັບໂຄງການທີ່ມີລະດັບນ້ອຍກວ່າ ແລະ ອີງໃສ່ທຶນຮອນທີ່ມີ, ອາດດໍາເນີນການສໍາຫຼວດ, ການຂຶ້ນບັນຊີຊັບສິນທີ່ຖືກກະທົບ ແລະ ການສໍາຫຼວດເກັບກໍາຂໍ້ມູນດ້ານເສດຖະກິດ-ສັງຄົມພ້ອມກັນຄັ້ງດຽວໃນເວລາການລົງເກັບກໍາຂໍ້ມູນພາກສະໜາມ;
- ດໍາເນີນການປຶກສາຫາລືກັບຜູ້ມີສ່ວນຮ່ວມ (ລວມທັງຜູ້ທີ່ຖືກກະທົບ) ເພື່ອຮັບເອົາຄໍາຄິດຄໍາເຫັນຂອງເຂົາເຈົ້າເຂົ້າໃນການອອກແບບແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ເພື່ອຍົກສູງຄວາມເປັນເຈົ້າການ, ອໍານວຍຄວາມສະດວກສໍາລັບຂະບວນການຮັບຮອງ ແລະ ຮັບປະກັນຄວາມສະດວກ ໃນການຈັດຕັ້ງປະຕິບັດ;
- ວິໄຈຂໍ້ມູນ ເພື່ອກໍານົດປະເພດຜູ້ທີ່ຖືກກະທົບຈາກໂຄງການ ໂດຍອີງຕາມລະດັບ ແລະ ຂະໜາດຂອງຜົນກະທົບຈາກອົງປະກອບຕ່າງໆຂອງໂຄງການ;
- ດໍາເນີນການປຶກສາຫາລືກັບຜູ້ມີສ່ວນຮ່ວມຫຼັກ ເພື່ອຈັດຮູບແບບການທົດແທນຄ່າເສຍຫາຍ (ລວມທັງການທົດແທນຄ່າເສຍຫາຍຂອງຊັບສິນປະເພດຕ່າງໆທີ່ຖືກກະທົບ,ມາດຕະການຟື້ນຟູເສດຖະກິດ ແລະ ການຊ່ວຍເຫຼືອອື່ນໆ) ສໍາລັບຜູ້ທີ່ຖືກກະທົບ ໃນແຕ່ລະປະເພດ;

---

[5] ການສໍາຫຼວດ ຕ້ອງໃຫ້ລາຍລະອຽດກ່ຽວກັບທີ່ດິນແລະຊັບສິນ ທີ່ມີເຈົ້າຂອງຫຼືໃຊ້ຢູ່ ແລະ ຈໍານວນທີ່ຊັດເຈນ ສໍາ ລັບຊັບສິນທີ່ຕ້ອງໄດ້ເວນຄືນ ໃນໄລຍະຊົ່ວຄາວແລະຖາວອນ ຈາກແຕ່ລະຄອບຄົວທີ່ໄດ້ຮັບຜົນກະທົບ ຈາກ ໂຄງການ, ລວມທັງຂໍ້ມູນກ່ຽວກັບຖານະທາງເສດຖະກິດ-ສັງຄົມ ແລະ ອາຊີບຂອງຜູ້ໄດ້ຮັບຜົນກະທົບທັງໝົດ.

[6] ການສໍາຫຼວດເສດຖະກິດ-ສັງຄົມ ຄວນໄດ້ຂໍ້ມູນກ່ຽວກັບໂຄງປະກອບດ້ານສັງຄົມ, ການຄອບຄອງທີ່ດິນ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດ, ການເຂົ້າເຖິງບ່ອນໃຫ້ການບໍລິການທາງດ້ານສັງຄົມ ແລະ ພື້ນຖານໂຄງລ່າງຕ່າງໆ ທີ່ຈັດຕາມແຕ່ລະກຸ່ມສັງຄົມໃນເຂດໂຄງການ ແລະ ປະຊາຊົນເຈົ້າພາບໃນເຂດທີ່ຈັດສັນບ່ອນຢູ່ໃໝ່, ຕ້ອງໄດ້ລະບຸຈະແຈ້ງ ກ່ຽວກັບກຸ່ມຄົນພິເສດຕ່າງໆ, ໂດຍສະເພາະ ຜູ້ທຸກຍາກແລະກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ (ຕົວຢ່າງ: ຜູ້ເຊົ່າທີ່ດິນຢູ່, ຄົນງານທີ່ບໍ່ມີດິນ, ແມ່ຍິງ) ແລະ ໃຫ້ລາຍລະອຽດກ່ຽວກັບຄຸນລັກສະນະພິເສດ ຂອງເຂົາເຈົ້າຕໍ່ໂຄງການ; ການສໍາຫຼວດຄວນໃຫ້ລາຍລະອຽດກ່ຽວກັບຜົນກະທົບທີ່ຄາດການໄວ້ຈາກໂຄງການ - ການໄດ້ຮັບຜົນປະໂຫຍດ, ໂຄງລ່າງພື້ນຖານ ແລະ ການບໍລິການດ້ານສັງຄົມຕ່າງໆ ແລະຜົນກະທົບທາງລົບ ຕໍ່ແຕ່ລະກຸ່ມຂອງສັງຄົມ.

- ສ້າງຂັ້ນຕອນ ສຳລັບ ປະເມີນການທົດແທນຄ່າເສຍຫາຍຂອງຊັບສິນປະເພດຕ່າງໆ ທີ່ໄດ້ຮັບຜົນກະທົບ;
- ສ້າງຕາຕະລາງເວລາ ເພື່ອຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ;
- ສ້າງຂັ້ນຕອນໃນການແກ້ໄຂຂໍ້ຂັດແຍ່ງຕ່າງໆ;
- ກຳນົດຂັ້ນຕອນຕິດຕາມກວດກາໃນໄລຍະດຳເນີນ ແລະ ສຳເລັດໂຄງການ ແລະ ກຳນົດອົງການກວດກາພາຍນອກ ທີ່ມີຄວາມສາມາດມາເຮັດການຕິດຕາມກວດກາ ແລະ ສ້າງກອບໜ້າວຽກສຳລັບ ການກວດກາດັ່ງກ່າວ;
- ກະກຽມແຜນຄາດຄະເນການໃຊ້ຈ່າຍ ສຳລັບ ຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນລວມທັງ ຄ່າສິ້ນເປືອງທາງດ້ານບໍລິຫານຕ່າງໆ.

ໃນກໍລະນີເຫັນວ່າໂຄງການໃດ ຈະມີຜົນກະທົບດ້ານລົບຕໍ່ຄອບຄົວໃນກຸ່ມທີ່ທຸກຍາກ, ໃນແຜນການຍົກຍ້າຍຈັດສັນປະຊາຊົນນັ້ນ ຕ້ອງໄດ້ລະບຸມາດຕະການ[7] ເພີ້ມເຕີມບວກກັບຄ່າທົດແທນຄວາມເສຍຫາຍ ເພື່ອແນໃສ່ປັບປຸງຖານະຂອງຜູ້ທຸກຍາກ ໃຫ້ຂຶ້ນສູ່ສະພາບທີ່ສາມາດຍອມຮັບໄດ້ຢູ່ເໜືອເສັ້ນລະດັບຄວາມທຸກຍາກ.

---

[7] ມາດຕະການ ຄວນແນໃສ່ຫຼີກລ້ຽງຄວາມສ່ຽງທາງດ້ານສັງຄົມທີ່ອາດເກີດຂຶ້ນ ແລະຄວນຈັດຕາມຫົວເລື້ອງທີ່ກວມເອົາ: ກ) ການຫຼຸດຜ່ອນ ສິ່ງກີດຂວາງໃນການເຂົ້າເຖິງຕະຫຼາດ, ການຄ້າຂາຍແລະການຊອກວຽກງານເຮັດ; ຂ) ການປັບປຸງຄວາມສາມາດເຂົ້າເຖິງ ແລະ ການໃຫ້ການບໍລິການດ້ານສັງຄົມທີ່ຈຳເປັນແກ່ຜູ້ທຸກຍາກ; ຄ) ການສ້າງຄວາມເຂັ້ມແຂງດ້ວຍການຄຸ້ມຄອງທີ່ດີ, ມີຂະບວນການເຂົ້າຮ່ວມທີ່ດີ ແລະ ມີການຈັດຕັ້ງທີ່ດີສຳລັບຜູ້ທຸກຍາກ; ແລະ ງ) ການຫຼຸດຜ່ອນໂອກາດ ທີ່ຈະເຮັດໃຫ້ເຂົາເຈົ້າທຸກຍາກລົງຕື່ມ ໂດຍສ້າງຊັບສິນທາງດ້ານສັງຄົມ ຂຶ້ນເຊັ່ນ: ຍຸດທະສາດສ້າງຊັບສິນເປັນຕົ້ນ "ດິນປ່ຽນດິນ", ການໃຊ້ເຮືອນແທນຄືນ ແລະ ຄວາມໝັ້ນຄົງທີ່ຮັບປະກັນຕໍ່ກຳມະສິດທີ່ດິນ. ຍຸດທະສາດທີ່ບໍ່ອີງໃສ່ດິນ ອາດໃຫ້ຄວາມສຳຄັນຫຼາຍກວ່າ ສຳລັບສິດຄອບຄອງ ຕາມ ປະເພນີ ແລະ ວັດທະນະທຳ ຂອງປະຊາຊົນ ຊົນເຜົ່າ ແລະ ຄົນດັ້ງເດີມ ການເຮັດໃຫ້ເຂົ້າເຖິງແຫຼ່ງການເງິນ ແລະ ສິນເຊື່ອຂະໜາດນ້ອຍດີຂຶ້ນ; ດຳເນີນການຝຶກອົບຮົມໃນວຽກງານໃໝ່; ປັບປຸງຄວາມສາມາດໃຫ້ເຂົ້າເຖິງຕະຫຼາດ ແລະໂອກາດມີວຽກເຮັດງານທຳ. ການເຄື່ອນໄຫວຕ່າງໆ ຄວນເຮັດໃຫ້ມີການເຂົ້າຮ່ວມ ແລະການ ປຶກສາຫາລືກັບຜູ້ທຸກຍາກ ເພື່ອຮັບປະກັນວ່າ ຄວາມຈຳເປັນ, ບຸລິມະສິດ ແລະ ຄວາມປາດຖະໜາຂອງ ເຂົາ ເຈົ້າໄດ້ຖືກເອົາໃຈໃສ່ຢ່າງເຕັມສ່ວນ, ໃນລັກສະນະທີ່ມີຄວາມໂປ່ງໃສໂດຍມີການເຂົ້າຮ່ວມຂອງອົງການຈັດຕັ້ງສັງຄົມ ແລະ ຜູ້ທີ່ກ່ຽວຂ້ອງຢ່າງຄົບຖ້ວນ. ການຄັດເລືອກເອົາຍຸດທະສາດສຸດທ້າຍຄວນອີງໃສ່ຄວາມມັກ ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ບົນພື້ນຖານຄວາມຮັບຮູ້ຢ່າງເຕັມສ່ວນ.

## ໝວດທີ 6. ແຜນພັດທະນາຊົນເຜົ່າ

### 6.1 ຈຸດປະສົງ ແລະ ຂອບເຂດ

ໂຄງການໃດທີ່ສ້າງຜົນກະທົບທາງລົບຕໍ່ຊົນເຜົ່າ ຫຼື ຕໍ່ຖິ່ນຖານຂອງເຂົາເຈົ້າ, ຊຶ່ງຈັດເຂົ້າຢູ່ໃນໂຄງການປະເພດ 1 ນັ້ນ, ເຈົ້າຂອງໂຄງການຕ້ອງໄດ້ສ້າງແຜນພັດທະນາຊົນເຜົ່າ ເປັນເອກະສານໜຶ່ງສະເພາະ. ແຕ່ຖ້າຫາກວ່າ ກຸ່ມຊົນເຜົ່າຈຳນວນໜຶ່ງມີຊີວິດການເປັນຢູ່ໂດຍມີການຮ່ວມທາງດ້ານສັງຄົມ ແລະ ເສດຖະກິດກັບເຜົ່າອື່ນ ຊຶ່ງເປັນພົນລະເມືອງກຸ່ມໃຫຍ່ແລ້ວ ແລະ ສະພາບດັ່ງກ່າວນີ້ ກໍໄດ້ຮັບການຢັ້ງຢືນຈາກການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແລະ ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດໃນໄລຍະຕໍ່ມາ, ໃນກໍລະນີຄືແນວນີ້ ແມ່ນບໍ່ມີຄວາມຈຳເປັນຕ້ອງສ້າງແຜນພັດທະນາຊົນເຜົ່າສະເພາະ, ພຽງແຕ່ໃຫ້ມີການອະທິບາຍລະອຽດ ກ່ຽວກັບຜົນກະທົບ, ສະພາບເສດຖະກິດ-ສັງຄົມຂອງຊົນເຜົ່ານັ້ນ ແລະ ມາດຕະການຫຼຸດຜ່ອນຜົນກະທົບ ໂດຍສ້າງເປັນເອກກະສານຄັດຕິດຂອງ ແຜນການຍົກຍ້າຍຈັດສັນປະຊາຊົນ.

### 6.2 ການສຳຫຼວດ ແລະ ຂໍ້ມູນຂ່າວສານທີ່ຈຳເປັນ

ໃນບັນດາໂຄງການທີ່ອາດສ້າງຜົນກະທົບຕໍ່ຊົນເຜົ່າ ແມ່ນຕ້ອງໄດ້ມີການດຳເນີນການວິໃຈບັນຫາ ຊຶ່ງເປັນພາກສ່ວນໜຶ່ງ ຂອງການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ. ຕົວແບບຂອງການວິໃຈບັນຫາສຳລັບຊົນເຜົ່າ ໃນໂຄງການພັດທະນາ ແມ່ນໄດ້ສະເໜີໃນ <u>*ເອກກະສານຄັດຕິດ 4.*</u>

ສຳລັບໂຄງການ ທີ່ອາດໄດ້ຮັບຜົນກະທົບທາງລົບຕໍ່ຊົນເຜົ່າ,. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດຕ້ອງໄດ້ສຸມໃສ່ບັນຫາຊົນເຜົ່າໄປຄຽງຄູ່ກັບບັນຫາອື່ນໆ. ໂຄງປະກອບສຳລັບເຮັດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດສຳລັບຊົນເຜົ່າ ແມ່ນໄດ້ສະເໜີ ຢູ່ໃນ <u>*ເອກກະສານຄັດຕິດ 5.*</u>

ເຖິງແມ່ນວ່າ ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແນໃສ່ບັນຫາໃນລະດັບມະຫາພາກ ແລະ ຍຸດທະສາດແບບກວມລວມ ເພື່ອຫຼຸດຜ່ອນຜົນກະທົບ, ແຕ່ກໍຍັງຮຽກຮ້ອງໃຫ້ມີການສຶກສາສະເພາະ ແລະ ມີຈຸດເນັ້ນໜັກ ເພື່ອການກະກຽມແຜນພັດທະນາຊົນເຜົ່າ.

***ຂໍ້ມູນຂ່າວສານທີ່ຈຳເປັນ***

ຂໍ້ມູນຂ່າວສານທີ່ຈຳເປັນ ສຳລັບເຮັດແຜນພັດທະນາຊົນເຜົ່າ ມີດັ່ງນີ້:

- ຂໍ້ມູນການສຳຫລວດຂັ້ນພື້ນຖານດ້ານປະຊາກອນ, ຂໍ້ມູນດ້ານເສດຖະກິດ-ສັງຄົມ ແລະ ການຂຶ້ນບັນຊີຊັບສິນ ທີ່ຖືກກະທົບ;
- ກຳມະສິດຂອງຄອບຄົວຕໍ່ພື້ນຖານເສດຖະກິດ ແລະ ການຜະລິດ;
- ລາຍໄດ້ປະຈຳປີ ຈາກວຽກງານຕົ້ນຕໍ ແລະ ສຳຮອງ;
- ຂ່າວສານທາງດ້ານເສດຖະກິດຂອງຊຸມຊົນ (ເຊັ່ນ ຂ່າວສານຫຍໍ້ ກ່ຽວກັບຊັບພະຍາກອນດ້ານເສດຖະກິດ ແລະ ທຳມະຊາດ, ລະບົບການຜະລິດ ແລະ ການທຳມາຫາກິນ, ລະບົບການຄອບຄອງທີ່ດິນ);
- ຂໍ້ມູນຂ່າວສານດ້ານສັງຄົມຂອງຊຸມຊົນ (ເຊັ່ນ ອະທິບາຍຫຍໍ້ ກ່ຽວກັບ ພີ່ນ້ອງເຊື້ອສາຍ, ລະບົບຄຸນຄ່າ, ຮູບການຈັດຕັ້ງສັງຄົມ ທັງກຸ່ມທີ່ເປັນທາງການ ແລະ ບໍ່ເປັນທາງການ, ກຸ່ມຊາວກະສິກອນ

ແລະ ອື່ນໆ, ໂດຍສະເພາະແມ່ນກຸ່ມທີ່ສາມາດຊ່ວຍກຸ່ມຕ່າງໆ ໃນການປັບຕົວເຂົ້າກັບຜົນກະທົບທີ່ອາດຈະເກີດຂຶ້ນ ຈາກການມີຖະໜົນໜົນທາງທີ່ດີຂຶ້ນ;

- ຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ ຕໍ່ການບໍລິການພື້ນຖານດ້ານສັງຄົມ (ເຊັ່ນ: ນ້ຳປະປາ, ສຸກສາລາ ແລະ ໂຮງຮຽນ);
- ຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ ຕໍ່ຊີວິດການເປັນຢູ່ທາງດ້ານສັງຄົມ ແລະ ເສດຖະກິດ.

ຂໍ້ມູນຂ່າວສານຄວນເກັບກຳມາຈາກກອງປະຊຸມຂອງກຸ່ມ, ເປັນຕົ້ນແມ່ນກອງປະຊຸມລວມຂອງຊົນເຜົ່າ ທີ່ຖືກກະທົບໃນເຂດນັ້ນ ແລະ ກອງປະຊຸມກັບແມ່ຍິງພື້ນບ້ານ ໂດຍສະເພາະແມ່ນຜູ້ທີ່ອາໄສຢູ່ໃກ້ກັບເຂດທີ່ໄດ້ຮັບອິດທິພົນຈາກໂຄງການ. ການປຶກສາຫາລື ຕ້ອງສຸມໃສ່ຈຸດປະສົງຂອງໂຄງການ, ຜົນກະທົບທາງບວກ ແລະ ທາງລົບທີ່ອາດເກີດຂຶ້ນ ແລະ ການສະເໜີແນະນຳ ເພື່ອອອກແບບໂຄງການ. ຖ້າວ່າ ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດຊີ້ໃຫ້ເຫັນວ່າ ຜົນກະທົບຈາກໂຄງການທີ່ນຳສະເໜີມານັ້ນ ຈະເປັນຜົນກະທົບທີ່ຫຼວງຫຼາຍ ແລະ ຊົນເຜົ່າປະຕິເສດໂຄງການ, ອົງການຮັບຜິດຊອບໂຄງການ ຕ້ອງໄດ້ພິຈາລະນາຄືນ ກ່ຽວກັບ ການອອກແບບໂຄງການ ຫຼື ຮ່າງໂຄງການໃໝ່.

## 6.3 ການສ້າງທາງເລືອກໃນການພັດທະນາ

ມາດຕະການຫຼຸດຜ່ອນຜົນກະທົບ ແມ່ນຕ້ອງຮັບປະກັນໃຫ້ປະຊາຊົນບັນດາເຜົ່າ ມີຜົນໄດ້ທາງດ້ານເສດຖະກິດ ແລະ ສັງຄົມຂອງຊົນເຜົ່າ ສອດຄ່ອງກັບວັດທະນະທຳຂອງພວກເຂົາເຈົ້າ. ຈຸດສຸມຂອງແຜນພັດທະນາຊົນເຜົ່າຄວນເລັງໃສ່ຊັບພະຍາກອນທີ່ມີຢູ່ ແລະ ມາດຕະການແກ້ໄຂທີ່ບໍ່ນຳໃຊ້ເງິນ ຊຶ່ງຖືກສ້າງຂຶ້ນໂດຍຜ່ານການປຶກສາຫາລື ແລະ ການເຂົ້າຮ່ວມກ້ວາງຂວາງຂອງມວນຊົນ. ໃນການຊ່ວຍເຫຼືອນັ້ນ ຄວນລວມເອົາທັງການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ແລະ ການສ້າງຄວາມອາດສາມາດໃຫ້ແກ່ຜູ້ອາວຸໂສຂອງຊົນເຜົ່າ ແລະ ກຸ່ມຊຸມຊົນທີ່ເຮັດວຽກຍົກຍ້າຍຈັດສັນປະຊາຊົນ.

*ການມີສ່ວນຮ່ວມຂອງມວນຊົນ ແລະ ການປຶກສາຫາລື*

ໂຄງປະກອບການປຶກສາຫາລື ແລະ ການເຂົ້າຮ່ວມຂອງມວນຊົນ ແລະ ກົນໄກການແກ້ໄຂການຮ້ອງທຸກຕ້ອງໄດ້ສ້າງຂຶ້ນໂດຍໃຫ້ແທດເໝາະກັບຈຸດພິເສດດ້ານວັດທະນະທຳ ແລະ ຄວາມຊົນເຄີຍຂອງຊົນເຜົ່າ. ກົນໄກທັງໝົດຕ້ອງຖືກສ້າງຂຶ້ນຮ່ວມກັບກຸ່ມຊົນເຜົ່າ ແລະ ບັນດາຜູ້ນຳຂອງເຂົາເຈົ້າ ໂດຍມີການຮ່ວມມືຢ່າງໃກ້ສິດກັບພະນັກງານທ້ອງຖິ່ນ. ໃນບ່ອນທີ່ມີເງື່ອນໄຂກໍຄວນວ່າຈ້າງເອົາພະນັກງານທີ່ມີຄວາມຮູ້ ແລະ ປະສົບການດ້ານຊົນເຜົ່າເຂົ້າມາເຮັດວຽກໃນທີມງານເຮັດການສຶກສາຜົນກະທົບຕໍ່ສັງຄົມ ແລະ ໃນທີມງານຕິດຕາມກວດກາ. ຮູບແບບຂອງຕາຕະລາງເວລາ ແລະ ຂັ້ນຕອນຕ່າງໆ ສຳລັບການປຶກສາຫາລືກັບຊົນເຜົ່າ ແມ່ນໄດ້ສະເໜີຢູ່ໃນ *ເອກກະສານຄັດຕິດ 6.*

## 6.4 ການປະກອບເອກກະສານ/ແຜນພັດທະນາຊົນເຜົ່າ

ຮູບແບບ ແລະ ໂຄງຮ່າງລວມ ສຳລັບແຜນດຳເນີນງານດ້ານສັງຄົມ ຊຶ່ງເລັ່ງໃສ່ບັນຫາຊົນເຜົ່າໄດ້ສະເໜີ ຢູ່ໃນ *ເອກກະສານຄັດຕິດ 7.*

# ພາກທີ III

## ການວາງແຜນການຍົກຍ້າຍຈັດສັນປະຊາຊົນ

## ໝວດທີ 7. ການສຳຫຼວດເພື່ອວາງແຜນການຍົກຍ້າຍຈັດສັນປະຊາຊົນ

### 7.1 ການສຳຫຼວດເພື່ອການຍົກຍ້າຍຈັດສັນປະຊາຊົນ

ໝວດນີ້ ຈະໃຫ້ລາຍລະອຽດ ກ່ຽວກັບ ປະເພດຂໍ້ມູນອັນຈຳເປັນທີ່ໄດ້ຈາກການສຳຫຼວດ ເພື່ອເປັນພື້ນຖານໃຫ້ແກ່ການວາງແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ເຄື່ອງມືຕ່າງໆທີ່ນຳໃຊ້ເຂົ້າໃນການເກັບກຳຂໍ້ມູນ. ຂໍ້ມູນດັ່ງກ່າວນີ້ ຖ້າເວົ້າໃນວົງຈອນຂອງໂຄງການ ແມ່ນມີຄວາມສຳຄັນທີ່ສຸດ ເພື່ອກຳນົດໄດ້ຄວາມເໝາະສົມຂອງການນຳໃຊ້ດຳລັດ 192 ແລະ ກຳນົດຜູ້ທີ່ຈະໄດ້ຮັບຜົນກະທົບ ແລະ ບັນດາຄວາມທຸກຍາກທີ່ເຂົາເຈົ້າຈະໄດ້ປະເຊີນ, ເພື່ອສ້າງຂໍ້ມູນພື້ນຖານ ສຳລັບການວັດແທກລະດັບການຟື້ນຟູລາຍຮັບ ແລະ ລະດັບຄາດໝາຍອື່ນໆ ແລະ ເພື່ອກຳນົດທາງເລືອກທີ່ເປັນໄປໄດ້ທາງດ້ານເຕັກນິກ ແລະ ເປັນທີ່ຍອມຮັບໄດ້ຂອງສັງຄົມ.

ການສ້າງແຜນການຍົກຍ້າຍຈັດສັນປະຊາຊົນ ຕ້ອງໄດ້ດຳເນີນການສຳຫຼວດຫຼາຍດ້ານ ເພື່ອໃຫ້ເຂົ້າໃຈແຈ້ງເຖິງລະດັບຄວາມເສຍຫາຍ ຍ້ອນການເວນຄືນທີ່ດິນ, ຖານະທາງດ້ານເສດຖະກິດ-ສັງຄົມ ຂອງປະຊາຊົນທີ່ຖືກກະທົບ ຈາກໂຄງການ ແລະ ເພື່ອເປັນການກຳນົດວັນເລີ່ມຕົ້ນໂຄງການ ເພື່ອໃຫ້ສິດແກ່ພວກເຂົາເຈົ້າ ໃນການໄດ້ຮັບການທົດແທນທີ່ດິນ ແລະ ຊັບສິນທີ່ຖືກຄວາມເສຍຫາຍ. ໃນນີ້ ມັນມີຄວາມຈຳເປັນຕ້ອງໄດ້ມີການສຳຫຼວດ/ຂຶ້ນບັນຊີ 3 ປະເພດ ຄື:

- ການສຳຫຼວດຄອບຄົວທີ່ຖືກກະທົບ ແລະ ການກຳນົດວັນເລີ່ມຕົ້ນໂຄງການ.
- ການຂຶ້ນບັນຊີທີ່ດິນ ແລະ ຊັບສິນອື່ນໆ ທີ່ຖືກກະທົບ.
- ຂໍ້ມູນພື້ນຖານ ດ້ານເສດຖະກິດ-ສັງຄົມ.

ການສຳຫຼວດແຕ່ລະປະເພດມີລາຍລະອຽດດັ່ງລຸ່ມນີ້:

### 7.2 ການສຳຫຼວດພົນລະເມືອງ ແລະ ການກຳນົດວັນເລີ່ມຕົ້ນໂຄງການ

ການສຳຫຼວດຄອບຄົວທີ່ໄດ້ຮັບຜົນກະທົບ ແມ່ນການຂຶ້ນບັນຊີຈຳນວນຄົວເຮືອນ ແລະ ປະຊາຊົນໃນເຂດໂຄງການ ໃຫ້ຄົບຖ້ວນ (ກວມເອົາ 100%) ແລະ ໃຫ້ຖືກຕ້ອງ. ສຳລັບການຍົກຍ້າຍຈັດສັນປະຊາຊົນ, ການສຳຫຼວດຕົ້ນຕໍ ແມ່ນແນໃສ່ ເພື່ອຮູ້ຕົວເລກຂອງປະຊາຊົນທັງໝົດ ທີ່ອາດໄດ້ຮັບຜົນກະທົບຈາກການເວນຄືນຊັບສິນ ແລະ ຄວາມເສຍຫາຍຕ່າງໆຍ້ອນໂຄງການ. ນອກນີ້, ການສຳຫຼວດຍັງຕ້ອງໄດ້ກວມເອົາການຂຶ້ນບັນຊີຈຳນວນປະຊາຊົນທີ່ຖືກກະທົບຍ້ອນການສູນເສຍລາຍຮັບ ຫຼື ທຸລະກິດຂອງຕົນ ຫຼື ຜູ້ທີ່ມີຊີວິດການເປັນຢູ່ທີ່ອາໄສແຕ່ທີ່ດິນ ຕອນທີ່ ຈະຖືກເວນຄືນໃຫ້ໂຄງການ ໂດຍບໍ່ຂຶ້ນກັບສະຖານະການຄອບຄອງ ຂອງຄອບຄົວນັ້ນຕໍ່ທີ່ດິນດັ່ງກ່າວ.

ປະເພດຂໍ້ມູນທີ່ຕ້ອງໄດ້ເກັບກຳໃນການສຳຫຼວດພົນລະເມືອງ ໄດ້ສະເໜີຢູ່ໃນ *<u>ເອກະສານຄັດຕິດ 8.</u>*

#### 7.2.1 ການສຳຫຼວດ ເພື່ອກຳນົດວັນເລີ່ມຕົ້ນໂຄງການ ແລະ ກຳນົດຜູ້ທີ່ມີສິດໄດ້ຮັບ ການທົດແທນຄ່າເສຍຫາຍ

ຄວາມສຳຄັນຂອງການສຳຫຼວດພົນລະເມືອງ ບໍ່ພຽງແຕ່ເປັນການເກັບກຳຂໍ້ມູນລະອຽດ ກ່ຽວກັບປະຊາຊົນທີ່ຖືກກະທົບເທົ່ານັ້ນ, ແຕ່ມັນຍັງແມ່ນ ເປັນການກຳນົດວັນເລີ່ມຕົ້ນໂຄງການ ເພື່ອຈະໃຫ້ສິດແກ່ຜູ້ທີ່ຖືກກະທົບໄດ້ຮັບການທົດ

ແທນຄ່າເສຍຫາຍຕື່ມອີກ. ມັນມີຄວາມສຳຄັນສຳລັບໂຄງການ ແລະ ປະຊາຊົນທີ່ຖືກກະທົບທີ່ຕ້ອງໄດ້ກຳນົດວັນເລີ້ມຕົ້ນໂຄງການ ໂດຍກຳນົດເອົາມື້ເລີ້ມຕົ້ນສຳຫຼວດຜູ້ທີ່ຖືກກະທົບ ໃນຂອບເຂດຂອງໂຄງການເປັນວັນດັ່ງກ່າວ. ໃນມື້ສຳຫຼວດແມ່ນຈະມີແຕ່ຜູ້ທີ່ຖືກກະທົບທີ່ດຳລົງຊີວິດຕົວຈິງໃນພື້ນທີ່, ຜູ້ດຳເນີນທຸລະກິດ ຫຼື ທຳການປູກຝັງ ຫຼື ຜູ້ທີ່ມີສິດທິຄອບຄອງຊັບພະຍາກອນຕ່າງໆ ໃນຂອບເຂດບໍລິເວນ ຂອງໂຄງການເທົ່ານັ້ນ ຈະຖືກຖືວ່າຈະເປັນຜູ້ມີສິດທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍຂອງຊັບສິນ ແລະ ການຊ່ວຍເຫຼືອອື່ນໆຈາກໂຄງການ. ການຖືເອົາວັນເລີ້ມຕົ້ນໂຄງການເປັນວັນແຫ່ງການກຳນົດ ຜູ້ທີ່ມີສິດຈະໄດ້ຮັບການທົດແທນຄ່າເສຍຫາຍນັ້ນ ກໍຄວນໄດ້ມີການພິຈາລະນາຢ່າງລະອຽດບົນພື້ນຖານຂອງກົດໝາຍວ່າດ້ວຍທີ່ດິນຢູ່ໃນ ສປປລາວ.

### 7.2.2 ການໃຊ້ເຄື່ອງໝາຍ ແລະ ການເກັບພາບຖ່າຍເປັນຫຼັກຖານ

ປະຊາຊົນທີ່ຖືກກະທົບຕ້ອງໄດ້ຮັບການແຈ້ງຂ່າວຢ່າງຈະແຈ້ງ ກ່ຽວກັບວັນເລີ້ມຕົ້ນໂຄງການ ແລະ ຄວາມສຳຄັນຕໍ່ເຂົາເຈົ້າ ແລະ ຜູ້ຈັດຕັ້ງປະຕິບັດໂຄງການ. ຂໍ້ມູນການສຳຫຼວດຕ່າງໆຕ້ອງໄດ້ມີເຄື່ອງໝາຍ ແລະ ພາບຖ່າຍ ຂອງຊັບສິນທີ່ຖືກກະທົບ ໂດຍຖ່າຍຮ່ວມກັບເຈົ້າຂອງຊັບສິນໃນວັນເລີ້ມຕົ້ນໂຄງການ ເພື່ອຫຼີກລ້ຽງຄວາມສັບສົນ ແລະ ເຂົ້າໃຈຜິດຕໍ່ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ.

ເຖິງຢ່າງໃດກໍຕາມ, ບຸກຄົນໃດທີ່ຖືສິດຄອບຄອງຊັບສິນຄົງທີ່ຢູ່ໃນຂອບເຂດໂຄງການ ໂດຍຜ່ານການຊື້ຂາຍນຳກັນຢ່າງຖືກຕ້ອງຕາມກົດໝາຍ ຫຼັງວັນຂີດໝາຍນັ້ນ ແມ່ນຈະໄດ້ຮັບສິດທິທັງໝົດຈາກໂຄງການຢ່າງອັດຕະໂນມັດ. ນອກຈາກນັ້ນ, ການກຳນົດວັນເລີ້ມຕົ້ນໂຄງການ ແມ່ນບໍ່ໄດ້ສະກັດກັ້ນຢ່າງໃດຕໍ່ຄອບຄົວໃດໜຶ່ງ ໃນການປັບປຸງເຮືອນຊານຂອງຕົນ ທີ່ຈະໄດ້ຮັບຜົນກະທົບຈາກໂຄງການ ແລະ ທັງຈະບໍ່ໄດ້ເສຍສິດໃນການຮັບການທົດແທນຄ່າເສຍຫາຍ ຕໍ່ສ່ວນທີ່ໄດ້ປັບປຸງເພີ່ມເຕີມ ຫຼື ມີການປ່ຽນແປງນັ້ນ, ໂດຍສະເພາະ ໃນກໍລະນີໂຄງການມີການແກ່ຍາວເວລາລະຫວ່າງວັນເລີ້ມຕົ້ນໂຄງການ ແລະ ມື້ລົງມືຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ຕົວຈິງ.

*ການກຳນົດວັນເລີ້ມຕົ້ນໂຄງການ ແມ່ນມີສອງເປົ້າໝາຍຄື: ປົກປ້ອງສິດທິຂອງປະຊາຊົນຜູ້ທີ່ຖືກກະທົບຈາກໂຄງການ ແລະ ປົກປ້ອງອົງການທີ່ຈັດຕັ້ງປະຕິບັດໂຄງການ ຈາກສະພາບການສວຍໂອກາດ ຂອງປະຊາຊົນທີ່ຈະຍົກຍ້າຍເຂົ້າມາຢູ່ເຂດໂຄງການ ເພື່ອຫວັງເອົາຜົນປະໂຫຍດນຳໂຄງການ.*

## 7.3 ການຂຶ້ນບັນຊີຊັບສິນທີ່ຖືກກະທົບ

ເປົ້າໝາຍການຂຶ້ນບັນຊີຊັບສິນ ມີສາມຢ່າງຄື: 1) ບັນທຶກການສູນເສຍທີ່ດິນແຕ່ລະປະເພດ, ສິ່ງປຸກສ້າງ ແລະ ຊັບສິນອື່ນໆ ຈາກນັ້ນແມ່ນຈະໄດ້ຄຳນວນລະດັບຂອງຄວາມເສຍຫາຍ; 2) ການລະບຸເຖິງເຈົ້າຂອງຊັບສິນທີ່ເສຍຫາຍໃນແຕ່ລະປະເພດ ເພື່ອກຳນົດສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ; 3) ຊ່ວຍໃນການຂຶ້ນງົບປະມານ ສຳລັບການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຂອງໂຄງການນັ້ນ.

ເພື່ອດຳເນີນການທົດແທນຄ່າເສຍຫາຍໄດ້ດີ ແລະ ມີປະສິດທິຜົນ, ການຂຶ້ນບັນຊີຊັບສິນທີ່ຖືກກະທົບ ແລະ ການສູນເສຍອື່ນໆ ເຈົ້າຂອງໂຄງການແມ່ນຕ້ອງໄດ້ດຳເນີນການຢ່າງຖືກຕ້ອງ ແລະ ລະອຽດເທົ່າທີ່ເປັນໄປໄດ້. ຄວາມຖືກຕ້ອງໃນການຂຶ້ນບັນຊີ ແມ່ນຂຶ້ນກັບຄວາມຖືກຕ້ອງ ຂອງການກຳນົດເຂດແດນຂອງໂຄງການ. ໃນບາງກໍລະນີເຂດແດນຂອງໂຄງການ ຈະບໍ່ສາມາດກຳນົດໄດ້ ຈົນກວ່າເວລາໄດ້ມີການອອກແບບດ້ານວິຊາການລະອຽດສຳເລັດເສຍກ່ອນ. ໃນກໍລະນີດັ່ງກ່າວນີ້ ການຂຶ້ນບັນຊີຊັບສິນ ຕ້ອງໄດ້ອີງໃສ່ຂໍ້ມູນຕ່າງໆທີ່ມີຢູ່ ກ່ຽວກັບ ເຂດແດນຂອງໂຄງການ ໃນເວລາເຮັດບົດວິພາກເສດຖະກິດເຕັກນິກແບບລະອຽດຂອງໂຄງການ ແລະ ຕ້ອງໄດ້ປັບປຸງຂໍ້ມູນດັ່ງກ່າວຄືນໃໝ່ກ່ອນຈະລົງມືຈັດຕັ້ງປະຕິບັດ. ການປັບປຸງຂໍ້ມູນຈະຕ້ອງໄດ້ໃຊ້ທຶນຮອນ ແລະ ເວລາຫຼາຍ ໃນກໍລະນີ ມີການປ່ຽນແປງຫຼາຍໃນການອອກ

ແບບໂຄງການ ພາຍຫຼັງທີ່ໄດ້ເຮັດບົດວິພາກເສດຖະກິດ-ເຕັກນິກ. ເພາະສະນັ້ນ, ມັນຈຶ່ງມີຄວາມສຳຄັນທີ່ຕ້ອງໄດ້ກຳນົດຂອບເຂດຂອງໂຄງການໃຫ້ລະອຽດຊັດເຈນເທົ່າທີ່ເປັນໄປໄດ້ໃນຂັ້ນຕອນຕົ້ນໆຂອງໂຄງການ. ການຂຶ້ນບັນຊີຊັບສິນທີ່ຖືກກະທົບ ແມ່ນຕ້ອງໄດ້ກວມເອົາທຸກໆຂໍ້ມູນ ກ່ຽວກັບ ຊັບສິນ ແລະ ຕ້ອງແມ່ນ 100% ຂອງຕອນດິນ ແລະ ຊັບສິນອື່ນໆທີ່ຖືກກະທົບ. ບັນຊີຊັບສິນລະອຽດ ແມ່ນໄດ້ສະເໜີຢູ່ໃນ *<u>ເອກກະສານຊ້ອນທ້າຍ 9.</u>*

## 7.4 ການສຳຫຼວດຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ

ຂໍ້ມູນການສຳຫຼວດພົນລະເມືອງ ແລະ ການຂຶ້ນບັນຊີຊັບສິນ ສົມທົບຕາມຄວາມຈຳເປັນກັບຂໍ້ມູນທີ່ໄດ້ ຈາກການປະເມີນການເວນຄືນທີ່ດິນ ແລະ ການສຳຫຼວດເສດຖະກິດ-ສັງຄົມ ແມ່ນທັງໝົດຄວນໄດ້ຖືກນຳເອົາມາໃຊ້ ເພື່ອກຳນົດຂໍ້ມູນພື້ນຖານເບື້ອງຕົ້ນ ກ່ຽວກັບ ລາຍຮັບ, ແບບແຜນການທຳມາຫາກິນ, ລະດັບ ຊີວິດການເປັນຢູ່ ແລະ ກຳລັງຄວາມສາມາດໃນການຜະລິດຂອງແຕ່ລະຄອບຄົວ. ຂໍ້ມູນດັ່ງກ່າວ ຈະເປັນພື້ນຖານອ້າງອີງສຳລັບການຟື້ນຟູລາຍຮັບ ແລະ ການຕີລາຄາປະສິດທິຜົນຂອງວຽກງານຟື້ນຟູເສດຖະກິດ.

ຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ ແມ່ນມີຄວາມສຳຄັນຢ່າງຍິ່ງ ສຳລັບການອອກແບບແຜນງານການຍົກຍ້າຍຈັດສັນປະຊາຊົນ ແລະ ການໃຫ້ສິດທິດແທນຕ່າງໆ ລວມທັງການຟື້ນຟູລາຍໄດ້ ແລະ ມາດຖານຊີວິດການເປັນຢູ່, ຊຶ່ງໃນນີ້ລວມມີ:

i. ຂໍ້ມູນ ກ່ຽວກັບ ພື້ນຖານຊັບພະຍາກອນທັງໝົດຂອງປະຊາຊົນທີ່ຖືກກະທົບ, ລວມທັງລາຍຮັບທີ່ໄດ້ຮັບຈາກຂະແໜງການຜະລິດ ທີ່ບໍ່ເປັນທາງການ (ສຳຮອງ) ແລະ ຈາກຊັບພະຍາກອນລວມໝູ່;

ii. ຂໍ້ມູນ ກ່ຽວກັບ ພື້ນຖານໂຄງລ່າງສາທາລະນະ ແລະ ການບໍລິການຊຸມຊົນ ຊຶ່ງຈະຖືກກະທົບ;

iii. ກິດຈະການຜະລິດ, ແຫຼ່ງລາຍຮັບ ແລະ ສິດທິຕໍ່ຊັບສິນ;

iv. ກຳນົດ ກ່ຽວກັບ ອົງການຈັດຕັ້ງຂອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມ ທີ່ສາມາດເຂົ້າໃນການອອກແບບ ແລະ ຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ; ແລະ

v. ການກຳນົດຄວາມຮູ້ສຶກ ແລະ ຄວາມພໍໃຈ ກ່ຽວກັບ ທາງເລືອກຕ່າງໆ ສຳລັບການຍົກຍ້າຍຈັດສັນປະຊາຊົນ.

ລາຍການລະອຽດກ່ຽວກັບຂໍ້ມູນທີ່ມີ ສຳລັບການສຳຫຼວດຫາຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມໄດ້ສະເໜີໃນ *<u>ເອກກະສານຄັດຕິດ 10.</u>*

## 7.5 ບັນຫາສຳຄັນໃນການລົງສຳຫຼວດຢູ່ພາກສະໜາມ

ໂດຍອີງຈຸດພິເສດແລະຕາຕະລາງເຮັດວຽກຂອງໂຄງການ, ການລົງສຳຫຼວດພົນລະເມືອງ, ການຂຶ້ນບັນຊີຊັບສິນ ແລະ ການສຶກສາພື້ນຖານດ້ານເສດຖະກິດ-ສັງຄົມ ອາດເຮັດພ້ອມກັນ ຫຼື ແຍກກັນກໍໄດ້ ຫຼື ຂັ້ນຕອນຈັດຕັ້ງປະຕິບັດບັນດາກິດຈະກຳເຫລົ່ານີ້ ອາດແຕກຕ່າງກັນ. ຍົກຕົວຢ່າງ ໃນປະເທດ ທີ່ບໍ່ມີການຂຶ້ນບັນຊີຊັບສິນ ແລະ ທີ່ຢູ່ອາໄສຂອງປະຊາຊົນ, ຍິ່ງມີຄວາມສຳຄັນທີ່ຕ້ອງໄດ້ເຮັດການສຳຫຼວດພົນລະເມືອງໃນໄລຍະຕົ້ນໆຂອງໂຄງການ ເພື່ອກຳນົດຜູ້ທີ່ຈະມີສິດໄດ້ຮັບການທົດແທນຄ່າເສຍຫາຍ ແລະ ບໍ່ໃຫ້ມີການລ່ວງລໍ້າທີ່ດິນ ຫຼື ການທວງເອົາສິດທີ່ບໍ່ຖືກຕ້ອງ ເພື່ອໄດ້ຄ່າທົດແທນດັ່ງກ່າວ. ການສຳ ຫຼວດພົນລະເມືອງ ແລະ ການຂຶ້ນບັນຊີຊັບສິນ ແມ່ນມັກເຮັດໃນເວລາດຽວກັນ ເພື່ອເກັບຂໍ້ມູນພື້ນຖານ ກ່ຽວກັບຄວາມຮຸນແຮງຂອງຜົນກະທົບ ເນື່ອງຈາກວຽກງານທັງສອງຢ່າງທີ່ຕ້ອງໄດ້ລົງເກັບກຳຂໍ້ມູນນຳແຕ່ລະຄອບຄົວ. ໃນສະພາບທີ່ມີຄວາມຫຍຸ້ງຍາກໃນການກຳນົດກຳມະສິດ ຫຼື ການອາໄສຢູ່ເທິງນາມຂອງປະຊາຊົນ, ການສຳຫຼວດດັ່ງກ່າວ ເຫັນວ່າມີຄວາມຈຳເປັນຕ້ອງໄດ້ດຳເນີນການຢ່າງໄວ ເພື່ອກຳນົດວັນຂີດໝາຍເລີ່ມຕົ້ນໂຄງການ ສຳລັບ

ການຈະໃຫ້ສິດທິແກ່ປະຊາຊົນຜູ້ທີ່ຖືກກະທົບຈາກໂຄງການສາມາດໄດ້ຮັບການທົດແທນຄ່າເສຍຫາຍ. ໃນກໍລະນີດັ່ງກ່າວ, ເປັນການດີ ທີ່ຕ້ອງໄດ້ໃຫ້ຂໍ້ມູນຂ່າວສານສ່ວນໃດສ່ວນໜຶ່ງເພີ່ມເຕີມແກ່ການສຳຫຼວດພົນລະເມືອງ ເພື່ອໃຫ້ພຽງພໍ ສຳລັບກຳນົດຈຳນວນ ແລະ ຂະໜາດ ຂອງໂຄງສ້າງຕ່າງໆ. ຄວາມຊັດເຈນຂອງໂຄງສ້າງຕ່າງໆ ແລະ ການຂຶ້ນບັນຊີ ໂດຍທົ່ວໄປ ສຳລັບຊັບສິນບັດຄົງທີ່ ທີ່ຖືກກະທົບສ່ວນທີ່ຍັງເຫຼືອ ສາມາດດຳເນີນການໄດ້ໃນພາຍຫລັງ.

### 7.5.1 ວັນເວລາ ແລະ ຫົນຮອບທີ່ຕ້ອງການສຳລັບການສຳຫຼວດ

ວັນເວລາ ແລະ ຫົນຮອບທີ່ຕ້ອງການສຳລັບການເກັບກຳຂໍ້ມູນ ຈະມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ, ຊຶ່ງຂຶ້ນກັບໂຄງການ ແລະ ຄວາມສະລັບສັບຊ້ອນຂອງຜົນກະທົບ. ໂດຍລວມແລ້ວ, ສຳລັບໂຄງການຂະໜາດໃຫຍ່, ການລົງເກັບກຳຂໍ້ມູນອາດຈະໃຊ້ເວລາໃນລະຫວ່າງ 9-12 ເດືອນ ຫຼື ຫຼາຍກວ່ານັ້ນ ຈາກການກຳນົດຮູ້ທຳອິດ ວ່າມີຄວາມຈຳເປັນຈະໄດ້ມີການເວນຄືນທີ່ດິນ ຈົນຮອດເວລາເຮັດແຜນການຍົກຍ້າຍຈັດສັນປະຊາຊົນ.

### 7.5.2 ມັນມີຄວາມຈຳເປັນ ຫລືບໍ່ ໃນການປັບປຸງ ໃນກໍລະນີທີ່ມີການແກ່ຍາວເວລາ?

ຄ້າຍຄືກັນກັບການລົງສຳຫຼວດພົນລະເມືອງ, ການກຳນົດຂໍ້ມູນພື້ນຖານມີບັນຫາກັບການນຳໃຊ້ເວລາ. ມັນມີການແຕກຕ່າງກັບຂໍ້ມູນຂອງການລົງສຳຫຼວດພົນລະເມືອງ ທີ່ຕ້ອງດຳເນີນການໃນຂັ້ນຕອນທົວທີ ເພື່ອກຳນົດໃຫ້ໄດ້ເຖິງຜູ້ຈະມີສິດທິໃນການໄດ້ຮັບການຊົດເຊີຍ, ຂໍ້ມູນພື້ນຖານອື່ນໆ ຕ້ອງສະທ້ອນໃຫ້ເຫັນສະພາບຕົວ ຈິງໃນເວລາມີການກະທົບ. ເວົ້າອີກຢ່າງນຶ່ງ ກໍແມ່ນວ່າຂໍ້ມູນທີ່ໄດ້ຈາກການລົງສຳຫຼວດພົນລະເມືອງ ເພື່ອກຳນົດສິດໄດ້ຮັບຄ່າທົດແທນນັ້ນ ຈະຕ້ອງໄດ້ເກັບຮັກສາໄວ້ຍາວນານແຕ່ບໍ່ສາມາດປັບປ່ຽນໄດ້; ຖ້າມີການແກ່ຍາວເວລາໃນການພັດທະນາໂຄງການ ແມ່ນຕ້ອງໄດ້ດຳເນີນການສຳຫຼວດພົນລະເມືອງຄືນໃໝ່ ແລະ ບໍ່ຄວນປັບຂໍ້ມູນອັນເກົ່າ. ດັ່ງນັ້ນ, ຂໍ້ມູນພື້ນຖານ ຈຶ່ງສາມາດມີການໝົດອາຍຸໄດ້ (ແຕ່ການນຳໃຊ້ຖານຂໍ້ມູນ ແມ່ນເປັນໄປໄດ້ ບົນພື້ນຖານການປັບປຸງຢ່າງເປັນປົກກະຕິ ແລະ ມີການຕິດຕາມກວດກາພາຍໃນ ແລະ ອາດນຳໃຊ້ວິທີການອື່ນໆ).

ໂດຍທົ່ວໄປແລ້ວ, ຖ້າຫາກມີການແກ່ຍາວເວລາການພັດທະນາໂຄງການ 3-5 ປີ ຫຼື ດົນກວ່ານັ້ນ, ລະຫວ່າງການສຳຫຼວດພົນລະເມືອງຫາການເວນຄືນຊັບສິນຕົວຈິງ, ປັດໄຈດ້ານພົນລະເມືອງ ແລະ ເສດຖະກິດ-ສັງຄົມ ອາດມີການປ່ຽນແປງຢ່າງຫຼວງຫຼາຍ ຊຶ່ງຈະເຮັດໃຫ້ຂໍ້ມູນເຫຼົ່ານັ້ນມີຄວາມບໍ່ຊັດເຈນ. ຄົນຈຳນວນນຶ່ງເກີດໃໝ່, ຈຳນວນນຶ່ງເສຍຊີວິດ, ມີຈຳນວນໜຶ່ງກໍ່ໃຫຍ່ຂຶ້ນ ສ້າງຄອບຄົວແລ້ວຍົກຍ້າຍໄປທາງອື່ນ. ຖ້າເປັນໄປໄດ້, ມັນຈະເປັນການດີຫາກສາມາດຮັກສາຜົນການສຳຫຼວດພົນລະເມືອງຢູ່ໃນເວລາການເວນທີ່ດິນຄືນໃນໄລຍະໜຶ່ງປີ. ກົງກັນຂ້າມ, ໃນກໍລະນີໄດ້ມີການດຳເນີນການສຳຫຼວດພົນລະເມືອງມາຕັ້ງແຕ່ທົວທີ ເພື່ອກຳນົດສິດທີ່ຈະໄດ້ຮັບຄ່າທົດແທນ, ແຕ່ການຈັດ ຕັ້ງປະຕິບັດໄດ້ຖືກແກ່ຍາວ, ວິທີການແກ້ໄຂທີ່ສົມເຫດສົມຜົນ ກໍຄືຕ້ອງໄດ້ປັບປຸງຂໍ້ມູນການສຳຫຼວດພົນລະເມືອງ ທີ່ໄດ້ເຮັດມາກ່ອນນັ້ນ ກ່ອນຈະດຳເນີນການທົດແທນຄ່າເສຍຫາຍຕົວຈິງ ແຕ່ບົນພື້ນຖານຂັ້ນຕອນທີ່ໄດ້ເຫັນດີນຳກັນມາແລ້ວ ເພື່ອໃຫ້ໄດ້ສິດຮັບການທົດແທນຄ່າເສຍຫາຍ ຍ້ອນການສືບມູນ, ຄວາມເປັນຜູ້ໃຫ່ຍເຕັມກະສຽນ ຫຼື ການຊື້ຂາຍຊັບສິນ.

### 7.5.3 ການສຳຫຼວດພົນລະເມືອງ ແລະ ການຂຶ້ນບັນຊີຊັບສິນ ສຳລັບໂຄງການທີ່ມີການກໍ່ສ້າງຍາວເປັນແລວ

ການສຳຫຼວດພົນລະເມືອງໃນໂຄງການແບບນີ້ ອາດມີບັນຫາ ກ່ຽວກັບ ການຈັດວາງເວລາຄືກັນ. ໃນເຂດຊົນນະບົດ, ບ່ອນທີ່ການກະທົບບໍ່ມີຫຼາຍ, ການສຳຫຼວດພົນລະເມືອງກໍບໍ່ສະລັບສັບຊ້ອນປານໃດ. ຢ່າງໃດກໍດີ, ປະຊາຊົນຜູ້ທີ່ຖືກກະທົບ ອາດຢູ່ກະແຈກກະຈາຍ, ໂດຍສະເພາະປະເພດໂຄງການທີ່ມີການກໍ່ສ້າງຍາວເປັນແລວ. ແຕ່ກົງກັນຂ້າມ, ໂຄງການພັດທະນາຕົວເມືອງກະທົບມີຄວາມສະລັບຊັບຊ້ອນຫລາຍກວ່າ ແຕ່ປະຊາຊົນພັດອາໃສຢູ່ຢ່າງຄັບຄາໜາແໜ້ນ.

ບາງຄັ້ງ, ການວາງແຜນການຍົກຍ້າຍຈັດສັນປະຊາຊົນ ຈະໄດ້ຮັບການດຳເນີນການເປັນແຕ່ໄລຍະໆ ຊຶ່ງຈະກໍໃຫ້ເກີດສິ່ງທ້າທາຍຕື່ມຕໍ່ການສຳຫຼວດພົນລະເມືອງ. ຍົກຕົວຢ່າງ ໃນບາງໂຄງການທີ່ມີການກໍ່ສ້າງຍາວເປັນແລວ ອາດຈັດຕັ້ງປະຕິບັດວຽກງານຢູ່ຈຸດໜຶ່ງ ແຕ່ຂະນະດຽວກັນວຽກວິສາວະກຳ ແລະ ການກຳນົດຈຸດຕ່າງໆຕາມແລວທາງ ພັດຍັງບໍ່ທັນຮູ້ (ເຊັ່ນ ແລວທາງທີ່ແນ່ນອນ ສຳລັບເສັ້ນທາງຫຼວງ ຫຼື ສາຍສົ່ງໄຟຟ້າ, ຫຼື ສະຖານທີ່ຂອງອົງປະກອບທີ່ຈະສ້າງໃນໄລຍະ 3 ປີ ສຳລັບຈັດຕັ້ງປະຕິບັດໂຄງການ). ຖ້າຮູ້ພໍປະມານ ກ່ຽວກັບ ທີ່ຕັ້ງ ແລະ ທີ່ດິນທີ່ຈຳ ເປັນຕ້ອງມີການເວນຄືນ ແມ່ນຈະເປັນວິທີທີ່ດີທີ່ຈະກຳນົດ "ເຂດ ຊື່ອມຕໍ່ຜົນກະທົບໃຫ້ກວ້າງທີ່ສຸດ" ໂດຍອີງໃສ່ພື້ນທີ່ ທີ່ໄດ້ເອົາມາອອກແບບເບື້ອງຕົ້ນ ແລະ ດຳເນີນການສຳຫຼວດພົນລະເມືອງ (ແລະ ຢ່າງໜ້ອຍ ກໍໄດ້ດຳເນີນການຂຶ້ນບັນຊີໂຄງ ສ້າງເບື້ອງຕົ້ນ) ໝົດພາຍໃນເຂດດັ່ງກ່າວ. ເຖິງແມ່ນວ່າປະຊາຊົນທີ່ຢູ່ໃນບໍລິເວນດັ່ງກ່າວ ຈະມີຈຳນວນຫຼາຍກວ່າຈຳນວນຜູ້ທີ່ຖືກກະທົບຕົວຈິງ, ແຕ່ວິທີດຳເນີນງານ ຈະຖືວ່າເປັນພື້ນຖານໃນການກຳນົດຜູ້ທີ່ອາດມີສິດ ຈະໄດ້ຮັບການທົດແທນຄ່າເສຍຫາຍ. ນອກນັ້ນ, ຂໍ້ມູນທີ່ໄດ້ຈາກການສຳຫຼວດພົນລະເມືອງນີ້ ຍັງເປັນຜົນປະໂຫຍດສຳລັບການເລືອກຈຸດທີ່ຕັ້ງໂຄງການທີ່ແນ່ນອນ ເພື່ອຫຼຸດຜ່ອນຜົນກະທົບດ້ານລົບໃຫ້ໜ້ອຍທີ່ສຸດ. ຂໍ້ມູນ (ການສຳຫຼວດ) ກ່ຽວກັບ ພົນລະເມືອງທີ່ບໍ່ຖືກກະທົບຈາກໂຄງການກໍອາດເປັນປະໂຫຍດ ເພື່ອສ້າງເປັນ "ກຸ່ມຄວບຄຸມ" ສຳລັບປຽບທຽບກັບຜູ້ທີ່ຖືກກະທົບ. ຖ້າຫາກວ່າຈຸດທີ່ຕັ້ງໂຄງການ ບໍ່ສາມາດທີ່ຈະກຳນົດໄດ້ແນ່ນອນ, ໂຄງການນີ້ຄວນ ຖືວ່າເປັນໂຄງການຍ່ອຍ ຊຶ່ງຕ້ອງໄດ້ດຳເນີນການສຳຫຼວດພົນລະເມືອງ ແລະ ເຮັດແຜນການຍົກຍ້າຍຈັດສັນປະຊາຊົນສະເພາະ.

### 7.5.4 ປະຊາຊົນເຈົ້າພາບ

ໃນເມື່ອໂຄງການໃດໜຶ່ງ ຫາກເຫັນບັນຫາໄດ້ໃນຕັ້ງແຕ່ຕົ້ນໆວ່າ ມີຄວາມຈຳເປັນຕ້ອງໄດ້ຍົກຍ້າຍຈັດສັນປະຊາຊົນຜູ້ທີ່ຖືກກະທົບ ແລະ ຊອກເຫັນພື້ນທີ່ໃໝ່ທີ່ຈະຍົກຍ້າຍໄປຢູ່, ໂຄງການນີ້ຄວນໄດ້ມີການສຳຫຼວດປະຊາຊົນເຈົ້າພາບ/ປະຊາຊົນທີ່ອາໄສຢູ່ມາກ່ອນໃນເຂດດັ່ງກ່າວນີ້. ຂໍ້ມູນທີ່ຕ້ອງການ ກ່ຽວກັບ ປະຊາຊົນເຈົ້າພາບ ລວມມີ:

- ລັກສະນະຕັ້ງບ້ານເຮືອນ ແລະ ຈັດການດ້ານທີ່ຕັ້ງບ້ານເຮືອນ
- ຄວາມໜາແໜ້ນຂອງປະຊາຊົນ ແລະ ຜະລິດຕະພາບຂອງທີ່ດິນ
- ໂຄງປະກອບທາງດ້ານເສດຖະກິດ-ສັງຄົມ ແລະ ພົນລະເມືອງ
- ຊັບພະຍາກອນລວມໝູ່
- ການທວງເອົາເຂດທີ່ດິນ ແລະ ຊັບພະຍາກອນ, ຖ້າມີ
- ລັກສະນະການນຳໃຊ້ທີ່ດິນ
- ຄວາມຈຳເປັນຕ້ອງພັດທະນາໂຄງລ່າງໃໝ່
- ຄວາມປາດຖະໜາ ແລະ ການຍອມຮັບ ຂອງປະຊາຊົນເຈົ້າພາບ
- ອົງການຈັດຕັ້ງຊຸມຊົນ, ສະຖານທີ່ວັດທະນະທຳ ແລະ ເຄືອຂ່າຍຕ່າງໆ ທີ່ມີຢູ່.

## 7.6 ຈັດຕັ້ງການສຳຫຼວດ

### 7.6.1 ແບບຟອມ ແລະ ໃບສອບຖາມ

ແບບຟອມສຳລັບການສຳຫຼວດພົນລະເມືອງ, ການຂຶ້ນບັນຊີ ແລະ ເກັບຂໍ້ມູນພື້ນຖານ ແມ່ນຕ້ອງມີການອອກແບບໃຫ້ຖືກກັບແຕ່ລະໂຄງການສະເພາະ, ສະພາບຈຸດພິເສດ ແລະ ຄວາມຕ້ອງການດ້ານຂໍ້ມູນຂ່າວສານ. ຮ່າງໃບສອບຖາມແມ່ນຕ້ອງໄດ້ຜ່ານການທົດສອບໃນພາກສະໜາມ ເພື່ອກວດກາເບິ່ງວ່າຄຳຖາມ ແລະ ການແຕ່ງປະໂຫຍກນັ້ນສາມາດເຈາະຈົ້ມຫາຂໍ້ມູນທີ່ຕ້ອງການໄດ້ ຫຼື ບໍ່. ໃບສອບຖາມ ແມ່ນຄວນອອກແບບໃນລັກສະນະໃຫ້ຂໍ້ມູນຂ່າວສານເຫລົ່ານັ້ນ ສາມາດໃສ່ລະຫັດ ເພື່ອເອົາເຂົ້າໃນໂປຣແກຣມຄຸ້ມຄອງຂໍ້ມູນດ້ວຍຄອມພີວເຕີໄດ້.

#### 7.6.2 ການປະກອບພະນັກງານ

ເພື່ອວຽກກະກຽມ ແລະ ເຮັດການສຳຫຼວດ ຕ້ອງໄດ້ມີການວ່າຈ້າງຊ່ຽວຊານ/ທີ່ປຶກສາທີ່ມີປະສົບການດ້ານການສຳຫຼວດພົນລະເມືອງ/ເກັບກຳຂໍ້ມູນ. ຜູ້ຊ່ວຍທີມງານສຳຫຼວດ ອາດປະກອບດ້ວຍພະນັກງານວິຊາການທີ່ມີປະສົບການຂອງອົງການຮັບຜິດຊອບໂຄງການ ຫຼື ຂອງຫ້ອງການຍົກຍ້າຍຈັດສັນປະຊາຊົນຂອງໂຄງການ ຫຼື ວ່າຈ້າງເອົາຊ່ຽວຊານ. ເພື່ອຮັບປະກັນຄວາມແນ່ນອນໃນການສຳຫຼວດພົນລະເມືອງ, ການຂຶ້ນບັນຊີ ແລະ ເກັບຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ, ພະນັກງານທີ່ປະກອບມາຄວນໄດ້ຮັບການຝຶກອົບຮົມ ກ່ຽວກັບ ການນຳໃຊ້ແບບຟອມສຳຫຼວດໃນພາກສະໜາມ ແລະ ຂັ້ນຕອນການລົງລະຫັດ ແລະ ການບັນທຶກຂໍ້ມູນ. ຫາກຈຳເປັນຕ້ອງໄດ້ມີການສ້າງຕັ້ງຫ້ອງການຍົກຍ້າຍຈັດສັນປະຊາຊົນຂອງໂຄງການຂຶ້ນ, ພະນັກງານຂອງຫ້ອງການດັ່ງກ່າວ ກໍຄວນໄດ້ຮັບ ການຝຶກອົບຮົມ ກ່ຽວກັບການເກັບຮັກສາ ແລະ ການປັບປຸງຂໍ້ມູນ ທີ່ເກັບກຳ/ສຳຫຼວດມາໄດ້ຕາມຄວາມຈຳເປັນ ໃນໄລຍະຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການ.

#### 7.6.3 ການປະຕິບັດງານໃນພາກສະໜາມ

ແບບຟອມສອບຖາມ ແລະ ການປະກອບພະນັກງານ ຕ້ອງຖືກກະກຽມໃຫ້ແທດເໝາະກັບສະພາບສັງຄົມ ແລະ ວັດທະນະທຳຂອງທ້ອງຖິ່ນ. ສິ່ງທີ່ສຳຄັນຢ່າງໜຶ່ງ ແມ່ນການນຳໃຊ້ພາສາແຕ່ລະຊົນເຜົ່າ. ການເລືອກເຟັ້ນເອົາພະນັກງານເຂົ້າເຮັດວຽກ ກໍຄວນເລືອກເອົາພະນັກງານທີ່ສາມາດປັບຕົວເຂົ້າກັບວັດທະນະທຳທີ່ແຕກຕ່າງກັນໄດ້. ຍົກຕົວຢ່າງ, ອາດມີຄວາມຈຳເປັນຕ້ອງໃຊ້ພະນັກງານຍິງໃນການສອບຖາມເຈາະຈີ້ມເອົາຂໍ້ມູນນຳແມ່ຍິງໃນບາງກໍລະນີ.
ພະນັກງານທີ່ໄດ້ປະກອບເຂົ້າມາຕ້ອງມີຄວາມຄຸ້ນເຄີຍ ແລະ ຮູ້ສະພາບທາງດ້ານເສດຖະກິດ-ສັງຄົມຂອງທ້ອງຖິ່ນ ຫຼື ບໍ່ກໍໃຫ້ມີຕົວແທນຈາກທ້ອງຖິ່ນນຳພາເພື່ອຊ່ວຍຊອກຮູ້ ແລະ ກຳນົດສາຍພົວພັນຕາມຮີດຄອງຕ່າງໆ ລວມທັງບັນຫາກຳມະສິດສ່ວນລວມ.

#### 7.6.4 ການເຂົ້າລະຫັດ ແລະ ຈົດບັນທຶກ

ເມື່ອມີເງື່ອນໄຂ, ຜົນການສຳຫຼວດຕ້ອງໄດ້ລົງລະຫັດ ແລະ ຈົດບັນທຶກໄວ້ ໃນຂະນະທີ່ທີມງານຍັງເຮັດວຽກຢູ່ພາກສະໜາມ. ບໍ່ວ່າຂໍ້ມູນຈະຖືກບັນທຶກດ້ວຍການຈົດກ່າຍ ຫຼື ໃຊ້ຄອມພິວເຕີກໍຕາມ, ເຈົ້າຂອງໂຄງການຕ້ອງໄດ້ກະກຽມວິທີການກວດກາຄວາມຊັດເຈນຂອງຂໍ້ມູນໄວ້ລ່ວງໜ້າ ແລະ ສາມາດນຳໃຊ້ໄດ້ໂລດເມື່ອໄດ້ຮັບການຢືນຢັນ. ຜູ້ຄຸມງານໃນເຂດພາກສະໜາມ ຕ້ອງໄດ້ທົບທວນຄືນໃບສອບຖາມໃນທ້າຍຂອງແຕ່ລະວັນງານ.

#### 7.6.5 ລະບົບການຄຸ້ມຄອງຂໍ້ມູນດ້ວຍຄອມພິວເຕີ

ສຳລັບໂຄງການທີ່ມີຜູ້ຖືກຍົກຍ້າຍຍົກຍ້າຍຈຳນວນໜ້ອຍ, ການສຳຫຼວດຂໍ້ມູນສາມາດບັນທຶກດ້ວຍການຈົດກ່າຍຕາມຂັ້ນຕອນທີ່ເຄີຍເຮັດມາ. ແຕ່ຖ້າຫາກມີຈຳນວນຜູ້ທີ່ຖືກກະທົບຫຼາຍ (ເຊັ່ນ: ຫຼາຍກວ່າ 500 ຄອບຄົວ), ການວິໄຈຂໍ້ມູນດ້ວຍວິທີດັ່ງກ່າວ ອາດເຮັດໃຫ້ໂຄງການມີຄວາມຊັກຊ້າແກ່ຍາວ. ອີກຢ່າງໜຶ່ງ, ຖ້າການຈັດ ຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ຮຽກຮ້ອງໃຫ້ມີການເຂົ້າຮ່ວມຂອງຫຼາຍພາກສ່ວນ, ວິທີການຄຸ້ມຄອງຂໍ້ມູນທີ່ບໍ່ເປັນເອກະພາບກໍອາດຈະກໍ່ໃຫ້ເກີດມີຄວາມສັບສົນໄດ້. ບັນຫາທີ່ບໍ່ເພິ່ງປາຖະໜາດັ່ງກ່າວນີ້ສາມາດຫຼີກລ້ຽງໄດ້ດ້ວຍການນຳໃຊ້ລະບົບການຄຸ້ມຄອງຂໍ້ມູນດ້ວຍຄອມພິວເຕີ.

ແບບຟອມສຳລັບການບັນທຶກຂໍ້ມູນ, ການລົງລະຫັດ ແລະ ໃຊ້ຊອບແວ໌ (ຖ້າການວິໄຈຂໍ້ມູນດ້ວຍຄອມພິວເຕີ) ແມ່ນຕ້ອງໃຫ້ເປັນທີ່ຮູ້ຈັກກັນ ແລະ ສອດຄ່ອງກັນ ໃນທຸກໆອົງການຈັດຕັ້ງ. ຂໍ້ມູນທີ່ໄດ້ຮັບຈາກການດຳເນີນວຽກຍົກຍ້າຍຈັດສັນປະຊາຊົນ ຕ້ອງໄດ້ສົ່ງໃຫ້ຫ້ອງການຍົກຍ້າຍຈັດສັນປະຊາຊົນຂອງໂຄງການ (ຫຼື ພາກສ່ວນອື່ນທີ່ໄດ້ຮັບການ

ມອບໝາຍໃນການຄຸ້ມຄອງຂໍ້ມູນ) ເພື່ອກວດກາຄວາມຊັດເຈນ ແລະ ປັບປຸງ ເມື່ອໂຄງການມີການພັດທະນາມີຄວາມຄືບໜ້າໄປ ແລະ ເກັບຮັກສາໄວ້ ເພື່ອຕິດຕາມກວດກາ ແລະ ຊີ້ນໍາ.

ການເກັບຂໍ້ມູນໄວ້ໃນຄອມພິວເຕີ ແມ່ນຈະອໍານວຍຄວາມສະດວກໃນການປັບປຸງໃຫ້ມີປະສິດທິຜົນ ແລະ ເຮັດໃຫ້ການສັງລວມຂໍ້ມູນ ທີ່ໄດ້ມາຈາກແຫຼ່ງອື່ນງ່າຍຂຶ້ນ. ຂໍ້ມູນໃນຄອມພິວເຕີ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ຈະຖືກນໍາໃຊ້ເປັນພື້ນຖານ ສໍາລັບການຕິດຕາມກວດກາ ທັງພາຍໃນ ແລະ ແບບເອກກະລາດ.

ຕົວຢ່າງໃບເກັບຂໍ້ມູນ ໃນການຂຶ້ນບັນຊີຊັບສິນທີ່ຖືກກະທົບ ແລະ ລັກສະນະທາງດ້ານ ເສດຖະກິດ-ສັງຄົມຂອງຄອບຄົວ ໄດ້ນໍາສະເໜີຢູ່ໃນ <u>*ເອກກະສານຊັດຕິດ 11 ແລະ 12*</u> ຕາມລໍາດັບ.

### 7.7 ແກ້ໄຂບັນຫາຄວາມສະເໝີພາບຍິງຊາຍ ໃນການເກັບກໍາຂໍ້ມູນ

ການເກັບກໍາສະຖິຕິແຍກເພດແມ່ນບາດກ້າວທໍາອິດ ແລະ ສໍາຄັນທີ່ສຸດ ເພື່ອຮັບປະກັນຄວາມຈໍາເປັນ ແລະ ບັນຫາຂອງແມ່ຍິງ ໄດ້ຮັບການແກ້ໄຂໃນແຜນການຍົກຍ້າຍຈັດສັນປະຊາຊົນ. ຄໍາຖາມ ແລະ ຍຸດທະສາດທີ່ສໍາຄັນ ເພື່ອແກ້ໄຂເລື້ອງຄວາມສະເໝີພາບຍິງຊາຍໃນການເກັບກໍາຂໍ້ມູນ ໄດ້ນໍາສະເໜີຢູ່ໃນ <u>*ເອກກະສານຄັດຕິດ 13.*</u>

ມັນມີຄວາມສໍາຄັນ ທີ່ຕ້ອງໄດ້ມີການເກັບກໍາຂໍ້ມູນ ກ່ຽວກັບ ຄອບຄົວແມ່ຮ້າງນາງໝ້າຍ, ຜູ້ເຖົ້າ ແລະ ແມ່ຍິງໂສດ ແລະ ຄວນໃຫ້ແມ່ຍິງເປັນຜູ້ເກັບກໍາຂໍ້ມູນ. ຖ້າເປັນໄປບໍ່ໄດ້. ຜູ້ເກັບກໍາຂໍ້ມູນກໍຄວນເປັນຄົນທີ່ມີຄວາມເຂົ້າໃຈໄດ້ດີ ກ່ຽວກັບ ຄວາມສະເໝີພາບຍິງຊາຍ ແລະ ໄດ້ຮັບການຝຶກອົບຮົມເປັນຢ່າງດີ ກ່ຽວກັບ ການເກັບກໍາຂໍ້ມູນຈາກແມ່ຍິງ.

## ໝວດທີ 8. ສິດທິໃນການໄດ້ຮັບການທົດແທນຄ່າເສຍຫາຍ

### 8.1 ຫົວໜ່ວຍສິດທິໃນການໄດ້ຮັບການທົດແທນຄ່າເສຍຫາຍ

ສ່ວນໃຫຍ່ແລ້ວໂຄງການພັດທະນາທີ່ໃຫ້ຜົນປະໂຫຍດແກ່ປວງຊົນລ້ວນສ້າງຜົນກະທົບຕໍ່ເຈົ້າຂອງຊັບສິນ ແລະ ຜູ້ທີ່ອາໄສຢູ່ ລວມທັງສະມາຊິກຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ ໂດຍການເວນຄືນຊັບສິນຂອງສ່ວນຕົວ, ຂອງສ່ວນລວມ ຫຼື ຂອງລັດ. ການໃຫ້ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນຜູ້ທີ່ຖືກກະທົບຈາກໂຄງການ ຄວນໄດ້ກໍານົດເປັນການທົດແທນ ແລະ/ຫຼື ມາດຕະການຟື້ນຟູຕ່າງໆຢ່າງເໝາະສົມຕໍ່ແຕ່ລະຫົວໜ່ວຍ: ສ່ວນບຸກຄົນ (ຕົວຢ່າງ: ບຸກຄົນ ທີ່ຖືກກະທົບ ແລະ ຄອບຄົວຂອງເຂົາເຈົ້າ), ກຸ່ມຄົນ ແລະ ຊຸມຊົນ ແລະ ອົງການຈັດຕັ້ງຂອງລັດ.

#### 8.1.1 ສÈ¸ນບ÷¡ຄôນ

ໃນປະເພດນີ້ ລວມມີສ່ວນບຸກຄົນ (ທັງຊາຍ ແລະ ຍິງ) ຜູ້ທີ່ອາດສູນເສຍອັນໃດອັນໜຶ່ງ ຫຼື ຫຼາຍໆອັນລວມກັນດັ່ງລຸ່ມນີ້:

- ທີ່ດິນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງທີ່ຢູ່ອາໄສ, ດິນກະສິກໍາ, ທົ່ງຫຍ້າລ້ຽງສັດ ແລະ ທີ່ດິນສ່ວນຕົວອື່ນໆ ຊຶ່ງມີຮູບກໍາມະສິດປະເພດໃດປະເພດໜຶ່ງ
- ເຮືອນຢູ່ອາໄສ ຫຼື ຮ້ານຄ້າທັງໝົດ
- ໂຄງສ້າງອື່ນໆທັງໝົດ
- ແຫຼ່ງລາຍຮັບ ແລະ ຄວາມສາມາດໃນການສ້າງລາຍຮັບ
- ຄວາມສາມາດເຂົ້າຫາຊັບພະຍາກອນສ່ວນລວມຂອງຊຸມຊົນ

- ການສູນເສຍອື່ນໆ ຕົວຢ່າງ: ກະແສນ້ຳຫຼຸດລົງ (ເຈົ້າຂອງໂຮງສີ, ຜູ້ຊົມໃຊ້ນ້ຳຊົນລະປະທານ...)

ບຸກຄົນ ອາດເປັນຜູ້ຖືກຳມະສິດການນຳໃຊ້ທີ່ດິນ ຫຼື ຈາກໃບເສຍພາສີອາກອນໃນການນຳໃຊ້ຊັບສິນ, ຜູ້ເຊົ່າ ຫຼື ຜູ້ໃຫ້ເຊົ່າ, ຜູ້ອາໄສຢູ່ທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ຜູ້ທີ່ອາໄສຢູ່ດິນຂອງລັດ.

ຫົວໜ່ວຍຂອງຜູ້ໄດ້ຮັບສິດທິ ຍັງລວມມີສະມາຊິກຄອບຄົວຂອງຜູ້ທີ່ຖືກກະທົບຈາກການສູນເສຍສິ່ງໃດສິ່ງໜຶ່ງ ທີ່ໄດ້ກ່າວມາຂ້າງເທິງອີກດ້ວຍ (ເຊັ່ນ: ຄອບຄົວທີ່ຖືກກະທົບຈາກໂຄງການ). ຫົວໜ່ວຍຂອງຜູ້ທີ່ຈະໄດ້ຮັບສິ່ງທົດແທນ ຈະແມ່ນຜູ້ອອກຊື່ເປັນເຈົ້າຂອງຕໍ່ສິ່ງນັ້ນ/ຫົວໜ້າຄອບຄົວ, ຫຼື ຜູ້ສືບທອດ (ຜູ້ດຽວ ຫຼື ຫຼາຍຄົນ) ໃນກໍລະນີທີ່ຊັບສິນ ແລະ ຊັບພະຍາກອນ ທີ່ຖືກສູນເສຍນັ້ນເປັນກຳມະສິດສ່ວນຕົວ. ຢ່າງໃດກໍຕາມ, ສຳລັບເງິນອຸດໜູນຄ່າຄອງຊີບນັ້ນ ຫົວໜ່ວຍຂອງຜູ້ໄດ້ຮັບສິດທິ ແມ່ນສະມາຊິກຄອບຄົວແຕ່ລະຄົນ. ແຕ່ວ່າຫົວໜ່ວຍ ສຳລັບການໃຫ້ການຊ່ວຍເຫຼືອຟື້ນຟູເສດຖະກິດນັ້ນແມ່ນຄອບຄົວນັ້ນ. ຍົກຕົວຢ່າງ, ບາງຄັ້ງຍຸດທະສາດການຄອງຊີບ ແລະ ການຢູ່ລອດຂອງຄອບຄົວໄດ້ຮັບການກະທົບກະເທືອນ ເນື່ອງຈາກການສູນເສຍທີ່ດິນ ຫຼື ທຸລະກິດການຄ້າ. ໃນກໍລະນີແບບນີ້, ການຊ່ວຍເຫຼືອ ເພື່ອຟື້ນຟູສະພາບຄືນ ເຊັ່ນ: ການສະໜອງວຽກເຮັດງານທຳໃຫ້ ຈະແມ່ນຕອບສະໜອງໄດ້ ສຳລັບຜູ້ທີ່ມີອາຍຸເຕັມກະສຽນ ຜູ້ໜຶ່ງ ຫຼື ຫຼາຍຄົນ ໃນຄອບຄົວນັ້ນ.

### 8.1.2 ກຸ່ມຄົນ ຫຼື ຊຸມຊົນ

ໂຄງການອາດກໍ່ໃຫ້ເກີດມີຜົນກະທົບທີ່ບໍ່ສາມາດກຳນົດໄດ້ ຫຼື ບໍ່ໄດ້ຄາດກະໄວ້ ຕໍ່ກັບປະຊາຊົນທີ່ອາໄສຢູ່ໃກ້ຄຽງກັບເຂດທີ່ໄດ້ຮັບອິດທິພົນຈາກໂຄງການ. ຜົນກະທົບດ້ານລົບທີ່ອາດເກີດຂຶ້ນປະກອບມີຄວາມຈຳກັດຂອງການເຂົ້າເຖິງຊັບພະຍາກອນທຳມະຊາດ, ການກະທົບຕໍ່ນ້ຳໃຊ້ ແລະ ລະບົບຊົນລະປະທານ, ຫຼື ການປ່ຽນແປງສະພາບວຽກເຮັດງານທຳໃນທ້ອງຖິ່ນ. ຕົວຢ່າງ, ປະຊາຊົນທີ່ຢູ່ອາໄສໃຕ້ຄອງຮັບນ້ຳອາດປະສົບກັບການຫຼຸດລົງປະລິມານນ້ຳໄຫລ ຊຶ່ງເຮັດໃຫ້ຜົນຜະລິດກະສິກຳຕົກຕ່ຳ ຫຼື ຜົນໄດ້ຈາກການຫາປາຫຼຸດລົງ ຫຼື ສະມັດຕະພາບຂອງການເຮັດວຽກຂອງໂຮງສີເຂົ້າທີ່ນຳໃຊ້ແຮງນ້ຳຫຼຸດລົງ. ບ່ອນໃດທີ່ມີຜົນກະທົບແບບນີ້ເກີດຂຶ້ນ ກໍຕ້ອງໄດ້ຮັບການທົດແທນຄ່າເສຍຫາຍຈາກໂຄງການ. ມາດຕະການສຳລັບການຟື້ນຟູສິ່ງປຸກສ້າງຕ່າງໆຂອງຊຸມຊົນ ເຊັ່ນ: ສະຖານທີ່ປ່າຊ້າ, ວັດວາອາຮາມ, ຄອງເໝືອງຊົນລະປະທານ, ແລະ ການທົດແທນຄ່າເສຍຫາຍຕໍ່ປ່າໄມ້ຊຸມຊົນນັ້ນ, ຫົວໜ່ວຍຂອງຜູ້ມີສິດທິໄດ້ຮັບການທົດແທນຄ່າເສຍຫາຍກໍແມ່ນກຸ່ມຄົນ ຫລື ຊຸມຊົນນັ້ນເອງ.

### 8.1.3. ອົງການຈັດຕັ້ງຂອງລັດ

ສຳລັບໂຄງການທີ່ມີຜົນກະທົບຕໍ່ຊັບສິນບັດຂອງລັດ ຫຼື ສິ່ງອຳນວຍຄວາມສະດວກ ແລະ ສາທາລະນຸປະໂພກ ເຊັ່ນ: ສາຍສົ່ງໄຟຟ້າ, ຂົວ, ຄອງຊົນລະປະທານ, ໂຮງຮຽນ, ສະໂມສອນຂອງຊຸມຊົນ, ໂຮງໝໍ ແລະ ອື່ນໆ, ຫົວໜ່ວຍຜູ້ທີ່ມີສິດທິ ໄດ້ຮັບສິດທົດແທນຄ່າເສຍຫາຍ ກໍແມ່ນກົມກອງຂອງລັດ, ສຳນັກງານອົງການ ຫຼື ກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ໂດຍອີງຕາມແຕ່ລະກໍລະນີທີ່ເກີດຂຶ້ນ.

## 8.2. ການກຳນົດປະເພດຜູ້ທີ່ຖືກກະທົບ

ການວິໄຈຂໍ້ມູນ ເພື່ອກຳນົດປະເພດຜູ້ທີ່ຖືກກະທົບ ແມ່ນດຳເນີນການໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ ຈາກພາກສະໜາມ ກ່ຽວກັບຊັບສິນທີ່ຖືກກະທົບ. ມາດຕະຖານທີ່ໃຊ້ສຳລັບກຳນົດປະເພດຜູ້ທີ່ຖືກກະທົບ ມີດັ່ງລຸ່ມນີ້:

- ຕາມປະເພດຄວາມເສຍຫາຍ ເຊັ່ນ: ປະເພດທີ່ດິນ, ໂຄງສ້າງ, ຜົນລະປູກ ແລະ ຕົ້ນໄມ້, ການເສຍລາຍໄດ້, ທຸລະກິດ, ວຽກເຮັດງານທຳ;

- ຕາມລະດັບຂອງຜົນກະທົບ ເຊັ່ນ: ລະດັບເລັກໜ້ອຍ ຫຼື ຫຼວງຫຼາຍ;
- ຕາມຖານະການຄອບຄອງ ເຊັ່ນ: ຜູ້ຖືໃບອະນຸຍາດນຳໃຊ້ທີ່ດິນ ຫຼື ໃບຈ່າຍເງິນເສຍພາສີ, ຜູ້ບໍ່ມີກຳມະສິດ , ຜູ້ທີ່ອາໄສຢູ່ດິນລັດ, ອື່ນໆ;
- ຕາມຜົນກະທົບແບບຊົ່ວຄາວ ຫລື ຖາວອນ.

ລະດັບການທົດແທນຄ່າເສຍຫາຍ ແລະ ສິດທີ່ຈະໄດ້ຮັບການອຸດໜູນແລະການຊ່ວຍເຫຼືອອື່ນໆ ແມ່ນມີຄວາມແຕກຕ່າງກັນບົນພື້ນຖານມາດຕະຖານໃນການກຳນົດຜູ້ທີ່ຖືກກະທົບທີ່ກ່າວມາຂ້າງເທິງ. "ລະດັບຂອງຜົນກະທົບ" ເປັນມາດຕະຖານໜຶ່ງທີ່ສຳຄັນຫຼາຍ ຊຶ່ງໃຊ້ເພື່ອກຳນົດລະດັບການຈ່າຍເບ້ຍລ້ຽງອຸດໜູນ ແລະ ໃຫ້ການຊ່ວຍເຫຼືອອື່ນໆ ແກ່ຜູ້ທີ່ຖືກກະທົບ. ປະເດັນຫຼັກ ກ່ຽວກັບ ລະດັບຂອງຜົນກະທົບໄດ້ສະເໜີດັ່ງລຸ່ມນີ້

### 8.2.1 ລະດັບຂອງຜົນກະທົບ

- *ຜົນກະທົບບໍ່ຫລາຍ*

ສຳລັບໂຄງການ ທີ່ມີພຽງແຕ່ສ່ວນໃດສ່ວນໜຶ່ງຂອງຊັບສິນຖືກກະທົບ ເຊັ່ນ: ທີ່ດິນ ແລະ/ຫລື ໂຄງສ້າງຕ່າງໆ, ຕົ້ນໄມ້ ແລະ ຜົນລະປູກໜ້ອຍກວ່າ 20% ຂອງຊັບສິນທີ່ເປັນພື້ນຖານການຜະລິດ (ທີ່ສ້າງລາຍຮັບ) ນັ້ນສູນເສຍໄປ ແລະ/ຫຼື ຜູ້ທີ່ຖືກກະທົບບໍ່ໄດ້ຖືກຍົກຍ້າຍ, ຜົນກະທົບເຫລົ່ານີ້ ຖືວ່າເປັນຜົນກະທົບບໍ່ຫລາຍ. ໃນກໍລະນີນີ້ ຕ້ອງໄດ້ມີການພິຈາລະນາ ວ່າຊັບສິນທີ່ຍັງເຫຼືອນັ້ນ ຍັງສາມາດສືບຕໍ່ນຳໃຊ້ໄດ້ຕໍ່ໄປ ຫຼື ບໍ່. ພ້ອມດຽວກັນກໍໃຫ້ແນ່ໃຈວ່າ ຊັບສິນສ່ວນທີ່ຍັງເຫຼືອນັ້ນ ນັ້ນຮັບປະກັນໃຫ້ມີຂະໜາດເນື້ອທີ່ຕ່ຳສຸດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ມີຢູ່. ຕົວຢ່າງ, ໃນກໍລະນີທີ່ດິນສຳລັບເຮືອນຢູ່ ຫຼື ຮ້ານຄ້າ, ຂະໜາດຂອງເນື້ອທີ່ທີ່ຍັງເຫຼືອ ຄວນໃຫ້ພຽງພໍທີ່ຈະສາມາດສືບຕໍ່ນຳໃຊ້ໄດ້ອີງຕາມເຮືອນ ຫລື ຮ້ານຄ້ານັ້ນ ໂດຍໃຫ້ສອດຄ່ອງກັບມາດຖານທີ່ດິນສຳລັບເຮືອນຢູ່ ຫຼື ຮ້ານຄ້າ. ສຳລັບກໍລະນີທີ່ດິນກະສິກຳ, ຜະລິດຕະພາບຂອງດິນທີ່ຍັງເຫຼືອນັ້ນ ກໍຄວນພຽງພໍເພື່ອຊ່ວຍໃຫ້ຜູ້ທີ່ຖືກກະທົບດຳລົງຊີວິດຕໍ່ໄປໄດ້.

ສຳລັບໂຄງການທີ່ຈະສ້າງຜົນກະທົບບໍ່ຫລາຍຕໍ່ຊັບສິນຂອງປະຊາຊົນ ເຊັ່ນ: ໂຄງການຂະຫຍາຍໜ້າທາງ, ໂຄງການປັບປຸງຄອງລະບາຍນ້ຳ, ບາງເຈົ້າຂອງໂຄງການຈະບໍ່ຈ່າຍການທົດແທນຄ່າເສຍຫາຍໃຫ້ຄອບຄົວທີ່ຖືກກະທົບ ໂດຍອ້າງເຫດຜົນວ່າ ການປັບປຸງພື້ນຖານໂຄງລ່າງດັ່ງກ່າວ ຈະນຳຜົນປະໂຫຍດໂດຍທາງອ້ອມມາສູ່ຄອບຄົວນັ້ນໆ ຄືພວກເຂົາຈະມີທາງໄປມາສະດວກກວ່າເກົ່າ ທັງສິ່ງແວດລ້ອມກໍຈະໄດ້ຮັບການປັບປຸງດີຂຶ້ນ ຊຶ່ງໃນທີ່ສຸດກໍຈະເຮັດໃຫ້ມູນຄ່າຂອງ ຊັບສິນນັ້ນເພີ່ມຂຶ້ນເອງ. ຢ່າງໃດກໍຕາມ, ຜົນປະໂຫຍດດັ່ງກ່າວແມ່ນອາດແກ່ ຍາວເວລາສົມຄວນ ຈຶ່ງຈະກາຍເປັນຈິງ ແລະ ເຮັດໃຫ້ຄອບຄົວຜູ້ທີ່ຖືກກະທົບນັ້ນ ອາດໄດ້ຂາຍຊັບສິນຂອງຕົນໄປກ່ອນ. ແຕ່ຕາມຫຼັກການແລ້ວ, ຜູ້ທີ່ຖືກກະທົບທັງໝົດທີ່ກ່າວມານີ້ ຄວນມີສິດໄດ້ຮັບການທົດແທນຄ່າເສຍຫາຍຕໍ່ຊັບສິນ, ລາຍຮັບ ແລະ ທຸລະກິດຕ່າງໆທີ່ສູນເສຍໄປຂອງເຂົາເຈົ້າ.

ໂຄງການລະບາຍນ້ຳເສຍ ອາດສາມາດສ້າງຜົນສະທ້ອນດ້ານລົບ ຕໍ່ເຈົ້າຂອງຊັບສິນຈົນເຖິງຂັ້ນເສຍລາຍຮັບເປັນການຊົ່ວຄາວ. ເພື່ອຫລຸດຜ່ອນຄ່າບໍລິຫານ ແລະ ວາງແຜນໃນໂຄງການທຳນອງນີ້, ເຈົ້າຂອງໂຄງການອາດສະໜອງເປັນເງິນຈຳນວນໃດໜຶ່ງເປັນຄ່າທົດແທນຄ່າເສຍຫາຍ ໃຫ້ຄອບຄົວຖືກກະທົບ ໂດຍຄິດສະເລ່ຍມູນຄ່າຂອງທີ່ດິນ ທີ່ນຳໃຊ້ນັ້ນ ແທນທີ່ຈະໃຫ້ການທົດແທນຄ່າເສຍຫາຍຕາມມູນຄ່າປ່ຽນແທນຕໍ່ຊັບສິນແຕ່ລະປະເພດ.

ໃນກໍລະນີທີ່ສິ່ງປຸກສ້າງໄດ້ຮັບຄວາມເສຍຫາຍພຽງສ່ວນໃດສ່ວນໜຶ່ງ, ການທົດແທນຄ່າເສຍຫາຍ ແມ່ນຈ່າຍສະເພາະໃຫ້ສ່ວນທີ່ໄດ້ຮັບຄວາມເສຍຫາຍເທົ່ານັ້ນ ແລະ ເຈົ້າຂອງສິ່ງປຸກສ້າງມີໜ້າທີ່ມ້າງສ່ວນທີ່ເສຍຫາຍນັ້ນອອກ ແລະ ໃຊ້ເງິນທີ່ໄດ້ຈາກການທົດແທນຄ່າເສຍຫາຍ ເພື່ອສ້ອມແຊມສ່ວນທີ່ຍັງເຫຼືອ. ໃນບາງກໍລະນີ ໂດຍຂຶ້ນກັບ ປະເພດຂອງໂຄງສ້າງມູນຄ່າຂອງການສ້ອມແປງຄືນ ອາດສູງກ່ວາການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ຖືກກະທົບທີ່ໄດ້ຮັບມາ. ຕາມມະ

ໂຍບາຍແລ້ວ, ໃນກໍລະນີໂຄງການສ້າງຄວາມເສຍຫາຍສ່ວນໃດສ່ວນໜຶ່ງຂອງສິ່ງປຸກສ້າງ ແລະ ຖ້າສ່ວນທີ່ຍັງເຫຼືອນັ້ນຍັງສາມາດສືບຕໍ່ນໍາໃຊ້ໄດ້, ຜູ້ຖືກກະທົບກໍຈະມີສິດໄດ້ຮັບການທົດແທນຄ່າເສຍຫາຍຕາມຈໍານວນທີ່ເໝາະສົມ ເພື່ອຟື້ນຟູສິ່ງປຸກສ້າງສ່ວນທີ່ຍັງເຫຼືອນັ້ນຄືນໃໝ່ ໃຫ້ສາມາດນໍາໃຊ້ໄດ້ເໝືອນເດີມ ແລະ ທັງໄດ້ຮັບການທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ຮັບຄວາມເສຍຕາມມູນຄ່າປ່ຽນແທນ.

- *ຜົນກະທົບທີ່ຫຼວງຫຼາຍ*

ໂຄງການທີ່ຖືວ່າເປັນໂຄງການທີ່ມີຜົນກະທົບຮຸນແຮງ ແມ່ນໂຄງການທີ່ເຮັດໃຫ້ຜູ້ຖືກກະທົບໄດ້ສູນເສຍຊັບສິນທັງໝົດ ຊຶ່ງອາດຈະເປັນທີ່ດິນ ຫຼື ສິ່ງປຸກສ້າງ ຫຼື ຊັບສິນທີ່ໄດ້ຮັບຄວາມເສຍຫາຍພຽງສ່ວນໃດສ່ວນໜຶ່ງ ແຕ່ສ່ວນທີ່ຍັງເຫຼືອບໍ່ສາມາດນໍາໃຊ້ໄດ້ອີກຕໍ່ໄປ ຫຼື ຜູ້ຖືກກະທົບໄດ້ສູນເສຍທັງແຫຼ່ງລາຍຮັບ ແລະ ວຽກເຮັດງານທໍາຂອງພວກເຂົາໄປ.

**ການຍົກຍ້າຍ ຫລື ສ້າງຖິ່ນຖານໃໝ່:** ໂດຍລວມແລ້ວ, ໂຄງການທີ່ມີຜົນກະທົບຫຼວງຫຼາຍມັກຈະເຮັດໃຫ້ມີການຍົກຍ້າຍຜູ້ຖືກກະທົບອອກຈາກຖິ່ນຖານເດີມ ແລະ ມີການເວນຄືນຊັບສິນທັງໝົດ ແລະ ຊ່ວຍເຫຼືອເຂົາເຈົ້າໃນການຍົກຍ້າຍໄປສູ່ສະຖານທີ່ໃໝ່. ໃນກໍລະນີການຍົກຍ້າຍ ເຫັນວ່າຈະສ້າງຄວາມຫຍຸ້ງຍາກ ແລະ ກະທົບກະເທືອນຕໍ່ຊີວິດຈິດໃຈຂອງຜູ້ຖືກກະທົບ, ການຕັດສິນໃຈ ກ່ຽວກັບ ການຈະສືບຕໍ່ນໍາໃຊ້ຊັບສິນ, ທີ່ດິນ ແລະ ສິ່ງປຸກສ້າງຕ່າງໆທີ່ຍັງເຫລືອ, ເຈົ້າຂອງໂຄງການຕ້ອງໄດ້ມີການ ພິຈາລະນາຢ່າງລະມັດລະວັງ ແລະ ຕ້ອງປຶກສາຫາລືກັບຜູ້ຖືກກະທົບ. ໃນກໍລະນີ ສິ່ງປຸກສ້າງທັງໝົດ ຫຼື ພຽງສ່ວນໃດສ່ວນໜຶ່ງຖືກກະທົບຈາກໂຄງການ ແລະ ສ່ວນທີ່ຍັງເຫຼືອບໍ່ສາມາດສືບຕໍ່ນໍາໃຊ້ໄດ້ອີກ ແຕ່ ທີ່ດິນນັ້ນຍັງມີພຽງພໍສໍາລັບການກໍ່ສ້າງອັນໃດໜຶ່ງໄດ້ໂດຍຫຍັບເຂົ້າໃນ, ການປັບປຸງພື້ນຖານເພື່ອໃຫ້ຜູ້ຖືກກະທົບຢູ່ບ່ອນເກົ່າຈະເປັນທາງອອກທີ່ດີກ່ວາຈະຍົກຍ້າຍເຂົາເຈົ້າໄປຢູ່ບ່ອນອື່ນ.

**ດິນສ່ວນທີ່ຍັງເຫຼືອເພື່ອໃຊ້ປະໂຫຍດຢ່າງອື່ນ:** ໃນກໍລະນີ ທີ່ດິນສ່ວນທີ່ຍັງເຫຼືອມີຂະໜາດນ້ອຍໂພດສໍາລັບປຸກສ້າງເຮືອນໃໝ່ໃຫ້ຜູ້ຖືກກະທົບ, ແຕ່ວ່າພື້ນທີ່ດັ່ງກ່າວ ສາມາດນໍາໃຊ້ເພື່ອເປົ້າໝາຍອື່ນໄດ້ ເຊັ່ນ: ສ້າງຮ້ານຄ້າ ຫຼື ຮ້ານຂາຍເຄື່ອງຍ່ອຍ ແລະ ຖ້າເຈົ້າຂອງຜູ້ທີ່ຖືກກະທົບຕ້ອງການຢາກໃຊ້ພື້ນທີ່ດັ່ງກ່າວ ເພື່ອເປົ້າໝາຍເຫຼົ່າ ນີ້ກໍສາມາດເຮັດໄດ້ ແລະ ບໍ່ຈໍາເປັນຕ້ອງເວນຄືນທີ່ດິນທັງໝົດ, ໂດສະເພາະ ຖ້າວ່າມູນຄ່າຂອງທີ່ດິນ ທີ່ຍັງເຫຼືອມີຄາດວ່າຈະເພີ້ມສູງຂຶ້ນໃນຕໍ່ໜ້າ

## 8.2.2 ປະເພດຜູ້ທີ່ຖືກກະທົບ

ໂດຍພິຈາລະນາຕາມມາດຖານທີ່ກ່າວມາຂ້າງເທິງ, ປະເພດຜູ້ຖືກກະທົບມີດັ່ງນີ້:

i. ການສູນເສຍດິນກະສິກໍາ

- ຜູ້ນໍາໃຊ້ຖືກຕ້ອງຕາມກົດໝາຍ ດ້ວຍສິດທິຖາວອນ ຫຼື ຊົ່ວຄາວ (ແຕ່ສາມາດໃຫ້ສິດຕາມກົດໝາຍ)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບ ຖືກຕ້ອງຕາມກົດໝາຍ ດ້ວຍສິດທິຊົ່ວຄາວ (ແຕ່ບໍ່ສາມາດໃຫ້ສິດຕາມກົດໝາຍ)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບ ໂດຍບໍ່ຖືກຕາມກົດໝາຍ

ii. ການສູນເສຍດິນທີ່ຢູ່ອາໃສ ຫຼື ດິນການຄ້າທີ່ບໍ່ມີໂຄງສ້າງຕັ້ງຢູ່ (ດິນສ່ວນຍັງເຫຼືອສາມາດນໍາໃຊ້ຕໍ່ໄປໄດ້)

- ຜູ້ນໍາໃຊ້ຖືກຕ້ອງຕາມກົດໝາຍ ດ້ວຍສິດທິຖາວອນ ຫຼື ຊົ່ວຄາວ (ແຕ່ສາມາດໃຫ້ສິດຕາມກົດໝາຍ)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບ ຖືກຕ້ອງຕາມກົດໝາຍ ດ້ວຍສິດທິຊົ່ວຄາວ (ແຕ່ບໍ່ສາມາດໃຫ້ສິດຕາມກົດໝາຍ)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບ ໂດຍບໍ່ຖືກຕາມກົດໝາຍ

iii. ການສູນເສຍທີ່ດິນສໍາລັບການຢູ່ອາໄສ ແລະ ທີ່ດິນເຮັດການຄ້າທີ່ມີໂຄງສ້າງຢູ່ໃນນັ້ນ (ດິນສ່ວນຍັງເຫຼືອສາມາດນໍາໃຊ້ຕໍ່ໄປໄດ້)

- ຜູ້ມນໍາໃຊ້ຖືກຕ້ອງຕາມກົດໝາຍ ດ້ວຍສິດທິຖາວອນ ຫຼື ຊົ່ວຄາວ (ແຕ່ສາມາດໃຫ້ສິດ ຕາມກົດໝາຍໄດ້)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບຖືກຕ້ອງຕາມກົດໝາຍດ້ວຍສິດທິຊົ່ວຄາວ(ແຕ່ບໍ່ສາມາດໃຫ້ສິດຕາມກົດໝາຍໄດ້)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບ ໂດຍບໍ່ຖືກຕາມກົດໝາຍ

iv. ການສູນເສຍທີ່ດິນເພື່ອທີ່ຢູ່ອາໄສ ຫຼື ເຮັດການຄ້າ ທີ່ມີໂຄງສ້າງຕັ້ງຢູ່ ແລະ ຕ້ອງໄດ້ຍົກຍ້າຍ (ບໍ່ມີເນື້ອທີ່ສ່ວນທີ່ຍັງເຫຼືອຊຶ່ງສາ ມາດນໍາໃຊ້ຕໍ່ໄປໄດ້)

- ເລືອກການທົດແທນຄ່າເສຍຫາຍເປັນເງິນສົດ
- ຍົກຍ້າຍໄປຕາມຂະບວນລວມ
- ຍົກຍ້າຍດ້ວຍຕົນເອງ
- ຜູ້ນໍາໃຊ້ຖືກຕ້ອງຕາມກົດໝາຍ ດ້ວຍສິດທິຖາວອນ ຫຼື ຊົ່ວຄາວ (ແຕ່ສາມາດໃຫ້ສິດຕາມກົດໝາຍ)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບຖືກຕ້ອງຕາມກົດໝາຍ ດ້ວຍສິດທິຊົ່ວຄາວ (ແຕ່ບໍ່ສາມາດໃຫ້ສິດຕາມກົດໝາຍ)
- ຜູ້ນໍາໃຊ້ທີ່ດິນທີ່ຖືກກະທົບ ໂດຍບໍ່ຖືກຕາມກົດໝາຍ

i. ການສູນເສຍສິ່ງປຸກສ້າງ (ດິນຖືກກະທົບສ່ວນໜຶ່ງ ແລະ ໂຄງສ້າງຖືກກະທົບທັງໝົດ)

- ເຈົ້າຂອງທີ່ຖືກຕ້ອງຕາມກົດໝາຍ ພ້ອມໄດ້ຮັບອະນຸຍາດໃນການດໍາເນີນການປຸກສ້າງ;
- ເຈົ້າຂອງທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ການປຸກສ້າງໂດຍບໍ່ໄດ້ຮັບອະນຸຍາດ;
- ຜູ້ອາໄສຢູ່ໃນເຮືອນເຊົ່າຈາກເຈົ້າຂອງຄົນອື່ນ.

ii. ເຈົ້າຂອງຮ້ານຄ້າເອກກະລາດ

- ເຈົ້າຂອງຮ້ານຄ້າທີ່ມີສິດທິຖາວອນ ຕໍ່ການນໍາໃຊ້ທີ່ດິນທີ່ຖືກກະທົບ
- ເຈົ້າຂອງຮ້ານຄ້າທີ່ມີສິດທິຊົ່ວຄາວ ແຕ່ບໍ່ສາມາດທີ່ຈະມີສິດຕາມກົດໝາຍຕໍ່ການນໍາໃຊ້ທີ່ດິນທີ່ຖືກກະທົບ
- ເຈົ້າຂອງຮ້ານຄ້າທີ່ບໍ່ມີສິດທິ ຕໍ່ການນໍາໃຊ້ທີ່ດິນທີ່ຖືກກະທົບ (ຜູ້ທີ່ຖືກກະທົບທີ່ບໍ່ຖືກຕ້ອງຕາມກົດໝາຍ)

iii. ການສູນເສຍພືດຍືນຕົ້ນ ແລະ ຕົ້ນໄມ້

iv. ການສູນເສຍໂຄງລ່າງພື້ນຖານສາທາລະນະ ແລະ ຊັບສິນອື່ນໆ

- ການສູນເສຍວຽກເຮັດງານທໍາ
- ການສູນເສຍລາຍຮັບ

ປະເພດຂອງຜູ້ທີ່ຖືກກະທົບອາດມີການປ່ຽນແປງ ໂດຍຂຶ້ນຢູ່ກັບທີ່ຕັ້ງ, ຂໍ້ບັນຍັດຂອງກົດໝາຍ ແລະ ມາດຖານສໍາລັບສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍຂອງໂຄງການ. ໃບເກັບກໍາຂໍ້ມູນຕົວຢ່າງທີ່ສັງລວມ ກ່ຽວກັບຜົນກະທົບຕໍ່ຊັບສິນ ແລະ ຄວາມເສຍຫາຍອື່ນໆ ໄດ້ສະເໜີໃນ*ເອກກະສານຄັດຕິດ 14.*

## 8.3. ປະເພດ ການໄດ້ຮັບສິດທົດແທນຄ່າເສຍຫາຍ

ດຳລັດ 192 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໄດ້ກຳນົດສິດທິທີ່ຈະໄດ້ຮັບຄ່າທົດແທນ ຂອງ ຜູ້ທີ່ຖືກກະທົບໃນໂຄງການພັດທະນາມີຢູ່ 4 ປະເພດ ຄືດັ່ງລຸ່ມນີ້:

i. ການທົດແທນຄ່າເສຍຫາຍຕໍ່ຊັບສິນທີ່ຖືກກະທົບ, ເປັນເງິນສົດ ຫຼື ວັດຖຸ;

ii. ໃຫ້ເງິນອຸດໜູນ;

iii. ການຊ່ວຍເຫຼືອເພື່ອຟື້ນຟູເສດຖະກິດຄືນ; ແລະ

iv. ການໃຫ້ການຊ່ວຍເຫລືອພິເສດຕໍ່ກຸ່ມຄົນທີ່ດ້ອຍໂອກາດ.

ແຕ່ລະປະເພດຂອງການທົດແທນຄ່າເສຍຫາຍໄດ້ອະທິບາຍໂດຍຫຍໍ້ ໃນຫົວຂໍ້ຕໍ່ໄປນີ້.

### 8.3.1 ¡ານêöດÁêໍນຄÈາÀສຍ¹າຍ

- <u>*ທາງເລືອກ ທີ່ເປັນເງິນສົດ ແລະ ບໍ່ເປັນເງິນສົດ*</u>

ການທົດແທນຄ່າເສຍຫາຍທີ່ເປັນເງິນສົດ ຫຼື ບໍ່ເປັນເງິນສົດ ລ້ວນແລ້ວແຕ່ແມ່ນອີງໃສ່ລະດັບຂອງຜົນກະທົບໃນໂຄງການ. ຕາມຫລັກການແລ້ວ, ມາດຖານທີ່ນຳໃຊ້ທົ່ວໄປ ແມ່ນອີງໃສ່ຄວາມສາມາດ ນຳໃຊ້ຊັບສິນສ່ວນ ທີ່ຍັງເຫຼືອໄດ້ທາງດ້ານເສດຖະກິດ, ຫຼື ຖືເອົາ 20% ຂອງລາຍຮັບຈາກການຜະລິດເປັນຈຸດເລີ້ມຕົ້ນ ເພື່ອກຳນົດມາດຖານໄດ້ຮັບສິດທົດແທນເປັນເງິນສົດ ຫຼື ບໍ່ເປັນເງິນສົດ. ໃນທາງປະຕິບັດແລ້ວ ຫຼັກການທີ່ຖືເອົາຄວາມສາມາດໃນການນຳໃຊ້ຊັບສິນສ່ວນທີ່ຍັງເຫຼືອໄດ້ທາງດ້ານເສດຖະກິດ ສາມາດຈັດຕັ້ງໄດ້ໂດຍຕັ້ງມາດຖານຕໍ່າສຸດ.

ທາງເລືອກບໍ່ເອົາການທົດແທນຄ່າເສຍຫາຍເປັນເງິນສົດຈະໃຫ້ໂອກາດຫຼາຍກວ່າ ສຳລັບການປັບປຸງ ແລະ ວິທີການແບບມີຫົວຄິດປະດິດສ້າງ ສຳລັບ ການຍົກຍ້າຍຈັດສັນປະຊາຊົນ ແລະ ຟື້ນຟູເສດຖະກິດທັງໃຫ້ໂອກາດແກ່ຜູ້ທຸກຍາກທີ່ຖືກກະທົບ ແກ້ໄຂບັນຫາໃຫ້ມີລັກສະນະຍືນຍົງຫລາຍຂຶ້ນກວ່າເກົ່າ.

- <u>*ການທົດແທນຄ່າເສຍຫາຍເປັນເງິນສົດ ເປັນທາງເລືອກທີ່ດີສຳລັບປະຊາຊົນທີ່ຖືກກະທົບແຕ່ພຽງສ່ວນໜຶ່ງ*</u>

ໃນກໍລະນີທີ່ດິນຖືກກະທົບພຽງແຕ່ສ່ວນໃດສ່ວນໜຶ່ງ ແລະ ສ່ວນທີ່ຍັງເຫຼືອນັ້ນ ຍັງສາມາດສືບຕໍ່ນຳໃຊ້ໄດ້ ແມ່ນແນະນຳໃຫ້ເຈົ້າຂອງໂຄງການທົດແທນເປັນເງິນສົດ. ຄວາມພະຍາຍາມເພື່ອເອົາດິນປ່ຽນດິນ ສຳລັບເນື້ອທີ່ທີ່ຖືກກະທົບນັ້ນຈະກໍ່ໃຫ້ເກີດສະພາບຜູ້ທີ່ຖືກກະທົບມີທີ່ດິນສອງຕອນແຍກກັນຢູ່ຄົນລະບ່ອນ. ສຳລັບດິນກະສິກຳແລ້ວ ກໍລະນີດັ່ງກ່າວຍິ່ງເປັນພາລະທີ່ຕ້ອງແບກຫາບເພີ້ມເຕີມສຳລັບຄອບຄົວທີ່ຖືກກະທົບ ໂດຍຕ້ອງໄດ້ທຸມເທກຳລັງ ແລະ ທຶນຮອນສູງຂຶ້ນເພື່ອດຳເນີນການຜະລິດໃນທີ່ດິນສອງຕອນດັ່ງກ່າວ.

- <u>*ການທົດແທນແບບ ດິນປ່ຽນດິນ*</u>

ການທົດແທນແບບໃຊ້ດິນປ່ຽນດິນ ແມ່ນເປັນທາງເລືອກທີ່ດີ ໂດຍສະເພາະໃນກໍລະນີຊັບສິນທີ່ມີມູນຄ່າ ໄດ້ຖືກກະທົບຈາກໂຄງການ (ດິນກະສິກຳ ແລະ ການຄ້າ). ໃນຊົນນະບົດການໃຊ້ທົດແທນແບບດິນປ່ຽນດິນ ເປັນການສະດວກໃນການຈັດຕັ້ງປະຕິບັດ. ຢ່າງໃດກໍຕາມ, ຄວາມສາມາດຈັດຕັ້ງປະຕິບັດທາງເລືອກແບບນີ້ ກໍແຕກຕ່າງກັນໄປໃນແຕ່ລະໂຄງການ. ມາດຖານທີ່ສຳຄັນ ເພື່ອເລືອກເຟັ້ນການທົດແທນແບບດິນປ່ຽນດິນມີຄືດັ່ງນີ້:

i. ທີ່ດິນສຳລັບປ່ຽນແທນຕ້ອງມີຄຸນລັກສະນະ, ທີ່ຕັ້ງທີ່ດີກວ່າ ຫຼື ຢ່າງໜ້ອຍ ກໍມີລັກສະນະຄ້າຍກັນກັບທີ່ດິນທີ່ເສຍໄປ. ອັນນີ້ແມ່ນມີຄວາມສຳຄັນເປັນພິເສດ ສຳລັບທີ່ດິນທີ່ຢູ່ອາໃສ ແລະ ທີ່ດິນເຮັດການຄ້າ. ສຳລັບດິນທີ່ຢູ່ອາໃສ, ການເຂົ້າເຖິງຕະຫຼາດ ແລະ ສາທາລະນູປະໂພກໄດ້ເປັນອັນຕັດສິນ ແລະ ຕ້ອງຮັບປະກັນ. ສຳລັບ ທີ່ດິນເຮັດການຄ້າ, ການເຂົ້າເຖິງລູກຄ້າ ແລະ ການຂົນສົ່ງເປັນອັນຕັດສິນ.

ii. ສຳລັບທີ່ດິນກະສິກຳ, ຜະລິດຕະພາບຂອງດິນທີ່ຈະປ່ຽນແທນ ແມ່ນມີຄວາມສຳຄັນຫຼາຍ. ໂຄງການຕ້ອງຮັບປະກັນວ່າດິນທີ່ມາປ່ຽນແທນ ຕ້ອງມີສະມັດຕະພາບດີກວ່າ ຫຼື ຢ່າງໜ້ອຍກໍເທົ່າທຽມກັບທີ່ດິນ ທີ່ສູນເສຍໄປ.

iii. ທີ່ຕັ້ງຂອງດິນທີ່ມາປ່ຽນແທນ ຕ້ອງໃຫ້ເປັນທີ່ຍອມຮັບເອົາໄດ້ຂອງຜູ້ທີ່ຖືກກະທົບ. ການຄັດເລືອກທີ່ດິນ ຕ້ອງໄດ້ຈັດຕັ້ງປະຕິບັດ ໂດຍມີການປຶກສາຫາລືກັບຜູ້ທີ່ຖືກກະທົບ.

ເຖິງຢ່າງໃດກໍຕາມ, ສິ່ງທີ່ດີກ່ວາໝູ່ກໍຄືໄດ້ສູ້ຊົນສະແຫວງຫາທາງເລືອກອື່ນໆ ທີ່ບໍ່ຕ້ອງມີການຍົກຍ້າຍຈັດສັນປະຊາຊົນ. ຕົວຢ່າງ, ໂຄງການສ້າງສາຍສົ່ງໄຟຟ້າແຫ່ງໜຶ່ງທີ່ປະເທດອິນໂດເນເຊຍ, ໄດ້ມີຄອບຄົວທີ່ຖືກກະທົບຫຼາຍ ຊຶ່ງມີທາງເລືອກທີ່ຈະຍົກຍ້າຍອອກ ຫຼື ຮັບເອົາຄ່າທົດແທນຄ່າເສຍຫາຍດ້ວຍເງິນສົດ ແລະ ສາມາດສືບຕໍ່ຜະລິດໃນສະຖານທີ່ເດີມ. ຄອບຄົວຜູ້ທີ່ຖືກກະທົບທັງໝົດປະສົງຈະຢູ່ບ່ອນເກົ່າຕໍ່ໄປ. ການປະສົມປະສານກັນ ລະຫວ່າງ ການທົດແທນດ້ວຍເງິນສົດ ແລະ ການອະນຸຍາດໃຫ້ສືບຕໍ່ຢູ່ບ່ອນເກົ່າຕໍ່ໄປ ເພື່ອທຳການຜະລິດໃນທີ່ດິນທີ່ຖືກກະທົບ ໂດຍປາດສະຈາກການຫວງເອົາສິດທິຕໍ່ທີ່ດິນດັ່ງກ່າວເຮັດໃຫ້ສາມາດຫຼີກລ້ຽງໄດ້ການຍົກຍ້າຍອອກ ແລະ ຈະບໍ່ມີຜົນກະທົບຫຼາຍຕໍ່ລາຍຮັບຂອງຄອບຄົວ.

- *ການໃຫ້ສິດທົດແທນຄ່າເສຍຫາຍແກ່ຜູ້ທີ່ຖືກກະທົບທີ່ບໍ່ມີສິດຄອບຄອງທີ່ດິນ*

ການໃຫ້ສິດໄດ້ຮັບການທົດແທນຄ່າເສຍຫາຍແກ່ຜູ້ຢູ່ອາໄສໃນທີ່ດິນບໍ່ຖືກຕ້ອງຕາມກົດໝາຍນັ້ນ ຕາມທຳມະດາແມ່ນບໍ່ມີ. ເມື່ອຜູ້ທີ່ຖືກກະທົບບໍ່ມີສິດທີ່ຖືກຕ້ອງຕາມກົດໝາຍຕໍ່ທີ່ດິນທີ່ຕົນເອງອາໃສຢູ່ ແລະ ຖ້າບໍ່ສາມາດໃຫ້ເຂົາເຈົ້າໄດ້ຮັບສິດທົດແທນຄ່າເສຍຫາຍກໍຄວນຄົ້ນຫາທາງເລືອກອື່ນໆ. ການທີ່ຈະຍົກຍ້າຍເຂົາເຈົ້າອອກໄປຈາກທີ່ດິນນັ້ນ ກໍອາດເປັນເຫດໃຫ້ຜູ້ທີ່ຖືກກະທົບນັ້ນ ໄປບຸກລຸກຫາທີ່ຢູ່ອາໃສບ່ອນອື່ນ. ມັນເປັນການດີທີ່ຕ້ອງໄດ້ຫາບ່ອນທີ່ຢູ່ອາໃສໃໝ່ໃຫ້ເຂົາເຈົ້າ ພ້ອມທັງໃຫ້ສິດຄອບຄອງທີ່ດິນນັ້ນ ແລະ ໂຄງການກໍຕ້ອງໄດ້ຮັບຮູ້ສິດທິໃນການຫາເຄື່ອງປ່າຂອງດົງ ແລະ ການຖາງປ່າເຮັດໄຮ່ຂອງພວກເຂົາເຈົ້າ.

ຂໍ້ສະເໜີແນະໃຫ້ແກ່ອົງການຮັບຜິດຊອບໂຄງການ ເພື່ອແກ້ໄຂບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ມີຄື:

i. ກຳນົດການຄອບຄອງ ແລະ ການຖືກຳມະສິດຂອງຜູ້ທີ່ຖືກກະທົບທຸກປະເພດ ລວມທັງຜູ້ທີ່ເຊົ່າຢູ່, ຜູ້ທີ່ອາໃສຢູ່ດິນລັດ, ຊົນເຜົ່າ ແລະ ຜູ້ທີ່ມີສິດນຳໃຊ້ທີ່ດິນ ເພື່ອການຜະລິດ ແລະ ຕາມສິດປະເພນີ.

ii. ແຜນການຂອງໂຄງການ ຕ້ອງກຳນົດການໃຫ້ສິດທົດແທນແກ່ຜູ້ທີ່ຖືກກະທົບແຕ່ລະປະເພດແບບຈັດເປັນຕາຕະລາງສັງລວມທີ່ງ່າຍດາຍ.

iii. ການໃຫ້ຄ່າທົດແທນຕໍ່ທີ່ດິນທີ່ຖືກເວນຄືນຕ້ອງໃຫ້ພຽງພໍ ເພື່ອໃຫ້ຜູ້ທີ່ຖືກກະທົບສາມາດຫາຊື້ທີ່ດິນຢູ່ບໍລິເວນໄກ້ຄຽງ ຊຶ່ງມີປະເພດ, ຜະລິດຕະພາບ ແລະ ຂະໜາດຄ້າຍຄຽງກັນ.

iv. ເກັບກຳຂໍ້ມູນ ກ່ຽວກັບລາຄາໃນທ້ອງຕະຫລາດ ໂດຍອີງໃສ່ອັດຕາການຊື້ຂາຍດິນໃນໄລຍະຫຼັງໆ ສຳລັບທີ່ດິນ ທີ່ມີຖານະການຄອບຄອງແຕກຕ່າງກັນຕາມເອກກະສານຢັ້ງຢືນ.

v. ປັບປຸງລະດັບການທົດແທນຄ່າເສຍຫາຍ ໃຫ້ແກ່ເຈົ້າຂອງດິນທີ່ມີກຳມະສິດ ແລະ ຖານະການຄອບຄອງບໍ່ໝັ້ນຄົງສາມາດຮັບປະກັນໄດ້ ຍ້ອນຂະບວນການປະຊາສຳພັນ ແລະ ການໃຫ້ໂອກາດເຂົາເຈົ້າມາເຈລະຈາກ່ຽວກັບ ການທົດແທນ.

ຜູ້ທີ່ຖືກກະທົບແຕ່ບໍ່ມີສິດນຳໃຊ້ທີ່ດິນທີ່ເວນຄືນນັ້ນ ຈະຍັງໄດ້ຮັບສິດທີທີ່ຈະໄດ້ຮັບການທົດແທນ ຄ່າເສຍຫາຍຕໍ່ສິ່ງປຸກສ້າງ, ຜົນລະປູກ ແລະ ຕົ້ນໄມ້, ລາຍຮັບ, ການມີວຽກເຮັດງານທຳ ແລະ ການອຸດໜູນ.

- *<u>ການທົດແທນຄ່າເສຍຫາຍສິ່ງປຸກສ້າງ</u>*

ປະຊາຊົນຜູ້ທີ່ຖືກກະທົບ ເນື່ອງຈາກການສູນເສຍສິ່ງປຸກສ້າງ, ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍ ຕໍ່ສິ່ງດັ່ງກ່າວໃນມູນຄ່າປ່ຽນແທນ. ການທົດແທນຄ່າເສຍຫາຍທີ່ກຳນົດໄວ້ສຳລັບສິ່ງປຸກສ້າງ ທີ່ຖືກກະທົບ ແມ່ນໃຫ້ຖືເອົາຕາມລາຄາຕະຫຼາດ, ສຳລັບວັດສະດຸກໍ່ສ້າງ ແລະ ແຮງງານບໍ່ໃຫ້ຫັກຄ່າເຊື່ອມຄຸນ ຫຼື ຫັກຄ່າວັດສະດຸກໍ່ສ້າງທີ່ຍັງໃຊ້ການໄດ້ອອກ. ນອກຈາກນັ້ນ, ການທົດແທນຄ່າເສຍຫາຍຍັງຕ້ອງລວມເອົາທັງຄ່າພົວພັນວຽກງານນຳດ້ວຍ. ຜູ້ທີ່ຖືກກະທົບມີສິດໄດ້ຮັບຄ່າທົດແທນຄ່າເສຍຫາຍ ຂອງສິ່ງປຸກສ້າງທຸກປະເພດ ເຊັ່ນ: ຄອກສັດ, ສາງມ້ຽນເຄື່ອງ, ກຳແພງຮົ້ວ, ນ້ຳສ້າງແລະໂຄງສ້າງອື່ນໆ ທີ່ຕິດກັບເຮືອນໃຫຍ່.

- *<u>ການທົດແທນຄ່າເສຍຫາຍສຳລັບຕົ້ນໄມ້ ແລະ ຜົນລະປູກ</u>*

ຜູ້ທີ່ຖືກກະທົບໂດຍສູນເສຍຕົ້ນໄມ້ກິນໝາກ, ພືດຢືນຕົ້ນ ແລະ ຜົນລະປູກກໍ່ສາມາດໄດ້ຮັບສິດໃນການທົດແທນຄ່າເສຍຫາຍ. ໂຄງການຕ້ອງມີການວາງແຜນກໍ່ສ້າງວຽກງານຂອງຕົນ ໂດຍເອື້ອອຳນວຍໃຫ້ການເກັບກູ້ຜົນລະປູກ ແລະ ຜົນຜະລິດຈາກພືດຢືນຕົ້ນກ່ອນທີ່ຈະເວນຄືນທີ່ດິນ. ບ່ອນໃດທີ່ບໍ່ສາມາດເກັບກູ້ຜົນລະປູກໄດ້ ຫຼື ຫຼີກລ້ຽງທຳລາຍຜົນລະປູກບໍ່ໄດ້, ຕ້ອງໄດ້ຈ່າຍຄ່າທົດແທນຄວາມເສຍຫາຍ ໂດຍອີງໃສ່ລາຄາຕະຫຼາດໃນເວລາເວນທີ່ດິນຄືນ. ຊັບພະຍາກອນອື່ນໆ ທີ່ເປັນຂອງສ່ວນຕົວ (ຕົວຢ່າງ: ໄມ້ທ່ອນ/ຟືນ) ກໍ່ຖືວ່າຍັງເປັນກຳມະສິດຂອງເຈົ້າຂອງທີ່ກ່ຽວຂ້ອງຄືເກົ່າ.

ສຳລັບທີ່ດິນຂອງຜູ້ເຊົ່າທີ່ບໍ່ໄດ້ຂຶ້ນທະບຽນ, ປະລິມານການທົດແທນຄ່າເສຍຫາຍຂອງພືດຢືນຕົ້ນຕ້ອງໄດ້ປຶກສາຫາລືກັບເຈົ້າຂອງທີ່ດິນ ແລະ ຜູ້ເຊົ່າທີ່ຖືກກະທົບ ຕ້ອງໄດ້ພິຈາລະນາສັນຍາທີ່ເປັນລາຍລັກອັກສອນ ຫຼື ປາກເປົ່າຊຶ່ງໄດ້ຕົກລົງກັນມາກ່ອນຖ້າມີ.

ການພິຈາລະນາເພື່ອຕັດສິນ ກ່ຽວກັບ ການທົດແທນຄ່າເສຍຫາຍ ສຳລັບຕົ້ນໄມ້ກິນໝາກ ແລະ ໄມ້ຢືນຕົ້ນ ແລະ ຜົນລະປູກ ຕ້ອງໄດ້ປຶກສາຫາລືກັບພະແນກກະສິກຳ ແລະ ປ່າໄມ້ນຳ.

- *<u>ການທົດແທນຄ່າເສຍຫາຍສຳລບການສູນເສຍລາຍຮັບ ແລະ ທຸລະກິດ</u>*

ຜູ້ທີ່ຖືກກະທົບຈາກການສູນເສຍວຽກເຮັດງານທຳ, ລາຍຮັບ ຫຼື ທຸລະກິດຍັງມີສິດໄດ້ຮັບການທົດແທນຄ່າເສຍຫາຍຕື່ມອີກ ທີ່ນອກເໜືອໄປຈາກການໃຫ້ການຊ່ວຍເຫຼືອອື່ນໆ ຕາມດຳລັດ 192 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວໄດ້ກຳນົດໄວ້. ການກຳນົດລະດັບການທົດແທນຄ່າເສຍຫາຍຈາກການສູນເສຍລາຍຮັບ ຈາກທຸລະກິດທີ່ຖືກກະທົບມັກມີບັນຫາຫຍຸ້ງຍາກເລື້ອຍໆ. ເພາະສະນັ້ນ ມັນຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ເກັບກຳຂໍ້ມູນ ກ່ຽວກັບລາຍຮັບສະເລ່ຍຈາກທຸລະກິດຂອງຜູ້ທີ່ຖືກກະທົບ ໃນເວລາດຳເນີນການສຳຫຼວດ ເສດຖະກິດ-ສັງຄົມ ແລະ ການຂຶ້ນບັນຊີຊັບສິນ.

## 8.3.2 ¡ານÃ¹É¡ານອ÷ດÎøນ

ປະເພດຂອງການອຸດໜູນທີ່ໄດ້ລະບຸຢູ່ໃນດຳລັດ ແລະ ມາດຖານໃນການໃຫ້ສິດໄດ້ຮັບການທົດແທນຄ່າເສຍຫາຍ ມີດັ່ງຕໍ່ໄປນີ້:

- *<u>ການອຸດໜູນຄ່າຂົນສົ່ງວັດຖຸສິ່ງຂອງ</u>*

ຜູ້ທີ່ຖືກກະທົບທັງໝົດທີ່ຖືກຍົກຍ້າຍອອກຈາກຂອບເຂດໂຄງການ ແລະ ໄປຢູ່ບ່ອນໃໝ່ນັ້ນ, ບໍ່ວ່າຈະເລືອກໄປຢູ່ສະຖານທີ່ ທີ່ໂຄງການໄດ້ຈັດສັນໃຫ້ ຫຼື ໄປຢູ່ບ່ອນທີ່ຕົນເອງໄດ້ເລືອກໄວ້ແລ້ວ ລ້ວນແຕ່ມີສິດໄດ້ຮັບເງິນຊ່ວຍເຫຼືອເພື່ອການຂົນສົ່ງວັດຖຸສິ່ງຂອງຕົນ ແລະ ວັດສະດຸກໍ່ສ້າງທີ່ມ້າງອອກ ແຕ່ຍັງໃຊ້ໄດ້ໄປຍັງສະຖານທີ່ໃໝ່. ການຈ່າຍຄ່າຂົນສົ່ງໃຫ້ຜູ້ທີ່ຖືກກະທົບ ຈະຕ້ອງໄດ້ຈ່າຍໃຫ້ກ່ອນຍົກຍ້າຍອອກຈາກບ້ານເດີມ.

- *<u>ການອຸດໜູນໃນໄລຍະຂ້າມຜ່ານ</u>*

ຜູ້ທີ່ຖືກນກະທົບຫຼາຍ ລວມທັງຜູ້ທີ່ໄດ້ສູນເສຍພື້ນຖານການຜະລິດ 20% ຫລື ຫລາຍກວ່ານັ້ນທັງໝົດ (ເຊັ່ນ: ທີ່ດິນກະສິກຳ ຫຼື ດິນການຄ້າ ຫຼື ຮ້ານຄ້າ) ຫຼື ສູນເສຍແຫຼ່ງລາຍຮັບຕົ້ນຕໍ ແລະ ຈຳເປັນຕ້ອງໄດ້ຖືກຍົກຍ້າຍໄປຢູ່ບ່ອນໃໝ່, ຫຼື ຟື້ນຟູທີ່ຢູ່ອາໄສບ່ອນເກົ່າ ລ້ວນແຕ່ໄດ້ຮັບສິດຮັບເອົາສະບຽງອາຫານສຳ ລັບແຕ່ລະຄົນໃນຄອບຄົວໃນໄລຍະຫົກເດືອນ. ສຳລັບຜູ້ທີ່ຖືກກະທົບຕໍ່ທີ່ຢູ່ອາໃສ ແລະ ຕ້ອງຖືກຍົກຍ້າຍ ແຕ່ບໍ່ມີຜົນກະທົບຕໍ່ທຸລະກິດ ຫຼື ແຫຼ່ງລາຍຮັບ ຈະໄດ້ຮັບສະບຽງອາຫານໃຫ້ສະມາຊິກຄອບຄົວໃນໄລຍະເວລາ 3 ເດືອນ.

ການອຸດໜູນດັ່ງກ່າວ ແນໃສ່ທົດແທນຄືນການສູນເສຍລາຍຮັບ ແລະ ເພື່ອເປັນການທົດແທນຕໍ່ລາຍຈ່າຍຕ່າງໆໃນໄລຍະຂ້າມຜ່ານ ໃນຊ່ວງທີ່ຜູ້ທີ່ຖືກກະທົບກຳລັງຕັ້ງຖິ່ນຖານໃນບ່ອນໃໝ່. ການອຸດໜູນດັ່ງກ່າວດີແທ້ແມ່ນໃຫ້ເປັນວັດຖຸ. ແຕ່ວ່າບ່ອນໃດທີ່ການຈໍລະຈອນມີບັນຫາຫຍຸ້ງຍາກ ແລະ ມີການຂໍຮ້ອງພິເສດຂອງຜູ້ທີ່ຖືກກະທົບ, ການອຸດໜູນກໍອາດຈ່າຍເປັນເງິນສົດໄດ້.

- *<u>ການໃຫ້ອຸດໜູນເພື່ອການສ້ອມແປງ</u>*

ຜູ້ທີ່ຖືກກະທົບຍ້ອນສິ່ງປຸກສ້າງສ່ວນໃດສ່ວນໜຶ່ງຂອງຕົນໄດ້ຮັບຄວາມເສຍຫາຍ, ແຕ່ສ່ວນທີ່ເຫຼືອຍັງສາມາດສືບຕໍ່ນຳໃຊ້ໄດ້, ຈະໄດ້ຮັບການທົດແທນຄ່າເສຍຫາຍເປັນເງິນສົດ ເພື່ອທົດແທນຄ່າເສຍຫາຍສຳລັບສິ່ງປຸກສ້າງ ແລະ ສ້ອມແປງສ່ວນທີ່ຍັງເຫຼືອ. ຈຳນວນເງິນທົດແທນຄວນໃຫ້ພຽງພໍຕໍ່ຄ່າສ້ອມແປງທັງໝົດຂອງສ່ວນທີ່ຍັງເຫຼືອ ຊຶ່ງລະດັບຂອງມັນກໍຈະແຕກຕ່າງກັນຕາມປະເພດຂອງສິ່ງປຸກສ້າງທີ່ຖືກກະທົບ. ສຳລັບໂຄງສ້າງຊົ່ວຄາວ ແມ່ນຕ້ອງການເງິນຈຳນວນໜ້ອຍເພື່ອການສ້ອມແປງ ແຕ່ຖ້າເປັນໂຄງສ້າງຖາວອນທີ່ໃຫຍ່ຫຼາຍຊັ້ນ ຈະຕ້ອງການເງິນຈຳນວນຫຼວງຫຼາຍ. ເພາະສະນັ້ນ, ຈຶ່ງຕ້ອງມີເງິນອຸດໜູນ ຫຼາຍລະດັບສຳລັບການສ້ອມແປງໃນໂຄງການໜຶ່ງ ເພື່ອໃຫ້ແທດເໝາະກັບສິ່ງປຸກສ້າງແຕ່ລະປະເພດ ແລະ ຊະນິດ ແລະ ຕ້ອງໄດ້ກຳນົດອອກໂດຍມີການປຶກສາຫາລືກັບຜູ້ທີ່ຖືກກະທົບ.

- *<u>ການໃຫ້ອຸດໜູນພິເສດຕໍ່ການສູນເສຍທຸລະກິດ</u>*

ຜູ້ທີ່ຖືກກະທົບ ຊຶ່ງສູນເສຍທຸລະກິດຢ່າງຫຼວງຫຼາຍ ຈະໄດ້ຮັບການອຸດໜູນສຳລັບການສູນເສຍລາຍໄດ້ ເພື່ອໃຫ້ສາມາດຟື້ນຟູທຸລະກິດຂອງຕົນຄືນໃນໄລຍະຂ້າມຜ່ານ.

## 8.3.3. ¡ານÃ¹É¡ານຊÈ¸ຍÃÎອÃມ¡ານ³œມ³øÀສດຖະ¡òດ

ຜູ້ທີ່ຖືກກະທົບຫລວງຫລາຍຈາກໂຄງການຕໍ່ພື້ນຖານການຜະລິດ (ເຊັ່ນ: ທີ່ດິນກະສິກຳ ຫຼື ເຮັດການຄ້າ, ຮ້ານຄ້າ, ສະຖານທີ່ດຳເນີນທຸລະກິດ), ຕໍ່ລາຍຮັບ ແລະ ວຽກເຮັດງານທຳກໍຈະໄດ້ຮັບການຊ່ວຍເຫຼືອໃນການຟື້ນຟູຕົນ ນອກຈາກການຈ່າຍຄ່າທົດແທນຄວາມເສຍຫາຍ ແລະ ອຸດໜູນແລ້ວ. ໃນກໍລະນີທີ່ມີຜົນກະທົບຫຼາຍການຈ່າຍຄ່າທົດແທນຄວາມເສຍຫາຍ ແລະ ການໃຫ້ການອຸດໜູນຢ່າງດຽວ ຖືວ່າຍັງບໍ່ພໍທີ່ຈະເຮັດໃຫ້ຜູ້ທີ່ຖືກກະທົບ ສາມາດປັບປຸງລະດັບ

ລາຍຮັບ ແລະ ຊີວິດການເປັນຢູ່ຂອງເຂົາໃຫ້ດີຂຶ້ນ ຫຼື ຢ່າງໜ້ອຍກໍເທົ່າເກົ່າ ແລະ ສາມາດຕັ້ງຕົວໃໝ່ ບົນພື້ນຖານທີ່ໝັ້ນຄົງໄດ້. ດັ່ງນັ້ນ ການໃຫ້ການຊ່ວຍເຫຼືອເພື່ອຟື້ນຟູລາຍໄດ້ ຈຶ່ງເປັນເຄື່ອງມືທີ່ຊີ້ຂາດ ໃນການບັນລຸຈຸດປະສົງຂອງດຳລັດ 192 ສຳລັບໂຄງການ.

ປະເພດມາດຕະການໃຫ້ການຊ່ວຍເຫຼືອຈະຂຶ້ນຢູ່ກັບຄວາມຕ້ອງການ ແລະ ບຸລິມະສິດຂອງຜູ້ທີ່ຖືກກະທົບ ແລະ ລະດັບຄວາມຊຳນິຊຳນານງານຂອງເຂົາເຈົ້າ. ມາດຕະການຕ່າງໆຈະຖືກຕັດສິນໂດຍການນຳເອົາມາປຶກສາຫາລືກັບຜູ້ທີ່ຖືກກະທົບ. ລາຍລະອຽດເພີ້ມເຕີມ ກ່ຽວກັບ ການໃຫ້ການຊ່ວຍເຫຼືອເພື່ອການຟື້ນຟູ ໄດ້ສະເໜີຢູ່ໃນໝວດທີ 9.

### 8.3.4.¡ານÃ¹É¡ານຊÈ¸ຍÅ ໄືອອ^ນÅ (ລ¸ມêñງ¯ະÀ²ດຂອງ¡ານຊÈ¸ຍÅໄືອ²òÀສດÃ¹É ¡÷ÈມຄöນêtບÒ ສາມາດຊÈ¸ຍຕöນÀອງÄດÉ)

ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ທີ່ຖືກກະທົບຈາກໂຄງການ ຈະໄດ້ຮັບສິດໃຫ້ການຊ່ວຍເຫຼືອພິເສດ ນອກຈາກສິ່ງທີ່ພວກເຂົາເຈົ້າຈະໄດ້ຮັບການທົດແທນຄ່າເສຍຫາຍ, ການອຸດໜູນ ແລະ ການຊ່ວຍເຫຼືອຟື້ນຟູຊີວິດການເປັນຢູ່ ເພື່ອຮັບປະກັນໃຫ້ພວກເຂົາເຈົ້າສາມາດຕັ້ງຕົວໄດ້ ແລະ ສາມາດປັບປຸງລະດັບລາຍໄດ້ຂອງຕົນໃຫ້ຢູ່ໃນລະດັບຄາດໝາຍທີ່ໂຄງການໄດ້ກຳນົດໄວ້. ການຊ່ວຍເຫຼືອພິເສດຈະແຕກຕ່າງກັນໄປຕາມຄວາມຈຳເປັນ ແລະ ບຸລິມະສິດຂອງກຸ່ມຄົນດັ່ງກ່າວ ແລະ ຕ້ອງໄດ້ປຶກສາຫາລືກັບເຂົາເຈົ້າ.

## 8.4. ຕາຕະລາງ ກ່ຽວກັບ ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ

ບົນພື້ນຖານປະເພດຕ່າງໆຂອງການກະທົບ, ຂອງຜູ້ທີ່ຖືກກະທົບ ແລະ ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ຕາມທີ່ໄດ້ກຳນົດໃນດຳລັດ 192 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ, ຈະຕ້ອງໄດ້ກະກຽມຕາຕະລາງ ກ່ຽວກັບສິດທິທີ່ຈະຮັບເອົາການທົດແທນຄ່າເສຍຫາຍ ທີ່ສະແດງອອກສິດທິສະເພາະຂອງຜູ້ທີ່ຖືກກະທົບ ແຕ່ລະປະເພດ. ຕາຕະລາງແບບຢ່າງ ໄດ້ສະເໜີໃນ*<u>ເອກກະສານຄັດຕິດທີ 14.</u> ສິດທິທີ່ຈະໄດ້ຮັບ ການທົດແທນຄ່າເສຍຫາຍທີ່ສະເໜີໃນຕາຕະລາງແບບຢ່າງນີ້ຕ້ອງຖືກປັບປຸງໃຫ້ແທດເໝາະກັບຈຸດພິເສດຂອງແຕ່ລະໂຄງການ ແລະ ໃຫ້ສອດ ຄ່ອງກັບຂໍ້ກຳນົດຂອງດຳລັດ 192 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ.*

## 8.5 ວິທີການປະເມີນການທົດແທນຄ່າເສຍຫາຍ

ການປະເມີນແລະຈ່າຍຄ່າທົດແທນທີ່ດິນ ແລະ ອາຄານເຮືອນຊານເປັນບັນຫາຫຍຸ້ງຍາກ ແລະ ບໍ່ລຶ້ງລອຍກັນງ່າຍ ໃນວຽກງານຍົກຍ້າຍຈັດສັນປະຊາຊົນ. ເຖິງແມ່ນວ່າລະບຽບກົດໝາຍໃນ ສປປລາວ ບໍ່ໄດ້ຫ້າມ ຈ່າຍຄ່າທົດແທນຊັບສິນທີ່ຖືກກະທົບໃນມູນຄ່າປ່ຽນແທນກໍຕາມ, ແຕ່ໃນພາກປະຕິບັດຕົວຈິງການປະເມີນຄ່າບ ໄດ້ໃຊ້ມູນຄ່າປ່ຽນແທນສະເໜີໄປ. ຂັ້ນຕອນ ແລະ ຂໍ້ແນະນຳ ກ່ຽວກັບ ວິທີການປະເມີນມູນຄ່າທີ່ພໍຮັບໄດ້ສຳລັບຊັບສິນປະເພດຕ່າງໆ ແມ່ນມີຄືດັ່ງຕໍ່ໄປນີ້:

### 8.5.1. ¡ານêöດÁêນຄÈາÀສຍ¹າຍສ¿ລñບêtດòນ

ຕາມຫລັກການແລ້ວ, ການຈ່າຍການທົດແທນຄ່າເສຍຫາຍສຳລັບທີ່ດິນ ຕ້ອງໄດ້ປະຕິບັດຕາມແບບມູນຄ່າປ່ຽນແທນ ໂດຍອີງໃສ່ລາຄາຕະຫຼາດໃນຕອນນັ້ນ. ແຕ່ຢ່າງໃດກໍຕາມ, ມັນກໍ່ແມ່ນຍັງມີຄວາມຫຍຸ້ງຍາກພໍສົມຄວນ ໃນການຕົກລົງນຳກັນ ກ່ຽວກັບລາຄາຕະຫຼາດທີ່ເປັນທຳ. ພື້ນຖານການກຳນົດລາຄາຕະຫຼາດ ສຳລັບທີ່ດິນຕ້ອງອີງໃສ່ການຊື້ຂາຍທີ່ໄດ້ປະຕິບັດກັນກັບທີ່ດິນປະເພດດຽວໃນເຂດດຽວກັນ. ແຕ່ໜ້າເສຍດາຍໃນພາກປະຕິບັດຕົວຈິງມີການຊື້ຂາຍທີ່ດິນກັນໜ້ອຍຫລາຍທີ່ໄດ້ຂຶ້ນທະບຽນ ແລະ ພ້ອມນັ້ນທີ່ດິນທີ່ໄດ້ ຂຶ້ນທະບຽນກໍບໍ່ໄດ້ແຈ້ງລາຄາການຊື້ຂາຍຕົວຈິງໃຫ້ລັດຮູ້.

ຢູ່ໃນ ສປປລາວ ການທົດແທນຄ່າເສຍຫາຍສໍາລັບທີ່ດິນໂດຍທົ່ວໄປແລ້ວຍັງອີງຕາມການປະເມີນພາສີນໍາໃຊ້ເພື່ອເກັບພາສີທີ່ດິນ. ມູນຄ່າດັ່ງກ່າວ ສາມາດຊອກຮູ້ໄດ້ນໍາພະນັກງານພາສີຢູ່ທ້ອງຖິ່ນ ຫຼື ເອົາຈາກໃບເສຍພາສີກໍໄດ້. ຄ່າດັ່ງກ່າວ ບໍ່ໄດ້ມີການປັບປຸງໃນແຕ່ລະປີ ແລະທັງບໍ່ໄດ້ສະທ້ອນໃຫ້ເຫັນເຖິງລາຄາຕະຫຼາດໃນເວລານັ້ນໆ.

ໃນເມື່ອຂາດຂະບວນການທີ່ເປັນເອກກະພາບ ເພື່ອກໍານົດມູນຄ່າປ່ຽນແທນ, ຕ້ອງໄດ້ຫາວິທີໃໝ່ມາໃຊ້. ຕົວຢ່າງ ຢູ່ໂຄງການໄຟຟ້ານໍ້າເລີກ, ການປະເມີນລາຄາຂອງທີ່ດິນທີ່ໄດ້ເວນຄືນ ແມ່ນເອົາຕາມຜະລິດຕະພາບຂອງດິນແລ້ວທົດແທນດ້ວຍເງິນສົດເທົ່າກັບຜົນຜະລິດໃນ 6-7 ປີ ຊຶ່ງກໍຖືວ່າແທດເໝາະກັບຄວາມຕ້ອງການທາງດ້ານນະໂຍບາຍ. ການຈ່າຍຄ່າທົດແທນທີ່ດິນທີ່ນໍາໃຊ້ຊົ່ວຄາວ ແມ່ນໃຫ້ຄິດໄລ່ເປັນເຂົ້າກິນທີ່ຈະສູນເສຍໄປ ແລະ ໃຫ້ການປັບປຸງຜະລິດຕະພາບຂອງດິນ ເຊັ່ນ: ການປັບປຸງລະບົບຊົນລະປະທານ, ການສະໜອງລົດໄຖນານ້ອຍໃຫ້ ຫຼື ປໍ້າດູດນໍ້າຢ່າງນີ້ເປັນຕົ້ນ. ໃນສະພາບທີ່ຂາດຕະຫຼາດຊື້ຂາຍຕົວຈິງ, ວິທີດັ່ງກ່າວ ຖືວ່າແທດເໝາະສໍາລັບການປະເມີນການທົດແທນຄ່າເສຍຫາຍຕາມລາຄາຕະຫຼາດ.

ການປະເມີນຄ່າທົດແທນຄວາມເສຍຫາຍຕໍ່ທີ່ດິນທີ່ຖືກກະທົບໃນເຂດຕົວເມືອງ, ຖ້າທຽບກັນແລ້ວ ເຫັນວ່າມີຄວາມສະດວກສະບາຍກວ່າ ເນື່ອງຈາກມີຂໍ້ມູນຂ່າວສານ ກ່ຽວກັບ ການຊື້ຂາຍນໍາອົງກອນຊໍ້າຍຊັບສິນບັດຄົງທີ່ ແລະ ຫ້ອງການຂອງຕົວແທນເອກກະຊົນ ທີ່ເຮັດວຽກຊ່ວຍຜູ້ຊື້ ແລະ ຜູ້ຂາຍ.

ການທົດແທນຄ່າເສຍຫາຍສໍາລັບທີ່ດິນ ແມ່ນຍັງຂຶ້ນກັບປະເພດຂອງທີ່ດິນທີ່ຖືກກະທົບ ແລະ ປະເພດກໍາມະສິດຂອງຜູ້ທີ່ຖືກກະທົບອີກ, ເຊັ່ນ: ລາຄາຂອງທີ່ດິນກໍ່ສ້າງ ແລະ ອຸດສາຫະກໍາ ຈະສູງກວ່າ ຂອງທີ່ດິນກະສິກໍາ ແລະ ດິນປ່າໄມ້ ແລະ ລາຄາກໍຍັງມີຄວາມແຕກຕ່າງກັນອີກຕາມທີ່ຕັ້ງຂອງດິນ. ທີ່ດິນໃນເຂດຕົວ ເມືອງຈະມີລາຄາສູງກວ່າທີ່ດິນໃນເຂດນອກເມືອງ. ໃນບັນດາຕົວເມືອງທີ່ມີການຂະຫຍາຍຕົວໄວ, ທີ່ດິນທີ່ຢູ່ຊານເມືອງກໍມີມູນ ຄ່າສູງເທົ່າໆກັນກັບລາຄາຕະຫຼາດ ຂອງທີ່ດິນໃນເຂດຕົວເມືອງທີ່ຕິດກັນນັ້ນ, ເຖິງແມ່ນວ່າທີ່ດິນດັ່ງກ່າວອາດຈັດເປັນດິນກະສິກໍາກໍຕາມ. ການປະເມີນຄ່າທົດແທນທີ່ດິນຊານເມືອງດັ່ງກ່າວ ກໍຕ້ອງໄດ້ອີງໃສ່ລາຄາຕະຫຼາດຂອງທີ່ດິນຕົວເມືອງ.

- <u>ຂໍ້ແນະນໍາ</u>

1. ເຖິງວ່າຈະມີຂໍ້ຈໍາກັດຢູ່ກໍຕາມ, ຄວນພະຍາຍາມເກັບກໍາຂໍ້ມູນ ກ່ຽວກັບການຊື້ຂາຍໃນລາຄາຕະຫຼາດໃນເຂດຕົວເມືອງ ແລະ ລາຄາທີ່ດິນທີ່ກະຊວງການເງິນໄດ້ກໍານົດຂຶ້ນມາເພື່ອເກັບພາສີ ແລະ ຕ້ອງໄດ້ເອົາມາກວດກາໂດຍສົມທຽບກັບລາຄາທີ່ດິນໃນເຂດໃກ້ຄຽງ.
2. ໃນບ່ອນທີ່ເປັນໄປໄດ້, ຄວນຊອກຫາລາຄາສົມທຽບທີ່ໄດ້ຮັບການປັບປຸງຈາກອົງການປົກຄອງທ້ອງຖິ່ນ ແລະ ຕະຫຼາດ ແລະ <u>ຖືເອົາລາຄາສູງສຸດມາເປັນການຕໍ່ລອງກັບຜູ້ທີ່ຖືກກະທົບເພື່ອຕົກລົງ ກ່ຽວກັບການຈ່າຍການທົດແທນຄ່າເສຍຫາຍສໍາລັບທີ່ດິນ.</u>
3. ເນື່ອງຈາກວ່າ ຍັງຂາດຕະຫຼາດຊື້ຂາຍທີ່ດິນທີ່ແທ້ຈິງໃນເຂດຊົນນະບົດ, ການກໍານົດການທົດແທນຄ່າເສຍຫາຍຕ້ອງໄດ້ອີງໃສ່ມູນຄ່າຜະລິດຕະພາບຂອງດິນ ໂດຍໄລ່ສະເລ່ຍເອົາຜົນຜະລິດໃນໄລຍະ 3-4 ປີທີ່ຜ່ານມາ ແລະການທົດແທນຢ່າງຕໍ່າກໍ່ຕ້ອງໃຫ້ທຽບເທົ່າກັບມູນຄ່າສູງສຸດຂອງຜົນຜະລິດ ໃນໄລຍະ 6-7 ປີ.
4. ການທົດແທນຈາກການນໍາໃຊ້ທີ່ດິນແບບຊົ່ວຄາວໃຫ້ອີງໃສ່ຜົນຜະລິດທີ່ເສຍໄປ ແລະ ຄ່າປັບປຸງຜະລິດຕະພາບຂອງດິນ ເຊັ່ນ: ການປັບປຸງລະບົບຊົນລະປະທານ, ການສະໜອງລົດໄຖນ້ອຍ ແລະ ເຄື່ອງປໍ້ານໍ້າ ເປັນຕົ້ນ.
5. ການເຂົ້າມາມີສ່ວນຮ່ວມຂອງປະຊາຊົນໃນໂຄງການນັບຕັ້ງແຕ່ຫົວທີ ຈະຮັບປະກັນວ່າເຂົາເຈົ້າຈະໃຫ້ການຮ່ວມມື ແລະ ຄ່າທົດແທນຄວາມເສຍຫາຍ ຈະຢູ່ໃນລະດັບທີ່ຍອມຮັບກັນໄດ້.

## 8.5.2. ¡ານêöດÁêນຄÈາÀສຍ¹າຍສ¿ລກັບສິ່ງ¯÷¡ສÉາງ

ປັດຈຸບັນການທົດແທນຄ່າເສຍຫາຍສໍາລັບສິ່ງປຸກສ້າງ ແມ່ນອີງໃສ່ແຕ່ການຕີລາຄາມູນຄ່າສິ່ງປຸກສ້າງຕາມທີ່ກະຊວງຄົມ ມະນາຄົມຂົນສົ່ງໄປສະນີແລະກໍ່ສ້າງໄດ້ກໍານົດອອກ (ດໍາລັດເລກທີ 1266/ຄຂປກ ວ່າດ້ວຍ *"ລະບຽບການກ່ຽວກັບການຕີລາຄາຍານພາຫະນະ, ເຮືອນ, ສິ່ງປຸກສ້າງ ແລະ ວັດຖຸສິ່ງຂອງຮັບໃຊ້ຄອບຄົວໃຫ້ພະນັກງານລັດ"*, ລົງວັນທີ 29 ສິງຫາ 1995). ເປົ້າໝາຍຂອງດໍາລັດນີ້ ແມ່ນເພື່ອປະເມີນລາຄາເຮືອນຊານ ແລະ ຊັບສິນອື່ນໆຂອງລັດ ເພື່ອຂາຍໃຫ້ແກ່ພະນັກງານລັດ. ເຖິງຢ່າງໃດກໍຕາມ, ດໍາລັດສະບັບນີ້ບໍ່ສາມາດຈະຖືເປັນພື້ນຖານ ເພື່ອປະເມີນລາຄາຂອງສິ່ງປຸກສ້າງທີ່ຖືກກະທົບຈາກໂຄງການຕ່າງໆ. ລາຄາທີ່ໄດ້ຈາກການປະເມີນມານັ້ນ ແມ່ນຍັງຫຼຸດລົງອີກ ແລະ ຫັກຄ່າລຸ້ຍຫ້ຽນ ແລະ ຄ່າວັດສະດຸກໍ່ສ້າງທີ່ຍັງໃຊ້ການໄດ້ນັ້ນອອກ. ອີງການໃຫ້ທຶນທະວິພາຄີບາງອົງການ ກໍອະນຸຍາດໃຫ້ຫັກຄ່າວັດສະດຸກໍ່ສ້າງຕາມລາຄາໃນຕະຫຼາດ.

ຍິ່ງໄປກວ່ານັ້ນ, ຂະບວນການທົດແທນຄ່າເສຍຫາຍໃນປັດຈຸບັນ ໄດ້ມີການຈັດປະເພດສິ່ງປຸກສ້າງອອກເປັນ 3 ປະເພດຕົ້ນຕໍ ເຊັ່ນ: ຖາວອນ, ເຄິ່ງຖາວອນ ແລະ ຊົ່ວຄາວ. ໃນກໍລະນີທີ່ໂຄງການໜຶ່ງມີສິ່ງປຸກສ້າງຫຼາຍຊະນິດທີ່ຖືກກະທົບ, ການຈັດປະເພດແບບນີ້ມີລັກສະນະຈໍາກັດ ແລະ ອາດບໍ່ກວມເອົາສິ່ງປຸກສ້າງປະເພດຕ່າງໆໄດ້ໝົດ ຊຶ່ງເປັນເຫດໃຫ້ມີສິ່ງປຸກສ້າງຈໍານວນໜຶ່ງ ຕົກຢູ່ເຄິ່ງກາງໃນສາມປະເພດດັ່ງກ່າວ. ຂະບວນການດັ່ງກ່າວ ກໍຈະເຮັດໃຫ້ມີຄວາມຫຍຸ້ງຍາກໃນການກໍານົດມູນຄ່າຂອງສິ່ງປຸກສ້າງຕ່າງໆຕາມລາຄາຕະຫຼາດ ເຊັ່ນ: ກໍາແພງ, ນໍ້າສ້າງ, ຄອກສັດ, ສາງເກັບເຄື່ອງຂະໜາດນ້ອຍ ແລະ ອື່ນໆ ທີ່ບໍ່ນອນໃນການຈັດປະເພດດັ່ງກ່າວ.

ຂະບວນການປະເມີນລາຄາ ເພື່ອການທົດແທນຄ່າເສຍຫາຍ ສໍາລັບສິ່ງປຸກສ້າງທີ່ຖືກກະທົບ ແມ່ນແຕກຕ່າງກັນໄປຕາມລະດັບຄວາມຊັດເຈນທີ່ໄດ້ຮັບ ແລະ ທຶນຮອນທີ່ໂຄງການມີ. ບາງຂະບວນການຕີລາຄາມູນຄ່າສິ່ງປຸກສ້າງໄດ້ສັງລວມໄວ້ດັ່ງລຸ່ມນີ້:

i. <u>ວິທີສໍາຫຼວດທາງດ້ານປະລິມານ</u>. ນີ້ເປັນວິທີທີ່ລະອຽດ ແລະ ແນ່ນອນທີ່ສຸດ ສໍາລັບການຕີລາຄາມູນຄ່າສິ່ງປຸກສ້າງ. ວິທີດັ່ງກ່າວນີ້ ໄດ້ມີການຄາດຄະເນປະລິມານຂອງວັດສະດຸກໍ່ສ້າງ ໃນແຕ່ລະອົງປະກອບຂອງຕົວອາຄານຢ່າງລະອຽດ ແລ້ວຄູນກັບອັດຕາຕໍ່ຫົວໜ່ວຍຂອງປະລິມານຂອງວັດສະດຸນັ້ນ. ອັດຕາຫົວໜ່ວຍໄດ້ຖືກກໍານົດໄວ້ເບື້ອງຕົ້ນແລ້ວ ຊຶ່ງລວມເອົາທັງຄ່າແຮງງານພ້ອມ. ໃນບາງປະເທດ, ອັດຕາດັ່ງກ່າວ ແມ່ນກະຊວງ ທີ່ກ່ຽວຂ້ອງເປັນຜູ້ກໍານົດອອກ ແລະ ມີການປັບປຸງເປັນປະຈໍາໃນແຕ່ລະປີ. ຕາຕະລາງຂອງອັດຕານີ້ ແມ່ນນໍາໃຊ້ເພື່ອເປັນພື້ນຖານໃນການປະມູນ ສັນຍາກໍ່ສ້າງສາທາລະນຸປະໂພກ. ຂັ້ນຕອນດັ່ງກ່າວມີຄວາມແນ່ນອນ, ອິດເມື່ອຍ ແລະ ໃຊ້ເວລາຫຼາຍ. ວິທີການດັ່ງກ່າວຮຽກຮ້ອງໃຫ້ມີຜູ້ຊໍານິຊໍານານດ້ານການສໍາຫລວດ ແລະ ມີຄວາມຮູ້ດີ ກ່ຽວກັບ ການກໍ່ສ້າງອາຄານ ປະກອບເຂົ້າຢູ່ໃນທີມງານສໍາຫຼວດ. ຂັ້ນຕອນແບບນີ້ ແມ່ນແທດເໝາະແຕ່ໃນກໍລະນີທີ່ມີ ຜູ້ຊໍານານງານຢູ່ໃນທີມງານສໍາຫຼວດເທົ່ານັ້ນ.

ii. <u>ການຄາດຄະເນວັດສະດຸຂອງອາຄານ</u>. ວິທີນີ້ຄ້າຍຄືກັນກັບວິທີການສໍາຫຼວດທາງດ້ານປະລິມານ ແຕ່ບໍ່ມີຕາຕະລາງອັດຕາ. ປະລິມານວັດສະດຸກໍ່ສ້າງຖືກຄາດຄະເນອອກມາ ສໍາລັບແຕ່ລະອົງປະກອບຂອງອາຄານແລ້ວຄູນກັບອັດຕາຕາມລາຄາໃນທ້ອງຕະຫຼາດ ສໍາລັບແຕ່ລະປະເພດວັດສະດຸກໍ່ສ້າງນັ້ນ ເພື່ອໄດ້ຄ່າລວມຂອງວັດສະດຸທັງໝົດ. ລາຄາຂອງວັດສະດຸກໍ່ສ້າງ ແມ່ນໄດ້ມາຈາກຕະຫຼາດກ່ອນລົງມືສໍາຫຼວດ. ຄ່າແຮງງານ, ອາດປະມານ 25% ຫາ 30% ຂອງມູນຄ່າວັດສະດຸກໍ່ສ້າງກໍໄດ້ລວມເຂົ້ານໍາ ເພື່ອເປັນມູນ ຄ່າລວມຂອງອາຄານ. ວິທີນີ້ກໍອິດເມື່ອຍ ແລະ ໃຊ້ເວລາຫຼາຍເຊັ່ນດຽວກັນ ແລະ ທັງຕ້ອງມີຜູ້ສໍາຫຼວດ ທີ່ມີປະສົບການຫຼາຍທາງດ້ານປະລິມານຢູ່ໃນທີມງານ. ວິທີດັ່ງກ່າວໄດ້ຖືກນໍາມາໃຊ້ ຢ່າງແຜ່ຫຼາຍໃນຫຼາຍປະເທດເພື່ອກໍານົດມູນຄ່າຂອງສິ່ງປຸກ ສ້າງທີ່ຖືກກະທົບຈາກໂຄງການພັດທະນາຕ່າງໆ.

*iii.* <u>ປະເພດສິ່ງປຸກສ້າງ.</u> ວິທີນີ້ ຮຽກຮ້ອງໃຫ້ມີການກຳນົດປະເພດທີ່ເປັນມາດຕະຖານສຳລັບສິ່ງປຸກສ້າງ ໂດຍອີງໃສ່ຊະນິດ ແລະ ການນຳໃຊ້ວັດສະດຸກໍ່ສ້າງ ແລ້ວຈຶ່ງກຳນົດມູນຄ່າຕາມແຕ່ລະຫົວໜ່ວຍຂອງແຕ່ລະປະເພດ ຊຶ່ງລວມເອົາທັງວັດສະດຸ ແລະ ຄ່າແຮງງານພ້ອມ. ປະເພດດັ່ງກ່າວນີ້ ອາດຈະລວມເອົາທັງການຈັດເປັນປະເພດສິ່ງປຸກສ້າງຖາວອນ, ເຄິ່ງຖາວອນ ແລະ ຊົ່ວຄາວ. ຈາກນັ້ນ ສິ່ງກໍ່ສ້າງທີ່ຖືກກະທົບ ຈຶ່ງແບ່ງອອກເປັນປະເພດດັ່ງກ່າວ ແລະ ເອົາເນື້ອທີ່ຂອງສິ່ງປຸກສ້າງມາຄູນກັບຄ່າຂອງແຕ່ລະຫົວໜ່ວຍທີ່ໄດ້ກຳນົດມາກ່ອນ. ຄວາມແນ່ນອນຂອງວິທີນີ້ຂຶ້ນກັບຈຳນວນຂອງການຈັດປະເພດ. ຖ້າຈຳນວນຂອງປະເພດມີໜ້ອຍ ຄວາມແນ່ນອນໃນການຄິດໄລ່ມູນຄ່າ ກໍຈະມີບໍ່ສູງປານໃດ. ຖ້າຈຳນວນຂອງປະເພດມີຫຼາຍ ກໍຈະເຮັດໃຫ້ມີຄວາມແນ່ນອນຫລາຍຂຶ້ນ ໃນການກຳນົດລາຄາຂອງສິ່ງປຸກສ້າງທີ່ຖືກກະທົບ. ຈຸດອ່ອນຕົ້ນຕໍຂອງວິທີການດັ່ງກ່າວນີ້ ແມ່ນມັນຕາຍຕົວ ແລະ ເຮັດໃຫ້ສິ່ງປຸກສ້າງຈຳນວນຫຼວງຫຼາຍຖືກແບ່ງອອກເປັນຫຼາຍປະເພດສະເພາະ ຊຶ່ງອາດຈະເໝາະສົມ ຫລື ບໍ່ເໝາະສົມ. ໃນກໍລະນີທີ່ການກໍ່ສ້າງໄດ້ນຳໃຊ້ວັດສະດຸຫຼາຍຊະນິດ ຊຶ່ງການຈັດເປັນພຽງ 3 ຫຼື 4 ປະເພດ ອາດບໍ່ແທດເໝາະ. ເຖິງແມ່ນວ່າມັນຈະມີຂໍ້ຈຳກັດຢູ່ກໍຈິງ, ວິທີການດັ່ງກ່າວນີ້ ໄດ້ຖືກນຳໃຊ້ໃນຫຼາຍປະເທດລວມທັງໃນ ສປປລາວ ເພື່ອໃຫ້ມັນງ່າຍຂຶ້ນ. ຕົວຢ່າງ ກ່ຽວກັບປະເພດ ແລະ ມູນຄ່າ ໄດ້ສະເໜີໃນ <u>*ເອກກະສານຄັດຕິດ 16.*</u>

iv. <u>ວິທີທີ່ອີງໃສ່ເນື້ອທີ່</u>. ໂດຍຄຳນຶງເຖິງຂໍ້ຈຳກັດຕ່າງໆໃນຂະບວນການປະເມີນລາຄາ ທີ່ອີງໃສ່ການຈັດປະເພດສິ່ງປຸກສ້າງ, ວິທີທີ່ລະອຽດກວ່າ ແມ່ນການເອົາໃຈໃສ່ຕໍ່ການນຳໃຊ້ວັດສະດຸກໍ່ສ້າງຫຼາຍຢ່າງໃນການກໍ່ສ້າງພື້ນເຮືອນ, ຝາ ແລະ ຫຼັງຄາ. ວິທີການນີ້ ແມ່ນວິທີການກະທັດຮັດຂອງ 2 ວິທີທີ່ກ່າວມາຂ້າງເທິງນີ້. ວິທີດັ່ງກ່າວ ລວມເອົາທັງການກຳນົດປະເພດຕ່າງໆໃນອົງປະກອບຂອງອາຄານ ອີງຕາມຊະນິດຂອງວັດສະດຸກໍ່ສ້າງທີ່ໄດ້ນຳໃຊ້ ແລະ ມູນຄ່າການກໍ່ສ້າງທີ່ໄດ້ກຳນົດໄວ້ກ່ອນ ລວມທັງຄ່າແຮງງານສຳລັບແຕ່ລະຫົວໜ່ວຍຂອງແຕ່ລະປະເພດ. ໃນພາກສະໜາມ ໃນເວລາກະກຽມຂຶ້ນບັນຊີຕ້ອງໄດ້ວັດແທກເນື້ອທີ່ຂອງແຕ່ລະອົງປະກອບຂອງອາຄານ ແລະ ບັນທຶກໄວ້. ຈາກນັ້ນ ກໍເອົາເນື້ອທີ່ດັ່ງກ່າວມາຄູນກັບອັດຕາທີ່ໄດ້ກຳນົດໄວ້ກ່ອນ ເພື່ອໄດ້ລາຄາລວມທັງໝົດຂອງອົງປະກອບຂອງອາຄານ. ວິທີດັ່ງກ່າວນີ້ ກຳລັງນຳໃຊ້ຢູ່ໃນປະເທດກຳປູເຈຍ ແລະ ຮັບປະກັນຄວາມຊັດເຈນກວ່າ ຖ້າທຽບໃສ່ວິທີການນຳໃຊ້ການແບ່ງປະເພດສິ່ງປຸກສ້າງ.

<u>ຂໍ້ແນະນຳ</u>

ເຖິງຈະມີຂໍ້ຈຳກັດ ແລະ ຂໍ້ຫຍຸ້ງຍາກທາງດ້ານການຕະຫຼາດ, ທຶນຮອນ ແລະ ຄວາມຊຳນິຊຳນານງານຂອງບຸກຄະລາກອນໃນສຳນັກງານອົງການຕ່າງໆກໍຕາມ, ແຕ່ຍັງເຫັນວ່າການນຳໃຊ້ວິທີທີ່ກຳນົດປະເພດຂອງສິ່ງປຸກສ້າງ ໃນປັດຈຸບັນ ມີຄວາມເໝາະສົມທີ່ສຸດຢູ່ໃນ ສປປລາວ. ຢ່າງໃດກໍຕາມ, ວິທີການທີ່ຈັດແບ່ງສິ່ງປຸກສ້າງອອກເປັນປະເພດຕາມທີ່ກຳນົດໄວ້ກ່ອນຄວນໄດ້ຮັບການປັບປຸງໃຫ້ລະອຽດຕື່ມ ໂດຍກຳນົດປະເພດ/ຊະນິດຂອງເຮືອນທີ່ມີຈຳນວນຫຼາຍ ເພື່ອຮັບປະກັນວ່າ ປະເພດທີ່ໄດ້ຈັດແບ່ງນັ້ນ ເປັນຕົວແທນສິ່ງປຸກສ້າງຕ່າງໆໃນໂຄງການ.

ການພິຈາລະນາຕົ້ນຕໍໃນການປະເມີນກ່ຽວກັບການທົດແທນຄ່າເສຍຫາຍສຳລັບສິ່ງປຸກສ້າງທີ່ຄວນເອົາໃຈໃສ່ມີຄື:

(i) ນຳໃຊ້ອັດຕາຕະຫຼາດປັດຈຸບັນ ແລະ ທີ່ຖືກປັບປຸງແລ້ວ ເພື່ອປະເມີນລາຄາວັດສະດຸກໍ່ສ້າງ ແລະ ແຮງງານ;

(ii) ລາຄາທີ່ປະເມີນອອກມາບໍ່ຕ້ອງລົບຄ່າລຸ້ຍຫ້ຽນອອກ;

(iii) ບໍ່ໃຫ້ຫັກຄ່າຂອງວັດສະດຸກໍ່ສ້າງທີ່ຍັງສາມາດໃຊ້ການໄດ້.

### 8.5.3. ¡ານêöດÁêນຄÈາÀສຍ¹າຍສ¿ລັບຜöນລະ¯ø¡, ຕົ້ນÄມÉ Áລະ²ດຕÈາງÅ

ການທົດແທນຄ່າເສຍຫາຍສຳລັບຜົນລະປູກ, ຕົ້ນໄມ້ ແລະ ພືດຕ່າງໆໂດຍທົ່ວໄປແລ້ວແມ່ນອີງໃສ່ອາຍຸ ແລະ ຜະລິດຕະພາບຂອງຕົ້ນໄມ້. ໃນບາງປະເທດ, ອັດຕາລາຄາສຳລັບຕົ້ນໄມ້ແຕ່ລະປະເພດ ແມ່ນກົມປູກຝັງ ຫຼື ກະຊວງກະສິກຳເປັນຜູ້ກຳນົດອອກ. ແຕ່ໃນບ່ອນທີ່ບໍ່ມີອັດຕາລາຄາແບບນີ້, ຄະນະຮັບຜິດຊອບໂຄງ ການຕ້ອງໄດ້ຄົ້ນຄວ້າກຳນົດອັດຕາ ເພື່ອທົດແທນຄ່າຕົ້ນໄມ້ກ່ອນເລີ້ມລົງມືສຳຫຼວດໃນສະໜາມ. ອັດຕາດັ່ງກ່າວຕ້ອງໄດ້ນຳເອົາໄປປຶກສາຫາລືກັບອົງການປົກຄອງທ້ອງຖິ່ນ ແລະ ຕົວແທນຂອງປະຊາຊົນທີ່ຖືກກະທົບແລ້ວຈຶ່ງຮັບເອົາ.

- *<u>ການທົດແທນຄ່າເສຍຫາຍສຳລັບຜົນລະປູກ</u>*

ການທົດແທນຄ່າເສຍຫາຍສຳລັບຜົນລະປູກ ຄວນອີງໃສ່ລາຄາກັບສວນ ແລະ ການກຳນົດລາຄາໄດ້ຖືກຮັບຮອງຈາກທາງການໄດ້ວາງໄວ້ ເຊັ່ນ: ກົມປູກຝັງ. ລາຄາກັບສວນ ສາມາດຊອກຫາໄດ້ນຳຕະຫຼາດໃກ້ຄຽງ.

- *<u>ການທົດແທນຄ່າເສຍຫາຍສຳລັບໄມ້ຢືນຕົ້ນ</u>*

ການປະເມີນການທົດແທນຄ່າເສຍຫາຍສຳລັບໄມ້ຢືນຕົ້ນຕ້ອງອີງໃສ່ອາຍຸ ແລະ ຈຳນວນປີທີ່ຕົ້ນໄມ້ນັ້ນຈະໃຫ້ໝາກຕໍ່ໄປ. ຖ້າກໍລະນີຕົ້ນໄມ້ຍັງອ່ອນບໍ່ທັນໃຫ້ໝາກ, ແມ່ນຕ້ອງໄດ້ຈ່າຍເປັນເງິນຈຳນວນແນ່ນອນເພື່ອບົວລະບັດ ແລະ ປູກຕົ້ນໄມ້ຄືນ. ແຕ່ໃນກໍລະນີຕົ້ນໄມ້ໄດ້ເລີ້ມໃຫ້ໝາກແລ້ວ ຕ້ອງໄດ້ມີການຄິດໄລ່ຜົນຜະລິດຕໍ່ປີດ້ວຍການສອບຖາມນຳທ້ອງຖິ່ນ ແລະ ການທົດແທນຕ້ອງໄດ້ຈ່າຍເທົ່າກັນກັບມູນຄ່າ ຂອງຜົນຜະລິດໃນໄລຍະ 3 ປີ ໃຫ້ແກ່ຜູ້ທີ່ຖືກກະທົບ.

ການຈ່າຍການທົດແທນຄ່າເສຍຫາຍທັງໝົດສຳລັບຜົນລະປູກທີ່ຖືກກະທົບ ຕ້ອງອີງໃສ່ລາຍໄດ້ຈາກຜົນຜະລິດໂດຍຄຳນຶງເຖິງຄ່າຜະລິດ ແລະ ຄ່າວັດຖຸຕ່າງໆ.

### 8.5.4. ¡ານêöດÁêນຄÈາÀສຍ¹າຍສ¿ລັບຊັບສòນຄöງê†ອˆນÅ

ໃນພາກປະຕິບັດຕົວຈິງ, ຊັບສິນບັດຄົງທີ່ສ່ວນຫຼາຍ (ເຊັ່ນ ສາຍໄຟຟ້າ ແລະ ທໍ່ຕໍ່ນ້ຳ, ນ້ຳສ້າງ, ວິດຊຶມ ແລະ ອື່ນໆ) ຖືວ່າເປັນສ່ວນໜຶ່ງຂອງສິ່ງປຸກສ້າງ. ສິ່ງດັ່ງກ່າວຕ້ອງໄດ້ຂຶ້ນບັນຊີຢ່າງລະອຽດ ແລະ ຄິດໄລ່ມູນຄ່າ ໂດຍອີງໃສ່ລາຄາໃນທ້ອງຕະຫຼາດໃນເວລານັ້ນເພື່ອໃຫ້ຄ່າທົດແທນ.

## 8.6. ເລື້ອງລະອຽດອ່ອນຂອງຄວາມສະເໝີພາບຍິງຊາຍ: ສິດທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຄວາມເໝາະສົມ

ມາດຖານຄວາມເໝາະສົມ ບໍ່ຄວນຈຳກັດການໃຫ້ກຳມະສິດຕໍ່ທີ່ດິນ ແລະ ຊັບສິນ ຕໍ່ຜູ້ທີ່ມີຊື່ໃນບັນຊີທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ ເພາະວ່າແມ່ຍິງສ່ວນອາດຈະຢູ່ນອກບັນຊີ, ເຂົາເຈົ້າອາດບໍ່ມີກຳມະສິດຕໍ່ທີ່ດິນ ແລະ ຊັບສິນ ເຖິງແມ່ນເຂົາເຈົ້າຈະເປັນຜູ້ທີ່ນຳໃຊ້ຊັບພະຍາກອນຕົ້ນຕໍນັ້ນກໍດີ . ບັນຫາ, ຄຳຖາມ ແລະ ຍຸດທະສາດສຳຄັນ ເພື່ອລວມເອົາເລື້ອງສະເໝີພາບຍິງຊາຍ ເຂົ້າໃນການໃຫ້ສິດທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຄວາມເໝາະສົມ ແມ່ນມີໃນ *<u>ເອກກະສານຄັດຕິດ 19.</u>*

# ໝວດທີ 9. ການຟື້ນຟູເສດຖະກິດ

## 9.1. ຄຳນຳ

ໃນເມື່ອການຈັດຫາວັດຖຸ ແລະ ການທົດແທນຄ່າເສຍຫາຍເປັນສິ່ງທ້າທາຍ ແລະ ສ້າງຄວາມສົນໃຈ, ການທົດສອບທີ່ສຳຄັນ ກ່ຽວກັບຜົນສຳເລັດຂອງການຍົກຍ້າຍຈັດສັນປະຊາຊົນຍັງແມ່ນບັນຫາ ກ່ຽວກັບການປັບປຸງລາຍໄດ້ຂອງຜູ້ທີ່ຖືກກະທົບ. ຖ້າບໍ່ໃຫ້ການຊ່ວຍເຫຼືອທີ່ດີ ຊຶ່ງຈະຮັບປະກັນການຟື້ນຟູລາຍຮັບ ແລະ ຊີວິດການເປັນຢູ່ຂອງຜູ້ທີ່ຖືກກະທົບຈາກໂຄງການແລ້ວ, ກໍບໍ່ສາມາດເວົ້າໄດ້ວ່າຈຸດປະສົງຂອງໂຄງການ ແລະ ນະໂຍບາຍທາງສັງຄົມນັ້ນໄດ້ບັນລຸຜົນ. ເຖິງບັນຫານີ້ຈະມີຄວາມສຳຄັນກໍຕາມ, ແຕ່ມັນກໍຍັງບໍ່ທັນມີຂໍ້ແນະນຳຫຼາຍ ເພື່ອເຮັດແນວໃດ ຈຶ່ງຈະປະສົບຜົນສຳເລັດ; ອັນໃດໄດ້ຜົນ, ອັນໃດບໍ່ໄດ້ຜົນ ແລະ ຍ້ອນຫຍັງ? ໝວດນີ້ໄດ້ພະຍາຍາມ ໃຫ້ຄຳຕອບຕໍ່ບາງຄຳຖາມທີ່ຖາມຂຶ້ນ ຊຶ່ງອີງການຮັບຜິດຊອບໂຄງການໄດ້ປະສົບພົບພໍ້ ແລະ ໃຫ້ຂໍ້ແນະນຳບາງຢ່າງໃນການວາງແຜນ ແລະ ການຊ່ວຍເຫຼືອຟື້ນຟູຊີວິດການເປັນຢູ່ ສຳລັບໂຄງການພັດທະນາຕ່າງໆ.

3 ບັນຫາຕົ້ນຕໍທີ່ມີຄວາມສຳຄັນ ແລະ ຕັດສິນຄວາມສຳເລັດ ໃນການຟື້ນຟູລາຍໄດ້ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ທີ່ຖືກກະທົບຈາກໂຄງການພັດທະນາ:

**<u>ການວາງແຜນ:</u>** ການກະກຽມແຜນສຳລັບຟື້ນຟູລາຍໄດ້ຂອງປະຊາຊົນ ຕ້ອງມີຂໍ້ມູນພື້ນຖານທີ່ຊັດເຈນ ກ່ຽວກັບ ຄວາມຊຳນິຊຳນານງານຂອງປະຊາຊົນ, ລະດັບການສຶກສາ, ພື້ນຖານເສດຖະກິດ, ຄວາມຈຳເປັນ ແລະ ບຸລິມະສິດຕ່າງໆ. ພ້ອມນັ້ນກໍຕ້ອງມີຂໍ້ມູນຂ່າວສານ ກ່ຽວກັບທ່າແຮງຂອງຕະຫຼາດ ແລະ ການປະເມີນຄວາມເປັນໄປໄດ້ຂອງແຜນການທີ່ສະເໜີມາ (ລວມທັງຄວາມຕ້ອງການຂອງຕະຫຼາດ ແລະ ຄວາມສາມາດດ້ານການຜະລິດ) ແລະ ມີການສຶກສາວິໄຈກິດຈະການທີ່ຈະໄດ້ປະຕິບັດ. ແຜນການ ແລະ ຍຸດທະສາດໃນການຟື້ນຟູລາຍຮັບ ຕ້ອງໄດ້ລວມເອົາການປະເມີນຄວາມຈຳເປັນຂອງປະຊາຊົນ ແລະ ບຸລິມະສິດຕ່າງໆໃນໄລຍະການວາງແຜນ.

**<u>ການຈັດຕັ້ງປະຕິບັດ:</u>** ແຜນຟື້ນຟູລາຍຮັບໃນໄລຍະການຈັດຕັ້ງປະຕິບັດໂຄງການ ຕ້ອງໄດ້ສຸມໃສ່ການຊອກຮູ້ ແລະ ແກ້ໄຂທັດສະນະ ແລະ ຂໍ້ຈຳກັດຕ່າງໆຂອງປະຊາຊົນທີ່ຖືກກະທົບ (ຊຶ່ງບໍ່ພຽງແຕ່ຂໍ້ຈຳກັດທາງດ້ານການເງິນ ຫຼື ທຶນຮອນເທົ່ານັ້ນ), ໂດຍຮັບປະກັນໃຫ້ມີການນຳໃຊ້ວິທີການ ທີ່ພົວພັນກັບຫຼາຍຂະແໜງການທີ່ຈຳເປັນ ເພື່ອປະສານງານກັບແຜນງານຕ່າງໆທີ່ມີຢູ່ ແລະ ສ້າງຄວາມສາມາດຂອງຊຸມຊົນທີ່ຖືກກະທົບ ເພື່ອຮັບຜິດຊອບຕໍ່ຊີວິດການເປັນຢູ່ຂອງຕົນໃນອະນາຄົດແທນທີ່ຈະເປັນການສົ່ງເສີມໃຫ້ເຂົາເຈົ້າຂຶ້ນກັບຜູ້ອື່ນ.

**<u>ການປະເມີນຜົນ:</u>** ນີ້ແມ່ນໝາກຜົນທີ່ເປັນຂໍກຸນແຈຂອງຄວາມສຳເລັດໃນການຈັດຕັ້ງປະຕິບັດແຜນຟື້ນຟູລາຍໄດ້. ເພື່ອຮັບປະກັນຕໍ່ບັນຫານີ້ຕັ້ງແຕ່ຫົວທີ, ຜູ້ທີ່ຖືກກະທົບ ຈຳເປັນຕ້ອງເຂົ້າໃຈເຖິງມາດຖານຂອງຄວາມສຳເລັດ, ຄວາມຈຳເປັນທີ່ຕ້ອງກ້າວຂຶ້ນເປັນເຈົ້າຕົນເອງ ແລະ ຄວາມສຳຄັນຂອງຄວາມຍືນຍົງ. ຖ້າຜູ້ເຂົ້າຮ່ວມທັງໝົດຫາກບໍ່ມີຈຸດໝາຍປາຍທາງ ຫຼື ເປົ້າໝາຍອັນດຽວກັນ, ພວກເຂົາເຈົ້າກໍຈະບໍ່ສາມາດບັນລຸຜົນຢ່າງ ໜ້າພໍໃຈໄດ້.

### *ວາງແຜນ/ຈັດຕັ້ງປະຕິບັດເວລາໃດ?*

ກ່ຽວກັບ ບັນຫາທີ່ວ່າເວລາໃດ ອົງການຮັບຜິດຊອບໂຄງການຈະວາງແຜນ ແລະ ຈັດຕັ້ງປະຕິບັດມາດຕະການຟື້ນຟູເສດຖະກິດ, ຄົນສ່ວນຫຼາຍເຫັນວ່າວຽກນີ້ດີແທ້ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ກ່ອນຈະເລີ້ມຍົກຍ້າຍຈັດສັນປະຊາຊົນຕົວຈິງ. ເນື່ອງຈາກວ່າການວາງແຜນຟື້ນຟູເສດຖະກິດ ຮຽກຮ້ອງໃຫ້ມີການປຶກສາຫາລືກັບປະຊາຊົນ, ການວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານຟື້ນຟູເສດຖະກິດຈຶ່ງຄວນໄດ້ສຸມໃສ່ ແລະ ດຳເນີນການກ່ອນການເຄື່ອນຍ້າຍປະຊາຊົນ. ສະນັ້ນ ການວາງແຜນຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ຈຶ່ງຕ້ອງໄດ້ເລີ້ມແຕ່ຫົວທີເທົ່າທີ່ເຮັດໄດ້. ອົງການຮັບຜິດຊອບໂຄງການສ່ວນຫຼາຍ ເນັ້ນໃສ່ແຕ່ການຈ່າຍຄ່າທົດແທນ ແລະ ພັດທະນາເຂດທີ່ຍົກຍ້າຍໄປຢູ່ໃຫ້ສຳເລັດແລ້ວ ເພື່ອເລັ່ງການຍົກຍ້າຍປະຊາຊົນທີ່ຖືກກະທົບໃຫ້ແລ້ວໄວ ເພື່ອຈະໄດ້ມອບເຂດໂຄງການໃຫ້ດຳເນີນວຽກກໍ່ສ້າງທັນເວລາ. ເຖິງຢ່າງໃດກໍຕາມ, ຈາກປະສົບການໄດ້ຊີ້ໃຫ້ເຫັນວ່າ ເມື່ອປະຊາຊົນໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຍົກຍ້າຍໄປແລ້ວ, ມັນກໍຍາກທີ່ຈະໃຫ້ເຂົາເຈົ້າຢູ່ໄດ້ ແລະ ດຳເນີນການປຶກສາຫາລືແບບເລິກເຊິ່ງໄດ້ກັບພວກເຂົາ ກ່ຽວກັບການຟື້ນຟູເສດຖະກິດ, ໂດຍສະເພາະໃນບັນດາໂຄງການທີ່ມີການກໍ່ສ້າງຍາວເປັນແລວ ຊຶ່ງຜູ້ທີ່ຖືກກະທົບໂດຍລວມ ແລະ ໂດຍສະເພາະຜູ້ທີ່ມີສິດທິທີ່ຈະໄດ້ຮັບການຟື້ນຟູເສດຖະກິດແມ່ນຢູ່ກະແຈກກະຈາຍຕາມແລວທາງຂອງເຂດໂຄງການ.
ໃນກໍລະນີທີ່ການຍົກຍ້າຍຈັດສັນຜູ້ທີ່ຖືກກະທົບໄປເປັນກຸ່ມຢູ່ໃນຈຸດດຽວກັນ ທີ່ໂຄງການໄດ້ຈັດສັນ ແລະ ພັດທະນາໃຫ້ນັ້ນການຈັດຕັ້ງປະຕິບັດມາດຕະການຟື້ນຟູເສດຖະກິດກໍສາມາດດຳເນີນການໄດ້ ພາຍຫຼັງທີ່ໄດ້ຍົກຍ້າຍໄປແລ້ວ.

## 9.2 ຜູ້ທີ່ໄດ້ຮັບສິດທິຕໍ່ການຟື້ນຟູເສດຖະກິດ

ການໃຫ້ສິດທິທີ່ຈະໄດ້ຮັບການຊ່ວຍເຫຼືອເພື່ອຟື້ນຟູເສດຖະກິດ ສຳລັບຜູ້ທີ່ຖືກກະທົບຈາກໂຄງການ ແມ່ນການຮຽກຮ້ອງໃນເມື່ອການທົດແທນຄ່າເສຍຫາຍສຳລັບຊັບສິນທີ່ສູນເສຍໄປ ແລະ ການອຸດໜູນອື່ນໆນັ້ນ ຍັງບໍ່ທັນຕອບສະໜອງພຽງພໍໄດ້ກັບການຟື້ນຟູລາຍໄດ້ ແລະ ຊີວິດການເປັນຢູ່ຂອງພວກເຂົາເຈົ້າ. ດ້ວຍເຫດນີ້, ຄອບຄົວທີ່ຖືກກະທົບ "ຫຼາຍ" ທັງໝົດ ຍ້ອນການສູນເສຍພື້ນຖານການຜະລິດຈຳນວນ 20% ຫຼື ຫຼາຍກວ່າ (ເຊັ່ນ: ທີ່ດິນກະສິກຳ, ສະຖານທີ່ການຄ້າ), ທຸລະກິດ ແລະ ລາຍໄດ້ນັ້ນ ແມ່ນຕ້ອງໄດ້ຮັບສິດໃນການຊ່ວຍເຫຼືອເພື່ອຟື້ນຟູຊີວິດຄືນໃໝ່. ໂດຍທົ່ວໄປແລ້ວ, ການສູນເສຍທີ່ດິນ ແລະ/ຫຼື ສິ່ງປຸກສ້າງຕ່າງໆ ຈະແມ່ນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ແຕ່ບໍ່ມີຜົນກະທົບຕໍ່ວຽກເຮັດງານທຳ ຫຼື ແຫຼ່ງລາຍໄດ້ຂອງຄອບຄົວນັ້ນ, ພວກດັ່ງກ່າວນີ້ ຈະບໍ່ມີສິດໄດ້ຮັບການຊ່ວຍເຫຼືອສຳລັບການຟື້ນຟູດັ່ງກ່າວ. ຢ່າງໃດກໍຕາມ, ຖ້າມີຜົນກະທົບໃດໜຶ່ງເກີດຂຶ້ນກັບທຸລະກິດ ເຖິງແມ່ນວ່າກິດຈະການດັ່ງກ່າວອາດດຳເນີນໃນເຂດທີ່ຢູ່ອາໄສ ຊຶ່ງເປັນເຫດໃຫ້ມີການຍົກຍ້າຍ ຫຼື ການສູນເສຍລາຍໄດ້ຂອງຄອບຄົວນັ້ນ ແມ່ນຈະໄດ້ຮັບສິດໃນການຊ່ວຍເຫຼືອຟື້ນຟູເສດຖະກິດ.

## 9.3 ບັນຫາ ກ່ຽວກັບ ການວາງແຜນ ແລະ ຈັດຕັ້ງປະຕິບັດການຟື້ນຟູເສດຖະກິດ

*ຈຸດສຸມຕໍ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້*

ການຍົກຍ້າຍຈັດສັນ ເຮັດໃຫ້ເກີດມີຄວາມກະທົບກະເທືອນຕໍ່ຊີວິດ, ສະພາບແນວຄິດ ແລະ ຄວາມກັງວົນຂອງປະຊາຊົນເປັນຢ່າງຍິ່ງ. ການຍົກຍ້າຍຈັດສັນຄວບຄູ່ກັບການສູນເສຍແຫຼ່ງລາຍໄດ້ ເປັນຜົນກະທົບທີ່ຮ້າຍແຮງກວ່າໝູ່ຈາກໂຄງການຕໍ່ຄອບຄົວ. ກໍລະນີທີ່ຮ້າຍແຮງກວ່າໝູ່ ແມ່ນເກີດຂຶ້ນກັບຄອບຄົວທີ່ຖືກກະທົບທີ່ເປັນກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ (ເຊັ່ນ: ກຸ່ມຜູ້ທຸກຍາກ, ຜູ້ທີ່ອາໄສຢູ່ດິນລັດ, ແລະ ອື່ນໆ). ອົງການຮັບຜິດຊອບໂຄງການນ້ອງອອກແຮງພິເສດ ເພື່ອກຳນົດກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ໃນໄລຍະເຮັດການສຳຫຼວດ ແລະ ເກັບ

ກຳຂໍ້ມູນດ້ານເສດຖະກິດ-ສັງຄົມ ແລະ ການຊ່ວຍເຫຼືອກຸ່ມຄົນດັ່ງກ່າວ ເພື່ອຟື້ນຟູເສດຖະກິດ ກໍຄວນເນັ້ນໜັກໃສ່ກຸ່ມຄົນດັ່ງກ່າວ.

*ຄວາມສະເໝີພາບຍິງຊາຍໃນການຟື້ນຟູການສ້າງລາຍຮັບ*

ຄວາມຕ້ອງການ ແລະ ບັນຫາສະເພາະຂອງແມ່ຍິງ ມັກຈະເກີດມີຄວາມແຕກຕ່າງກັບຜູ້ຊາຍ ໂດຍສະເພາະ ກ່ຽວກັບບັນຫາການສະໜັບສະໜູນດ້ານສັງຄົມ, ການບໍລິການ, ການມີວຽກເຮັດງານທຳ ແລະ ວິທີທຳມາຫາກິນເພື່ອລ້ຽງຊີບ. ຕົວຢ່າງ ແມ່ຍິງທີ່ຖືກຍົກຍ້າຍອາດພົບກັບຫຼາຍບັນຫາກວ່າຜູ້ຊາຍທີ່ຖືກຍົກຍ້າຍ ໃນການຫາຕະຫຼາດເພື່ອຂາຍຜະລິດຕະພັນຕ່າງໆ ຫຼື ຄ້າຂາຍຍ່ອຍ ໃນເມື່ອເຂົາເຈົ້າໄປມາຍາກ ແລະ ບໍ່ຮູ້ໜັງສື. ບັນຫາແລະຍຸດທະສາດຕົ້ນຕໍ ເພື່ອແກ້ໄຂບັນຫາຄວາມສະເໝີພາບຍິງຊາຍໃນການຟື້ນຟູລາຍຮັບມີໃນ*ເອກກະສານຄັດຕິດ 20.*

*ການຟື້ນຟູເສດຖະກິດສຳລັບເງື່ອນໄຂໃນຕົວເມືອງ*

ໃນເຂດທີ່ມີຄົນຢູ່ອາໄສໜາແໜ້ນໃນຕົວເມືອງ, ໂຄງການພັດທະນາຈະສ້າງຜົນກະທົບໃນຫລາຍໆດ້ານຕໍ່ປະຊາຊົນຈຳນວນຫຼວງຫຼາຍ. ໃນຂະນະທີ່ມີຄວາມງ່າຍດາຍໃນການກຳນົດການສູນເສຍຊັບສິນທາງວັດຖຸ, ແຕ່ການສູນເສຍລາຍໄດ້ ແລະ ທຸລະກິດຕ່າງໆ ພັດແມ່ນມີຄວາມຫຍຸ້ງຍາກໃນການຈະປະເມີນໄດ້ ແລະ ການກຳນົດມາດຕະການຟື້ນຟູເສດຖະກິດໃຫ້ເໝາະສົມນັ້ນ ກໍເປັນບັນຫາທີ່ຫຍຸ້ງຍາກທີ່ສຸດ. ການປະເມີນຂະໜາດຂອງການຊ່ວຍເຫຼືອເພື່ອຟື້ນຟູເສດຖະກິດ ແລະ ການວາງມາດຕະການແກ້ໄຂທີ່ແທດເໝາະ ເພື່ອໃຫ້ສອດຄ່ອງກັບຄວາມຈຳເປັນຂອງແຕ່ລະຄອບຄົວ ມີຄວາມສຳຄັນຕໍ່ການປັບປຸງລາຍໄດ້ຂອງຜູ້ທີ່ຖືກກະທົບ. ເຖິງຢ່າງໃດກໍຕາມ, ໃນສະພາບເສດຖະກິດທີ່ກຳລັງຂະຫຍາຍຕົວເຊັ່ນ ສປປລາວ, ການໃຫ້ໂອກາດແກ່ຊຸມຊົນທີ່ຖືກກະທົບ ສາມາດເຂົ້າເຖິງສິນເຊື່ອ, ການເງິນ, ຫຼື ຕະຫຼາດແຮງງານກໍເປັນສິ່ງທີ່ດີແລ້ວ. ຄວາມສູ້ຊົນຂອງປະຊາຊົນ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດໃນຕົວມັນແລ້ວ ເປັນເງື່ອນໄຂໜຶ່ງທີ່ປັບປຸງຄວາມສາມາດໃນການຫາລາຍໄດ້ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ.

*ການຟື້ນຟູເສດຖະກິດໃນຊົນນະບົດ*

ວິທີການທີ່ດີທີ່ສຸດ ສຳລັບການຟື້ນຟູລາຍໄດ້ທີ່ສູນເສຍໄປໃນຕໍ່ໜ້າຂອງຊາວກະສິກອນໃນເຂດໂຄງການແມ່ນການບໍລິການສົ່ງເສີມກະສິກຳ ເພື່ອເພີ້ມຄວາມສາມາດການຜະລິດໃນທີ່ດິນສ່ວນທີ່ຍັງເຫຼືອ ໂດຍແນໃສ່ເຮັດໃຫ້ຜູ້ທີ່ຖືກກະທົບສາມາດປັບປຸງການຜະລິດໃຫ້ດີຂຶ້ນ ຫຼື ຢ່າງໜ້ອຍ ກໍໃຫ້ລາຍໄດ້ຂອງເຂົາເຈົ້າຢູ່ໃນລະດັບກ່ອນມີໂຄງການ ຊຶ່ງຈະໄດ້ມາຈາກການເກັບກ່ຽວໃນປີຕໍ່ໄປ. ໃນກໍລະນີ ຜູ້ທີ່ຖືກກະທົບຫຼາຍ ຍ້ອນການສູນເສຍທີ່ດິນທີ່ເປັນພື້ນຖານການຜະລິດສ່ວນຫຼາຍ ວິທີແກ້ໄຂທີ່ດີ ແມ່ນໃຫ້ການທົດແທນຄ່າເສຍກາຍແບບເອົາດິນປ່ຽນດິນ ໂດຍໃຫ້ມີສະມັດຕະພາບເທົ່າທຽມກັນສົມທົບກັບການໃຫ້ການຊ່ວຍເຫຼືອເພີ້ມ ໃນຮູບຂອງການບໍລິການ ສົ່ງເສີມກະສິກຳ ຊຶ່ງໃນນັ້ນມີເຕັກນິກການປູກແນວພັນປັບປຸງ ທີ່ໃຫ້ຜົນຜະລິດສູງກວ່າ, ການຊ່ວຍເຫຼືອດ້ານອຸບປະ ກອນເພາະປູກ ແລະ ອຸປະກອນອື່ນໆ.

ຖ້າເຂດຍົກຍ້າຍຈັດສັນໃໝ່ບໍ່ອຳນວຍໃຫ້ປະຊາຊົນຜະລິດກະສິກຳໄດ້ ຫຼື ບໍ່ສາມາດຕອບສະໜອງໄດ້ຕາມການຂໍຮ້ອງຂອງຜູ້ທີ່ຖືກກະທົບ, ການຊ່ວຍເຫຼືອໃນຮູບການອື່ນຄວນຖືກສະເໜີຂຶ້ນມາ ຊຶ່ງໃນນັ້ນລວມມີທັງການຝຶກອົບຮົມ (ບວກກັບການອຸດໜູນເພື່ອລ້ຽງຊີບ) ໃຫ້ແກ່ຄອບຄົວຊາວກະສິກອນທີ່ຖືກກະທົບຫຼາຍ ຊຶ່ງອາດຈະແມ່ນວິຊາໃນສາຂາອາຊີບເກົ່າຂອງເຂົາເຈົ້າ ເພື່ອເຮັດໃຫ້ເຂົາເຈົ້າມີຄວາມຊຳນານງານຫລາຍຂຶ້ນກວ່າເກົ່າ ແລະ ໃຫ້ສາ

ມາດປັບປຸງຜະລິດຕະພາບໃຫ້ສູງຂຶ້ນ ຫຼື ຝຶກອົບຮົມເຂົາເຈົ້າໃຫ້ມີອາຊີບໃໝ່ ທີ່ອາດຈະສ້າງໂອກາດໃຫ້ເຂົາເຈົ້າສາມາດເພີ້ມລາຍໄດ້ໃຫ້ຄອບຄົວ.

*<u>ຮູບແບບຂອງການຊ່ວຍເຫຼືອຟື້ນຟູເສດຖະກິດ</u>*

ຈຸດປະສົງຂອງການຟື້ນຟູເສດຖະກິດ ແມ່ນເພື່ອສະໜອງການຊ່ວຍເຫຼືອໃຫ້ຜູ້ທີ່ຖືກກະທົບໃນຮູບແບບທີ່ສາມາດໃຫ້ຄວາມຊໍານິຊໍານານງານ ແລະ ໂອກາດ ເພື່ອສືບຕໍ່ຍົກລາຍໄດ້ ແລະ ຊີວິດການເປັນຂອງຄອບຄົວ ໃຫ້ໝັ້ນຄົງ. ການໃຫ້ເງິນສົດແກ່ຜູ້ທີ່ຖືກກະທົບມັກຈະບໍ່ສາມາດບັນລຸຈຸດປະສົງດັ່ງກ່າວໄດ້ ເພາະສະນັ້ນ <u>ການເບີກຈ່າຍເງິນສົດໂດຍກົງໃຫ້ຜູ້ທີ່ຖືກກະທົບ ຈຶ່ງບໍ່ແມ່ນວິທີການຊ່ວຍທີ່ຍອມຮັບໄດ</u>. ໃນພາກປະຕິບັດຕົວຈິງ, ການເບີກຈ່າຍເງິນສົດ ໃຫ້ບາງຄອບຄົວທີ່ຖືກກະທົບອາດຍອມຮັບໄດ້ໃນກໍລະນີພິເສດ. ຕົວຢ່າງ, ຊາວກະສິກອນທີ່ຖືກກະທົບມີຄວາມຕ້ອງການຊື້ເຄື່ອງມືອຸປະກອນການຜະລິດ, ຖ້າເຂົາເຈົ້າໄດ້ຮັບໃຊ້ເງິນສົດຈາກ ການຊ່ວຍເຫຼືອດັ່ງກ່າວກໍເຫັນວ່າຈະດີຫລາຍ. ແຕ່ວ່າກໍລະນີແບບນີ້ ກໍຕ້ອງມີການອອກຂໍ້ກໍານົດຄັກແນ່ ເພື່ອຮັບ ປະກັນວ່າເງິນສົດນັ້ນ ໄດ້ນໍາເອົາໄປໃຊ້ຖືກກັບເປົ້າໝາຍດັ່ງກ່າວຢ່າງແທ້ຈິງ. ເງື່ອນໄຂພິເສດສໍາລັບການພິຈາລະນາການອະນຸມັດການເບີກຈ່າຍເປັນເງິນສົດ ມີຄື:

1.) ການປະກອບເອກກະສານຕ່າງໆ ກ່ຽວກັບ ຂະບວນການປຶກສາຫາລື ໄດ້ເຮັດສໍາເລັດແລ້ວ;
2.) ຄວາມມັກຄວາມພໍໃຈ ແລະ ບຸລິມະສິດຕ່າງໆຂອງຜູ້ທີ່ກະທົບໄດ້ບັນທຶກຢ່າງຄົບຖ້ວນ;
3.) ກໍານົດຂັ້ນຕອນທີ່ສາມາດກວດກາໄດ້ ເພື່ອຮັບປະກັນວ່າເງິນສົດທີ່ໄດ້ຮັບມານັ້ນ ໄດ້ນໍາໃຊ້ເພື່ອຊື້ວັດຖຸປັດໄຈດ້ານກະສິກໍາທີ່ໄດ້ກໍານົດໄວ້ຢ່າງຖືກຕ້ອງ. ຂັ້ນຕອນດັ່ງກ່າວອາດລວມມີການບັນທຶກຂໍ້ມູນ ເຊັ່ນ: ໃບຈ່າຍເງິນ, ໃບບິນຊື້ເຄື່ອງ ແລະ ອື່ນໆ.
4.) ມີການແຈ້ງລ່ວງໜ້າໃຫ້ອົງການຮັບຜິດຊອບໂຄງການ, ອົງການຕິດຕາມກວດກາ ແລະ ອຊນສ ກ່ຽວ ກັບ ການເບີກຈ່າຍເງິນສົດດັ່ງກ່າວ ທັງໄດ້ຮັບຄວາມເຫັນດີນໍາ.

*<u>ການເຊື່ອມໂຍງເຂົ້າກັບແຜນງານຂອງລັດຖະບານ</u>*

ເວົ້າລວມການຍົກຍ້າຍຈັດສັນປະຊາຊົນ ແລະ ການໃຫ້ການຊ່ວຍເຫຼືອໃນການຟື້ນຟູຊີວິດການເປັນຢູ່ ແມ່ນໄດ້ຖືວ່າເປັນເຄື່ອງມືໜຶ່ງໃນການພັດທະນາ ແລະ ເຮັດການປ່ຽນແປງ, ເພາະສະນັ້ນຕ້ອງໄດ້ມີການປະສານສົມທົບແໜ້ນກັບແຜນງານພັດທະນາອື່ນໆຂອງປະເທດ, ບໍ່ວ່າຈະແມ່ນລັດຖະບານ ຫຼື ອົງການຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍເປັນຜູ້ລິເລີ່ມ ແລະ ຄຸ້ມຄອງແຜນງານ. ມັນມີຫລາຍແຜນງານ ຊຶ່ງມີຈຸດປະສົງລະດັບຄາດໝາຍ ແລະ ວິທີການທີ່ຄ້າຍຄືກັນ. ຕ້ອງໄດ້ພະຍາຍາມເຊື່ອມໂຍງເອົາວຽກງານຟື້ນຟູເສດຖະກິດໃນໂຄງການເຂົ້າກັບແຜນງານຕ່າງໆທີ່ກໍາລັງດໍາເນີນການຢູ່ ລວມທັງແຜນງານຫຼຸດຜ່ອນຄວາມທຸກຍາກ.ມັນເປັນການດີທີ່ນໍາໃຊ້ແຜນງານຂອງລັດຖະບານເພື່ອຕໍ່ສູ້ກັບບັນຫາຄວາມທຸກຍາກ ແລະ ການນໍາໃຊ້ແຜນງານພັດທະນາອື່ນໆ ເພື່ອຜົນປະໂຫຍດຂອງປະຊາຊົນທີ່ຖືກກະທົບ, ແຕ່ວ່າໃນພາກປະຕິບັດຕົວຈິງມັກເຫັນວ່າມີຄວາມຫຍຸ້ງຍາກຫຼາຍທີ່ສຸດ ເນື່ອງຈາກຂາດຂອດການປະສານງານລະຫວ່າງອົງການຈັດຕັ້ງຕ່າງໆນໍາກັນ. ໃນກໍລະນີພະນັກງານລັດເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນຂອງໂຄງການໃດໜຶ່ງ, ເຂົາເຈົ້າອາດເຫັນວ່າ ການໃຫ້ອົງການປົກຄອງທ້ອງຖິ່ນເປັນຜູ້ລະດົມຂົນຂວາຍການສະໜັບສະໜູນຈາກພາກສ່ວນອື່ນໆ ຈະງ່າຍກວ່າໃຫ້ອົງການຈັດຕັ້ງອື່ນໆ ແລະ ອົງການເອກກະຊົນເຮັດ. ເຖິງຢ່າງໃດກໍຕາມ, ເພື່ອຮັບປະກັນການສະໜັບສະໜູນ ຂອງລັດຖະບານ, ມັນມີຄວາມສໍາຄັນທີ່**<u>ອົງການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລ</u>** ຕ້ອງໄດ້ເຮັດວຽກຢ່າງໃກ້ຊິດກັບອົງການປົກ ຄອງທ້ອງຖິ່ນ ເພື່ອຍາດແຍ່ງການຊ່ວຍ

ເຫຼືອ. ການເຊື່ອມໂຍງແຜນງານຂອງລັດຖະບານ ເຂົ້າກັບວຽກງານຍົກຍ້າຍຈັດສັນປະຊາຊົນອາດຈະບໍ່ໄດ້ຮັບຄວາມສຳເລັດຖ້າບໍ່ມີກົນໄກທີ່ລະອຽດ ເພື່ອຮັບປະກັນວ່າຜູ້ທີ່ຖືກກະທົບ ສາມາດເຂົ້າເຖິງແຜນງານຂອງລັດ.

## 9.4 ຍຸດທະສາດໃນການຟື້ນຟູ ແລະ ບັນຫາຕ່າງໆທີ່ປະກົດຂື້ນ

*ຍຸດທະສາດໃນການສ້າງລາຍໄດ້*

ການເລືອກເຟັ້ນເອົາຍຸດທະສາດທີ່ແທດເໝາະໃນການສ້າງລາຍຮັບ ເປັນຂໍກຸນແຈເພື່ອບັນລຸຈຸດປະສົງຂອງມັນ. ຍຸດທະສາດທີ່ໄດ້ເລືອກເຟັ້ນຕ້ອງສອດຄ່ອງກັບຄວາມຕ້ອງການ, ບຸລິມະສິດ, ຄວາມຊຳນານ ແລະ ລະດັບການສຶກສາຂອງປະຊາຊົນ. ມັນມີຄວາມຈຳເປັນຢ່າງຍິ່ງ ທີ່ອົງການຮັບຜິດຊອບໂຄງການຕ້ອງໄດ້ດຳເນີນຂະບວນການປຶກສາຫາລືຢ່າງຕໍ່ເນື່ອງລຽນຕິດກັບຄອບຄົວທີ່ຖືກກະທົບ ກ່ຽວກັບ ບັນດາທາງເລືອກທີ່ມີ ແລະ ຮັບຟັງຄຳຄິດຄຳເຫັນຂອງພວກເຂົາເຈົ້າ. ອົງການຮັບຜິດຊອບໂຄງການຕ້ອງໄດ້ແຈ້ງໃຫ້ຄອບຄົວຊາບລະອຽດ ກ່ຽວກັບຜົນໄດ້ ແລະ ຂໍ້ຈຳກັດຕ່າງໆຂອງແຕ່ລະທາງເລືອກ ແລະ ຜົນກະທົບໃນໄລຍະຍາວຕໍ່ຄອບຄົວ. ການຕັດສິນໃຈຂັ້ນຕອນສຸດທ້າຍຂອງຍຸດທະສາດຄວນອີງໃສ່ຄອບຄົວມີ 'ຄວາມເຂົ້າໃຈຄົບຖ້ວນ'. ກິດຈະກຳສ້າງ ລາຍໄດ້ທີ່ໄດ້ຄັດເລືອກເອົານັ້ນ ຕ້ອງສາມາດເຮັດໃຫ້ຄອບຄົວມີລາຍໄດ້ພຽງພໍເພື່ອຄ້ຳຊູຄອບຄົວຢ່າງໜ້ອຍໃຫ້ເທົ່າກັນກັບລະດັບ ໃນໄລຍະກ່ອນມີໂຄງການ.

ການສ້າງລາຍໄດ້ ຄວນໄດ້ອີງໃສ່ການປະເມີນຄວາມຊຳນິຊຳນານງານໃນໄລຍະຍາວທີ່ຕ້ອງການ ເພື່ອພັດທະນາທ້ອງຖິ່ນ. ສ່ວນໜຶ່ງຂອງແຜນການຍົກຍ້າຍຈັດສັນປະຊາຊົນ ກໍແມ່ນການປະເມີນ ກ່ຽວກັບຄວາມຊຳນິຊຳນານງານທີ່ຕ້ອງການ ເພື່ອເຂົ້າຮ່ວມໃນກິດຈະກຳການກໍ່ສ້າງຂອງໂຄງການ ແລະ ການຍົກລະດັບຕື່ມ. ສິ່ງດັ່ງກ່າວເປັນກົນໄກສ່ວນໜຶ່ງສຳລັບຜູ້ທີ່ຖືກກະທົບຈາກໂຄງການ ເພື່ອໃຫ້ໄດ້ວຽກເຮັດງານທຳນຳຜູ້ຮັບເໝົາກໍ່ສ້າງ ແລະ ເຂົ້າມີສ່ວນຮ່ວມໃນການທຳທຸລະກິດທີ່ໂຄງການໄດ້ສ້າງຂຶ້ນ ແລະ ໃນຂົງເຂດວຽກງານອື່ນໆທີ່ກ່ຽວຂ້ອງ ຂອງໂຄງການ. ຕາຕະລາງແບບຢ່າງ ກ່ຽວກັບມາດຕະການສ້າງລາຍໄດ້ ສຳລັບຜູ້ທີ່ຖືກກະທົບປະເພດຕ່າງໆ ໄດ້ສະເໜີຢູ່ໃນ *ເອກກະສານຄັດຕິດ 21.*

*ກຳນົດວ່າ ມີຫຍັງແດ່ທີ່ຈະປະກອບໃສ່ລາຍໄດ້ໃຫ້ພຽງພໍ?*

ບັນຫານີ້ ຕ້ອງໄດ້ກຳນົດວ່າໃນລະດັບໃດຜູ້ທີ່ຖືກກະທົບ ຈະຍອມຮັບເອົາໄດ້ຕາມສະພາບຂອງເສດຖະກິດຕະຫຼາດທີ່ປ່ຽນແປງ, ຄວາມຄາດຫວັງສູງ, ພື້ນຖານຊັບພະຍາກອນ ແລະ ກາລະໂອກາດທີ່ຈຳກັດ. ໂຄງການຕ້ອງໄດ້ເລັ່ງໃສ່ທາງເລືອກທາງດ້ານການຄ້າທີ່ເປັນໄປໄດ້ ພ້ອມທັງມີຜົນຜະລິດເພີ້ມຂຶ້ນບໍ່ພຽງແຕ່ສ້າງວຽກຂຶ້ນແບບເກື້ອກູນ. ມັນຍັງມີຄວາມຈຳເປັນ ທີ່ຕ້ອງໄດ້ເບິ່ງໄປໄກກວ່າລະດັບຂອງເສດຖະກິດລ້ຽງຊີບກຸ້ມຕົນເອງ. ຄວາມຄາດຫວັງຂອງຜູ້ທີ່ຖືກກະທົບ ກ່ຽວກັບລາຍໄດ້ມັກກາຍເປັນຂໍ້ຂັດແຍ້ງທີ່ຮຸນແຮງ ແລະ ເຮັດໃຫ້ສະພາບສັບສົນ ລະຫວ່າງ ຊຸມຊົນທີ່ຖືກກະທົບກັບຜູ້ຈັດການໂຄງການ. ຂໍກຸນແຈເພື່ອໄດ້ຮັບຜົນສຳເລັດ ແມ່ນຂຶ້ນກັບການວິໄຈຄວາມເປັນຈິງ ໃນພາກສະໜາມ ແລະ ສະພາບທີ່ໂດດເດັ່ນທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳໃນເຂດໂຄງການ. ຍິ່ງກວ່ານັ້ນ, ທ່າແຮງຂອງອົງການຈັດຕັ້ງອື່ນໆທີ່ບໍ່ຫວັງຜົນກຳໄລ ແລະ ພາກສ່ວນເອກກະຊົນໃນການສົ່ງເສີມ ແລະ ເຮັດໃຫ້ການປະກອບການແມ່ນຍືນຍົງຂຶ້ນ ກໍຕ້ອງໄດ້ມີການວິໄຈເຊັ່ນດຽວກັນ. ເມື່ອລາຍໄດ້ຂອງຄອບຄົວເປັນຕົວກຳ

ນົດຕົ້ນຕໍ ເພື່ອປະເມີນຄວາມສຳເລັດຂອງຍຸດທະສາດການຟື້ນຟູເສດຖະກິດ, ເປົ້າໝາຍສະເພາະສຳລັບລາຍໄດ້ຂອງຄອບຄົວຄວນເອົາມາກຳນົດ ໂດຍມີການປຶກສາຫາລືກັບຜູ້ທີ່ຖືກກະທົບ. ສຳລັບຄອບຄົວທີ່ຢູ່ໃຕ້ຂີດໝາຍຄວາມທຸກຍາກ, ຕ້ອງໄດ້ຕັ້ງເປົ້າໝາຍສຳລັບລາຍໄດ້ຂອງເຂົາເຈົ້າ ເພື່ອຈະຍົກມັນຂຶ້ນໃຫ້ລື່ນຂີດຂອງຄວາມທຸກຍາກແຫ່ງຊາດ.

## 9.4.1 ການຟື້ນຟູລາຍໄດ້ໃນເຂດຊົນນະບົດ

ການເຕົ້າໂຮມລະບົບການຜະລິດຂອງຊາວກະສິກອນທີ່ສູນເສຍໄປນັ້ນ ເປັນວຽກງານທີ່ຫຍຸ້ງຍາກ ຊຶ່ງຮຽກຮ້ອງໃຫ້ມີຊ່ຽວຊານຈາກຫຼາຍຂະແໜງການ ແລະ ການມີສ່ວນຮ່ວມຢ່າງເຕັມສ່ວນຂອງຜູ້ຖືກຍົກຍ້າຍ ແລະ ບໍ່ພຽງແຕ່ມີການຮ່ວມໃນການຈັດຕັ້ງປະຕິບັດແຜນການເທົ່ານັ້ນ, ແຕ່ຍັງຕ້ອງໄດ້ຮ່ວມໃນການວາງແຜນອີກດ້ວຍ.

ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນຕອບສະໜອງທາງເລືອກການທຳມາຫາກິນຫລາຍຢ່າງ. ສຳລັບຜູ້ທີ່ຖືກຍົກຍ້າຍອອກຈາກເຂດກໍ່ສ້າງເຂື່ອນ, ທາງເລືອກໃນການເຮັດນາແຊງອາດມີຄວາມເໝາະສົມທີ່ສຸດ. ນອກຈາກນີ້, ທາງເລືອກໜຶ່ງອີກສຳລັບຊາວກະສິກອນອາດແມ່ນການຈັດສັນຄຸ້ມຄອງປ່າໄມ້. ທາງເລືອກໃນການທຳມາຫາກິນອື່ນໆ ອາດປະກອບມີ: ການລ້ຽງປາ, ການຜະລິດນ້ຳນົມ ແລະ ສວນໄມ້ກິນໝາກ, ເຖິງວ່າວຽກງານດັ່ງກ່າວອາດຮຽກຮ້ອງໃຫ້ມີການຝຶກອົບຮົມທາງດ້ານເຕັກນິກໃນການນຳໃຊ້ເຄື່ອງມືແບບໃໝ່ ແລະ ມີການວາງແຜນ ແລະ ຈັດຕັ້ງປະຕິບັດລ່ວງໜ້າຫຼາຍຢ່າງ. ຕົ້ນໄມ້ກິນໝາກ ແລະ ເອົາແກ່ນ, ຊຶ່ງກອງທຶນພັດທະນາການກະເສດສາກົນ (IFAD) ໄດ້ນຳໃຊ້ ມີຕົ້ນໝາກກໍ່, ໝາກຄາຍ, ໝາກຈອງ, ໝາກອະງຸ່ນ, ແລະ ຕົ້ນແກ່ນມັນດ້ວຍການປູກແບບປັກຊຳດ້ວຍເຫງົ້າ, ດັ່ງທີ່ປູກຢູ່ແຂວງຊຽງຂວາງ ແມ່ນໃຊ້ເວລາດົນເພື່ອຈະເລີນເຕີບໂຕ, ສະນັ້ນຕ້ອງໄດ້ປູກລ່ວງໜ້າກ່ອນທີ່ຈະຍົກຍ້າຍໄປຢູ່.ຟາມງົວນົມ ທີ່ລ້ຽງດ້ວຍຫຍ້າຈາກເຂດນ້ຳລິດຊົ່ວຄາວກໍເປັນອີກທາງເລືອກໜຶ່ງທີ່ ບໍລິສັດຊຽງຂວາງຟາມຈຳກັດ ໄດ້ນຳໃຊ້ໂດຍສະໜອງຫຍ້າໃຫ້ງົວ ແລະ ຜະລິດນົມງົວຂາຍ. ສິ່ງດັ່ງກ່າວກໍແມ່ນການນຳໃຊ້ເຕັກໂນໂລຊີໃໝ່ ຊຶ່ງຕ້ອງມີການກະກຽມລ່ວງໜ້າດົນສົມຄວນ.

ການລ້ຽງປາໃນກະຊັງ ກໍເປັນອີກທາງເລືອກໜຶ່ງທີ່ມີທ່າແຮງໃນການທຳມາຫາກິນ ໃນໂຄງການເຂື່ອນໄຟຟ້ານ້ຳຕົກຕ່າງໆ. ທາງເລືອກແບບນີ້ ຮຽກຮ້ອງໃຫ້ມີການປະສານງານນຳກັນລ່ວງໜ້າ ລະຫວ່າງ ຊ່ຽວຊານດ້ານການປະມົງ ແລະ ວິຊາວະກອນໃນການອອກແບບແຜນງານຄຸ້ມຄອງອ່າງນ້ຳ, ສ່ວນການຫັນຊາວກະສິກອນ ໃຫ້ມາເຮັດການປະມົງນັ້ນ ບໍ່ຄ່ອຍໄດ້ຮັບຜົນດີປານໃດ. ເຖິງຢ່າງໃດກໍຕາມ, ປະສົບການແບບນີ້ ກໍໄດ້ຮັບຜົນສຳເລັດຢູ່ບ່ອນອື່ນໆແລ້ວ ໂດຍມີການວາງແຜນແບບມີສ່ວນຮ່ວມ ຊຶ່ງກໍອາດສາມາດເປັນໄປໄດ້ໃນສະພາບຂອງ ສປປລາວ ຖ້າມີການສຶກສາຄວາມເປັນໄປໄດ້ດີ ແລະ ມີການກະກຽມກັນຢ່າງພຽງພໍ. ຄວາມພະຍາຍາມເບື້ອງຕົ້ນ ແມ່ນການເຮັດບົດວິພາກເສດຖະກິດ-ເຕັກນິກ ໂດຍມີການປະເມີນຕະຫຼາດໃໝ່ ແລະ ຄວາມສາມາດເຂົ້າເຖິງ ດ້ວຍການປັບປຸງເສັ້ນທາງທີ່ມີຢູ່ ຫຼື ກໍ່ສ້າງເສັ້ນທາງໃໝ່ໄປຫາເຂດດັ່ງກ່າວ. ບັນຫາທາງດ້ານເຕັກນິກປະກອບມີລະບົບການຄຸ້ມຄອງອ່າງເກັບນ້ຳ, ການວັດແທກຄຸນລັກສະນະຂອງອ່າງ, ການປັບຕົວທາງດ້ານສັງຄົມ ແລະ ວັດທະນະທຳ ຂອງຜູ້ທີ່ຈະຍົກຍ້າຍເຂົ້າມາ ໃນການນຳໃຊ້ເຕັກນິກແບບໃໝ່ ແລະ ການສະໜອງອາຫານປາ, ການຂົນສົ່ງ ແລະ ການບໍລິການອື່ນໆທີ່ຈຳເປັນ. ເນື່ອງຈາກມີຄວາມຮຽກຮ້ອງຕ້ອງການໃຫ້ມີການວາງແຜນລ່ວງໜ້າ, ມັນຍິ່ງມີຄວາມຈຳເປັນຕ້ອງໄດ້ໃຊ້ເວລາ ແລະ ທຶນຮອນຫຼາຍ ເພື່ອສຸມໃສ່ທາງເລືອກດັ່ງກ່າວ ກວ່າທາງເລືອກອື່ນໆ. ເປົ້າໝາຍຂອງການວາງແຜນລ່ວງໜ້າ ແມ່ນເພື່ອສະແດງໃຫ້ເຫັນວ່າການຍົກຍ້າຍຈັດສັນປະຊາຊົນ ໄດ້ມີການວາງແຜນອອກຢ່າງຄັກແນ່ຄືເປັນວຽກພັດທະນາເສດຖະກິດ ຢູ່ພາຍໃນໂຄງປະກອບກອບຂອງທ່າແຮງຂະຫຍາຍຕົວຂອງເຂດແຄວັນນີ້.

ການໃຫ້ທຶນຟື້ນຟູເສດຖະກິດ ແມ່ນຕ້ອງໄດ້ລວມເອົາເຂົ້າຢູ່ໃນງົບປະມານຂອງໂຄງການ. ຖ້າວ່າການວາງແຜນລ່ວງໜ້າ ແລະ ການເຮັດບົດວິພາກເສດຖະກິດບ-ເຕັກນິກແບບລະອຽດ ຫາກເຮັດຂຶ້ນແບບມີຄວາມເຊື່ອຖືໄດ້, ກິດຈະກຳບາງຢ່າງທີ່ໜ້າຈະມີຄວາມສຳເລັດ ອາດສາມາດດຶງດູດທຶນຊ່ວຍເຫຼືອຈາກສາກົນເຂົ້າມາໃນກອບຂອງການພັດທະນາເສດຖະກິດເອງ. ກອງທຶນພັດທະນາທ້ອງຖິ່ນ ເຊັ່ນສຳລັບການຄຸ້ມຄອງແຫຼ່ງນ້ຳ ກໍຕ້ອງໄດ້ມີການສຶກສາເຊັ່ນດຽວກັນ. ໃນບັນດາໂຄງການໄຟຟ້ານ້ຳຕົກ, ເປີເຊັນສ່ວນນ້ອຍໆໜຶ່ງຈາກລາຍຮັບຂອງໂຄງການສາມາດນຳໃຊ້ຢ່າງມີຜົນອັນມະຫາສານຕໍ່ການພັດທະນາທ້ອງຖິ່ນ. ໃນຂະນະທີ່ກິດຈະກຳທີ່ກ່າວມາຂ້າງເທິງນີ້ຖືກດຳເນີນການ ເພື່ອຜົນປະໂຫຍດຕໍ່ຜູ້ທີ່ຖືກກະທົບຈາກໂຄງການ, ແຕ່ມັນຍັງເປີດໂອກາດສຳລັບການພັດທະນາ ຊຶ່ງໂຄງການຄາດວ່າຈະນຳມາໃຫ້ເຂດດັ່ງກ່າວ ແລະ ນຳເອົາຜົນປະໂຫຍດມາໃຫ້ປະຊາຊົນທີ່ອາໄສຢູ່ໃນ ບໍລິເວນຂອງໂຄງການໃຫ້ຫຼາຍ.

### 9.4.2 ¡ານ³œນ³øລາຍÄດÉÃມຂະÁÎງ¡ານບÒÁມÈນ¡ະສò¡¿

ບັນຫາທີ່ຕັດສິນຊີ້ຂາດແມ່ນການສະໜອງວຽກເຮັດງານທຳໃຫ້ແກ່ຜູ້ທີ່ຖືກກະທົບ ໃນຂະແໜງການທີ່ບໍ່ແມ່ນກະສິກຳ. ການຟື້ນຟູລາຍໄດ້ໃນສະພາບແບບນີ້ສ້າງຄວາມທ້າທາຍຢ່າງມະຫາສານ ເນື່ອງຈາກທີ່ດິນ ສຳລັບການຜະລິດບໍ່ມີ, ສະນັ້ນການມີ "ວຽກເຮັດເປັນປົກກະຕິ" ຈຶ່ງຕ້ອງກາຍເປັນທາງເລືອກທີ່ຕ້ອງການທີ່ສຸດ. ໂອກາດສຳລັບການມີວຽກເຮັດງານທຳ ຊຶ່ງມີຈຳກັດຈະມີຢູ່ຕາມບາງຂະແໜງການຂອງເສດຖະກິດເທົ່ານັ້ນ ຊຶ່ງລວມໃນຂົງເຂດກໍ່ສ້າງ ແລະ ໂຄງການກໍ່ສ້າງໂຄງລ່າງຕ່າງໆ. ຄວາມເປັນຈິງໂຄງການບໍ່ສາມາດຮັບປະກັນລາຍຮັບອັນແນ່ນອນ ໃຫ້ທຸກໆຄົນທີ່ຖືກຍົກຍ້າຍ ຊຶ່ງກໍເປັນບັນຫາທ້າທາຍສຳຄັນທີ່ສຸດ. ການໃຫ້ຝຶກອົບຮົມ ອາດເປັນທາງເລືອກໜຶ່ງ. ການຟື້ນຟູລາຍຮັບ ຕ້ອງໃຫ້ມີຄວາມຍືນຍົງ ບໍ່ແມ່ນພຽງແຕ່ເປັນການອຸດໜູນເທົ່ານັ້ນ, ດັ່ງນັ້ນ ຫົວຂໍ້ຝຶກອົບຮົມທີ່ສະເໜີ ແລະ ການຈັດການຝຶກອົບຮົມ ຕ້ອງໃຫ້ສອດຄ່ອງກັບສະພາບຕົວຈິງ, ບໍ່ຄວນເປັນອຸດົມການ ຫຼື ທິດສະດີຫລາຍເກີນໄປ.

ໃນໂຄງການທີ່ເປີດໂອກາດໃຫ້ປະຊາຊົນທ້ອງຖິ່ນມີວຽກເຮັດງານທຳ, ວຽກເຮັດເປັນປົກກະຕິນຳໂຄງການມັກເປັນສິ່ງທີ່ປະຊາຊົນປາດຖະໜາ. ແຕ່ວ່າທາງເລືອກໃນການມີວຽກເຮັດງານທຳ ໄດ້ສ້າງຄວາມແຕກຕ່າງທາງດ້ານເສດຖະກິດ-ສັງຄົມພາຍໃນຊຸມຊົນ ແລະ ຄອບຄົວທີ່ຖືກກະທົບ. ບາງຄັ້ງການໄດ້ວຽກເຮັດນຳໂຄງການກໍພາໃຫ້ຄອບຄົວຖືກແຍກຍ້າຍ ເຮັດໃຫ້ສະມາຊິກຂອງຄອບຄົວ (ລວມທັງພໍ່ແມ່ທີ່ສູງອາຍຸ) ຕ້ອງໄດ້ດູແລຕົນເອງ ແລະ ສ້າງຄວາມເຄັ່ງຕຶງຢ່າງຫຼວງຫຼາຍດ້ານສັງຄົມຕໍ່ເດັກທີ່ຍັງອ່ອນນ້ອຍ. ຍິ່ງກວ່ານັ້ນ, ໂອກາດວຽກເຮັດງານທຳນຳໂຄງການມັນເປັນພຽງໄລຍະສັ້ນ ແລະ ສ່ວນຫຼາຍກໍຈົບລົງເມື່ອໂຄງການສຳເລັດ. ຄອບຄົວທີ່ເຂົ້າຮ່ວມໃນທາງເລືອກນີ້ ຕ້ອງໄດ້ຮັບຮູ້ ກ່ຽວກັບຄວາມຈິງດັ່ງກ່າວ ແລະ ຕ້ອງໄດ້ກຽມພ້ອມຫາແຫຼ່ງລາຍໄດ້ອື່ນ ໃນເມື່ອໂຄງການສິ້ນສຸດລົງແລ້ວ. ອີກດ້ານໜຶ່ງ, ອົງການຮັບຜິດຊອບໂຄງການ ຕ້ອງໄດ້ພະຍາຍາມສຸດຂີດ ເພື່ອຊອກຫາວຽກ ທີ່ໝັ້ນຄົງກວ່າໃຫ້ຜູ້ທີ່ຖືກກະທົບແທນທີ່ຈະອາໄສແຕ່ວຽກປະຈຳວັນນຳໂຄງການເທົ່ານັ້ນ. ໃນລະດັບນະໂຍບາຍແລ້ວ, ວຽກເຮັດງານທຳໃນໂຄງການ ຖືເປັນຜົນປະໂຫຍດເພີ້ມ ແຕ່ບໍ່ແມ່ນສິດທິທີ່ຕ້ອງໄດ້ຮັບ. ຢ່າງໃດກໍຕາມ, ການຝຶກອົບຮົມໃຫ້ແກ່ຜູ້ທີ່ຖືກກະທົບກໍບໍ່ຄວນຖືກເບິ່ງຂ້າມ ເພື່ອສົ່ງເສີມໃຫ້ເຂົາເຈົ້າຫາວຽກເຮັດງານທຳດ້ວຍຕົນເອງໃນການຟື້ນຟູເສດຖະກິດ.

*<u>ບັນຫາ ແລະ ວິທີການແກ້ໄຂ</u>*

ໜຶ່ງໃນບັນດາບັນຫາທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນງານສ້າງລາຍໄດ້ ແມ່ນທັດສະນະຂອງປະຊາຊົນທີ່ຖືກກະທົບ ຊຶ່ງອາດເປັນສິ່ງກີດຂວາງເອງຕໍ່ການຈັດຕັ້ງປະຕິບັດມາດຕະການຟື້ນຟູທາງດ້ານເສດຖະກິດ. ຄວາມ

ເປັນຫ່ວງອັນອື່ນອີກກໍຄືການຂາດທຶນຮອນ, ຂໍ້ແນະນໍາ ແລະ ການວາງແຜນ. ອີງການຈັດຕັ້ງສ່ວນຫຼາຍມີທ່າອ່ຽງທີ່ຈະຖືວ່າ ການຍົກຍ້າຍຈັດສັນປະຊາຊົນ (ລວມທັງການສ້າງລາຍຮັບ) ເປັນສິ່ງທີ່ບໍ່ດີ ແລະ ບໍ່ມີມາດຕະຖານ ຫຼື ຂໍ້ແນະນໍາອັນຈໍາເປັນ ເພື່ອຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນປະຊາຊົນ. ການເຊື່ອມໂຍງຍຸດທະສາດຂອງການຊ່ວຍເຫຼືອ ເພື່ອຟື້ນຟູເສດຖະກິດເຂົ້າກັບແຜນງານຂອງລັດຖະບານ ອາດເປັນສິ່ງທີ່ຫຍຸ້ງຍາກ ແຕ່ຕ້ອງການໃຫ້ມີກົນໄກທີ່ດີກວ່າ ເພື່ອຮັບປະກັນວ່າຜູ້ທີ່ຖືກກະທົບ ສາມາດເຂົ້າເຖິງຍຸດທະສາດດັ່ງກ່າວ ເພາະໂຄງການ ບໍ່ສາມາດເຮັດແຜນທີ່ມີຢູ່ແລ້ວນັ້ນໄດ້ຕື່ມອີກໃໝ່ ໂດຍບໍ່ສິ້ນເປືອງທຶນຮອນ.

ວິທີການຕ່າງໆທີ່ຈໍາເປັນ ເພື່ອສົ່ງເສີມການສ້າງລາຍຮັບ ມີຄືດັ່ງລຸ່ມນີ້:

- ປຸ່ງນແນວຄວາມຄິດຂອງຜູ້ທີ່ຖືກກະທົບ ໂດຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈ ແລະ ການແລກປ່ຽນຂໍ້ມູນຂ່າວສານ ແລະ ປະສົບການກັບເຂົາເຈົ້າ
- ຕ້ອງໄດ້ປະເມີນກິດຈະກໍາໃນຂະແໜງອຸດສາຫະກໍາ, ການບໍລິການ ແລະ ທຸລະກິດ
- ກໍານົດຮູບແບບການສ້າງລາຍຮັບສະເພາະສໍາລັບຜູ້ທີ່ຖືກກະທົບແຕ່ລະຄົນ ໂດຍເຮັດໃຫ້ເສດຖະກິດມີຂະໜາດເໝາະສົມ ແລະ ມີຄວາມສ່ຽງໜ້ອຍ
- ປະເມີນສະພາບການເພື່ອຊອກຮູ້ຊ່ອງຫວ່າງທາງດ້ານເຕັກນິກ, ການເງິນ ແລະ ດ້ານອື່ນໆ ຂອງຮູບແບບທີ່ໄດ້ກໍານົດໄວ້, ຖ້າມີ
- ຫຼີກລ້ຽງຄວາມບໍ່ແນ່ນອນໃນການເຊື່ອມໂຍງເຂົ້າໃນແຜນງານຂອງລັດ
- ຮັບປະກັນສາຍພົວພັນລະຫວ່າງອະດີດຕະການ ແລະ ອະນາຄົດ ເພື່ອຄວາມສໍາເລັດຂອງຮູບແບບດັ່ງກ່າວ
- ຕ້ອງໃຫ້ມີຄວາມຄືບໜ້າເປັນແຕ່ລະກ້າວ ເພື່ອບໍ່ໃຫ້ຄວາມໄຝ່ຝັນນັ້ນ ເປັນພາລະແບກຫາບຂອງປະຊາຊົນ

### 9.4.3 ¡ານ±¡ອົບຮົມດÉານ¡ານ¯ະ¡ອບ¡ານ

ການຝຶກອົບຮົມເພື່ອຍົກລະດັບຄວາມຊໍານິຊໍານານງານໃຫ້ແກ່ຜູ້ທີ່ຖືກກະທົບເປັນມາດຕະການໜຶ່ງ ທີ່ສໍາຄັນໃນການສ້າງລາຍຮັບ. ແຕ່ວ່າອົງການຮັບຜິດຊອບໂຄງການ ສ່ວນຫຼາຍມັກຈະຖືວ່າການຝຶບຮົມເປັນພຽງທາງເລືອກທາງດຽວໃນການສ້າງລາຍຮັບ. ການຕອບສະໜອງການຝຶກອົບຮົມຢ່າງດຽວບໍ່ສາມາດໃຫ້ມີວຽກເຮັດງານທໍາ ແລະ ເພີ້ມລາຍຮັບໃຫ້ຄອບຄົວໄດ້.

ການສ້າງຄວາມອາດສາມາດໃນການຖ່າຍທອດເຕັກໂນໂລຊີ ແລະ ຄວາມຊໍານິຊໍານານງານໃນການຄຸ້ມຄອງ ຍັງເປັນໜຶ່ງໃນປັດໄຈທີ່ສໍາຄັນທີ່ສຸດ ຕໍ່ຜົນສໍາເລັດຂອງການສ້າງລາຍໄດ້. ໃນບາງກໍລະນີ ແລະ ບ່ອນໃດມີທຶນຮອນ ອາດສ້າງສູນຝຶກອົບຮົມ ແລະ ການຜະລິດນໍາກັນ. ສູນດັ່ງກ່າວນີ້ ອາດຈະເປັນວິທີທາງທີ່ສະດວກໃນການຖ່າຍທອດຄວາມຊໍານິຊໍານານງານທີ່ຕ້ອງການໃນໄລຍະຍາວໄດ້.

*<u>ການຝຶກອົບຮົມສໍາລັບວຽກທີ່ໄດ້ນໍາໂຄງການ</u>*

ການຝຶກອົບຮົມປະຊາຊົນໃຫ້ເຮັດວຽກທີ່ໂຄງການສ້າງຂຶ້ນມາ ອາດເປັນບັນຫາສັບສົນກໍເປັນໄດ້ ໂດຍສະເພາະກໍລະນີຜູ້ທີ່ໄດ້ຮັບການຝຶກອົບຮົມບໍ່ໄດ້ວຽກເຮັດຕາມໃຈ ມັກກໍ່ໃຫ້ເກີດການປະທ້ວງຕໍ່ຜູ້ທີ່ໄດ້ເຮັດວຽກຕາມໃຈມັກ. ຜູ້ທີ່ຮັບການຝຶກອົບຮົມອາດເຂົ້າໃຈວ່າຕົນມີສິດ ຈະໄດ້ວຽກເຮັດເມື່ອຜ່ານການຝຶກອົບຮົມແລ້ວ. ອີກດ້ານໜຶ່ງ, ຖ້າຫາກມີແຕ່ຜູ້ທີ່ຕ້ອງການໄດ້ຮັບການຝຶກອົບຮົມ, ແຕ່ມັນກໍບໍ່ຮັບປະກັນໄດ້ວ່າຜູ້ເຂົ້າຮັບການຝຶກອົບຮົມທັງໝົດ ຈະສາມາດຮຽນໄດ້ດີ ແລະ ເຮັດໃຫ້ໂຄງການຖືກແກ່ຍາວ ເນື່ອງຈາກຄົນງານບໍ່ມີຄວາມສາມາດພຽງພໍ. ການຝຶກອົບຮົມສໍາລັບໂຄງການຕ້ອງໄດ້ກໍານົດເວລາລະອຽດ ແລະ ມີການປະສານງານກັນເປັນຢ່າງດີ.

ຄວາມສຳຄັນອີກດ້ານໜຶ່ງຂອງການວາງແຜນ ແລະ ດຳເນີນກິດຈະກຳສ້າງລາຍຮັບ ແມ່ນປະເພດຂອງໂຄງການ ແລະ ຂະໜາດຂອງວຽກງານ. ປະຊາຊົນຜູ້ຖືກກະທົບສ່ວນຫຼາຍ ຢາກຮູ້ວ່າລາຍຮັບທີ່ຈະໄດ້ຫຼັງຈາກຜ່ານການຝຶກອົບຮົມມາ ຈະພຽງພໍສຳລັບໃຫ້ເຂົາເຈົ້າສາມາດປະລະທາງເລືອກອື່ນໆ ຫຼື ບໍ່ ເຊັ່ນ: ການແບ່ງທີ່ດິນໃຫ້, ການສະໜອງວຽກໃຫ້. ແຜນຝຶກອົບຮົມ ແມ່ນມີຄວາມຈຳເປັນທີ່ຈະຕ້ອງຄາດຄະເນຜົນທີ່ອາດຈະໄດ້ຮັບຈາກແຕ່ລະຫົວຂໍ້ຂອງການຝຶກອົບຮົມນັ້ນ.

*ການປຶກສາຫາລື ແລະ ການມີສ່ວນຮ່ວມ*

ສິດທິໃນການໄດ້ຮັບຂໍ້ມູນຂ່າວສານຂອງຊຸມຊົນທີ່ຖືກກະທົບ ເປັນບັນຫາໜຶ່ງທີ່ສຳຄັນຫຼາຍ ແລະ ມີບົດບາດຕັດສິນຊີ້ຂາດພໍສົມຄວນໃນການລິເລີ່ມວຽກງານການມີສ່ວນຮ່ວມ. ມັນຈຳເປັນຕ້ອງໄດ້ນຳໃຊ້ວິທີປະຊາສຳພັນ ແລະ ເຜີຍແຜ່ຂໍ້ມູນຂ່າວສານທີ່ມີປະສິດທິຜົນ ເພື່ອຮັບປະກັນໃຫ້ຜູ້ທີ່ຖືກກະທົບໄດ້ມີສ່ວນເຂົ້າຮ່ວມໃຫ້ຫຼາຍທີ່ສຸດ. ການມີສ່ວນຮ່ວມຂອງຊຸມຊົນທີ່ຖືກກະທົບໃນການຕັດສິນບັນຫາ ແລະການວາງແຜນ ຄວນມີການພິຈາລະນາເປັນແຕ່ລະກໍລະນີ. ໃນເວລາເຮັດວຽກຍົກຍ້າຍຈັດສັນປະຊາຊົນຕ້ອງໄດ້ເຂົ້າໃຈດີ ກ່ຽວກັບ “ສັນຍາດ້ານ ສັງຄົມ” ຊຶ່ງເຮັດຂຶ້ນລະຫວ່າງເຈົ້າຂອງໂຄງການ ແລະ ຜູ້ທີ່ຖືກກະທົບ ແລະ ສ່ວນຫຼາຍຈະຖືກເຊື່ອມເສຍ ຍ້ອນຜົນປະໂຫຍດທີ່ມີຢູ່ໃນນັ້ນ. ເພື່ອຜ່ານຜ່າບັນຫາດັ່ງກ່າວ ແລະ ຮັບປະກັນຄວາມໂປ່ງໃສ ຕ້ອງສຸມໃສ່ການເຮັດວຽກກັບແມ່ຍິງຢູ່ໃນຊຸມຊົນທີ່ຖືກຍົກຍ້າຍ ເນື່ອງຈາກແມ່ຍິງຈະຍອມຮັບໄດ້ກວ່າ. ບົດຮຽນໄດ້ຊີ້ໃຫ້ເຫັນວ່າ ໃນເມື່ອແມ່ຍິງຫາກຖືກຈັດເຂົ້າໃນກິດຈະກຳເສດຖະກິດໃດໜຶ່ງພວກເຂົາຮູ້ສຶກມີສິດ, ມີບົດບາດຢ່າງຕັ້ງໜ້າໃນການຕັດສິນບັນຫາຂອງຄອບຄົວ ແລະ ກໍໃຫ້ຜູ້ຊາຍສຸມໃສ່ກິດຈະກຳການຜະລິດ ແທນທີ່ຈະມາວິນນຳຜົນປະໂຫຍດທີ່ມີຢູ່ໃນນັ້ນ.

### 9.4.4 ¡ານÃ¹ÉສòນÀຊˆອຂະ໋າດນÉອຍ

ການສະໜອງສິນເຊື່ອຂະໜາດນ້ອຍໃຫ້ແກ່ກຸ່ມຜູ້ທຸກຍາກໃນຊົນນະບົດ ແລະ ຕົວເມືອງ ໄດ້ສະແດງໃຫ້ເຫັນຜົນສຳເລັດເປັນຢ່າງດີ ໂດຍເຮັດໃຫ້ພວກເຂົາເຈົ້າມີຄວາມເປັນເອກກະລາດຫຼາຍຂຶ້ນ. ສິນເຊື່ອຂະໜາດນ້ອຍ ຫຼື ການໃຫ້ເງິນກູ້ໂດຍບໍ່ຕ້ອງມີສິ່ງຄ້ຳປະກັນ ກໍແມ່ນມາດຕະການໜຶ່ງທີ່ຊ່ວຍເພື່ອເຮັດໃຫ້ຄອບຄົວຫຼຸດພົ້ນອອກ ຈາກຄວາມອຶດຫິວ ແລະ ການເປັນໜີ້ສິນຕະຫຼອດຊີວິດ. ປະສົບການຈາກບັນດາປະເທດກຳລັງພັດທະນາ ໄດ້ຊີ້ໃຫ້ເຫັນວ່າການໃຫ້ເງິນກູ້ຂະໜາດນ້ອຍແກ່ແມ່ຍິງ ໄດ້ເຮັດໃຫ້ເຂົາເຈົ້າເປັນເຈົ້າຕົນເອງດ້ານການເງິນຫຼາຍຂຶ້ນ ທັງໃຫ້ໂອກາດເພື່ອປະກອບທຸລະກິດທີ່ນຳລາຍໄດ້ອັນໝັ້ນຄົງ.

## 9.5 ຄວາມຕ້ອງການທາງດ້ານການຈັດຕັ້ງ

ການສ້າງຄວາມເຂັ້ມແຂງໃຫ້ບັນດາຂະແໜງການສາຍຕັ້ງ ຂອງບັນດາກະຊວງ ແລະ ເຈົ້າຂອງໂຄງການເພື່ອວາງແຜນ ແລະ ຈັດຕັ້ງປະຕິບັດວຽກຟື້ນຟູລາຍຮັບຕ້ອງຖືກເອົາໃຈໃສ່. ມັນມີຄວາມຈຳເປັນ ທີ່ຈະຕ້ອງສ້າງຂໍ້ແນະນຳທາງດ້ານສັງຄົມວິທະຍາທີ່ສົມບູນ ແລະ ມີຄຳຄິດຄຳເຫັນຈາກຜູ້ຊ່ຽວຊານ ເພື່ອເຂົ້າໃຈຂໍ້ຂັດແຍ້ງທາງດ້ານສັງຄົມ ແລະ ບັນຫາຕ່າງໆທີ່ມີຜົນກະທົບຕໍ່ການດຳເນີນແຜນຟື້ນຟູລາຍຮັບທີ່ບໍ່ມີຄວາມລາບລື່ນ. ການຮັບນັກສັງຄົມວິທະຍາເຂົ້າໃນການຈັດຕັ້ງຈະຊ່ວຍສ້າງສາຍພົວພັນດີຂຶ້ນ, ມີການລິເລີ່ມການວາງແຜນ ແລະ ສ້າງຄວາມສາມາດໃຫ້ພາກສ່ວນທີ່ຮັບຜິດຊອບວຽກງານວາງແຜນ ແລະ ດຳເນີນການຈັດຕັ້ງປະຕິບັດວຽກຟື້ນຟູເສດຖະກິດ ຂອງປະຊາຊົນທີ່ຖືກກະທົບ. ຄວາມຮັບຜິດຊອບຕໍ່ຜົນໄດ້ (ເຊັ່ນ ຈຳນວນຄົນທີ່ໄດ້ຮັບການຝຶກອົບຮົມ, ຈຳນວນໜ່ວຍ

ງານເສດຖະກິດທີ່ຖືກສ້າງຕັ້ງຂຶ້ນ, ລະດັບຂອງລາຍຮັບທີ່ໄດ້ຮັບມາ, ຄວາມຍືນຍົງຂອງລະບົບ ແລະ ອື່ນໆ) ຕ້ອງໄດ້ກຳນົດອອກມາຢ່າງຂາດຕົວ ເພື່ອບັນລຸຜົນສຳເລັດທີ່ຕ້ອງການ.

## 9.6 ບົດບາດຂອງ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ຂະແໜງເອກກະຊົນ

ອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລ ແລະ ຂະແໜງການເອກກະຊົນໄດ້ມີ ແລະ ອາດມີບົດບາດຢ່າງຫລວງຫລາຍໃນການວາງແຜນ ແລະ ດຳເນີນກິດຈະກຳຟື້ນຟູລາຍໄດ້ໃນໂຄງການພັດທະນາຕ່າງໆ. ເຖິງຢ່າງໃດກໍຕາມ, ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງເຂົາເຈົ້າຕ້ອງໄດ້ມີການວາງແຜນຢ່າງຮອບຄອບ ເພື່ອຮັບປະກັນການປະກອບສ່ວນຂອງເຂົາເຈົ້າ ໃຫ້ທັນເວລາຕາມຕາຕະລາງຂອງວຽກງານ. ຂອບເຂດການປະກອບສ່ວນ ຂອງອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລ ແລະ ຂະແໜງການເອກກະຊົນ ຕ້ອງໄດ້ຜູກພັນກັນເຂົ້າເພື່ອບັນລຸຜົນທີ່ຕ້ອງການ. ເມື່ອອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລ ແລະ/ຫຼື ເອກກະຊົນເຮັດສັນຍາ ເພື່ອດຳເນີນກິດຈະການຟື້ນຟູລາຍຮັບບາງຢ່າງ, ເຂົາເຈົ້າຕ້ອງເລີ້ມຈາກຍຸດທະສາດທີ່ໄດ້ມີການກຳນົດເວລາໄວ້ຢ່າງຄັກແນ່ ແລະ ຖອນຕົວອອກ ເມື່ອບັນລຸຕາມເປົ້າໝາຍແລ້ວ. ເຖິງຢ່າງໃດກໍຕາມ, ຕ້ອງຮັບປະກັນໃຫ້ໄດ້ວ່າ ຄວາມຍືນຍົງຖືກເອົາເຂົ້າໃນໂຄງການ ໃນກໍລະນີອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລ ຫຼື ເອກກະຊົນໄດ້ຖອນຕົວອອກໄປແລ້ວເພື່ອບໍ່ໃຫ້ມີຊ່ອງວ່າງ. ການສະໜັບສະໜູນ ແລະ ການຊ່ວຍເຫຼືອ ທີ່ຫຼຸດລົງເປັນກ້າວໆ ແມ່ນຈະເຮັດໃຫ້ຜູ້ທີ່ຖືກກະທົບຢູ່ໃນທ່າທີ່ກຽມພ້ອມ ແລະ ທັງຮັບປະກັນບໍ່ໃຫ້ອາການຂື້ນກັບຄົນອື່ນຄອບງຳພວກເຂົາເຈົ້າ.

ການຝຶກອົບຮົມຄວາມຊຳນິຊຳນານງານທາງດ້ານວິຊາການ ອາດຈັດຂຶ້ນດ້ວຍການຮ່ວມມືກັບອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລ ເຊັ່ນ ການເຂົ້າຮ່ວມຂອງ ອົງການສຸພານິມິດ ໃນວຽກຍົກຍ້າຍຈັດສັນປະຊາຊົນ ໃນໂຄງການໄຟຟ້ານໍ້າຕົກຫ້ວຍເຫາະ. ຢ່າງໃດກໍຕາມ, ບໍ່ຄວນຈະອີງໃສ່ແຕ່ການນຳໃຊ້ອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລ ທີ່ມີຄວາມຊຳນິຊຳນານງານດີ ໃນວຽກພັດທະນາຊົນນະບົດ ຫຼື ທີ່ປຶກສາຫຼາຍໂພດ. ອົງການຈັດຕັ້ງທີ່ບໍ່ຫັວງຜົນກຳໄລທີ່ເຮັດວຽກປຶກສາຫາລືກັບມວນຊົນ ໂດຍຈັດກອງປະຊຸມສຳມະນາ ແລະ ກອງປະຊຸມອື່ນໆຕ້ອງໄດ້ຂະຫຍາຍຄວາມເຂົ້າໃຈຂອງຕົນອອກຕື່ມແທນທີ່ຈະເປັນແຕ່ "ການປະຊາສຳພັນ" ໃຫ້ແກ່ໂຄງການເທົ່ານັ້ນ. ມັນຍັງມີຄວາມຈຳເປັນທີ່ຕ້ອງໄດ້ສັງລວມມັນເຂົ້າໃນແຜນງານສ້າງລາຍຮັບ ເພື່ອເປັນຈິດໃຈຂອງວຽກງານປຶກສາຫາລືປະຈຳວັນກັບຊາວບ້ານ ຊຶ່ງໃຫ້ເຂົາເຈົ້າພໍໃຈນຳວິທີການຟື້ນຟູລາຍຮັບ ແລະ ການຮ່ວມມື ໃນການຈັດຕັ້ງ ປະຕິບັດວຽກງານດັ່ງກ່າວນີ້ຮ່ວມກັນ.

## 9.7. ວິທີການ ແລະ ບາດກ້າວໃນການວາງແຜນສຳລັບໃຫ້ການຊ່ວຍເຫຼືອດ້ານວຽກງານຟື້ນຟູ

ການວາງແຜນ ເພື່ອໃຫ້ການຊ່ວຍເຫຼືອໃນວຽກຟື້ນຟູເສດຖະກິດໃຫ້ແກ່ຜູ້ທີ່ຖືກກະທົບຫຼາຍຈາກໂຄງການມັກມີຄວາມຮຽກຮ້ອງໃຫ້ມີກິດຈະການເປັນຊຸດສະເພາະ. ກິດຈະການດັ່ງກ່າວ ໄດ້ກຳນົດດັ່ງຕໍ່ໄປນີ້:

1.) ເຈົ້າຂອງໂຄງການຕ້ອງດຳເນີນການສຶກສາ ແລະ ຄົ້ນຄວ້າລະອຽດແຕ່ຫົວທີ ເພື່ອວາງແຜນສຳລັບການຟື້ນຟູເສດຖະກິດ ແລະ ເກັບກຳຂໍ້ມູນດັ່ງລຸ່ມນີ້:
   - ບັນຊີສະຖາບັນ ແລະ ສູນອົບຮົມພ້ອມວິຊາຝຶກອົບຮົມ, ມູນຄ່າ, ໄລຍະຮຽນ ແລະ ອື່ນໆ;
   - ຂໍ້ມູນຂ່າວ ກ່ຽວກັບ ແຜນງານສ້າງລາຍຮັບຕ່າງໆທີ່ກຳລັງດຳເນີນຢູ່ໃນປະເທດ;

- ສົນທະນາກັບອົງການຮັບຜິດຊອບທີ່ກ່ຽວຂ້ອງກັບແຜນງານສ້າງລາຍຮັບ ແລະ ແຜນງານອື່ນໆທີ່ແນໃສ່ຫຼຸດຜ່ອນຄວາມທຸກຍາກເພື່ອຊອກຫາໂອກາດ ແລະ ກົນໄກສຳລັບເຊື່ອມໂຍງມາດຕະການຊ່ວຍເຫຼືອ ເພື່ອຟື້ນຟູເສດຖະກິດຂອງໂຄງການເຂົ້າກັບແຜນງານດັ່ງກ່າວ;
- ສົນທະນາ ແລະ ປຶກສາຫາລືກັບກະຊວ ງແລະ ກົມກອງທີ່ກ່ຽວຂ້ອງ ກ່ຽວກັບ ຮູບແບບຂອງການຊ່ວຍເຫຼືອເພື່ອຟື້ນຟູເສດຖະກິດທີ່ຈັດຫາໃຫ້ຕາມກອບການຈັດຕັ້ງທີ່ໄດ້ສ້າງຂຶ້ນແລ້ວ ເຊັ່ນ: ການບໍລິການສົ່ງເສີມ ຊຶ່ງກົມປູກຝັງໄດ້ດຳເນີນໃນແຂວງຕ່າງໆ;
- ເກັບກຳຂໍ້ມູນຈາກສະຖາບັນສຶກສາ, ທັງພາກລັດ ແລະ ເອກກະຊົນ ກ່ຽວກັບ ປະເພດຂອງການຝຶກອົບຮົມທີ່ໄດ້ດຳເນີນມາ, ໄລຍະເວລາ ແລະ ມູນຄ່າ.

2.) ອີງໃສ່ຂໍ້ມູນຂ້າງເທິງນີ້, ກະກຽມບັນຊີປະເພດການຊ່ວຍເຫຼືອເພື່ອຟື້ນຟູເສດຖະກິດ ທີ່ແຕ່ລະເມືອງສາມາດດຳເນີນການກັບຜູ້ທີ່ຖືກກະທົບ.

3.) ອີງໃສ່ການວິໄຈຂໍ້ມູນທີ່ໄດ້ໃນເວລາສຳຫຼວດພົນລະເມືອງ, ການຂຶ້ນບັນຊີ ແລະ ການສຳຫຼວດເສດຖະກິດ-ສັງຄົມ, ໃນບາດກ້າວທີ່ໜຶ່ງ ສ້າງບັນຊີຜູ້ທີ່ຖືກກະທົບທີ່ມີສິດໄດ້ຮັບການຊ່ວຍເຫຼືອເພື່ອຟື້ນຟູເສດຖະກິດ. ບັນຊີດັ່ງກ່າວຕ້ອງແມ່ນບ້ານ ແລະ ເມືອງເປັນຜູ້ກະກຽມມາ ແລະ ຄວນມີລາຍລະອຽດ ກ່ຽວກັບຜູ້ທີ່ຖືກກະທົບແຕ່ລະຄົນ ເຊັ່ນ: ອາຊີບ, ຂະໜາດຂອງຄອບຄົວ, ພື້ນຖານຄວາມຮູ້ວິຊາສະເພາະ, ອື່ນໆ

4.) ອີງໃສ່ຂໍ້ "1" ແລະ "2" ຂ້າງເທິງນີ້, ໃຫ້ດຳເນີນການປຶກສາຫາລືຢ່າງກວ້າງຂວາງກັບຜູ້ທີ່ຖືກກະທົບ ແຕ່ລະຄົນທີ່ມີສິດໄດ້ຮັບການຊ່ວຍເຫຼືອໃນການຟື້ນຟູເສດຖະກິດ ເພື່ອຮູ້ຄວາມຕ້ອງການ ແລະບຸລິມະສິດ ຂອງພວກເຂົາເຈົ້າ ແລະ ບັນທຶກຮູບແບບການຊ່ວຍເຫຼືອໃນການຟື້ນຟູເສດຖະກິດທີ່ເຂົາເຈົ້າມັກຫລາຍກວ່າ. ເມື່ອເຫັນຄວາມມັກໃນການຝຶກອົບຮົມໃດໜຶ່ງ, ບັນຊີກໍຄວນລະບຸອີກປະເພດ, ໄລຍະເວລາ ແລະ ສະຖານທີ່ຝຶກອົບຮົມ;

5.) ກະກຽມບົດສະເໜີ ຊຶ່ງມີບັນດາຂໍ້ມູນທີ່ກ່າວມາຂ້າງເທິງນີ້ ໂດຍວາງງົບປະມານລວມ ແລະ ຕາຕະລາງຈັດຕັ້ງປະຕິບັດ. ບັນຊີ ແລະ ບົດສະເໜີ ຄວນເຮັດເປັນເອກກະສານສົມບູນ ໂດຍປຶກສາຫາລືກັບຜູ້ທີ່ຖືກກະທົບ ແລະການຈັດຕັ້ງ, ສຳນັກງານອົງການ ແລະ ກົມກອງຂອງລັດທີ່ກ່ຽວຂ້ອງ.

ເມື່ອເອກກະສານສົມບູນ ແລະ ທົນຮອນຮັບປະກັນແລ້ວ, ກໍສາມາດນຳຈັດຕັ້ງປະຕິບັດວຽກນີ້ໄດ້.

# ໝວດທີ 10. ການຍົກຍ້າຍ ແລະ ການເອົາ "ດົນປຽນດົນ"

## 10.1 ວິທີການທົ່ວໄປສຳລັບການຍົກຍ້າຍຈັດສັນ

ການຍົກຍ້າຍຈັດສັນຜູ້ທີ່ຖືກກະທົບຈາກໂຄງການ ເປັນວຽກງານໜຶ່ງທີ່ທ້າທາຍພໍສົມຄວນ. ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແລະ ຂໍ້ມູນທີ່ເກັບກຳໄດ້ຈາກການສຳຫຼວດພົນລະເມືອງ, ການຂຶ້ນບັນຊີ ແລະ ການສຳຫຼວດດ້ານເສດຖະກິດ-ສັງຄົມ ເພື່ອກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນຈະເປັນພື້ນຖານໃຫ້ແກ່ຄວາມຕ້ອງການສຳລັບການຍົກຍ້າຍຈັດສັນ. ໂດຍອີງໃສ່ບົດລາຍງານເຫຼົ່ານັ້ນ ແລະ ການປຶກສາຫາລືກັບຜູ້ທີ່ ຖືກກະທົບ, ໂຄງການແມ່ນຕ້ອງໄດ້ຕົກລົງ ກ່ຽວກັບຮູບແບບ, ຄວາມຕ້ອງການ ແລະ ຂະໜາດຂອງການ ຍົກຍ້າຍຈັດສັນ. ເມື່ອເຫັນວ່າມີຄວາມຈຳເປັນຕ້ອງໄດ້ຍົກຍ້າຍ, ທາງເລືອກ ແລະ ສະຖານທີ່ຕ້ອງໄດ້ມີການກຳນົດໂດຍຜ່ານຂະບວນ

ການປຶກສາຫາລື. ຕະຫຼອດໄລຍະເວລາຂອງການປຶກສາຫາລືນີ້ ແຜນງານຕ່າງໆຂອງລັດ ແລະ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ທີ່ກຳລັງຈັດຕັ້ງປະຕິບັດຢູ່ໃນລະດັບທ້ອງຖິ່ນ ແລະ ລະດັບຊາດ ແມ່ນຄວນໄດ້ເອົາມາທົບທວນຄືນ ແລະ ຖ້າມີຄວາມເປັນໄປໄດ້ໃນການເຮັດວຽກຮ່ວມກັນກໍຕ້ອງໄດ້ສຶກສາລົງເລິກຕື່ມ. ບໍ່ດັ່ງນັ້ນ ມັນຈະເປັນການເຮັດວຽກຊ້ຳຊ້ອນກັນ.

ການຍົກຍ້າຍຈັດສັນ ໂດຍທົ່ວໄປແລ້ວແມ່ນຈະໄດ້ດຳເນີນວິທີການ ດັ່ງຕໍ່ໄປນີ້ ໂດຍຕົວຈິງຂຶ້ນກັບຄວາມຕ້ອງການຂອງໂຄງການ:

i. ***ການປ່ຽນແທນທີ່ດິນກະສິກຳ..*** ສຳລັບໂຄງການ ທີ່ມີແຕ່ທີ່ດິນກະສິກຳທີ່ຖືກກະທົບ ແລະ ຜູ້ທີ່ຖືກກະທົບກໍອາໃສຢູ່ກະແຈກກະຈາຍໄປຕາມລວງຍາວເຂດກໍ່ສ້າງຂອງໂຄງການ, ຄວນຫາເອົາທີ່ດິນກະສິກຳມາປ່ຽນແທນ. ທີ່ດິນທີ່ປ່ຽນແທນແມ່ນອາດມີຢັ່ງຢາຍກັນໄປ ຫຼື ມີຢູ່ເປັນຈຸດໜຶ່ງ, ຕົວຈິງແມ່ນຂຶ້ນກັບທີ່ດິນທີ່ມີ ແລະ ຄວາມມັກຄວາມພໍໃຈຂອງຜູ້ທີ່ຖືກກະທົບ.

ii. ***ການສະໜອງທີ່ດິນກະສິກຳປ່ຽນແທນ ບວກກັບການປັບປຸງທີ່ດິນເພື່ອເຮັດການ ຜະລິດອ້ອມແອ້ມ ເຮືອນຊານແລະສິ່ງອຳນວຍຄວາມສະດວກອື່ນໆ ສຳລັບການຍົກຍ້າຍຈັດສັນຊຸມຊົນທີ່ຖືກກະທົບ.*** ໂຄງການທີ່ມີຜູ້ທີ່ຖືກກະທົບເປັນຊາວຊົນນະບົດ, ສຳລັບການຍົກຍ້າຍຈັດສັນໂຄງການຕ້ອງໄດ້ຫາທີ່ດິນກະສິກຳ ແລະ ທີ່ດິນສຳລັບເຮັດການຜະລິດຢູ່ອ້ອມແອ້ມເຮືອນຊານມາໃຫ້ແທນ ແລະ ຕ້ອງໄດ້ປັບປຸງທີ່ດິນໃຫ້ຄົບຖ້ວນ ລວມທັງເສັ້ນທາງພາຍໃນບ້ານ, ທາງໄປມາຫາສູ່ຕະຫຼາດ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ການບໍລິການ. ອີງໃສ່ລັກສະນະຂອງຜົນກະທົບ ແລະ ຄວາມຈຳເປັນໃນໂຄງການ, ບາງທີກໍອາດຫາສິ່ງອຳນວຍຄວາມສະດວກອື່ນໆໃຫ້ ເຊັ່ນ: ທົ່ງຫຍ້າລ້ຽງສັດ, ຫົນທາງໄປຫາເຄື່ອງປ່າຂອງດົງ, ທີ່ດິນສຳລັບປູກໄມ້ກິນໝາກ ແລະ ອື່ນໆ.

iii. ***ການສະໜອງທີ່ດິນປຸກສ້າງ ແລະ ການຄ້າທີ່ໄດ້ຮັບການປັບປຸງແລ້ວຄົບຖ້ວນ ພ້ອມກັບສິ່ງອຳນວຍຄວາມສະດວກ ແລະ ການບໍລິການອື່ນໆ ໃຫ້ແກ່ກຸ່ມຜູ້ທີ່ຖືກກະທົບລວມກັນ.*** ສຳລັບໂຄງການທີ່ມີຜົນກະທົບຕໍ່ທີ່ດິນປຸກສ້າງ, ຈະແມ່ນມີ ຫຼື ບໍ່ມີສິ່ງປຸກສ້າງກໍຕາມ, ໂຄງການຕ້ອງຫາທີ່ດິນປຸກສ້າງ ຫຼື ທີ່ດິນການຄ້າມາປ່ຽນແທນ ຊຶ່ງຂຶ້ນຢູ່ກັບແຕ່ລະກໍລະນີໃຫ້ແກ່ກຸ່ມຜູ້ທີ່ຖືກກະທົບລວມກັນ. ເຂດຍົກຍ້າຍຈັດສັນນັ້ນ ຕ້ອງມີຫົນທາງໄປເຖິງຕະຫຼາດ, ສິ່ງອຳນວຍຄວາມສະດວກ ແລະ ການບໍລິການຕ່າງໆ. ໃນບ່ອນທີ່ເປັນໄປໄດ້, ສະຖານທີ່ຕັ້ງບ້ານເຮືອນໃໝ່ ກໍຄວນໃຫ້ມີໂອກາດພັດທະນາກິດຈະການສ້າງລາຍໄດ້ນຳ.

iv. ***ການສະໜອງທີ່ດິນປຸກສ້າງ ຫຼື ທີ່ດິນການຄ້າໃຫ້ແກ່ຜູ້ທີ່ຖືກກະທົບໃນເຂດທີ່ມີການພັດທະນາ ແລະ ຕະຫຼາດຢູ່ແລ້ວ.*** ໃນກໍລະນີຜູ້ທີ່ຖືກກະທົບອາໃສຢູ່ກະແຈກກະຈາຍບໍ່ສາມາດເຕົ້າໂຮມກັນຢູ່ຈຸດດຽວ, ແລະ ບົນພື້ນຖານຄວາມມັກຄວາມພໍໃຈຂອງເຂົາເຈົ້າ, ອາດຫາທີ່ດິນປຸກສ້າງ ແລະ ບ່ອນເຮັດຮ້ານຄ້າມາປ່ຽນແທນ ແລະ ໃຫ້ຜູ້ທີ່ຖືກກະທົບຢູ່ເຂດບ້ານຢູ່ ແລະ ເຂດຕະຫຼາດທີ່ມີແລ້ວ, ຂຶ້ນກັບແຕ່ກໍລະນີ.

v. ***ຄວາມຈຳເປັນ ແລະ ຕ້ອງການພິເສດຂອງແມ່ຍິງ ຕ້ອງໄດ້ເອົາມາພິຈາລະນາ ແລະ ແກ້ໄຂໃນທຸກດ້ານຂອງແຜນງານ:*** ລວມມີການເລືອກບ່ອນຕັ້ງບ້ານໃໝ່, ບ່ອນປຸກເຮືອນ ແລະ ແບບເຮືອນ, ໂຄງລ່າງພື້ນຖານສ່ວນລວມ, ເສັ້ນທາງໄປເຖິງການບໍລິການ, ການໃຫ້ກຳມະສິດຕໍ່ທີ່ດິນ ແລະເຮືອນ, ການຈ່າຍຄ່າທົດແທນຄ່າເສຍຫາຍ ແລະ ການຟື້ນຟູລາຍຮັບຂອງຄອບຄົວ.

## 10.2 ມາດຖານສຳລັບການຍົກຍ້າຍຈັດສັນ ແລະ ການປ່ຽນເອົາທີ່ດິນມາແທນ

ມາດຖານສຳລັບການຫາທີ່ດິນກະສິກຳ, ທີ່ດິນປຸກສ້າງ ຫຼື ການຄ້ຳມາປ່ຽນແທນ ໃຫ້ແກ່ຜູ້ທີ່ຖືກກະທົບ ໃນເງື່ອນໄຂຊົນນະບົດ ແລະ ຕົວເມືອງຈະມີຄວາມແຕກຕ່າງກັນ ໂດຍຂຶ້ນຢູ່ກັບຄວາມຈຳເປັນຂອງໂຄງການ ແລະ ຄວາມມັກຄວາມພໍໃຈຂອງຜູ້ທີ່ຖືກກະທົບ. ມາດຖານລວມ ແລະ ປະເດັນສະເພາະທີ່ກ່ຽວຂ້ອງກັບການຫາທີ່ດິນກະສິກຳ, ດິນປຸກສ້າງ ຫຼື ການຄ້ຳມາປ່ຽນແທນສັງລວມໄດ້ຄືດັ່ງລຸ່ມນີ້:

### 10.2.1 ມາດຖານທົ່ວໄປ

ຫຼັກການ ແລະ ມາດຖານລວມຈຳນວນໜຶ່ງໃນການຍົກຍ້າຍຈັດສັນ ໄດ້ສັງລວມມີຄືດັ່ງລຸ່ມນີ້:

- ໃນກໍລະນີທີ່ມີຄວາມຈຳເປັນຕ້ອງຍົກຍ້າຍຈັດສັນປະຊາຊົນຈຳນວນຫຼາຍ, ບ່ອນຕັ້ງບ້ານໃໝ່ຄວນມີເງື່ອນໄຂສິ່ງແວດລ້ອມຄ້າຍຄືກັນກັບອັນທີ່ຢູ່ໃນເມື່ອກ່ອນ. ປະຊາຊົນທີ່ເຄີຍດຳລົງຊີວິດໃນເຂດພູດອຍ ໂດຍອາໃສຜະລິດຕະພັນປ່າໄມ້ ຫຼື ການເຮັດໄຮ່ເປັນຕົ້ນ ອາດພົບຄວາມຫຍຸ້ງຍາກທີ່ຈະປັບຕົວເຂົ້າກັບສະພາບທົ່ງພຽງ ຊຶ່ງຕ້ອງມີຄວາມຮູ້ດ້ານກະສິກຳທີ່ແຕກຕ່າງກັນ ຫຼື ສະພາບເຄິ່ງຕົວເມືອງ ຊຶ່ງເປັນສະພາບທີ່ເຂົາເຈົ້າບໍ່ຄຸ້ນເຄີຍ. ຄວາມສ່ຽງທາງດ້ານສິ່ງແວດລ້ອມ ຂອງເຂດບ້ານໃໝ່ທີ່ພວກເຂົາເຈົ້າຈະຄຸ້ມຄອງ ແລະ ຕິດຕາມກວດກາແນວໃດນັ້ນຄວນເອົາມາປຶກສາຫາລືກັບຜູ້ທີ່ຖືກກະທົບ.
- ກ່ອນການຍົກຍ້າຍຈັດສັນ ຄວນໄດ້ປຶກສາຫາລືກັບຜູ້ທີ່ຖືກກະທົບ ກ່ຽວກັບ ທາງເລືອກຕ່າງໆ ແລະ ບ່ອນທີ່ຈະຍ້າຍໄປຢູ່ລວມ ທັງສິ່ງອຳນວຍຄວາມສະດວກຕ່າງໆ ທີ່ພວກເຂົາຈະໄດ້ຮັບ. ຜູ້ທີ່ຖືກກະທົບຄວນໄດ້ຮັບຂ່າວສານຄົບຖ້ວນ ກ່ຽວກັບ ບ່ອນທີ່ຈະຍົກຍ້າຍໄປຢູ່ ແລະ ເມື່ອເປັນໄປໄດ້ຄວນໃຫ້ໂອກາດພວກເຂົາເຈົ້າ ເພື່ອໄປຢ້ຽມຢາມເບິ່ງເຂດອື່ນໆທີ່ເປັນທາງເລືອກກ່ອນທີ່ຈະຕັດສິນໃຈຄັ້ງສຸດທ້າຍ. ເພື່ອຮັບປະກັນໃຫ້ການຕັດສິນໃຈ ໄດ້ດຳເນີນບົນພື້ນຖານ "ມີຄວາມເຂົ້າໃຈ ກ່ຽວກັບທາງເລືອກຕ່າງໆນັ້ນ, ມັນເປັນສິ່ງທີ່ດີຖ້າໄດ້ສ້າງບ້ານຕົວຢ່າງຂຶ້ນ ເພື່ອສາທິດໃຫ້ຜູ້ທີ່ໄດ້ຮັບຜົນກະທົບໄດ້ເຫັນ ກ່ຽວກັບທາງເລືອກສຳລັບສິ່ງອຳນວຍຄວາມສະດວກ ແລະ ການທຳມາຫາກິນຂອງພວກເຂົາເຈົ້າ.
- ຊຸມຊົນເຈົ້າພາບ ແມ່ນມີຄວາມສຳຄັນພໍໆກັນ ແລະ ຄວນໄດ້ມີການປຶກສາຫາລືເຊັ່ນດຽວກັນ. ຍິ່ງໄປກວ່ານັ້ນ, ຊຸມຊົນເຈົ້າພາບ ຄວນມີການບໍລິການພື້ນຖານຕ່າງໆ ຄືກັບສິ່ງທີ່ເຮັດໃຫ້ກັບຄອບຄົວທີ່ຍົກຍ້າຍຈັດສັນເຂົ້າມາຢູ່ນຳ, ນອກນັ້ນ ກໍຕ້ອງມີມາດຕະການເພື່ອເຮັດໃຫ້ຜູ້ທີ່ຍົກຍ້າຍຈັດສັນມານັ້ນ ສາມາດປັບຕົວເຂົ້າເຂົ້າກັບສະພາບຊຸມຊົນເຈົ້າພາບ.

- ໃນຂະບວນການຍົກຍ້າຍຈັດສັນ, ຕ້ອງໄດ້ເອົາໃຈໃສ່ນຳບົດບາດຍິງຊາຍ, ພິເສດຕໍ່ຄວາມຈຳເປັນຂອງຄອບຄົວ ແມ່ຮ້າງນາງໝ້າຍ ແລະ ບັນຫາຂອງກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້. ຄວນເອົາບ່ອນທີ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ມີຄວາມມັກຄວາມພໍໃຈນັ້ນໃຫ້ເຂົາເຈົ້າ ໂດຍສະເພາະເຂດທີ່ຈະໃຫ້ໂອກາດແກ່ເຂົາເຈົ້າສ້າງລາຍຮັບ.

## 10.2.2 ມາດຖານສ¿ລັກັບ¡ານÀອöາê†ດòນ¡ະສò¡¿ມາ¯Èງນ Áêນ

ມາດຖານ ສຳລັບການເອົາທີ່ດິນກະສິກຳມາປ່ຽນແທນ ແລະ ການຍົກຍ້າຍຈັດສັນ ແມ່ນໄດ້ສັງລວມຄືດັ່ງລຸ່ມນີ້:

- ການນຳໃຊ້ວິທີການເອົາ "ດິນປ່ຽນດິນ" ເປັນທາງເລືອກທີ່ຖືວ່າແທດເໝາະທີ່ສຸດ ສຳລັບການທົດແທນທີ່ດິນທີ່ຖືກເວນຄືນຈາກເອກກະຊົນ ຫຼື ຊຸມຊົນ ໃຫ້ໂຄງການພັດທະນາ. ໃນບັນດາປະເທດທີ່ຖືເອົາກະສິກຳເປັນພື້ນຖານສຳລັບການດຳລົງຊີວິດ, ທີ່ດິນປູກຝັງຖືວ່າເປັນຊັບພະຍາກອນທີ່ສຳຄັນກວ່າໝູ່ ສຳລັບຊີວິດການຢູ່ຂອງປະຊາຊົນຈຳນວນສ່ວນຫຼາຍ. ເພາະສະນັ້ນ, ເຈົ້າຂອງໂຄງການຕ້ອງໄດ້ໃຊ້ຄວາມພະຍາຍາມສຸດຂີດ ເພື່ອຊອກຫາທີ່ດິນປູກຝັງທີ່ມີຜະລິດຕະພາບເທົ່າທຽມກັນ ເພື່ອເອົາມາປ່ຽນແທນທີ່ດິນຂອງປະຊາຊົນ ທັງໃຫ້ຢູ່ໃນເຂດທີ່ຜູ້ທີ່ໄດ້ຮັບຜົນກະທົບພໍໃຈ.
- ມາດຖານອັນໜຶ່ງອີກທີ່ສຳຄັນຂອງວິທີການທົດແທນຄ່າເສຍຫາຍດ້ວຍ "ດິນປ່ຽນດິນ" ສຳລັບດິນປູກຝັງທີ່ຖືກກະທົບແມ່ນໃຫ້ທ່າແຮງເທົ່າທຽມກັນກັບຜະລິດຕະພາບຂອງທີ່ດິນປ່ຽນແທນ. ໃນສະພາບທີ່ຫາດິນປູກຝັງຍາກ, ການສະໜອງທີ່ດິນທີ່ຈະໃຫ້ເທົ່າທຽມກັນນັ້ນກໍອາດຈະຫາໄດ້ຍາກ. ໃນສະພາບການດັ່ງກ່າວ, ເຈົ້າຂອງໂຄງການຕ້ອງໄດ້ຊອກຫາທາງເລືອກດີໆ ເພື່ອພັດທະນາທີ່ດິນຕອນໃໝ່ ຫຼື ປັບປຸງຄຸນນະພາບຂອງທີ່ດິນເກົ່າ ໂດຍສະໜອງຊົນລະປະທານ ແລະ ອື່ນໆ. ເຮັດໄດ້ຄືແນວນີ້ມັນ ຈຶ່ງຈະຊ່ວຍຟື້ນຟູຖານະທາງດ້ານເສດຖະກິດ-ສັງຄົມຂອງຜູ້ທີ່ຖືກກະທົບ ໂດຍບໍ່ໄດ້ມີການປ່ຽນແປງວິຖີຊີວິດດັ້ງເດີມ ແລະ ວິທີການທຳມາຫາກິນຂອງເຂົາເຈົ້າ.
- ໃນຊົນນະບົດ, ຜູ້ທີ່ຖືກກະທົບສ່ວນຫຼາຍ ອາດຈະເລືອກເອົາວິທີຫາທີ່ດິນກະສິກຳມາປ່ຽນແທນ ແຕ່ກໍຕ້ອງໃຫ້ທີ່ດິນດັ່ງກ່າວຢູ່ໃກ້ຄຽງກັບທີ່ດິນເດີມ. ໃນກໍລະນີທີ່ທີ່ດິນທີ່ເອົາມາປ່ຽນແທນນັ້ນຫາກຢູ່ໄກບ້ານເຮືອນ, ຕ້ອງໄດ້ເພີ້ມຄ່າເດີນທາງ ແລະ ຄວາມພະຍາຍາມຂອງຊາວກະສິກອນໃນການບົວລະບັດທີ່ດິນດັ່ງກ່າວ. ເມື່ອບໍ່ມີດິນທີ່ເໝາະສົມຢູ່ບ່ອນທີ່ຜູ້ທີ່ຖືກກະທົບສາມາດຮັບເອົາໄດ້ນັ້ນ,ການທົດແທນຄ່າເສຍຫາຍ ອາດຈ່າຍໃຫ້ເປັນເງິນສົດບົນພື້ນຖານທີ່ຜູ້ທີ່ຖືກກະທົບ "ໄດ້ເຂົ້າໃຈຢ່າງຄັກແນ່ ກ່ຽວກັບສິ່ງທີ່ຕົນໄດ້ເລືອກ". ໃນບາງກໍລະນີ, ຄອບຄົວອາດຢາກໄດ້ການທົດແທນເປັນເງິນສົດເພາະມີເຫດຜົນບາງປະການ ເຊັ່ນ: ການແກ່ຍາວໃນການຫາດິນປ່ຽນແທນ, ປະສິດທິພາບຂອງລະບົບບໍລິຫານ, ສະພາບຂອງທີ່ດິນທີ່ສະເໜີປ່ຽນແທນ, ໄລຍະທາງໄປຫາທີ່ດິນ ລວມທັງສິ່ງແວດລ້ອມ. ໃນທຸກກໍລະນີ, ການຕັດສິນໃຈ ວ່າຈະເອົາເງິນ ຫຼື ເອົາດິນແມ່ນຂຶ້ນກັບຜູ້ທີ່ຖືກກະທົບເອງ. ເຖິງຢ່າງໃດກໍຕາມ, ເຈົ້າຂອງໂຄງການ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ຕົວແທນຈາກອົງການຈັດຕັ້ງມະຫາຊົນ ຕ້ອງໃຫ້ຄຳປຶກສາທີ່ເໝາະສົມແກ່ຜູ້ທີ່ຖືກກະທົບດັ່ງກ່າວ ເພື່ອຮັບປະກັນວ່າເງິນທີ່ໄດ້ຮັບໄດ້ເອົາໄປໃຊ້ເພື່ອສ້າງຊັບສິນຕ່າງໆ, ບໍ່ແມ່ນຈະຈ່າຍໄປລ້າໆ.

- ໃນກໍລະນີຄອບຄົວທີ່ຖືກຍົກຍ້າຍມີຈຳນວນໜ້ອຍ, ຕ້ອງໄດ້ພະຍາຍາມຍົກຍ້າຍຈັດສັນໄປຢູ່ບ່ອນເກົ່າ ເພື່ອບໍ່ໃຫ້ສາຍພົວພັນທາງດ້ານສັງຄົມ ແລະ ວັດທະນະທຳຂອງເຂົາເຈົ້າຖືກຕັດຂາດ. ແຕ່ວ່າ, ຖ້າຜູ້ທີ່ຖືກກະທົບຫາກເລືອກຢາກຍົກຍ້າຍໄປເອງ ຫຼື ໄປຢູ່ບ່ອນທີ່ຕົນມັກ, ໂຄງການກໍຕ້ອງຊ່ວຍເຫຼືອພວກເຂົາແທນທີ່ຈະບັງຄັບໃຫ້ເຂົາເຈົ້າຢູ່ໃນບ່ອນ ຊຶ່ງທາງໂຄງການໄດ້ກຳນົດໃຫ້.
- ເຖິງແມ່ນວ່າແຜນງານການຍົກຍ້າຍຈັດສັນປະຊາຊົນ ທີ່ອີງໃສ່ການທົດແທນຄ່າເສຍຫາຍເອົາ "ດິນປ່ຽນດິນ" ຈະມີຜົນດີກວ່າການທົດແທນດ້ວຍສິ່ງອື່ນ, ແຕ່ກໍມີໃນຫຼາຍກໍລະນີບໍ່ສາມາດທີ່ຈະຊອກຫາທີ່ດິນໃຫ້ໄດ້ ສຳລັບອັນທີ່ເໝາະກັບການຜະລິດກະສິກຳ ໂດຍສະເພາະໃນເຂດທີ່ທີ່ດິນປູກຝັງມີຈຳກັດ ແລະ ຄວາມໜາແໜ້ນຂອງປະຊາຊົນສູງ. ໃນສະພາບດັ່ງກ່າວນີ້, ການຝຶກອົບຮົມຍົກລະດັບຄວາມຮູ້ດ້ານອື່ນ, ແຜນສ້າງລາຍຮັບ ແລະ ການເຮັດກະເສດສຸມແມ່ນອາດເປັນທາງເລືອກທີ່ດີ.
- ຖ້າຫາກຜູ້ທີ່ຖືກກະທົບໄດ້ສູນເສຍຊັບພະຍາກອນລວມ ເຊັ່ນ: ທີ່ດິນປ່າໄມ້, ທົ່ງຫຍ້າລ້ຽງສັດ ຫຼື ສາຍນ້ຳ, ພວກເຂົາແມ່ນຕ້ອງໄດ້ຮັບການທົດແທນຄືນເປັນວັດຖຸ. ບັນຫານີ້ແມ່ນການທົດແທນຄ່າເສຍຫາຍດ້ວຍແບບເອົາດິນປ່ຽນດິນ.

### 10.2.3 ມາດຖານສ¿ລກັບ¡ານÀອöາêt ດòນມາ¯Èງນêtດòນ¯÷¡ສÉາງ

ມາດຖານຕົ້ນຕໍສຳລັບການຍົກຍ້າຍບ້ານເຮືອນ ແລະ ການຫາທີ່ດິນມາປ່ຽນທີ່ດິນປຸກສ້າງລວມມີ:

- ການພັດທະນາເຂດປຸກເຮືອນໃໝ່ຕ້ອງຖືເປັນວຽກງານໜຶ່ງແທ້ໆຂອງໂຄງການ. ຂະໜາດຂອງທີ່ດິນສຳລັບປຸກຮືອນຕ້ອງອີງໃສ່ຂະໜາດຂອງເຮືອນໃນເມື່ອກ່ອນ. ດິນປຸກເຮືອນຕ້ອງໃຫ້ມີຂະໜາດເໝາະສົມ ເພື່ອທີ່ຈະໃຫ້ມີບ່ອນມັ່ງມຜົນຜະລິດກະສິກຳ, ບ່ອນເຮັດສວນຄົວ ແລະ ສຳລັບສັດລ້ຽງ.
- ຫາກເປັນໄປໄດ້, ຕ້ອງໃຫ້ຜູ້ທີ່ຖືກກະທົບປຸກເຮືອນຕາມແບບທີ່ຕົນມັກຊອບ ແທນທີ່ຈະເປັນການສ້າງຕາມແບບສະເພາະທີ່ອອກແບບກ່ອນ. ສິ່ງດັ່ງກ່າວຈະເຮັດ ໃຫ້ປະຊາຊົນເພິ່ງຕົນເອງ ແລະ ເປັນເຈົ້າຂອງໃນວຽກຍົກຍ້າຍຈັດສັນ.
- ສະຖານທີ່ ແລະ ຄຸນນະພາບຂອງບ່ອນໃໝ່ ເປັນປັດໄຈສຳຄັນຫຼາຍທີ່ສຸດສຳລັບການປຸກເຮືອນ. ແຕ່ລະບ່ອນລ້ວນແຕ່ມີຂໍ້ຈຳກັດ ແລະ ຈຸດດີຂອງມັນ. ທີ່ດິນທີ່ເອົາມາປ່ຽນດິນປຸກສ້າງຕ້ອງມີລັກສະນະຕ່າງໆທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດຄ້າຍຄືກັນກັບບ່ອນຢູ່ໃນເມື່ອກ່ອນ. ຜູ້ທີ່ຖືກກະທົບ ແລະ ປະຊາຊົນເຈົ້າພາບ ຕ້ອງໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມໃນການຕັດສິນບັນຫາກ່ຽວກັບການເລືອກບ່ອນ, ການວາງຜັງ, ການອອກແບບ ແລະ ການພັດທະນາເຂດນັ້ນ.
- ບ່ອນໃໝ່ ຕ້ອງມີການຄັດເລືອກຢ່າງຮອບຄອບ ເພື່ອໃຫ້ມີທາງອອກສູ່ຕະຫຼາດ ແລະ ມີໂອກາດໃນການຫາລາຍຮັບຢ່າງເໝາະສົມ. ສິ່ງດັ່ງກ່າວ ແມ່ນມີຄວາມສຳຄັນຫຼາຍ ໂດຍສະເພາະໃນເຂດຕົວເມືອງ ຊຶ່ງຄ່າໃຊ້ຈ່າຍທຽວໄປມາຫາຕະຫຼາດ ແລະ ສະຖານທີ່ຕ່າງໆອາດສູງຫຼາຍ.

## 10.3 ມາດຕະຖານລວມ ສຳລັບການຂົນຍ້າຍເຮືອນ ແລະ ຫ້າງຮ້ານ

ປະຊາຊົນຜູ້ທີ່ຖືກກະທົບ ຍ້ອນວຽກງານໂຄງການ ແລະ ມີຄວາມຈຳເປັນຕ້ອງໄດ້ມີການຍົກຍ້າຍຈັດສັນ ອາດມີທາງເລືອກໃນການຍົກຍ້າຍບ້ານເຮືອນແບບໃດແບບໜຶ່ງ. ພວກເຂົາເຈົ້າຄວນມີສິດທິທີ່ຈະໄດ້ຮັບການສະໜັບສະໜູນຈຳນວນໜຶ່ງ. ເຖິງຢ່າງໃດກໍຕາມ, ມັນອາດບໍ່ກຸ້ມຄ່າທາງດ້ານເສດຖະກິດ ສຳລັບການພັດທະນາເຂດບ້ານໃໝ່ທີ່ມີຈຳນວນຜູ້ຍົກຍ້າຍບໍ່ຫຼາຍ. ຄວນມີການກຳນົດຈຳນວນຜູ້ທີ່ຖືກກະທົບບໍ່ຫລາຍ ເພື່ອພັດທະນາເຂດຈັດສັນໃໝ່ ແລະ ຄວນເປັນຊຸມຊົນໜຶ່ງ. ໃນກໍລະນີຄອບຄົວທີ່ໄດ້ກຳນົດໄວ້ບໍ່ຫລວງຫລາຍ, ແຕ່ຢູ່ກະແຈກກະຈາຍກໍບໍ່ໄດ້ໝາຍຄວາມວ່າ ຈະສາມາດພັດທະນາເຂດຈັດສັນໄດ້ໂດຍອັດຕະໂນມັດ. ໃນສະພາບຕົວເມືອງ, ຖ້າມີຜູ້ທີ່ຖືກກະທົບຫຼາຍມີຕ່ຳສຸດເຖິງ 20 ຄົນ (ເຊັ່ນ: ສູນເສຍທີ່ຢູ່ອາໄສ ແລະ/ຫຼື ເສຍທີ່ດິນເປັນຈຳນວນຫຼວງຫຼາຍ) ອາດສາມາດຖືໄດ້ວ່າເປັນຈຳນວນຕ່ຳສຸດໃນສະພາບຕົວເມືອງ. ອັນນີ້ເນື່ອງຈາກວ່າ ລາຄາຂອງສິ່ງອຳນວຍຄວາມສະດວກຕ່າງໆ ລວມທັງນ້ຳປະປາ, ການເຂົ້າອອກ ແລະ ເສັ້ນທາງພາຍໃນ, ສິ່ງອຳນວຍຄວາມສະດວກທາງດ້ານສຸຂະອະນາໄມ ກາຍເປັນບັນຫາທີ່ເປັນໄປໄດ້ຍາກທາງດ້ານເສດຖະກິດ ສຳລັບຊຸມຊົນທີ່ມີຈຳນວນໜ້ອຍຄືແນວນີ້, ນອກຈາກແຕ່ວ່າ ສິ່ງດັ່ງກ່າວມີຢູ່ແລ້ວ. ຕາຕະລາງຂ້າງລຸ່ມນີ້ ໄດ້ສະເໜີບັນດາທາງເລືອກໃນການຍົກຍ້າຍຈັດສັນ ແລະ ການສ້າງສິ່ງທີ່ຈຳເປັນຕ່າງໆໃຫ້ໃນແຕ່ລະທາງເລືອກ.

**ຕາຕະລາງ 2: ທາງເລືອກໃນການຍົກຍ້າຍຈັດສັນ ແລະ ການສະໜັບສະໜູນຕ່າງໆ**

| ທາງເລືອກໃນການຍົກຍ້າຍຈັດສັນ | ແນະນຳສິ່ງທີ່ຕ້ອງໄດ້ໃຫ້ສະໜັບສະໜູນ | | | | |
|---|---|---|---|---|---|
| | **ການທົດແທນຄ່າເສຍຫາຍ** | **ອຸດໜູນການຂົນສົ່ງ** | **ອຸດໜູນການຍົກຍ້າຍຈັດສັນ** | **ການວາງແຜນແລະພັດທະນາເຂດຈັດສັນປະຊາຊົນ** | **ການຊ່ວຍເຫຼືອປະຊາຊົນເຈົ້າພາບ** |
| ບໍ່ໄດ້ຍົກຍ້າຍ | ຕ້ອງມີ | ບໍ່ຈຳເປັນ | ບໍ່ຈຳເປັນ | ບໍ່ຈຳເປັນ | ບໍ່ຈຳເປັນ |
| ຍົກຍ້າຍກັບທີ່ | ຕ້ອງມີ (ຖ້າຊັບສິນເສຍຫາຍ) | ບໍ່ຈຳເປັນ | ຕ້ອງ (ບໍ່ຫຼາຍ) | ບໍ່ຈຳເປັນ | ບໍ່ຈຳເປັນ |
| ຍົກຍ້າຍໄປດ້ວຍຕົນເອງ | ຕ້ອງມີ | ຕ້ອງມີ | ຕ້ອງມີ | ບໍ່ຈຳເປັນມີ | ບໍ່ຈຳເປັນ |
| ຍົກຍ້າຍໄປຢູ່ເຂດໂຄງການຈັດສັນໃຫ້ | ຕ້ອງມີ | ຕ້ອງມີ | ຕ້ອງມີ | ຕ້ອງມີ | ຕ້ອງມີ |

ໃນກໍລະນີ ຍົກຍ້າຍຈັດສັນອອກຈາກບ່ອນຢູ່ເດີມເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້, ການຈັດວາງອົງປະກອບຕ່າງໆ ຕ້ອງໄດ້ມີການອອກແບບເປັນຢ່າງດີເທົ່າທີ່ເປັນໄປໄດ້ ເພື່ອຫຼຸດຜ່ອນຜົນກະທົບຕ່າງໆໃນການຍົກຍ້າຍ. ຄອບຄົວກໍຈະພະຍາຍາມຫຼຸດຜ່ອນຄວາມເຄັ່ງຕຶງ ແລະ ພາລະໜັກໜ່ວງຂອງຕົນດ້ວຍການຍົກຍ້າຍໄປຢູ່ດິນຂ້າງໆ ທີ່ເຫຼືອຢູ່ຖ້າເປັນໄປໄດ້. ບາງຄົນອາດຈະຊອກຫາສະຖານທີ່ຢູ່ດ້ວຍຕົນເອງ. ນອກນັ້ນ, ຜູ້ທີ່ຖືກກະທົບບາງຄົນ ທີ່ສູນເສຍ

ເຮືອນຊານຂອງຕົນໄປກໍອາດຍັງ ມີທີ່ດິນເຫຼືອພໍທີ່ສາມາດປຸກເຮືອນຂຶ້ນມາໄດ້ໃໝ່ອີກ ໂດຍນຳໃຊ້ເງິນທົດແທນທີ່ໄດ້ຮັບຈາກໂຄງການ ທີ່ເອີ້ນວ່າ: *ການຍົກຍ້າຍກັບທີ່ ຫຼື ການສ້າງເຮືອນຢູ່ໃນບ່ອນເກົ່າ.*

## 10.4 ຫຼັກການລວມ ແລະ ຂັ້ນຕອນການວາງແຜນການຍົກຍ້າຍຈັດສັນປະຊາຊົນ

ໃນກໍລະນີຈຳນວນຜູ້ທີ່ຖືກກະທົບ ມີຈຳນວນຫລວງຫຼາຍ ແລະ ມີຄວາມຈຳເປັນຕ້ອງຖືກຍົກຍ້າຍເປັນຊຸມຊົນຫຼືເປັນກຸ່ມ ແມ່ນຕ້ອງໄດ້ຊອກຫາເຂດຈັດສັນໃໝ່ໃຫ້. ບາດກ້າວຕ່າງໆເຫຼົ່ານີ້ ຊຶ່ງລວມທັງການສຳຫຼວດ ແລະ ຂຶ້ນບັນຊີຜູ້ທີ່ຖືກກະທົບກໍຕ້ອງໄດ້ດຳເນີນໃຫ້ຄືກັບວົງຈອນຂອງໂຄງການ. ຖ້າຫາກຈຳເປັນຕ້ອງມີການຍົກຍ້າຍຈັດສັນຕ້ອງໄດ້ເນັ້ນຕື່ມວ່າບໍ່ໃຫ້ເລີ້ມສ້າງໂຄງການຈົນກວ່າຈະໄດ້ຍົກຍ້າຍອອກໄປຢູ່ໃນເຂດຈັດສັນແລ້ວ. ນອກນັ້ນ, ໂຄງການຄວນເອົາໃສ່ເປັນພິເສດໃນການຮັບປະກັນລາຍໄດ້ ແລະ ຊີວິດການເປັນຢູ່ຂອງຄົນໃນຄອບຄົວທີ່ຖືກກະທົບນັ້ນ.

*<u>ການເລືອກເຟັ້ນຜູ້ທີ່ຖືກກະທົບ</u>*

ຄວນກຳນົດສິດທິຢ່າງຮອບຄອບຂອງຜູ້ທີ່ຖືກກະທົບ ທີ່ຈະຍົກຍ້າຍຈັດສັນໄປຢູ່ໃນເຂດໃໝ່. ຜູ້ທີ່ຖືກກະທົບແຕ່ມີເຮືອນຫຼັງທີສອງຢູ່ ຫຼື ມີຄົນໃນຄອບຄົວຢູ່ໃນບໍລິເວນໃກ້ຄຽງແມ່ນມັກຈະປະເຂດທີ່ມອບໃຫ້ໃນເຂດຈັດສັນໃໝ່ນັ້ນເປົ່າຫວ່າງ ຫຼື ເພື່ອເອົາໄວ້ຂາຍ ຫຼື ຈະປຸກເຮືອນໃນຕໍ່ໜ້າ. ໃນກໍລະນີແນວນີ້, ຈຸດປະສົງຂອງການຍົກຍ້າຍຈັດສັນຜູ້ທີ່ຖືກກະທົບດັ່ງກ່າວ ໄປຢູ່ບ່ອນທີ່ມີສະພາບແວດລ້ອມທີ່ດີກວ່ານັ້ນ ຈະບໍ່ໄດ້ຮັບຜົນສຳເລັດ. ຜູ້ທີ່ຖືກກະທົບແຕ່ມີເຮືອນຫຼັງທີສອງຢູ່ ອາດຈ່າຍເປັນເງິນສົດໃຫ້ສຳລັບການສູນເສຍຊັບສິນ.

### 10.4.1 ການຄັດເລືອກພື້ນທີ່

ເຂດຈັດສັນສຳລັບການຍົກຍ້າຍຈັດສັນຄົນໄປຢູ່ນັ້ນຄວນເລືອກຢ່າງຄັກແນ່ ເພື່ອເຮັດໃຫ້ຈຳນວນຜູ້ທີ່ຖືກກະທົບຂັ້ນທີສອງ ແລະ ຄ່າພັດທະນາທີ່ດິນຫຼຸດລົງ. ເຂດທີ່ຈະຈັດເປັນເຂດຈັດສັນນັ້ນ, ຖ້າເປັນໄປໄດ້, ຕ້ອງຢູ່ໃກ້ກັບເສັ້ນທາງເຂົ້າອອກຫາສິ່ງອຳນວຍຄວາມສະດວກຕ່າງໆ ທັງອຳນວຍໂອກາດໃຫ້ແກ່ການດຳເນີນທຸລະກິດ. ສະຖານທີ່ດັ່ງກ່າວ ຄວນໃຫ້ເປັນທີ່ຮັບໄດ້ຈາກຜູ້ທີ່ຖືກກະທົບ.

ຖ້າເປັນໄປໄດ້, ເຂດຈັດສັນໃໝ່ ຄວນຢູ່ໃກ້ກັບບ້ານເກົ່າ. ເຂດດັ່ງກ່າວຄວນເລືອກຢ່າງຄັກແນ່ ເພື່ອຟື້ນຟູເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງຜູ້ຖືກກະທົບ. ມັນມີສອງໄລຍະຈະແຈ້ງ ເພື່ອເລືອກເຂດດັ່ງກ່າວຄື:

1.) **ການຄັດເລືອກບ່ອນ ແລະ ທາງເລືອກອື່ນ** ຊຶ່ງເຈົ້າຂອງໂຄງການພະຍາຍາມຊອກຫາ ແລະ ສົມທຽບຈຸດດີຈຸດອ່ອນຂອງແຕ່ລະເຂດ;

2.) **ການຄັດເລືອກບ່ອນ** ຄວນໄດ້ດຳເນີນການຢ່າງຄັກແນ່ ເພື່ອປະເມີນຄວາມສາມາດຂອງດິນ, ໂດຍສະເພາະໃຫ້ມີບ່ອນປຸກເຮືອນຢູ່ພ້ອມທັງມີເດີ່ນບ້ານ ແລະ ດິນປູກຝັງ. ການສຶກສາພິເສດ ເພື່ອເບິ່ງຄວາມເໝາະສົມ ຂອງເຂດຈັດສັນຜູ້ທີ່ຖືກກະທົບ ມີ:

- ການສຶກສາດ້ານພູມສັນຖານ (ພູມີປະເທດ)
- ການສຶກສາ ກ່ຽວກັບ ດິນ
- ຄວາມອາດສາມາດຮອງຮັບຂອງທີ່ດິນ

- ການສຶກສາດ້ານອຸທົກກະສາດ ເພື່ອໃຫ້ມີນ້ຳສຳລັບສັດລ້ຽງ ແລະ ປູກຝັງ.
- ນອກຈາກນັ້ນ, ການສຶກສາທາງດ້ານສັງຄົມໃນບໍລິເວນໃກ້ຄຽງກໍຄວນເຮັດເພື່ອຮັບປະກັນວ່າ ເຂດຈັດສັນນັ້ນ ຖືກຮັບຮອງເອົາໄດ້ ແລະ ບໍ່ໄດ້ລ່ວງລ້ຳເຂດດິນຂອງປະຊາຊົນເຈົ້າພາບ. ຕ້ອງໃຫ້ຄວາມສຳຄັນສົມຄວນນຳການທວງເອົາທີ່ດິນຂອງຊົນເຜົ່າ.

3.) **ການເຮັດບົດວິພາກເສດຖະກິດບເຕັກນິກແບບລະອຽດ:** ດຳເນີນການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດສຳລັບເຂດທາງເລືອກຕ່າງໆ ແລະ ພິຈາລະນາ ເອົາເຂດທີ່ມີເງື່ອນໄຂສະພາບແວດລ້ອມທົ່ວໄປນັ້ນຄ້າຍຄືກັນ ແລະ ຢູ່ໃກ້ກັບເຂດຂອງໂຄງການ. ຕ້ອງໄດ້ຮັບປະກັນ ວ່າການພັດທະນາເຂດຈັດສັນຈະບໍ່ສ້າງໄພອັນຕະລາຍທຕໍ່ສິ່ງແວດລ້ອມ ຫຼື ມີມົນລະພິດຕໍ່ບໍລິເວນໃກ້ຄຽງທັງບໍ່ໃຫ້ມີຜົນກະທົບທາງລົບຕໍ່ປະຊາຊົນເຈົ້າພາບ. ເມື່ອເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດສຳເລັດແລ້ວ ແລະ ໄດ້ຕັດສິນໃຈ ກ່ຽວກັບບ່ອນຕັ້ງບ້ານໃໝ່ແລ້ວ, ວຽກງານອື່ນໃນຕໍ່ໜ້າທີ່ພົວພັນປະຊາຊົນເຈົ້າພາບ ຕ້ອງດຳເນີນການບົນພື້ນຖານການປຶກສາຫາລືກັບເຂົາເຈົ້າ.

### 10.4.2 ມາດຖານສຳລັບທີ່ດິນທີ່ເອົາມາປ່ຽນແທນ

ກົດໝາຍທີ່ກຳນົດການແບ່ງເຂດ ແລະ ຂະໜາດຕ່ຳຂອງທີ່ດິນທີ່ສາມາດເອົາມາເປັນເຈົ້າຂອງໄດ້ມີການກຳນົດຄວາມແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ ແລະ ກໍມີຄວາມຈຳເປັນທີ່ຕ້ອງໄດ້ກຳນົດໄວ້ໃນແຕ່ລະໂຄງການ. ສຳລັບມາດຕະຖານ ທີ່ໃຊ້ກັນຢູ່ໃນເຂດຕົວເມືອງມີຂະໜາດທີ່ຕ່ຳສຸດ ສຳລັບເຮືອນໃຫຍ່, ເນື້ອທີ່ຕ່ຳສຸດສຳລັບ ປຸກເຮືອນ ຫຼື ທີ່ຢູ່ປະເພດອື່ນໆ. ມາດຖານດັ່ງກ່າວ ຕ້ອງນຳໃຊ້ໃນການກຳນົດຄວາມເໝາະສົມສຳລັບທີ່ດິນສ່ວນທີ່ຍັງເຫຼືອ ແລະ ສາມາດນຳໃຊ້ໄດ້ຕໍ່ໄປໄດ້ພ້ອມທັງຈັດແບ່ງຂະໜາດຂອງດິນທີ່ຈະມາປ່ຽນແທນ.

ທີ່ດິນສຳລັບປຸກເຮືອນ ອາດມີຄວາມແຕກຕ່າງກັນທັງດ້ານຂະໜາດ ແລະ ຮູບຮ່າງລັກສະນະ. ທີ່ດິນຕອນທີ່ໃຫ້ຢູ່ໃນເຂດຈັດສັນອາດບໍ່ສາມາດມີຂະໜາດເທົ່າກັນໝົດໄດ້. ມາດຖານການວາງແຜນໄດ້ຮຽກຮ້ອງໃຫ້ດິນທຸກຕອນມີຂະໜາດໄດ້ຕາມມາດຖານ. ເພາະສະນັ້ນ, ຖ້າທີ່ດິນຕອນທີ່ປ່ຽນໃຫ້ຫາກມີຂະໜາດກວ້າງກວ່າ ທີ່ດິນຕອນເດີມ, ຕາມທຳມະດາແມ່ນຈະບໍ່ໄດ້ຮຽກຮ້ອງໃຫ້ຜູ້ທີ່ຖືກກະທົບຈ່າຍເງິນຄືນໃຫ້. ແຕ່ວ່າຖ້າຕອນດິນທີ່ມອບໃຫ້ຫາກມີຂະໜາດນ້ອຍກວ່າ ດິນຕອນທີ່ຖືກກະທົບ, ຜູ້ທີ່ຖືກກະທົບມີສິດຈະໄດ້ຮັບຄ່າທົດແທນເພີ້ມເປັນເງິນສົດຕາມລາຄາປ່ຽນແທນໃນສ່ວນທີ່ຍັງເຫຼືອຂອງດິນຕອນນັ້ນ.

ໃນສະພາບຂອງເຂດຊົນນະບົດ ທີ່ດິນສຳລັບປູກຝັງ ແລະ ປຸກເຮືອນຢູ່ ຄວນອີງໃສ່ຄວາມສາມາດຮອງຮັບ ແລະ ຜະລິດຕະພາບຂອງດິນ, ແລະ ໃຫ້ມີເນື້ອທີ່ພຽງພໍສຳລັບເຮືອນ, ເລົ້າເຂົ້າ ແລະ ຄອກສັດ. ການສຶກສາທີ່ດຳເນີນການພາຍໃຕ້ໂຄງການຍົກຍ້າຍຈັດສັນຂ້າມເຂດແດນ ທີ່ປະເທດອິນໂດເນເຊຍໄດ້ກຳນົດພື້ນທີ່ຕ່ຳສຸດ ສຳລັບຄອບຄົວຊົນນະບົດ ມີສະມາຊິກໃນຈຳນວນ 4-5 ຄົນ ດິນເປັນບ່ອນຕັ້ງເຮືອນມີ 0,25 ເຮັກຕາ; ດິນປູກຝັງຢູ່ບ່ອນແຫ້ງແລ້ງຈຳນວນ 1,00-1,25 ເຮັກຕາ, ດິນປູກຝັງຢູ່ບ່ອນຊຸ່ມ 0,75 ເຮັກຕາ, ແລະ ດິນປູກໄມ້/ພືດທີ່ສາມາດຂາຍເອົາເງິນມີ 1,75 ເຮັກຕາ.

*<u>ຄ່າໃຊ້ຈ່າຍບໍລິຫານສຳລັບດິນທີ່ເອົາມາປ່ຽນແທນ</u>*

ຄ່າໃຊ້ຈ່າຍຈາກການເອົາດິນມາປ່ຽນແທນ ມີ: ຄ່າພາສີ, ຄ່າຂຶ້ນທະບຽນ, ຄ່າທຳນຽມການສຳຫຼວດ, ຄ່າທຳນຽມອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຕ້ອງໄດ້ຄາດຄະເນໄວ້ໃນເວລາວາງແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ຄ່າໃຊ້ຈ່າຍດັ່ງກ່າວແມ່ນໃຫ້ເປັນພາລະທັງໝົດຂອງໂຄງການ.

## 10.4.3 ປະເພດ ແລະ ມາດຖານ ສຳລັບສິ່ງອຳນວຍຄວາມສະດວກຕ່າງໆ

ການກຳນົດປະເພດ ແລະ ມາດຖານສຳລັບສິ່ງອຳນວຍຄວາມສະດວກຕ່າງໆຕ້ອງໄດ້ຮັບການພິຈາລະນາໃນວົງຈອນຂອງໂຄງການ ເພື່ອໃຫ້ຜູ້ທີ່ຖືກກະທົບໄດ້ຮັບຜົນສະທ້ອນດ້ານລົບໜ້ອຍທີ່ສຸດ. ການຍົກຍ້າຍຈັດສັນທັງໝົດ ຕ້ອງດຳເນີນການໃຫ້ສຳເລັດຢ່າງໜ້ອຍໜຶ່ງເດືອນ ກ່ອນວຽກກໍ່ສ້າງຈະເລີ້ມຕົ້ນ.

ການພັດທະນາເຂດຈັດສັນ ແມ່ນຂັ້ນຕອນສຸດທ້າຍຂອງການຄັດເລືອກ ແລະ ການພັດທະນາເຂດ. ຍ້ອນແນວນັ້ນ, ຂະໜາດຕ້ອງໄດ້ອີງໃສ່ຂະໜາດຂອງຕອນດິນປຸກສ້າງເດີມຂອງຜູ້ທີ່ຖືກກະທົບ. ນອກນັ້ນ, ຄວາມຕ້ອງການຕ່າງໆໃນເຂດບ່ອນຢູ່ໃໝ່ ກໍເປັນມາດຕະຖານໜຶ່ງທີ່ສຳຄັນເພື່ອກຳນົດຂະໜາດຂອງດິນທີ່ຈະມອບໃຫ້ຜູ້ທີ່ຍ້າຍມາຢູ່ໃໝ່ ໃນກໍລະນີທີ່ທີ່ດິນຕອນເກົ່າຫາກມີຂະໜາດນ້ອຍເກີນໄປ. ມັນຄວນມີນະໂຍບາຍເໝາະສົມ ກ່ຽວກັບການສ້າງເຮືອນຢູ່ ຊຶ່ງຜູ້ທີ່ຖືກກະທົບອາດຢາກສ້າງເຮືອນຕາມໃຈຂອງຕົນແທນທີ່ຈະແມ່ນໂຄງ ການກຳນົດໃຫ້.

ການສ້າງສິ່ງອຳນວຍຄວາມສະດວກ ແມ່ນຄວນຮັບປະກັນຄວາມຈຳເປັນທາງດ້ານສິ່ງແວດລ້ອມ ແລະອະນາໄມ. ລະດັບຂອງທາງເລືອກສຳລັບສ້າງສິ່ງອຳນວຍຄວາສະດວກ ກໍຄວນເອົາມາພິຈາລະນາ ເພື່ອຮັບປະກັນວ່າ ສິ່ງດັ່ງກ່າວເທົ່າທຽມກັນໄດ້ກັບສິ່ງທີ່ໄດ້ມີຢູ່ໃນເຂດຈັດສັນທີ່ເຂດໃກ້ຄຽງ. ເມື່ອເປັນໄປໄດ້, ຄວນມີສ່ວນຮ່ວມຂອງຊຸມຊົນໃນການສ້າງສິ່ງອຳນວຍຄວາມສະດວກ. ກ່ອນທີ່ຈະຕັດສິນໃຈເອົາເຂດຈັດສັນປະຊາຊົນ, ຕ້ອງມີການກວດກາພາກສະໜາມ ເພື່ອຮັບປະກັນໃຫ້ມີຄວາມສາມາດສ້າງສິ່ງອຳນວຍຄວາມສະດວກຂັ້ນພື້ນຖານໄດ້. ຄວນໄດ້ມີການພິຈາລະນາຈາກຫຼາຍໆລະດັບ ແລະ ປະເພດຂອງສິ່ງອຳນວຍຄວາມສະດວກ ເຊັ່ນ:

- ນ້ຳ: ນ້ຳສ້າງຕື້ນ, ນ້ຳສ້າງເລິກ, ນ້ຳປະປາ.
- ສຸກຂະອະນາໄມ: ວິດຊຶມແບບລວມ ຫຼື ແບບຂອງໃຜຂອງມັນ.
- ນ້ຳໜ້າດິນ ຫຼື ໃຊ້ລະບົບນ້ຳໃຕ້ດິນ.

ສຸກສາລາ, ໂຮງຮຽນປະຖົມ, ອາຄານຊຸມຊົນ ແລະ ໂຄງສ້າງທາງດ້ານວັດທະນະທຳອື່ນໆ ກໍຕ້ອງໄດ້ສ້າງຂຶ້ນ ໂດຍຂຶ້ນກັບຈຳນວນຄົນທີ່ຕ້ອງຖືກຍົກຍ້າຍຈັດສັນ.

*ການວາງແຜນເຂດຍົກຍ້າຍຈັດສັນ*

ການວາງຜັງ ແລະ ອອກແບບຕ້ອງໃຫ້ສອດຄ່ອງກັບຄວາມຊິນເຄີຍທາງດ້ານວັດທະນະທຳຂອງຜູ້ທີ່ຖືກກະທົບ. ມັນມີຄວາມສຳຄັນທີ່ຕ້ອງໄດ້ເຂົ້າໃຈບັນຫາ ເຊັ່ນ: ມີການພົວພັນແນວໃດລະຫວ່າງຄອບຄົວ, ຄົນໃກ້ຄຽງ ແລະພີ່ນ້ອງໃນເຂດໂຄງການ, ມີການນຳໃຊ້ສິ່ງອຳນວຍຄວາມສະດວກ ແລະ ໂຄງລ່າງພື້ນຖານຕ່າງໆເລື້ອຍປານໃດ ແລະ ໃຜເປັນຜູ້ນຳໃຊ້. ຂໍ້ມູນຂ່າວສານດັ່ງກ່າວ ສາມາດຊ່ວຍໃນການອອກແບບເຂດຍົກຍ້າຍຈັດສັນ. ການປະກອບສ່ວນຂອງຊຸມຊົນ ແມ່ນມີຄວາມສຳຄັນຢ່າງມະຫາສານໃນການອອກແບບ ແລະ ການວາງແຜນ.

ຂະໜາດຂອງດິນແຕ່ລະຕອນຕ້ອງສະໝ່ຳສະເໝີ ແລະ ໃຫ້ມີໜ້ອຍປະເພດ ທີ່ຈະອຳນວຍຄວາມສະດວກໃນການວາງຜັງ. ການວາງຜັງບໍ່ຄວນສິ້ນເປືອງທີ່ດິນ ແລະ ຄວນໃຫ້ສອດຄ່ອງກັບມາດຖານການວາງແຜນທີ່ປະຕິບັດກັນຢູ່. ຫາກຈຳເປັນຕ້ອງໄດ້ປະສານກັບເຂດຕິດກັນ, ຄວາມກວ້າງຂອງເສັ້ນທາງ ຄວນໄດ້ອີງໃສ່ປະກອບສ່ວນຂອງຕອນດິນໃຫ້ຈາກແຕ່ລະຝ່າຍ. ມາດຕະຖານການວາງແຜນດັ່ງກ່າວ ຄວນໃຫ້ສອດຄ່ອງຕາມທີ່ໄດ້ນຳໃຊ້ຢູ່ໃນເຂດໃກ້ຄຽງ.

ຜັງຂອງເຂດຈັດສັນຄວນໄດ້ກະກຽມເປັນຢ່າງດີ ໂດຍຄຳນຶງເຖິງການເພີ້ມຂຶ້ນຂອງພົນລະເມືອງໃນຕໍ່ໜ້າ. ຄວນສະຫງວນເຂດສະເພາະໃດໜຶ່ງໄວ້ ເພື່ອການເພີ້ມຂຶ້ນຂອງພົນລະເມືອງໃນອະນາຄົດ, ຄອບຄົວໃຫຍ່ຄວນໃຫ້ມີພື້ນທີ່ກວ້າງກວ່າ ເພື່ອຮອງຮັບການເພີ້ມຂຶ້ນຂອງຄົນໃນຄອບຄົວ. ນອກນັ້ນ, ກໍຄວນມີມາດຕະການພິເສດ ເພື່ອກຳນົດເຂດຢ່າງເຂັ້ມງວດ ແນໃສ່ຄວບຄຸມການເພີ້ມຂຶ້ນຂອງຄົນ ແລະ ຈຳກັດຜູ້ທີ່ຍ້າຍເຂົ້າມາໃນເຂດນັ້ນ.

ກິດຈະການທີ່ເປັນຮີດຄອງປະເພນີ ແລະ ຄອບຄົວສຳລັບແມ່ຍິງ ກໍຄວນໄດ້ນຳເອົາມາພິຈາລະນາຢ່າງຄັກແນ່ໃນເວລາວາງຜັງເຂດ. ຄວນໃຫ້ເນື້ອທີ່ ທີ່ເໝາະສົມແກ່ແມ່ຍິງ ເພື່ອເຮັດວຽກງານປົກກະຕິຂອງເຂົາເຈົ້າຢູ່ໄກ້ເຮືອນ ເຊັ່ນ: ສວນຄົວ ແລະ ບ່ອນລ້ຽງສັດ. ຄວນໄດ້ມີຄວາມເອົາໃຈໃສ່ ເພື່ອຮັບປະກັນໃຫ້ແມ່ຍິງໄດ້ຮັບຜົນປະໂຫຍດຢ່າງແທ້ຈິງຈາກວຽກຍົກຍ້າຍຈັດສັນ.

### 10.4.4. ບກັນ¹ໆ Áລະ ມາດຕະ¡ານສະÀ²າະÃນ¡ານ¸ໆໆÁຜນຍö¡ຍÉາຍຈກັດສກັນ¯ະຊາຊöນ

*ການປົກປັກຮັກສາ ແລະ ການຄຸ້ມຄອງສິ່ງແວດລ້ອມ*

ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ທີ່ຖືກຍົກຍ້າຍ ແລະ ປະຊາຊົນເຈົ້າພາບ, ຄວນໄດ້ມີມາດຕະການອັນຈຳເປັນ ເພື່ອລວມເອົາການປົກປັກຮັກສາ ແລະ ການຄຸ້ມຄອງສິ່ງແວດລ້ອມເຂົ້າໃນແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ການອອກແບບໂຄງການ. ມາດຕະການຕ່າງໆທີ່ຈຳເປັນໃນການປົກປັກຮັກສາສິ່ງແວດລ້ອມ ແມ່ນຂຶ້ນກັບທີ່ຕັ້ງ ແລະ ປະເພດຂອງໂຄງການ, ແຕ່ມັນຈະມີຄວາມສຳຄັນຫຼາຍ ສຳລັບໂຄງການໄຟຟ້ານ້ຳຕົກ ແລະ ໂຄງການ ກ່ຽວກັບຊັບພະຍາກອນນ້ຳ. ໃນໂຄງການດັ່ງກ່າວມາດຕະການຕ່າງໆອາດປະກອບມີ:

- ແຜນການເພື່ອຄຸ້ມຄອງພື້ນທີ່ປ່າໄມ້ໃຫ້ຍືນຍົງ ຊຶ່ງລວມທັງປ່າໄມ້ໃນເຂດແຫຼ່ງນ້ຳ, ປ່າໄມ້ຊຸມຊົນ ແລະ ປ່າຜະລິດ;
- ແຜນການນຳໃຊ້ທົ່ງຫຍ້າແບບຍືນຍົງໂດຍໃຫ້ຮັບປະກັນວ່າຈຳນວນສັດລ້ຽງບໍ່ເກີນລະດັບຄວາມສາມາດຮອງຮັບຂອງທົ່ງຫຍ້າໃນເຂດຈັດສັນ;
- ມາດຕະການປົກປ້ອງສິດທິຂອງຊຸມຊົນໃນການປະມົງ ແລະ ມາດຕະການຮັກສາຄວາມສົມດູນທາງນິເວດວິທະຍາຂອງປາ ທັງບໍ່ເຮັດໃຫ້ແບບວິທີການທຳມາຫາກິນ ໃນປັດຈຸບັນມີຜົນກະທົບ;
- ພືດ ແລະ ສັດປ່າ ໄດ້ຖືກອະນຸລັກໄວ້ ແລະ ຫາກມີຄວາມຈຳເປັນການລ່າເນື້ອ ຄວນດຳເນີນສະເພາະໃນເຂດທີ່ກຳນົດໄວ້;
- ມີມາດຕະການທີ່ແທດເໝາະເພື່ອປ້ອງກັນການເຊາະເຈື່ອນຂອງດິນໃນເຂດໂຄງການຈາກວຽກກໍ່ສ້າງ. ຍິ່ງກວ່ານັ້ນ, ຍັງຕ້ອງໄດ້ມີມາດຕະການທີ່ເໝາະສົມ ສຳລັບການປົກປັກຮັກສາສິ່ງແວດລ້ອມໃນເຂດຈັດສັນ ແລະ ເຂດບໍລິເວນໃກ້ຄຽງ.

*ການສຶກສາ, ການປັບປຸງການຈັດຕັ້ງໃຫ້ເຂັ້ມແຂງ ແລະ ການສ້າງຄວາມອາດສາມາດ*

ການຍົກຍ້າຍໄປຢູ່ບ່ອນໃໝ່ ອາດສິ່ງຜົນສະທ້ອນຕໍ່ລະບົບການຮຽນຂອງເດັກນ້ອຍ. ດັ່ງນັ້ນ ຄວນໄດ້ເອົາໃຈໃສ່ໃນການສ້າງໂຮງຮຽນຫຼັງໃໝ່ໃຫ້ເດັກນ້ອຍ ຫຼື ເພີ້ມຂະໜາດຄວາມສາມາດຮອງຮັບ ຂອງໂຮງຮຽນເກົ່າທີ່ມີຢູ່ແລ້ວ ໃນບໍລິເວນໃກ້ຄຽງກັບເຂດຈັດສັນ. ມາດຕະການອັນຈຳເປັນເພື່ອປັບປຸງການຈັດຕັ້ງໃຫ້ເຂັ້ມແຂງ ແລະ ການສ້າງຄວາມອາດສາມາດ ມີ:

- ຍົກລະດັບຂອງສະຖາບັນການສຶກສາທີ່ມີຢູ່ ສຳລັບໃຫ້ຜູ້ຍົກຍ້າຍເຂົ້າມາ ແລະ ປະຊາຊົນເຈົ້າພາບ, ລວມທັງການສ້າງຫ້ອງຮຽນໃຫ້ດີຂຶ້ນ, ການສະໜອງວັດຖຸອຸປະກອນການສຶກສາ ແລະ ການຮັບປະກັນໃຫ້ມີຄູສອນພຽງພໍ ແລະ ເຂົາເຈົ້າໄດ້ຮັບການທົດແທນຢ່າງເໝາະສົມ;
- ເລັ່ງໃສ່ການສຶກສາຜູ້ໃຫຍ່ເພື່ອປັບປຸງລະດັບການສຶກສາທົ່ວໄປ ແລະ ຄວາມສາມາດໃນການອ່ານອອກຂຽນໄດ້ ແລະ ຮັບມືກັບການປ່ຽນແປງທາງດ້ານເສດຖະກິດ ແລະ ສັງຄົມ;
- ການຝຶກອົບຮົມລ່ວງໜ້າໃຫ້ມີຄວາມຊຳນິຊຳນານງານ ໃນວຽກງານກໍ່ສ້າງເຂດຍົກຍ້າຍຈັດສັນໃໝ່ ແມ່ນຈະເຮັດໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດຈາກວຽກໄດ້ເຮັດງານທຳໂດຍກົງ ຈາກໂຄງການ ສິ່ງດັ່ງກ່າວຍັງຈະເປັນການສະກັດກັ້ນການລັ່ງໄຫຼເຂົ້າມາຂອງກຳມະກອນ ຈາກທາງນອກພ້ອມ ທັງຜົນກະທົບທາງລົບທີ່ຕາມມາ;
- ການຝຶກອົບຮົມ ກ່ຽວກັບ ກະສິກຳ ຊຶ່ງແມ່ນສ່ວນໜຶ່ງຂອງວຽກງານປັບປຸງຊີວິດການເປັນຢູ່;
- ການໃຫ້ສະໜັບສະໜູນຕໍ່ອົງການຈັດຕັ້ງທ້ອງຖິ່ນ ໂດຍກຳນົດບົດບາດ ແລະ ໜ້າທີ່ຈະແຈ້ງ - ອາດມີການໃຫ້ຂໍ້ມູນຂ່າວສານ ແລະ ຈັດກອງປະຊຸມ ເພື່ອໃຫ້ເຂົ້າໃຈ ກ່ຽວກັບສິ່ງທີ່ຕ້ອງການນັ້ນຢ່າງຖືກຕ້ອງ;
- ການສ້າງຕັ້ງຄະນະກຳມະການຍົກຍ້າຍຈັດສັນປະຊາຊົນຂຶ້ນ ເພື່ອປະສານງານ ລະຫວ່າງ ອົງການປົກຄອງທ້ອງຖິ່ນ, ເຈົ້າຂອງໂຄງການ ແລະ ຜູ້ທີ່ຖືກກະທົບ;
- ການສ້າງຕັ້ງສະມາຄົມພິເສດ ເພື່ອແກ້ໄຂກັບບັນຫາສະເພາະທີ່ອາດເກີດຂຶ້ນໃນການວາງແຜນຍົກຍ້າຍຈັດສັນປະຊາຊົນ ແລະ ແຜນຟື້ນຟູຊີວິດການເປັນຢູ່ ເຊັ່ນ: ສະມາຄົມປ່າໄມ້ບ້ານ, ສະມາຄົມຜູ້ນຳໃຊ້ນ້ຳ, ສະມາຄົມຊາວປະມົງ, ແລະ ອື່ນໆ;
- ການຮັບເອົາອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ອົງການຈັດຕັ້ງຊຸມຊົນເຂົ້າຮ່ວມໃນຖານະຜູ້ອຳນວຍຄວາມສະດວກສຳລັບການຝຶກອົບຮົມ ແລະ ສ້າງຄວາມອາດສາມາດ.

*<u>ບັນຫາສຸກຂະພາບ</u>*

ການຍົກຍ້າຍຈັດສັນໄປຢູ່ບ່ອນໃໝ່ຈະເຮັດໃຫ້ຊຸມຊົນປະເຊີນໜ້າກັບສະພາບແວດລ້ອມໃໝ່ ຊຶ່ງອາດຈະກໍ່ໃຫ້ເກີດບັນຫາສຸກເສີນຈາກພະຍາດໃໝ່ທີ່ສົ່ງຜົນສະທ້ອນຕໍ່ສຸກຂະພາບຂອງພວກເຂົາເຈົ້າ. ມັນມີຄວາມສຳຄັນທີ່ຕ້ອງໄດ້ເກັບກຳຂໍ້ມູນພື້ນຖານ ກ່ຽວກັບ ສຸກຂະພາບໃນໄລຍະກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ຄວນໄດ້ດຳເນີນການສຶກສາດ້ານສັງຄົມ. ອັນທີສອງ, ຄວນມີການສຶກສາຢ່າງເອົາໃຈໃສ່ຕໍ່ຜົນກະທົບ ທີ່ອາດເກີດຂຶ້ນຈາກການກໍ່ສ້າງ ແລະ ບຸກເບີກດິນ. ບາດກ້າວສຳຄັນອັນທີສາມ ໃນການແກ້ໄຂບັນຫາທາງດ້ານສຸກຂະພາບ ຂອງຜູ້ທີ່ຖືກກະທົບທີ່ຖືກຍົກຍ້າຍ ແມ່ນການວາງມາດຕະການຫຼຸດຜ່ອນຜົນກະທົບເພື່ອການທົດແທນ, ຫຼຸດຜ່ອນ ຫຼື ສະກັດກັ້ນຜົນກະທົບທີ່ບໍ່ດີ ແລະ ເພີ້ມຜົນໄດ້ໃຫ້ແກ່ປະຊາຊົນທ້ອງຖິ່ນ. ມັນຍັງມີຄວາມຈຳເປັນທີ່ຕ້ອງມີການຕິດຕາມສະພາບສຸກຂະພາບໃນໄລຍະຍາວ ໂດຍນຳໃຊ້ຂໍ້ມູນພື້ນຖານເພື່ອເຮັດການຕີລາຄາ.

## 10.4.5. ຂ˜ນຕອນ¡ານ¸າງÁຜນສ¿ລກັບÀຂດຍô¡ຍÉາຍຈກັດສກັນ

ບັນດາຂັ້ນຕອນ ແລະ ກິດຈະກຳຕໍ່ໄປນີ້ຄວນຖືກນຳໃຊ້ເວລາຄັດເລືອກສະຖານທີ່ຍົກຍ້າຍຈັດສັນ, ສ້າງແຜນ ແລະ ພັດທະນາແຜນນັ້ນ:

1. ຂຶ້ນບັນຊີຜູ້ທີ່ຖືກກະທົບ ແລະ ຕ້ອງໄດ້ຍົກຍ້າຍ;

2. ຄັດເລືອກເຂດຕ່າງໆທີ່ເປັນທາງເລືອກແລ້ວ ປຶກສາຫາລືກັບຜູ້ທີ່ຖືກກະທົບ ວ່າເຂົາເຈົ້າພໍໃຈເຂດໃດ;
3. ບັນທຶກຄວາມມັກຄວາມພໍໃຈໃນການຍົກຍ້າຍຈັດສັນດ້ວຍວິທີຍົກຍ້າຍ "ເປັນກຸ່ມ" ຫຼື "ເປັນບຸກຄົນ";
4. ກຳນົດເຂດຍົກຍ້າຍຈັດສັນໃຫ້ແລ້ວ ແລະ ດຳເນີນການກວດກາພາກສະໜາມ ເພື່ອຊອກເຫັນສິ່ງອຳນວຍຄວາມສະດວກຕ່າງໆໃນຂັ້ນພື້ນຖານ;
5. ກຳນົດປະເພດ ແລະ ລະດັບຂອງສິ່ງອຳນວຍຄວາມສະດວກແລ້ວແຈ້ງໃຫ້ຜູ້ທີ່ຖືກກະທົບ;
6. ວາງຜັງເຂດຈັດສັນ ແລະ ຄາດຄະເນມູນຄ່າໃນການພັດທະນາມັນ.

## 10.5. ການມີສ່ວນຮ່ວມຂອງມວນຊົນໃນວຽກງານຍົກຍ້າຍຈັດສັນ

ຄວນຮັບປະກັນໃຫ້ມີການປຶກສາຫາລື ແລະ ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບ ແມ່ນຄວນຮັບປະກັນໃຫ້ໄດ້ມີຕະຫຼອດໄລຍະດຳເນີນການວາງແຜນ ແລະ ການພັດທະນາເຂດຍົກຍ້າຍຈັດສັນ. ການມີສ່ວນຮ່ວມຂອງມວນຊົນບໍ່ພຽງແຕ່ຊ່ວຍເຮັດໃຫ້ການຈັດຕັ້ງປະຕິບັດແຜນການມີຄວາມລາບລື່ນເທົ່ານັ້ນ ແຕ່ຍັງເປັນການປ້ອງກັນອະນາຄົດຂອງການພັດທະນາອີກດ້ວຍ.

ການປຶກສາຫາລື ແລະ ການເຂົ້າຮ່ວມຂອງມວນຊົນຢ່າງຕໍ່ເນື່ອງ ແມ່ນເປັນສິ່ງຈຳເປັນເພື່ອກຳນົດການຕັດສິນໃຈຂອງຜູ້ທີ່ຖືກກະທົບຕໍ່ເຂດຍົກຍ້າຍຈັດສັນ, ທາງເລືອກວ່າຈະຍົກຍ້າຍໄປເປັນກຸ່ມ ຫຼື ເປັນບຸກຄົນ ແລະ ຕາຕະລາງການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ການຕັດສິໃຈຂອງຜູ້ທີ່ຖືກກະທົບຕ້ອງໄດ້ບັນທຶກແລະແຈ້ງໃຫ້ຜູ້ກ່ຽວຊາບກ່ອນການປະຕິບັດ. ເພື່ອຮັບປະກັນໃຫ້ຜູ້ທີ່ຖືກກະທົບໄດ້ໄປຢູ່ໃນບ່ອນທີ່ໄດ້ແບ່ງປັນໃຫ້ໃນໄລຍະເວລາອັນຄວນ, ແຕ່ລະຄົນແມ່ນຄວນໄດ້ຂຽນເປັນລາຍລັກອັກສອນວ່າ ຖ້າຫາກຕົນເອງບໍ່ເລີ້ມປຸກສ້າງຢູ່ທີ່ດິນບ່ອນທີ່ແບ່ງໃຫ້ພາຍໃນກຳນົດ 3 ເດືອນ ທີ່ດິນດັ່ງກ່າວຈະຖືກສະຫຼະສິດ. ການຈັດແບ່ງດິນຄວນເລີ້ມຕົ້ນຢ່າງໄວວາ ພາຍຫຼັງທີ່ສິ່ງອຳນວຍຄວາມສະດວກຂັ້ນພື້ນຖານຕ່າງໆໄດ້ສ້າງຂຶ້ນແລ້ວເປັນຕົ້ນ ເຊັ່ນ: ເສັ້ນທາງ, ນ້ຳໃຊ້ ແລະ ສຸກສາລາ.

*ການປຶກສາຫາລືກັບປະຊາຊົນເຈົ້າພາບ*

ເມື່ອການຍົກຍ້າຍຈັດສັນປະຊາຊົນຫາກກ່ຽວຂ້ອງກັບປະຊາຊົນເຈົ້າພາບ, ກໍຄວນໄດ້ພິຈາລະນາຢ່າງເໝາະສົມເຖິງຜົນປະໂຫຍດຂອງພວກເຂົາເຈົ້າ. ການເຊື່ອມໂຍງຜູ້ທີ່ຖືກກະທົບເຂົ້າກັບປະຊາຊົນເຈົ້າພາບບໍ່ແມ່ນເລື່ອງງ່າຍດາຍ ພ້ອມນັ້ນຊຸມຊົນເຈົ້າພາບຫຼາຍຄົນກໍບໍ່ຄ່ອຍຈະສະແດງຄວາມຍິນດີຕ້ອນຮັບແຂກຜູ້ມາຢູ່ໃໝ່ໝົດ. ຄວນໄດ້ມີການເອົາໃຈໃສ່ຕໍ່ປະຊາຊົນເຈົ້າພາບເປັນພິເສດໃນເວລາສ້າງສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອບໍ່ໃຫ້ພວກເຂົາເຈົ້າຮູ້ສຶກວ່າຖືກລະເລີຍໄປ ແລະ ບໍ່ໄດ້ຜົນປະໂຫຍດຫຍັງຈາກໂຄງການ. ໂອກາດວຽກເຮັດງານທຳ, ການນຳໃຊ້ຊັບພະຍາກອນລວມ,ຄວາມກົດດັນທີ່ມີຕໍ່ຊັບພະຍາກອນທຳມະຊາດ ແມ່ນຊີງເຂດທີ່ອາດສ້າງຄວາມຂັດແຍ້ງ ລະຫວ່າງປະຊາຊົນເຈົ້າພາບ ແລະ ຜູ້ໃໝ່ທີ່ເຂົ້າມາຢູ່ນຳ. ປະຊາຊົນເຈົ້າພາບກໍຄວນ ໄດ້ຮັບການຝຶກອົບຮົມ, ໄດ້ວຽກເຮັດງານທຳ ແລະ ໄດ້ຮັບຜົນປະໂຫຍດຄືກັບຜູ້ທີ່ຖືກກະທົບນັ້ນ ເພື່ອບໍ່ໃຫ້ພວກເຂົາເຈົ້າຮູ້ສຶກວ່າຖືກຈຳແນກຈາກໂຄງການ. ສິ່ງດັ່ງກ່າວຈະຊ່ວຍໃຫ້ມີຄວາມຖືກຕ້ອງປອງດອງນຳກັນລະຫວ່າງຜູ້ທີ່ຖືກກະທົບກັບປະຊາຊົນເຈົ້າພາບ.

## ໝວດ 11. ການເຂົ້າຮ່ວມ ແລະ ການປຶກສາຫາລື ກັບມວນຊົນ

### 11.1. ເຫດຜົນ ເພື່ອໃຫ້ຊຸມຊົນເຂົ້າຮ່ວມ

ການເຂົ້າຮ່ວມຂອງມວນຊົນ ແມ່ນຂະບວນການທີ່ບັນດາພາກສ່ວນທີ່ກ່ຽວຂ້ອງເຂົ້າມາມີບົດບາດ ແລະ ຮ່ວມໃນການຄວບຄຸມວຽກການພັດທະນາ, ການຕົກລົງບັນຫາ ແລະ ຊັບພະຍາກອນ ທີ່ສົ່ງຜົນກະທົບໃຫ້ເຂົາເຈົ້າ. ການຕົກລົງເຂົ້າມາມີສ່ວນຮ່ວມຂອງມວນຊົນນັ້ນ ແມ່ນການເລີ້ມຕົ້ນທຳອິດຂອງຂະບວນການເຂົ້າຮ່ວມທັງໝົດໃນວົງຈອນຂອງໂຄງການ.

ດຳລັດ 192 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໄດ້ໃຫ້ທິດທາງຈະແຈ້ງຕໍ່ເຈົ້າຂອງໂຄງການທັງພາກລັດ ແລະ ເອກກະຊົນ ກ່ຽວກັບ ຄວາມຈຳເປັນຕ້ອງດຳເນີນການປຶກສາຫາລື ແລະ ການເຂົ້າຮ່ວມຂອງປະຊາຊົນ ແລະ ມັນມີຄວາມສຳຄັນ ເພື່ອຈະເຮັດໃຫ້ຜູ້ທີ່ຖືກກະທົບເຂົ້າໃຈໂຄງການ ແລະ ອັນສຳຄັນກ່ວານີ້ແມ່ນໃຫ້ເຂົາເຈົ້າໄດ້ມີການເຂົ້າຮ່ວມຕົວຈິງ ແລະ ຫ້າວຫັນໃນການວາງແຜນ ແລະ ຈັດຕັ້ງປະຕິບັດແຜນການດັ່ງກ່າວ.

### 11.2. ການປຶກສາຫາລື ແລະ ການເຂົ້າຮ່ວມ ໃນຖານະເປັນຂະບວນການ ທີ່ມີການຈັດຕັ້ງ

ການເຂົ້າຮ່ວມຂອງມວນຊົນ ແມ່ນຂະບວນການພົວພັນກັນຢ່າງຕັ້ງໜ້າ ແລະ ຕໍ່ເນື່ອງໃນບັນດາກຸ່ມຂອງຜູ້ມີສ່ວນກ່ຽວຂ້ອງ ລວມທັງຊຸມຊົນທີ່ຖືກກະທົບໂດຍກົງ (ທັງດ້ານບວກ ແລະ ດ້ານລົບ), ອົງການຈັດຕັ້ງຂອງລັດ ແລະ ກະຊວງຕ່າງໆ, ທີ່ປຶກສາໂຄງການ, ອົງການຈັດຕັ້ງສັງຄົມ, ອົງການໃຫ້ທຶນສາກົນ. ການມີສ່ວນຮ່ວມຂອງມວນຊົນ ໂດຍທົ່ວໄປແລ້ວແມ່ນກວມເອົາສອງເນື້ອໃນທີ່ສຳຄັນ ຄື: ແລກປ່ຽນຂໍ້ມູນຂ່າວສານ (ເຊັ່ນ ເຜີຍແຜ່ຂໍ້ມູນຂ່າວສານ ແລະ ປຶກສາຫາລື), ຕັດສິນບັນຫາຮ່ວມກັນດ້ວຍຫຼາຍຮູບແບບ (ເຊັ່ນການຮ່ວມມື ຫຼື ການເຂົ້າຮ່ວມ).

*ການເຜີຍແຜ່ຂໍ້ມູນຂ່າວສານ* ໝາຍເຖິງການແຈ້ງຂໍ້ມູນຂ່າວສານຈາກພະນັກງານຂອງໂຄງການ ໄປຫາຜູ້ທີ່ຖືກກະທົບ. ການສະໜອງຂໍ້ມູນທີ່ດີໃຫ້ປະຊາຊົນແຕ່ຫົວທີ ເພື່ອຫຼີກລ້ຽງຄວາມກັງວົນຂອງເຂົາເຈົ້າ, ເຮັດໃຫ້ເຂົາເຈົ້າບໍ່ມີຄວາມເຂົ້າໃຈຜິດ ແລະ ສ້າງຄວາມໄວ້ເນື້ອເຊື່ອໃຈນຳກັນ ເພື່ອຈະເປັນພື້ນຖານສຳລັບການຮ່ວມມືລະຫວ່າງ ຜູ້ທີ່ຖືກກະທົບຍ້ອນໂຄງການ ແລະ ເຈົ້າຂອງໂຄງການ. ການເຜີຍແຜ່ຂໍ້ມູນຂ່າວສານ ຄວນໄດ້ດຳເນີນການໃນແຕ່ລະຂັ້ນຕອນຂອງວົງຈອນໂຄງການ, ຊຶ່ງຈະເຮັດໃຫ້ມີການປະກອບຄຳຄິດຄຳເຫັນໄດ້ຢ່າງ ຕໍ່ເນື່ອງ ແລະ ໃນນັ້ນຊຸມຊົນກໍຈະໄດ້ຮັບຮູ້ການເຄື່ອນໄຫວຕ່າງໆໃນທ້ອງຖິ່ນ ແລະ ທີມງານໂຄງການຈະໄດ້ຮັບຮູ້ຄວາມຫ້າວຫັນຂອງປະຊາຊົນອີກດ້ວຍ.

*ການປຶກສາຫາລື* ໝາຍເຖິງການເວົ້າຈານຳກັນລະຫວ່າງພະນັກງານຂອງໂຄງການກັບຜູ້ທີ່ຖືກກະທົບ, ຊຶ່ງເປັນວິທີການສົ່ງຂ່າວຄືນຈາກຜູ້ທີ່ຖືກກະທົບຫາພະນັກງານຂອງໂຄງການ. ການປຶກສາຫາລືທີ່ມີລະບົບຄືແນວນີ້ຍັງເຮັດໃຫ້ມີການແລກປ່ຽນຄວາມຄິດຄວາມເຫັນນຳກັນ. ການປຶກສາຫາລື ຈະຊ່ວຍເຮັດໃຫ້ມີຄວາມເຂົ້າໃຈບັນຫາຕ່າງໆດີຂຶ້ນ ແລະ ສັງລວມເອົາ "ພູມປັນຍາຂອງຊາວບ້ານ" ເຂົ້າກັບຄວາມຮັບຮູ້ທາງດ້ານວິຊາການ.

ເຖິງແມ່ນວ່າ *ການຮ່ວມມື ແລະ ການເຂົ້າຮ່ວມ* ມັກຈະເປັນຄຳສັບທີ່ໃຊ້ຄຽງຄູ່ກັນໄປ, ແຕ່ສຳລັບການຮ່ວມມືໃນນີ້ຈະມີຄວາມໝາຍແຄບກ່ວາຄືຈະເປັນກົນໄກເພື່ອໃຫ້ໄດ້ມີການຕັດສິນບັນຫາຮ່ວມກັນເທົ່ານັ້ນ (ເຊັ່ນ ຄະນະກຳມະການ ແລະ ສານ). ໃນຂະນະດຽວກັນ, ການເຂົ້າຮ່ວມນັ້ນ ຈະມີຄວາມໝາຍກວ້າງກ່ວາຄືໄປຈົນເຖິງການໃຫ້ສິດແກ່ຜູ້ທີ່ຖືກກະທົບໄດ້ມີການຕົກລົງບັນຫານຳກັນ (ເຊັ່ນ ໄດ້ສະເໜີທາງເລືອກຕ່າງໆໃຫ້). ການເຂົ້າຮ່ວມ

ນີ້ເປັນບາດກ້າວໜຶ່ງ ຊຶ່ງຜູ້ທີ່ຖືກກະທົບຈະມີສ່ວນຄວາມຮັບຜິດຊອບຕໍ່ຊີວິດຂອງເຂົາເຈົ້າເອງ. "ຄວາມຮັບຜິດຊອບ" ແມ່ນຈຸດປະສົງສຸດທ້າຍ ຂອງຂະບວນການມີສ່ວນຮ່ວມ. ອັນນີ້ແມ່ນບ່ອນທີ່ທີມງານໂຄງການ ແລະ ປະຊາຊົນໄດ້ມີການຕັດສິນໃຈເຮັດວຽກຮ່ວມກັນເພື່ອຈຸດປະສົງໂຄງການ.

## 11.3. ຈຸດປະສົງຂອງການໃຫ້ຂໍ້ມູນຂ່າວສານ ແລະການປຶກສາຫາລືກັບມວນຊົນ

ໃນເມື່ອຜູ້ທີ່ຖືກກະທົບແລະອົງການຈັດຕັ້ງທີ່ກ່ຽວຂ້ອງຫາກໄດ້ຮັບການເຜີຍແຜ່ຂໍ້ມູນຂ່າວສານ, ໄດ້ຮ່ວມປຶກສາຫາລື ແລະ ໄດ້ມີສ່ວນຮ່ວມ, ມັນຈະເຮັດໃຫ້ຂໍ້ຂັດແຍ່ງຫຼຸດລົງ, ຫຼຸດຜ່ອນຄວາມສ່ຽງທີ່ຈະເຮັດໂຄງການແກ່ຍາວ ແລະ ເຮັດໃຫ້ເຈົ້າຂອງໂຄງການແກ້ໄຂບັນຫາອັນສຳຄັນຂອງຊຸມຊົນໄດ້ເຊັ່ນ: ການລົບກວນດ້ານສິ່ງແວດລ້ອມ ແລະ ຄວາມສ່ຽງຕໍ່ຊັບພະຍາກອນທ້ອງຖິ່ນ, ຄວາມພໍໃຈໃນການໃຊ້ຈ່າຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູຊີວິດການເປັນຢູ່. ທັງໝົດນີ້ຈະເຮັດໃຫ້ ໂຄງການສາມາດນຳຜົນໄດ້ທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມມາໃຫ້.ຈຸດປະສົງສະເພາະມີດັ່ງນີ້:

1. ເພື່ອແລກປ່ຽນຂໍ້ມູນຂ່າວສານຢ່າງເຕັມສ່ວນ ກ່ຽວກັບ ໂຄງການທີ່ສະເໜີມາພ້ອມດ້ວຍອົງປະກອບຕ່າງໆ, ກິດຈະກຳ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທີ່ກ່ຽວຂ້ອງກັບຜູ້ທີ່ຖືກກະທົບ.
2. ເພື່ອຮັບຂໍ້ມູນຂ່າວສານຢ່າງເຕັມສ່ວນ ກ່ຽວກັບ ຄວາມຕ້ອງການ ແລະ ບູລິມະສິດຂອງຜູ້ທີ່ຖືກກະທົບລວມທັງຂໍ້ມູນຂ່າວສານ ກ່ຽວກັບປະຕິກິລິຍາຕ່າງໆຂອງເຂົາເຈົ້າຕໍ່ນະໂຍບາຍ ແລະ ກິດຈະກຳຕ່າງໆທີ່ສະເໜີມານັ້ນ.
3. ເພື່ອໃຫ້ຂໍ້ມູນຂ່າວສານ ກ່ຽວກັບທາງເລືອກໃນການຍົກຍ້າຍ ແລະ ມາດຕະການຟື້ນຟູຊີວິດການເປັນຢູ່ທີ່ມີຢູ່.
4. ເພື່ອຮັບເອົາການຮ່ວມມື ແລະ ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບ ແລະ ຊຸມຊົນ ໃນກິດຈະກຳຕ່າງໆທີ່ຈະຕ້ອງໄດ້ເຮັດສຳລັບການວາງແຜນ ແລະ ການດຳເນີນການຍົກຍ້າຍຈັດສັນ.
5. ເພື່ອຮັບປະກັນຄວາມໂປ່ງໃສ ໃນທຸກການເຄື່ອນໄຫວຂອງຂະບວນການດຳເນີນງານທີ່ພົວພັນກັບສິ່ງແວດລ້ອມ, ການເວນຄືນທີ່ດິນ, ການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ.
6. ລວມເອົາທັງບັນຫາຂອງແມ່ຍິງເຂົ້ານຳ ແລະ ຮັບປະກັນໃຫ້ເຂົາເຈົ້າປະກອບສ່ວນຢ່າງຫ້າວຫັນໃນການກຳນົດຜົນກະທົບ, ການວາງມາດຕະການຫຼຸດຜ່ອນຜົນກະທົບທີ່ເໝາະສົມແລະ ເຂົ້າຮ່ວມທັງໃນໄລຍະຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການ. ລາຍການຂອງບັນຫາ, ຄຳຖາມ ແລະ ຍຸດທະສາດຕົ້ນຕໍ ເພື່ອເອົາບັນຫາບົດບາດຍິງຊາຍເຂົ້າໃນການປຶກສາຫາລື ແລະ ເຂົ້າຮ່ວມໃນການຍົກຍ້າຍຈັດສັນປະຊາຊົນ ໄດ້ສະເໜີໃນ<u>*ເອກກະສານຄັດຕິດ 23.*</u>

## 11.4. ຄວາມສຳຄັນຂອງການປຶກສາຫາລື ແລະ ການເຂົ້າຮ່ວມໃນການຍົກຍ້າຍ ຈັດສັນ

ບົດຮຽນໄດ້ຊີ້ໃຫ້ເຫັນວ່າແຜນການແບບກົນຈັກ ແລະ ແບບປົກປ້ອງອາດເໝາະສົມ ເພື່ອປ້ອງກັນບໍ່ໃຫ້ປະຊາຊົນທຸກໄດ້ຍາກລົງໃນໄລຍະກະທັນຫັນ. ຢ່າງໃດກໍຕາມ, ແຜນດັ່ງກ່າວອາດບໍ່ແທດເໝາະໃນການຈັດຕັ້ງປະຕິບັດໃນໄລຍະຂ້າມຜ່ານແບບຫ້າວຫັນໄປສູ່ໄລຍະທີ່ເຮັດຜະລິດຕະພາບພື້ນຕົວຄືນໃໝ່ ແລະ ຟື້ນຟູມາດຖານການດຳລົງຊີວິດ. ການເຂົ້າຮ່ວມຂອງມວນຊົນມີຄວາມໝາຍສຳຄັນ ເພາະວ່າຜົນສຳເລັດຂອງການຍົກຍ້າຍຈັດສັນນັ້ນຂຶ້ນກັບປະຕິກິລິຍາຕອບຂານຂອງຜູ້ທີ່ຖືກກະທົບ ຍ້ອນເຫດຜົນສຳຄັນດັ່ງຕໍ່ໄປນີ້:

- ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບເປັນຈຸດສຳຄັນ ເພື່ອເຂົ້າໃຈບູລິມະສິດ ແລະ ຄວາມຕ້ອງການຂອງເຂົາເຈົ້າ ແລະ ກຳນົດທາງເລືອກໃນການຍົກຍ້າຍ ໂດຍໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ຄວາມສາມາດຂອງເຂົາເຈົ້າເອງ ບົນພື້ນຖານການນຳຊັບພະຍາກອນມະນຸດທີ່ມີຢູ່ ລວມທັງຮູບແບບຂອງການຈັດຕັ້ງທາງດ້ານສັງຄົມ.
- ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບ ຈະຊ່ວຍໃຫ້ໂຄງການເຫັນຜົນກະທົບຢ່າງຫຼາກຫຼາຍ ຈາກການຍົກຍ້າຍຈັດສັນປະຊາຊົນ ແລະ ການເວນຄືນຊັບສິນຍ້ອນການກໍ່ສ້າງໂຄງການ ແລະ ທັງໄດ້ເຫັນຜູ້ທີ່ຄາດວ່າຈະໄດ້ຮັບຄວາມເສຍຫາຍຫຼາຍຈາກຜົນກະທົບດັ່ງກ່າວ.
- ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບ ຈະຊ່ວຍໃຫ້ມີການພິສູດຄວາມເປັນຈິງ ແລະ ໃຫ້ການທົດແທນ ແລະ ການບໍລິການມີຄວາມໂປ່ງໃສຫລາຍຂຶ້ນ.
- ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບເປັນປັດໃຈສຳຄັນ ພື່ອໃຫ້ມີຄວາມເປັນເອກະພາບໃນບັນຫາທີ່ບໍ່ສາມາດແກ້ໄດ້ດ້ວຍເຕັກນິກ ເຊັ່ນ ການກຳນົດມາດຖານ ສຳລັບການຕີລາຄາຊັບສິນ ໃນເມື່ອບໍ່ມີລາຄາຕະຫຼາດ, ການເຫັນດີນຳສະຖານທີ່ ຫຼື ຊັບສິນຕ່າງໆເພື່ອທົດແທນຄືນ, ພື້ນຖານເພື່ອໃຫ້ຜູ້ທີ່ຖືກຍົກຍ້າຍສາມາດເຂົ້າໄປຮ່ວມອາໄສຢູ່ ກັບຊຸມຊົນເຈົ້າພາບ ແລະ ການໃຫ້ຄວາມເປັນທຳແກ່ໂຄງການເອງ.
- ການເຂົ້າຮ່ວມຢ່າງຫ້າວຫັນຂອງຜູ້ທີ່ຖືກກະທົບ ໃນການຕັດສິນໃຈຕໍ່ບັນຫາຜົນກະທົບຕໍ່ຊີວິດ ຂອງເຂົາເຈົ້າຈະຊ່ວຍໃຫ້ຫຼຸດຜ່ອນຄວາມສ່ຽງທີ່ຈະເຮັດໃຫ້ເຫັນວ່າຕົນມີປົມດ້ອຍທີ່ຮ້າຍແຮງ ແລະ ທັງຈະຫຼຸດຜ່ອນການຂຶ້ນກັບ ຫຼື ການປັບຕົວເຂົ້າກັບສະພາບແວດລ້ອມໃໝ່ບໍ່ໄດ້.
- ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບຈະເຮັດໃຫເຂົາເຈົ້າມີຄວາມຮັບຜິດຊອບ ຫຼື ມີຄວາມເປັນເຈົ້າການຊຶ່ງຈະເພີ້ມຄວາມເປັນໄປໄດ້ໃນການທີ່ເຮັດໃຫ້ຊັບພະຍາກອນຂອງການຍົກຍ້າຍຈັດສັນ ແລະ ແຜນງານຕ່າງໆຖືກຈັດຕັ້ງປະຕິບັດເປັນທີ່ໜ້າພໍໃຈ ແລະ ມີຄວາມໝັ້ນຄົງ.

## 11.5. ການເຂົ້າຮ່ວມຂອງປະຊາຊົນ ໃນວົງຈອນຂອງໂຄງການ

ການເຂົ້າຮ່ວມ, ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນໃນເຂດໂຄງການ ແມ່ນເລີ້ມມາຕັ້ງແຕ່ເຮັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ຊຶ່ງຢູ່ໃນໄລຍະຕົ້ນຂອງການກະກຽມໂຄງການ. ກິດຈະກຳການປຶກສາຫາລືກັບປະຊາຊົນ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ຜູ້ທີ່ຖືກກະທົບ ແລະ ອົງການປົກຄອງທ້ອງຖິ່ນຊາບ ແມ່ນຈະສືບຕໍ່ໄປຄຽງຄູ່ກັນກັບຄວາມຄືບໜ້າຂອງໂຄງການ. ຜູ້ທີ່ຖືກກະທົບຈະໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບໂຄງການ ແລະ ຂະບວນການຍົກຍ້າຍຈັດສັນໃນໄລຍະກ່ອນ ຫຼື ໃນເວລາກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ໄລຍະຈັດຕັ້ງປະຕິບັດແຜນການດັ່ງກ່າວ, ໂດຍຜ່ານອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມ.

ເຈົ້າຂອງໂຄງການຕ້ອງໄດ້ຮັບປະກັນວ່າອົງການປົກຄອງທ້ອງຖິ່ນ ແລະ ຜູ້ຕາງໜ້າຂອງຜູ້ທີ່ຖືກກະທົບໄດ້ເຂົ້າຮ່ວມໃນຂະບວນການຈັດຕັ້ງປະຕິບັດ ແລະ ຕັດສິນບັນຫາ. ເຈົ້າຂອງໂຄງການຍັງຕ້ອງໄດ້ສືບຕໍ່ປຶກສາຫາລືກັບພະນັກງານ ແລະ ຜູ້ຕາງໜ້າຂອງຜູ້ທີ່ຖືກກະທົບ ໃນຂະບວນການຈັດຕັ້ງປະຕິບັດໂຄງການ. ພ້ອມກັນນັ້ນ, ຕ້ອງຮັບປະກັນໃຫ້ຜູ້ທີ່ຖືກກະທົບໄດ້ເຂົ້າຮ່ວມໃນໄລຍະສຸດທ້າຍຂອງການປະເມີນການທົດແທນຄ່າເສຍຫາຍ,
ການຍົກຍ້າຍຈັດສັນ ແລະ ການຕິດຕາມກວດກາ. ໃນຄວາມເປັນຈິງ, ເຈົ້າຂອງໂຄງການຕ້ອງໄດ້ເຂົ້າໃຈວ່າ ຂັ້ນຕອນການເຂົ້າຮ່ວມຂອງມວນຊົນມັກຊ້ຳຊ້ອນກັນຢູ່ເລື້ອຍໆໃນໄລຍະຕ່າງໆຂອງການກະກຽມ ແລະ ຈັດຕັ້ງປະຕິບັດ

ໂຄງການ. ຄວາມສຳຄັນອີກຢ່າງໜຶ່ງທີ່ຄວນໄດ້ຈົດຈຳຄືຮູບແບບ, ຂັ້ນຕອນ ແລະ ເນື້ອໃນຂອງຂະບວນການເຂົ້າຮ່ວມຂອງປະຊາຊົນ ມີຄວາມແຕກຕ່າງກັນໄປໃນແຕ່ລະໂຄງການ ແລະ ແຕ່ລະສະພາບການດ້ານສິ່ງແວດລ້ອມ ແລະ ສັງຄົມ. ດັ່ງນັ້ນ, ເວລາ ແລະ ທຶນຮອນທີ່ຕ້ອງການ ສຳລັບຂະບວນການຍົກຍ້າຍຈັດສັນປະຊາຊົນກໍມີຄວາມແຕກຕ່າງກັນ. ວຽກງານການເຂົ້າຮ່ວມ ແລະ ການປຶກສາຫາລືກັບປະຊາຊົນທີ່ຈະດຳເນີນໃນວົງຈອນໂຄງການ ໄດ້ສະຫຼຸບໄວ້ໃນ *ເອກສານຄັດຕິດ 24.* ຕົວຢ່າງ ສຳລັບແຜນການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນຂ່າວສານທີ່ສາມາດນຳໃຊ້ກັບທຸກໂຄງການ ແມ່ນໄດ້ສະເໜີໃນ *ເອກະສານຄັດຕິດ 25.*

# ໝວດທີ 12. ການແກ້ໄຂຄຳຮ້ອງທຸກ

## 12.1. ຄຳນຳ

ການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນຈະຖືວ່າບໍ່ສຳເລັດ, ຫາກຜູ້ທີ່ຖືກກະທົບບໍ່ມີຄວາມພໍໃຈນຳການແກ້ໄຂ ແລະ ການທົດແທນຄ່າເສຍຫາຍຕາມກຳນົດເວລາ, ບໍ່ມີຄວາມພໍໃຈຕໍ່ການສະໜັບສະໜູນ ແລະ ການຊ່ວຍເຫຼືອອື່ນໆ ລວມທັງການຟື້ນຟູເສດຖະກິດ ແລະ ການຍົກຍ້າຍຈັດສັນໃນເວລາຈຳເປັນ. ການຈັດຕັ້ງປະຕິບັດກິດຈະກຳການຍົກຍ້າຍຈັດສັນ, ໂດຍສະເພາະໃນໂຄງການໃຫຍ່ທີ່ມີການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດນັ້ນມີຄວາມສະລັບສັບຊ້ອນຫລາຍ ແລະ ອາດມີການຮ້ອງທຸກ ແລະ ການໄກ່ເກ່ຍ. ເຖິງແມ່ນວ່າຈະເປັນໂຄງການນ້ອຍທີ່ມີແຕ່ການເວນຄືນທີ່ດິນໂດຍການຈ່າຍຄ່າທົດແທນ,
ທັງບໍ່ຈຳເປັນປະຕິບັດຕາມຫຼັກການທີ່ກຳນົດໄວ້ໃນ ດຳລັດວ່າດ້ວຍ ການຍົກຍ້າຍຈັດສັນປະຊາຊົນ ແລະ ໃຫ້ສິດທິເພື່ອໄດ້ຮັບການທົດແທນຄ່າເສຍຫາຍກໍຕາມ, ແຕ່ອາດເຮັດໃຫ້ຜູ້ທີ່ຖືກກະທົບມີການຮ້ອງທຸກ ແລະ ມີຂໍ້ຂັດຂ້ອງ ໄດ້ເຊັ່ນດຽວກັນ. ບົດຮຽນໄດ້ຊີ້ໃຫ້ເຫັນວ່າຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງຈາກການຍົກຍ້າຍຈັດສັນປະຊາຊົນສ່ວນໃຫຍ່ມາຈາກຄວາມບໍ່ໂປ່ງໃສ ຫຼື ເຈົ້າຂອງໂຄງການອ່ອນແອ, ມີການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການປຶກສາຫາລືໜ້ອຍ ຫຼື ບໍ່ພຽງພໍກັບປະຊາຊົນ. ເຖິງແມ່ນສິດທິໃນການໄດ້ຮັບຄ່າທົດແທນຄ່າເສຍຫາຍ ແລະ ອັດຕາທົດແທນຈະສອດຄ່ອງກັບ ດຳລັດ 192 ກໍຕາມ, ຖ້າຜູ້ທີ່ຖືກກະທົບຫາກບໍ່ເຂົ້າໃຈໃນທັດ ສະນະນີ້ແລ້ວມັນກໍຈະເຮັດໃຫ້ມີຄວາມສົງໄສ ແລະ ຄຳຮ້ອງທຸກໄດ້ເຊັ່ນດຽວກັນ.

ນອກນີ້, ຂໍ້ຂັດແຍ່ງ ແລະ ຄຳຮ້ອງທຸກ ໃນໂຄງການໃດໜຶ່ງນັ້ນຍັງມີສ່ວນພົວພັນກັບການຂຶ້ນບັນຊີ, ການໃຫ້ສິດທົດແທນ ແລະ ອັດຕາທົດແທນຄ່າຊັບສິນທີ່ຖືກກະທົບ. ຖ້າເຈົ້າຂອງໂຄງການຫາກກະກຽມການຍົກຍ້າຍຈັດສັນປະຊາຊົນມີໂປ່ງໃສ ແລະ ປະດິດສ້າງ, ເຈົ້າຂອງໂຄງການຈະສາມາດລົບລ້າງຫລືຫລຸດຜ່ອນບັນຫາຕ່າງໆ ທີ່ຈະນຳໄປ ເຖິງບ່ອນຮ້ອງທຸກນັ້ນ. ເພື່ອບັນລຸບັນຫານີ້, ບາງມາດຕະການທີ່ຈະຊ່ວຍແກ້ໄຂ ມີດັ່ງນີ້:

1. ກະກຽມການຂຶ້ນທະບຽນ ໂດຍຊ້ອງໜ້າຫົວໜ້າຄອບຄົວ ແລະ ໃຫ້ເຂົາຈົ້າຢັ້ງຢືນຄວາມຖືກຕ້ອງໃຫ້;
2. ແຈ້ງຈຸດປະສົງ, ຜົນກະທົບ, ນະໂຍບາຍ ແລະ ສິດທິທີ່ຜູ້ທີ່ຖືກກະທົບຈະໄດ້ຮັບ ພ້ອມທັງແຈກຢາຍປຶ້ມຂໍ້ມູນຂ່າວສານມວນຊົນ.

## 12.2. ກົນໄກແກ້ໄຂຄຳຮ້ອງທຸກ

ຜູ້ຮັບຜິດຊອບຕົ້ນຕໍເພື່ອແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຂັດແຍ້ງໃນໂຄງການໃດໜຶ່ງແມ່ນຂຶ້ນກັບເຈົ້າຂອງໂຄງການ. ຍ້ອນເຈົ້າໜ້າທີ່ໂຄງການມີຄວາມຮັບຜິດຊອບໃນການສຳຫຼວດຄອບຄົວ, ການຂຶ້ນບັນຊີຊັບສິນ ແລະ ການສຳ

ຫຼວດເສດຖະກິດ-ສັງຄົມ ລວມທັງການກຳນົດສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ, ການອຸດໜູນ ແລະ ການສະໜັບສະໜູນຕ່າງໆ, ຈຶ່ງມີແຕ່ພວກເຂົາເຈົ້າເທົ່ານັ້ນທີ່ສາມາດແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງທີ່ເກີດຢ່າງມີປະສິດທິຜົນ ແລະໃນລະດັບທ້ອງຖິ່ນ.

### 12.2.1. ຄະນະກຳມະການແກ້ໄຂຄຳຮ້ອງທຸກ

ເມື່ອລັດຖະບານຮັບຮອງເອົາໂຄງການ ແລະ ກ່ອນເລີ່ມດຳເນີນກິດຈະກຳການຍົກຍ້າຍຈັດສັນ, ເຈົ້າຂອງໂຄງການ ຕ້ອງສະເໜີຄຳຮ້ອງເປັນທາງການຫາ ອຂນສ ເພື່ອສ້າງຕັ້ງຄະນະກຳມະການແກ້ໄຂຄຳຮ້ອງທຸກໃນແຕ່ລະເມືອງທີ່ໂຄງການນອນຢູ່ ເພື່ອແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງ ກ່ຽວກັບການເວນຄືນທີ່ດິນ, ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຊຶ່ງຜູ້ທີ່ຖືກກະທົບໄດ້ຍົກຂຶ້ນ.

ອຂນສ, ໂດຍປຶກສາຫາລືກັບກະຊວງກ່ຽວຂ້ອງ ຈະໄດ້ສ້າງຕັ້ງຄະນະກຳມະການ ແກ້ໃຂຄຳຮ້ອງທຸກຂຶ້ນໃນແຕ່ລະເມືອງ. ຄະນະກຳມະການດັ່ງກ່າວ ຈະປະກອບດ້ວຍ:

1. ຜູ້ຕາງໜ້າອົງການປົກຄອງທ້ອງຖິ່ນ (ພະນັກງານເມືອງ)
2. ນາຍບ້ານ
3. ຕົວແທນຂອງຜູ້ທີ່ຖືກກະທົບ ນອກຈາກນາຍບ້ານ
4. ເຈົ້າກົກເຈົ້າເຫຼົ່າ ຫຼືຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງບໍ່ຫວັງຜົນກຳໃລ
5. ຜູ້ຕາງໜ້າເຈົ້າຂອງໂຄງການ.
6. ຜູ້ຕາງໜ້າບົດບາດຍິງຊາຍເພື່ອແກ້ໃຂບັນຫາກ່ຽວກັບເພດ(*<u>ເບິ່ງເອກະສານຄັດຕິດ 26</u>* ກ່ຽວກັບລາຍການກວດສອບບັນຫາ, ຄຳຖາມ ແລະ ຍຸດທະສາດສຳຄັນ)

ມັນມີຄວາມຈຳເປັນທີ່ຈຕ້ອງເອົາຜູ້ຕາງໜ້າເຈົ້າຂອງໂຄງການເຂົ້າໃນຄະນະດັ່ງກ່າວ ເພື່ອ ໃຫ້ສະມາຊິກໃນຄະນະໄດ້ຮັບຮູ້ຂໍ້ມູນຂ່າວສານ ກ່ຽວກັບ ບັນຊີຕ່າງໆ, ສິດທິ, ອັດຕາຄ່າທົດແທນ ແລະອື່ນໆ ເພື່ອທົບທວນຄືນຄຳຮ້ອງທຸກສະເພາະໃດໜຶ່ງ.

### 12.2.2. ຂະບວນການແກ້ໄຂຄຳຮ້ອງທຸກ

ຂະບວນການດັ່ງກ່າວ ປະກອບດ້ວຍ:

<u>***ບາດກ້າວທີ 1***</u>: ໃນບາດກ້າວທີ 1, ຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງທີ່ມາຈາກໂຄງການ ໃນລັກສະນະໃດໜຶ່ງພະນັກງານໂຄງການຕ້ອງໄດ້ປະກອບເອກກະສານຢ່າງຄັກແນ່ ແລະ ແກ້ໄຂຜ່ານການປຶກສາຫາລືແບບໂປ່ງໃສ ແລະ ແນໃສ່ແກ້ໄຂບັນຫາຕ່າງໆ ໂດຍມີການເຫັນດີເຫັນພ້ອມນຳກັນໃນລະດັບໂຄງການ ເພື່ອຫຼີກເວັ້ນບໍ່ໃຫ້ນຳເອົາຂໍ້ຂັດແຍ່ງທັງໝົດຂຶ້ນໄປແກ້ໄຂໃນຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຂັ້ນເມືອງ ຫຼື ໃນລະດັບສູງກ່ວານັ້ນ ຫຼື ເອົາຄະດີຂຶ້ນໄປດຳເນີນຢູ່ສານ.ກອງປະຊຸມຕ່າງໆລະຫວ່າງເຈົ້າຂອງໂຄງການ ແລະ ຜູ້ຮ້ອງທຸກຈະຕ້ອງຈັດຂຶ້ນໃນສະຖານທີ່ສາທາລະນະໂດຍມີຜູ້ຕາງໜ້າຜູ້ທີ່ຖືກກະທົບ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ອົງການຈັດຕັ້ງມະຫາຊົນໃນລະດັບທ້ອງຖິ່ນ ແລະ ນາຍບ້ານເຂົ້າຮ່ວມ ເພື່ອຮັບປະກັນຄວາມໂປ່ງໃສ.

ເຈົ້າຂອງໂຄງການຈະຕ້ອງພະຍາຍາມແກ້ໄຂແບບສັນຕິວິທີຕໍ່ຂໍ້ຂັດແຍ່ງ ຫຼື ຄຳຮ້ອງທຸກທີ່ໄດ້ມາ ຈາກຜູ້ທີ່ຖືກກະທົບຈາກໂຄງການ. ຖ້າຊຸມຊົນ ຫລື ຜູ້ທີ່ຖືກກະທົບບໍ່ພໍໃຈກັບຄຳຕົກລົງ ຂອງເຈົ້າຂອງໂຄງການພາຍໃນ 15 ວັນ ນັບແຕ່ມື້ສົ່ງຄຳຮ້ອງທຸກ ຫຼື ການແກ້ໄຂຂອງເຈົ້າຂອງໂຄງການ, ຄຳຮ້ອງທຸກນັ້ນແມ່ນຈະໄດ້ສົ່ງຂຶ້ນຫາຄະນະ

ກຳມະການແກ້ໄຂຂໍ້ຂັດແຍ່ງຂັ້ນເມືອງ. ຕາງໜ້າຜູ້ທີ່ຖືກກະທົບ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ອົງການຈັດຕັ້ງມະຫາຊົນທ້ອງຖິ່ນ ຈະຕ້ອງໄດ້ຮັບປະກັນວ່າ ຄຳຮ້ອງທຸກໄດ້ສົ່ງຂຶ້ນຫາຄະນະກຳມະການຂັ້ນເມືອງແທ້.

**<u>ບາດກ້າວທີ 2</u>**: ຖ້າຜູ້ທີ່ຖືກກະທົບ ບໍ່ໄດ້ຮັບຄຳຕອບຫຍັງຈາກຄະນະກຳມະການໄກ່ເກ່ຍ ພາຍໃນ 20 ວັນ ນັບແຕ່ມື້ສົ່ງຄຳຮ້ອງທຸກຂຶ້ນ ຫຼື ຖ້າບັນຫາຫາກບໍ່ຖືກແກ້ໄຂຈົນເປັນທີ່ພໍໃຈຂອງຜູ້ທີ່ຖືກກະທົບ, ຜູ້ຕາງໜ້າຂອງຜູ້ທີ່ຖືກກະທົບ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ຫຼື ອົງການຈັດຕັ້ງມະຫາຊົນທ້ອງຖິ່ນ ໃນນາມຂອງຜູ້ທີ່ຖືກກະທົບຈະໄດ້ຍື່ນຄຳຮ້ອງທຸກ ໄປຫາສຳນັກງານໃຫຍ່ຂອງເຈົ້າຂອງໂຄງການ ແລະ ອຊນສ. ອົງການຮັບຜິດຊອບໂຄງການ ແລະ ຜູ້ຕາງໜ້າຂອງຜູ້ທີ່ຖືກກະທົບ ແມ່ນຈະໄດ້ຕິດຕາມ ກໍລະນີດັ່ງກ່າວນຳສຳນັກງານ\ໃຫຍ່ຂອງໂຄງການ ແລະ ອຊນສ ໃນນາມຂອງຜູ້ທີ່ຖືກກະທົບ.

**<u>ບາດກ້າວທີ 3</u>**: ຖ້າບັນຫາຫາກຍັງບໍ່ຖືກແກ້ໄຂໄດ້ ພາຍໃນ 20 ວັນ ຫຼັງຈາກສົ່ງເອກະສານຮອດສຳນັກງານໃຫ່ຍຂອງໂຄງການ ແລະ ອຊນສ ແລະ ຕາມການສະເໜີຂອງຜູ້ທີ່ຖືກກະທົບ, ຜູ້ຕາງໜ້າອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ຫຼື ອົງການຈັດຕັ້ງມະຫາຊົນທ້ອງຖິ່ນ ຈະໄດ້ສົ່ງເລື້ອງນີ້ຂຶ້ນສານ ແລະ ຕິດຕາມໂດຍພາກສ່ວນກ່ຽວຂ້ອງ. ການຕັດສິນຂອງສານ ຈະເປັນການຕັດສິນຂັ້ນສຸດທ້າຍ.

ຄ່າໃຊ້ຈ່າຍທາງດ້ານບໍລິຫານ ແລະ ດ້ານກົດໝາຍໃນຂະບວນການແກ້ໄຂຂໍ້ຂັດແຍ່ງນີ້ໃນລະດັບຄະນະກຳມະການ, ສຳນັກງານໃຫຍ່ຂອງໂຄງການ ແລະ ອຊນສ ແລະ ສານນັ້ນເປັນພາລະຂອງໂຄງການ. ຜູ້ທີ່ຖືກກະທົບຈະໄດ້ທວງເອົາຄ່າໃຊ້ຈ່າຍດັ່ງກ່າວນຳໂຄງການ ແລະ ສົ່ງສຳເນົາໃບທວງໜີ້ໄປຫາ ອຊນສ ເພື່ອບັນທຶກໄວ້ ແລະ ຮັບຊາບ.

ເຈົ້າໜ້າທີ່ຂອງໂຄງການຈະຕ້ອງໄດ້ປະກອບເປັນເອກກະສານຢ່າງຄັກແນ່ ສຳລັບຄຳຮ້ອງຟ້ອງຂອງຜູ້ທີ່ຖືກກະທົບ (ຫຼື ບັນທຶກເອົາເນື້ອໃນຫາກຖືກບອກປາກເປົ່າ) ເພື່ອດຳເນີນການໄກ່ເກ່ຍຕາມແຕ່ລະຂັ້ນຕອນ.

### 12.2.3. ວິທີການທີ່ດີ

ເພື່ອເຮັດໃຫ້ຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງມີໜ້ອຍໃນໂຄງການ, ຕົວຢ່າງຂອງວິທີການທີ່ດີມີດັ່ງຕໍ່ໄປນີ້:

1. ເອົາຟອມສຳຫຼວດລະອຽດ ໃຫ້ຜູ້ທີ່ຖືກກະທົບຂຽນຕື່ມໃສ່,
2. ເອົາປຶ້ມຂ່າວສານມວນຊົນ ໃຫ້ຜູ້ທີ່ຖືກກະທົບແຕ່ລະຄົນອ່ານ,
3. ເອົາຟອມທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ຖືກກະທົບແຕ່ລະຄົນຂຽນຕື່ມໃສ່,
4. ຮັບປະກັນວ່າຂໍ້ມູນຂ່າວສານ ກ່ຽວກັບອັດຕາລັດ ແລະ ອັດຕາໃນທ້ອງຕະຫຼາດ ສຳລັບຊັບສິນແຕ່ລະປະເພດທີ່ຖືກກະທົບນັ້ນໄດ້ສົ່ງໃຫ້ຜູ້ທີ່ຖືກກະທົບແລ້ວ.
5. ຜູ້ທີ່ຖືກກະທົບໄດ້ຮັບການປຶກສາຫາລື ກ່ຽວກັບການວາງແຜນ ແລະ ດຳເນີນການຍົກຍ້າຍຈັດສັນປະຊາຊົນ.

ວຽກ ແລະ ກິດຈະກຳເຫົ່ງນີ້ ຈະເຮັດໃຫ້ຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງນັ້ນຫຼຸດລົງ ຫຼື ອາດຫຼີກເວັ້ນໄດ້ໝົດ.

## ï¸ດ 13. ¡ານຕòດຕາມ¡¸ດ¡າ Áລະ¯ະÀມີນຜôນ

### 13.1. ຈຸດປະສົງ ຂອງການຕິດຕາມກວດກາ

ຈຸດປະສົງຂອງການຕິດຕາມກວດກາ ແມ່ນເພື່ອຕ້ອງການຮູ້ຜົນຂອງການຈັດຕັ້ງປະຕິບັດ ແລະ ຊອກເບິ່ງບັນຫາຄ້າງຄາ ແລະ ຜົນສຳເລັດຂອງມັນ ໃນຕອນຕົ້ນໆເພື່ອສະດວກໃນການດັດປັບການຈັດຕັ້ງປະຕິບັດໃຫ້ທັນເວລາ. ການຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນປະຊາຊົນມີຄວາມສຳຄັນພິເສດຕໍ່ໂຄງການທີ່ມີການຍົກຍ້າຍຈັດສັນແບບບໍ່ເຕັມໃຈ ຍ້ອນມີເຫດຜົນຫລາຍຢ່າງຄື: (i) ການຍົກຍ້າຍຈັດສັນປະຊາຊົນເປັນວຽກພື້ນຖານທີ່ມີຄວາມສຳຄັນຫຼາຍຕໍ່ໂຄງການ ແລະ ອາດເຮັດໃຫ້ມີການແກ່ຍາວເວລາໄປຫຼາຍ; (ii) ມັນແຕະຕ້ອງຊີວິດການເປັນຢູ່ຂອງປະຊາຊົນໂດຍກົງ ແລະ ອາດເຮັດໃຫ້ມີຄວາມຫຍຸ້ງຍາກຫຼາຍຂຶ້ນ; (iii) ມັນແມ່ນກົນໄກຕົ້ນຕໍໃນການເຕືອນການນຳຂັ້ນຕ່າງໆ ກ່ຽວກັບການແກ່ຍາວເວລາ ແລະ ບັນຫາໃນການຈັດຕັ້ງປະຕິບັດໂຄງການ.

### 13.2. ການຊີ້ນຳແລະການຕິດຕາມກວດກາ

ເພື່ອຮັບປະກັນການເວນຄືນທີ່ດິນ, ວຽກຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດໄດ້ດຳເນີນໄປຕາມແຜນການຍົກຍ້າຍຈັດສັນປະຊາຊົນ, ວຽກງານຕິດຕາມກວດກາ ແລະ ຊີ້ນຳ ຈຶ່ງເຫັນວ່າມີຄວາມສຳຄັນ ແລະ ຕ້ອງໄດ້ດຳເນີນຕະຫຼອດອາຍຸການຂອງໂຄງການ. ການຕິດຕາມກວດກາ ແລະ ການຊີ້ນຳມີການພົວພັນກັນ, ແຕ່ເປັນວຽກທີ່ແຍກກັນອອກຢ່າງຊັດເຈນ. ການຕິດຕາມກວດກາ ກ່ອນອື່ນໝົດແມ່ນຕິດພັນກັບການນຳໃຊ້ຂໍ້ມູນຂ່າວສານຢ່າງເປັນລະບົບ ເພື່ອຕີລາຄາວ່າແຜນການນັ້ນໄດ້ຮັບການຈັດຕັ້ງປະຕິບັດໄດ້ດີຫຼາຍປານໃດ. ຂໍ້ມູນຂ່າວສານທີ່ໄດ້ຈາກການຕິດຕາມກວດກາ ຈະປະກອບສ່ວນໃນການກຳນົດບັນຫາ ທີ່ຕ້ອງການໃຫ້ມີການດັດປັບໃຫ້ຖືກກັບແຜນການຍົກຍ້າຍຈັດສັນນັ້ນເອງ. ຂະບວນການດັ່ງກ່າວນີ້ ຈະມີຫລາຍພາກສ່ວນເຂົ້າຮ່ວມດຳເນີນການ. ຕາມຮູບແບບງ່າຍໆ, ພາກສ່ວນເຫຼົ່ານີ້ ອາດຈັດໄດ້ດັ່ງນີ້:

| | ການຊີ້ນຳ | ການຕິດຕາມກວດກາ |
|---|---|---|
| ພາຍໃນ | ການນຳຂອງກະຊວງຮັບຜິດຊອບ | ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ ຈາກຂະແໜງການສາຍຕັ້ງ, ຖ້າມີ |
| ພາຍນອກ | ອົງການຮັບຜິດຊອບ ດ້ານລະບຽບກົດໝາຍ | ທີ່ປຶກສາ/ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ/ສະຖາບັນການສຶກສາ |

ຄວາມສຳຄັນຂອງການລາຍງານຢ່າງປົກກະຕິ ກ່ຽວກັບຄວາມຄືບໜ້າທາງດ້ານການເງິນ ແລະ ວິຊາການ ຊຶ່ງແມ່ນໜ້າທີ່ພື້ນຖານຂອງການຄຸ້ມຄອງໂຄງການ, ບໍ່ຄວນໃຫ້ມີລັກສະນະລວມເກີນໄປ. ຜູ້ຈັດການໂຄງການທີ່ຮັບຜິດຊອບນັ້ນ ແມ່ນຫວັງຈະໄດ້ຄຳເຫັນກັບຄືນ ກ່ຽວກັບການລົງທຶນ, ກະແສເງິນແລະການໃຫ້ການບໍລິການ. ຄວາມຄືບໜ້າດັ່ງກ່າວນັ້ນ ແມ່ນຕ້ອງໄດ້ລາຍງານໄປຕາມແຜນດຳເນີນງານ ທີ່ໄດ້ກຳນົດຕາຕະລາງເວລາໄວ້ (ຕາມທຳມະດາມັນສະແດງອອກໃນແຜນຈັດຕັ້ງປະຕິບັດໂຄງການ, ຫຼືເປັນຮູບວາດ ແລະ ຕາຕະລາງຕ່າງໆ). ການກຳນົດ ແລະ ການນຳໃຊ້ຕົວຊີ້ວັດສຳລັບການຕິດຕາມກວດກາດ້ານປະລິມານ ແມ່ນຈະເປັນເຄື່ອງມືທີ່ດີ ເພື່ອຕິດຕາມກວດ

ກາລັກສະນະຂອງໂຄງການ. ຢ່າງໃດກໍຕາມ, ບັນຫາຜົນກະທົບທາງດ້ານ ເສດຖະກິດ-ສັງຄົມ, ແມ່ນເຫັນວ່າມີຄວາມຈຳເປັນຕ້ອງໄດ້ປະເມີນທາງດ້ານຄຸນນະພາບເພີ່ມເຕີມ.

***ບົດບາດຂອງຜູ້ທີ່ຖືກກະທົບ ໃນການຕິດຕາມກວດກາ:*** ກົນໄກເພື່ອເຮັດໃຫ້ຜູ້ທີ່ຖືກກະທົບ ໄດ້ມີບົດບາດໃນຂະບວນການຕິດຕາມກວດກາ ແມ່ນມີຄວາມຈຳເປັນເພື່ອເຮັດໃຫ້ການຕິດຕາມກວດກາໂຄງການລວມມີຜົນສຳເລັດ. ການສະແດງຄວາມສົນໃຈ, ຄວາມຄິດການຮັບຫຼືປະຕິເສດ ກິດຈະກຳຂອງໂຄງການຈາກຜູ້ທີ່ຖືກກະທົບ ແມ່ນມີຄວາມສຳຄັນຫຼາຍ ເພື່ອໃຫ້ໂຄງການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດ. ກອງປະຊຸມປະຈຳເດືອນ, ການປຶກສາຫາລືໃນກຸ່ມທີ່ເປັນຈຸດສຸມຫຼືຂະບວນການ ທີ່ມີການເຂົ້າຮ່ວມຂອງມວນຊົນທີ່ດຳເນີນຄືແນວນີ້ ແມ່ນເປັນສ່ວນໜຶ່ງຂອງຍຸດທະສາດຈັດຕັ້ງປະຕິບັດໂຄງການ ແລະ ເປັນທັງຄວາມຮັບຜິດຊອບຂອງອົງການທີ່ຈັດຕັ້ງປະຕິບັດ. ນອກຈາກການພົວພັນລະຫວ່າງກະຊວງຮັບຜິດຊອບ ກັບຜູ້ທີ່ຖືກກະທົບແລ້ວ ແມ່ນຄວນໄດ້ວ່າຈ້າງທີ່ປຶກສາພາຍນອກມາປະສານສົມທົບ ພົວພັນກັບຜູ້ທີ່ຖືກກະທົບ ໃນໄລຍະເຮັດການຕິດຕາມກວດກາ ແລະ ພິສູດຜົນໄດ້ຕ່າງໆທີ່ໄດ້ມາຈາກການລາຍງານພາຍໃນຂອງໂຄງການ. ບົດບັນທຶກກອງປະຊຸມ ແມ່ນຄວນໄດ້ເຮັດ ແລະບັນຫາຕົ້ນຕໍທີ່ຍົກຂຶ້ນ ກໍຄວນໄດ້ຮັບການພິຈາລະນາເປັນຢ່າງດີ. ການສຳຫຼວດທີ່ເປັນລະບົບແມ່ນຄວນໄດ້ດຳເນີນການຫລາຍຂຶ້ນ, ບາງເທື່ອກໍ່ເຮັດເປັນປະຈຳປີ ເພື່ອມີຂໍ້ມູນທາງດ້ານປະລິມານ ກ່ຽວກັບຜົນກະທົບເບື້ອງຕົ້ນຈາກໂຄງການ.

***ຕົວຊີ້ວັດສຳລັບການຕິດຕາມກວດກາ:*** ຄວນສອດຄ່ອງກັບແຕ່ລະໄລຍະຂອງຂະບວນການ ຊຶ່ງອາດແຕກຕ່າງກັບໄລຍະຕ່າງໆຂອງວົງຈອນໂຄງການ. ຕາຕະລາງ 2 ລຸ່ມນີ້. ໄດ້ສະເໜີຕົວຊີ້ວັດຂອງການຕິດຕາມກວດກາຊຸດໜຶ່ງ ສຳລັບການຍົກຍ້າຍຈັດສັນປະຊາຊົນ. ຢ່າງໃດກໍຕາມ, ຕົວຊີ້ວັດຊຸດດຽວນີ້ ແມ່ນອາດບໍ່ເໝາະກັບທຸກໆສະພາບການ. ມັນມີຄວາມຈຳເປັນທີ່ຕ້ອງມີຕົວຊີ້ວັດສະເພາະໂຄງການ ເພື່ອສ່ອງແສງເຖິງກິດຈະກຳ ແລະ ກົນໄກການຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງ.

### ຕາຕະລາງ 2 ຕົວຊີ້ວັດຜົນງານລວມ ຂອງການຍົກຍ້າຍຈັດສັນປະຊາຊົນ

| ລາຍການ | ຂະໜາດຂອງຂະບວນການຍົກຍ້າຍຈັດສັນປະຊາຊົນ | ຕົວຊີ້ວັດ | ສິ່ງທີ່ຢັ້ງຢືນຄວາມຖືກຕ້ອງ |
|---|---|---|---|
| ການລົງທຶນ | ການຈັດຕັ້ງ | ພະນັກງານ ທີ່ມີຄວາມຊຳນານງານ ໄດ້ຖືກປະກອບເຂົ້າ | ບົດລາຍງານປະຈຳງວດ ກ່ຽວກັບການຕິດຕາມກວດກາ ພາຍໃນ |
| | ການຈັດຕັ້ງ | ອຸປະກອນມີແລ້ວ | ບົດລາຍງານປະຈຳງວດ ກ່ຽວກັບການຕິດຕາມກວດກາ ພາຍໃນ |
| | ການຈັດຕັ້ງ | ການເງິນມີແລ້ວ | ບົດລາຍງານປະຈຳງວດ ກ່ຽວກັບການຕິດຕາມກວດກາ ພາຍໃນ |
| ຂະບວນການ | ຂໍ້ມູນຂ່າວສານໃຫ້ຜູ້ທີ່ຖືກກະທົບ | ຂໍ້ມູນຂ່າວສານ ໄດ້ຖືກເຜີຍແຜ່ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| | ການສ້າງຄວາມສາມາດ | ຝຶກອົບຮົມຜູ້ທີ່ໄດ້ຮັບຜົນກະທົບ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |

| | | | |
|---|---|---|---|
| | ການປຶກສາຫາລື ແລະການເຂົ້າຮ່ວມ | ກອງປະຊຸມຈັດແລ້ວ ແລະຄະນະກຳມະການຖືກສ້າງຂຶ້ນ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| ຜົນທີ່ໄດ້ຮັບ | ການທົດແທນຄ່າເສຍຫາຍ | ຄ່າທົດແທນຈ່າຍແລ້ວ ສຳລັບຊັບສິນທີ່ເວນຄືນ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| | ການເວນຄືນ | ຊັບສິນເວນຄືນແລ້ວ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| | ການທົດແທນຄ່າເສຍຫາຍ | ຊັບສິນຂອງຊຸມຊົນໄດ້ສ້າງແທນແລະເຂດຍົກຍ້າຍຈັດສັນ ໄດ້ກະກຽມ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| | ການຍົກຍ້າຍຈັດສັນຜູ້ທີ່ຖືກກະທົບ | ການຍົກຍ້າຍສຳເລັດແລະເງິນຊ່ວຍເຫຼືອຈ່າຍແລ້ວ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| | ການຟື້ນຟູເສດຖະກິດ | ວຽກເຮັດງານທຳ/ທຸລະກິດ/ລາຍຮັບ ມີແລ້ວ | ການຕິດຕາມກວດກາ ພາຍໃນ ແລະ ຈາກພາຍນອກ |
| ຜົນກະທົບ | ຜົນໄດ້ຮັບ | ລາຍຮັບ ຟື້ນຟູແລະປັບປຸງ | ການຕິດຕາມກວດກາ ຈາກພາຍນອກ |
| | ຜົນໄດ້ຮັບ | ມາດຕະຖານຊີວິດ ຟື້ນຟູແລະປັບປຸງ | ການຕິດຕາມກວດກາ ຈາກພາຍນອກ |

***ການສຶກສາວິໄຈ*** ສ່ວນຫຼາຍ ເປັນການສຶກສາທີ່ເຮັດຂຶ້ນສະເພາະ ເພື່ອແກ້ໄຂບັນຫາທີ່ຊີ້ແຈງໃນບົດລາຍງານຢ່າງເປັນປົກກະຕິ. ຕົວຢ່າງກໍຄືການສຳຫຼວດຕະຫຼາດ ເພື່ອປະເມີນຄວາມເປັນໄປໄດ້ ສຳລັບການຍົກລະດັບຄວາມຊຳນິຊຳນານງານສຳລັບວິຊາຊີບໃດໜຶ່ງ ໃນຂະບວນການຟື້ນຟູເສດຖະກິດ ຫຼືການສຶກສາເບິ່ງເຫດຜົນວ່າເປັນຫຍັງຜູ້ທີ່ຖືກກະທົບ ຈຶ່ງບໍ່ຍອມຮັບເອົາບາງທາງເລືອກ ຫຼືບໍ່ຮັບແຜນການຍົກຍ້າຍຈັດສັນປະຊາຊົນ. ການສຶກສາດັ່ງກ່າວ ແມ່ນຈະໃຫ້ຄຳແນະນຳກ່ຽວກັບການເຄື່ອນໄຫວໃດໜຶ່ງເພື່ອແກ້ໄຂຂໍ້ຂາດຕົກບົກຜ່ອງ ໂດຍສະເພາະ ການເຄື່ອນໄຫວ ທີ່ບໍ່ສາມາດຄາດຄະເນ ໄດ້ໃນໄລຍະວາງແຜນ. ການສຶກສາວິໄຈ ແມ່ນຍັງໄດ້ກວມລວມເອົາທັງ ການສຶກສາຕະຫຼາດ ເພື່ອໃຫ້ຮູ້ວ່າອັດຕາທີ່ເຈົ້າຂອງໂຄງການກຳນົດມາທົດແທນຄ່າເສຍຫາຍນັ້ນ ມີຄວາມສອດຄ່ອງກັບອັດຕາໃນຕະຫຼາດ ແລະ ທົດແທນໃນມູນຄ່າປ່ຽນແທນໄດ້ຫຼືບໍ່. ການສຶກສາວິໄຈ ແມ່ນຄວນດຳເນີນຕັ້ງແຕ່ຫົວທີເທົ່າທີ່ຈະເຮັດໄດ້ແລະເຮັດໃຫ້ໄວທີ່ສຸດ ເພື່ອເຮັດໃຫ້ມີການປັບປຸງແຜນການ ແລະ ຂັ້ນຕອນນຳເອົາຜົນໄດ້ມາໃຫ້ຜູ້ທີ່ຖືກກະທົບຫຼາຍທີ່ສຸດ.

ບັນຫາບົດບາດຍິງຊາຍ ກໍແມ່ນມີຄວາມສຳຄັນ ແລະ ຄວນສັງລວມເຂົ້າໃນວຽກງານຕິດຕາມກວດກາ ແລະ ຕີລາຄາ. ລາຍການກວດສອບການສັງລວມເອົາບັນຫາບົດບາດຍິງຊາຍເຂົ້າໃນກິດຈະກຳຕິດຕາມກວດກາ ແລະ ຕີລາຄາ ແມ່ນມີໃນ <u>*ເອກກະສານຄັດຕິດ 27.*</u>

## 13.3. ການຕິດຕາມກວດກາ ພາຍໃນ

ໃນໄລຍະກະກຽມໂຄງການ ແລະ ກໍຄືເປັນພາກສ່ວນໜຶ່ງຂອງແຜນການຍົກຍ້າຍຈັດສັນປະຊາຊົນ, ອົງການຈັດຕັ້ງປະຕິບັດ ແມ່ນຕ້ອງໄດ້ວາງກອບ ສຳລັບການຕິດຕາມກວດກາ ແລະ ການລາຍງານກ່ຽວກັບວຽກຍົກຍ້າຍຈັດ

ສັນປະຊາຊົນ. ບັນຫາສຳຄັນຢູ່ໃນນີ້ ແມ່ນການສຳຫຼວດຜູ້ທີ່ຖືກກະທົບແລະການຂຶ້ນບັນຊີຊັບສິນ ທີ່ເປັນພື້ນຖານສຳລັບການສ້າງແຜນການຍົກຍ້າຍຈັດສັນປະຊາຊົນ ເພື່ອທີ່ຈະໄດ້ຮັບຮອງເອົາ. ໜ່ວຍງານໂຄງການ ທີ່ຮັບຜິດຊອບລາຍງານວຽກຍົກຍ້າຍຈັດສັນປະຊາຊົນ (ໜ່ວຍງານຍົກຍ້າຍຈັດສັນປະຊາຊົນຂອງໂຄງການ, ຖ້າມີ) ແມ່ນຈະຕິດຕາມກວດກາຄວາມຄືບໜ້າ ໃນການສ້າງ ແລະ ຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ ແລະຈະເປັນຜູ້ເຮັດບົດລາຍງານຄວາມຄືບໜ້າ ຢ່າງສະໝ່ຳສະເໝີ, ທັງຈະໄດ້ຕິດຕາມຕົວຊີ້ວັດທາງດ້ານການເງິນ, ການລົງທຶນ ແລະ ກິດຈະກຳຕ່າງໆ ຢ່າງເປັນປົກກະຕິ.

ຈຸດປະສົງສະເພາະຂອງການຕິດຕາມກວດກາ ແລະ ການຊີ້ນຳແມ່ນເພື່ອ (i) ຢັ້ງຢືນຄວາມຖືກຕ້ອງວ່າໄດ້ສ້າງຂໍ້ມູນຂ່າວສານພື້ນຖານ ກໍແມ່ນຜູ້ທີ່ຖືກກະທົບທຸກຄົນ ແລະ ໄດ້ມີການຕີລາຄາຊັບສິນທີ່ສູນເສຍ ຫຼື ເສຍຫາຍໄປ ພ້ອມທັງໄດ້ຢັ້ງຢືນຄວາມຖືກຕ້ອງ ກ່ຽວກັບການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ ໄດ້ດຳເນີນຕາມດຳລັດວ່າດ້ວຍ ການຍົກຍ້າຍຈັດສັນປະຊາຊົນ ແລະ ແຜນການຍົກຍ້າຍຈັດສັນປະຊາຊົນ; (ii) ຕິດຕາມກວດກາເບິ່ງວ່າແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຕາມແຜນການທີ່ໄດ້ຮັບຮອງມາບໍ ແລະ (iii) ຢັ້ງຢືນຄວາມຖືກຕ້ອງວ່າການນຳຂອງໂຄງການ ໄດ້ສະໜອງທຶນຮອນ ເພື່ອຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນໄດ້ທັນທ່ວງທີເວລາ ແລະ ໃນຈຳນວນພຽງພໍຕາມຈຸດປະສົງຂອງມັນ ແລະ ໄດ້ຢັ້ງຢືນຄວາມຖືກຕ້ອງອີກວ່າທຶນຮອນດັ່ງກ່າວ ແມ່ນໄດ້ນຳໃຊ້ ໂດຍສອດຄ່ອງກັບເນື້ອໃນຂອງແຜນການຍົກຍ້າຍຈັດສັນປະຊາຊົນ.

### 13.3.1 ຕົວຊີ້ບອກຂອງການຕິດຕາມກວດກາ

ຕົວຊີ້ວັດອັນສຳຄັນ ທີ່ຈະໄດ້ຕິດຕາມກວດກາຢ່າງສະໝ່ຳສະເໝີ ມີ:

- ສິດທິ ທີ່ຜູ້ທີ່ຖືກກະທົບຈະໄດ້ຮັບ ແມ່ນສອດຄ່ອງກັບດຳລັດ 192 ແລະການປະເມີນການທົດແທນຄ່າເສຍຫາຍ ແມ່ນໄດ້ເຮັດຕາມຂັ້ນຕອນທີ່ໄດ້ຕົກລົງມາແລ້ວ;
- ການຈ່າຍເງິນທົດແທນຄ່າເສຍຫາຍປະເພດຕ່າງໆ ໃຫ້ຜູ້ທີ່ຖືກກະທົບ ແມ່ນສອດຄ່ອງກັບລະດັບທີ່ໄດ້ກຳນົດໄວ້ໃນແຜນການຍົກຍ້າຍຈັດສັນປະຊາຊົນ;
- ປຶກສາຫາລືກັບຜູ້ທີ່ຖືກກະທົບ ແລະ ການເຂົ້າຮ່ວມຂອງເຂົາເຈົ້າ ໃນການກຳນົດມາດຕະການຊ່ວຍເຫຼືອ ເພື່ອຟື້ນຟູເສດຖະກິດທີ່ເໝາະສົມ;
- ດຳເນີນການຍົກຍ້າຍປະຊາຊົນ, ຈັດຕັ້ງເຂົາເຈົ້າ ແລະ ຈ່າຍຄ່າຢູ່ກິນແລະຄ່າເຄື່ອນຍ້າຍໃຫ້ທັນເວລາ;
- ປົວແປງໂຄງລ່າງພື້ນຖານຂອງລັດທີ່ຖືກກະທົບຈາກໂຄງການ;
- ສ້າງວຽກເຮັດງານທຳ (ຈຳນວນຄົນ ທີ່ຢາກມີວຽກເຮັດ ແລະຈຳນວນຄົນ ທີ່ມີວຽກເຮັດແລ້ວ);
- ຈັດຝຶກອົບຮົມແລະໃຫ້ສິນເຊື່ອ ແກ່ຜູ້ທີ່ໄດ້ຮັບສິດຊ່ວຍເຫຼືອດັ່ງກ່າວ; ແລະ
- ສາຍພົວພັນ ລະຫວ່າງການຍົກຍ້າຍຈັດສັນປະຊາຊົນ ແລະການເລີ່ມວຽກກໍ່ສ້າງ.

### 13.3.2. ບົດລາຍງານການຕິດຕາມກວດກາ

ການລາຍງານ ແລະ ການຕິດຕາມກວດກາ ແມ່ນການໃຫ້ຂໍ້ມູນຂ່າວສານກ່ຽວກັບການ ເຄື່ອນໄຫວວຽກປະຈໍາວັນ ຈາກພາກສະໜາມໄປຫາສໍານັກງານໃຫຍ່ ຂອງອົງການຈັດຕັ້ງປະຕິບັດ, ໂດຍອີງໃສ່ຕົວຊີ້ວັດ ທີ່ໄດ້ກໍານົດມາແລ້ວ ລວມທັງການກວດກາ ແລະການຢັ້ງຢືນຄວາມຖືກຕ້ອງຂອງໜ່ວຍງານຍົກຍ້າຍຈັດສັນປະຊາຊົນ ຫຼື ຜູ້ທີ່ຮັບຜິດຊອບດໍາເນີນການຍົກຍ້າຍຈັດສັນປະຊາຊົນ.

### 13.4. ການຕິດຕາມກວດກາຈາກພາຍນອກ

ນອກຈາກການຕິດຕາມກວດກາພາຍໃນແລ້ວ, ແມ່ນຍັງຕ້ອງໄດ້ເຮັດການຕິດຕາມກວດກາ ຈາກພາຍນອກ (ຫຼື ເອກກະລາດ) ຫຼື ເຮັດການປະເມີນຢ່າງສະໝໍ່າສະເໝີແລະເອກກະລາດ ຕໍ່ວຽກງານຈັດຕັ້ງປະຕິບັດການຍົກຍ້າຍຈັດສັນປະຊາຊົນ ແລະ ຕໍ່ຜົນກະທົບຕ່າງໆ ເພື່ອຢັ້ງຢືນ ຄວາມຖືກ ຕ້ອງການລາຍງານ ແລະການຕິດຕາມກວດກາພາຍໃນ ແລະສະເໜີໃຫ້ມີການແກ້ໄຂກົນໄກ ແລະ ວິທີການດໍາເນີນງານຕາມສົມຄວນ. ເພື່ອເຮັດໃຫ້ມີປະສິດທິພາບ, ໜ່ວຍງານຕິດຕາມກວດກາຈາກພາຍນອກ ຄວນເປັນໜ່ວຍງານເອກກະລາດ ບໍ່ຂຶ້ນກັບອົງການໃດໜຶ່ງຂອງລັດ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ.

ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບໃນການວ່າຈ້າງເອົາ ອົງການຕິດຕາມກວດກາຈາກພາຍນອກທີ່ມີບົດຮຽນ ແລະ ເໝາະສົມ, ສ່ວນທຶນຮອນສໍາລັບການວ່າຈ້າງ ແມ່ນຄວນໄດ້ກໍານົດເຂົ້າໃນແຜນການຍົກຍ້າຍຈັດສັນປະຊາຊົນ. ກິດຈະກໍາດັ່ງຕໍ່ໄປນີ້ ແມ່ນເປັນໜ້າທີ່ ທີ່ເປັນມາດຕະຖານ ສໍາລັບການຕິດຕາມກວດກາຈາກພາຍນອກ:

- ຢັ້ງຢືນຄວາມຖືກຕ້ອງຂອງບົດລາຍງານພາຍໃນ, ໂດຍເບິ່ງແຕ່ລະຂົງເຂດດັ່ງນີ້:
  - ຈ່າຍຄ່າທົດແທນ ລວມທັງຈໍານວນແລະເວລາ;
  - ການແກ້ໄຂບັນຫາທີ່ດິນ;
  - ການກະກຽມແລະຄວາມເໝາະສົມ ຂອງເຂດຍົກຍ້າຍຈັດສັນ ປະຊາຊົນແລະການປຸກເຮືອນ;
  - ວຽກເຮັດງານທໍາ, ຄວາມເໝາະສົມແລະລະດັບລາຍຮັບ;
  - ການຝຶກອົບຮົມ;
  - ການຟື້ນຟູກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້;
  - ການສ້ອມແປງໂຄງລ່າງ, ການຍົກຍ້າຍອອກມາຫຼືສ້າງໃໝ່ແທນ;
  - ການຍົກຍ້າຍທຸລະກິດ, ການທົດແທນແລະຄວາມເໝາະສົມ;
  - ການອຸດໜູນໃນໄລຍະຂ້າມຜ່ານ.
- ສໍາພາດຕົວແທນຂອງຜູ້ທີ່ຖືກກະທົບ ໂດຍປຶກສາຫາລືແບບເປີດກ້ວາງ ເພື່ອປະເມີນຄວາມຮູ້ ແລະ ຄວາມສົນໃຈຂອງເຂົາເຈົ້າ ກ່ຽວກັບຂະບວນການຍົກຍ້າຍຈັດສັນປະຊາຊົນ, ສິດທິທີ່ໄດ້ຮັບ ແລະ ມາດຕະການຟື້ນຟູເສດຖະກິດ.
- ເຂົ້າຮ່ວມໃນຖານະຜູ້ສັງເກດການ ໃນກອງປະຊຸມປຶກສາຫາລືກັບຊາວບ້ານທີ່ຖືກກະທົບ ຢູ່ລະດັບບ້ານ ຫຼື ເມືອງ (ຈັດຕັ້ງກອງປະຊຸມດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງອົງການ ຈັດຕັ້ງປະຕິບັດ).

- ສັງເກດເບິ່ງການເຄື່ອນໄຫວຂອງຂະບວນການຍົກຍ້າຍຈັດສັນປະຊາຊົນໃນທຸກລະດັບ ເພື່ອປະເມີນປະສິດທິພາບ ແລະ ການປະຕິບັດຢ່າງຖືກຕ້ອງຕາມແຜນການຍົກຍ້າຍຈັດສັນປະຊາຊົນ.
- ກວດກາເບິ່ງ ບັນຫາທີ່ເປັນຂໍ້ຂັດແຍ່ງແລະການເຄື່ອນໄຫວຂອງກົນໄກໄກ່ເກ່ຍຂໍ້ຂັດແຍ່ງ ໂດຍພິຈາລະນາເບິ່ງການອຸທອນໃນທຸກລະດັບ ແລະ ສຳພາດຜູ້ທີ່ຖືກກະທົບ ທີ່ໄດ້ສະເໜີຂໍ້ຂັດຂ້ອງ.
- ສຳຫຼວດມາດຕະຖານຊີວິດຂອງຜູ້ທີ່ຖືກກະທົບ (ແລະ ຂອງກຸ່ມທີ່ບໍ່ຖືກກະທົບ ຖ້າພໍເຮັດໄດ້) ກ່ອນແລະຫຼັງດຳເນີນການຍົກຍ້າຍຈັດສັນປະຊາຊົນ ເພື່ອຕີລາຄາວ່າມາດຖານຊີວິດການເປັນຢູ່ຂອງຜູ້ທີ່ຖືກກະທົບໄດ້ຮັບການປັບປຸງໃຫ້ດີຂຶ້ນຫຼືຢູ່ໃນລະດັບເກົ່າ.
- ແນະນຳໂຄງການ ໃຫ້ມີການປັບປຸງການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ.

ການຕິດຕາມກວດກາຈາກພາຍນອກ ແມ່ນຄວນລິເລີ້ມໄປພ້ອມໆກັບວຽກຈັດຕັ້ງປະຕິບັດ ແລະ ສືບຕໍ່ ຈົນໂຄງການສຳເລັດ. ຕົວຢ່າງແຜນວຽກສຳລັບການຕິດຕາມກວດກາຈາກພາຍນອກແມ່ນມີໃນ*<u>ເອກກະສານຄັດຕິດ 28.</u>*

ອີງການຕິດຕາມກວດກາຈາກພາຍນອກ ຈະສົ່ງບົດລາຍງານການຕິດຕາມກວດກາຢ່າງເປັນປົກກະຕິໃຫ້ເຈົ້າຂອງໂຄງການ ແລະສົ່ງສຳເນົາໃຫ້ ອວຕສ ແລະ ສະຖາບັນການເງິນ, ຖ້າມີ. ໂຄງຮ່າງລວມ ຂອງບົດລາຍງານການຕິດຕາມກວດກາ ແມ່ນມີໃນ*<u>ເອກກະສານຄັດຕິດ 29.</u>*

### 13.5. ການຕີລາຄາ ຫຼັງຈາກດຳເນີນການຍົກຍ້າຍຈັດສັນປະຊາຊົນ

ພາຍຫຼັງໄດ້ດຳເນີນການຍົກຍ້າຍຈັດສັນປະຊາຊົນມາໄດ້ 9 ເດືອນ ຫາ 1 ປີ, ອີງການຕິດຕາມກວດກາ ທີ່ໄດ້ວ່າຈ້າງມາ ຄວນໄດ້ດຳເນີນການຕີລາຄາຜູ້ທີ່ຖືກກະທົບຫຼາຍ ເພື່ອກຳນົດວ່າເປົ້າໝາຍຂອງແຜນການຍົກຍ້າຍຈັດສັນປະຊາຊົນ ບັນລຸຜົນຫຼືບໍ່ ກ່ຽວກັບການຟື້ນຟູລາຍຮັບແລະມາດຖານຊີວິດການເປັນຢູ່. ວິທີການ ເພື່ອດຳເນີນການສຶກສາດັ່ງກ່າວ ແມ່ນຄວນອີງໃສ່ການສຳຫຼວດດ້ານເສດຖະກິດ-ສັງຄົມ ເພື່ອຮູ້ຜົນກະທົບຂອງໂຄງການຕໍ່ລະດັບລາຍຮັບ ແລະ ມາດຖານຊີວິດການເປັນ ຢູ່ຂອງຜູ້ທີ່ຖືກກະທົບຢ່າງຫຼວງຫຼາຍ ຈາກໂຄງການ. ການປະເມີນຜົນດ້ານເສດຖະກິດ ແລະສັງ ຄົມ ຈາກການໄດ້ຮັບການທົດແທນຄ່າເສຍຫາຍ ແລະການວັດແທກລາຍຮັບ ແລະມາດຖານຊີວິດການເປັນຢູ່ຂອງຜູ້ທີ່ຖືກກະທົບກ່ອນ ແລະຫຼັງມີການຍົກຍ້າຍຈັດສັນປະຊາຊົນ ແມ່ນຈະເປັນພາກສ່ວນໜຶ່ງທີ່ສົມບູນຂອງວຽກດັ່ງກ່າວ. ຄວນດຳເນີນການສຳຫຼວດ ດ້ວຍວິທີການດຽວກັນກັບອັນທີ່ໄດ້ໃຊ້ສຳລັບການຂຶ້ນທະບຽນ. ດັ່ງນັ້ນ, ຂໍ້ມູນຈາກການສຳຫຼວດທີ່ໄດ້ມາ ແມ່ນຄວນໄດ້ນຳມາສົມທຽບ ກັບຂໍ້ມູນ ຈາກ ການສຳຫຼວດພື້ນຖານທີ່ໄດ້ເກັບກຳມາ ໃນເວລາກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ. ຜົນຂອງການສຶກສາ ອາດຊີ້ໃຫ້ເຫັນວ່າຈຸດປະສົງຂອງການຟື້ນຟູເສດຖະກິດ ໄດ້ຮັບຜົນສຳເລັດ, ທີ່ປຶກສາຄວນສະເໜີໃຫ້ມີການຊ່ວຍເຫຼືອເພີ່ມຕື່ມແລະເໝາະສົມທີ່ອາດຈຳເປັນ ເພື່ອບັນລຸຈຸດປະສົງທີ່ໄດ້ກ່າວມາ.

## ໝວດທີ 14. ມູນຄ່າ ແລະງົບປະມານສຳລັບການຍົກຍ້າຍຈັດສັນປະຊາຊົນ

### 14.1. ມູນຄ່າຍົກຍ້າຍຈັດສັນປະຊາຊົນ

ບົດຮຽນຈາກຫລາຍໂຄງການ ທີ່ດຳເນີນຜ່ານມາ ຫຼື ກຳລັງຈັດຕັ້ງປະຕິບັດ ໄດ້ຊີ້ໃຫ້ເຫັນວ່າ ການຂຶ້ນງົບປະມານ ແລະ ການສະໜອງທຶນຮອນ ສຳລັບການຍົກຍ້າຍຈັດສັນ ແມ່ນຍັງເຮັດບໍ່ທັນໄດ້ດີເທື່ອ, ບາງຄັ້ງກໍບໍ່ໄດ້ກຳນົດເລີຍ, ແຕ່ຖ້າໄດ້ກຳນົດ ກໍແມ່ນບໍ່ຫລວງຫລາຍ. ໃນບາງກໍລະນີ ໄດ້ມີການຄິດໄລ່ ແລະການຂຶ້ນງົບປະມານ ແຕ່

ພັດໃນເວລາຈັດຕັ້ງປະຕິບັດຕົວຈິງ ງົບປະມານມີບໍ່ພຽງພໍ. ເຖິງແມ່ນວ່າ ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະການຍົກຍ້າຍຈັດສັນປະຊາຊົນ (ດຳລັດ 192) ໄດ້ຮຽກຮ້ອງ ໃຫ້ເອົາມູນຄ່າຕ່າງໆທັງໝົດ ທີ່ຕິດພັນກັນກັບການຍົກຍ້າຍຈັດສັນປະຊາຊົນ ເຂົ້າໃນມູນຄ່າຂອງໂຄງການ, ແຕ່ກໍຍັງເຫັນວ່າ ການຄິດໄລ່ມູນຄ່າສຳລັບວຽກງານຍົກຍ້າຍຈັດສັນປະຊາຊົນ ແມ່ນຍັງມີມູນຄ່າຕໍ່າຢູ່ ແລະ ບໍ່ໃຫ້ທຶນພຽງພໍ ຊຶ່ງກໍຈະເຮັດໃຫ້ ຜູ້ທີ່ຖືກກະທົບຈາກໂຄງການໄດ້ຮັບພາລະອັນໜັກໜ່ວງ ແລະ ທ້າຍສຸດ ກໍຈະສົ່ງຜົນສະທ້ອນຕໍ່ວຽກງານອື່ນໆ ຂອງໂຄງການເຊັ່ນດຽວກັນ.

ໃນຫລາຍໂຄງການ, ຍ້ອນການວາງແຜນບໍ່ດີ ແລະ ມີການຄິດໄລ່ມູນຄ່າຕໍ່າໄວ້ ຈຶ່ງເຮັດໃຫ້ມັນມັກມີບັນຫາທາງດ້ານງົບປະມານ ໃນເວລາຈັດຕັ້ງປະຕິບັດຕົວຈິງ. ການຂຶ້ນງົບປະມານບໍ່ຖືກຕ້ອງ ແລະ ສອດຄ່ອງ ແມ່ນຈະເຮັດໃຫ້ມີບັນຫາຮ້າຍແຮງຂຶ້ນ ໃນໄລຍະຈັດຕັ້ງປະຕິບັດໂຄງການ. ເຖິງແມ່ນວ່າ ໄດ້ມີການວາງງົບປະມານຕໍ່າ ແຕ່ພັດບໍ່ມີທຶນໃຫ້ ຫຼື ມີການກຳນົດຄວາມຮັບຜິດຊອບທາງດ້ານການເງິນ ແຕ່ພັດບໍ່ແຈ້ງ ກໍຈະມີບັນຫາເຊັ່ນດຽວກັນ.

### 14.1.1. ມøນຄÈາ ສ¿ລັບ¡ານສຶ¡ສາ Áລະ ¡ານລາຍງານ ¡È½,¡ັບ ¡ານຍö¡ຍÉາຍຈັດສັນ¯ະຊາຊöນ

ມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ ໃນປະຈຸບັນ ເຫັນວ່າ ຫລາຍພາກສ່ວນ ໄດ້ມີຄວາມເຂົ້າໃຈຫລາຍຂຶ້ນ ແລະ ສາມາດຮັບຮອງເອົາໄດ້ ໃນລັກສະນະລວມໆ, ແຕ່ມູນຄ່າຕົວຈິງ ແມ່ນຍັງເຫັນວ່າ ບໍ່ທັນໄດ້ມີການກຳນົດອອກມາ ໃຫ້ເຫັນຄົບຖ້ວນທັງໝົດ ໃນໄລຍະວາງແຜນ. ບັນດາປັດໃຈພື້ນຖານ ທີ່ຕ້ອງການ ເພື່ອການກຳນົດ ແລະ ການຄາດຄະເນ ມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ ມີຄື:

- ໂຄງປະກອບທາງດ້ານນະໂຍບາຍ ທີ່ກຳນົດມາດຖານມີເງື່ອນໄຂ ທີ່ຈະໄດ້ຮັບສິດທິ ໃນການທົດແທນຄ່າເສຍຫາຍ ແລະການຊ່ວຍເຫຼືອອື່ນໆ;
- ການສຳຫລວດພົນລະເມືອງ ເພື່ອຮູ້ຈຳນວນ ແລະ ຮູ້ຄົນ, ຄອບຄົວ ແລະຊຸມຊົນທີ່ຈະຖືກກະທົບ, ໂດຍສະເພາະ ບັນຊີຊັບສິນຕ່າງໆ (ທີ່ດິນ, ເຮືອນຢູ່) ທີ່ຈະຖືກກະທົບ;
- ການສຳຫລວດເສດຖະກິດ-ສັງຄົມ ເພື່ອຂຶ້ນບັນຊີຊັບສິນ ທີ່ຖືກກະທົບ, ຜົນກະທົບຕໍ່ລາຍຮັບ ແລະ ມາດຖານການດຳລົງຊີວິດ. ການສຳຫລວດດັ່ງກ່າວ ແມ່ນສາມາດເຮັດໃຫ້ນັກວາງແຜນ ເຫັນໄດ້ມູນຄ່າຕົວຈິງ ທີ່ພວກເຂົາບໍ່ໄດ້ຄາດຄິດໄວ້ມາກ່ອນ;
- ການອອກແບບທາງດ້ານເຕັກນິກຂອງໂຄງການ ລວມທັງ ການອອກແບບສຳລັບ ເຂດຍົກຍ້າຍຈັດສັນ, ການບໍລິການ ແລະ ສ້າງສິ່ງທີ່ອຳນວຍຄວາມສະດວກອື່ນໆ ທີ່ຕິດພັນກັບການຍົກຍ້າຍຈັດສັນປະຊາຊົນ.

ໃນກໍລະນີ ທີ່ໄດ້ມີການສຶກສາ ແລະ ສຳຫລວດຜູ້ທີ່ໄດ້ຈະຮັບຜົນກະທົບ, ແຕ່ບໍ່ໄດ້ມີການຂຶ້ນບັນຊີຊັບສິນທີ່ຈະໄດ້ຮັບຄວາມເສຍຫາຍ ຫຼື ບໍ່ໄດ້ມີການກຳນົດຜົນກະທົບທາງລົບຕໍ່ແຫລ່ງລາຍຮັບ ໃນກໍລະນີເຊັ່ນນີ້ ແມ່ນຈະເຮັດໃຫ້ມູນຄ່າ ສຳລັບການຍົກຍ້າຍຈັດສັນປະຊາຊົນ ເພີ່ມຂຶ້ນ ແລະ ທັງອາດຈະບໍ່ມີທຶນຮອນດຳເນີນການຕົວຈິງ ແລະ ທ້າຍສຸດ ກໍຈະເຮັດໃຫ້ວຽກງານຂອງໂຄງການຊັກຊ້າແກ່ຍາວ ແລະ ສົ່ງຜົນສະທ້ອນທາງລົບຕໍ່ຈຸດປະສົງ ແລະ ຜົນສຳເລັດຂອງໂຄງການ.

ການຂາດມາດຖານສຳລັບການຄິດໄລ່ ບາງເທື່ອກໍເຮັດໃຫ້ມີຄວາມຫຍຸ້ງຍາກ ທີ່ຈະຄິດໄລ່ມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ. ມັນກໍເຄີຍ ໄດ້ເຫັນດີນຳກັນມາແລ້ວວ່າ ມູນຄ່າທີ່ຕິດພັນກັບວຽກຍົກຍ້າຍຈັດສັນປະຊາຊົນສຳລັບການຈັດຕັ້ງປະຕິບັດຕົວຈິງນັ້ນ ສ່ວນຫຼາຍ ແມ່ນຈັດແບ່ງງົບປະມານ ອອກເປັນ 4 ປະເພດຄືດັ່ງນີ້: ການທົດແທນຄ່າເສຍຫາຍ, ມູນຄ່າຍົກຍ້າຍຈັດສັນ, ມູນຄ່າຟື້ນຟູເສດຖະກິດ (ລາຍຮັບ) ແລະ ມູນຄ່າບໍລິຫານຕ່າງໆ.

ນອກນີ້ກໍຍັງມີ ມູນຄ່າໃນການວາງແຜນທີ່ໄດ້ກະກຽມມາ ແລະ ບາງເທື່ອກໍມີມູນຄ່າ ຂອງການຊ່ວຍເຫຼືອທາງດ້ານເຕັກນິກ ທີ່ເກີດມີຂື້ນ ກ່ອນໂຄງການຈະໄດ້ຖືກຮັບຮອງ. ປະເພດຕ່າງໆ ໃນການກຳນົດມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ ແມ່ນໄດ້ກຳນົດໄວ້ ຄືຂ້າງລຸ່ມນີ້:

- **ການທົດແທນຄ່າເສຍຫາຍ.** ສຳລັບປະເພດດັ່ງກ່າວນີ້ ກ່ອນອື່ນໝົດແມ່ນ ໝາຍເຖິງມູນຄ່າໃຊ້ຈ່າຍສຳລັບການເວນຄືນທີ່ດິນ, ມູນຄ່າໃຊ້ຈ່າຍສຳລັບຄ່າເຮືອນຊານ, ໂຄງລ່າງ ແລະຊັບສິນບັດຄົງທີ່ອື່ນໆ (ລວມທັງຊັບສິນທີ່ໂຄງການນຳໃຊ້ຊົ່ວຄາວ). ມູນຄ່າສຳລັບການທົດແທນຄ່າເສຍຫາຍ ແມ່ນຍັງລວມເອົາທັງມູນຄ່າໃນການກະກຽມເຂດຍົກຍ້າຍຈັດສັນປະຊາຊົນ ແລະ ມູນຄ່າຫລຸດຜ່ອນ ຜົນກະທົບທີ່ເກີດຂຶ້ນກັບປະຊາຊົນເຈົ້າພາບອີກດ້ວຍ. ນອກນີ້ ແມ່ນຍັງກວມລວມເອົາທັງ ມູນຄ່າກໍ່ສ້າງໂຄງລ່າງຂອງຊຸມຊົນໃຫ້ໃໝ່ ຫຼື ສຳລັບ ການສ້ອມແປງຄືນ (ເຊັ່ນ: ສູນເຕົ້າໂຮມຂອງຊຸມຊົນ ແລະ ສະຖານທີ່ທາງສາດສະໜາ) ຫຼື ທັງມູນຄ່າກໍ່ສ້າງໂຄງລ່າງຂອງລັດໃໝ່ ຫຼື ມູນຄ່າສຳລັບການສ້ອມແປງຄືນ (ເຊັ່ນ: ຖະໜົນຫົນທາງ, ຂົວ, ລະບົບບຳບັດນ້ຳເປື້ອນ, ລະບົບຊົນລະປະທານ). ດຳລັດ 192 ແມ່ນຍັງໄດ້ກຳນົດ ໃຫ້ມີການໃຊ້ຈ່າຍສຳລັບ ການທົດແທນຄ່າເສຍຫາຍ ໃນມູນຄ່າປ່ຽນແທນ ຊຶ່ງມັນເປັນບັນຫາທີ່ຫຍຸ້ງຍາກ ທີ່ຈະເຮັດໃຫ້ມູນຄ່າ ສຳລັບ ການໃຊ້ຈ່າຍດັ່ງກ່າວ ຕ່ຳລົງ (ຍົກເວັ້ນ ໃນບາງເງື່ອນໄຂ ທີ່ຜູ້ທີ່ຖືກກະທົບສະໝັກໃຈຮັບເອົາທາງເລືອກອື່ນ ແທນທີ່ຈະເປັນມູນຄ່າປ່ຽນແທນ). ວິທີການທີ່ດີສຸດ ສຳລັບການຫລຸດຜ່ອນມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ ແມ່ນຫລີກລ້ຽງການເວນຄືນ. ເຊັ່ນຕົວຢ່າງ, ອະນຸຍາດໃຫ້ມີການເພາະປູກໄດ້, ບັນຫານີ້ມັນກໍຈະສາມາດຫລຸດຜ່ອນຄວາມຕ້ອງການທົດແທນຄ່າເສຍຫາຍຕໍ່ຜົນລະປູກ.
- **ມູນຄ່າການຍົກຍ້າຍຈັດສັນ.** ໝາຍເຖິງມູນຄ່າສຳລັບການຍົກຍ້າຍວັດຖຸສິ່ງຂອງ, ທຸລະກິດ, ສັດລ້ຽງ ແລະ ຊັບສິນຂອງປະຊາຊົນທີ່ສາມາດຍົກຍ້າຍໄດ້ ລວມທັງ ເງິນອຸດໜູນ ແລະ ຄ່າໃຊ້ຈ່າຍຕ່າງໆ ສຳລັບໄລຍະຂ້າມຜ່ານ ຊຶ່ງອາດກວມເອົາ ແຕ່ໄລຍະຍົກຍ້າຍ ຈົນຮອດໄລຍະຕັ້ງຖິ່ນຖານ. ມູນຄ່າດັ່ງກ່າວ ແມ່ນມີຫຼາຍຢ່າງບໍ່ຄືກັນ ຊຶ່ງສາມາດຫລຸດຜ່ອນມູນຄ່ານັ້ນໄດ້. ຕົວຢ່າງ, ການກະກຽມເຂດຍົກຍ້າຍຈັດສັນໄປຢູ່ໃໝ່ແລະການບໍລິການໃຫ້ທ່ວງທັນເວລາ ແມ່ນຈະເຮັດໃຫ້ມູນຄ່າໃນໄລຍະຂ້າມຜ່ານຫລຸດລົງໄດ້ຈຳນວນຫລວງຫຼາຍ;
- **ມູນຄ່າຟື້ນຟູລາຍຮັບ.** ຖ້າການທົດແທນຄ່າຊັບສິນບໍ່ພຽງພໍເພື່ອຟື້ນຟູລາຍຮັບ, ປະເພດນີ້ແມ່ນຈະໄດ້ກຳນົດໂດຍລວມເອົາທັງມູນຄ່າທີ່ພົວພັນກັບການຄ້ຳປະກັນໂອກາດ ສຳລັບການປັບປຸງ ແລະ ການຟື້ນຟູລາຍຮັບກໍຄື ລາຍຮັບ ລວມທັງການສະໜອງລາຍຮັບຊົ່ວຄາວ ຖ້າມີຄວາມຕ້ອງການ. ມູນຄ່ານີ້ ອາດລວມເອົາທັງມາດຕະການຝຶກອົບຮົມ, ຊອກວຽກເຮັດງານທຳ, ຫລື ເລີ່ມຕົ້ນດຳເນີນທຸລະກິດນ້ອຍ. ມູນຄ່າໃນປະເພດດັ່ງກ່າວ ອາດບໍ່ສາມາດກຳນົດໄດ້ຈະແຈ້ງ ຍ້ອນການຟື້ນຟູລາຍຮັບ ສ່ວນໜຶ່ງ ແມ່ນຂຶ້ນກັບຄວາມຊຳນິຊຳນານງານ ແລະ ທັດສະນະຂອງຜູ້ທີ່ຖືກກະທົບ. ຢ່າງໃດກໍຕາມ, ເວົ້າໄດ້ວ່າ ຖ້າມີການວາງແຜນການ ຍົກຍ້າຍຈັດສັນປະຊາຊົນທີ່ດີ ມັນກໍສາມາດເຮັດໃຫ້ມູນຄ່າການຍົກຍ້າຍຫລຸດລົງໄດ້ຕື່ມ ໂດຍຊຸກຍູ້ໃຫ້ຜູ້ທີ່ຖືກກະທົບສາມາດຮັບເອົາໄດ້ ແລະສາມາດປັບຕົວເຂົ້າໄດ້ກັບສະພາບການດັ່ງກ່າວ. ແຕ່ກົງກັນຂ້າມ, ຖ້າມີການວາງແຜນບໍ່ດີ ມັນອາດກໍຈະເຮັດໃຫ້ມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ ສູງຂຶ້ນ ໂດຍເຮັດໃຫ້ມີຄວາມຫຍຸ້ງຍາກຫຼາຍຢ່າງເກີດຂຶ້ນຕື່ມ ແລະ ເຮັດໃຫ້ຜູ້ທີ່ຖືກກະທົບໄດ້ຮັບຄວາມເສຍຫາຍ ຫລື ຕົກທຸກໄດ້ຍາກຕື່ມອີກ;

- **ຄ່າບໍລິຫານ.** ໝາຍເຖິງມູນຄ່າດຳເນີນງານ (ໂດຍສະເພາະຄ່າພະນັກງານ ແລະເຄື່ອງຮັບໃຊ້) ສຳລັບວຽກຍົກຍ້າຍຈັດສັນປະຊາຊົນ;
- **ຄ່າກະກຽມ.** ໝາຍເຖິງມູນຄ່າ ສຳລັບໃຊ້ຈ່າຍ ເພື່ອໃຫ້ໄດ້ຂໍ້ມູນຂ່າວສານອັນຈຳເປັນ ສຳລັບການຂື້ນງົບປະມານ ແລະ ການວາງແຜນ. ມູນຄ່າດັ່ງກ່າວແມ່ນ ເກີດຂຶ້ນ ກ່ອນເຮັດງົບປະມານແລ້ວ ແລະບໍ່ໄດ້ຄິດໄລ່ເຂົ້າໃນມູນຄ່າວາງແຜນຍົກຍ້າຍຈັດສັນປະຊາຊົນ;
- **ມູນຄ່າຊ່ວຍເຫລືອທາງດ້ານເຕັກນິກ** ປະກອບດ້ວຍມູນຄ່າຝຶກອົບຮົມບຸກຄະລາກອນ, ການສ້າງຄວາມອາດສາມາດທາງດ້ານການຈັດຕັ້ງ, ມູນຄ່າຈ້າງທີ່ປຶກສາ ແລະ ການຕິດຕາມກວດກາແບບເອກກະລາດ.

## 14.1.2. ການຄາດຄະເນມູນຄ່າ ສຳລັບ ການຍົກຍ້າຍຈັດສັນປະຊາຊົນ

ຍ້ອນການຍົກຍ້າຍຈັດສັນປະຊາຊົນ ມີຂະບວນການທີ່ສະລັບສັບຊ້ອນ ແລະ ຕໍ່ເນື່ອງ ຈຶ່ງເຮັດໃຫ້ການຄາດຄະເນມູນຄ່າ ແລະງົບປະມານສຳລັບວຽກງານດັ່ງກ່າວ ຈຶ່ງບໍ່ມີຄວາມແນ່ນອນ. ໃນຕົວຈິງ, ສຳລັບລາຍການທີ່ມີຄ່າໃຊ້ຈ່າຍເລັກໜ້ອຍ ທີ່ຈະໄດ້ມີການວ່າຈ້າງຊ່ຽວຊານມາສຶກສາວິທີການລະອຽດ ໃນການກຳນົດມູນຄ່າດັ່ງກ່າວ ໃນກໍລະນີນີ້ ແມ່ນແນ່ນອນ ຕ້ອງໄດ້ມີການໃຊ້ຈ່າຍຫລາຍກ່ວາ ມູນຄ່າທີ່ຈັດຕັ້ງປະຕິບັດເອງ. ຖ້າການຄາດຄະເນມູນຄ່າ ບໍ່ສາມາດຄິດໄລ່ໄດ້ແນ່ນອນ, ການສະໜອງງົບປະມານກໍບໍ່ສາມາດເຮັດຖືກຕ້ອງໄດ້ໝົດ. ທາງທີ່ດີ, ງົບປະມານຄວນໄດ້ມີການຄາດຄະເນ ສູງເພື່ອໄວ້ ໃນກໍລະນີ ອາດມີການຄິດໄລ່ຜິດພາດ ແລະກໍຄວນໄດ້ມີການກຳນົດເງິນແຮໃນຈຳນວນທີ່ເໝາະສົມໃສ່ຕື່ມ. ງົບປະມານສຳລັບການຍົກຍ້າຍຈັດສັນປະຊາຊົນ ແມ່ນຈະມີຄວາມແຕກຕ່າງກັນໃນແຕ່ລະໂຄງການ ໂດຍມັນຂຶ້ນກັບ ຂອບເຂດ ແລະ ຄວາມສະລັບສັບຊ້ອນ ຂອງມາດຕະການຍົກຍ້າຍຈັດສັນປະຊາຊົນ ທີ່ມີຄວາມແຕກຕ່າງກັນ. ຕົວຢ່າງ, ມູນຄ່າຈະຕໍ່າ ຖ້າຫາກໂຄງການ ເວນຄືນຊັບສິນພຽງແຕ່ສ່ວນໃດສ່ວນໜຶ່ງ ແຕ່ບໍ່ແມ່ນການຍົກຍ້າຍທັງໝົດ.

- **ມູນຄ່າວາງແຜນ:** ມູນຄ່າວາງແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນຈະມີຄວາມແຕກຕ່າງກັບຄວາມສະລັບສັບຊ້ອນຂອງໂຄງການ ແລະສ່ວນໜຶ່ງກໍຂຶ້ນກັບຜູ້ທີ່ຈະມາເຮັດແຜນການນັ້ນ. ຖ້າອົງການຮັບຜິດຊອບໂຄງການ ມີພະນັກງານທີ່ມີຄວາມຊຳນິຊຳນານງານດີ ມູນຄ່າກະກຽມ ສ່ວນໜຶ່ງ ກໍອາດຈະເອົາເຂົ້າໃນງົບປະມານທີ່ມີຢູ່. ຖ້າຫາກມີສັນຍາວ່າຈ້າງເອົາຊ່ຽວຊານຕ່າງປະເທດ, ມູນຄ່າວາງແຜນ ກໍຈະສູງຂຶ້ນຕື່ມ. ໃນບາງກໍລະນີ, ການວ່າຈ້າງເອົາຊ່ຽວຊານຕ່າງປະເທດມາຊ່ວຍວາງແຜນ ແຜນການນັ້ນກໍອາດຈະມີປະສິດທິພາບຫລາຍກ່ວາ ການວາງແຜນທີ່ດຳເນີນການ ໂດຍພະນັກງານຢູ່ພາຍໃນເອງ. ສຳລັບອົງການ ຈັດຕັ້ງທີ່ກ່ຽວຂ້ອງ ໃນຫລາຍໆໂຄງການ ແມ່ນຄວນໄດ້ສ້າງຄວາມອາດສາມາດ ແກ່ພະນັກງານພາຍໃນອົງການຈັດຕັ້ງຂອງຕົນ ເພື່ອຈະຊ່ວຍໃຫ້ຫລຸດຜ່ອນລົງ ມູນຄ່າວາງແຜນ ແລະ ມູນຄ່າຈັດຕັ້ງປະຕິບັດໂຄງການ ໃນໄລຍະຍາວໄດ້ອີກດ້ວຍ.
- **ການທົດແທນຄ່າເສຍຫາຍ:** ຕາມຫລັກການແລ້ວ, ການທົດແທນຄ່າເສຍຫາຍ ແມ່ນໝາຍເຖິງການຈ່າຍເງິນທົດແທນຄືນຊັບສິນທີ່ໄດ້ຮັບຄວາມເສຍຫາຍ. ມູນຄ່າຫລາຍຢ່າງໃນປະເພດດັ່ງກ່າວ ແມ່ນສາມາດຄິດໄລ່ແບບມີຄວາມແນ່ນອນໄດ້ພໍສົມຄວນ, ໂດຍສະເພາະ ໃນສະຖານທີ່ ທີ່ມີຕະຫລາດໄດ້ກຳນົດລາຄາຕົວຈິງ. ແຕ່ພາກປະຕິບັດຕົວຈິງ ການທົດແທນຄ່າເສຍຫາຍ ສ່ວນຫຼາຍ ແມ່ນບໍ່ໄດ້ເຮັດຕາມລາຄາຕົວຈິງປານໃດ. ເມື່ອເປັນເຊັ່ນນັ້ນ, ການຄາດຄະເນ ມູນຄ່າສຳລັບການທົດແທນຄ່າເສຍຫາຍ ໃນມູນຄ່າປ່ຽນແທນ ຈຶ່ງ

ມີລັກສະນະສະລັບສັບຊ້ອນ ໂດຍສະເພາະ ໃນບ່ອນໃດທີ່ມີຕະຫລາດ ທີ່ບໍ່ໄດ້ມີການເຄື່ອນໄຫວດີ ແລະ ບ່ອນໃດທີ່ມີມູນຄ່າສາມາດປ່ຽນແປງໄດ້ໄວ ແລະໃນກໍລະນີກຳມະສິດຊັບສິນຍັງບໍ່ຈະແຈ້ງ ການຄິດໄລ່ອາດມີຄວາມສະລັບຊັບຊ້ອນຕື່ມອີກ ໃນລະຫວ່າງຂັ້ນຕອນກະກຽມການຍົກຍ້າຍຈັດສັນ ໄປຫາຂັ້ນຕອນການອອກແບບທາງດ້ານເຕັກນິກ, ຕາຕະລາງເວລາຈັດຕັ້ງປະຕິບັດ ແລະ ວຽກຍົກຍ້າຍຈັດສັນປະຊາຊົນອື່ນໆທີ່ຍັງບໍ່ທັນສຳເລັດເທື່ອ. ມູນຄ່າດັ່ງກ່າວ ແມ່ນຍັງຂຶ້ນກັບທາງເລືອກຂອງຜູ້ທີ່ຖືກກະທົບ ທີ່ຈະຮັບເອົາເຂດທີ່ຈັດສັນໃຫ້ ຫລື ເອົາຄ່າທົດແທນ. ການສ້າງເຂດຍົກຍ້າຍຈັດສັນໄປຢູ່ໃໝ່ ສຳລັບບາງໂຄງການແມ່ນໄດ້ມີການຄິດໄລ່ມູນຄ່າ ແຕ່ຍັງຕ່ຳ ຍ້ອນວ່າການຄິດໄລ່ ຍັງບໍ່ທັນໄດ້ອີງໃສ່ ບັນຫາຊ່ຽວຊານທາງດ້ານເຕັກນິກ ຫລື ສະພາບການກໍ່ສ້າງຕົວຈິງ.

- **ມູນຄ່າຍົກຍ້າຍຈັດສັນ:** ມູນຄ່າສ່ວນຫລາຍໃນປະເພດດັ່ງກ່າວ ແມ່ນໃຊ້ຈ່າຍພຽງຄັ້ງດຽວ. ມັນຍາກທີ່ຈະຄາດຄະເນໄດ້ ຍ້ອນວ່າ ມັນມັກມີບັນຫາເກີດຂຶ້ນ ໃນໄລຍະຈັດຕັ້ງປະຕິບັດ ຊຶ່ງມາຈາກບັນຫາການຊັກຊ້າແກ່ຍາວເວລາໂຄງການ ຫຼື ມູນຄ່າລາຄາມີການເໜັງຕີງ.
- **ມູນຄ່າຟື້ນຟູລາຍຮັບ.** ຍ້ອນວ່າ ຄ່າຟື້ນຟູລາຍຮັບ ເວົ້າລວມ ບໍ່ສາມາດຄາດຄະເນໄດ້, ການຄິດໄລ່ສ່ວນຫລາຍ ຈຶ່ງແມ່ນການເດົາເອົາຫລາຍກ່ວາ, ເຊັ່ນມູນຄ່າສຳລັບການຝຶກອົບຮົມ ຫລື ມູນຄ່າທີ່ຈະໃຫ້ສິນເຊື່ອ ຫລື ຂຶ້ນກັບບາງມາດຕະການແກ້ໄຂ. ໃນຫລາຍໆໂຄງການໄດ້ກຳນົດມູນຄ່າຕາມຄ່າຂອງຫົວໜ່ວຍ ສຳລັບກິດຈະກຳຟື້ນຟູລາຍຮັບ. ເຖິງແມ່ນວ່າ ມັນຈະມີມູນຄ່າຕົວຈິງ ແຕກຕ່າງກັນຫລາຍກໍຕາມ, ແຕ່ການສຳຫຼວດນັ້ນ ແມ່ນອາດສາມາດໃຫ້ຂໍ້ມູນພຽງພໍ ສຳລັບເຮັດໃຫ້ການຄິດໄລ່ມູນຄ່າດັ່ງກ່າວນີ້ ມີຄວາມຖືກຕ້ອງຫລາຍຂຶ້ນ. ຖ້າອັດຕາຂອງຫົວໜ່ວຍທີ່ໃຊ້ໃນໂຄງການ ທີ່ມີການຟື້ນຟູລາຍຮັບ ບໍ່ເປັນສ່ວນສຳຄັນຂອງການຍົກຍ້າຍຈັດສັນປະຊາຊົນ, ງົບປະມານ ກໍຄວນມີເງິນແຮອື່ນໆໄວ້ຫລາຍ ເພື່ອແນໃສ່ຄວາມຮັບປະກັນຕໍ່ວຽກຟື້ນຟູລາຍຮັບ.
- **ມູນຄ່າບໍລິຫານ:** ໃນຫລາຍໂຄງການ, ມັນກໍມີຄວາມຫຍຸ້ງຍາກ ທີ່ຈະຄິດໄລ່ມູນຄ່າບໍລິຫານອອກໄດ້ ຍ້ອນວ່າມູນຄ່າຍົກຍ້າຍຈັດສັນປະຊາຊົນ ບາງຢ່າງກໍບໍ່ສາມາດຕັດແຍກອອກຈາກກັນໄດ້ ຈາກມູນຄ່າບໍລິຫານລວມ. ໂຄງຮ່າງສຳລັບມູນຄ່າບໍລິຫານ ແມ່ນຍັງຂຶ້ນກັບອົງການຈັດຕັ້ງ ຫຼື ພະນັກງານຮັບຜິດຊອບ ວຽກຍົກຍ້າຍຈັດສັນປະຊາຊົນ ທີ່ຈະມາເຮັດວຽກດັ່ງກ່າວນັ້ນ ຫລືບໍ່, ພວກເຂົາເຈົ້າ ຈະໄດ້ວ່າຈ້າງເອົາທີ່ປຶກສາ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ຜູ້ອື່ນໆ ຫລືບໍ່? ມູນຄ່າບໍລິຫານ ຍັງຂຶ້ນກັບປະເພດຕ່າງໆຂອງໂຄງການ. ຖ້າໂຄງການຫາກຊັກຊ້າແກ່ຍາວຫຼາຍ ມູນຄ່າບໍລິຫານ ກໍຈະສູງຂຶ້ນ ເພາະໄລຍະທາງ ແມ່ນຫ່າງໄກ. ປັດໄຈອື່ນໆ ແມ່ນບັນຫາການປະກອບພະນັກງານ, ຫ້ອງການ, ເຄື່ອງໃຊ້ຫ້ອງການ ແລະ ພາຫະນະ. ມູນຄ່າຕິດຕາມກວດກາ ແລະ ການຊີ້ນຳ ສ່ວນຫລາຍແມ່ນຕົກໃນກໍລະນີດຽວກັນນີ້.

ຟອມຕົວຢ່າງ ສຳລັບການລາຍງານມູນຄ່າຍົກຍ້າຍຈັດສັນປະຊາຊົນ ແມ່ນມີໃນ*<u>ເອກກະສານຄັດຕິດ 30.</u>*

## 14.2. ການຂຶ້ນງົບປະມານ ສຳລັບ ການຍົກຍ້າຍຈັດສັນປະຊາຊົນ

ງົບປະມານສຳລັບການຍົກຍ້າຍຈັດສັນປະຊາຊົນ ບໍ່ຄວນຖືເປັນບັນຫາຫລາຍ. ເຖິງແມ່ນວ່າ ການຂຶ້ນງົບປະມານໄດ້ຜ່ານຂະບວນການ ທີ່ຈະເຮັດໃຫ້ ມີການຫລຸດຜ່ອນຄວາມບໍ່ແນ່ນອນລົງ, ແຕ່ວ່າວຽກງົບປະມານນີ້ ກໍບໍ່ສາມາດຈະຢັ້ງຢືນໄດ້ວ່າ ຈະໄດ້ມີທຶນຮອນພຽງພໍ ໃນເວລາທີ່ພວກເຮົາຕ້ອງການ. ດັ່ງນັ້ນ ແຜນການຍົກຍ້າຍຈັດສັນ

ປະຊາຊົນ ຈະຕ້ອງໄດ້ສ້າງຂຶ້ນຕາມກົນໄກທີ່ມີຄວາມອ່ອນໄຫວທາງດ້ານງົບປະມານ ແລະ ຮັບປະກັນໃຫ້ມີເງິນສຳລັບ ວຽກຍົກຍ້າຍຈັດສັນປະຊາຊົນ ຕາມທີ່ໄດ້ຄາດຄະເນໄວ້ ແລະ ກໍຄວນມີເງິນແຮໄວ້ ເພື່ອຕອບສະໜອງກັບວຽກໃດທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ ທີ່ບໍ່ໄດ້ຄາດຄະເນໄວ້ມາກ່ອນ.

**ການຂຶ້ນງົບປະມານ ຄວນຈັດເປັນປີ ແລະ ຕາມທີວເລື້ອງ.** ການວາງແຜນງົບປະມານ ຄວນຕິດພັນກັບຕາຕະລາງເວລາຍົກຍ້າຍຈັດສັນປະຊາຊົນ. ໃນກໍລະນີ ມີຈຳນວນທຶນຮອນພຽງພໍ ແຕ່ພັດການນຳເອົາມາໃຊ້ ເກີດຊັກຊ້ານັ້ນ ແມ່ນຈະເຮັດໃຫ້ມີການແກ່ຍາວໂຄງການ, ເກີດມີຄວາມເສຍຫາຍຍ້ອນເງິນເຟີ້ ແລະ ເກີດມີຄວາມຫຍຸ້ງຍາກອື່ນໆຕາມມາ. ແຕ່ໃນຄວາມເປັນຈິງແລ້ວ ມີຫລາຍປະເທດ ມີຂັ້ນຕອນຂຶ້ນງົບປະມານ ເຂັ້ມງວດທີ່ສຸດ, ການສະໜອງທຶນຮອນໃຫ້ທັນເວລາ ຕາມແຜນງົບປະມານຂອງລັດ ແມ່ນເຫັນວ່າມີຄວາມສຳຄັນຫລາຍ. ດັ່ງນັ້ນ ງົບປະມານຈຶ່ງຄວນໄລ່ເປັນປີໄປ ແລະຄວນມີການຕິດຕາມ ເພື່ອກວດກາຄວາມຕ້ອງການ ທາງດ້ານການເງິນ ໂດຍອີງໃສ່ຜົນງານໃນປີຜ່ານມາ, ຢ່າງໜ້ອຍປີລະເທື່ອ.

**ການວາງຮ່ວງ ຖ້າການຄຸ້ມຄອງການເງິນ ຫາກບໍ່ທັນໄດ້ດີ.** ໂດຍສະເພາະ ໃນໂຄງການທີ່ມີການຄຸ້ມຄອງການເງິນບໍ່ທັນໄດ້ດີ ຫລື ມີທຶນຮອນໜ້ອຍ, ຄວນໄດ້ກຳນົດຮ່ວງໃຫ້ຈະແຈ້ງ ຫລື ງົດບັນຊີຖ້າພໍເຮັດໄດ້, ຈຳກັດບໍ່ໃຫ້ໃຊ້ເງິນ ທີ່ຈະເອົາມາໃຊ້ ສຳລັບວຽກຍົກຍ້າຍຈັດສັນປະຊາຊົນ ໄປເຮັດອັນອື່ນ.

ຖ້າບໍ່ຈັດຮ່ວງໄວ້ໃນມູນຄ່າຍົກຍ້າຍຈັດສັນປະຊາຊົນ ສຳລັບ ການຈະໄດ້ຮັບສິດສະເພາະ ແລະແຜນງານສຳລັບແມ່ຍິງແລະເດັກນ້ອຍ, ທຶນດັ່ງກ່າວ ກໍອາດຈະບໍ່ມີເລີຍ. ບັນຫາ ແລະ ຍຸດທະສາດ ເພື່ອລວມເອົາເລື້ອງຄວາມສະເໝີພາບຍິງຊາຍ ເຂົ້າໃນການຄິດໄລ່ງົບປະມານ ສຳລັບການຍົກຍ້າຍຈັດສັນປະຊາຊົນ ແມ່ນມີໃນ <u>*ເອກກະສານຄັດຕິດ 31.*</u>

**ການຂຶ້ນຮ່ວງເງິນແຮອື່ນໆໄວ້ ແມ່ນມີຄວາມສຳຄັນທີ່ສຸດ.** ການຄິດໄລ່ງົບປະມານບໍ່ແນ່ນອນ ບໍ່ໝາຍຄວາມວ່າ ຈະເກີດມີແຕ່ກັບວຽກຍົກຍ້າຍຈັດສັນປະຊາຊົນ, ໂຄງການໄດ້ຂຶ້ນຮ່ວງເງິນແຮອື່ນໆໄວ້ ກໍສຳລັບວຽກທັງໝົດທີ່ກ່ຽວຂ້ອງກັບໂຄງການ ທີ່ໄດ້ມີສ່ວນຕິດພັນກັບ ລາຄາ ແລະ ບັນຫາຕົວຈິງ ຂອງໂຄງການ. ຢ່າງໃດກໍຕາມ, ການຍົກຍ້າຍຈັດສັນປະຊາຊົນ ແມ່ນຈະມີຄວາມແຕກຕ່າງກັນ ຍ້ອນມັນມີຫລາຍບັນຫາທີ່ຕິດພັນກັບ ສັງຄົມ ແລະ ທຳມະຊາດ. ການຂຶ້ນເງິນແຮ ແມ່ນຕ້ອງໄດ້ອ້າງເຫດຜົນມາຢັ້ງຢືນ. ການຍົກຍ້າຍຈັດສັນປະຊາຊົນ ມີລັກສະນະສະລັບສັບຊ້ອນຫຼາຍເທົ່າໃດ ແມ່ນຍິ່ງມີຄວາມຕ້ອງການ ໃຫ້ມີເງິນແຮຫຼາຍຂຶ້ນເທົ່ານັ້ນ. ການຍົກຍ້າຍຈັດສັນປະຊາຊົນແມ່ນມີການປ່ຽນແປງໄປຕາມໄລຍະເວລາ, ຖ້າໄລຍະເວລາ ແຕ່ເລີ້ມຕົ້ນການສຳຫຼວດ ຫາເວລາສຳເລັດການຍົກຍ້າຍຈັດສັນປະຊາຊົນ ຫາກຫຼາຍເທົ່າໃດ ກໍຍິ່ງຕ້ອງການເງິນຂຶ້ນ ຫຼາຍເທົ່ານັ້ນ. ຖ້າເງິນແຮໄດ້ກຳນົດໄວ້ ຈຳນວນໜ້ອຍ ທຽບໃສ່ອັດຕາສ່ວນຮ້ອຍ ຂອງມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ, ອັດຕາສ່ວນດັ່ງກ່າວນີ້ ແມ່ນກໍຄວນໄດ້ມີການເພີ້ມຂຶ້ນອີກ ສຳລັບໂຄງການທີ່ມີຄວາມຕ້ອງການຟື້ນຟູລາຍຮັບ ຂອງປະຊາຊົນຜູ້ທີ່ຖືກກະທົບເປັນຈຳນວນຫລາຍ.

ຕາມວິທີຈັດການໂຄງການທີ່ໄດ້ມາດຖານ, ເງິນແຮທີ່ຂຶ້ນໄວ້ເພື່ອແກ້ໄຂບັນຫາ ໃນກໍລະນີມີການປ່ຽນແປງລາຄາ ແລະ ສະພາບການ ແມ່ນກໍຕ້ອງໄດ້ມີການຂຶ້ນໄວ້ ສຳລັບວຽກຍົກຍ້າຍຈັດສັນປະຊາຊົນເຊັ່ນດຽວກັນ. ສຳລັບໂຄງການທີ່ໃຊ້ເວລາຫລາຍປີ ເພື່ອຍົກຍ້າຍຈັດສັນປະຊາຊົນ, ເງິນແຮແມ່ນຍິ່ງມີຄວາມຈຳເປັນ ເຊິ່ງໃນນັ້ນອາດຈະນຳໃຊ້ເພື່ອແກ້ໄຂບັນຫາເງິນເຟີ້ ແລະຄ່າໃຊ້ຈ່າຍສຳລັບການທົດແທນຄ່າເສຍຫາຍ ແລະອື່ນໆ. (ໃນບາງໂຄງການ,

ລາຄາດິນກໍແພງຂຶ້ນໃນເວລາເວນຄືນທີ່ດິນ). ເງິນແຮແມ່ນມູນຄ່າເພີ້ມໃສ່ຄ່າໃຊ້ຈ່າຍ ໃນການຈັດຕັ້ງປະຕິບັດວຽກງານ. ໃນໄລຍະກະກຽມທາງດ້ານເຕັກນິກຂອງໂຄງການ ກໍຄວນພິຈາລະນາຂຶ້ນເງິນແຮໄວ້ ສຳລັບວຽກດັ່ງກ່າວນີ້ເຊັ່ນດຽວກັນ. ຖ້າຫາກບໍ່ມີການອອກແບບໂຄງການລະອຽດ ໃນເວລາປະເມີນໂຄງການ, ມູນຄ່າຍົກຍ້າຍຈັດສັນປະຊາຊົນ ກໍຄວນເອົາມາປະເມີນຄືນໃໝ່ໃນເວລາການອອອກແບບ.

**ໃນແຜນການຍົກຍ້າຍຈັດສັນປະຊາຊົນ** ຕ້ອງໄດ້ມີການກຳນົດຄວາມຮັບຜິດຊອບຢ່າງຈະແຈ້ງ ທາງດ້ານການເງິນ, ໂດຍສະເພາະ ໂຄງການທີ່ຕ້ອງໄດ້ມີ ການຍົກຍ້າຍຈັດສັນປະຊາຊົນ ອອກຈາກເຂດທ້ອງຖິ່ນຂອງຕົນ ຫລື ຕ້ອງການໃຫ້ມີຫລາຍພາກສ່ວນເຂົ້າຮ່ວມ. ແຜນການຍົກຍ້າຍຈັດສັນປະຊາຊົນຕ້ອງໄດ້ຊີ້ແຈງແຫລ່ງທີ່ມາຂອງທຶນ ຫລື ກົນໄກເພື່ອສະໜອງທຶນຮອນ ໃຫ້ທັນເວລາ. ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ກຳນົດເຖິງກົນໄກ ຫລື ຄວາມຮັບຜິດຊອບ ໃນກໍລະນີ ຫາກມີບັນຫາທາງດ້ານການເງິນຕື່ມ ໃນຕໍ່ໜ້າ.

ການໄດ້ຮັບສິດທິດແທນ ທີ່ມາຈາກການຍົກຍ້າຍຈັດສັນປະຊາຊົນ ແມ່ນຕິພັນກັບບັນຫາທາງດ້ານການເງິນທີ່ອາດຈະເຮັດໄດ້ ຫລື ບໍ່ໄດ້ ຖ້າບໍ່ມີການຂຶ້ນງົບປະມານ. ການສະໜອງທຶນຮອນທີ່ບໍ່ເໝາະສົມ ບໍ່ຄວນຍົກເປັນເຫດຜົນຫລັກ ເພື່ອມາຢັ້ງຢືນ ໃນເມື່ອເຮັດວຽກຍົກຍ້າຍບໍ່ສຳເລັດ. ສຳລັບມູນຄ່າຟື້ນຟູລາຍຮັບ ທີ່ເປັນພາກສ່ວນໜຶ່ງຂອງເງິນແຮ ທີ່ເຈົ້າຂອງໂຄງການເປັນຜູ້ນຳໃຊ້ໄດ້, ການຈຳກັດຄວາມຮັບຜິດຊອບ ຈຶ່ງບໍ່ມັກມີຄວາມຈະແຈ້ງດີປານໃດ. ກ່ຽວກັບບັນຫາການສະໜອງທຶນ, ເຈົ້າຂອງໂຄງການ ຄວນສະໜອງ ໃຫ້ພຽງພໍ ເພື່ອສ້າງໂອກາດຕົວຈິງໃນການຟື້ນຟູ ຫລື ປັບປຸງລາຍຮັບ ໂດຍຄາດວ່າບາງຄົນ ອາດຈະຕ້ອງການ ການຊ່ວຍເຫລືອຫລາຍເທື່ອ. ເພື່ອຫລຸດຜ່ອນມູນຄ່າລົງ ໃນເວລາຈັດຕັ້ງປະຕິບັດວຽກງານຕ່າງໆ, ໃນແຜນການ ຄວນໄດ້ມີການປະເມີນ ວ່າການຝຶກອົບຮົມ, ການຫາວຽກງານທຳໃໝ່, ຫລື ມາດຕະການອື່ນໆ ໄດ້ມີການກຳນົດຄົບຖ້ວນແລ້ວ ເພື່ອເຮັດໃຫ້ຜູ້ທີ່ຖືກກະທົບ ສາມາດກັບຄືນສູ່ຊີວິດການເປັນຢູ່ໃນສະພາບປົກກະຕໄດ້.

*ກົນໄກການເງິນ ເພື່ອຟື້ນຟູລາຍຮັບ*

ການຄິດໄລ່ມູນຄ່າ ສຳລັບການສ້າງໂອກາດ ໃຫ້ຜູ້ທີ່ມີສິດໄດ້ຮັບການຟື້ນຟູລາຍຮັບ ແມ່ນບໍ່ມີຄວາມແນ່ນອນ ໂດຍສະເພາະ ກັບຜູ້ທີ່ຖືກກະທົບ ທີ່ຕ້ອງໄດ້ມີການປ່ຽນໄປສູ່ການຜະລິດ ທີ່ບໍ່ຄຸ້ນເຄີຍມາກ່ອນ. ໃນກໍລະນີໂຄງການໃດໜຶ່ງ ບໍ່ມີຄວາມຮັບຜິດຊອບຕໍ່ການທົດແທນຄ່າເສຍຫາຍ ຫລື ການປ່ຽນແທນຕໍ່ຊັບສິນທີ່ເວນຄືນມານັ້ນ, ຂອບເຂດຄວາມຮັບຜິດຊອບ ກ່ຽວກັບການຟື້ນຟູລາຍຮັບ ກໍຖືວ່າຍັງບໍ່ມີການກຳນົດໄວ້ເລີຍ.

ການມີນະໂຍບາຍ ທີ່ຈະເຮັດໃຫ້ຜົນກະທົບຈາກການຍົກຍ້າຍຈັດສັນນັ້ນ ຫຼຸດໜ້ອຍລົງ, <u>ມູນຄ່າຈາກຜົນກະທົບ ຊຶ່ງຈຳເປັນ ຕ້ອງໃຫ້ມີມາດຕະການຟື້ນຟູລາຍຮັບນັ້ນ ກໍແມ່ນຈະຫລຸດໜ້ອຍລົງເຊັ່ນດຽວກັນ.</u> ໃນກໍລະນີມີຄວາມຕ້ອງການມີມາດຕະການຟື້ນຟູລາຍຮັບ, ກົນໄກທາງດ້ານການເງິນ ແມ່ນຄວນ:

- ຮັບປະກັນໃຫ້ມີການສະໜັບສະໜູນລາຍຮັບ ທີ່ສົມເຫດສົມຜົນ ໃນໄລຍະຂ້າມຜ່ານ ເພື່ອເຮັດໃຫ້ການຟື້ນຟູລາຍຮັບໄປໄດ້ໂດຍດີ;
- ຮັບປະກັນ ໃຫ້ພຽງພໍໃນການສະໜອງທຶນຮອນ ເພື່ອການຝຶກອົບຮົມວິຊາຊີບ ຫລື ເຮັດທຸລະກິດນ້ອຍ;
- ຮັບປະກັນ ໃຫ້ມີເງິນແຮຕອບສະໜອງການຟື້ນຟູລາຍຮັບສຳຮອງ ຖ້າວ່າການປະຕິບັດມາດຕະການເບື້ອງຕົ້ນ ຫາກບໍ່ມີຜົນສຳເລັດ.

## 14.3. ການສະໜອງທຶນຮອນ ສຳລັບການຍົກຍ້າຍຈັດສັນປະຊາຊົນ

ການກຳນົດແຫລ່ງທີ່ມາຂອງທຶນ ແລະພັນທະຕ່າງໆ ທີ່ຕ້ອງຮັບຜິດຊອບ ໃນລະດັບທ້ອງຖິ່ນ ແລະສູນກາງ ແມ່ນມີຄວາມສຳຄັນຫຼາຍ. ຄ່າໃຊ້ຈ່າຍຕ່າງໆທັງໝົດ ທີ່ຕິດພັນກັບການຍົກຍ້າຍຈັດສັນປະຊາຊົນໃນໂຄງການ ທີ່ໄດ້ຮັບການສະໜັບສະໜູນ ຈາກອົງການຈັດຕັ້ງຂັ້ນສູນກາງ ຫລື ແຂວງ ຫລື ເອກກະຊົນ ແມ່ນຕ້ອງໄດ້ມາຈາກແຫລ່ງທຶນຂອງ ອົງການຈັດຕັ້ງຂອງພວກເຂົາເອງ. ການປົກຄອງທ້ອງຖິ່ນ ຕ້ອງຮັບຜິດຊອບໃນການສະໜອງທຶນແກ່ວຽກຍົກຍ້າຍຈັດສັນປະຊາຊົນ ສຳລັບໂຄງການທີ່ພວກຕົນລົງທຶນເອງ ເຖິງແມ່ນວ່າຈະສະເໜີໃຫ້ອົງການຂັ້ນແຂວງ ຮັບຜິດຊອບມູນຄ່າສ້າງໂຄງລ່າງກໍຕາມ (ເສັ້ນທາງ, ນ້ຳ, ໄຟຟ້າ ແລະອື່ນໆ). ເພື່ອເພີ້ມແຫລ່ງລາຍຮັບຂອງຕົນ, ອົງການປົກຄອງທ້ອງຖິ່ນ ອາດໄດ້ຮັບການຊ່ວຍເຫລືອຈຳນວນໜຶ່ງຈາກສູນກາງ. ໃນກໍລະນີ ໂຄງການຫາກໄດ້ຮັບທຶນຈາກຫລາຍຝ່າຍ, ການສະໜອງທຶນຮອນ ໃຫ້ວຽກຍົກຍ້າຍຈັດສັນປະຊາຊົນ ຈຳເປັນຕ້ອງໄດ້ມີ ແຕ່ຕ້ອງໄດ້ປະຕິບັດຕາມຂັ້ນຕອນຕ່າງໆທີ່ມີຢູ່.

**ກຳນົດຂອບເຂດ ຂອງການສະໜອງທຶນ ຈາກອົງການໃຫ້ທຶນຫລາຍຝ່າຍ**

ໂຄງການທີ່ໄດ້ຮັບທຶນຈາກອົງການໃຫ້ທຶນຫລາຍຝ່າຍ, ຜູ້ກູ້ທຶນສ່ວນຫລາຍ ຕາມທຳມະດາ ແມ່ນຈະຮັບຜິດຊອບມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ, ແຕ່ກໍມີໜ້ອຍໂຄງການ ທີ່ມີການຍົກຍ້າຍຈັດສັນປະຊາຊົນ ໄດ້ມີການພິຈາລະນາເອົາທຶນຮອນສຳລັບການຍົກຍ້າຍຈັດສັນປະຊາຊົນ ຈາກອົງການໃຫ້ທຶນເຫລົ່ານີ້. ອຸປະສັກຕົ້ນຕໍແມ່ນຍ້ອນຜູ້ກູ້ຢືມເງິນສ່ວນຫລາ ຍບໍ່ນຳໃຊ້ທາງເລືອກດັ່ງກ່າວ, ທັງບໍ່ຄຸ້ນເຄີຍກັບກົນໄກກູ້ຢືມເງິນ ແລະ ລັດຖະບານບາງປະເທດ ກໍບໍ່ມັກກູ້ຢືມເງິນເພື່ອມາເຮັດວຽກດັ່ງກ່າວ.

ທັດສະນະລວມ ສ່ວນຫລາຍໃນຫລາຍອົງການຈັດຕັ້ງທີ່ໃຊ້ທຶນຮອນຂອງຕົນເອງ ສຳລັບການປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ, ພວກເຂົາເຈົ້າແມ່ນສາມາດຫລີກລ້ຽງບາງເງື່ອນໄຂໄດ້ຄື ມາດຖານແລະການກວດກາຢ່າງເຄັ່ງຄັດຂອງອົງການຈັດຕັ້ງເຫຼົ່ານີ້ ກ່ຽວກັບບັນຫາການຍົກຍ້າຍຈັດສັນປະຊາຊົນ. ຢ່າງໃດກໍຕາມ, ມັນກໍບໍ່ແມ່ນຈະເປັນຄວາມຈິງທັງໝົດ. ສຳລັບໂຄງການທີ່ທະນະຄານພັດທະນາອາຊີ ແລະ ທະນາຄານໂລກໃຫ້ທຶນ, ຂໍ້ບັງຄັບ ແລະມາດຖານຕ່າງໆ ແມ່ນມີຜົນບັງຄັບໃຊ້ກັບໜ້າວຽກຕ່າງໆທັງໝົດຂອງໂຄງການ, ລວມທັງວຽກຍົກຍ້າຍຈັດສັນປະຊາຊົນ, ໂດຍບໍ່ກ່ຽວຂ້ອງກັບແຫລ່ງທີ່ມາຂອງທຶນ ຕໍ່ໜ້າວຽກດັ່ງກ່າວ. ຖ້າໄດ້ຮັບທຶນຮອນຈາກທະນາຄານ ແມ່ນຈະຊ່ວຍ ໃຫ້ຫລີກເວັ້ນ ບັນຫາການຂາດເຂີນທຶນຮອນ ແລ ະຫລີກເວັ້ນບັນຫາການເມີນເສີຍຕໍ່ການຂໍທຶນ ທີ່ຈະເວັ້ນແບບງ່າຍໆ ວ່າບໍ່ມີທຶນ.

ການສະໜອງທຶນຮອນຂອງທະນາຄານໃນປັດຈຸບັນ ແມ່ນໄດ້ກວມເອົາທັງໝົດມູນຄ່າໃຊ້ຈ່າຍທີ່ຕິດພັນກັບການຍົກຍ້າຍຈັດສັນປະຊາຊົນ ຍົກເວັ້ນ ສຳລັບການໃຊ້ຈ່າຍໂດຍກົງ (ເຊັ່ນ ການເວນຄືນທີ່ດິນ, ການຊື້ເຮືອນໃໝ່ແທນ, ຫຼືການເສຍອາກອນ ຫຼືຄ່າທຳນຽມຕ່າງໆ). ເຖິງແມ່ນວ່າການສະໜອງທຶນຮອນ ບໍ່ອະນຸຍາດໃຫ້ຈ່າຍຄ່າສຳລັບການເວນຄືນທີ່ດິນ ຫຼື ສຳລັບການກໍ່ສ້າງໂຄງລ່າງໃໝ່ແທນ, ແຕ່ໃນຕົວເມືອງຄວນໄດ້ກຳນົດທຶນສຳລັບການຍົກຍ້າຍຈັດສັນປະຊາຊົນ ໄດ້ມີໄວ້ຫຼວງຫຼາຍ. ການສະໜອງທຶນຮອນດັ່ງກ່າວ ແມ່ນຈະກວມລວມເອົາທັງການປັບປຸງທີ່ດິນ, ການສ້າງເຂດຍົກຍ້າຍຈັດສັນປະຊາຊົນ, ມູນຄ່າກໍ່ສ້າງເຮືອນໃໝ່ແທນ, ແຜນຄ່າກໍ່ສ້າງເຮືອນທີ່ຈ່າຍຜ່ອນ ຫລືສ້າງສາທາລະນຸປະໂພກແທນ, ພັດທະນາທຸລະກິດ, ຄ່າສິນເຊື່ອ, ແຜນສ້າງວຽກເຮັດງານທຳ ຊຶ່ງບັນຫາທັງໝົດນີ້ແມ່ນຈະມີສ່ວນພົວພັນຫລາຍກັບວຽກງານຍົກຍ້າຍຈັດສັນປະຊາຊົນ ໃນເຂດຕົວເມືອງ. ກົນໄກການເງິນພິເສດກໍ

ຕ້ອງໄດ້ມີການກຳນົດໄວ້ ສຳລັບ ການຍົກຍ້າຍຈັດສັນປະຊາຊົນໃນເຂດຕົວເມືອງ. ບັນຫາພື້ນຖານການດຳເນີນການຕົວຈິງຂອງທະນະຄານພັດທະນາອາຊີ ແລະ ທະນາຄານໂລກ, ການໃຫ້ກູ້ຢືມ ແມ່ນຕ້ອງໄດ້ຕອບສະໜອງມູນຄ່າສຳລັບຄ່າຍົກຍ້າຍຈັດສັນປະຊາຊົນ ທີ່ໄດ້ສະແດງອອກ<u>*ໃນເອກະສານຄັດຕິດ 32.*</u>

**ການຈ່າຍເງິນ ແລະການຕິດຕາມກວດກາ**

ການຕິດຕາມກວດກາທາງດ້ານການເງິນ ແມ່ນຄວນໄດ້ປະເມີນ ປະສິດທິພາບຂອງການຈ່າຍເງິນໃນໄລຍະຜ່ານມາ. ເວົ້າເຖິງບັນຫາການຍົກຍ້າຍຈັດສັນປະຊາຊົນ, "ປະສິດທິພາບ" ມີຄວາມຈຳເປັນຕ້ອງໄດ້ເບິ່ງທັງບັນຫາການທົດແທນຄ່າເສຍຫາຍ ລວມທັງການບໍລິການຕ່າງໆ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ໄດ້ໄປເຖິງຜູ້ທີ່ມີສິດໄດ້ຮັບການທົດແທນຄ່າເສຍຫາຍ ແລະ ມີຜົນໄດ້ໄວຫຼືບໍ່. ຄຳຮ້ອງທຸກທີ່ມັກເກີດຂຶ້ນ ໃນຂົງເຂດບັນຫານີ້ ແມ່ນການຈ່າຍເງິນໃຫ້ຜູ້ທີ່ຖືກກະທົບມີຄວາມຊັກຊ້າ ແລະບໍ່ຄົບຖ້ວນ.

ໃນບາງປະເທດ, ຕົວຢ່າງ ໃນເມື່ອການທົດແທນຄ່າເສຍຫາຍ ໄດ້ຜ່ານຂະບວນການຮັບຮອງແລ້ວ, ອົງການຈັດຕັ້ງລັດຕ່າງໆ ອາດຈະແບ່ງເອົາທຶນຮອນດັ່ງກ່າວໄປເຮັດຢ່າງອື່ນ, ທັງອາດຈະແມ່ນເພື່ອສ່ວນລວມແລະສ່ວນຕົວ. ໃນບາງປະເທດ, ພະນັກງານທ້ອງຖິ່ນ ຈະໄດ້ຮຽກຮ້ອງເອົາຄ່ານາຍໜ້າ ຈາກການໄດ້ການທົດແທນຄ່າເສຍຫາຍ ຫລືຜົນປະໂຫຍດອື່ນໆ. ໃນກໍລະນີສະຖານທີ່ໃດ ຍັງມີປະກົດການດັ່ງກ່າວ, ໃນແຜນການຈັດຕັ້ງປະຕິບັດ ກໍຄວນໄດ້ກວມລວມ ເອົາທັງກົນໄກທີ່ຈະຮັບປະກັນໃຫ້ມີການຈ່າຍທົດແທນ ແລະຜົນປະໂຫຍດອື່ນໆຢ່າງຄົບຖ້ວນ. ກົນໄກດັ່ງກ່າວ ອາດລວມເອົາ:

- ທຶນໝູນວຽນ ເພື່ອຮັບປະກັນການຈ່າຍເງິນໃຫ້ໄດ້ຢ່າງທັນການ ໃນເມື່ອຂາດງົບປະມານ ຫລື ຂັ້ນຕອນແກ່ຍາວທາງການ.
- ການທົດແທນຄ່າເສຍຫາຍແລະການໃຊ້ຈ່າຍຕ່າງໆ ແມ່ນຕ້ອງເຮັດໃຫ້ມີຄວາມໂປ່ງໄສ ແລະ ຫລຸດຜ່ອນການສໍ້ໂກງ.
- ການມີສ່ວນຮ່ວມຂອງອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ໃນການຈ່າຍເງິນ ຫລື ຕິດຕາມຂະບວນການທົດແທນຄ່າເສຍຫາຍ.
- ການຈ່າຍຄ່າທົດແທນຄວາມເສຍຫາຍ ເປັນເຊັກ ຫລື ໂອນເຂົ້າໃນບັນຊີ ແມ່ນຈະຫລຸດຜ່ອນໄດ້ ບັນຫາກ່ຽວກັບການສໍ້ໂກງ.
- ໃນແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ກຳນົດວ່າ ບໍ່ໃຫ້ໄລ່ຜູ້ທີ່ຖືກກະທົບ ອອກຈາກເຮືອນ ຫລື ທີ່ດິນ ກ່ອນໄດ້ຮັບຄ່າທົດແທນ ຢ່າງຄົບຖ້ວນ.
- ຄວນມີຂະບວນການໄກ່ເກ່ຍ ສຳລັ ບຜູ້ທີ່ຖືກກະທົບ ໃນກໍລະນີທີ່ມີບັນຫາເກີດຂຶ້ນຈາກການບໍ່ໄດ້ຮັບຄ່າທົດແທນຄ່າເສຍຫາຍ ຫລື ໄດ້ຮັບສິດຕ່າງໆ.

ໃນບາງໂຄງການ, ການທົດແທນຄ່າເສຍຫາຍ ແມ່ນອາດສາມາດຕອບສະໜອງໃຫ້ແກ່ຊັບສິນ ຫຼື ສິ່ງອຳນວຍຄວາມສະດວກລວມໝູ່ ທີ່ຖືກເສຍຫາຍໄປ. ໃນກໍລະນີດັ່ງກ່າວ, ແມ່ນມີຄວາມຈຳເປັນ ໃນການຮັບປະກັນວ່າອົງການຕິດຕາມກວດກາ ໄດ້ມີການກຳນົດວ່າຜູ້ທີ່ຖືກກະທົບຈາກໂຄງການທັງໝົດ ພໍໃຈນຳການແກ້ໄຂແລະຜົນປະໂຫຍດຕ່າງໆຫຼືບໍ່. ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ອະທິບາຍກ່ຽວກັບແຜນໃນລະດັບທ້ອງຖິ່ນ ເພື່ອນຳ

ໃຊ້ແບບລວມໝູ່ ສຳລັບເປັນການທົດແທນຄ່າເສຍຫາຍ ແລະຄວນຮັບປະກັນ ແຜນການດັ່ງກ່າວຈະສາມາດແກ້ໄຂໄດ້ກັບບັນຫາຈຳເປັນຂອງຜູ້ທີ່ຖືກກະທົບ. ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ໃຫ້ຄວາມລະອຽດ ແລະຈະແຈ້ງກ່ຽວກັບກົນໄກ ການຕິດຕາມກວດກາ ການນຳໃຊ້ແບບລວມໝູ່ ສຳລັບເປັນການທົດແທນຄ່າເສຍຫາຍ ເພື່ອຮັບປະກັນໃຫ້ຜູ້ທີ່ຖືກກະທົບຫລາຍ, ຊຶ່ງກົງກັນຂ້າມກັບຜູ້ທີ່ສາມາດປັບຕົວໄດ້, ສາມາດໄດ້ຮັບການແກ້ໄຂ ແລະ ໄດ້ຮັບຜົນປະໂຫຍດ ຢ່າງເໝາະສົມ.

ກຳນົດຂອບເຂດທີ່ຈະສະໜອງທຶນຮອນໃຫ້ຊຸມຊົນ ເພື່ອຮັບປະກັນໃຫ້ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູລາຍຮັບ ໄດ້ຮັບຜົນສຳເລັດ. ຕົວຢ່າງ, ການກຳນົດສິ່ງອຳນວຍຄວາມສະດວກຕ່າງໆຂອງລວມໝູ່. ໃນນີ້ກໍຕ້ອງໄດ້ຊອກຮູ້ຄວາມປາດຖະໜາຂອງຊຸມຊົນ ທີ່ຢາກປະກອບສ່ວນທາງດ້ານການເງິນເຂົ້າໃນການປັບປຸງສິ່ງອຳນວຍຄວາມສະດວກຕ່າງໆ. ການປະກອບສ່ວນຮ່ວມກັນນັ້ນ ແມ່ນອາດຈະດີໃນການຮ່ວມກັນບູລະນະຮັກສາ ສິ່ງອຳນວຍຄວາມສະດວກຂອງລວມໝູ່ ຫລື ຂອງກຸ່ມຄົນ ເຊັ່ນລະບົບນ້ຳໃຊ້ ແລະ ການສຸກຂະອະນາໄມ, ບ່ອນຖິ້ມຂີ້ເຫຍື້ອ ແລະ ສຸກສາລາ.

## 14.4. ປະສານງານ ກ່ຽວກັບ ຄວາມຮັບຜິດຊອບທາງດ້ານບໍລິຫານ ແລະການເງິນ

ການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການທີ່ໄດ້ດີ ແມ່ນຕ້ອງມີທຶນຮອນພຽງພໍ ແລະ ມີການປະສານງານທີ່ດີ ກັບອົງການຈັດຕັ້ງລັດ ແລະອົງການຈັດຕັ້ງອື່ນໆ ໃນຫຼາຍໆຂັ້ນ. ບັນຫາງ່າຍໆໃນດ້ານການປະສານງານກ່ຽວກັບ ເວລາ ແລະການເຮັດວຽກໄດ້ກາຍມາເປັນບັນຫາ ທີ່ນັບມື້ສະລັບສັບຊ້ອນຂຶ້ນ ຍ້ອນວ່າອົງການຈັດຕັ້ງທີ່ກ່ຽວຂ້ອງອາດມີຄວາມຂັດແຍ່ງ ຍ້ອນພາລະບົດບາດ, ສິດແລະໜ້າທີ່ ໄດ້ກຳນົດບໍ່ຈະແຈ້ງ ແລະ ຄົບຖ້ວນ. ໃນພາກປະຕິບັດຕົວຈິງ, ການຈັດຕັ້ງປະຕິບັດໂຄງການ ສ່ວນຫຼາຍ ແມ່ນຈະພົບຄວາມຫຍຸ້ງຍາກ ຍ້ອນຄວາມຮັບຜິດຊອບທາງດ້ານບໍລິຫານ, ບໍ່ມີຄວາມຈະແຈ້ງ ເພື່ອຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ ຫລື ຍ້ອນຄວາມຮັບຜິດຊອບໃນການສະໜອງທຶນຮອນ ໃຫ້ແກ່ຄ່າໃຊ້ຈ່າຍທີ່ຕິດພັນກັບການຍົກຍ້າຍຈັດສັນປະຊາຊົນ.

### *ການປະສານງານ ດ້ານການຄຸ້ມຄອງບໍລິຫານ*

ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ກຳນົດເຖິງບົດບາດຂອງອົງການຈັດຕັ້ງຕ່າງໆ ໃນການວາງແຜນ ແລະ ດຳເນີນການຍົກຍ້າຍຈັດສັນປະຊາຊົນ ແລະ ມອບຄວາມຮັບຜິດຊອບສະເພາະ ໃນແຕ່ລະວຽກແລະກິດຈະກຳ ໃຫ້ແກ່ອົງການຈັດຕັ້ງຕ່າງໆທີ່ເຂົ້າຮ່ວມ. ເມື່ອການຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນປະຊາຊົນ ຕ້ອງມີການປະສານງານກັບອົງການແລະທ້ອງຖິ່ນຕ່າງໆ, ມັນຈຳເປັນຕ້ອງສ້າງໜ່ວຍງານຍົກຍ້າຍຈັດສັນປະຊາຊົນຂຶ້ນ ຊຶ່ງມີຜູ້ຕາງໜ້າຈາກອົງການທີ່ເຂົ້າຮ່ວມທັງໝົດ ແລະ ມີພະນັກງານຈາກອົງການຮັບຜິດຊອບການຍົກຍ້າຍຈັດສັນປະຊາຊົນເປັນຫົວໜ້າ.

### *ການປະສານງານດ້ານການເງິນ*

ເພື່ອຮັບປະກັນໃຫ້ການຍົກຍ້າຍຈັດສັນປະຊາຊົນ ໄດ້ມີທຶນຮອນພຽງພໍ, ເຈົ້າຂອງໂຄງການ ຄວນໄດ້ມີການປະເມີນແຫລ່ງທຶນ ທີ່ມີຢູ່ແລ້ວ ຫລື ຄາດວ່າຈະໄດ້ຮັບ ເພື່ອໃຫ້ອົງການບໍລິຫານຕ່າງໆທີ່ຮັບຜິດຊອບ ສຳລັບການໃຊ້ຈ່າຍແກ່ການທົດແທນຄ່າເສຍຫາຍ, ການກຳນົດຜູ້ຈະໄດ້ຮັບສິດທິ ໃນການທົດແທນຄ່າເສຍຫາຍ, ຫລື ການຈັດ

ຕັ້ງປະຕິບັດວຽກງານອື່ນໆ ຂອງແຜນການຍົກຍ້າຍຈັດສັນປະຊາຊົນ. ອົງການຈັດຕັ້ງຂັ້ນເມືອງ ອາດໄດ້ຖືກມອບໝາຍໃຫ້ຮັບຜິດຊອບຈ່າຍຄ່າທົດແທນຄວາມເສຍຫາຍ, ຫລື ການສ້າງເຮືອນ ຫລືໂຄງລ່າງຂອງຕົວເມືອງ. ແຕ່ພວກເຂົາເຈົ້າບໍ່ໄດ້ຮັບງົບປະມານເພີ້ມ ຫລື ມີສິດທິທີ່ຈະເກັບພາສີ ເພື່ອເປັນຄ່າໃຊ້ຈ່າຍເພີ້ມ. ເຈົ້າຂອງໂຄງການຄວນຫາວິທີສ້າງບັນຊີສະເພາະກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ. ໃນເມື່ອທຶນຮອນໄດ້ມາຈາກອົງການການເງິນພາຍນອກ, ທຶນທີ່ກຽມໄວ້ເພື່ອໃຊ້ຈ່າຍສໍາລັບການຍົກຍ້າຍຈັດສັນປະຊາຊົນ ກໍຄວນແຍກອອກເປັນບັນຊີຕ່າງຫາກ. ເພື່ອໃຫ້ມີທຶນຮອນພຽງພໍໃນໄລຍະຈັດຕັ້ງປະຕິບັດ, ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນ:

(i) ກໍານົດການຄິດໄລ່ລະອຽດ ສໍາລັບ ວຽກຍົກຍ້າຍຈັດສັນປະຊາຊົນ ລວມທັງເງິນແຮ;
(ii) ແບ່ງກິດຈະກໍາ ແລະ ງົບປະມານ ເປັນແຕ່ລະປີ ໂດຍຕິດພັນກັບ ປີງົບປະມານ ຫລື ແບ່ງຕາມໄລຍະຂອງໂຄງການ;
(iii) ກໍານົດແຫລ່ງທຶນ ສໍາລັບແຕ່ລະກິດຈະກໍາ, ກໍານົດຄວາມຮັບຜິດຊອບທາງດ້ານການເງິນ; ແລະ
(iv) ຊຸກຍູ້ໃຫ້ທຸກໆອົງການຈັດຕັ້ງທີ່ເຂົ້າຮ່ວມ ມີການຕັດສິນໃຈໃນການສະໜອງທຶນຮອນ ລວມທັງເງິນແຮ.

## ໝວດ 15. ຕາຕະລາງຈັດຕັ້ງປະຕິບັດ

### 15.1.ບັນຫາຕົ້ນຕໍ ໃນການຈັດຕັ້ງປະຕິບັດ

ລະດັບຄວາມຖືກຕ້ອງຂອງຂໍ້ມູນ ໃນແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນຂຶ້ນກັບການຄວາມລະອຽດຂອງການອອກແບບ ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ. ໃນໂຄງການໜຶ່ງ, ຕົວຊີ້ວັດສຳຄັນໃນການອອກແບບໂຄງການ ແມ່ນຈະເຮັດໄດ້ສົມບູນ ໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ, ການສຳຫລວດພົນລະເມືອງ ແລະການຂຶ້ນບັນຊີຕ່າງໆ ບົນພື້ນຖານການອອກແບບລະອຽດ ທີ່ຖືກຕ້ອງ ແລະ ຄົບຖ້ວນ. ດັ່ງນັ້ນ ແຜນການຍົກຍ້າຍຈັດສັນປະຊາຊົນ ຈຶ່ງຖືວ່າ ແມ່ນໄດ້ເຮັດສຳເລັດ, ແຕ່ອາດຈະມີການປ່ຽນແປງເລັກໜ້ອຍ ໃນເວລາຈັດຕັ້ງປະຕິບັດ. ຢ່າງໃດກໍຕາມ, ໃນກໍລະນີການອອກແບບທາງດ້ານເຕັກນິກ ຍັງຢູ່ໃນໄລຍະເລີ້ມຕົ້ນ, ແຜນການຍົກຍ້າຍຈັດສັນປະຊາຊົນ ບົນພື້ນຖານຂໍ້ມູນຂ່າວສານທີ່ໄດ້ມານັ້ນ ແມ່ນສາມາດຕອບສະໜອງໄດ້ກັບຄວາມຕ້ອງການພື້ນຖານ ສຳລັບຂະບວນການຂອງໂຄງການ, ແຕ່ໃນແຜນການຍົກຍ້າຍຈັດສັນປະຊາຊົນບໍ່ໄດ້ກຳນົດທັງໝົດຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ, ມີພຽງແຕ່ການສຳຫລວດຜູ້ທີ່ຖືກກະທົບແລະການຂຶ້ນບັນຊີຜົນເສຍຫາຍເທົ່ານັ້ນ. ຖ້າການອອກແບບໂຄງການ ແລະການກຳນົດເຂດແດນຂອງໂຄງການ ບໍ່ທັນໄດ້ເຮັດສຳເລັດ, ການສຳຫລວດຜູ້ທີ່ຖືກກະທົບກໍແມ່ນຈະບໍ່ສຳເລັດເໝືອນກັນ. ໃນກໍລະນີດັ່ງກ່າວ ແຜນການຍົກຍ້າຍຈັດສັນປະຊາຊົນ ຈຳເປັນຕ້ອງໄດ້ມີການປັບປຸງ ຫລັງຈາກການອອກແບບທາງດ້ານເຕັກນິກໄດ້ເຮັດສຳເລັດ ແລະ ກ່ອນດຳເນີນວຽກຈັດຕັ້ງປະຕິບັດຕົວຈິງ.

ຫລັງຈາກໄດ້ມີການປັບປຸງ, ທົບທວນ ແລະ ເປັນທີ່ຮັບເອົາໄດ້ ໂດຍອີງການຮັບຜິດຊອບໂຄງການພັດທະນາ ແລະ ອວຕສ ແລ້ວ, ແຜນການຍົກຍ້າຍຈັດສັນປະຊາຊົນ ຈຶ່ງຖືວ່າ ສາມາດນຳໃຊ້ໄດ້ທາງກົດໝາຍ. ແຜນການຍົກຍ້າຍຈັດສັນປະຊາຊົນ ສາມາດຈັດຕັ້ງປະຕິບັດໄດ້ ຫັລງຈາກລັດຖະບານໄດ້ຮັບຮອງ. ເພື່ອການປັບປຸງ ແລະຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ, ວຽກງານທີ່ສຳຄັນທີ່ຄວນຈະຕ້ອງໄດ້ດຳເນີນການຢາງຕິດຕໍ່ກັນມີຄືດັ່ງລຸ່ມນີ້.

ແຜນການຍົກຍ້າຍຈັດສັນປະຊາຊົນ ທີ່ກະກຽມໃນໄລຍະເຮັດບົດວິພາກເສດຖະກິດ-ເຕັກນິກແບບະອຽດແມ່ນຄວນໄດ້ກຳນົດຊ່ອງຫວ່າງທີ່ຍັງມີຢູ່ ແລະ ກິດຈະກຳທີ່ຈຳເປັນຕ້ອງເຮັດໃຫ້ແລ້ວ ກ່ອນຈະຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ ລວມທັງກິດຈະກຳທີ່ອາດຈຳເປັນຕ້ອງເຮັດໃນໄລຍະຈັດຕັ້ງປະຕິບັດຕົວຈິງ. ເຈົ້າຂອງໂຄງການຕ້ອງດຳເນີນຕາມບາດກ້າວທີ່ຈຳເປັນ ໂດຍອີງໃສ່ຂໍ້ມູນຂ່າວສານທີ່ມີໃນແຜນການຍົກຍ້າຍຈັດສັນປະຊາຊົນ ເພື່ອຄຸ້ມຄອງ ແລະ ຊີ້ນຳການຈັດຕັ້ງປະຕິບັດວຽກງານນັ້ນ ໃຫ້ໄດ້ຜົນ.

ໃນແຜນການຍົກຍ້າຍຈັດສັນປະຊາຊົນ ຄວນມີຕາຕະລາງເວລາຈັດຕັ້ງປະຕິບັດ ທີ່ສະແດງອອກໃຫ້ເຫັນເຖິງກິດຈະກຳສະເພາະ ແລະ ສາຍພົວພັນກັບວຽກງານກໍ່ສ້າງ. ຄວນຄິດໃນໃຈໄວ້ວ່າ ການເວນຄືນຊັບສິນ, ການຈ່າຍເພື່ອເປັນການທົດແທນຄ່າເສຍຫາຍແບບຄົບຖ້ວນ, ກິດຈະກຳຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ ສຳລັບຊ່ວງໃດໜຶ່ງ ຫລື ໄລຍະໃດໜຶ່ງນັ້ນ (ຍົກເວັ້ນແຕ່ມາດຕະການຟື້ນຟູເສດຖະກິດ, ເຊັ່ນ: ການຝຶກອົບຮົມ ຫລື ມາດຕະການອື່ນໆ ທີ່ໄດ້ແນະນຳມາ) ແມ່ນຈະຕ້ອງ ຄວນເຮັດໃຫສຳເລັດ ກ່ອນຈະເລີ້ມວຽກກໍ່ສ້າງຢູ່ໃນຊ່ວງນັ້ນ ຫລື ໄລຍະນັ້ນ.

## 15.2. ກິດຈະກຳ ກ່ອນຈັດຕັ້ງປະຕິບັດ

ກິດຈະກຳ ກ່ອນຈັດຕັ້ງປະຕິບັດ ຈົນຮອດ ແຜນການຍົກຍ້າຍຈັດສັນປະຊາຊົນ ໄດ້ເຮັດສຳເລັດແລ້ວ ແມ່ນຈະຂຶ້ນກັບປະເພດຂອງໂຄງການ ແລະ ປະເພດເຕັກນິກ ທີ່ຕ້ອງໄດ້ເຮັດການສຶກສາ. ຍົກເອົາກໍລະນີ ໂຄງການຊັບພະຍາກອນນ້ຳ ເປັນຕົວຢ່າງ, ກິດຈະກຳທີ່ມີຄວາມຈຳເປັນ ກ່ອນຈັດຕັ້ງປະຕິບັດ ມີດັ່ງຕໍ່ໄປນີ້.

<u>ສຳເລັດການສຶກສາດ້ານພູມສັນຖານ ແລະອຸທົກກະສາດ</u>

ການສ້າງແຜນທີ່ລະອຽດທາງດ້ານພູມສັນຖານຂອງເຂດໂຄງການ, ລວມທັງອ່າງໂຕ່ງຂອງສາຍນ້ຳແລະເຂດລະຫວ່າງສາຍນ້ຳ ແລະການສຳຫລວດດ້ານອຸທົກກະສາດ ແມ່ນຈະເປັນວຽກບູລິມະສິດສູງສຸດຢູ່ໃນໂຄງການ. ຖ້າບໍ່ມີການສຳຫລວດດ້ານພູມສັນຖານ ແລະອຸທົກກະສາດ ທີ່ຖືກຕ້ອງ ແລະເໝາະສົມແລ້ວ, ຊຶ່ງເຂດທີ່ຖືກກະທົບຈາກໂຄງການ ກໍບໍ່ສາມາດຈະກຳນົດໄດ້ຢ່າງຖືກຕ້ອງ.

<u>ການສຳຫລວດກຳມະສິດທີ່ດິນ ແລະ ແຜນທີ່ກ່ຽວກັບການຄອບຄອງທີ່ດິນ</u>

ການສຳຫລວດພູມສັນຖານ ແລະທາງດ້ານອຸທົກກະສາດ, ມັນມີຄວາມຈຳເປັນທີ່ສຸດ ທີ່ການກະກຽມ ແຜນທີ່ທີ່ດິນ ໃນເຂດໂຄງການ ຈະຕ້ອງໄດ້ກຳນົດ ໃຫ້ມີລະບົບຊົນລະປະທານເພື່ອການສະໜອງນ້ຳເຂົ້າສູ່ ການຜະລິດໃນລະດູແລ້ງ. ແຜນທີ່ດັ່ງກ່າວ ຄວນມີຂໍ້ມູນກ່ຽວກັບເຈົ້າຂອງທີ່ດິນ. ຂໍ້ມູນ ແລະແຜນທີ່ນັ້ນ ຈະຊ່ວຍໃຫ້ຮູ້ປະຊາຊົນ ທີ່ຈະໄດ້ຮັບຜົນປະໂຫຍດ, ທີ່ຕັ້ງ ແລະ ຂະໜາດຂອງທີ່ດິນ.

<u>ຕົວຊີ້ວັດສຳລັບການອອກແບບໂຄງການ.</u>

ຫລັງຈາກສຳເລັດການອອກແບບທາງດ້ານພູມສັນຖານ ແລະອຸທົກກະສາດແລ້ວ, ຕົວຊີ້ວັດໃນການອອກແບບຂອງໂຄງການ ເຊັ່ນ ລະດັບຂອງເຂື່ອນ, ລວງກວ້າງຂອງຄອງ, ຄອງລະບາຍນ້ຳ, ເສັ້ນທາງບໍລິການ ແລະທີ່ຕັ້ງ ແມ່ນຈະຕ້ອງໄດ້ມີການກຳນົດໄວ້ຢ່າງລະອຽດ ແລະ ເຮັດໃຫ້ສຳເລັດ. ຕົວຊີ້ວັດ ສຳລັບການອອກແບບໂຄງການ ຈະຊ່ວຍໃນການກຳນົດ ຜົນກະທົບຂອງໂຄງການຕໍ່ຊັບສິນຂອງທຸກຄົນ.

<u>ການກຳນົດເຂດ ແລະຜູ້ທີ່ຖືກກະທົບ</u>

ອີງໃສ່ແຜນທີ່ກຳມະສິດທີ່ດິນ ແລະ ການອອກແບບວຽກກໍ່ສ້າງໃນເຂດໂຄງການ ແມ່ນຈະມີຄວາມສາມາດກຳນົດທີ່ດິນທີ່ຈະຖືກກະທົບ. ຂໍ້ມູນຂ່າວສານ ຈະຊ່ວຍໃຫ້ຮູ້ເຈົ້າຂອງທີ່ດິນທີ່ຈະໄດ້ຮັບຜົນປະໂຫຍດ ແລະພື້ນຖານທາງດ້ານເສດຖະກິດຂອງເຂົາເຈົ້າ ທີ່ຈະໄດ້ຮັບຜົນກະທົບ ຈາກການຂະຫຍາຍຄອງອັນດັບສອງ ຂອງຊົນລະປະທານ, ການຟື້ນຟູ ແລະການກໍ່ສ້າງຄອງລະບາຍນ້ຳແລະເສັ້ນທາງບໍລິການ. ຂໍ້ມູນຂ່າວສານ ຍັງຈະເຮັດໃຫ້ຮູ້ໄດ້ເຖິງຂອບເຂດຂອງເນື້ອທີ່ດິນ ທີ່ຈະຖືກນ້ຳຖ້ວມ ແລະ ທັງຈະຮູ້ໄດ້ ຈຳນວນຜູ້ທີ່ຖືກກະທົບທີ່ຢູ່ຕອນເທິງເໜືອເຂື່ອນອີກດ້ວຍ.

<u>ການໂຄສະນາຂໍ້ມູນຂ່າວສານ ໃຫ້ມວນຊົນ ແລະປັບປຸງການສຳຫລວດ ແລະ ບັນຊີປະຊາກອນ</u>

ຫລັງຈາກຮູ້ຜູ້ທີ່ຖືກກະທົບ ແລະ ເຂດທີ່ຈະຖືກນ້ຳຖ້ວມແລ້ວ, ແມ່ນຄວນໄດ້ດຳເນີນການໂຄສະນາຂໍ້ມູນຂ່າວສານໃຫ້ມວນຊົນ ເພື່ອແຈ້ງໃຫ້ຜູ້ທີ່ຖືກກະທົບຊາບ ກ່ຽວກັບໂຄງການແລະຈຸດປະສົງຂອງມັນ, ຕາຕະ ລາງທີ່ຈະ

ລົງສຳຫລວດ ແລະ ກະກຽມບັນຊີ ເພື່ອຈະໄດ້ປັບປຸງແຜນການຍົກຍ້າຍຈັດສັນປະຊາຊົນໃຫ້ສົມບູນຕື່ມ. ຫາກເປັນໄປໄດ້ກໍຄວນສ້າງສູນຂໍ້ມູນຂ່າວສານຂຶ້ນ.

<u>ປັບປຸງ ແຜນການຍົກຍ້າຍຈັດສັນປະຊາຊົນ</u>

ການສຳຫລວດຜູ້ທີ່ຖືກກະທົບ ແລະການຂຶ້ນບັນຊີຊັບສິນທີ່ຈະສູນເສຍ ແມ່ນຄວນໄດ້ສຶກສາກັບ ປະຊາຊົນໝົດທຸກຄົນ ທີ່ຍັງບໍ່ທັນໄດ້ພິຈາລະນາມາກ່ອນ ໃນຮ່າງແຜນການຍົກຍ້າຍຈັດສັນປະຊາຊົນ. ນອກນັ້ນ, ການສຳຫລວດເສດຖະກິດ-ສັງຄົມ ກໍຄວນໃຫ້ກວມເອົາຢ່າງໜ້ອຍ 20% ຂອງພົນລະເມືອງ. ອີງໃສ່ການສຳຫລວດຜູ້ທີ່ຖືກກະທົບ ແລະ ບັນຊີຊັບສິນທີ່ເສຍຫາຍ ບວກກັບການສຳຫລວດພື້ນຖານຕື່ມ, ແຜນການຍົກຍ້າຍຈັດສັນປະຊາຊົນນັ້ນ ແມ່ນຄວນຈະໄດມີການທົບທວນຄືນ ແລະປັບປຸງໃຫ້ຄົບຖ້ວນສົມບູນ. ແຜນການຍົກຍ້າຍຈັດສັນປະຊາຊົນ ແມ່ນຄວນໄດ້ນຳເອົາມາປຶກສາຫາລື ກັບອົງການປົກຄອງທ້ອງຖິ່ນ ແລະກົມກອງຕ່າງໆຂອງລັດທີ່ກ່ຽວຂ້ອງກັບໂຄງການດັ່ງກ່າວ. ແຜນການຍົກຍ້າຍຈັດສັນປະຊາຊົນ ສະບັບປັບປຸງມານັ້ນ ແມ່ນຄວນໄດ້ສະເໜີໃຫ້ອົງການປົກຄອງທ້ອງຖິ່ນ ລວມທັງບັນດາກະຊວງທີ່ກ່ຽວຂ້ອງ ແລະ ອຊນສ ກວດກາແລະພິຈາລະນາຄືນ ກ່ອນຈະລົງມືຈັດຕັ້ງປະຕິບັດໂຄງການ.

## 15.3. ກິດຈະກຳຈັດຕັ້ງປະຕິບັດ ການຍົກຍ້າຍຈັດສັນປະຊາຊົນ

ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ກຳນົດກິດຈະກຳຕ່າງໆ ທີ່ຈະຕ້ອງດຳເນີນໃນໄລຍະຈັດຕັ້ງປະຕິບັດ. ຍົກເອົາໂຄງການຊັບພະຍາກອນນ້ຳອັນເກົ່າມາເປັນຕົວຢ່າງອີກ, ກິດຈະກຳທີ່ຈະນຳເອົາຈັດຕັ້ງປະຕິບັດສາມາດສະຫລຸບໄດ້ດັ່ງນີ້:

<u>ການສ້າງຕັ້ງຄະນະກຳມະການໄກ່ເກ່ຍ</u>

ໃນເມື່ອແຜນການຍົກຍ້າຍຈັດສັນປະຊາຊົນ ໄດ້ຖືກຮັບຮອງເອົາຢ່າງເປັນທາງການແລ້ວ, ເຈົ້າຂອງໂຄງການຄວນໄດ້ສະເໜີ ອວຕສ ແລະລັດຖະບານ ເພື່ອສ້າງຕັ້ງຄະນະກຳມະການໄກ່ເກ່ຍຂໍ້ຂັດແຍ່ງ ໃນແຕ່ລະເມືອງທີ່ຢູ່ໃນເຂດໂຄງການ.

<u>ປັບປຸງຄວາມອາດສາມາດຂອງໜ່ວຍງານຍົກຍ້າຍຈັດສັນປະຊາຊົນ</u>

ພາຍຫລັງທີ່ໄດ້ສ້າງຕັ້ງຄະນະກຳມະການໄກ່ເກ່ຍແລ້ວ, ພະນັກງານຂອງໜ່ວຍງານຍົກຍ້າຍຈັດສັນປະຊາຊົນຄວນໄດ້ຮັບການຝຶກອົບຮົມ ກ່ຽວກັບບັນຫາການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ. ການຝຶກອົບຮົມ ຄວນດຳເນີນໂດຍຜູ້ຊ່ຽວຊານຍົກຍ້າຍຈັດສັນປະຊາຊົນ ທີ່ຈະໃຫ້ຄຳເຫັນແກ່ໜ່ວຍງານຄຸ້ມຄອງໂຄງການ ແລະ ກະຊວງອື່ນໆທີ່ກ່ຽວຂ້ອງ ກັບການຍົກຍ້າຍຈັດສັນປະຊາຊົນ ແລະຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ. ການຝຶກອົບຮົມ ຄວນສຸມໃສ່ນະໂຍບາຍ ແລະ ຂັ້ນຕອນດຳເນີນການຍົກຍ້າຍຈັດສັນປະຊາຊົນ, ຂັ້ນຕອນຂອງການປຶກສາຫາລື ແລະການເຂົ້າຮ່ວມຂອງປະຊາຊົນ, ການປຶກສາຫາລືໃນກຸ່ມທີ່ເປັນຈຸດສຸມ ແລະ ການປຶກສາຫາລືກ່ຽວກັບຜົນປະໂຫຍດທີ່ຈະໄດ້ຮັບ. ການຝຶກອົບຮົມ ກໍຄວນລວມເອົາທັງຫົວເລື່ອງກ່ຽວກັບການວາງແຜນ ແລະການໃຫ້ການຊ່ວຍເຫຼືອ ໃນການຟື້ນຟູຊີວິດການເປັນຢູ່ຂອງກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ທັງໃນກຸ່ມຜູ້ທີ່ຖືກກະທົບ ແລະ ກຸ່ມທີ່ໄດ້ຮັບຜົນປະໂຫຍດ.

*ການປຶກສາຫາລື ກັບກຸ່ມຄົນທີ່ໄດ້ຮັບຜົນປະໂຫຍດ*

ຫລັງຈາກເຮັດແຜນທີ່ທີ່ດິນສຳເລັດ ແລະຮັບຮູ້ໄດ້ເຈົ້າຂອງທີ່ດິນແລ້ວ (ຜູ້ທີ່ໄດ້ຜົນປະໂຫຍດ) ແມ່ນຄວນໄດ້ດຳເນີນການປຶກສາຫາລືກັບປະຊາຊົນ ເພື່ອໃຫ້ຜູ້ທີ່ໄດ້ຮັບຜົນປະໂຫຍດ ໄດ້ມີຄວາມຮັບຮູ້ ແລະເຂົ້າໃຈ ກ່ຽວກັບຜົນກະທົບຈາກວຽກກໍ່ສ້າງ, ຈຸດປະສົງ ແລະຂັ້ນຕອນ ເພື່ອແກ້ໄຂບັນຫາທີ່ດິນ. ປະຊາຊົນກຸ່ມທີ່ໄດ້ຮັບຜົນປະໂຫຍດຄວນໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບກົນໄກແກ້ໄຂຂໍ້ຂັດແຍ່ງ ແລະ ການສ້າງຕັ້ງຄະນະກຳມະການໄກ່ເກ່ຍໃນແຕ່ລະເມືອງ. ຜົນຂອງກອງປະຊຸມກັບປະຊາຊົນ ແມ່ນຈະຕ້ອງໄດ້ປະກອບເອກກະສານ ແລະ ບັນທຶກບັນຫາຕ່າງໆທີ່ໄດ້ຍົກຂື້ນ ແລະການຕົກລົງຕ່າງໆທີ່ໄດ້ບັນທຶກມາ.

<u>ການປັບທີ່ດິນ ຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ</u>

ຫລັງຈາກດຳເນີນການປຶກສາຫາລືມາແລ້ວ, ແມ່ນຄວນໄດ້ດຳເນີນການປັບທີ່ດິນ ໂດຍແນໃສ່ເຮັດໃຫ້ຜົນກະທົບທາງລົບນັ້ນໜ້ອຍທີ່ສຸດ ຕໍ່ເຈົ້າຂອງທີ່ດິນທີ່ມີຂະໜາດນ້ອຍ ແລະຮັບປະກັນວ່າແຕ່ລະຄອບຄົວທີ່ໄດ້ຮັບຜົນປະໂຫຍດນີ້ ຍັງມີທີ່ດິນ ທີ່ສາມາດທຳມາຫາກິນໄດ້. ຂະໜາດທີ່ທຳມາຫາກິນໄດ້ນັ້ນ ແມ່ນຄວນໄດ້ກຳນົດອອກມາໂດຍອີງໃສ່ຜະລິດຕະພາບຂອງດິນ ທີ່ນຳໃຊ້ນ້ຳຊົນລະປະທານ ແລະປຶກສາຫາລືກັບຜູ້ນຳຂອງຊຸມຊົນ ແລະປະຊາຊົນທີ່ໄດ້ຮັບຜົນປະໂຫຍດ.

<u>ແຜນທີ່ທີ່ດິນ ທີ່ໄດ້ກວດແກ້ຄືນໃໝ່</u>

ຄວນໄດ້ເຮັດແຜນທີ່ທີ່ດິນ ຫລັງຈາກໄດ້ປັບທີ່ດິນສຳເລັດ. ແຜນທີ່ໃໝ່ນີ້ ຄວນໄດ້ນຳເອົາມາປຶກສາຫາລືກັບຜູ້ທີ່ໄດ້ຮັບຜົນປະໂຫຍດ ເພື່ອເຫັນດີເຫັນພ້ອມນຳກັນ. ແຜນທີ່ໃໝ່ນີ້ ຈະເປັນພື້ນຖານເພື່ອອອກໃບຕາດິນ.

<u>ອັດຕາການທົດແທນຄ່າເສຍຫາຍ ແລະ ກຳນົດອາຍຸການຂອງມັນ</u>

ຫລັງຈາກປັບປຸງ ແລະ ຮັບຮອງເອົາແຜນການຍົກຍ້າຍຈັດສັນປະຊາຊົນແລ້ວ, ອັດຕາການທົດແທນຄ່າເສຍຫາຍ ສຳລັບຊັບສິນທີ່ຖືກເສຍຫາຍ ກໍຕ້ອງໄດ້ຕົກລົງໃຫ້ແລ້ວ ເພື່ອຮັບປະກັນວ່າມັນກົງກັບລາຄາຕະຫຼາດ ແລະການທົດແທນຄ່າເສຍຫາຍ ກໍແມ່ນໄດ້ເຮັດໄປຕາມມູນຄ່າປ່ຽນແທນ. ອັດຕາທົດແທນສຸດທ້າຍນັ້ນ ແມ່ນຄວນໃຫ້ອີງການຮັບຜິດຊອບໂຄງການຮັບຮອງເອົາເສຍກ່ອນ ຈຶ່ງຈະນຳໃຊ້ເພື່ອກຳນົດມູນຄ່າ ສຳລັບເປັນການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ຖືກກະທົບ.

<u>ການໂຄສະນາຂໍ້ມູນຂ່າວສານໃຫ້ປະຊາຊົນ</u>

ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ ໂດຍໄດ້ຮັບການຊ່ວຍເຫລືອຈາກອົງການປົກຄອງທ້ອງຖິ່ນ ແມ່ນຈະຕ້ອງໄດ້ຈັດຕັ້ງກອງປະຊຸມປຶກສາຫາລື ກັບປະຊາຊົນໃນແຕ່ລະບ້ານ. ໜ່ວຍງານດັ່ງກ່າວ ແມ່ນຈະຕ້ອງໄດ້ເຮັດການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບບັນຊີຊັບສິນ ແລະ ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ກ່ອນຈະໃຊ້ຈ່າຍຕົວຈິງ.

<u>ການທົດແທນຄ່າເສຍຫາຍ ແລະສິດທິ ທີ່ຈະໄດ້ຮັບຂອງຜູ້ທີ່ຖືກກະທົບ</u>

ພາຍຫລັງທີ່ໄດ້ກຳນົດລາຄາທົວໜ່ວຍ ແລະ ໄດ້ຖືກຮັບຮອງ ໂດຍອົງການຮັບຜິດຊອບໂຄງການແລ້ວ, ຄະນະໜ່ວຍງານພາກສະໜາມ ແມ່ນຈະຕ້ອງໄດ້ລົງຢ້ຽມຢາມຜູ້ທີ່ຖືກກະທົບແຕ່ລະຄົນ ເພື່ອພິສູດບັນຊີ, ສິດທີ່ຈະ

ໄດ້ຮັບ ແລະ ຈຳນວນທັງໝົດ ທີ່ຈະເປັນການທົດແທນຄ່າເສຍຫາຍ ແລະເງິນອຸດໜູນຜູ້ທີ່ຖືກກະທົບ ແຕ່ລະຄົນ. ສຳລັບຟອມເອກະສານ ທົດແທນຄ່າເສຍຫາຍຂອງຜູ້ທີ່ຖືກກະທົບ ແຕ່ລະຄົນແມ່ນຈະຕ້ອງໄດ້ຕື່ມໃຫ້ແລ້ວ ແລະ ຈະໄດ້ເຊັນ ເພື່ອເປັນການຢັ້ງຢືນການເຫັນດີນຳ ເນື້ອທີ່ແລະຊັບສິນ ທີ່ຖືກກະທົບ, ສິດທິທີ່ຈະໄດ້ຮັບ ແລະ ຈຳນວນເງິນທີ່ເປັນການທົດແທນຄ່າເສຍຫາຍ. ສຳເນົາຂອງຟອມເອກະສານດັ່ງກ່າວ ແມ່ນຈະມອບໃຫ້ຜູ້ທີ່ຖືກກະທົບເພື່ອເກັບໄວ້ເປັນຫລັກຖານ. ຖ້າບໍ່ເຫັນດີນຳບັນຊີດັ່ງກ່າວ ຫລື ອັດຕາຂອງການທົດແທນ ແມ່ນຈະຕ້ອງໄດ້ບັນທຶກໄວ້ ແລະ ແກ້ໄຂຕາມຂັ້ນຕອນຕ່າງໆ ທີ່ໄດ້ກຳນົດໄວ້. ຄະນະທີມງານພາກສະໜາມ ແມ່ນຍັງຈະຕ້ອງໄດ້ຢັ້ງຢືນທາງເລືອກຂອງຜູ້ທີ່ຖືກກະທົບ ທີ່ຈະຮັບເອົາເປັນເງິນສົດ ຫລືເອົາດິນມາປ່ຽນແທນ ຫລື ການຊ່ວຍເຫລືອການຟື້ນຟູເສດຖະກິດອື່ນໆ.

ກອງປະຊຸມສາທາລະນະ

ເມື່ອສຳເລັດການທົດແທນຄ່າເສຍຫາຍ ແລະ ໃຫ້ສິດທິແກ່ຜູ້ທີ່ຖືກກະທົບແລ້ວ, ກອງປະຊຸມສາທາລະນະ (ລວມ) ແມ່ນຄວນໄດ້ຈັດຂຶ້ນແຕ່ລະບ້ານ ເພື່ອແຈ້ງໃຫ້ຜູ້ທີ່ຖືກກະທົບຮັບຊາບ ກ່ຽວກັບ (i) ເວລາຈະຈ່າຍເງິນໃຫ້; (ii) ສະຖານທີ່ ທີ່ຈະຍົກຍ້າຍໄປຢູ່ສຳລັບຜູ້ທີ່ເຫັນດີຍົກຍ້າຍໄປນັ້ນ; ແລະ (iii) ເວລາທີ່ຈະເລີ້ມຕົ້ນວຽກກໍ່ສ້າງ. ນອກນີ້, ຜູ້ທີ່ຖືກກະທົບ ແມ່ນຍັງຈະໄດ້ຮັບການແຈ້ງການ ໃຫ້ເກັບກ່ຽວຜົນລະປູກ ກ່ອນຈະເລີ້ມຕົ້ນກໍ່ສ້າງໂຄງການ. ຕາຕະລາງເວລາສຳລັບວຽກກໍ່ສ້າງ ແມ່ນຈະໄດ້ເອົາໄປປະສານສົມທົບກັບຜູ້ຮັບເໝົາ ເພື່ອຮັບປະກັນວ່າ ຜູ້ທີ່ຖືກກະທົບ ມີເວລາພຽງພໍ ເພື່ອສາມາດເກັບກ່ຽວຜົນລະປູກໃຫ້ແລ້ວ ແລະ ເພື່ອບໍ່ທຳລາຍຜົນລະປູກນັ້ນ.

ການຈ່າຍເງິນ ສຳລັບເປັນການທົດແທນຄ່າເສຍຫາຍ ແລະເງິນອຸດໜູນ

ການຈ່າຍເງິນສຳລັບເປັນການທົດແທນຄ່າເສຍຫາຍ ຫລື ເງິນອຸດໜູນນັ້ນ ແມ່ນຈະໄດ້ດຳເນີນການໃນສະຖານທີ່ສາທາລະນະ. ສະຖານທີ່, ມື້ ແລະ ເວລາຈ່າຍເງິນນັ້ນ ແມ່ນຈະໄດ້ແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ແລະຮັບປະກັນວ່າ ພະນັກງານບ້ານ ຈະແຈ້ງໃຫ້ຜູ້ທີ່ຖືກກະທົບທຸກຄົນ ທີ່ຢູ່ໃນເຂດຂອງຕົນຮັບຊາບ.

ການຍົກຍ້າຍຈັດສັນ

ແຜນການຍົກຍ້າຍຈັດສັນຜູ້ທີ່ຖືກກະທົບ ແມ່ນຈະຕ້ອງໄດ້ກະກຽມ ໂດຍໄດ້ມີການປຶກສາຫາລືກັບຜູ້ທີ່ຖືກກະທົບຢ່າງຄັກແນ່ ໂດຍມີພະນັກງານໜ່ວຍງານຍົກຍ້າຍຈັດສັນປະຊາຊົນ, ເມືອງ ແລະ ບ້ານ ໃຫ້ການຊ່ວຍເຫຼືອ. ຜູ້ທີ່ຖືກກະທົບ ແມ່ນຈະຕ້ອງໃຫ້ມີເວລາພຽງພໍ ເພື່ອຍ້າຍອອກຈາກເຂດ ທີ່ຈະມອບທີ່ດິນໃຫ້ເປັນເຂດກໍ່ສ້າງ.

ກົນໄກ ສຳລັບການຊ່ວຍເຫລືອການຟື້ນຟູເສດຖະກິດ

ກົນໄກ ເພື່ອວາງແຜນ ແລະໃຫ້ການຊ່ວຍເຫລືອ ເພື່ອການຟື້ນຟູເສດຖະກິດ ແກ່ຜູ້ທີ່ຖືກກະທົບຫຼາຍ ແລະກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ແມ່ນຈະເລີ້ມໄດ້ທັນທີ ຫລັງຈາກການຈ່າຍເງິນໃຫ້ຜູ້ທີ່ຖືກກະທົບ ເປັນການທົດແທນຄ່າເສຍຫາຍ ໄດ້ສຳເລັດລົງແລ້ວ. ການຊ່ວຍເຫລືອເພື່ອການຟື້ນຟູເສດຖະກິດ ຈະຂຶ້ນກັບທາງເລືອກ, ບູລິມະສິດ ແລະຄວາມຈຳເປັນຂອງຜູ້ທີ່ຖືກກະທົບ.

# ພາກທີ IV

# ການຈັດຕັ້ງປະຕິບັດການຍົກຍ້າຍຈັດສັນປະຊາຊົນ

## ໝວດທີ16. ກົນໄກ ກ່ອນການຈັດຕັ້ງປະຕິບັດ

ໃນເລື້ອງວາງແຜນ ແລະດຳເນີນການຍົກຍ້າຍຈັດສັນປະຊາຊົນ ໃນໂຄງການພັດທະນາ, ຄວາມຮັບຜິດຊອບ ແມ່ນຂຶ້ນກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະເຈົ້າຂອງໂຄງການ ແຕ່ຖ້າບໍ່ໄດ້ຮັບການສະໜັບສະໜູນຈາກອົງການປົກຄອງຂັ້ນຮາກຖານ ແລະ ຂັ້ນແຂວງແລ້ວ ການວາງແຜນ ແລະການດຳເນີນການດັ່ງກ່າວ ແມ່ນຈະພົບກັບຄວາມຫຍຸ້ງຍາກ. ອົງການປົກຄອງຂັ້ນແຂວງ ແມ່ນມີບົດບາດຫ້າວຫັນໃນການສະໜັບສະໜູນ ແລະ ການປະສານງານ ໃນການຈັດຕັ້ງປະຕິບັດແຜນພັດທະນາ ທີ່ກະຊວງຕ່າງໆແລະພະແນກການຂອງຕົນໃນແຂວງ ໄດ້ເລີ້ມມາ. ຢ່າງໃດກໍຕາມ, ຍ້ອນລະບົບການປົກຄອງເປັນຂັ້ນ, ການປະສານງານ ລະຫວ່າງ ການຈັດຕັ້ງໃນຂະແໜງການກັບອົງການປົກຄອງທ້ອງຖິ່ນສ່ວນຫຼາຍ ຈຶ່ງມັກພົບພໍ້ກັບຄວາມຫຍຸ້ງຍາກ. ບັນຫາສຳຄັນທາງດ້ານການຈັດຕັ້ງ ໃນລະດັບທ້ອງຖິ່ນອາດມີ:

i. ເຖິງແມ່ນກິດຈະກຳຍົກຍ້າຍຈັດສັນປະຊາຊົນ ໄດ້ກວມເອົາຫລາຍຂົງເຂດວິຊາການ, ແຕ່ບໍ່ມີອົງການຈັດຕັ້ງໃດໜຶ່ງເລີຍ ທີ່ມີຄວາມຮັບຜິດຊອບ ວຽກງານທັງໝົດກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ;

ii. ການຂາດເຂີນພະນັກງານວິຊາການ ທີ່ມີຄວາມຊຳນິຊຳນານງານໃນຫລາຍຂະແໜງການ ເພື່ອດຳເນີນການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ ເຊັ່ນ: ການວາງແຜນ ແລະ ການພັດທະນາສັງຄົມ, ການພັດທະນາຊັບພະຍາກອນມະນຸດ ແລະ ສິ່ງແວດລ້ອມ;

iii. ຈິດສຳນຶກຂອງພະນັກງານທ້ອງຖິ່ນ ກ່ຽວກັບ ບັນຫາການຍົກຍ້າຍຈັດສັນປະຊາຊົນ ແມ່ນຍັງຕ່ຳ;

iv. ບົດບາດ ແລະ ຄວາມຮັບຜິດຊອບສ່ວນໃຫຍ່ ທີ່ໄດ້ມອບໃຫ້ພະນັກງານຂອງອົງການຈັດຕັ້ງກ່ຽວຂ້ອງ ໃນການວາງແຜນ ແລະພັດທະນາການຍົກຍ້າຍຈັດສັນປະຊາຊົນ ແມ່ນຍັງບໍ່ທັນໄດ້ມີການກຳນົດລະອຽດເທື່ອ.

### 16.1. ສະພາບການຈັດຕັ້ງ

ໜ້າວຽກທຳອິດ ແລະສຳຄັນກ່ວາໝູ່ ແມ່ນການລິເລີ້ມ ການດຳເນີນການຍົກຍ້າຍຈັດສັນປະຊາຊົນ ໂດຍມີການສ້າງໜ່ວຍງານໃດໜຶ່ງຂຶ້ນກັບເຈົ້າຂອງໂຄງການ ຫລື ອົງການທີ່ເຮັດໜ້າທີ່ຈັດຕັ້ງປະຕິບັດດັ່ງກ່າວນັ້ນ, ໃນກໍລະນີທີ່ຍັງບໍ່ທັນມີໜ່ວຍງານນັ້ນເທື່ອ. ນອກຈາກນີ້, ກໍຄວນໄດ້ມີການຄົ້ນຄ້ວາວິໃຈ ກ່ຽວກັບຄວາມຮູ້ຄວາມສາມາດຂອງໜ່ວຍງານທີ່ສ້າງຂຶ້ນ ທີ່ຈະເຮັດໜ້າທີ່ຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນນັ້ນ, ເພື່ອປັບປຸງຄວາມອາດສາມາດຂອງເຂົາເຈົ້າ ທັງເພື່ອຮັບປະກັນ ໃຫ້ເຂົາເຈົ້າມີຄວາມເຂົ້າໃຈດີ ກ່ຽວກັບເນື້ອໃນນະໂຍບາຍ, ວິທີການ ແລະຂັ້ນຕອນຕ່າງໆອັນຈຳເປັນ ເພື່ອເຮັດໃຫ້ການຍົກຍ້າຍຈັດສັນປະຊາຊົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ. ການສ້າງຕັ້ງກົນໄກທີ່ເໝາະສົມ ແມ່ນຈະເປັນສິ່ງທີ່ດີສຸດ ເພື່ອເຮັດໃຫ້ແມ່ຍິງສາມາດໄດ້ເຂົ້າຮ່ວມໃນຂະບວນການຍົກຍ້າຍຈັດສັນປະຊາຊົນ.

## 16.1.1. ²ະÁນ¡ສິ່ງÁ¸ດລÉອມ Áລະສກົງຄ່ົມ/ ÎÈ¸ຍງານຍ໋ກ¡ຍÉາຍຈັດສກັນ¯ະຊາຊ່ົນ

ໜ່ວຍງານຄຸ້ມຄອງຂອງໂຄງການ ຢູ່ກະຊວງ ຫລື ອົງການຈັດຕັ້ງປະຕິບັດ ແມ່ນມີໜ້າທີ່ຊີ້ນຳການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດໂຄງການ. ຢ່າງໃດກໍຕາມ, ກ່ຽວກັບ ບັນຫາການຍົກຍ້າຍຈັດສັນປະຊາຊົນແລ້ວ, ແມ່ນ ມັນມີຄວາມຈຳເປັນ ທີ່ຈະຕ້ອງໄດ້ມີການສ້າງຕັ້ງພະແນກສິ່ງແວດລ້ອມແລະສັງຄົມ ຫລືໜ່ວຍງານຍົກຍ້າຍຈັດສັນປະຊາຊົນຂຶ້ນ ຢູ່ໃນໜ່ວຍງານຄຸ້ມຄອງຂອງໂຄງການ ຫລືໃນກະຊວງ, ແລ້ວແຕ່ໃນກໍລະນີ ເພື່ອຈະຮັບຜິດຊອບການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນປະຊາຊົນ.

ພະແນກສິ່ງແວດລ້ອມແລະສັງຄົມ ຫລື ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ, ແລ້ວແຕ່ກໍລະນີ, ແມ່ນຈະປະກອບດ້ວຍນັກວິທະຍາສາດທາງດ້ານສັງຄົມ ເປັນຫົວໜ້າ ຊຶ່ງຈະເປັນຜູ້ໃຫ້ຄຳເຫັນ ແລະການສະໜັບສະໜູນທາງດ້ານເຕັກນິກ ເພື່ອຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ແລະ ຈະຮັບຜິດຊອບກິດຈະກຳຍົກຍ້າຍຈັດສັນປະຊາຊົນ ຊຶ່ງລະອຽດມີດັ່ງຕໍ່ໄປນີ້:

- ວາງແຜນການຍົກຍ້າຍຈັດສັນປະຊາຊົນລວມ;
- ດຳເນີນການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ໃຫ້ໄດ້ຕາມຄາດໝາຍເວລາ ແລະ ໃຫ້ຖືກຕ້ອງຕາມນະໂຍບາຍ ແລະ ຫລັກການທົ່ວໄປ ສຳລັບການທົດແທນຄ່າເສຍຫາຍ ຫລື ການຟື້ນຟູເສດຖະກິດຂອງຜູ້ທີ່ຖືກກະທົບ ເພື່ອປັບປຸງ ຫລືຢ່າງໜ້ອຍ ກໍຟື້ນຟູມາດຖານຊີວິດການເປັນຢູ່ຂອງເຂົາເຈົ້າ ໃຫ້ຄືເກົ່າ. ໜ້າວຽກ ແມ່ນຄວນໄດ້ດຳເນີນການ ໂດຍມີການປະສານງານ ກັບໜ່ວຍງານຮັບຜິດຊອບການຍົກຍ້າຍຈັດສັນປະຊາຊົນໃນກະຊວງກ່ຽວຂ້ອງ ຊຶ່ງໃນນັ້ນ ໜ່ວຍງານຄຸ້ມຄອງຂອງໂຄງການ ແມ່ນຈະມີບົດບາດສຳຄັນ;
- ຈັດຕັ້ງການຝຶກອົບຮົມໃຫ້ພະນັກງານ ເມືອງແລະບ້ານ ກ່ຽວກັບການວາງແຜນ ແລະການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ແລະ ກ່ຽວກັບຫລັກການຍົກຍ້າຍຈັດສັນປະຊາຊົນ ໂດຍໃຫ້ສອດຄ່ອງກັບແຜນການຍົກຍ້າຍຈັດສັນປະຊາຊົນ;
- ຊີ້ນຳໂດຍກົງ, ຕິດຕາມກວດກາ ແລະ ດູແລການດຳເນີນການຍົກຍ້າຍຈັດສັນປະຊາຊົນ;
- ປັບປຸງບັນຊີ ເມື່ອຈຳເປັນ, ເຮັດບັນຊີຜູ້ທີ່ໄດ້ຮັບສິດ ແລະ ຈ່າຍຄ່າທົດແທນ ຫລືໃຫ້ການສະໜັບສະໜູນອື່ນໆແກ່ຜູ້ທີ່ຖືກກະທົບ ລວມທັງ ວາງແຜນແລະໃຫ້ການຊ່ວຍເຫລືອ ເພື່ອການຟື້ນຟູເສດຖະກິດ;
- ດຳເນີນການປຶກສາຫາລື ແລະການມີສ່ວນຮ່ວມຂອງປະຊາຊົນ ແລະໄກ່ເກ່ຍຂໍ້ຂັດແຍ່ງ ໂດຍໃຫ້ສອດຄ່ອງກັບເນື້ອໃນຂອງແຜນການຍົກຍ້າຍຈັດສັນປະຊາຊົນ;
- ເຮັດສັນຍາວ່າຈ້າງເອົາອົງການຕິດຕາມກວດກາອິດສະຫລະ ເພື່ອມາຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ແລະສະເໜີມາດຕະການດັດແກ້ ແລະແກ້ໄຂອັນຈຳເປັນ;
- ດັດແກ້ ຫລື ເພີ້ມເຕີມແຜນການຍົກຍ້າຍຈັດສັນປະຊາຊົນ ໂດຍປະສານສົມທົບກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃນກໍລະນີທີ່ມີບັນຫາໃດໜຶ່ງເກີດຂຶ້ນ ຕາມທີ່ໄດ້ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການດັ່ງກ່າວຈາກພາຍໃນ ກໍຄືຈາກອົງການເອກະລາດ ເພື່ອຮັບປະກັນວ່າມັນໄດ້ບັນລຸຕາມຈຸດປະສົງຂອງແຜນການນັ້ນ;
- ໂດຍປະສານສົມທົບກັບໜ່ວຍງານຄຸ້ມຄອງສິ່ງແວດລ້ອມ, ຮັບປະກັນໃຫ້ສະໜອງງົບປະມານໃຫ້ທ່ວງທັນກັບເວລາ ເພື່ອກິດຈະກຳຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ;
- ກະກຽມບົດລາຍງານ ກ່ຽວກັບການຊີ້ນຳ ແລະ ການຕິດຕາມກວດກາ ວຽກຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນເປັນແຕ່ລະໄລຍະ ເພື່ອສະເໜີໜ່ວຍງານຄຸ້ມຄອງຂອງໂຄງການ ແລະ ອວຕສ.

ການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນໃຫ້ໄດ້ຮັບຜົນສຳເລັດ ແມ່ນຕ້ອງໄດ້ມີການປະສານງານຢ່າງໃກ້ຊິດ ລະຫວ່າງ ໜ່ວຍຄຸ້ມຄອງຂອງໂຄງການ ແລະ ອົງການປົກຄອງບ້ານແລະເມືອງ.

<u>ການຈັດຕັ້ງໜ່ວຍງານຍົກຍ້າຍຈັດສັນປະຊາຊົນ</u>

ເພື່ອເຮັດວຽກທີ່ມອບໝາຍໃຫ້ສຳເລັດ, ໜ່ວຍງານຍົກຍ້າຍຈັດສັນປະຊາຊົນແມ່ນຄວນໄດ້ສ້າງ "ທີມງານ" ຂຶ້ນເພື່ອປະຕິບັດໜ້າທີ່ ແລະມີຄວາມຮັບຜິດຊອບສະເພາະ. ທີມງານດັ່ງກ່າວ ແມ່ນຮັບຜິດຊອບ ເຮັດໃຫ້ວຽກທີ່ມອບໝາຍນັ້ນ ມີຜົນສຳເລັດ. ເຖິງແມ່ນວ່າ ຈຳນວນທີມງານ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ ຈະມີຄວາມແຕກຕ່າງກັນ ໄປຕາມແຕ່ລັກສະນະຂອງໂຄງການ ແລະການຍົກຍ້າຍຈັດສັນປະຊາຊົນກໍຕາມ, ຂຶ້ງເຂດໜ້າວຽກ ທີ່ທີມງານ ຄວນຈະຈັດຕັ້ງປະຕິບັດ ມີຄືດັ່ງນີ້:

i. ຄວບຄຸມດູແລ, ຄຸ້ມຄອງ, ປະສານງານແລະຕິດຕາມກວດກາທັງໝົດ;
ii. ສຳຫລວດການວັດແທກລະອຽດ, ບັນຊີ ແລະ ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍແກ່ຜູ້ທີ່ຖືກກະທົບ;
iii. ດຳເນີນການປຶກສາຫາລື, ການເຂົ້າຮ່ວມ ແລະການແກ້ໄຂຂໍ້ຂັດແຍ່ງຂອງປະຊາຊົນ;
iv. ການຍົກຍ້າຍຈັດສັນປະຊາຊົນແລະການພັດທະນາເຂດຍົກຍ້າຍຈັດສັນປະຊາຊົນ;
v. ການວາງແຜນແລະດຳເນີນການຟື້ນຟູເສດຖະກິດ;
vi. ການຄຸ້ມຄອງຂໍ້ມູນຂ່າວສານ, ການເກັບກຳເອກະສານ ແລະ ກະກຽມບົດລາຍງານ;
vii. ການເງິນ ແລະບັນຊີ, ລວມທັງການປ່ອຍເງິນ ແລະ ການຈ່າຍເງິນໃຫ້ຜູ້ທີ່ຖືກກະທົບ ເພື່ອເປັນການທົດແທນຄ່າເສຍຫາຍ, ສະມາຊິກຂອງໜ່ວຍງານ ຈະເຮັດວຽກ ໂດຍຮ່ວມມືນຳກັນ ຢ່າງໃກ້ຊິດ.

### 16.1.2. ຄະນະ¡¿ມະ¡ານÄ¡ÈÀ¡ÈຍຂÓຂັດÁຍÈງ

ຄະນະກຳມະການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງ ອາດມາຈາກຜູ້ຕາງໜ້າຂອງອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ອົງການຈັດຕັ້ງອື່ນໆທີ່ຈຳເປັນ ເພື່ອເຮັດໃຫ້ກຳມະການຂອງຄະນະດັ່ງກ່າວປະຕິບັດໜ້າທີ່ຂອງຕົນໄດ້ຢ່າງມີປະສິດທິພາບ. ມັນມີຄວາມຈຳເປັນທີ່ສຸດ ທີ່ສະມາຊິກທັງໝົດ ຈະຕ້ອງໄດ້ມີຄວາມເຂົ້າໃຈຢ່າງເຕັມສ່ວນກ່ຽວກັບເນື້ອໃນ ນະໂຍບາຍ ແລະສິດທິ ຊຶ່ງຜູ້ທີ່ຖືກກະທົບຈະໄດ້ຮັບ. ມັນມີຄວາມຈຳເປັນ ທີ່ສະມາຊິກຈະຕ້ອງໄດ້ມີຄວາມເຂົ້າໃຈ ກ່ຽວກັບຂັ້ນຕອນໃນການເກັບກຳຂໍ້ມູນ, ການປະເມີນຜົນກະທົບ ແລະ ອັດຕາຂອງການທົດແທນຄ່າເສຍຫາຍ ລວມທັງການປຶກສາຫາລື ແລະການເຂົ້າຮ່ວມຂອງປະຊາຊົນ. ດັ່ງນັ້ນ, ເຈົ້າຂອງໂຄງການ ຄວນໄດ້ຈັດການຝຶກອົບຮົມ ເພື່ອໃຫ້ພະນັກງານທ້ອງຖິ່ນ ແລະສະມາຊິກຂອງຄະນະກຳມະການໄກ່ເກ່ຍນີ້ມີຄວາມຮັບຮູ້ ແລະເຂົ້າໃຈແຈ້ງ ກ່ອນຈະເລີ້ມຕົ້ນກິດຈະກຳຍົກຍ້າຍຈັດສັນປະຊາຊົນ.

### 16.1.3. ອöງ¡ານ¯ö¡ຄອງ ຂ˜ນÁຂ¸ງ Áລະ ຂ˜ນຮາ¡ຖານ

ບົດບາດຂອງອົງການປົກຄອງຂັ້ນແຂວງ ແລະຂັ້ນຮາກຖານ ແມ່ນເປັນອົງການບໍລິຫານເປັນສ່ວນໃຫຍ່, ຊຶ່ງເປັນສາເຫດເຮັດໃຫ້ມີການຈຳກັດ ທາງດ້ານຄວາມຮູ້ ກ່ຽວກັບການວາງແຜນແລະການດຳເນີນກິດຈະກຳການຍົກຍ້າຍຈັດສັນ. ຢ່າງໃດກໍຕາມ, ອົງການປົກຄອງຂັ້ນຮາກຖານ ຈະໄດ້ມີບົດບາດສຳຄັນໃນການພັດທະນາ ກ່ຽວກັບວຽກງານນີ້. ແຕ່ຄວາມສາມາດກໍແມ່ນຍັງຕ່ຳ. ອົງການປົກຄອງຂັ້ນແຂວງ ແລະຂັ້ນຮາກຖານ ພ້ອມທັງຂະແໜງການຕ່າງໆ ແມ່ນສາມາດຊ່ວຍໜ່ວຍງານຄຸ້ມຄອງຂອງໂຄງການ ໃນວຽກງານ:

(i) ຂະບວນການເຜີຍແຜ່ຂໍ້ມູນຂ່າວສານ ແລະປຶກສາຫາລືກັບມວນຊົນ;

(ii) ຊ່ວຍອົງການຮັບຜິດຊອບໂຄງການ ໃນການດຳເນີນການສຳຫລວດພົນລະເມືອງ, ການສຳຫລວດທົ່ວໄປ ແລະເສດຖະກິດ-ສັງຄົມ;

(iii) ການສຳຫລວດເຈົ້າຂອງ ແລະການມີກຳມະສິດຕໍ່ທີ່ດິນ;

(iv) ກຳນົດລາຄາທົດແທນທີ່ດິນ, ໂຄງລ່າງ, ພືນຜະລິດແລະຊັບສິນຄົງທີ່;

(v) ຕໍ່ອາຍຸກຳມະສິດທີ່ດິນແລະຊັບສິນ;

(vi) ມອບທີ່ດິນໃຫ້;

(vii) ຊ່ວຍອົງການຮັບຜິດຊອບໂຄງການໃນການຈ່າຍເງິນເປັນຄ່າທົດແທນ ແລະ ການຊ່ວຍເຫລືອອື່ນໆ;

(viii) ວາງແຜນ ແລະ ດຳເນີນການຍົກຍ້າຍຈັດສັນປະຊາຊົນ ແລະ ຟື້ນຟູເສດຖະກິດຂອງປະຊາຊົນ ໃນລະດັບເມືອງ ແລະ ບ້ານ;

(ix) ຊ່ວຍອົງການຮັບຜິດຊອບໂຄງການ ໃນການແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງຕ່າງໆ.

### 16.1.4. ອöງ¡ານຈñດຕ˜ງê†ບÒ¹ñ¸ງຜöນ¡¿Äລ, ອöງ¡ານຈñດຕ˜ງມະ¹າຊöນ ÁລະÎÈ¸ຍງານຂອງ²າ¡ Àອ¡ະຊöນ

ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ, ອົງການຈັດຕັ້ງມະຫາຊົນ, ທີ່ປຶກສາ, ມະຫາວິທະຍາໄລແລະສະຖາບັນຄົ້ນຄ້ວາອື່ນໆ ທີ່ມີປະສົບການແລະຄວາມຮູ້ ແມ່ນອາດມີສ່ວນຮ່ວມໄດ້. ອົງການຈັດຕັ້ງ ແລະສະຖາບັນດັ່ງກ່າວ ແມ່ນອາດມີບົດບາດສຳຄັນຕໍ່ກິດຈະກຳຍົກຍ້າຍຈັດສັນປະຊາຊົນ ແລະ ອາດສາມາດຕອບສະໜອງຊ່ຽວຊານ ດ້ານຍົກຍ້າຍຈັດສັນປະຊາຊົນ ເຂົ້າຮ່ວມໃນ "ທີມງານ" ຫລັກແຫລ່ງ ທີ່ຮັບຜິດຊອບການວາງແຜນ ແລະພັດທະນາການຍົກຍ້າຍຈັດສັນປະຊາຊົນ ໃນໂຄງການສຳຄັນ.

***ຂໍ້ສະເໜີ:***

1. ໃນໄລຍະຮ່າງ ແຜນການຍົກຍ້າຍຈັດສັນປະຊາຊົນ, ຄວນກະກຽມການຈັດຕັ້ງ ເພື່ອຊີ້ແຈງສາຍພົວພັນລະຫວ່າງ ອົງການຮັບຜິດຊອບທັງໝົດ ແລະລະດັບການເຄື່ອນໄຫວວຽກຕ່າງໆຂອງພວກເຂົາ.
2. ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ກຳນົດຄວາມຕ້ອງການທາງດ້ານການປະກອບພະນັກງານເຂົ້າ, ລວມທັງຜູ້ຊຳນິຊຳນານງານທາງດ້ານເຕັກນິກ ແລະ ວຽກຍົກຍ້າຍຈັດສັນປະຊາຊົນ.
3. ຄວາມຊຳນິຊຳນານງານ ແລະປະສົບການຂອງພະນັກງານທີ່ມີຢູ່ນັ້ນ ແມ່ນຈະຕ້ອງໄດ້ມີການຕີລາຄາຄືນໃໝ່ ແລະຈະຕ້ອງໄດ້ຊອກເບິ່ງຄວາມຈຳເປັນ ເພື່ອຍົກລະດັບໃນຂົງເຂດທີ່ຂາດເຂີນ;
4. ກົນໄກທີ່ເໝາະສົມດ້ານການຍົກລະດັບພະນັກງານ ແລະດ້ານການເງິນ ແມ່ນຄວນໄດ້ຮັບການພັດທະນາ ກ່ອນຈະເລີ້ມດຳເນີນ ວຽກຍົກຍ້າຍຈັດສັນປະຊາຊົນ.

## 16.2. ປັບປຸງຄວາມສາມາດ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ

ມັນມີຄວາມຈຳເປັນ ທີ່ພະນັກງານຂອງໜ່ວຍງານຍົກຍ້າຍຈັດສັນປະຊາຊົນ ຕ້ອງໄດ້ມີຄວາມເຂົ້າໃຈກ່ຽວກັບຂະບວນການ ແລະຂັ້ນຕອນອັນຈຳເປັນສຳລັບການຈັດຕັ້ງປະຕິບັດ, ການຄຸ້ມຄອງ, ການຊີ້ນຳແລະການຕິດຕາມກວດກາ. ເຖິງແມ່ນວ່າພະນັກງານໜ່ວຍຍົກຍ້າຍຈັດສັນປະຊາຊົນ ຈະໄດ້ຮັບການຝຶກອົບຮົມກ່ຽວກັບໃນຫວົ ເລື້ອງຕ່າງໆ ຂອງການວາງແຜນ ແລະ ການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນກໍຕາມ, ແຕ່ຄວນໄດ້ມອບວຽກແລະໜ້າທີ່ທີ່ເປັນບູລິມະສິດນີ້ ໃຫ້ພະນັກງານຢ່າງຄັກແນ່. ໂດຍທົ່ວໄປແລ້ວ, ການຝຶກອົບຮົມ ຄວນປະກອບດ້ວຍ:

- ນະໂຍບາຍ ແລະຫລັກການ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ;
- ຂັ້ນຕອນວາງແຜນການຍົກຍ້າຍຈັດສັນປະຊາຊົນ;
- ຂັ້ນຕອນດຳເນີນການຍົກຍ້າຍຈັດສັນປະຊາຊົນ ແລະຂັ້ນຕອນຂອງກິດຈະກຳຕ່າງໆ;
- ວິທີການປະເມີນການທົດແທນຄ່າເສຍຫາຍ;
- ລະບົບຄຸ້ມຄອງຂໍ້ມູນຂ່າວສານ;
- ຂັ້ນຕອນການເຂົ້າຮ່ວມ ແລະປຶກສາຫາລືກັບປະຊາຊົນ; ແລະ
- ການຄຸມງານ ແລະການຕິດຕາມກວດກາ ການຍົກຍ້າຍຈັດສັນປະຊາຊົນ.

ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ວ່າຈ້າງເອົາພະນັກງານແມ່ຍິງເຂົ້າເຮັດວຽກນຳ ແລະ ຊ່ວຍແມ່ຍິງໃນດ້ານຕ່າງໆຂອງວຽກງານຍົກຍ້າຍຈັດສັນປະຊາຊົນ ລວມທັງການວາງແຜນ ແລະການຈັດຕັ້ງປະຕິບັດແຜນການຟື້ນຟູລາຍຮັບ ແລະ ໃຫ້ມີແມ່ຍິງໄດ້ເຂົ້າຮ່ວມໃນການວາງແຜນ, ຄຸ້ມຄອງແລະດຳເນີນງານ, ສ້າງວຽກເຮັດງານທຳ ແລະ ລາຍຮັບ

## 16.3. ການ ຄຸ້ມຄອງຂໍ້ມູນ, ຂັ້ນຕອນການລາຍງານ

ເຈົ້າຂອງໂຄງການຄວນຈັດລະບົບຄຸ້ມຄອງຂໍ້ມູນຂ່າວສານ ໂດຍນຳໃຊ້ຄອມພິວເຕີ ເພື່ອຮັບປະກັນວ່າຂໍ້ມູນຂ່າວສານທັງໝົດທີ່ເກັບກຳໄດ້ມາ ໃນໄລຍະກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ ເຊັ່ນ: ການສຳຫລວດພົນລະເມືອງ, ການຂຶ້ນບັນຊີ ແລະ ຂໍ້ມູນດ້ານເສດຖະກິດ-ສັງຄົມ ແມ່ນໄດ້ຖືກເກັບຮັກສາໄວ້ໃນລະບົບຂໍ້ມູນຂ່າວສານທີ່ໄດ້ມາດຕະຖານ. ມັນມີຄວາມຈຳເປັນຕ້ອງໄດ້ມີການອອກແບບ ແລະ ກຳນົດຂັ້ນຕອນການປ້ອນຂໍ້ມູນເຂົ້າໃນຄອມພິວເຕີ ແລະ ແບບຟອມຂໍ້ມູນ. ແບບຟອມດັ່ງກ່າວ ຄວນໄດ້ອອກແບບໄວ້ລ່ວງໜ້າ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດກິດຈະກຳ ແລະ ຟອມດັ່ງກ່າວ ຄວນລວມເອົາເນື້ອໃນດັ່ງນີ້:

(i) ສັງລວມຜົນກະທົບຕໍ່ດິນ, ໂຄງລ່າງ, ຕົ້ນໄມ້ ແລະ ຊັບສິນຄົງທີ່ອື່ນໆ;
(ii) ຂໍ້ມູນດ້ານເສດຖະກິດ-ສັງຄົມ ຂອງຜູ້ທີ່ຖືກກະທົບ;
(iii) ສິດທິ ທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍຊັບສິນ;
(iv) ສິດທິ ທີ່ຈະໄດ້ຮັບການສະໜັບສະໜູນ ແລະ ການອຸດໜູນອື່ນໆ;
(v) ບັນຊີຜູ້ທີ່ຖືກກະທົບ ທີ່ມີສິດໄດ້ຮັບການສະໜັບສະໜູນໃນການຟື້ນຟູເສດຖະກິດ ໂດຍມີລາຍລະ ອຽດທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມເປັນເອກະພາບ ກ່ຽວກັບ ການຊ່ວຍເຫຼືອ ໃນການຟື້ນຟູເສດຖະກິດ;
(vi) ຟອມສຳລັບການທົດແທນຄ່າເສຍຫາຍ ຂອງຜູ້ທີ່ຖືກກະທົບແຕ່ລະຄົນ.

ຟອມອື່ນໆ ກໍອາດໄດ້ຮ່າງຂຶ້ນ ຕາມຄວາມຈຳເປັນ ແລະ ຕ້ອງການ. ພະນັກງານ ທີ່ຖືກມອບໝາຍໃຫ້ຮັບຜິດຊອບຂໍ້ມູນ ຄວນກະກຽມການສ້າງບົດລາຍງານ ກ່ຽວກັບການຄຸມງານ ແລະ ຕິດຕາມກວດກາ ໂດຍອີງໃສ່ຂໍ້ມູນຂ່າວສານທີ່ໄດ້ມາຈາກພະນັກງານພາກສະໜາມ.

## 16.4. ການກຳນົດຂັ້ນຕອນຈັດຕັ້ງປະຕິບັດ

ກ່ອນຈະເລີ່ມວຽກຍົກຍ້າຍຈັດສັນປະຊາຊົນ, ເຈົ້າຂອງໂຄງການ ຕ້ອງຮ່າງຂັ້ນຕອນຕ່າງໆສຳລັບກິດຈະກຳສະເພາະໃນພາກສະໜາມ ແລະ ຂອບເຂດສະເພາະ ທີ່ອາດຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດ ມີດັ່ງຕໍ່ໄປນີ້:

### 16.4.1. ¡ານµ¯ງມຶນຜöນ¡ະêöບ Áລະ ສòດê†ÄດÉຮກັບ¡ານêöດÁêນຄÈາÀສຍ¹າຍ

ໃນຫລາຍໂຄງການ, ການແກ່ຍາວເວລາ ລະຫວ່າງການກະກຽມແຜນການຍົກຍ້າຍຈັດສັນປະຊາຊົນຄັ້ງທຳອິດ ແລະ ການເລີ້ມຍົກຍ້າຍຈັດສັນປະຊາຊົນ ອາດມີຄວາມແຕກຕ່າງກັນຫລາຍດ້ານຊັບສິນຕ່າງໆ, ອັນເຮັດໃຫ້ບັນຊີຊັບສິນທີ່ສ້າງຂຶ້ນມາກ່ອນນັ້ນບໍ່ສາມາດນຳໃຊ້ໄດ້. ດັ່ງນັ້ນ ການປັບປຸງບັນຊີໃຫ້ຖືກກັບສະພາບຕົວຈິງ ແລະ ການຢັ້ງຢືນວ່າ ຜົນກະທົບທີ່ໄດ້ກຳນົດມາໃນໄລຍະກະກຽມ ແມ່ນມີຄວາມຈຳເປັນໃນເວລາຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ. ມັນມີຄວາມຈຳເປັນ ທີ່ຂັ້ນຕອນຂອງວຽກດັ່ງກ່າວ ຕ້ອງໄດ້ນຳເອົາມາປຶກສາຫາລືກັນລະຫວ່າງໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ກ່ອນເລີ້ມດຳເນີນການຍົກຍ້າຍຈັດສັນປະຊາຊົນ. ພະນັກງານທຸກຄົນ ຄວນເຂົ້າໃຈໃຫ້ລະອຽດ ກ່ຽວກັບຂັ້ນຕອນຕ່າງໆ ເພື່ອເຮັດວຽກໃຫ້ສອດຄ່ອງກັນ. ບົດຮຽນຜ່ານມາໄດ້ຊີ້ໃຫ້ເຫັນວ່າ ເມື່ອທີມພາກສະໜາມຕ່າງໆ ບໍ່ມີຄວາມເປັນເອກະພາບກັນໃນການກະກຽມຂຶ້ນບັນຊີ, ການວິເຄາະຂໍ້ມູນຂ່າວສານ ແລະ ການກຳນົດຜູ້ທີ່ຈະໄດ້ຮັບສິດທົດແທນ, ຄວາມເປັນເອກະພາບກັນຂອງສະມາຊິກໃນທີມງານ ແມ່ນມີຄວາມຫຍຸ້ງຍາກທີ່ຈະເປັນໄດ້ ຍ້ອນຄວາມເຂົ້າໃຈຂອງແຕ່ລະຄົນກ່ຽວກັບເນື້ອໃນຂອງນະໂຍບາຍ ແລະ ຄວາມຊາບຊຶ້ງ ກ່ຽວກັບເລື້ອງການໃຫ້ສິດແກ່ການທົດແທນຄ່າເສຍຫາຍມີຄວາມແຕກຕ່າງກັນ. ຍິ່ງໄປກ່ວານີ້, ການຕົກລົງ ກ່ຽວກັບບັນຫາຕ່າງໆ ເຊັ່ນ ຜົນໄດ້ທາງດ້ານເສດຖະກິດຈາກໂຄງລ່າງ ຫລື ທີ່ດິນທີ່ຍັງເຫລືອນັ້ນ ແມ່ນຍັງເຫັນວ່າເປັນບັນຫາທີ່ຕ້ອງໄດ້ມີການພິຈາລະນາ ແລະ ບົດຮຽນໃນພາກສະໜາມ ຂັ້ນຕອນ ແລະ ຕົວຊີ້ວັດຕ່າງໆ ເພື່ອການເຮັດວຽກໃນເຂດພາກສະໜາມ ຄວນໄດ້ເອົາມາປຶກສາຫາລືແລະ ເຫັນດີນຳກັນກ່ອນຈະເລີ້ມວຽກຕົວຈິງ.

### 16.4.2. ¡ານ¯ທົບ¯÷ງÁຜນ¡ານຍö¡ຍÉາຍຈັດສັນ¯ະຊາຊöນ

ເຈົ້າຂອງໂຄງການຕ້ອງໄດ້ກຳນົດວຽກສະເພາະ ທີ່ອາດຈຳເປັນໃນການປັບປຸງແຜນການຍົກຍ້າຍຈັດສັນປະຊາຊົນ, ຖ້າຫາກເຫັນວ່າມີຄວາມຈຳເປັນ ແລະ ວາງເປົ້າໝາຍ ເພື່ອເຮັດໃຫ້ສຳເລັດກ່ອນຈະເລີ້ມວຽກພາກສະໜາມ. ພະນັກງານທີ່ໄດ້ຮັບມອບໝາຍໃຫ້ເຮັດວຽກສະເພາະ ກໍຄວນກຳນົດຄາດໝາຍໃຫ້ເຂົາເຈົ້າເຮັດສຳເລັດ ເພື່ອວ່າຈະຕິດຕາມຄວາມຄືບໜ້າໄດ້.

### 16.4.3. ຂ˜ັນຕອນ¡ານຈÈາຍຄÈາ¡ານêöດÁêນຄÈາÀສຍ¹າຍ

ເຈົ້າຂອງໂຄງການ ແມ່ນຮັບຜິດຊອບໂດຍກົງ ຕໍ່ກິດຈະກຳທີ່ພົວພັນກັບການດຳເນີນການຍົກຍ້າຍຈັດສັນປະຊາຊົນໂດຍລວມ ແລະ ຈ່າຍຄ່າທົດແທນຄວາມເສຍຫາຍໃຫ້ຜູ້ທີ່ຖືກກະທົບ ໂດຍສະເພາະ ເຈົ້າຂອງໂຄງການຕ້ອງມີກົນໄກຈ່າຍເງິນ ສຳລັບເປັນການທົດແທນຄ່າເສຍຫາຍແລະເງິນອຸດໜູນ. ຄວນຕົກລົງກັບອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ສຳລັບຂັ້ນຕອນ ແລະ ກຳນົດເວລາຈ່າຍເງິນ.

ນອກນີ້, ເຈົ້າຂອງໂຄງການ ຈະຕ້ອງໄດ້ຮັບຜິດຊອບ ເຮັດການເຜີຍແຜ່ຂໍ້ມູນຂ່າວສານໃຫ້ມວນຊົນກ່ຽວກັບການທົດແທນຄ່າເສຍຫາຍ, ປັບປຸງຂໍ້ມູນກ່ຽວກັບການຈ່າຍເງິນ ແລະເຫັນດີນຳກັນ ໃນການຈ່າຍເງິນ ເພື່ອລາຍງານອຊນສ ແລະ ຜູ້ໃຫ້ທຶນ, ຫາກເຫັນວ່າເໝາະສົມ. ເຈົ້າຂອງໂຄງການ ໂດຍການຮ່ວມມືຂອງອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ຈະຕ້ອງໄດ້ມີການກະກຽມ ແລະ ພິຈາລະນາການໃຫ້ການຊ່ວຍເຫລືອ ແກ່ຜູ້ທີ່ຖືກກະທົບທຸກຄົນ. ໜ່ວຍງານຄຸ້ມຄອງຂອງໂຄງການ/ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ, ຍັງຈະເປັນຜູ້ຮັບຜິດຊອບເຮັດໃຫ້ພອມໃບຢັ້ງຢືນການວັດແທກລະອຽດ, ການໄດ້ຮັບສິດ, ການປະເມີນຄ່າການທົດແທນຄວາມເສຍຫາຍ ແລະ ເອກະສານ ກ່ຽວກັບການທົດແທນຄ່າເສຍຫາຍອັນສຸດທ້າຍນັ້ນມີຄວາມຖືກຕ້ອງ.

ອຳນາດການປົກຄອງທ້ອງຖິ່ນ ຈະຊ່ວຍເຈົ້າຂອງໂຄງການໃນການສ້າງກົນໄກຈ່າຍເງິນໃຫ້ທ້ອງຖິ່ນ, ໂດຍແຈ້ງເວລາຈ່າຍເງິນໃຫ້ຜູ້ທີ່ຖືກກະທົບ, ຮັບຮູ້, ຢັ້ງຢືນຈຳນວນເງິນທີ່ຕ້ອງ ແລະ ຈ່າຍດຳເນີນການຕາມຂັ້ນຕອນຕ່າງໆ

**ການຕິດຕາມກວດກາ:** ພະນັກງານທີ່ຖືກມອບໝາຍໂດຍເຈົ້າຂອງໂຄງການ ແມ່ນຈະໄດ້ມີການປະສານງານກ່ຽວກັບຂັ້ນຕອນຈ່າຍເງິນ ແລະ ການຊີ້ນຳຂະບວນການທັງໝົດ. ເຈົ້າຂອງໂຄງການ ຕ້ອງໄດ້ແຈ້ງໃຫ້ອົງການຮັບຜິດຊອບຕິດຕາມກວດກາຈາກພາຍນອກຮູ້ລ່ວງໜ້າ ກ່ຽວກັບ ຕາຕະລາງເວລາຈ່າຍເງິນ ເພື່ອເຮັດໃຫ້ເຂົາເຈົ້າສັງເກດການຂັ້ນຕອນດັ່ງກ່າວ ໃນຖານະເປັນວຽກໜຶ່ງຂອງວຽກຕິດຕາມກວດກາ.

<u>ການໂອນເງິນ ແລະ ການຈ່າຍເງິນ</u>

ພາຍຫຼັງ ທີ່ໄດ້ຕົກລົງເວລາຈ່າຍເງິນແລ້ວ, ຂັ້ນຕອນ ຈະມີດັ່ງນີ້:

(i) ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ/ເຈົ້າຂອງໂຄງການ ຕ້ອງໄດ້ກະກຽມລາຍຊື່ຂອງຜູ້ທີ່ໄດ້ຮັບຜົນກະທົບພ້ອມທັງສິດທິທີ່ຈະໄດ້ຮັບ ແລະ ຕິດປະກາດໄວ້ໃນສະຖານທີ່ສາທາລະນະ ຢູ່ແຕ່ລະເມືອງ ແລະ ບ້ານເພື່ອແຈ້ງໃຫ້ຜູ້ທີ່ຖືກກະທົບ ແລະ ອຳນາດການປົກຄອງທ້ອງຖິ່ນຊາບ.

(ii) ເຈົ້າຂອງໂຄງການ ຕ້ອງໄດ້ກະກຽມຕາຕະລາງຈ່າຍຄ່າທົດແທນຄວາມເສຍຫາຍ ທີ່ບອກແຈ້ງເວລາ ແລະສະຖານທີ່ຈ່າຍຄ່າທົດແທນ ໃນແຕ່ລະບ້ານ, ເມືອງ ແລະ ແຈ້ງໃຫ້ຜູ້ທີ່ຖືກກະທົບຊາບລ່ວງໜ້າ ກ່ຽວກັບເວລາດັ່ງກ່າວ ຜ່ານອຳນາດການປົກຄອງຂັ້ນບ້ານ. ຜູ້ທີ່ຖືກກະທົບຄວນໄດ້ຮັບຊາບອີກວ່າຄວນນຳເອົາເອກະສານກ່ຽວຂ້ອງຫຍັງແດ່ມານຳ ເພື່ອຢັ້ງຢືນໃນການຮັບເອົາເງິນດັ່ງກ່າວ.

(iii) ເຈົ້າຂອງໂຄງການ ຄວນມອບເງິນມາໃຫ້ຢ່າງຊ້າ 1 ອາທິດ ກ່ອນມື້ຈ່າຍເງິນ ແລະ ເງິນດັ່ງກ່າວ ຄວນແມ່ນພະນັກງານການເງິນ ຂອງກະຊວງກ່ຽວຂ້ອງ ຫລື ເຈົ້າຂອງໂຄງການເປັນຜູ້ຈ່າຍ, ພ້ອມກັບພະນັກງານຂອງໜ່ວຍງານຍົກຍ້າຍຈັດສັນປະຊາຊົນ.

ການຈ່າຍເງິນທົດແທນ ອາດເປັນເງິນສົດ ຫລືຜ່ານບັນຊີທະນາຄານທີ່ອອກຊື່ຜົວ ຫຼື ເມຍ. ທາງເລືອກໃນການຈ່າຍຄ່າທົດແທນຄວາມເສຍຫາຍນັ້ນ ແມ່ນຄວນໄດ້ຜ່ານທາງທະນາຄານ. ຢ່າງໃດກໍຕາມ, ເມື່ອຜູ້ທີ່ຖືກກະທົບ ຍັງບໍ່ທັນໄດ້ໃຊ້ບໍລິການຂອງທະນາຄານ, ກໍຄວນຈ່າຍເປັນເງິນສົດ.

ຄວນສະເໜີໃຫ້ຜູ້ທີ່ຖືກກະທົບ ຖືເອົາເອກະສານດັ່ງຕໍ່ໄປນີ້ມານຳ ເພື່ອຮັບເອົາສິດຕ່າງໆ:

(i) ບັດປະຈຳຕົວ;

(ii) ສຳເນົາໃບຢັ້ງຢືນການວັດແທກລະອຽດ ແລະ ຟອມທົດແທນຄ່າເສຍຫາຍ ທີ່ເຈົ້າຂອງໂຄງການໄດ້ມອບໃຫ້ເຂົາເຈົ້າກ່ຽວກັບສິດທິ ທີ່ຈະໄດ້ຮັບຈາກໂຄງການ <u>(ເບິ່ງໃນ*ເອກະສານຄັດຕິດ 33*).</u>

(iii) ໃບຕາດິນ ຫລືເອກະສານອື່ນໆທີ່ຢັ້ງຢືນກຳມະສິດ ຫລື ສິດນຳໃຊ້ຊັບສິນບັດຄົງທີ່ນັ້ນ.

ການຈ່າຍເງິນ ຈະເຮັດແບບເປີດເຜີຍ ໃນສະຖານທີ່ສາທາລະນະ ຕາມວັນແລະເວລາ ທີ່ໄດ້ກຳນົດໄວ້. ວຽກຈ່າຍຄ່າທົດແທນນີ້ ແມ່ນຍັງຈະມີອຳນາດການປົກຄອງ ແລະ ຕາງໜ້າຜູ້ທີ່ຖືກກະທົບ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ເປັນສັກຂີພິຍານ.

ເມື່ອຈ່າຍເງິນຜ່ານບັນຊີ, ເຈົ້າຂອງໂຄງການ ຕ້ອງໄດ້ປະສານງານກັບສາຂາຂອງທະນາຄານ ກ່ຽວກັບຂັ້ນຕອນດັ່ງກ່າວ, ເປີດບັນຊີຜ່ານທະນາຄານ ອອກຊື່ຜູ້ທີ່ຖືກກະທົບແລະຝາກເງິນໄວ້ທີ່ນັ້ນ. ເຈົ້າຂອງໂຄງການ ຕ້ອງຕິດ

ລາຍຊື່ຜູ້ທີ່ຖືກກະທົບ ແລະ ສິດທິ ທີ່ໄດ້ຮັບໃນທະນາຄານ. ຜູ້ທີ່ຖືກກະທົບ ຈະຮັບປື້ມເງິນຝາກຈາກທະນາຄານ ໃນມື້ທີ່ກຳນົດໄວ້ ແລະ ຮ່າງເອກະສານ ເພື່ອຢັ້ງຢືນລາຍເຊັນຂອງເຈົ້າຂອງບັນຊີ.

## 16.5. ສັນຍາວ່າຈ້າງອົງການຕິດຕາມກວດກາຈາກພາຍນອກ

ກ່ອນຈະເລີ້ມດຳເນີນການຍົກຍ້າຍຈັດສັນປະຊາຊົນ, ເຈົ້າຂອງໂຄງການ ຈະຕ້ອງໄດ້ວ່າຈ້າງເອົາອົງການຕິດຕາມກວດກາຈາກພາຍນອກ (ທີ່ປຶກສາ, ສະຖາບັນຄົ້ນຄ້ວາ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ສະຖາບັນອື່ນໆ) ທີ່ມີປະສົບການ, ຄວາມຊຳນິຊຳນານງານ ແລະ ບົດຮຽນໃນການຍົກຍ້າຍຈັດສັນປະຊາຊົນ ເພື່ອດຳເນີນການຕິດຕາມກວດກາກ່ອນ ແລະ ຫຼັງການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ ໂດຍໃຫ້ສອດຄ່ອງກັບກອບໜ້າວຽກທີ່ກຳນົດໄວ້ (ເບິ່ງໝວດ 13, *<u>ເອກະສານຄັດຕິດ 28</u>*). ອົງການທີ່ໄດ້ຄັດເລືອກມານີ້ຈະຈັດຕັ້ງໜ່ວຍງານຕິດຕາມກວດກາຂອງແຕ່ລະເມືອງ ເພື່ອເຮັດໃຫ້ຜູ້ທີ່ຖືກກະທົບໄດ້ເຂົ້າຮ່ວມໃນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ.

## 16.6. ຂໍ້ຕົກລົງທີ່ຖືກຕ້ອງຕາມກົດໝາຍ(ສຳລັບໂຄງການທີ່ມີຜູ້ສະໜອງງົບປະມານໃຫ້)

ການດຳເນີນວຽກຍົກຍ້າຍຈັດສັນປະຊາຊົນ ອາດຈັດແບ່ງອອກເປັນ 2 ປະເພດ ໂດຍອີງໃສ່ປະເພດຂອງຜົນກະທົບ ແລະ ຂອບເຂດຂອງວຽກ. ອັນທີ່ຂື້ນກັບເຈົ້າຂອງໂຄງການ, ລັດຖະບານ ແລະ ຜູ້ກ່ຽວຂ້ອງອື່ນໆ ແລະສິ່ງທີ່ຂື້ນກັບຂອບເຂດຂອງຜູ້ຮັບເໝົາ.

ປະເພດທີໜຶ່ງຂອງວຽກຍົກຍ້າຍຈັດສັນປະຊາຊົນ ແມ່ນພົວພັນກັບຜົນກະທົບຕະຫລອດການ ທີ່ໄດ້ຊອກເຫັນ ແລະ ກຳນົດເຂົ້າໃນແຜນການຍົກຍ້າຍຈັດສັນປະຊາຊົນ. ອັນນີ້ ແມ່ນລວມເອົາທັງການທົດແທນຄ່າເສຍຫາຍຂອງຊັບສິນບັດຄົງທີ່, ເງິນອຸດໜູນ, ການຍົກຍ້າຍ ແລະ ການຟື້ນຟູເສດຖະກິດ. ນະໂຍບາຍໄດ້ກຳນົດວ່າ ການຈ່າຍຄ່າທົດແທນຄວາມເສຍຫາຍ, ການອຸດໜູນ ແລະ ການຍົກຍ້າຍ ອອກຈາກຊ່ວງງານໃດໜຶ່ງຂອງໂຄງການແມ່ນຕ້ອງດຳເນີນໃຫ້ແລ້ວກ່ອນຈະເລີ້ມວຽກກໍ່ສ້າງໃນຊ່ວງນັ້ນ. ດັ່ງນັ້ນ, ດິນສຳລັບເປັນບ່ອນກໍ່ສ້າງ ຄວນຈະມອບໃຫ້ຫລັງຈາກການຍົກຍ້າຍຈັດສັນໄດ້ເຮັດສຳເລັດ ຍົກເວັ້ນແຕ່ມາດຕະການຟື້ນຟູລາຍຮັບ ທີ່ອາດໃຊ້ເວລາຫຼາຍເພື່ອຈັດຕັ້ງປະຕິບັດໃຫ້ສຳເລັດ.

ຢ່າງໃດກໍຕາມ, ໃນຕົວຈິງ, ມັນອາດເປັນບໍ່ໄດ້ທີ່ວຽກຍົກຍ້າຍຈັດສັນປະຊາຊົນນີ້ ຈະເຮັດໃຫ້ສຳເລັດກ່ອນຊຶ່ງອາດແມ່ນຍ້ອນຄວາມຫຍຸ້ງຍາກ ທາງດ້ານການຈັດຕັ້ງ, ການເງິນ ຫລື ຍ້ອນບັນຫາທາງດ້ານນິຕິກຳ ກ່ຽວກັບກຳມະສິດທີ່ດິນ, ຂໍ້ຂັດແຍ່ງ ກ່ຽວກັບ ກຳມະສິດຕໍ່ຊັບສິນ ແລະ ຂະບວນການທາງດ້ານລະບຽບກົດໝາຍຕ່າງໆ. ຄວາມຮັບຜິດຊອບໃນການຈັດຕັ້ງວຽກດັ່ງກ່າວ ຈຶ່ງຂື້ນກັບອົງການຈັດຕັ້ງປະຕິບັດ. ຄວນພະຍາຍາມເຮັດໃຫ້ວຽກຍົກຍ້າຍຈັດສັນປະຊາຊົນແລ້ວກ່ອນ ວຽກກໍ່ສ້າງຈະເລີ້ມຕົ້ນ ແລະ ນຳເອົາຈິດໃຈດັ່ງກ່າວເຂົ້າໃນສັນຍາກູ້ຢືມ. ຂໍ້ຜູກມັດທາງດ້ານກົດໝາຍ ແມ່ນມີຄວາມຈຳເປັນຕ້ອງໃຫ້ມີໃນສັນຍາເງິນກູ້ ແລະ ສັນຍາຕ່າງໆ ເພື່ອຮັບປະກັນຕໍ່ຜູ້ຮັບເໝົາ, ອົງການຈັດຕັ້ງປະຕິບັດ ແລະ ທີ່ປຶກສາຄຸມງານ. ສັນຍາດັ່ງກ່າວ ຄວນກຳນົດຈະແຈ້ງ ກ່ຽວກັບ ຄວາມຮັບຜິດຊອບຂອງອົງການຈັດຕັ້ງປະຕິບັດ ເພື່ອ:

(i) ດຳເນີນການຍົກຍ້າຍຈັດສັນປະຊາຊົນ ໂດຍສອດຄ່ອງກັບລະບຽບຫລັກການ ແລະ ຂະບວນການທີ່ໄດ້ກຳນົດໃນແຜນການຍົກຍ້າຍຈັດສັນປະຊາຊົນ;

(ii) ສະໜອງງົບປະມານທຶນຮອນໃຫ້ທັນເວລາ ເພື່ອເປັນຄ່າຍົກຍ້າຍຈັດສັນປະຊາຊົນທັງໝົດ. ໃນກໍລະນີທີ່ງົບປະມານບໍ່ພຽງພໍ, ເຈົ້າຂອງໂຄງການ ຈະຕ້ອງໄດ້ຮັບປະກັນໃຫ້ມີງົບປະມານພຽງພໍຕາມຄວາມຈຳເປັນ ເພື່ອຈັດຕັ້ງປະ ຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ໃຫ້ທັນເວລາ ແລະມີປະສິດທິຜົນ;

(iii) ຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ໂດຍການປຶກສາຫາລື ແລະ ການມີສ່ວນຮ່ວມ ຂອງຜູ້ກ່ຽວຂ້ອງຕົ້ນຕໍ ລວມທັງຜູ້ທີ່ຖືກກະທົບ;

(iv) ສົ່ງບົດລາຍງານຄວາມຄືບໜ້າເປັນແຕ່ລະງວດ ໃຫ້ຜູ້ໃຫ້ທຶນທີ່ກ່ຽວຂ້ອງ ໂດຍມີລາຍລະອຽດ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ, ຄາດໝາຍເວລາທີ່ຈະສຳເລັດ ແລະມາດຕະການທີ່ໄດ້ວາງໄວ້ ເພື່ອແກ້ໄຂບັນຫາທີ່ອາດເກີດຂຶ້ນໃນໄລຍະດຳເນີນວຽກນັ້ນ.

ສັນຍາດັ່ງກ່າວ ແມ່ນຄວນໄດ້ກຳນົດມູນຄ່າສຳລັບການຍົກຍ້າຍຈັດສັນປະຊາຊົນ ທີ່ຈະນອນໃນບ້ວງເງິນກູ້ຢືມ.

ປະເພດທີສອງ ຂອງການຈັດຕັ້ງປະຕິບັດ ແມ່ນຕິດພັນກັບຜົນກະທົບຈາກວຽກກໍ່ສ້າງໃນໄລຍະກໍ່ສ້າງ. ອັນນີ້ອາດລວມເອົາ: ການເຊົ່າດິນຂອງເອກະຊົນໃນໄລຍະຊົ່ວຄາວ ເພື່ອຮັກສາວັດສະດຸ (ແຫລ່ງວັດສະດຸ), ເຂດຖິ້ມເສດດິນ, ດິນເພື່ອເຮັດທາງເຂົ້າໄປຫາເຂດໂຄງການ ແລະ ຜົນເສຍຫາຍຕໍ່ຊັບສິນຂອງປະຊາຊົນ (ທີ່ດິນ, ຕົ້ນໄມ້, ຜົນລະປູກ) ໃນໄລຍະກໍ່ສ້າງ ຍ້ອນອຸປະກອນ ແລະ ເຄື່ອງຈັກຕ່າງໆ. ການກຳນົດພື້ນທີ່ ແລະ ຄອບຄົວທີ່ອາດຈະໄດ້ຮັບຜົນກະທົບຍ້ອນບັນຫາດັ່ງກ່າວ ແມ່ນມີຄວາມຫຍຸ້ງຍາກທີ່ສຸດໃນໄລຍະຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ. ໃນຫລາຍໆກໍລະນີ, ຜົນກະທົບດັ່ງກ່າວ ອາດມີລັກສະນະຊົ່ວຄາວ. ເຖິງແມ່ນວ່າ, ອົງການຈັດຕັ້ງປະຕິບັດ ຈະຮັບຜິດຊອບການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ, ແຕ່ໃນຕົວຈິງ ຜູ້ຮັບເໝົາກໍໄດ້ຊ່ວຍອົງການຈັດຕັ້ງດັ່ງກ່າວ ໃນການຈັດຕັ້ງປະຕິບັດວຽກເຫລົ່ານີ້. ຜູ້ຮັບເໝົາຄວນເຈລະຈາກັບຄອບຄົວທີ່ຖືກກະທົບ ກ່ຽວກັບ ຈຳນວນເງິນທີ່ຕ້ອງຈ່າຍສຳລັບຜົນກະທົບເຫົ່ລານັ້ນ ແລະ ຄ່າດັ່ງກ່າວແມ່ນລວມເອົາເຂົ້າໃນສັນຍາ. ດັ່ງນັ້ນ, ມັນຈຶ່ງມີ ຄວາມຈຳເປັນທີ່ເອກກະສານສັນຍາ ຈະຕ້ອງໄດ້ກຳນົດຄວາມຮັບຜິດຊອບຂອງຜູ້ຮັບເໝົາໃຫຍ່ ແລະ ຫລັກການທີ່ຈະຄວບຄຸມມາດຕະການຫລຸດຜ່ອນຜົນກະທົບດັ່ງກ່າວ. ເງື່ອນໄຂເຫລົ່ານີ້ ຄວນໄດ້ກຳນົດໃນເອກກະສານຕ່າງໆ ສຳລັບການປະມູນ. ໜ່ວຍງານຄຸ້ມຄອງຂອງໂຄງການ ແລະ ໜ່ວຍງານຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ມີການພິ ຈາລະນາເອກກະສານປະມູນດ້ວຍຄວາມລະມັດລະວັງ ເພື່ອຮັບປະກັນວ່າເງື່ອນໄຂອັນຈຳເປັນ ແມ່ນໄດ້ຖືກກຳນົດ ໄວ້ໃນສັນຍາແລ້ວ. ເງື່ອນໄຂ ແມ່ນອາດມີຄວາມແຕກຕ່າງກັນໄປ ຕາມປະເພດ ແລະ ຂະໜາດ ຂອງໂຄງການ. ຢ່າງໃດກໍຕາມ, ເງື່ອນໄຂດັ່ງລຸ່ມນີ້ ຄວນໄດ້ພິຈາລະນາເອົາເຂົ້າໃນສັນຍາ:

(i) ຜົນເສຍຫາຍຕໍ່ພືດ ແລະ ຕໍ່ຊັບສິນຕ່າງໆ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍ ໃນມູນຄ່າປ່ຽນແທນໂດຍອີງໃສ່ຫລັກການທີ່ກຳນົດໃນແຜນການຍົກຍ້າຍຈັດສັນປະຊາຊົນ;

(ii) ຊັບສິນທີ່ຖືກກະທົບໃນໄລຍະສັ້ນແຕ່ໃຊ້ການບໍ່ໄດ້ ແມ່ນຈະຕ້ອງໄດ້ມີການທົດແທນຄ່າເສຍຫາຍ ໂດຍອີງໃສ່ການຕົກລົງລາຄານຳກັນ ລະຫວ່າງຜູ້ຮັບເໝົາ ແລະ ຄອບຄົວທີ່ຖືກກະທົບ ຊຶ່ງໂຄງການຈະນຳໃຊ້ຊັບສິນ ຫລືກຳມະສິດນັ້ນໄດ້ ຢ່າງໜ້ອຍ 6 ເດືອນ. ໃນກໍລະນີທີ່ຫລາຍກ່ວາ 6 ເດືອນ, ການທົດແທນຄ່າເສຍຫາຍ ກໍຕ້ອງໄດ້ຕົກລົງກັນໃໝ່ ກັບເຈົ້າຂອງຊັບສິນນັ້ນ;

(iii) ຄວາມເສຍຫາຍຕໍ່ຊັບສິນຄົງທີ່, ທີ່ດິນກໍຄືໂຄງລ່າງ, ໃນໄລຍະການກໍ່ສ້າງ ແມ່ນຈະຕ້ອງໄດ້ຈ່າຍຄືນໃຫ້ເຈົ້າຂອງໝົດ.

(iv) ຜູ້ຮັບເໝົາ ຈະຊ່ວຍເຈົ້າຂອງໂຄງການ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ວຽກຍົກຍ້າຍຈັດສັນປະຊາຊົນເມື່ອຈຳເປັນ ເພື່ອສຳເລັດວຽກງານກໍ່ສ້າງ.

ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ໄດ້ສຸມໃສ່ການຟື້ນຟູລາຍຮັບ ໃຫ້ແກ່ຜູ້ທີ່ຖືກກະທົບຫລວງຫຼາຍຈາກໂຄງການ. ມາດຕະການອັນໜຶ່ງທີ່ຄວນເຮັດ ແມ່ນໃຫ້ບູລິມະສິດແກ່ຜູ້ທີ່ຖືກກະທົບເຫລົ່ານີ້ ໄດ້ມີວຽກເຮັດງານທຳໃນໄລຍະກໍ່ສ້າງ. ເຖິງແມ່ນວ່າຜູ້ຮັບເໝົາກໍ່ສ້າງສ່ວນຫລາຍຈະນຳໃຊ້ແຮງງານປະຊາຊົນທ້ອງຖິ່ນ ເຂົ້າໃນວຽກທີ່ບໍ່ຕ້ອງການຄວາມຊຳນິຊຳນານງານ ຫລື ມີກຳພໍໄດ້ປານກາງ, ວິທີການທີ່ດີແລ້ວ ແມ່ນຕ້ອງໄດ້ກຳນົດບັນຫານີ້ເຂົ້າໃນເອກກະສານສັນຍາ.

ນອກນີ້, ໃນແຜນວຽກຂອງທີ່ປຶກສາຄວບຄຸມງານ ກໍຄວນຈະກວມລວມເອົາທັງຄວາມຮັບຜິດຊອບທາງດ້ານສັງຄົມ. ຄວນບັນຈຸນັກວິທະຍາສາດດ້ານສັງຄົມເຂົ້າໃນທີມຄຸມງານ ສຳລັບໂຄງການທີ່ມີບັນຫາຍົກຍ້າຍຈັດສັນປະຊາຊົນ. ເນື້ອໃນຂອງເອກກະສານສັນຍາສຳລັບທີ່ປຶກສາຄຸມງານ ຄວນກຳນົດຄວາມຮັບຜິດຊອບໃນສັນຍານັ້ນ ເຊັ່ນ: "ທີ່ປຶກສາຈະໃຫ້ການບໍລິການສະເພາະດັ່ງຕໍ່ໄປນີ້ " ຮັບປະກັນວ່າ ວຽກທີ່ຕ້ອງເຮັດຕາມສັນຍາ ໄດ້ກວມລວມເອົາມາດຕະການຫລຸດຜ່ອນຜົນກະທົບທີ່ເໝາະສົມ, ໂດຍອີງໃສ່ລະບຽບຫລັກການທີ່ກຳນົດໃນແຜນການຍົກຍ້າຍຈັດສັນປະຊາຊົນ, ສຳລັບຜົນກະທົບຕະຫລອດການ ຫລື ຊົ່ວຄາວ ຕໍ່ຊັບສິນຂອງເອກະຊົນ, ການເວນຄືນທີ່ດິນ ເພື່ອເປັນເຂດນຳໃຊ້ຊົ່ວຄາວ, ເສັ້ນທາງຊົ່ວຄາວ, ຜົນເສຍຫາຍຕໍ່ທີ່ດິນ, ຜົນລະປູກ ແລະ ຊັບສົມບັດຄົງທີ່ອື່ນໆ".

ເພື່ອຮັບປະກັນການເອົາເງື່ອນໄຂຕ່າງໆເຂົ້າໃນສັນຍາ, ເຈົ້າຂອງໂຄງການ ຄວນໄດ້ກວດກາເອກກະສານດັ່ງກ່າວກ່ອນຮັບຮອງເອົາວຽກກໍ່ສ້າງ.

# ໝວດທີ 17. ການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ

## 17.1. ຂັ້ນຕອນຂອງການດຳເນີນການຍົກຍ້າຍຈັດສັນປະຊາຊົນ

ການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນປະຊາຊົນ ເຫັນວ່າມີຫລາຍພາກສ່ວນ ມີແນວຄວາມຄິດທີ່ແຕກຕ່າງກັນ ທັງແຕກຕ່າງກັບແຜນການຂອງໂຄງການທີ່ເຈົ້າຂອງໂຄງການ, ລັດຖະບານ ສປປລາວ ຫລື ຜູ້ໃຫ້ທຶນໄດ້ກຳນົດ ແລະ ຮັບຮອງມາແລ້ວ. ການຍົກຍ້າຍຈັດສັນປະຊາຊົນອອກຈາກໂຄງການເປັນວຽກງານໜຶ່ງ ທີ່ກວມລວມເອົາຫລາຍບັນຫາທາງດ້ານສັງຄົມ, ວັດທະນະທຳ ແລະ ເສດຖະກິດ. ການເອົາໃຈໃສ່ຕໍ່ການປົກຄອງ, ລະບຽບກົດໝາຍ ແລະ ການເງິນ ແມ່ນມີບົດບາດສຳຄັນຫລາຍ ແລະ ສາມາດເຮັດໃຫ້ມີຫລາຍທາງເລືອກທີ່ແຕກ ຕ່າງກັນໃນການຍົກຍ້າຍຜູ້ທີ່ຖືກກະທົບ. ມີບາງໂຄງການ ຢູ່ໃນ ສປປລາວ ທີ່ດຳເນີນມາຮອດໃນປະຈຸບັນ ໄດ້ສະແດງໃຫ້ເຫັນເຖິງ ຈຸດດີ ແລະ ຈຸດອ່ອນ ຂອງການຈັດຕັ້ງປະຕິບັດວຽກງານຍົກຍ້າຍຈັດສັນປະຊາຊົນ ໃນຜ່ານມາ ແລະ ບັນຫາທີ່ຍັງບໍ່ທັນໄດ້ເອົາໃຈໃສ່ເທົ່າທີ່ຄວນ ໃນໄລຍະການອອກແບບ ຫລື ຈັດຕັ້ງປະຕິບັດໂຄງການ.

ເພື່ອເຮັດໃຫ້ວຽກງານການຍົກຍ້າຍຈັດສັນປະຊາຊົນ ໄດ້ຮັບຜົນສຳເລັດ, ການຕິດຕາມກວດກາ ແລະ ການຄວບຄຸມຢ່າງໃກ້ຊິດຂອງເຈົ້າຂອງໂຄງການ ເຫັນວ່າ ມີຄວາມສຳຄັນຫລາຍ. ເພື່ອຊ່ວຍຄຸ້ມຄອງການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນໃຫ້ໄດ້ດີ, ອົງການຮັບຜິດຊອບໂຄງການ ຄວນໄດ້ກຳນົດວຽກສະເພາະທີ່ຈຳເປັນອອກມາ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດ ແລະ ຕາມກຳນົດເວລາທີ່ວາງໄວ້ ເຊິ່ງໃນນີ້ອາດເຮັດ

ອອກເປັນຮູບວາດ ຫລື ເປັນຕາຕະລາງ ຫລື ເປັນຮູບແບບໃດໜຶ່ງ ເພື່ອອຳນວຍຄວາມສະດວກໃນການຕິດຕາມກວດກາ.

## 17.2. ຕາຕະລາງຈັດຕັ້ງປະຕິບັດ

ຕາຕະລາງຈັດຕັ້ງປະຕິບັດ ຄວນໄດ້ເອົາມາກວດກາຄືນ ໃນໄລຍະເລີ້ມຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ໂດຍໃຫ້ມີເປົ້າໝາຍຢ່າງຄັກແນ່ ເພື່ອເຮັດໃຫ້ແຕ່ລະກິດຈະກຳໄດ້ຮັບຜົນສຳເລັດ. ຄວນເອົາໃຈໃສ່ເປັນພິເສດຕໍ່ກິດຈະກຳທີ່ມີຄວາມສ່ຽງ ຊຶ່ງອາດຈະເຮັດໃຫ້ການຍົກຍ້າຍຈັດສັນປະຊາຊົນ ບໍ່ສຳເລັດໄດ້. ການວາງແຜນ ແລະ ພັດທະນາເຂດຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ ເປັນກິດຈະກຳທີ່ສະລັບສັບຊ້ອນ ຊຶ່ງສ່ວນຫລາຍມັກເຮັດໃຫ້ໂຄງການມີການຊັກຊ້າແກ່ຍາວ. ນອກນີ້, ການແກ່ຍາວເວລາໂຄງການ ແມ່ນຍັງໄດ້ຕິດພັນກັບບັນຫາອື່ນໆອີກ ເຊັ່ນ: ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບກຳມະສິດທີ່ດິນ ແລະ ບັນຫາ ກ່ຽວກັບ ສິດທິໃນການນຳໃຊ້ທີ່ດິນ. ຕາຕະລາງຈັດຕັ້ງປະຕິບັດ ໃນເມື່ອມີຄວາມຈຳເປັນ ກໍຄືໃນກໍລະນີເງື່ອນໄຂພິເສດ ຄວນໄດ້ເອົາມາກວດກາຄືນ ແລະ ຖ້າໄດ້ເຮັດເລື້ອຍໆ ກໍຈະສາມາດເຮັດໃຫ້ຄວາມໜັກໜ່ວງຂອງບັນຫາ ມີຄວາມເບົາບາງລົງໄດ້.

## 17.3. ການຕິດຕາມກວດກາ ແລະ ການຊີ້ນຳ

ການຕິດຕາມກວດກາ ແລະ ການຊີ້ນຳຈາກພາຍໃນ ໂດຍເຈົ້າຂອງໂຄງການ ແລະ ການຕິດຕາມກວດກາຈາກພາຍນອກ ຕໍ່ການຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ ໂດຍບໍລິສັດຮັບເໝົາ ເຫັນວ່າມີຄວາມສຳຄັນຫລາຍສຸດ, ຖ້າຫາກໄດ້ດຳເນີນການຢ່າງເປັນປົກກະຕິ ແລະ ໄດ້ມີການລິເລີ້ມ ແຕ່ຫົວທີ. ການຕິດຕາມກວດກາແມ່ນຈະເຮັດໃຫ້ເຫັນໄດ້ຫລາຍບັນຫາໃນເວລາດຳເນີນງານ ແລະ ບັນຫາຕ່າງໆເຫລົ່ານັ້ນ ກໍຈະໄດ້ແຈ້ງບອກ ໃຫ້ອົງການຮັບຜິດຊອບໂຄງການ ໄດ້ມີມາດຕະການທີ່ເໝາະສົມໃນການແກ້ໄຂໃຫ້ທ່ວງທັນເວລາ.

## 17.4. ງົບປະມານ

ການຂາດງົບປະມານ ແລະ ການສະໜອງງົບປະມານ ບໍ່ທັນກັບເວລາທີ່ກຳນົດໄວ້ ແມ່ນຈະເປັນເຫດຜົນໜຶ່ງທີ່ສຳຄັນ ທີ່ອາດຈະຮັດໃຫ້ວຽກການຍົກຍ້າຍຈັດສັນປະຊາຊົນ ບໍ່ສາມາດສຳເລັດໄດ້ໃນຫລາຍໆໂຄງການ. ອົງການຮັບຜິດຊອບໂຄງການ ຕ້ອງຮັບປະກັນວ່າ ງົບປະມານຕ້ອງໃຫ້ມີ ແລະ ທັງຕອບສະໜອງໄດ້ ກັບວຽກຍົກຍ້າຍຈັດສັນປະຊາຊົນ ຕາມວັນເວລາທີ່ໄດ້ກຳນົດໄວ້.

# ພາກທີ v

# ບັນຫາສະເພາະຂະແໜງການ ໃນການຍົກຍ້າຍຈັດສັນປະຊາຊົນ

## ໝວດທີ 18. ການຍົກຍ້າຍຈັດສັນປະຊາຊົນ ໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ

### 18.1 ຄຳນຳ(ຕັດອອກໄດ້ ?)

ເພື່ອປ້ອງກັນບັນຫາ ທີ່ອາດຈະກໍ່ໃຫ້ເກີດມີຜົນກະທົບຮ້າຍແຮງຕາມມາ, ໂຄງການກໍ່ສ້າງເຂື່ອນ ແລະ ອ່າງເກັບນ້ຳໃນ ສປປ ລາວ ຈຶ່ງເປັນຈຸດສຸມຕົ້ນຕໍໃນວຽກງານຍົກຍ້າຍຈັດສັນປະຊາຊົນ. ຢ່າງໃດກໍຕາມ, ໃນໄລຍະຫລາຍປີຜ່ານມາ, ການພັດທະນາທາງດ້ານໂຄງລ່າງຍັງໄດ້ສຸມໃສ່ "ໂຄງການທີ່ມີການກໍ່ສ້າງຍາວເປັນແລວ" ໂດຍສະເພາະໂຄງການສ້າງທາງຫລວງ ແລະ ສ້າງສາຍສົ່ງໄຟຟ້າ. ໂຄງການເຫລົ່ານີ້ ລວມທັງໂຄງການສ້າງທາງລົດໄຟ, ທໍ່ແກັດຫລືທໍ່ລະບາຍນ້ຳ ແມ່ນຈະສ້າງຜົນກະທົບໄປຕາມແຖວຍາວເປັນແລວແຕ່ມີຂະໜາດບໍ່ກ້ວາງ. ການຕັດແລວທາງຂອງໂຄງການປະເພດການກໍ່ສ້າງດັ່ງກ່າວ ສ່ວນຫລາຍມັກສ້າງຜົນກະທົບຕໍ່ເສດຖະກິດ ແລະ ຍ້ອນຜົນກະທົບມີຂະໜາດບໍ່ກ້ວາງຂວາງ ຈຶ່ງເຮັດໃຫ້ມີການເວນຄືນທີ່ດິນ ແລະ ຊັບສິນ ພຽງແຕ່ສ່ວນໃດສ່ວນ ໜຶ່ງເທົ່ານັ້ນ, ຜົນກະທົບ ຈາກການຍົກຍ້າຍຈັດສັນປະຊາຊົນ ຈຶ່ງຖືວ່າມີບໍ່ຫລາຍ.

ເຖິງແມ່ນວ່າຈະເປັນໂຄງການທີ່ມີຜົນກະທົບໜ້ອຍ, ໂຄງການດັ່ງກ່າວ ກໍອາດຈະເຮັດໃຫ້ມີຫລາຍບັນຫາ ທີ່ມີການທ້າທາຍພໍສົມຄວນ ໃນການວາງແຜນການຍົກຍ້າຍຈັດສັນປະຊາຊົນ. ການປະເມີນຜົນ ແລະ ການແກ້ໄຂຜົນກະທົບສ່ວນໃດສ່ວນໜຶ່ງ ກໍອາດຈະເຮັດໃຫ້ມີຄວາມສະລັບສັບຊ້ອນໄດ້. ໂຄງການທີ່ພົວພັນກັບການສ້າງທາງຫລວງ ແລະ ທາງລົດໄຟ ມັກຈະເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນທີ່ອາໄສຢູ່ໃນນັ້ນ ອອກຈາກເຂດດັ່ງກ່າວ, ຊຶ່ງອາດມີບັນຫາຫລາຍຢ່າງທີ່ຕ້ອງໄດ້ມີການພິຈາລະນາ. ການປຶກສາຫາລື ແລະ ການເຂົ້າຮ່ວມຂອງປະຊາຊົນ ອາດມີຄວາມຫຍຸ້ງຍາກແດ່ ຖ້າຫາກເສັ້ນທາງນັ້ນ ຫາກຜ່ານຊື່ງເຂດທີ່ມີປະຊາຊົນທີ່ມີຫລາຍວັດທະນະທຳ ຫລື ພາສາປາກເວົ້າ. ຂອດການປະສານງານລະຫວ່າງການຈັດຕັ້ງຕ່າງໆ ອາດມີບັນຫາຄືກັນ ໂດຍສະເພາະກັບບັນດາໂຄງການທີ່ມີການກໍ່ສ້າງຕິດຕໍ່ລະຫວ່າງເຂດຕໍ່ເຂດ ຫລື ຫລາຍເຂດປົກຄອງ. ໃນໝວດນີ້ ຈະໄດ້ສະເໜີຂໍ້ແນະນຳເພື່ອແກ້ໄຂບັນຫາດັ່ງກ່າວ ແລະ ຂໍ້ຂັດແຍ່ງອື່ນໆ ກ່ຽວກັບການວາງແຜນ ສຳລັບໂຄງການທີ່ມີການກໍ່ສ້າງຍາວເປັນແລວ.

### 18.2 ລັກສະນະຂອງການຍົກຍ້າຍຈັດສັນປະຊາຊົນ ແບບຍາວເປັນແລວ

ລັກສະນະສະເພາະຂອງໂຄງການ "ຍາວເປັນແລວ" ແມ່ນສະຫລຸບໄດ້ດັ່ງນີ້:

- <u>ການເວນຄືນທີ່ດິນສ່ວນໃດສ່ວນໜຶ່ງ:</u> ການເວນຄືນທີ່ດິນໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ ສ່ວນຫລາຍປະກອບເປັນລວງຍາວແຄບໆຕາມເຂດກຳມະສິດຂອງປະຊາຊົນ ຊຶ່ງສ່ວນຫລາຍບໍ່ຈຳເປັນຕ້ອງມີການຍົກຍ້າຍຈັດສັນປະຊາຊົນທີ່ອາໄສຢູ່ ຫລື ນຳໃຊ້ທີ່ດິນນັ້ນ ແລະ ບໍ່ໄດ້ແຕະຕ້ອງເງື່ອນໄຂທາງດ້ານເສດຖະກິດ ຂອງກຳມະສິດດັ່ງກ່າວ. ໃນກໍລະນີປະຊາຊົນຕ້ອງໄດ້ຖືກຍົກຍ້າຍ ແມ່ນອາດສາມາດດຳເນີນການໄດ້ຢ່າງມີຜົນສຳເລັດໃນເຂດດຽວກັນ (ບາງເທື່ອກໍແມ່ນໃນດິນຕອນດຽວ) ໂດຍອາດບໍ່ມີການລົບກວນຫຍັງຫລາຍ. ເຖິງແມ່ນວ່າ ຈະ

ມີການເວນຄືນທີ່ດິນໜ້ອຍກວ່າ, ແຕ່ມັນກໍ່ສ້າງຄວາມຫຍຸ້ງຍາກພໍສົມຄວນ ໂດຍສະເພາະບັນຫາກຳມະສິດຄອບຄອງ ແລະ ການນຳໃຊ້ທີ່ດິນ.

- <u>ການຍົກຍ້າຍທີ່ກະແຈກກະຈາຍ:</u> ໂຄງການທີ່ມີການກໍ່ສ້າງຍາວເປັນແລວມັກເຮັດໃຫ້ຄົນທີ່ອາໄສຢູ່ເຕົ້າໂຮມກັນ ແລະ ຢູ່ກະແຈກກະຈາຍໄປຕາມແລວຜົນກະທົບນັ້ນ ຕ້ອງໄດ້ມີການຍົກຍ້າຍຫລາຍກວ່າຈະເຮັດໃຫ້ຊຸມຊົນທັງໝົດໃນເຂດໂຄງການໄດ້ຖືກຍົກຍ້າຍ. ອັນນີ້ ຈະສ້າງບັນຫາໃນຂອດການປະສານງານ ໃນການວາງແຜນການຍົກຍ້າຍຈັດສັນປະຊາຊົນໃນເຂດປົກຄອງຕ່າງໆ, ບັນຫາການພົວພັນ ແລະ ການປຶກສາຫາລືກັບຜູ້ທີ່ຖືກກະທົບ. ຢ່າງໃດກໍຕາມ, ມັນກໍຍັງມີຂໍ້ຍົກເວັ້ນ ກ່ຽວກັບ ສະພາບການຍົກຍ້າຍດັ່ງກ່າວ ໂດຍສະເພາະເມື່ອໂຄງການກໍ່ສ້າງຍາວເປັນແລວ ເຊັ່ນ: ທາງລົດໄຟ ແລະ ທາງຫລວງ ທີ່ຕັດແຍກຊຸມຊົນອອກຈາກກັນ ແລະ ຂັດຂວາງການເຂົ້າເຖິງຊັບພະຍາກອນຕົ້ນຕໍຂອງປະຊາຊົນ.
- <u>ຜົນກະທົບຊົ່ວຄາວ:</u> ໃນໂຄງການກໍ່ສ້າງຍາວເປັນແລວ, ການຍົກຍ້າຍຈັດສັນ ອາດມີລັກສະນະເປັນບັນຫາ ຊົ່ວຄາວ ແລະ ປະຊາຊົນສາມາດກັບຄືນສູ່ເຂດເດີມໄດ້ ຫລັງຈາກວຽກກໍ່ສ້າງໂຄງການໄດ້ສຳເລັດ. ແນ່ນອນ, ການຊ່ວຍເຫລືອໃນການດຳລົງຊີວິດ ແລະ ຮູບແບບອື່ນໆຂອງການຊ່ວຍເຫຼືອ ແມ່ນມີຄວາມຈຳເປັນໃນໄລຍະກໍ່ສ້າງ ແລະ ການຟື້ນຟູເສດຖະກິດ. ເມື່ອວຽກກໍ່ສ້າງໂຄງການແກ່ຍາວ, ການຍົກຍ້າຍຄອບຄົວ ແລະ ທຸະກິດໄປສູ່ບ່ອນຖາວອນ ແມ່ນອາດມີຄວາມຈຳເປັນ ແລະ ຄວນມີການພິຈາລະນາເປັນຢ່າງດີ ໂດຍມີການປຶກສາຫາລືກັບຜູ້ທີ່ຖືກກະທົບ.

## 18.3. ກຳນົດແລວຜົນກະທົບ

- <u>ແລວທາງຫລວງ ແລະ ທາງລົດໄຟ</u>

ໂຄງການທາງຫລວງ ແລະ ລົດໄຟ ສ່ວນຫຼາຍ ແມ່ນຈັດເປັນໜຶ່ງໃນສອງປະເພດຄື: ກໍ່ສ້າງທາງໃໝ່ ຫລື ປັບປຸງທາງເກົ່າ. ຄວາມແຕກຕ່າງດັ່ງກ່າວ ແມ່ນເໝາະສົມໃນເມື່ອມາສົມທຽບກັບການເວນຄືນທີ່ດິນ. ການຕັດແລວທາງໃໝ່ສ່ວນຫລາຍແມ່ນຕ້ອງການທີ່ດິນຢ່າງຫລວງຫລາຍ ແລະ ກໍມີຜົນກະທົບທາງລົບ ແລະ ຮ້າຍແຮງກວ່າໃນ ກໍລະນີໂຄງການທີ່ມີພຽງແຕ່ການປັບປຸງເສັ້ນທາງເກົ່າ.

ເສັ້ນທາງທີ່ມີປົກກະຕິມີ "ແລວທາງ" ແລ້ວ. ເຖິງແມ່ນວ່າອາດມີການເວນຄືນທີ່ດິນຍ້ອນທາງເວັ້ນ, ຕັດໂຄ້ງໃໝ່ ຫລື ປັບປຸງແຄມທາງ, ການເວນຄືນທີ່ດິນດັ່ງກ່າວ ກໍອາດມີບັນຫາເທົ່າໆກັບໂຄງການກໍ່ສ້າງທາງໃໝ່. ເຖິງແມ່ນວ່າ ຈະມີການເວນຄືນທີ່ດິນໜ້ອຍ ຫລື ບໍ່ເປັນລະບົບປານໃດກໍຕາມ, ແຕ່ມັນກໍອາດມີການຍົກຍ້າຍອອກຈາກແລວທາງທີ່ມີແລ້ວນັ້ນ. ເນື້ອໃນຂອງດຳລັດ 192 ແມ່ນຈະຕ້ອງໄດ້ນຳມາໃຊ້ ກັບຜູ້ທີ່ຖືກກະທົບເມື່ອຂະຫຍາຍ ຫລື ປັບປຸງເສັ້ນທາງຫລວງຢູ່ໃນແລວເກົ່າ ແລະ ແຜນການຍົກຍ້າຍຈັດສັນປະຊາຊົນ ກໍຕ້ອງໄດ້ຫລຸດຜ່ອນຜົນກະທົບທາງລົບ ຕໍ່ກັບປະຊາຊົນທີ່ເຂົ້າມາຢູ່ໃນດິນລັດ ດັ່ງກ່າວ. ດັ່ງນັ້ນ, ລະດັບຂອງການຍົກຍ້າຍຈັດສັນປະຊາຊົນ ຈຶ່ງອາດມີລະດັບທີ່ແຕກຕ່າງກັນກັບໃນສອງເງື່ອນໄຂ, ການທ້າທາຍ ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ຈະໄດ້ຮັບການແກ້ໄຂໃນແຕ່ລະກໍລະນີ.

ແລວທາງອາດປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ; ຫລາຍຄົນມີລາຍຮັບຈາກການຢູ່ແຄມທາງເພື່ອເຮັດກິດຈະກຳເສດຖະກິດໃດໜຶ່ງ. ເຖິງການກໍ່ສ້າງທາງ ຫາກສົ່ງຜົນກະທົບທາງລົບຕໍ່ຜູ້ເສຍຫາຍທີ່ດິນ ຫລື ຊັບສິນອື່ນໆກໍຕາມ, ແຕ່ມັນກໍສາມາດພັດທະນາເສດຖະກິດຂອງເຂດນັ້ນຢູ່ (ອັນທີ່ຈະແຈ້ງທີ່ສຸດ ກໍແມ່ນການໃຫ້ຄຸນຄ່າ

ແກ່ທີ່ດິນທີ່ຕິດກັບເສັ້ນທາງນັ້ນ). ການເຮັດເສັ້ນທາງຫລວງນີ້ ຈະເຮັດໃຫ້ມີຄົນເຕົ້າໂຮມຢູ່ຕາມແຄມທາງ, ເພາະເຂົາເຈົ້າຢາກໄດ້ຜົນປະໂຫຍດ ຈາກໂອກາດທາງດ້ານເສດຖະກິດ ທີ່ເສັ້ນທາງຈະນຳມາໃຫ້.

ຜົນກະທົບຈາກການຍົກຍ້າຍຈັດສັນປະຊາຊົນ ໂດຍທົ່ວໄປແລ້ວຈະຢູ່ໃນແລວແຄບໆ ຊຶ່ງເປັນເຂດທີ່ບໍ່ມີຄວາມປອດໄພ ຫລື ບໍ່ອະນຸຍາດໃຫ້ມີການປຸກສ້າງທີ່ອາໃສ, ບໍ່ໃຫ້ດຳເນີນທຸລະກິດ ຫລື ເຮັດການຜະລິດກະສິກຳໃນເຂດນັ້ນ. ລວງກວ້າງຂອງແລວ ແມ່ນຂຶ້ນກັບປະເພດຂອງແລວທາງດັ່ງກ່າວ ແລະ ອາດຈະມີຄວາມຈຳເປັນ ທີ່ຈະຕ້ອງໃຫ້ມີຄວາມກ້ວາງພຽງພໍ ເພື່ອຄວາມຕ້ອງການໃນການປູຢາງ, ເຮັດບ່າທາງ ແລະ ປັບປຸງແຄມທາງ ເຊັ່ນ: ເຂດຈອດລົດ. ເມື່ອວາງແຜນການຍົກຍ້າຍຈັດສັນປະຊາຊົນ, ແລວຜົນກະທົບນັ້ນແມ່ນຈະກວມເອົາທັງເຂດປອດໄພຖັດມານັ້ນ ແລະ ເຂດອື່ນໆ ທີ່ມີຜົນກະທົບໂດຍກົງ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ຄືໄດ້ກຳນົດມາໃນເວລາເຮັດການສຳຫລວດ. ສິ່ງທີ່ໄດ້ຍົກຍ້າຍ ຫລື ມ້າງຖິ້ມ, ແບບຊົ່ວຄາວຫລືຖາວອນ, ຈະຖືວ່າຢູ່ໃນເຂດແລວຜົນກະທົບ ແລະ ຜູ້ທີ່ໄດ້ຮັບຄວາມເສຍຫາຍຍ້ອນໂຄງການ ຄວນໄດ້ຮັບການຊ່ວຍເຫລືອ. ເຂດທີ່ມີຄວາມປອດໄພ ສຳລັບເສັ້ນທາງຫຼວງທີ່ມີພາຫານະທຽວຫລາຍ ແລະ ວ່ອງໄວນັ້ນ ອາດຈະກ້ວາງກ່ວາເສັ້ນທາງຊົນນະບົດ.

ໂຄງການທາງຫລວງ ແລະ ທາງລົດໄຟ ໄດ້ມີຜົນກະທົບແຕກຕ່າງກັນຫລາຍໃນເຂດຊົນນະບົດ ແລະ ໃນເຂດຕົວເມືອງ. ຄວາມໜາແໜ້ນຂອງຄົນ ແລະ ສະພາບເສດຖະກິດ-ສັງຄົມ ໃນເຂດຕົວເມືອງ ຈະເຫັນໄດ້ອັນທີ່ມີຄວາມແຕກຕ່າງກັບໃນເຂດຊົນນະບົດ (ເບິ່ງໝວດ19 ກ່ຽວກັບການຍົກຍ້າຍຈັດສັນປະຊາຊົນໃນໂຄງການຕົວເມືອງ). ໃນຂະນະທີ່ ການຍົກຍ້າຍໂຄງລ່າງໃນເຂດຊົນນະບົດ ໂດຍຖອຍເຮືອນອອກຫ່າງຈາກເສັ້ນທາງ, ແຕ່ມີຄວາມຫຍຸ້ງຍາກທີ່ຈະເຮັດໄດ້ຄືກັນໃນເຂດຕົວເມືອງ ເພາະວ່າມີເນື້ອທີ່ໜ້ອຍກ່ວາ. ນອກນີ້, ປະເພດໂຄງການກໍ່ສ້າງໃນເຂດຕົວເມືອງ, ເຊິ່ງສ່ວນຫຼາຍແມ່ນປະເພດຖາວອນ ຫລື ເຄິ່ງຖາວອນ, ເຖິງຈະມີການຍົກຍ້າຍໂຄງລ່າງພຽງເລັກໜ້ອຍກໍຮຽກຮ້ອງໃຫ້ມີການສ້ອມແປງຫລາຍ.

ກິດຈະກຳເສດຖະກິດ ແມ່ນຈະເກີດຂຶ້ນມີຕາມເສັ້ນທາງທັງໃນເຂດຊົນນະບົດ ແລະ ເຂດຕົວເມືອງ, ແຕ່ຜົນກະທົບຕໍ່ຊາວຄ້າຂາຍ ໂດຍທົ່ວໄປແລ້ວ ສຳລັບເຂດຕົວເມືອງແມ່ນຈະມີຫລາຍກ່ວາ. ການປັບປຸງເສັ້ນທາງອາດສ້າງຜົນກະທົບທາງອ້ອມຫລາຍ. ຕົວຢ່າງ ທາງເວັ້ນຢູ່ໃນເຂດທີ່ມີປະຊາຊົນອາໃສຢູ່ຫລາຍອາດເຮັດໃຫ້ຊາວຄ້າຂາຍບໍ່ສາມາດຈະມີຮ້ານຄ້າຕໍ່ໄປໄດ້ອີກ. ກອບຂອງການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ອາດກວມລວມເອົາທັງຜົນກະທົບທາງກົງຈາກການເວນຄືນທີ່ດິນ ແລະ ຄວນໄດ້ພະຍາຍາມຫາມາດຕະການຫຼຸດຜ່ອນຜົນກະທົບທາງອ້ອມອີກດ້ວຍ.

ການເພີ້ມຄ່າຂອງຊັບສິນທີ່ຢູ່ຕາມແຄມທາງຂຶ້ນຢ່າງໄວວາ ຍ້ອນການສ້າງ ຫລື ການຟື້ນຟູເສັ້ນທາງນັ້ນແມ່ນອາດຈະເຮັດໃຫ້ມີຜົນກະທົບທາງອ້ອມແບບໃດແບບໜຶ່ງໄດ້. ເມື່ອມູນຄ່າຊັບສິນເພີ້ມຂຶ້ນ, ບາງຄອບຄົວທີ່ທຸກຍາກ ອາດມີຄວາມສ່ຽງທີ່ຈະສູນເສຍທີ່ດິນ ຫລື ເຮືອນ ຍ້ອນພາສີຊັບສິນເພີ້ມຂຶ້ນ, ຄ່າເຊົ່າແພງຂຶ້ນ ຫລື ພັນທະອື່ນໆ ທີ່ເຂົາເຈົ້າບໍ່ອາດສາມາດມີເງິນໃຊ້ຈ່າຍໄດ້. ມັນອາດເປັນວິທີການທີ່ດີ ທີ່ຈະພະຍາຍາມຫລຸດຜ່ອນຄວາມສ່ຽງດັ່ງກ່າວ. ຢ່າງໃດກໍຕາມ, ຜົນໄດ້ຈາກຄຸນຄ່າຂອງຊັບສິນເພີ້ມຂຶ້ນ ແມ່ນມັນກໍອາດຈະແກ້ໄຂຜົນກະທົບທາງລົບໂດຍທາງອ້ອມໄດ້.

- <u>ທໍ່ນ້ຳ, ນ້ຳເປື້ອນ, ແກັດ ແລະນ້ຳມັນ</u>

ມັນອາດມີຫລາຍເຫດຜົນທີ່ທໍ່ນ້ຳເຫລົ່ານີ້ ບໍ່ມີຄວາມຈຳເປັນ ຕ້ອງເຮັດໃຫ້ມີການເວນຄືນທີ່ດິນ ຫລື ມີການຍົກຍ້າຍຈັດສັນປະຊາຊົນ ຍ້ອນ:

- ສ່ວນຫລາຍເປັນແລວແຄບ, ກ້ວາງພຽງແຕ່ 6 -18 ແມັດ;
- ສ່ວນຫລາຍໄດ້ສ້າງຂຶ້ນຕາມແລວທາງເກົ່າ, ເພື່ອສ້າງ ແລະ ຮັກສາເສັ້ນທາງ;
- ສ່ວນຫລາຍແມ່ນຝັງດິນໄປ, ໝາຍຄວາມວ່າຜົນກະທົບ ເປັນພຽງຜົນກະທົບຊົ່ວຄາວເທົ່ານັ້ນ;
- ລັກສະນະຂອງແລວທາງ ອາດຈະປ່ຽນແປງໄດ້ງ່າຍ ເພື່ອຫລີກເວັ້ນ ແລະ ຫລຸດຜ່ອນການຍົກຍ້າຍຈັດສັນປະຊາຊົນ ໂດຍບໍ່ຈຳເປັນ.

ຢ່າງໃດກໍຕາມ, ມັນອາດມີຄວາມຈຳເປັນຈະຕ້ອງມີການເວນຄືນທີ່ດິນຫລາຍຂຶ້ນ ສຳລັບ ການກໍ່ສ້າງໂຄງລ່າງຂັ້ນໜຶ່ງ, ການຕິດຕັ້ງສະຖານີດູດນ້ຳ, ໂຄງການບຳບັດນ້ຳເສຍ, ທາງເຂົ້າ ແລະ ອ່າງເກັບນ້ຳທີ່ຕິດພັນ ກັບໂຄງການເຫລົ່ານີ້. ດັ່ງນັ້ນ, ຕ້ອງມີວິທີການຢ່າງຮອບດ້ານ ເພື່ອກຳນົດຜົນກະທົບທັງໝົດທີ່ຕິດພັນກັບບັນດາການກໍ່ສ້າງໂຄງລ່າງເຫົ່ລານີ້.

ໂດຍແຕກຕ່າງຈາກໂຄງການທາງຫລວງ ແລະ ທາງລົດໄຟ, ການກຳນົດແລວທາງຂອງທໍ່ສ່ວນຫລາຍແມ່ນບໍ່ມີຄວາມຈຳເປັນຕ້ອງມີການໂອນກຳມະສິດ. ຢ່າງໃດກໍຕາມ, ຂໍ້ຈຳກັດ ແມ່ນຕິດພັນກັບການນຳໃຊ້ທີ່ດິນຢູ່ໃນເຂດແລວດັ່ງກ່າວ, ທໍ່ນ້ຳອາດຈຳກັດ ບໍ່ໃຫ້ສ້າງໂຄງລ່າງອື່ນໄດ້ ແລະ ເປັນອຸປະສັກຕໍ່ກິດຈະກຳອື່ນໆ ເຊັ່ນ: ປູກໄມ້, ປູກພືດທີ່ຕ້ອງການຂຸດດິນ. ການຈຳກັດການນຳໃຊ້ດັ່ງກ່າວ ໄດ້ເຮັດໃຫ້ການຍົກຍ້າຍໂຄງລ່າງຈຳນວນເລັກໜ້ອຍ. ຍ້ອນວ່າມັນອາດສົ່ງຜົນກະທົບຫລາຍຕໍ່ລາຍຮັບ ຫລື ມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນ. ດັ່ງນັ້ນ, ມັນຈຶ່ງຕ້ອງໄດ້ມີການທົດແທນຄ່າເສຍຫາຍຈາກການເສຍສິດນຳໃຊ້ ຫລື ມີການອຸດໜູນໃນຮູບແບບອື່ນໆ. ຕົວຢ່າງ ຄ່າທຳນຽມຈາກຄວາມສະດວກ ຫລື ການຈ່າຍຄ່າເສຍຫາຍ ຕໍ່ເຄື່ອງປູກຂອງຝັງ ກໍແມ່ນວິທີການທີ່ເໝາະສົມ ເພື່ອທົດແທນໃຫ້ຜູ້ທີ່ມີໄຮ່ນາ ທີ່ຖືກກະທົບຊົ່ວຄາວ ໄດ້ມີເງິນມາບູລະນະ ແລະ ຟື້ນຟູຄືນ.

ການເອົາໃຈໃສ່ນຳເລື້ອງຄວາມສະຫງົບ ແລະ ຄວາມປອດໄພ ສ່ວນຫຼາຍ ແມ່ນພະຍາຍາມໃຫ້ມີການຍົກຍ້າຍຈັດສັນປະຊາຊົນໜ້ອຍທີ່ສຸດ. ເພື່ອຄວາມປອດໄພ ໃນເມື່ອເຫັນໄພອັນຕະລາຍ ຈາກທໍ່ນ້ຳມັນ ຫລື ທໍ່ແກັດຮົ່ວ ຫລື ລະເບີດ ແມ່ນຈະຕ້ອງໄດ້ມີການຍົກຍ້າຍຄົນຢູ່ອ້ອມແລວທໍ່ນັ້ນອອກໄປ. ໃນຫລາຍກໍລະນີ, ມັນມີຄວາມຈຳເປັນຕ້ອງໄດ້ປ້ອງກັນທໍ່ບໍ່ໃຫ້ມີການທຳລາຍ ໂດຍກຳນົດເຂດທີ່ບໍ່ໃຫ້ຄົນເຂົ້າໄປຢ່າງຄັກແນ່. ໃນກໍລະນີ, ມີຄວາມຈຳເປັນທີ່ສຸດທີ່ຕ້ອງໄດ້ມີຄວາມພະຍາຍາມ ເຮັດໃຫ້ການຍົກຍ້າຍຈັດສັນປະຊາຊົນມີໜ້ອຍທີ່ສຸດ ໃນກໍລະນີນີ້ ແມ່ນຕ້ອງຮັບປະກັນໃຫ້ມີມາດຕະການຮັກສາຄວາມປອດໄພຢ່າງຄັກແນ່ ໃນເວລາມີການຍົກຍ້າຍຈັດສັນປະຊາຊົນຈຳນວນຫລວງຫລາຍ.

ໃນເຂດຊົນນະບົດ, ການກໍ່ສ້າງ ຫລື ການຟື້ນຟູລະບົບສົ່ງນ້ຳ ຫລື ນ້ຳເປື້ອນ ກໍມັກເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນໃນລະດັບຫລາຍສົມຄວນເຊັ່ນດຽວກັນ, ໂດຍສະເພາະໃນເຂດຊຸມຊົນ ຫລື ເຂດທີ່ມີຄວາມສ່ຽງຫລາຍ. ໃນກໍລະນີທີ່ມີການຍົກຍ້າຍຈັດສັນປະຊາຊົນຫລາຍ ຫລື ໝົດຊຸມຊົນຖືກກະທົບ, ແຜນການຍົກຍ້າຍຈັດສັນປະຊາຊົນ ກໍຄວນຖືວ່າເປັນແຜນພັດທະນາທ້ອງຖິ່ນ ທີ່ຈະເຮັດໃຫ້ຊຸມຊົນທັງໝົດ ໄດ້ມີສ່ວນຮ່ວມໃນຜົນປະໂຫຍດ ແລະ ຜົນກະທົບອີກດ້ວຍ.

ຄືກັບໂຄງການທີ່ມີການກໍ່ສ້າງຍາວເປັນແລວອື່ນໆ, ການກໍ່ສ້າງທໍ່ນ້ຳ ກໍອາດເຮັດໃຫ້ມີການຍົກຍ້າຍປະຊາຊົນອອກ ແບບບໍ່ໄດ້ມີການຄາດຄະເນໄວ້ລ່ວງໜ້າກ່ອນ. ທໍ່ທີ່ຜ່ານປ່າ, ປ່າສະຫງວນ ຫລື ເຂດຊົນເຜົ່າ ອາດຈະສ້າງຜົນກະທົບທາງລົບຕໍ່ປະຊາຊົນທີ່ອາໃສການນຳໃຊ້ຊັບພະຍາກອນດັ່ງກ່າວ ເພື່ອດຳລົງຊີວິດ. ໃນກໍລະນີດັ່ງກ່າວ, ສະເໜີໃຫ້ພິຈາລະນາຜົນກະທົບໄລຍະກາງ ກ່ອນຈະຕົກລົງເອົາແລວທາງທີ່ອາດຈະແກ້ຄືນບໍ່ໄດ້ອີກ. ການປະເມີນ

ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ແບບມີສ່ວນຮ່ວມ ເຫັນວ່າເປັນວິທີທີ່ດີ, ລວມທັງການຮັບຮອງເອົາແຜນດຳເນີນງານຫລຸດຜ່ອນຜົນກະທົບ.

ຄອງຊົນລະປະທານ ກໍຄືກັບທໍ່ສົ່ງນ້ຳໃນຫລາຍໆດ້ານ. ການຍົກຍ້າຍຈັດສັນປະຊາຊົນ ຍ້ອນການສ້າງ ຫລື ປັບປຸງຄອງ ກໍຍັງເປັນບັນຫາທີ່ໂດດເດັ່ນຢູ່. ໃນເມື່ອຊາວກະສິກອນທີ່ສູນເສຍທີ່ດິນ ຍັງໄດ້ຮັບຜົນປະໂຫຍດຈາກຄອງຊົນລະປະທານໃໝ່, ມັນກໍອາດເປັນໂອກາດດຽວ ທີ່ຈະເຮັດໃຫ້ການຍົກຍ້າຍໄດ້ຮັບຜົນປະໂຫຍດສູງສຸດ ແລະ ໃຫ້ຜົນປະໂຫຍດ ດັ່ງກ່າວກະຈາຍໃຫ້ທົ່ວເຖິງໄດ້. ການປະຕິຮູບທີ່ດິນ ຫລື ໂຄງການປັບປຸງການນຳໃຊ້ທີ່ດິນອາດເປັນວິທີການທີ່ດີ ເມື່ອຫລາຍຄອບຄົວກຳລັງຂາດເຂີນການນຳໃຊ້ນັ້ນ ອາດຍ້ອນໄປຢູ່ໃກ້ດິນທີ່ຜູ້ອື່ນປະໄວ້ໃຫ້ ໂດຍແລກປ່ຽນກັບຜົນໄດ້ທາງດ້ານຊົນລະປະທານ, ອັນເຮັດໃຫ້ທີ່ດິນທີ່ເຫລືອນັ້ນໃຫ້ຜົນຜະລິດຫລາຍຂຶ້ນ.

- <u>ສາຍສົ່ງໄຟຟ້າ:</u>

ໂດຍຂຶ້ນກັບເງື່ອນໄຂທາງດ້ານເຕັກນິກ, ສາຍສົ່ງໄຟຟ້າ ແມ່ນຕ້ອງມີແລວຜົນກະທົບກ້ວາງແຕ່ 12 ຫາ 25 ແມັດ, ຫລື ຫລາຍກ່ວານັ້ນ ໃນກໍລະນີສາຍສົ່ງໄຟຟ້າແຮງສູງ (500 ກິໂລໂວນ ຫລື ສູງກ່ວານັ້ນ). ເຖິງແມ່ນວ່າຜົນກະທົບຈາກເສົາໄຟຟ້າຈະບໍ່ຫລວງຫລາຍ ໂດຍສະເພາະໃນເຂດຊົນນະບົດ, ສາຍສົ່ງທີ່ຍາວໄປເປັນ ຫຼາຍໆກິໂລແມັດ ອາດເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນຫລວງຫລາຍຄືກັນ ໂດຍສະເພາະ ຖ້າສາຍສົ່ງຫາກບໍ່ສາມາດຫລີກລ້ຽງເຂດທີ່ມີຄົນຢູ່ຫລາຍໄດ້.

ສາຍສົ່ງ ບໍ່ໄດ້ຕ້ອງການໃຫ້ມີການເວນຄືນທີ່ດິນ (ຍົກເວັ້ນແຕ່ເສົາເທົ່ານັ້ນ). ແລວສາຍສົ່ງແມ່ນໄດ້ສ້າງຂຶ້ນໂດຍມີການກຳນົດລວງສູງຢ່າງຄັກແນ່ ໂດຍສະເພາະຕົ້ນໄມ້ ແລະ ການປຸກສ້າງໂຄງລ່າງອື່ນໆ. ອັນນີ້ຂຶ້ນກັບກົດໝາຍ ແລະ ລະບຽບການພາຍໃນ, ວິທີການກໍແຕກຕ່າງກັນໄປ ກ່ຽວກັບ ໂຄງລ່າງທີ່ຢູ່ກ້ອງສາຍສົ່ງ. ບາງປະເທດຫ້າມເດັດຂາດບໍ່ໃຫ້ຂຸດ ຫລື ຂຸດຄົ້ນແຮ່ທາດ ຢູ່ໃກ້ກັບເສົາໄຟຟ້າ, ສ່ວນການເຮັດຟາມລ້ຽງສັດແມ່ນໄດ້ຮັບການອະນຸຍາດ.

ຍ້ອນເຫດຜົນຂອງຄວາມປອດໄພ ແລະ ບັນຫາສິ່ງແວດລ້ອມທີ່ອາດແກ້ໄຂບໍ່ໄດ້, ຫລາຍປະເທດຈຶ່ງບໍ່ໄດ້ອະນຸຍາດໃຫ້ນຳໃຊ້ເຂດຢູ່ກ້ອງ ຫລື ໃກ້ສາຍສົ່ງ ເປັນບ່ອນປຸກເຮືອນຢູ່. ຍ້ອນຂໍ້ຈຳກັດຕ່າງໆ, ບາງປະເທດກໍຍັງໄດ້ອະນຸຍາດໃຫ້ຄົນອາໄສຢູ່ກ້ອງສາຍສົ່ງ. ໃນບາງກໍລະນີ, ການຈຳກັດບໍ່ໃຫ້ໃຊ້ເຂດແລວດັ່ງກ່າວ ຍ້ອນທີ່ງແມ່ເຫລັກຈະສົ່ງຜົນກະທົບທາລົບ ຕໍ່ການສື່ສານ ຫລື ຕໍ່ປັດໄຈອື່ນໆຂອງພວກຕົນ.

ໃນເມື່ອການກໍ່ສ້າງສາຍສົ່ງໄຟຟ້າ ບໍ່ໄດ້ຮຽກຮ້ອງໃຫ້ມີການຊື້ຂາຍທີ່ດິນ, ການກໍ່ສ້າງສິ່ງອຳນວຍຄວາມສະດວກ ເພື່ອວຽກບໍລິຫານ ເຊັ່ນ ສ້າງສະຖານນີສົ່ງໄຟຟ້າ ຫລື ຂະຫຍາຍເສັ້ນທາງ ແມ່ນອາດເຮັດໃຫ້ມີການການຍົກຍ້າຍຈັດສັນປະຊາຊົນ. ໃນໄລຍະກໍ່ສ້າງເສັ້ນທາງເຂົ້າຫາເຂດກໍ່ສ້າງເສົານັ້ນ ອາດສ້າງຜົນກະທົບຊົ່ວຄາວຕໍ່ຊັບສິນ ແລະ ຜົນລະປູກຂອງປະຊາຊົນ, ໃນກໍລະນີເຫລົ່ານີ້, ຕ້ອງຈ່າຍຄ່າຂໍຄວາມສະດວກຊົ່ວຄາວ ແລະ ຈ່າຍຄ່າເສຍຫາຍຕໍ່ຜົນລະປູກ. ໃນຫລາຍກໍລະນີ, ບໍ່ມັກມີການຈ່າຍຄ່າທົດແທນໃນເວລາເຮັດໃຫ້ມີຜົນຜະລິດຫລຸດລົງ ຍ້ອນການສ້າງສາຍສົ່ງ. ຢ່າງໃດກໍຕາມ, ຄວນຈ່າຍແບບລວມ ໃຫ້ໃນກໍລະນີດັ່ງກ່າວ. ເມື່ອມີກຳມະສິດທີ່ດິນຂະໜາດນ້ອຍຖືກຕັດແຍກອອກ ຍ້ອນແລວສາຍສົ່ງ ແລະ ດິນແຕ່ລະຕອນບໍ່ສາມາດນຳໃຊ້ໄດ້ອີກທາງດ້ານເສດຖະກິດ ຈະຕ້ອງໄດ້ເວນຄືນທີ່ດິນທັງໝົດ ແລະ ຈ່າຍຄ່າທົດແທນໃນມູນຄ່າປ່ຽນແທນ.

- <u>ທາງລົດໄຟ</u>

ອີງຕາມປະເພດຂອງລົດໄຟ ແລະ ເຕັກໂນໂລຊີການຂົນສົ່ງ, ທາງລົດໄຟ ແມ່ນກ້ວາງແຕ່ 16-24 ມ. ໃນຫລາຍກໍລະນີ, ໄດ້ມີຊຸມຊົນບຸກລຸກເຂົ້າໄປຫາທາງລົດໄຟ ເພາະມັນເປັນບ່ອນທີ່ສາມາດເຂົ້າຫາເຂດຕົວເມືອງໄດ້ງ່າຍ

ທີ່ສຸດ ແລະ ຍ້ອນມັນມີຄ່າໃຊ້ຈ່າຍໜ້ອຍກວ່າເຮັດແນວອື່ນ. ສິ່ງນີ້ຈຶ່ງເປັນເຫດຜົນຕົ້ນຕໍ ທີ່ເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນຈຳນວນຫລວງຫລາຍ, ມີການຟື້ນຟູ ຫລື ທັບທາງລົດໄຟໄປເປັນຂອງເອກກະຊົນ.

ຍ້ອນເຫດຜົນຄວາມປອດໄພ ຄືກັບໂຄງການທໍ່ແກັດແລະທໍ່ນ້ຳມັນ, ຈຶ່ງຈຳກັດບໍ່ໃຫ້ຄົນເຂົ້າໄປຢູ່ໃກ້ແລວທາງລົດໄຟ; ໃນບາງສະພາບການ, ມັນອາດບໍ່ເໝາະທີ່ຈະເຮັດໃຫ້ການຍົກຍ້າຍຈັດສັນປະຊາຊົນມີຈຳນວນໜ້ອຍລົງໄດ້ ຖ້າຫາກມີຄວາມສ່ຽງຕໍ່ຜູ້ອາໃສຢູ່ ຫລື ຕໍ່ທາງລົດໄຟທີ່ແລ່ນຜ່ານ. ອີກດ້ານໜຶ່ງ, ແລວທາງທາງລົດໄຟສ່ວນຫລາຍແມ່ນກ້ວາງກວ່າຄວາມຈຳເປັນ. ໃນເງື່ອນໄຂດັ່ງກ່າວ, ມັນອາດເປັນໄປໄດ້ທີ່ຈະຍົກຍ້າຍຜູ້ທີ່ອາໃສຢູ່ໃນນັ້ນອອກໄປບໍ່ໄກປານໃດ ພ້ອມທັງມີມາດຕະການປ້ອງກັນຄວາມປອດໄພຢ່າງເໝາະສົມ ໂດຍເຮັດຮົ້ວກັ້ນໄວ້ ຫລື ເຮັດຂົວຂ້າມທາງ ຫລື ເຮັດທາງໃຕ້ດິນລອດທາງລົດໄຟ ເພື່ອໃຫ້ຄົນຍ່າງຂ້າມໄປມາ. ກົງກັນຂ້າມກັບທາງລົດຍົນ, ການສ້າງທາງລົດໄຟ ສ່ວນຫລາຍແມ່ນເຮັດໃຫ້ຄ່າຊັບສິນຫລຸດລົງ ແລະ ແຕະຕ້ອງຕໍ່ເງື່ອນໄຂໃນການດຳລົງຊີວິດໃນເຂດທີ່ຢູ່ອາໃສ. ການອອກແບບໂຄງການ ຄວນພະຍາຍາມຊອກໃຫ້ເຫັນຜົນກະທົບໂດຍກົງ ພ້ອມທັງຫລີກລ້ຽງ ແລະ ຫລຸດຜ່ອນຜົນກະທົບໃຫ້ໄດ້.

ໃນທຸກຮູບແບບຂອງການຍົກຍ້າຍຈັດສັນປະຊາຊົນແບບຍາວເປັນແລວ ຄວນເຮັດການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແລະ ການວິໄຈຜົນກະທົບເປັນແຕ່ລະກໍລະນີ, ເຖິງແມ່ນວ່າຜົນກະທົບມີລັກສະນະເປັນພາກສ່ວນໂດຍທົ່ວໄປກໍຕາມ. ໃນຫລາຍກໍລະນີ, ເຖິງຈະມີການສູນເສຍທີ່ດິນບໍ່ຫລວງຫລາຍກໍຕາມ ມັນອາດມີຄວາມສຳຄັນຫລາຍຕໍ່ຄອບຄົວທີ່ດຳລົງຊີວິດຢູ່ກັບຄວາມທຸກຍາກ. ບາງເທື່ອ, ໂຄງການທີ່ມີການກໍ່ສ້າງຍາວເປັນແລວອາດແຍກເຂດໃດເຂດໜຶ່ງອອກເປັນຫລາຍຕອນ ຊຶ່ງສາມາດປູກພືດຜັກກິນເອງໄດ້. ບົດຮຽນໄດ້ຊີ້ໃຫ້ເຫັນວ່າໃນບາງເງື່ອນໄຂ, ຫລາຍຄອບຄົວບໍ່ມັກຍົກຍ້າຍອອກໄປ ຖ້າມີການຊ່ວຍເຫລືອເພື່ອດຳເນີນກິດຈະກຳເສດຖະກິດເພີ້ມ.

## 18.4. ຜົນກະທົບຕໍ່ກິດຈະກຳ ເສດຖະກິດ ແລະ ຜູ້ທີ່ຈັບຈອງດິນລັດ

ການຂະຫຍາຍທາງຫລວງ ແລະ ທາງລົດໄຟ ໄດ້ເຮັດໃຫ້ມີການຍົກຍ້າຍທຸລະກິດທີ່ຢູ່ຕາມແລວທາງ. ພ້ອມດຽວກັນນີ້, ມັນໄດ້ສ້າງໂອກາດທາງດ້ານເສດຖະກິດໃຫ້ຜູ້ອື່ນ. ການກະກຽມ ແລະ ການອອກແບບໂຄງການ ຄວນພິຈາລະນາຜົນກະທົບດັ່ງກ່າວ ແລະ ປະເມີນວ່າຜົນໄດ້ ແມ່ນກະຈາຍຢ່າງເປັນທຳ. ການຍົກຍ້າຍອາດແຕະຕ້ອງຄົນທຸກຍາກໃນຫລາຍລະດັບແຕກຕ່າງກັນ, ສ່ວນຜູ້ທີ່ມີທຶນຮອນອາດໄດ້ປຽບທາງດ້ານເສດຖະກິດ. ຍິ່ງໄປກວ່ານັ້ນ, ການສູນເສຍມັກເກີດຂຶ້ນທັນທີ ຍ້ອນການເວນຄືນທີ່ດິນ ເພື່ອສ້າງໂຄງການ, ສ່ວນໂອກາດທາງດ້ານເສດຖະກິດອາດເກີດຂຶ້ນຕາມຫລັງ. ໃນຄວາມບໍ່ແນ່ນອນດັ່ງກ່າວ, ວິທີການທີ່ມີເຫດຜົນທີ່ດີ ແມ່ນສຸມໃສ່ການຫລຸດຜ່ອນຜົນກະທົບ ກໍຄືການທົດແທນຕໍ່ການສູນເສຍທາງດ້ານເສດຖະກິດທີ່ໂຄງການສ້າງຂຶ້ນ ໂດຍເອົາໃຈໃສ່ເປັນພິເສດຕໍ່ຜູ້ທີ່ຫາລ້ຽງຊີບປະຈຳວັນ.

### 18.4.1. ຊາ¸ຄÉາຂາຍຍÈອຍ Áລະ Àຄˆອນê†

ການປັບປຸງເສັ້ນທາງທີ່ມີຢູ່ ອາດຕ້ອງການສະຖານທີ່ ທີ່ກ່ອນໜ້າ ມີຊາວຄ້າຂາຍຍ່ອຍ ແລະ ເຄື່ອນທີ່ ແລະຜູ້ອື່ນໆ ທີ່ອາໃສຜູ້ຄົນຜ່ານໄປມາ. ໂຄງການຄວນຮັບປະກັນ ໃຫ້ມີການຕໍ່ເນື່ອງ ໃນການເຂົ້າເຖິງລູກຄ້າ ແລະຜູ້ຂັດສົ່ງສິນຄ້າ ໃຫ້ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້. ການຕັດຂາດກິດຈະກຳ ບໍ່ພຽງແຕ່ແຕະຕ້ອງປະຊາຊົນທີ່ສູນເສຍໂອກາດ, ມັນຍັງແຕະຕ້ອງເຖິງຜົນກະທົບຕໍ່ປະຊາຊົນຜູ້ທີ່ໄດ້ຊົມໃຊ້ສິນຄ້າ ແລະ ການບໍລິການນັ້ນອີກດ້ວຍ. ກິດຈະກຳດ້ານເສດຖະກິດ ຄວນຍ້າຍໄປຢູ່ເຂດການຄ້າ ທີ່ໄດ້ວາງແຜນແລ້ວ ຫລື ຢູ່ຕາມປ່າແລວທາງ ເພື່ອຮັບປະກັນຄວາມປອດໄພ ແລະ ການສັນຈອນ ໃຫ້ມີຄວາມສະດວກ.

ອາດມີຫລາຍວິທີເພື່ອແກ້ໄຂ ສຳລັບຜູ້ທີ່ຖືກກະທົບໃນປະເພດຕ່າງໆ. ໃນກໍລະນີຊາວຄ້າຂາຍເຄື່ອນທີ່, ແມ່ນມີຄວາມຈຳເປັນຕ້ອງຮັບປະກັນ ໃຫ້ມີສະຖານທີ່ໆພວກເຂົາເຈົ້າຈະສາມາດສືບຕໍ່ທຸລະກິດໄດ້. ຜູ້ທີ່ເສຍເຮືອນຊານທັງໝົດ ຫລື ສ່ວນໃດສ່ວນໜຶ່ງ ແມ່ນຕ້ອງໄດ້ຮັບຄ່າທົດແທນຢ່າງເຕັມສ່ວນ ຫລື ຊ່ວຍໃຫ້ຍ້າຍອອກ ແລະ ປຸກເຮືອນໃໝ່ຢູ່ບ່ອນອື່ນ. ການຍົກຍ້າຍດັ່ງກ່າວ ແມ່ນຈະບໍ່ໄດ້ເກັບຄ່າຫຍັງນຳຜູ້ທີ່ຖືກຍົກຍ້າຍ. ຖ້າຈຳເປັນ, ແຜນການຍົກຍ້າຍຈັດສັນປະຊາຊົນ ກໍຄວນກວມເອົາເງິນອຸດໜູນເພື່ອຢູ່ກິນໃນໄລຍະຂ້າມຜ່ານຈົນກ່ວາຈະຟື້ນຟູເສດຖະກິດຂຶ້ນສູງກວ່າລະດັບເກົ່າໄດ້. ເມື່ອຜູ້ຂາຍຫາກມີຮ້ານຕາມແຄມທາງໂດຍໄດ້ຮັບອະນຸຍາດ, ພວກເຂົາແມ່ນມີສິດທີ່ຈະໄດ້ຮັບການຊ່ວຍເຫລືອໃນການຍົກຍ້າຍອອກ ແລະ ຟື້ນຟູກິດຈະກຳຂອງເຂົາເຈົ້າ ໂດຍໃຫ້ມີທາງເຂົ້າອອກສຳລັບ ລູກຄ້າ ແລະ ສາມາດໄປມາໄດ້ຕະຫຼອດ.

### 18.4.2. ຜøÉຈກັບຈອງດòນລກັດ Áລະ ຜøÉບ÷¡ລ÷¡Àຂົ້າມາµøÈ

ຍ້ອນແລວທາງຂົນສົ່ງຍັງເປັນທາງເສດຖະກິດ ແລະ ຍ້ອນລັດຖະບານບໍ່ສາມາດຫ້າມບໍ່ໃຫ້ເອກກະຊົນມາໃຊ້ແລວທາງຫຼວງຂອງລັດ, ໂຄງການປັບປຸງເສັ້ນທາງຫຼວງ ແລະ ທາງລົດໄຟສ່ວນຫຼາຍ ຈຶ່ງຕ້ອງໄດ້ຍ້າຍຜູ້ຈັບຈອງດິນລັດ ແລະ ຜູ້ບຸກລຸກເຂົ້າມາຢູ່ນັ້ນອອກໄປ. ຍ້ອນເຂົາເຈົ້າບໍ່ມີການທວງເອົາການຊ່ວຍເຫລືອຕາມລະບຽບກົດໝາຍ, ພະນັກງານທ້ອງຖິ່ນຈຶ່ງເຫັນວ່າ ບໍ່ຄວນໃຫ້ການຊ່ວຍເຫລືອ ຫລື ທົດແທນຫຍັງແກ່ຜູ້ທີ່ບຸກລຸກເຂົ້າໄປຢູ່ ຫລື ນຳໃຊ້ຊັບສິນຂອງລັດຕ່າງໆ. ກົດໝາຍ ການຈັບຈອງຊັບຍົນຂອງລັດຍັງເປັນຫ່ວງວ່າການຊ່ວຍເຫຼືອທີ່ຜ່ານມາຈະສ້າງເປັນເງື່ອນໄຂທີ່ເຮັດໃຫ້ມີຄ່າໃຊ້ຈ່າຍສູງຂຶ້ນ ແລະ ອາດແຕະຕ້ອງກັບລະບົບກຳມະສິດທີ່ຖືກຕ້ອງຕາມກົດໝາຍໂດຍຈະຊຸກຍູ້ໃຫ້ມີຂະບວນການບຸກລຸກເຂົ້າທີ່ດິນຂອງລັດຕື່ມ, ໂດຍສະເພາະແມ່ນ ເຮັດໃຫ້ຄົນເຂົ້າມາຢູ່ຕົວເມືອງ. ຢ່າງໃດກໍຕາມ, ກໍຄວນສັງເກດວ່າ ທັດສະນະ ແລະ ວິທີການຂອງພະນັກງານ ອາດຈະບໍ່ຖືກຕ້ອງ ແລະ ໜັກແໜ້ນປານໃດ. ດັ່ງນັ້ນ ຈຶ່ງຄວນໄດ້ມີການດຳເນີນການ ດັ່ງຕໍ່ໄປນີ້:

- ການສຳຫລວດແຕ່ເບື້ອງຕົ້ນ ໃນເຂດແລວຜົນກະທົບທັງໝົດ ແມ່ນມີຄວາມຈຳເປັນໃນການສ້າງຂໍ້ມູນພື້ນຖານສຳລັບພົນລະເມືອງ ທີ່ຈະເຮັດໃຫ້ຂຶ້ນບັນຊີຊັບສິນທີ່ມີຢູ່ ເຊັ່ນໂຄງລ່າງ ແລະ ຕົ້ນໄມ້ທີ່ອາດຖືກກະທົບ.
- ການສຳຫລວດສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ຄວນມີການປະສານງານ ແລະ ລວມເຂົ້າກັບຂໍ້ມູນທາງດ້ານເສດຖະກິດ-ເຕັກນິກ ແລະ ໃຫ້ທິດທາງແກ່ຂະບວນການອອກແບບ ເພື່ອເຮັດໃຫ້ຜົນກະທົບທາງລົບມີໜ້ອຍທີ່ສຸດ.
- ອີງໃສ່ການສຳຫລວດດັ່ງກ່າວ, ຄວນມີການຕົກລົງວັນເລີ້ມຕົ້ນໂຄງການ ທີ່ເປັນມື້ ກຳນົດສິດທີ່ຈະໄດ້ຮັບການຊ່ວຍເຫລືອ. ອັນນີ້ຈະປ້ອງກັນໂຄງການບໍ່ໃຫ້ມີຜູ້ມາຕົວະ ຫລື ຂຶ້ນຄ່າທີ່ດິນ.
- ຄວາມຕ້ອງການຂອງກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ຕ້ອງຖືກຮັບປະກັນ ແລະ ຄວາມສາມາດດ້ານເສດຖະກິດຂອງຄອບຄົວ ກໍບໍ່ຄວນຖືກຂົ່ມຂູ່ຈາກໂຄງການ.
- ຄວນແຍກໃຫ້ລະອຽດ ລະຫວ່າງເຈົ້າຂອງທີ່ດິນເອກກະຊົນ ກັບຜູ້ຈັບຈອງ ຫຼື ຜູ້ບຸກລຸກເຂົ້າມາຢູ່ດິນລັດ. ຄົນເຫລົ່ານີ້ ບໍ່ມີສິດໄດ້ຮັບຄ່າທົດແທນ ຕາມດຳລັດ 192, ແຕ່ອາດໃຫ້ການຊ່ວຍເຫລືອໃນຮູບການອື່ນໆ.
- ຄວນໄຈ້ແຍກລະອຽດ ຄວາມແຕກຕ່າງລະຫວ່າງ ຜູ້ທີ່ຈັບຈອງ ຫລື ຜູ້ບຸກລຸກເຂົ້າມາຢູ່ດິນລັດ ຊຶ່ງຊີວິດການເປັນຢູ່ຂອງເຂົາເຈົ້າ ຈະຕົກຕ່ຳລົງຕື່ມ ແລະ ຜູ້ບຸກລຸກນັ້ນ ຈະຂະຫຍາຍບ່ອນປູກຝັງໄປຕາມແລວ

ທາງ. ພວກເຂົາເຈົ້າຈະໄດ້ຮັບອະນຸຍາດໃຫ້ເກັບຜົນລະປູກໄດ້ ແຕ່ບໍ່ມີສິດຈະໄດ້ຮັບການຊ່ວຍເຫລືອໃນຮູບການອື່ນໆ.

## 18.5. ບັນຫາສຳຄັນທີ່ສຸດໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ

### 18.5.1. ¡ານ¯ະສານງານ Áລະ ¡ານ¯¡ສາ¹າລື ¡ກັບ¯ະຊາຊöນ

ຕາມທຳມະດາແລ້ວ, ໂຄງການທີ່ມີການກໍ່ສ້າງຍາວເປັນແລວ ສ່ວນຫລາຍຕ້ອງໄດ້ມີການປະສານງານໃນການວາງແຜນ ແລະ ຈັດຕັ້ງປະຕິບັດກັບຜູ້ທີ່ກ່ຽວຂ້ອງຈຳນວນຫລາຍຕາມໄລຍະຍາວ. ຄວາມຈິງທີ່ເສັ້ນທາງ, ທໍ່, ສາຍສົ່ງໄຟຟ້າ ແລະໂຄງການທີ່ມີການກໍ່ສ້າງຍາວເປັນແລວປະເພດອື່ນ ຍາວເປັນຫຼາຍກິໂລແມັດນັ້ນ ໝາຍຄວາມວ່າມັນຢູ່ໃນຫລາຍເຂດປົກຄອງ ແລະ ມີການພົວພັນກັບຫລາຍລະບອບການເມືອງ ແລະ ການປົກຄອງຕ່າງໆ. ໃນບາງກໍລະນີ, ອາດຈະໄປຈາກປະເທດ ໜຶ່ງຫາອີກປະເທດໜຶ່ງ. ຊົນເຜົ່າຕ່າງໆອາດໄດ້ມີສ່ວນຮ່ວມ ແລະ ໂຄງການອາດມີສະພາບເສດຖະກິດ-ສັງຄົມ ແຕກຕ່າງກັນຫລາຍ ເຊັ່ນ: ເສັ້ນທາງດຽວຜ່ານທົ່ງໄຮ່ທົ່ງນາ, ຕົວເມືອງ, ທະເລຊາຍ, ປ່າໄມ້ແລະພູດອຍ. ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ເປັນເຄື່ອງມືໜຶ່ງໃນການລວບລວມສະຖານະພາບ ແລະ ແນວຄິດຈິດໃຈຂອງຜູ້ມີສ່ວນຮ່ວມທັງໝົດ ເຂົ້າໃນການວາງແຜນການຍົກຍ້າຍຈັດສັນປະຊາຊົນ.

ໃນກໍລະນີທີ່ມີສະພາບຫລາກຫລາຍຄືແນວນີ້, ການປຶກສາຫາລື, ການເຜີຍແຜ່ຂໍ້ມູນຂ່າວສານແລະການເຂົ້າຮ່ວມຂອງທ້ອງຖິ່ນໃນໂຄງການ ຄວນຈະໄດ້ມີການຈັດຕັ້ງຂຶ້ນແບບຕ່າງກັນກັບໃນໂຄງການທີ່ເປັນຈຸດດຽວ. ເວົ້າລວມ, ສ່ວນໃຫຍ່ ມີແຕ່ຄົນຈຳນວນໜ້ອຍດຽວ ໃນເຂດໃດໜຶ່ງເທົ່ານັ້ນຂອງແລວທາງ ທີ່ໄດ້ມີສ່ວນຮ່ວມ ຫລື ຖືກກະທົບ. ດັ່ງນັ້ນ, ວິທີການທີ່ອີງໃສ່ຊຸມຊົນ ອາດບໍ່ພຽງພໍ ຫລືບໍ່ເໝາະສົມ ໃນການປຶກສາຫາລືແລະການມີສ່ວນຮ່ວມຂອງຜູ້ທີ່ຖືກກະທົບຈາກໂຄງການ. ຍ້ອນຜູ້ທີ່ຖືກກະທົບກະແຈກກະຈາຍ, ກໍເປັນໄປບໍ່ໄດ້ທີ່ເຂົາເຈົ້າ ຈະມີເອກກະລັກອັນດຽວກັນ ຫລື ຈະເຮັດກັບຫຼາຍໆຄົນຄືຄົນຜູ້ດຽວໄດ້, ຄວນສ້າງຕັ້ງກຸ່ມທີ່ຮັບຜິດຊອບການປຶກສາຫາລື, ໜ່ວຍງານແກ້ໄຂຂໍ້ຂັດແຍ່ງ ແລະ ໜ່ວຍງານຈັດຕັ້ງປະຕິບັດວຽກມີສ່ວນຮ່ວມນີ້ຂຶ້ນ ເພື່ອຮັບປະກັນໃຫ້ມີຜູ້ຕາງໜ້າຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ເມື່ອໂຄງການຂ້າມເຂດແດນປົກຄອງໜຶ່ງໄປ, ການປະສານງານລວມແລະການຕັດສິນໃຈ ແມ່ນຈະຕ້ອງໄດ້ຄຳນຶງເຖິງຂໍ້ຫຍຸ້ງຍາກ ແລະ ຄວາມສາມາດຂອງໜ່ວຍງານເຫລົ່ານີ້ ແລະ ວາງກົນໄກທີ່ເໝາະສົມ ເພື່ອມອບໝາຍຄວາມຮັບຜິດຊອບ, ໂດຍສະເພາະຄວາມຮັບຜິດຊອບທາງດ້ານການເງິນ, ເພື່ອໃຫ້ການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫລືອອື່ນໆໃຫ້ທ່ວງທັນກັບເວລາ.

ຕາມຫລັກການ ວຽກກໍ່ສ້າງແມ່ນຈະບໍ່ສາມາດລິເລີ້ມໄດ້ໃນຊ່ວງໃດໜຶ່ງ ກ່ອນຈະເວນຄືນທີ່ດິນແລະໃຫ້ການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫລືອອື່ນໆ ຕາມແຜນການຍົກຍ້າຍຈັດສັນປະຊາຊົນ. ເມື່ອໄດ້ປະສານງານ ແລະ ໄດ້ຈັດຕັ້ງປະຕິບັດອົງປະກອບຕ່າງໆຂອງໂຄງການຕາມແຜນແລ້ວ, ອົງການຮັບຜິດຊອບໂຄງການສ່ວນຫລາຍມັກຖືກກົດດັນໃຫ້ອະນຸຍາດໃຫ້ຜູ້ຮັບເໝົາກໍ່ສ້າງ ເຂົ້າໄປເຮັດວຽກໄດ້ໃນຊ່ວງນັ້ນ ກ່ອນສຳເລັດວຽກທີ່ຈຳເປັນໃນແຜນການຍົກຍ້າຍຈັດສັນປະຊາຊົນ ໂດຍສະເພາະບໍ່ທັນໄດ້ຈ່າຍທົດແທນ. ຢ່າງໃດກໍຕາມ, ອັນນີ້ໄດ້ຢັ້ງຢືນວ່າເມື່ອໂຄງການມີການແກ່ຍາວເວລາໄປຫຼາຍ. ການໃຊ້ຈ່າຍກໍຍິ່ງຫຼາຍຂຶ້ນ.

ເຖິງຈະມີວິທີການປະສານງານທີ່ດີເລີດ ລະຫວ່າງ ໜ່ວຍງານຕ່າງໆຂອງອົງການຮັບຜິດຊອບໂຄງການກໍຕາມ, ບາງເທື່ອວຽກກໍ່ສ້າງ ກໍຖືກແກ່ຍາວ ຍ້ອນມີການຄັດຄ້ານ ແລະ ການຮ້ອງທຸກສ່ວນຫລາຍ ແມ່ນການທວງເອົາສິດທິທີ່ຖືກຕ້ອງຕາມກົດໝາຍ ທັງໝົດນີ້ອາດເກີດຂຶ້ນຍ້ອນຂາດການພົວພັນ ແລະ ການປຶກສາຫາລືທີ່ດີນຳ

ກັນ. ດັ່ງນັ້ນ ຈຶ່ງຈຳເປັນທີ່ສຸດທີ່ຈະຕ້ອງປຶກສາຫາລືກັບທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ. ດ້ວຍການການເຂົ້າຮ່ວມແຕ່ທົ່ວທີຂອງຜູ້ມີສ່ວນຮ່ວມ, ຄວາມເຂົ້າໃຈຜິດທີ່ສ້າງຄວາມເສຍຫາຍ ກໍອາດຫລີກລ້ຽງໄດ້. ປະສົບການຍັງຊີ້ໃຫ້ເຫັນວ່າການປຶກສາຫາລື ແລະ ການປະສານງານກັບປະຊາຊົນທ້ອງຖິ່ນ ແມ່ນມີຄວາມຈຳເປັນຫລາຍ ເພື່ອວາງກອບ ໃນການໃຫ້ສິດທິທີ່ເໝາະສຳລັບການທົດແທນຄ່າເສຍຫາຍ ແລະ ເພື່ອໃຫ້ປະຊາຊົນຮັບເອົາແຜນການດັ່ງກ່າວນີ້ໄດ້.

## 18.5.2. ¡ານêöດÁêນຄÈາÀສຍ1າຍ

ຄືດັ່ງທີ່ໄດ້ອະທິບາຍມາກ່ອນໜ້ານັ້ນ, ຜົນກະທົບຂອງໂຄງການທີ່ມີການກໍ່ສ້າງຍາວເປັນແລວ ສ່ວນຫລາຍແລ້ວ ແມ່ນມີຈຳນວນໜ້ອຍ, ແຕ່ຜົນໄດ້ຕໍ່ຜູ້ທີ່ຖືກກະທົບ ແມ່ນຈະມີຫລາຍຂຶ້ນ. ຍ້ອນເຫດຜົນດັ່ງກ່າວນີ້, ຫລາຍໜ່ວຍງານຈຶ່ງໄດ້ປຸກລະດົມຊຸກຍູ້ ຫລື ບາງເທື່ອກໍໄດ້ກົດດັນໃຫ້ຜູ້ທີ່ຖືກກະທົບສະຫລະສິດບໍ່ເອົາຄ່າທົດແທນ ຫລືໃຫ້ປະກອບສ່ວນ "ແບບສະໝັກໃຈ" ເພື່ອປະໂຫຍດສ່ວນລວມ. ແຕ່ຕົວຈິງຜູ້ທີ່ຖືກກະທົບ ໃນລັກສະນະນີ້ ໃນຜ່ານມາແມ່ນບໍ່ມີຄວາມສະໝັກໃຈປານໃດ ແລະ ກໍຍັງບໍ່ທັນເຂົ້າໃຈລະອຽດ ກ່ຽວກັບ ສິດທິຂອງຕົນ. ຜູ້ທີ່ຖືກກະທົບແມ່ນມີສິດທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫລືອອື່ນໆ ຕາມ ດຳລັດ 192 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງດຳລັດດັ່ງກ່າວ ທີ່ກຳນົດໄວ້ ແລະ ຜູ້ໃດທີ່ພະຍາຍາມບໍ່ໃຫ້ ການທົດແທນຄ່າເສຍຫາຍຕາມສິດທິນັ້ນ ແມ່ນຈະຖືວ່າຜິດກົດໝາຍ. ຍິ່ງໄປກ່ວານີ້, ການປະກອບສ່ວນແບບສະ ໝັກໃຈ, ເປັນໜຶ່ງຫລັກການທີ່ຮັບເອົາໄດ້ ຖ້າຫາກຖືກກັບເງື່ອນໄຂດັ່ງຕໍ່ໄປນີ້:

- ໃນກໍລະນີເຂົາເຈົ້າ ໄດ້ຮັບຜົນກະທົບບໍ່ຫລາຍຈາກໂຄງການ, ມີພຽງແຕ່ສ່ວນໜຶ່ງຂອງທີ່ດິນ/ສິ່ງປຸກສ້າງຖືກກະທົບ ແລະ ສ່ວນທີ່ຍັງເຫລືອ ແມ່ນຍັງສາມາດນຳໃຊ້ໄດ້ຢູ່;
- ຜູ້ທີ່ຖືກກະທົບ ບໍ່ໄດ້ຖືກຍົກຍ້າຍອອກ;
- ຜູ້ທີ່ຖືກກະທົບ ບໍ່ໄດ້ເສຍລາຍຮັບ, ທຸລະກິດ ຫລື ວຽກເຮັດງານທຳ;
- ຜູ້ທີ່ຖືກກະທົບ ຮັບຮູ້ ແລະ ເຂົ້າໃຈເຖິງການສູນເສຍນັ້ນ ແລະ ສິດທິທີ່ຈະໄດ້ຮັບການທົດແທນ ຄ່າເສຍຫາຍ, ການອຸດໜູນ ແລະ ການຊ່ວຍເຫລືອຟື້ນຟູທາງດ້ານເສດຖະກິດ;
- ຜູ້ທີ່ຖືກກະທົບ ໄດ້ຮັບຜົນປະໂຫຍດໂດຍກົງຈາກໂຄງການ; ແລະ
- ອົງການຮັບຜິດຊອບໂຄງການ ໄດ້ດຳເນີນການປຶກສາຫາລືກັບຜູ້ທີ່ຖືກກະທົບແບບເປີດເຜີຍ ແລະ ໂປ່ງໃສ ແລະ ການຕັດສິນໃຈປະກອບສ່ວນ ຂອງຜູ້ທີ່ຖືກກະທົບນັ້ນ ແມ່ນບໍ່ໄດ້ຖືກກົດດັນຈາກອົງການຮັບຜິດຊອບໂຄງການ.

ອົງການຮັບຜິດຊອບໂຄງການ ຍັງຕ້ອງໄດ້ມີການກະກຽມເອກະສານຢັ້ງຢືນລະອຽດ ວ່າໄດ້ແຈ້ງໃຫ້ຜູ້ທີ່ຖືກກະທົບຊາບ ກ່ຽວກັບ ສິດທິທັງໝົດ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມໃນການປຶກສາຫາ ລືກັບຜູ້ທີ່ຖືກກະທົບ ແລະ ການຕັດສິນໃຈຂອງຜູ້ທີ່ຖືກກະທົບ ແມ່ນໄດ້ຮັບການເປີດເຜີຍ ແລະ ມີຄວາມໂປ່ງໃສ ໂດຍຊ່ອງໜ້າກັບກຸ່ມຊຸມຊົນຕ່າງໆ.

### 18.5.3. ¡ານຕòດຕາມ¡¸ດ¡າ Áລະ ¡ານຊຮັນ¿

ການປະສານງານ, ການຕິດຕາມກວດກາ ແລະ ການຊີ້ນຳດູແລ ໃນວຽກງານຕ່າງໆໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ ແມ່ນມີລັກສະນະສະລັບສັບຊ້ອນ, ເພາະສະນັ້ນ, ມັນຈຶ່ງຕ້ອງມີຄວາມເດັດດ່ຽວ ແລະ ມີກົນໄກທີ່ດີ ເພື່ອເຮັດການລາຍງານ ແລະ ບັນທຶກຄວາມຄືບໜ້າ.

## 18.6. ວິທີການທີ່ດີໃນການວາງແຜນ ແລະ ຈັດຕັ້ງປະຕິບັດ

- <u>ການວິໄຈແລະການປະເມີນ: ຫລຸດຜ່ອນການຍົກຍ້າຍຈັດສັນປະຊາຊົນໃຫ້ໜ້ອຍ</u>

ດຳລັດ 192 ຮຽກຮ້ອງໃຫ້ມີການຍົກຍ້າຍຈັດສັນປະຊາຊົນໜ້ອຍເທົ່າທີ່ເຮັດໄດ້. ເພື່ອຮັບປະກັນຄວາມຮຽກຮ້ອງດັ່ງກ່າວ ໂຄງການທີ່ມີການກໍ່ສ້າງຍາວເປັນແລວ ແມ່ນມີຄວາມຈຳເປັນຕ້ອງໄດ້ດຳເນີນການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ແລະ ການວິໄຈທັງ ໝົດບັນຫາທີ່ສາມາດເປັນໄປໄດ້ສຳລັບໂຄງການ. ການວິໄຈບັນຫາດັ່ງກ່າວ ແມ່ນຄວນໄດ້ດຳເນີນການ ໂດຍສົມທົບກັບຜູ້ຮັບຜິດຊອບການອອກແບບທາງດ້ານວິສາວະກຳ ແລະ ຄວາມຮັບຜິດຊອບຂອງໂຄງການ. ໃນກໍລະນີໄດ້ມີການວິໄຈແຕ່ຫົວທີ, ກໍອາດເປັນໄປໄດ້ທີ່ຈະສາມາດປ່ຽນແລວທາງ, ແລວສາຍສົ່ງ ຫຼື ທໍ່ນ້ຳມັນ ອັນຈະສາມາດເຮັດໃຫ້ຜົນກະທົບທາງລົບຫລຸດໜ້ອຍລົງ. ດັ່ງນັ້ນ, ຈຶ່ງຄວນມີການກະກຽມແຜນການຢ່າງລະອຽດ ກ່ຽວກັບ ການນຳໃຊ້ທີ່ດິນ, ກິດຈະກຳດ້ານເສດຖະກິດ ແລະ ບັນຫາທາງດ້ານສັງຄົມທີ່ມີຕາມແລວທາງດັ່ງກ່າວ ເພື່ອເອົາເຂົ້າໃນການວາງແຜນການ ແລະ ການອອກແບບໂຄງການໃຫ້ສຳເລັດສົມບູນ.

ການວິໄຈບັນຫາສັງຄົມລະອຽດ ແມ່ນຈະຕ້ອງໄດ້ມີການປຶກສາຫາລືກັບຜູ້ທີ່ຖືກກະທົບ ລວມທັງພະນັກງານທ້ອງຖິ່ນ. ຂະບວນການປຶກສາຫາລື ກໍຄວນໄດ້ຮັບປະກັນໃຫ້ຜູ້ກ່ຽວຂ້ອງທັງຫລາຍ ໄດ້ມີໂອກາດພິຈາລະນາທາງເລືອກ ແລະ ສະເໜີຄຳຄິດຄຳເຫັນຂອງຕົນ. ໃນຂະບວນການດັ່ງກ່າວ, ຕ້ອງໄດ້ມີການບັນທຶກວ່າ ຈະເອົາທັດສະນະຂອງຜູ້ທີ່ຖືກກະທົບເຂົ້າ ໃນການອອກແບບໂຄງການໄດ້ຄືແນວໃດ. ຂະບວນການວິໄຈບັນຫາແບບມີການປຶກສາຫາລືນີ້ ແມ່ນສາມາດໄດ້ຮັບຂໍ້ມູນຂ່າວສານທີ່ດີ ກ່ຽວກັບ ບັນຫາຕ່າງໆ ເຊັ່ນ:

- ຍ້າຍແລວທາງດັ່ງກ່າວ, ດັດແປງເລັກໜ້ອຍ, ຫຼື ໄປເຖິງເລືອກເອົາແລວທາງອື່ນແທນ;
- ຈະສ້າງທາງເວັ້ນຄືແນວໃດ ໃນເຂດທີ່ມີຊຸມຊົນໜາແໜ້ນ;
- ຈະສ້າງທາງລອດ ຫລື ຂົວຂ້າມບ່ອນໃດ;
- ມາດຕະການຄວາມປອດໄພ ມີແນວໃດ ໃນເຂດໃດໜຶ່ງນັ້ນ.

- <u>ການສຳຫລວດພົນລະເມືອງ ແລະ ການສຳຫຼວດອື່ນໆ</u>

ຂະບວນການສຳຫລວດພົນລະເມືອງ ແລະ ການສຳຫລວດອື່ນໆຂອງໂຄງການທີ່ມີການກໍ່ສ້າງຍາວເປັນແລວ ແລະ ການຍົກຍ້າຍຈັດສັນປະຊາຊົນ ແມ່ນມີຄວາມແຕກຕ່າງອັນສຳຄັນອັນໜຶ່ງຄື: ບໍ່ສາມາດກຳນົດເປັນແລວທາງສຸດທ້າຍໄດ້ ຫລື ກຳນົດແລວຜົນກະທົບໄດ້ຢ່າງລະອຽດ ຊຶ່ງໂຄງການຈະສ້າງຂຶ້ນໃນໄລຍະຫລາຍໆກິໂລແມັດ ຈົນກວ່າການເຮັດບົດວິພາກເສດຖະກິດ-ເຕັກນິກແບບລະອຽດ ແລະ ການອອກແບບທາງດ້ານເຕັກນິກໄດ້ເຮັດສຳເລັດ. ການແກ້ໄຂສະພາບການດັ່ງກ່າວ ແມ່ນຈະເຮັດໃຫ້ການສຳຫລວດພົນລະເມືອງ ແລະ ການສຳຫລວດອື່ນໆ ໃຫ້ກວມລວມເອົາທັງບັນດາຜົນກະທົບທັງໝົດ ທີ່ອາດຈະມີຫລາຍກວ່າແລວທາງທີ່ຈະກຳນົດຂັ້ນສຸດທ້າຍ. ກຳນົດ ແລະ ຄິດໄລ່ຜູ້ທີ່ຖືກກະທົບທັງໝົດ ເພື່ອຈະໃຫ້ຂໍ້ມູນຂ່າວສານ ກ່ຽວກັບ ຂະບວນການອອກແບບໂຄງການຂັ້ນສຸດທ້າຍ ແລະ ກຳນົດພື້ນຖານເພື່ອໃຫ້ສິດທິໄດ້ຮັບຄ່າທົດແທນ, ປ້ອງກັນບໍ່ໃຫ້ມີຜູ້ລັກໂລບ ຫລື ສວຍໂອກາດ ເພື່ອຂໍ

ຄ່າຍົກຍ້າຍນຳໂຄງການ. ແນ່ນອນ, ຈະມີພຽງແຕ່ຜູ້ທີ່ຖືກກະທົບ ຈາກການອອກແບບໂຄງການໃນຂັ້ນສຸດທ້າຍເທົ່ານັ້ນ ຈະມີສິດໄດ້ຮັບການຊ່ວຍເຫລືອສຳລັບການຍົກຍ້າຍຈັດສັນປະຊາຊົນ. ການເວນຄືນທີ່ດິນສ່ວນໃດສ່ວນໜຶ່ງ ຊຶ່ງພົບເຫັນໃນຫລາຍໂຄງການທີ່ມີການກໍ່ສ້າງຍາວເປັນແລວ ແມ່ນຍັງເຫັນວ່າເປັນສິ່ງທ້າທາຍໃນການສຳຫລວດເອົາຂໍ້ມູນໃຫ້ຖືກຕ້ອງ. ມັນກໍມີຄວາມຫຍຸ້ງຍາກທີ່ຈະປະເມີນໄດ້ກ່ຽວກັບລັກສະນະເສດຖະກິດຂອງເຂດເນື້ອທີ່ດິນທີ່ຍັງເຫລືອຢູ່ນັ້ນ ເພື່ອໃຫ້ສາມາດນຳໃຊ້ໄດ້ຕໍ່ໄປ. ສ່ວນປະເພດຂອງຜົນກະທົບ (ເຊັ່ນຫລາຍກ່ວາ 25% ຂອງທີ່ດິນທີ່ເສຍໄປ) ອາດສາມາດໄດ້ຮັບຜົນປະໂຫຍດ ຈາກການມີສິດໄດ້ຮັບການຊ່ວຍເຫລືອ, ສະ ນັ້ນ ຄວນໄດ້ເຮັດການປະເມີນເປັນແຕ່ລະກໍລະນີ ເພື່ອຮັບປະກັນວ່າບໍ່ໄດ້ລືມຄອບຄົວ ທີ່ບໍ່ສາມາດຊ່ວຍຕົນເອງໄດ້.

- <u>ກຳນົດເງື່ອນໄຂທີ່ຈະໄດ້ຮັບຄ່າທົດແທນ</u>

ການກຳນົດປະເພດຜົນກະທົບແລະສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫລືອອື່ນໆຕັ້ງແຕ່ຫົວທີ ແມ່ນມີຄວາມສຳຄັນສຳລັບໂຄງການທີ່ມີການກໍ່ສ້າງຍາວເປັນແລວ ໂດຍແບ່ງວຽກກໍ່ສ້າງອອກເປັນແຕ່ລະໄລຍະ. ເຖິງແມ່ນວ່າ ບໍ່ສາມາດກຳນົດແລະຄິດໄລ່ຈຳນວນຄົນທີ່ຈະໄດ້ຮັບຜົນກະທົບຈາກໂຄງການ, ການວິໃຈບັນຫາແຕ່ຫົວທີ ອາດເຮັດໃຫ້ເຫັນໄດ້ເຖິງຜົນກະທົບແຕ່ລະປະເພດທີ່ກ່ຽວພັນໂຄງການດັ່ງກ່າວ. ສິດທິທີ່ຈະໄດ້ຮັບການທົດແທນຕາມແຕ່ລະປະເພດນັ້ນ ແມ່ນຄວນຈະໄດ້ຍົກໃຫ້ເຫັນເຖິງຮູບການຊ່ວຍເຫຼືອຕ່າງໆ ທີ່ຈະໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບໃນສ່ວນໃດສ່ວນໜຶ່ງຕໍ່ທີ່ດິນ ຫລື ໂຄງລ່າງຕ່າງໆ. ໃນການກຳນົດສິດທິ ທີ່ຜູ້ທີ່ຖືກກະທົບ ຈະໄດ້ຮັບການຊ່ວຍເຫລືອນັ້ນ, ສ່ວນຫລາຍມັນກໍມີຄວາມຫຍຸ້ງຍາກທີ່ຈະແຍກອອກ ລະຫວ່າງເຈົ້າຂອງກຳມະສິດສ່ວນຕົວ, ຜູ້ຈັບຈອງ, ຜູ້ບຸກລຸກເຂົ້າມາຢູ່ດິນລັດ ແລະ ຜູ້ຢຶດຄອງດິນກະສິກຳ, ເຮືອນ ແລະ ປະເພດອື່ນໆ. ການເຂົ້າເຖິງຊັບສິນທີ່ດິນຂອງບ້ານ ຫລື ດິນອື່ນທີ່ເຄີຍຄອບຄອງມາຕາມປະເພນີ ກໍຍັງຕ້ອງໄດ້ພິຈາລະນາໃນກອບຂອງເງື່ອນໄຂດັ່ງກ່າວ.

- <u>ແບ່ງວຽກກໍ່ສ້າງອອກເປັນຫລາຍໄລຍະ</u>

ຄືດັ່ງທີ່ໄດ້ກ່າວມາເທິງນັ້ນ, ຜົນກະທົບ ຈາກການຍົກຍ້າຍຈັດສັນປະຊາຊົນ ແມ່ນບໍ່ສາມາດກຳນົດໄດ້ ຈົນກ່ວາການອອກແບບໂຄງການຂັ້ນສຸດທ້າຍໄດ້ກຳນົດແລວຜົນກະທົບ. ການອອກແບບໂຄງການຂັ້ນສຸດທ້າຍຄາດວ່າຈະບໍ່ສຳເລັດໃນເວລາເລີ້ມຕົ້ນໂຄງການ. ການອອກແບບໂຄງການຂັ້ນສຸດທ້າຍສ່ວນຫລາຍແມ່ນມີຜົນສຳເລັດເປັນແຕ່ລະໄລຍະ. ວຽກກໍ່ສ້າງອາດສາມາດລິເລີ້ມຈາກໜຶ່ງຫາສອງປີກ່ອນການອອກແບບໂຄງການຈະສຳເລັດ. ຖ້າວ່າການຈັດຕັ້ງປະຕິບັດໂຄງການຫາກແບ່ງອອກເປັນຫລາຍໄລຍະ, ກໍບໍ່ຄວນໃຫ້ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນໄດ້ລິເລີ້ມໃນຫລາຍໆປີກ່ອນໄລຍະກໍ່ສ້າງຕົວຈິງ ສຳລັບຊ່ວງໃດຊ່ວງໜຶ່ງຂອງໂຄງການ. ມັນ ມີຫລາຍເຫດຜົນຄື:

- ປະຊາຊົນ ຈະມີຄວາມຮູ້ສຶກວ່າ ໃຫ້ຍ້າຍອອກກ່ອນຈະໃຊ້ທີ່ດິນທີ່ໄດ້ເວນຄືນ;
- ປະຊາຊົນທີ່ຖືກຍົກຍ້າຍ ຫລື ຜູ້ອື່ນ ອາດມາຢູ່ຄືນ ຖ້າວ່າເວລາຍ້າຍອອກ ແລະ ເວລາກໍ່ສ້າງຫາກດົນນານຫລາຍ;
- ຖ້າການທົດແທນຄ່າເສຍຫາຍ ຫລື ການຊ່ວຍເຫລືອ ຫາກຈ່າຍໃຫ້ຫລາຍປີລ່ວງໜ້າ ກ່ອນປະຊາຊົນຈະຍົກຍ້າຍນັ້ນ, ສະພາບຂອງເຂົາເຈົ້າອາດມີການປ່ຽນແປງ ແລະ ການຊ່ວຍເຫລືອ ອາດຈະບໍ່ພຽງພໍ. ເດັກນ້ອຍກໍອາດໃຫຍ່ໂຕຂຶ້ນ; ເງິນກໍໄດ້ຈ່າຍໄປແລ້ວ ແລະ ລາຄາທີ່ດິນທີ່ທົດແທນກໍອາດສູງຂຶ້ນ.

ອົງການຮັບຜິດຊອບໂຄງການ ຄວນພະຍາຍາມມີການປະສານງານທີ່ດີ ເພື່ອຮັບປະກັນບໍ່ໃຫ້ການຍົກຍ້າຍຈັດສັນປະຊາຊົນແກ່ຍາວດົນຫລາຍ ແລະ ເຮັດໃຫ້ວຽກກໍ່ສ້າງໂຄງການມີຄວາມຊັກຊ້າ ຫລື ວຽກກໍ່ສ້າງບໍ່ສາມາດເຮັດໄດ້ໃນຊ່ວງໃດຊ່ວງໜຶ່ງຂອງແລວທາງນັ້ນ ກ່ອນການຍົກຍ້າຍຈັດສັນປະຊາຊົນຈະໄດ້ດຳເນີນການ.

## 18.7. ສະຫລຸບວຽກຕົ້ນຕໍ

- ການປະເມີນແລວທາງທີ່ເປັນທາງເລືອກ ແລະ ການອອກແບບໂຄງການທີ່ເລີ່ມເຮັດແຕ່ຫົວທີ ແລະ ເຮັດເລື້ອຍໆນັ້ນ ແມ່ນຈະເປັນສິ່ງທີ່ມີປະໂຫຍດຫລາຍ ເພື່ອຫລຸດຜ່ອນການຍົກຍ້າຍຈັດສັນປະຊາຊົນລົງໃຫ້ມີໜ້ອຍທີ່ສຸດ;
- ຫາກການຍົກຍ້າຍຈັດສັນບໍ່ສາມາດຫຼີກລ້ຽງໄດ້, ການຍົກຍ້າຍຈັດສັນກັບທີ່ ຫລື ການຈັດຕັ້ງໃໝ່ ໂດຍຖອຍສິ່ງປຸກສ້າງອອກໃກ້ໆ ສ່ວນຫຼາຍ ເປັນວິທີທີ່ງ່າຍ ແລະ ມີປະສິດທິຜົນ ເພື່ອເຮັດໃຫ້ຜົນກະທົບທີ່ຮ້າຍແຮງຫລຸດລົງ;
- ເມື່ອບໍ່ສາມາດຈັດຕັ້ງໃໝ່ໄດ້, ຄວນຍົກຍ້າຍປະຊາຊົນໃຫ້ໃກ້ທີ່ສຸດກັບເຂດທີ່ຢູ່ອາໃສເດີມເພາະຖ້າຍົກຍ້າຍໄປໄກຫລາຍເທົ່າໃດ ແມ່ນຈະເພີ່ມການລົບກວນທາງດ້ານເສດຖະກິດ-ສັງຄົມຫລາຍຂຶ້ນເທົ່ານັ້ນ;
- *ຕ້ອງເຂົ້າໃຈວ່າເປັນຫຍັງປະຊາຊົນ ທີ່ອາໄສຢູ່ໃນແລວທາງ ຫລືຕາມແລວໃດໜຶ່ງສ່ວນຫລາຍ ແມ່ນເປັນປັດໃຈສຳຄັນໃນການອອກແບບໃຫ້ການຍົກຍ້າຍຈັດສັນປະຊາຊົນ ໃຫ້ໄດ້ຜົນສຳເລັດ;
- ການຫາວິທີລົງລອຍລະຫວ່າງຄວາມຕ້ອງການຂອງຜູ້ທີ່ຖືກກະທົບ (ເຊັ່ນການເຂົ້າເຖິງແຫລ່ງທຶນຮອນ ຫລື ລູກຄ້າ) ແລະ ຄວາມຕ້ອງການຂອງໂຄງການ (ເຊັ່ນການຂົນສົ່ງຢ່າງປອດໄພ ແລະ ມີປະສິດຕິພາບ) ສ່ວນຫລາຍເປັນຂໍກະແຈ ເພື່ອປະເມີນຄວາມເປັນໄປໄດ້ ແລະ ມູນຄ່າຂອງໂຄງການ;
- ໃນເມື່ອບໍ່ສາມາດກຳນົດແລວທາງທີ່ຊັດເຈນໄດ້, ການສຳຫລວດພົນລະເມືອງ ແລະ ດ້ານອື່ນໆທີ່ກ້ວາງຂວາງ ແມ່ນຈະເປັນວິທີການທີ່ດີເລີດ ເພື່ອກຳນົດຜົນກະທົບປະເພດຕ່າງໆ, ມູນຄ່າຂອງການຍົກຍ້າຍຈັດສັນປະຊາຊົນ ແລະ ສະກັດກັ້ນບໍ່ໃຫ້ມີການທວງຖາມແບບບໍ່ມີຫລັກຖານ;
- ການນຳໃຊ້ດິນທີ່ບໍ່ຈຳເປັນ ຊຶ່ງຢູ່ໃນ ຫລື ຕິດກັບແລວທາງທີ່ມີແລ້ວນັ້ນ ເພື່ອຍົກຍ້າຍຈັດສັນປະຊາຊົນໄປຢູ່ ຈະເຮັດໃຫ້ມູນຄ່າໂຄງການຖືກລົງກ່ວາ ແລະ ຜົນໄດ້ແມ່ນສູງຂຶ້ນ;
- ການກຳນົດວັນເລີ່ມຕົ້ນໂຄງການ ເພື່ອໃຫ້ສິດທິແກ່ປະຊາຊົນ ໃຫ້ໄວເທົ່າທີ່ຈະເປັນໄປໄດ້ພາຍຫຼັງການອອກແບບໂຄງການສຳເລັດ ຈະເປັນວິທີການທີ່ດີ ເພື່ອສະກັດກັ້ນບໍ່ໃຫ້ມີການທວງເອົາການຊ່ວຍເຫລືອແບບບໍ່ມີຫລັກຖານ;
- ໃນເມື່ອໂຄງການທີ່ມີການກໍ່ສ້າງຍາວເປັນແລວ ໄດ້ເຮັດໃຫ້ມີການຍົກຍ້າຍຄົນອອກໄປບໍ່ຫລາຍ ແຕ່ກະແຈກກະຈາຍ, ການສະໜອງເຮືອນແລະທີ່ດິນໃຫ້ແທນຢູ່ໃນເຂດພັດທະນານັ້ນ ຈະເຮັດໃຫ້ຂະບວນການຍົກຍ້າຍຈັດສັນປະຊາຊົນ ມີຄວາມງ່າຍດາຍຂຶ້ນ ແລະເຮັດໃຫ້ແຕ່ລະຄອບຄົວທີ່ໄດ້ຮັບຜົນກະທົບພໍໃຈຫລາຍກ່ວາ;
- ຖ້າຜູ້ທີ່ຖືກກະທົບ ຫາກຢູ່ກະແຈກກະຈາຍ, ການເຈລະຈາແຕ່ລະຄອບຄົວ ຫລື ຫົວໜ່ວຍເສດ ຖະກິດ ອາດຈະດີກ່ວາການປຶກສາກັບຜູ້ຕາງໜ້າຊຸມຊົນ;
- ຫາກເປັນໄປໄດ້, ຜູ້ທີ່ຖືກກະທົບ ກໍຄວນໄດ້ຮັບຜົນປະໂຫຍດຈາກໂຄງການ (ເຊັ່ນສະໜອງພະລັງງານໃຫ້ໃນກໍລະນີເຂົາເຈົ້າໄດ້ຮັບຜົນກະທົບຈາກການກໍ່ສ້າງແລວສາຍສົ່ງໄຟຟ້າ, ເຂົ້າເຖິງການຂົນສົ່ງໃນກໍລະນີໂຄງ

ການສ້າງເສັ້ນທາງ, ນຳໃຊ້ທີ່ດິນທີ່ມີຊົນລະປະທານ ໃນກໍລະນີໂຄງການສ້າງຊົນລະປະທານ ຫລື ໃຫ້ມີນ້ຳ ແລະ ເງື່ອນໄຂ ໃນການອະນາໄມດີຂຶ້ນ ໃນກໍລະນີໂຄງການຈັດຫານ້ຳສະອາດ ແລະ ການສຸຂະອະນາໄມ);

- ການແຈກຢາຍມູນຄ່າຍົກຍ້າຍ ໃຫ້ຜູ້ທີ່ໄດ້ຮັບຜົນປະໂຫຍດຕົ້ນຕໍຈາກໂຄງການ ໂດຍຜ່ານການເກັບພາສີ, ຄ່າທຳນຽມ ແລະ ຮູບການອື່ນໆນັ້ນ ສາມາດຫລຸດຜ່ອນຄວາມຮັບຜິດຊອບຂອງໂຄງການ ທາງດ້ານການເງິນຫລຸດລົງ ພ້ອມທັງສິ່ງເສີມຮູບແບບຂອງການພັດທະນາ ທີ່ຍືນຍົງຫລາຍກ່ວາ;
- ການອະນຸຍາດໃຫ້ນຳໃຊ້ຢ່າງຕໍ່ເນື່ອງໃນເຂດພື້ນທີ່ ທີ່ບໍ່ຈຳເປັນ ຢູ່ໃນເຂດແລວ ຫລືທາງລຸ່ມສາຍສົ່ງໄຟຟ້າ ອາດມີຄວາມສຳຄັນຫລາຍ ສຳລັບຜູ້ທີ່ທຸກຍາກທີ່ສຸດຂອງສັງຄົມ.
- ການລວມເອົາການປ້ອງກັນຄວາມປອດໄພ ແລະ ບ່ອນຈອດລົດແລະອື່ນໆຂອງໂຄງການ ເຂົ້າໃນການອອກແບບລວມຂອງໂຄງການ ແມ່ນຈະເຮັດໃຫ້ການຍົກຍ້າຍພໍ່ຄ້າຊາວຂາຍແຄມທາງແລະກິດຈະກຳບໍ່ເປັນຕົ້ນຕໍນັ້ນ ມີຄວາມງ່າຍດາຍຂຶ້ນຫລາຍ ພ້ອມທັງຮັບປະກັນມາດຕະຖານດ້ານຄວາມປອດໄພໃຫ້ແກ່ຜູ້ໃຊ້ເສັ້ນທາງ ແລະ ທາງລົດໄຟ.

# ໝວດທີ 19. ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການກໍ່ສ້າງຕົວເມືອງ

## 19.1. ສະພາບຂອງການຍົກຍ້າຍຈັດສັນປະຊາຊົນ ໃນຕົວເມືອງ

ການຍົກຍ້າຍຈັດສັນປະຊາຊົນໃນຕົວເມືອງ ແມ່ນມີລັກສະນະຈຸດພິເສດຂອງມັນ ຄືຈະມີຄົນອາໃສຢູ່ຢ່າງໜາແໜ້ນ ແລະ ກິດຈະກຳທາງດ້ານເສດຖະກິດອັນຫຼາກຫຼາຍ. ຄວາມໜາແໜ້ນຂອງຄົນເຮັດໃຫ້ມີຄວາມຕ້ອງການທາງດ້ານສິນຄ້າ, ການບໍລິການ ແລະ ທີ່ດິນຫຼາຍຂຶ້ນ (ແລະ ຊັບພະຍາກອນທຳມະຊາດ ອື່ນໆ) ແລະ ກໍມີບັນຫາທາງດ້ານມົນລະພິດ ແລະ ສິ່ງເສດເຫລືອຕ່າງໆ. ຜົນສະທ້ອນຈາກຄວາມໜາແໜ້ນຂອງປະຊາຊົນ ເຖິງແມ່ນວ່າ ໂຄງການຈະໄດ້ມີການເວນທີ່ດິນຄືນພຽງເລັກໜ້ອຍໃນເຂດຕົວເມືອງກໍຕາມ ກໍຍັງຈະເຮັດໃຫ້ມີການຍົກຍ້າຍຄົນເປັນຈຳນວນຫລາຍອອກ ຊຶ່ງຈະເຮັດໃຫ້ມູນຄ່າການຍົກຍ້າຍສູງຂຶ້ນຫລາຍ.

ຄວາມຫຼາກຫຼາຍໃນການດຳລົງຊີວິດໃນເຂດຕົວເມືອງ ໄດ້ເຮັດໃຫ້ຄວາມໜາແໜ້ນໃນຕົວເມືອງມີຄວາມໝັ້ນຄົງຄື: ຄວາມແຕກຕ່າງກັນໃນການນຳໃຊ້ທີ່ດິນ, ລະດັບລາຍຮັບ, ມາດຕະຖານຊີວິດການເປັນຢູ່, ໄລຍະຫ່າງຈາກບ່ອນຢູ່ຫາບ່ອນເຮັດວຽກ ແລະ ການຕິດຕໍ່ພົວພັນກັບຊົນເຜົ່າ ແລະ ທ້ອງຖິ່ນ. ໃນດ້ານການຍົກຍ້າຍຈັດສັນປະຊາຊົນ, ການເວນຄືນທີ່ດິນໃນເຂດຕົວເມືອງ ຈະເຮັດໃຫ້ມີຜົນກະທົບທາງລົບຢ່າງກ້ວາງຂວາງ. ການເວນຄືນຊັບສິນ ເຖິງຈະມີຈຳນວນໜ້ອຍກໍຕາມ ແຕ່ອາດຈະເຮັດໃຫ້ຊັບສິນນັ້ນໃຊ້ການບໍ່ໄດ້ອີກທາງດ້ານເສດຖະກິດ ແລະອາດສົ່ງຜົນກະທົບ ທາງກົງຫຼືທາງອ້ອມ ຕໍ່ລາຍຮັບ ແລະ ມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນ.

ເພື່ອແກ້ໄຂບັນຫາທີ່ກ່ຽວພັນກັບການຍົກຍ້າຍຈັດສັນໃນຕົວເມືອງ, ການສ້າງແຜນການຍົກຍ້າຍຈັດສັນປະຊາຊົນ ຈຶ່ງຕ້ອງໄຮັບຮູ້ກ່ຽວກັບການຂະຫຍາຍຕົວຢ່າງວ່ອງໄວຂອງຂະບວນການຫັນເປັນຕົວເມືອງ, ຊຶ່ງໃນນັ້ນຄວາມໜາແໜ້ນ ແລະ ຄວາມຫຼາກຫຼາຍແມ່ນຈະເພີ້ມຂຶ້ນຢ່າງໄວວາ, ສ່ວນຫຼາຍແມ່ນບໍ່ໄດ້ຄາດຄິດໄວ້ກ່ອນ, ທັງບໍ່ມີການວາງແຜນ ແລະ ບໍ່ສາມາດຫ້າມປາມໄດ້. ໃນເຂດທີ່ມີເງື່ອນໄຂຈຳກັດ ມັກມີພວກລັກລອບເຂົ້າມາຢູ່, ຄອບຄົວທີ່ມີລາຍຮັບຕໍ່າ ຫລື ຜູ້ຍ້າຍເຂົ້າມາຢູ່ໃນຕົວເມືອງໃໝ່ ມັກອາໄສຢູ່ ແລະ ມີກິດຈະການດ້ານເສດຖະກິດບໍ່ເປັນຮູບແບບຢ່າງຄັກແນ່ ທີ່ສະໜອງວຽກເຮັດງານທຳໃຫ້ຄົນທີ່ຢູ່ໃກ້ກັບບ່ອນທີ່ເຂົາເຈົ້າອາໄສຢູ່ ແລະ ເປັນບ່ອນຢູ່ອາໄສຂອງຜູ້ທີ່ ຍົກຍ້າຍເຂົ້າມາຢູ່ໃໝ່. ເຂດດັ່ງກ່າວຍັງມີລັກສະນະຂະຫຍາຍຕົວແບບບໍ່ມີການວາງແຜນມາກ່ອນ, ຂາດການເຂົ້າເຖິງພື້ນຖານໂຄງລ່າງດ້ານການບໍລິການ ແລະ ມີການນຳໃຊ້ທີ່ດິນແບບປະສົມ. ໃນຕົວເມືອງ, ຂະບວນການປ່ຽນແປງອັນວ່ອງໄວ ແລະ ຊະຊາຍແບບນີ້ ຕື່ມໃສ່ການເຄື່ອນຍ້າຍຢູ່ໃນຕົວເມືອງເອງຂອງກຸ່ມຄົນທີ່ມີລາຍຮັບປານກາງ ແລະ ສູງກ່ວາ ແລະ ຮູບແບບການນຳໃຊ້ທີ່ດິນທີ່ມີການປ່ຽນແປງໄວນັ້ນ ຈະເຮັດໃຫ້ມີຄວາມຕ້ອງການໃນການຜັງເມືອງ ແລະ ການຍົກຍ້າຍໃນຕົວເມືອງຫຼາຍຂຶ້ນ. ການພັດທະນາຕົວເມືອງ ຊຶ່ງສ່ວນໃຫຍ່ແມ່ນພົວພັນກັບການເວນຄືນທີ່ດິນແບບບໍ່ສະໝັກໃຈ ໄປຕາມຈຸດປະສົງອັນກ້ວາງຂວາງທາງດ້ານສັງຄົມ ແມ່ນຕ້ອງໄດ້ມີການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອ ເພື່ອຟື້ນຟູເສດຖະກິດ ໃຫ້ແກ່ພາກສ່ວນທີ່ຍັງບໍ່ທັນມີສິດໄດ້ຮັບການທົດແທນຄ່າເສຍຫາຍທີ່ຖືກຕ້ອງຕາມກົດໝາຍ. ວິທີການທີ່ຄວນເຮັດເພື່ອຄຸ້ມຄອງແລະແກ້ໄຂບັນຫາດັ່ງກ່າວ ແມ່ນໄດ້ມີການອະທິບາຍເພີ່ມເຕີມ ດັ່ງລຸ່ມນີ້.

## 19.2. ຄວາມສຳຄັນໃນການວາງແຜນເບື້ອງຕົ້ນ

ການວາງແຜນແຕ່ຫົວທີເພື່ອຍົກຍ້າຍຈັດສັນປະຊາຊົນໃນຕົວເມືອງ ແມ່ນມີຄວາມສຳຄັນຫລາຍສຳລັບໂຄງການກໍ່ສ້າງຕົວເມືອງ. ຍ້ອນມູນຄ່າການຍົກຍ້າຍຈັດສັນປະຊາຊົນ ອາດສູງຫຼາຍໃນເຂດຕົວເມືອງທີ່ມີຄົນອາໄສຢູ່ໜາ

ແໜ້ນ, ມັນຈຶ່ງເປັນເຫດຜົນງ່າຍໆທີ່ໃຫ້ພວກເຮົາຕ້ອງໄດ້ມີຄວາມເອົາໃຈໃສ່ການວາງແຜນຕັ້ງແຕ່ຫົວທີ. ເຫດຜົນຕົວຈິງອື່ນໆແມ່ນ ເຂດຕົວເມືອງ ໄດ້ຮັບຂ່າວສານໄວ ແລະ ຫລວງຫຼາຍ. ຄຳເວົ້າຈະເປັນທາງການຫຼືບໍ່ ກ່ຽວກັບ ການຈະມີໂຄງການມາພັດທະນາ ກໍສາມາດເຮັດໃຫ້ມີຜູ້ຄົນເຂົ້າມາອາໄສຢູ່ແລ້ວ.

## ເຮັດໃຫ້ການຍົກຍ້າຍຈັດສັນຫລຸດໜ້ອຍລົງ

ການອອກແບບໂຄງການ ຄວນເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນໜ້ອຍລົງ ໃນເຂດຕົວເມືອງລວມທັງເຂດຊົນນະບົດ. ໃນເງື່ອນໄຂຂອງຕົວເມືອງ, ການເຮັດໃຫ້ການຍົກຍ້າຍຈັດສັນທີ່ມີລາຄາແພງຫລຸດໜ້ອຍລົງໄດ້ນັ້ນ ຈະເຮັດໃຫ້ມູນຄ່າໂຄງການທັງໝົດ ຫຼຸດລົງໄດ້ເຊັ່ນດຽວກັນ. ການປ່ຽນແປງແລວທາງ ແລະ ມາດຕະຖານຂອງໂຄງການ ແມ່ນອາດສາມາດຫຼີກລ້ຽງບ່ອນທີ່ຊຸມຊົນອາໄສຢູ່ໜາແໜ້ນໄດ້ ໂດຍໄດ້ຮັບຜົນກະທົບໜ້ອຍຕາມເງື່ອນໄຂເຕັກນິກຂອງໂຄງການ. ການປ່ຽນແປງວິທີກໍ່ສ້າງ ຫລື ການອອກແບບໂຄງການ ແມ່ນຈະເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນຫລຸດລົງໄດ້ເຊັ່ນດຽວກັນ.

ຄວນຊອກຫາທາງເລືອກຕ່າງໆ ໃນການອອກແບບທາງດ້ານເຕັກນິກ ແຕ່ໄລຍະຕົ້ນໆຂອງການອອກແບບໂຄງການ ເພື່ອເຮັດໃຫ້ຜົນກະທົບທາງດ້ານລົບຫຼຸດລົງ ແລະ ເຮັດໃຫ້ມູນຄ່າຍົກຍ້າຍຈັດສັນຫຼຸດລົງໄດ້ອີກ ເຊັ່ນກັນ. ທາງເລືອກສຳລັບການອອກແບບໂຄງການຄວນເອົາມາຕີລາຄາໃສ່ກັບຜົນກະທົບຂອງມັນ ຕໍ່ກັບຈຳນວນຄົນ ແລະ ຊັບສິນທີ່ໄດ້ຮັບຜົນກະທົບ. ມູນຄ່າຂອງການຍົກຍ້າຍຈັດສັນໂດຍທົ່ວໄປແລ້ວ ແມ່ນຈະບໍ່ສົມສ່ວນໂດຍກົງກັບຈຳນວນຜູ້ທີ່ຖືກກະທົບ. ມູນຄ່າດັ່ງກ່າວໂດຍທົ່ວໄປແລ້ວ ແມ່ນຂຶ້ນກັບລະດັບ ແລະ ປະເພດຂອງຜົນກະທົບ ເຊັ່ນວ່າຜົນກະທົບຂອງໂຄງການມີໜ້ອຍ ໂດຍສະເພາະຕໍ່ຊັບສິນຫຼືບໍ່ ຫຼືວ່າ ມັນເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນຫຼືບໍ່. ໃນສິ່ງແວດລ້ອມຕົວເມືອງ, ມູນຄ່າການຍົກຍ້າຍຈັດສັນປະຊາຊົນຂອງບາງຄອບຄົວ ກໍອາດລື່ນຫລາຍໆເທົ່າການທົດແທນຄ່າ ເສຍຫາຍ ໃຫ້ຄອບຄົວທີ່ຖືກກະທົບພຽງເລັກໜ້ອຍ ແລະ ບໍ່ໄດ້ຍົກຍ້າຍ.

## ການບຸກລຸກແບບບໍ່ຖືກກົດຫມາຍ

ຍ້ອນກຳມະສິດຕໍ່ຊັບສິນບໍ່ມີຄວາມແນ່ນອນ ແລະ ເມື່ອນະໂຍບາຍໄດ້ກຳນົດຫຼັກການ ໃຫ້ມີການຍົກຍ້າຍຜູ້ທີ່ອາໄສຢູ່ໃນດິນລັດໃນຕົວເມືອງ, ຄວາມຕ້ອງການຢາກໄດ້ສິດຮັບຄ່າທົດແທນຫຼືຜົນປະໂຫຍດອື່ນໆ ຈະເຮັດໃຫ້ມີການລັ່ງໄຫຼເຂົ້າໄປຢູ່ໃນເຂດທີ່ຈະມີການເວນຄືນທີ່ດິນ (ຫຼືໃນເຂດທີ່ຈະເປັນເຂດຈັດສັນໃໝ່). ໂດຍສະເພາະໃນເຂດຕົວເມືອງ, ມັນມີຄວາມສຳຄັນຫຼາຍທີ່ຈະຕ້ອງໄດ້ກຳນົດ "ວັນເລີ້ມຕົ້ນໂຄງການ" ຢ່າງເປັນທາງການໄວ້ເພື່ອຢັ້ງຢືນການໄດ້ຮັບສິດ.ໃນການທົດແທນ. ເພື່ອບໍ່ໃຫ້ຜູ້ທີ່ເຂົ້າມາຢູ່ຫຼັງວັນດັ່ງກ່າວ ທວງເອົາສິດແບບບໍ່ຖືກຕ້ອງ, ມັນມີຄວາມຈຳເປັນທີ່ສຸດທີ່ຈະຕ້ອງມີການສຳຫຼວດ ພົນລະເມືອງໃນເຂດທີ່ໄດ້ຮັບຜົນກະທົບ ເພື່ອກຳນົດຜູ້ອາໄສຢູ່ ແລະ ພື້ນຖານໂຄງລ່າງໃນເຂດນັ້ນ ທີ່ຈະໄດ້ຮັບສິດທົດແທນຕ່າງໆ ແລະ ໂດຍສະເພາະແມ່ນຊັບສິນຄົງທີ່. ການສຳຫຼວດພົນລະເມືອງຄວນດຳເນີນໃນໄລຍະຕົ້ນຂອງການກຳນົດໂຄງການ ແລະ ຫຼັງຈາກໄດ້ກຳນົດເຂດແດນຊົ່ວຄາວສຳລັບໂຄງການ. ຖ້າການກຳນົດແລວທາງ ຍັງບໍ່ສາມາດປະຕິບັດໄດ້, ຄວນມີການສຳຫຼວດໃນເຂດທີ່ກ້ວາງກ່ວາທີ່ມີຄວາມຈຳເປັນ. ຖ້າການເວນຄືນທີ່ດິນແຕະຕ້ອງເຖິງທຸລະກິດການຄ້າຫຼືອຸດສາຫະກຳ, ມັນຍິ່ງມີຄວາມສຳຄັນທີ່ຈະຕ້ອງໄດ້ຮັບຮູ້ກ່ຽວກັບຈຳນວນຄົນທີ່ມີວຽກເຮັດງານທຳ ແລະ ເຈົ້າຂອງທຸລະກິດເຫຼົ່ານັ້ນ ລວມທັງເງິນເດືອນ ແລະ ລາຍຮັບຂອງເຂົາເຈົ້າຖ້າຫາກເປັນໄປໄດ້. ມັນອາດຈະສະກັດກັ້ນການບຸກລຸກເຂົ້າມາຢູ່ ແບບບໍ່ຖືກກົດໝາຍຖ້າຫາກມີຮູບພາບຂອງເຂດເຫຼົ່ານັ້ນ ຫຼືໃຫ້ສິ່ງກະຕຸກຊຸກຍູ້ແກ່ຜູ້ທີ່ອາໄສຢູ່ໃນນັ້ນ ເພື່ອປ້ອງກັນບໍ່ໃຫ້ຄົນເຂົ້າມາຢູ່ໃໝ່.

ຍ້ອນວ່າລາຄາທີ່ດິນໃນເຂດຕົວເມືອງ ສ່ວນຫຼາຍມີການປ່ຽນແປງ, ການຊອກຫາເຂດຍົກຍ້າຍໄປຢູ່ ອາດເຮັດໃຫ້ມີການກົ່ງລາຄາທີ່ດິນແລະເຮືອນຢູ່ ໂດຍສະເພາະຫາກມີການແກ່ຍາວເວລາ ລະຫວ່າງການກຳນົດໂຄງການເບື້ອງຕົ້ນແລະເວລາຈ່າຍຄ່າເວນຄືນທີ່ດິນ. ໃນບາງກໍລະນີ, ໂດຍສະເພາະບ່ອນທີ່ເປັນປະໂຫຍດແອບແຝງ ແລະກຳລັງເພື່ອກົ່ງລາຄາໄດ້ ແລະ ບ່ອນທີ່ມີແຕ່ກົດໝາຍທ້ອງຖິ່ນ ກ່ຽວກັບ ການຄຸ້ມຄອງການນຳໃຊ້ທີ່ດິນອະນຸຍາດໃຫ້, ກໍຄວນມີແຜນການຊົ່ວຄາວ ເພື່ອຮັກສາລາຄາທີ່ດິນແລະເຮືອນໃຫ້ຄົງທີ່.

## ການຕອບໂຕ້ຂອງລັດ

ສ່ວນຫຼາຍອີງການຮັບຜິດຊອບໂຄງການ, ດ້ວຍເຫດຜົນທີ່ຈະເຮັດໃຫ້ຜົນປະໂຫຍດ ທາງດ້ານເຕັກນິກຫຼືເສດຖະກິດສູງ, ຈຶ່ງໄດ້ພະຍາຍາມຈຳກັດການເຜີຍແຜ່ຂໍ້ມູນຂ່າວສານຈາກໂຄງການ ຫຼື ຫຼຸດໂອກາດໃຫ້ມີການປຶກສາຫາລືກັບປະຊາຊົນໜ້ອຍລົງ. ໂດຍສະເພາະໃນເຂດຕົວເມືອງ, ມັນອາດບໍ່ມີຄວາມຖືກຕ້ອງ ທີ່ຈະເຊື່ອວ່າ ເມື່ອບໍ່ມີຂ່າວສານ ກ່ຽວກັບ ໂຄງການຈາກທາງການແລ້ວ ແມ່ນຈະບໍ່ມີການປຶກສາຫາລືກັນໄດ້, ແຕ່ກົງກັນຂ້າມການມິດງຽບຂອງທາງການ ສ່ວນຫຼາຍ ຈະເຮັດໃຫ້ປະຊາຊົນ ເກີດມີຄວາມສົງໄສ ແລະ ເຮັດໃຫ້ຂ່າວສານບໍ່ເປັນທາງການນັ້ນມີນ້ຳໜັກຂຶ້ນຕື່ມ. ການປຶກສາຫາລື ແລະ ການເຂົ້າຮ່ວມຂອງປະຊາຊົນ ຈະເຮັດໃຫ້ຂໍ້ມູນຂ່າວສານຫລາຍຂຶ້ນ, ອັນເຮັດໃຫ້ມີໂອກາດປັບປຸງການອອກແບບຂອງໂຄງການ ລວມທັງການຮັກສາບັນຍາກາດໄດ້ດີກັບປະຊາຊົນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໂຄງການໄດ້ຮັບຜົນສຳເລັດ. ຂະບວນການເຂົ້າຮ່ວມຂອງປະຊາຊົນ ຄວນສືບຕໍ່ເຮັດຕະຫຼອດອາຍຸຂອງໂຄງການ. ແຕ່ເວລາ ແລະ ຄວາມພະຍາຍາມສຸມໃສ່ ໃນໄລຍະວາງແຜນໂຄງການຕ່າງໆແຕ່ຫົວທີ ເພື່ອຂໍຄຳເຫັນ ແລະ ການຮ່ວມມືກັບຜູ້ທີ່ຖືກກະທົບ ແລະ ເພື່ອເຮັດໃຫ້ຊຸມຊົນ ສະໜັບສະໜູນຜົນໄດ້ຈາກໂຄງການນັ້ນ, ສ່ວນຫຼາຍແມ່ນຈະເຮັດໃຫ້ມີຜົນດີຫລາຍຂຶ້ນໃນການປັບປຸງການອອກແບບໂຄງການ, ການຫຼຸດຜ່ອນການຍົກຍ້າຍຈັດສັນປະຊາຊົນ, ການຫຼຸດຜ່ອນຄວາມຕຶງຄຽດກັບປະຊາຊົນຫລຸດລົງ ແລະ ເຮັດໃຫ້ເຂົາເຈົ້າສະໜັບສະໜູນໂຄງການຫຼາຍຂຶ້ນ ໃນເວລານຳໃຊ້ ແລະ ບູລະນະໂຄງການ ແລະການບໍລິການຕ່າງໆ. ມັນຈຳເປັນຕ້ອງສ້າງກົນໄກທີ່ເໝາະສົມຂຶ້ນ ແຕ່ໄລຍະຕົ້ນໆຂອງການອອກແບບໂຄງການ ເພື່ອດຳເນີນຂະບວນການປຶກສາຫາລື ແລະ ການມີສ່ວນຮ່ວມຂອງມວນຊົນ. ບາດກ້າວທີ່ຕ້ອງດຳເນີນການມີຄືດັ່ງນີ້:

(i) ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ຈຸດປະສົງຂອງໂຄງການ ແລະ ຜົນກະທົບປະເພດຕ່າງໆ ຕໍ່ຊຸມຊົນທີ່ຖືກກະທົບ ຢູ່ໃນເຂດໂຄງການທີ່ໄດ້ກຳນົດອອກມາ;

(ii) ເຮັດລາຍການທີ່ໄດ້ຕົກລົງເຫັນດີນຳກັນໃຫ້ສຳເລັດ ແລະ ເຜີແຍຜ່ໃຫ້ມວນຊົນຊາບ;

(iii) ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ຈຸດພິເສດຂອງນະໂຍບາຍການທົດແທນຄ່າເສຍຫາຍ ແລະ ສິດທີ່ທີ່ຈະໄດ້ຮັບການທົດແທນ ແລະ ຕາຕະລາງຈັດຕັ້ງປະຕິບັດ;

(iv) ຮ່າງແຜນການສ້າງຕັ້ງຄະນະກຳມະການ ເພື່ອປະສານງານໃນວຽກງານການຍົກຍ້າຍຈັດສັນປະຊາຊົນໂດຍອີງໃສ່ຊຸມຊົນ ເພື່ອພົວພັນກັບໜ່ວຍງານຍົກຍ້າຍຈັດສັນປະຊາຊົນຂອງໂຄງການ.

## 19.3. ຍົກຍ້າຍຈັດສັນ ຜູ້ລັກລອບເຂົ້າມາຢູ່ໃນຕົວເມືອງ

ການແກ້ໄຂບັນຫາ ກ່ຽວກັບ ຜູ້ຈັບຈອງເອົາທີ່ດິນຂອງລັດ ແມ່ນເປັນບັນຫາທີ່ຂັດແຍ້ງທີ່ສຸດໃນການຍົກຍ້າຍຄົນໃນຕົວເມືອງ. ຈາກແນວຄິດທາງດ້ານນິຕິກຳ, <u>ການໃຫ້ສິດທິແກ່ຄົນເຫົ່ລານີ້</u> ແມ່ນຜິດກົດໝາຍຕາມຄຳນິຍາມ

ຂອງມັນແລ້ວ, ເພີ້ມມູນຄ່າໃຫ້ໂຄງການຢ່າງມະຫາສານ ແລະ ສົ່ງເສີມໃຫ້ມີການເຂົ້າໄປຄອບຄອງດິນຂອງລັດແບບບໍ່ໄດ້ຮັບອະນຸຍາດ.

ເມື່ອຂາດເອກະສານກຳມະສິດທີ່ດິນໃນຫຼາຍເຂດຕົວເມືອງ, ມັນກໍຍາກຫຼືເປັນໄປບໍ່ໄດ້ທີ່ຈະກຳນົດວ່າ ຜູ້ໃດແທ້ມີສິດຄອບຄອງ ຫຼື ນຳໃຊ້ທີ່ດິນ, ບໍ່ແມ່ນ "ຜູ້ລັກລອບເຂົ້າມາຢູ່ດິນລັດ" ທັງໝົດ ຈະເຂົ້າມາບຸກລຸກທີ່ດິນຂອງລັດທີ່ບໍ່ມີໃຜຄອບຄອງ. ກົງກັນຂ້າມ, ຫຼາຍຄົນແມ່ນໄດ້ອາໄສຢູ່ມາເປັນເວລາຍາວນານ ຊຶ່ງໄດ້ຊື້ ຫຼື ໄດ້ສືບທອດມໍລະດົກດິນປຸກສ້າງ ຫຼື ດິນຕອນອື່ນໆໃນຕົວເມືອງ ແຕ່ບໍ່ສາມາດໄດ້ຮັບກຳມະສິດຢ່າງເປັນທາງການ ຍ້ອນວ່າຂະບວນການເກັບຄ່າທຳນຽມ ແລະ ໄດ້ມາຕາມປະເພນີ ແລະ ກໍບໍ່ໄດ້ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ. ການຍົກຍ້າຍໃນຕົວເມືອງ ອາດສົ່ງຜົນກະທົບຕໍ່ພາກສ່ວນດັ່ງກ່າວຢ່າງຮ້າຍແຮງ ໂດຍສະເພາະຕໍ່ຜູ້ທຸກຍາກ. ຍ້ອນລະບຽບຫລັກການຍົກຍ້າຍຈັດສັນປະຊາຊົນ ໄດ້ລວມເອົາເປົ້າໝາຍການຫຼຸດຜ່ອນຄວາມທຸກຍາກ, ການຍົກຍ້າຍຄົນໃນຕົວເມືອງ ຈຶ່ງຄວນເຫັນວ່າເປັນໂອກາດ ເພື່ອເຮັດໃຫ້ການພັດທະນາເຂົ້າເຈົ້າ ແລະເຮັດໃຫ້ຜູ້ທີ່ມີລາຍຮັບຕ່ຳໃນຕົວເມືອງມີຄວາມໝັ້ນຄົງຂຶ້ນ ແລະ ເຮັດໃຫ້ການນຳໃຊ້ທີ່ດິນມີຄວາມສົມເຫດສົມຜົນຂຶ້ນ.

## ການໃຫ້ສິດແກ່ ປະຊາຊົນ ທີ່ບໍ່ມີສິດຄອບຄອງ.

ນະໂຍບາຍບໍ່ໄດ້ເນັ້ນໜັກ ກ່ຽວກັບ ການໃຫ້ສິດທິຕາມກົດໝາຍແກ່ຜູ້ທີ່ໄດ້ມາອາໄສຢູ່ໃນດິນລັດ ກ່ຽວກັບການທົດແທນໃນສ່ວນຂອງທີ່ດິນ. ແຕ່ກົງກັນຂ້າມ, ມັນຈຳເປັນຕ້ອງມີການທົດແທນຄ່າເສຍຫາຍສຳລັບພື້ນຖານໂຄງລ່າງ ແລະ ເພື່ອມີບ່ອນຢູ່/ທີ່ດິນຖາວອນ ພ້ອມທັງມີທີ່ພັກອາໄສທີ່ໝັ້ນຄົງ (ແລະ ການຟື້ນຟູເສດຖະກິດ ຖ້າພໍເຮັດໄດ້) ເພື່ອໃຫ້ຄົນເຫຼົ່ານີ້ ໄດ້ມີມາດຕະຖານຊີວິດການເປັນຢູ່ດີຄືໃນເມື່ອກ່ອນ. ປະຊາຊົນຜູ້ທີ່ຖືວ່າເປັນ "ຜູ້ລັກລອບເຂົ້າມາຢູ່ດິນລັດ" ຍ້ອນບໍ່ມີກຳມະສິດຕໍ່ທີ່ດິນ ທີ່ເຄີຍໄດ້ຊື້ຫຼືສືບທອດມໍລະດົກມານັ້ນ ຄວນຖືວ່າເປັນຜູ້ມີສິດທີ່ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຜົນປະໂຫຍດອື່ນໆ. ໃນຕົວຈິງ, ຜູ້ທີ່ເຂົ້າມາຢູ່ກ່ອນວັນເລີ້ມຕົ້ນໂຄງການ ຄວນຖືວ່າເປັນພື້ນຖານທີ່ຈະໄດ້ຮັບສິດທິດັ່ງກ່າວ. ເພື່ອຈຸດປະສົງທີ່ຈະກຳນົດສິດທົດແທນນັ້ນ ການສຳຫຼວດພົນລະເມືອງຄວນໄດ້ມີການພິຈາລະນາຄວາມສະລັບຊັບຊ້ອນຂອງບັນຫາດັ່ງກ່າວລວມທັງວາງກົນໄກ ເພື່ອໃຫ້ສິດແກ່ຜູ້ທີ່ມີສິດທິນີ້ຢ່າງຄົບຖ້ວນ ແລະ ຂຶ້ນບັນຊີຊັບສິນທີ່ຖືກກະທົບ ດັ່ງນີ້:

- (i) ຜູ້ລັກລອບເຂົ້າມາຢູ່ດິນລັດ ທີ່ມີ ແລະ ບໍ່ມີກຳມະສິດຈະແຈ້ງ (ເຊັ່ນມີໃບສະເໜີຂໍເອົາສິດ, ໃບຈ່າຍຄ່າທຳນຽມໃນການນຳໃຊ້ທີ່ດິນ, ໃບຢັ້ງຢືນຈາກຊຸມຊົນ);
- (ii) ຜູ້ລັກລອບເຂົ້າມາຢູ່ດິນລັດຕາມຄອງນ້ຳ, ແຄມສາຍນ້ຳ ແລະ ທາງຍ່າງ;
- (iii) ຜູ້ລັກລອບເຂົ້າມາຢູ່ດິນລັດ ຢູ່ຕາມເຂດທີ່ພັກອາໄສ, ເຂດການຄ້າ ແລະ ເຂດອຸດສາຫະກຳ;
- (iv) ຜູ້ເຊົ່າ;
- (v) ຜູ້ທີ່ມີສິດແບບນຳໃຊ້ແລະຕາມປະເພນີ ລວມທັງປະຊາຊົນຊົນເຜົ່າດັ້ງເດີມ;
- (vi) ໄລຍະເວລາທີ່ເຂົາເຈົ້າມາຢູ່ນັ້ນ;
- (vii) ປະເພດສິດຄອບຄອງ, ເຊົ່າ ຫຼື ຮູບແບບຂອງໃບກຳມະສິດ;
- (viii) ເນື້ອທີ່ທັງໝົດແລະເນື້ອທີ່ໄດ້ຮັບຜົນກະທົບ ຈາກໂຄງລ່າງແຕ່ລະປະເພດ;
- (ix) ຂຶ້ນບັນຊີຊັບສິນບັດຄົງທີ່ທີ່ໄດ້ຮັບຜົນກະທົບ;
- (x) ການສູນເສຍລາຍຮັບ, ຖ້າມີ.

ວິທີການທີ່ດີ, ແຜນການ ຍັງຕ້ອງໄດ້ມີວິທີການແກ້ໄຂໃນໄລຍະຍາວ ສຳລັບການຍົກຍ້າຍ ຜູ້ລັກລອບເຂົ້າມາຢູ່ດິນລັດນັ້ນ ລວມທັງການປັບປຸງລະບົບອອກໃບກຳມະສິດ ເພື່ອເຮັດໃຫ້ຊີວິດການເປັນຢູ່ບໍ່ຫຼຸດລົງ ເມື່ອຍ້າຍອອກໄປຢູ່ບ່ອນໃໝ່ ຂອງຕົວເມືອງ. ນອກນັ້ນ, ຄວນຫາວິທີຮັບຮອງເອົາຜົນຂອງການສຳຫຼວດພົນລະເມືອງ ແລະກຳນົດປະເພດຕ່າງໆ ກ່ຽວກັບ ສິດທິຄອບຄອງຂອງຊຸມຊົນທີ່ໄດ້ຮັບຜົນກະທົບ.

## ຜົນກະທົບທາງ ລົບດ້ານເສດຖະກິດຕໍ່ທຸລະກິດນ້ອຍ (ເຄື່ອນທີ່)

ເຂດການຄ້າໃນຕົວເມືອງຂອງປະເທດກຳລັງພັດທະນາຫຼາຍໆປະເທດ ມັກເປັນກິດຈະກຳທາງດ້ານເສດຖະກິດ ທີ່ບໍ່ໄດ້ຮັບອະນຸຍາດ ໂດຍມີໂຄງລ່າງຈຳເປັນຫຼືບໍ່ຈຳເປັນ ໃນສະຖານທີ່ສາທາລະນະ ເຊັ່ນທາງຍ່າງຫຼືແຄມທາງ, ເທິງຄອງນ້ຳແລະຢູ່ແຈທາງ. ທຸລະກິດນ້ອຍ ຫຼື ຮ້ານນ້ອຍເຫຼົ່ານີ້ ສ່ວນຫຼາຍບໍ່ມີອະນຸຍາດ ແລະ ມີສິດ. ຜົນກະທົບທາງລົບ ຍ້ອນການຍົກຍ້າຍທຸລະກິດເຫຼົ່ານີ້, ຮ້ານຂາຍເຄື່ອງແຄມທາງ ແລະ ຜູ້ອາໄສຢູ່ຕາມແຄມທາງ ອາດເປັນບັນຫາຮ້າຍແຮງຕໍ່ການຢູ່ລອດຂອງຄອບຄົວທີ່ມີລາຍຮັບຕ່ຳ. ຊາວຄ້າຂາຍ ຫຼື ທຸລະກິດອື່ນໆ ທີ່ມີສິດ ແລະ ໃບອະນຸຍາດນັ້ນ ຈະໄດ້ຮັບສິດໃນການຊ່ວຍເຫຼືອຕ່າງໆໃນເວລາຖືກຍົກຍ້າຍ. ຢ່າງໃດກໍຕາມ, ຜູ້ທີ່ບໍ່ມີສິດ ແລະ ໃບອະນຸຍາດສ່ວນຫຼາຍ ແມ່ນໃຫ້ຍົກຍ້າຍອອກ ໂດຍບໍ່ໄດ້ຮັບການທົດແທນຫຍັງ. ຄວາມຈິງທີ່ທຸລະກິດດັ່ງກ່າວສາມາດຄົງຕົວ ແລະ ດຳເນີນມາໄດ້ເປັນຢ່າງດີນັ້ນ ຢັ້ງຢືນວ່າມັນມີຄວາມຕ້ອງການໃຫ້ທຸລະກິດເຫຼົ່ານີ້ ຊຶ່ງການຄ້າແບບຖືກຕ້ອງຕາມກົດໝາຍບໍ່ສາມາດເຮັດໄດ້. ບາງປັດໄຈນອກຕົວ ເຊັ່ນຢູ່ໃກ້ທຸລະກິດອື່ນມີລູກຄ້າຫຼາຍ ແລະ ສະຖານທີ່ເໝາະສົມ ແມ່ນມີຄວາມຈຳເປັນສຳລັບທຸລະກິດດັ່ງກ່າວ ແລະ ການດຳລົງຊີວິດຂອງຄອບຄົວເຂົາເຈົ້າ. ເມື່ອເບິ່ງປັດໄຈເຫຼົ່ານີ້ ແລະ ຈຸດປະສົງຂອງການພັດທະນາຕົວເມືອງ <u>ບັນຫາການຍົກຍ້າຍທຸລະກິດດັ່ງກ່າວ ຄວນຢູ່ໃນກອບຂອງການພັດທະນາຕົວເມືອງ ແລະການວາງແຜນການນຳໃຊ້ທີ່ດິນ. ເພື່ອຈັດສັນທຸລະກິດຂະໜາດນ້ອຍ, ຊາວຄ້າຂາຍແຄມທາງແລະຜູ້ອາໄສຢູ່ຕາມແຄມທາງນັ້ນ ຄວນສ້າງຕະຫຼາດໃໝ່ຂຶ້ນ ໃນບ່ອນທີ່ເໝາະສົມ ໂດຍໃຫ້ສອດຄ່ອງກັບແຜນພັດທະນາຕົວເມືອງ.</u> ຫາກເປັນໄປໄດ້ ກໍຄວນໃຫ້ໃກ້ກັບເຂດເກົ່າເທົ່າທີ່ເຮັດໄດ້ເພື່ອຮັກສາລູກຄ້າເດີມ.

## 19.4. ຜົນກະທົບໜ້ອຍໃນໂຄງການ ທີ່ມີການກໍ່ສ້າງຍາວເປັນແລວໃນຕົວເມືອງ

ໂຄງການກໍ່ສ້າງໂຄງລ່າງທີ່ຍາວເປັນແລວໃນຕົວເມືອງ ເຊັ່ນໂຄງການຂະຫຍາຍເສັ້ນທາງ, ໂຄງການປັບປຸງຄອງລະບາຍນ້ຳ, ໂຄງການສາຍສົ່ງໄຟຟ້າທີ່ມີຜົນກະທົບຕໍ່ປະຊາຊົນຈຳນວນຫຼວງຫຼາຍ ເຖິງແມ່ນວ່າຜົນກະທົບຂອງໂຄງການເຫຼົ່ານີ້ ເມື່ອເບິ່ງທາງດ້ານການເວນຄືນທີ່ດິນ ແລະ ໂຄງລ່າງທີ່ຖືກແຕະຕ້ອງແມ່ນຈະມີຈຳນວນໜ້ອຍ, ແລະ ອາດບໍ່ມີການຍົກຍ້າຍຫຍັງ. ຜົນກະທົບທາງລົບຂອງໂຄງການດັ່ງກ່າວອາດມີລັກສະນະຊົ່ວຄາວ (ເຊັ່ນຄວາມສະດວກຕ່າງໆ, ບັນຫາທາງໄປມາໃນໄລຍະກໍ່ສ້າງ) ຫຼື ມີຜົນກະທົບຕະຫຼອດໄປ ເຊັ່ນສູນເສຍແລວດິນ ຫຼື ໜ້າຮ້ານ. ສ່ວນຫຼາຍຜົນໄດ້ທາງອ້ອມຂອງໂຄງລ່າງດັ່ງກ່າວ ກໍສາມາດທົດແທນຜົນກະທົບທາງລົບເຫຼົ່ານັ້ນໄດ້, ໂດຍສະເພາະໃນຮູບແບບຂອງການມີທາງເຂົ້າສະດວກ ແລະ ສິ່ງແວດລ້ອມທີ່ດີຂຶ້ນຍ້ອນຄ່າຂອງຊັບສິນເພີ້ມຂຶ້ນ (ເບິ່ງໝວດ 18. ການຍົກຍ້າຍຈັດສັນປະຊາຊົນໃນໂຄງການທີ່ມີການກໍ່ສ້າງຍາວເປັນແລວ). ຢ່າງໃດກໍຕາມ, ຄວນຈື່ຈຳໄວ້ວ່າຜົນໄດ້ຂອງການພັດທະນາດັ່ງກ່າວ ອາດໃຊ້ເວລາຫຼາຍກ່ອນຈະປະກົດຜົນເປັນຈິງ ແລະ ຫຼາຍຄອບຄົວອາດຂາຍຊັບສິນຂອງຕົນ ກ່ອນຜົນໄດ້ດັ່ງກ່າວຈະມາເຖິງ. ໃນກໍລະນີພິເສດ, ການສູນເສຍແລວດິນແຄບໆ ຫຼື ໜ້າຮ້ານອາດເຮັດໃຫ້ຊັບສິນທີ່ເຫຼືອຢູ່ໃຊ້ການບໍ່ໄດ້ຕໍ່ໄປ. ຜູ້ທີ່ຖືກກະທົບຍ້ອນການສູນເສຍຊັບສິນ ອາດໄດ້ຮັບການທົດແທນຄ່າເສຍຫາຍ

ແລະ ການຊ່ວຍເຫຼືອ ໃນການຍົກຍ້າຍ ຕາມດຳລັດ 192. ບຸກຄົນ ຫຼື ທຸລະກິດທີ່ຖືກກະທົບຊົ່ວຄາວຈາກໂຄງການ ອາດໄດ້ຮັບເງິນລວມຈຳນວນໃດໜຶ່ງທີ່ໄດ້ກຳນົດໄວ້ ເພື່ອເປັນການທົດແທນຄ່າເສຍຫາຍ ສຳລັບຄວາມບໍ່ສະດວກຫຼືການສູນເສຍລູກຄ້າ ຍ້ອນບໍ່ສາມາດເຂົ້າເຖິງໄດ້ ໃນເວລາຈັດຕັ້ງປະຕິບັດໂຄງການ. ຜູ້ທີ່ຖືກກະທົບທີ່ສູນເສຍຊັບສິນຈຳນວນໜ້ອຍ (ແລວທາງຍ່າງຫຼືເຂດໜ້າຮ້ານໜ້ອຍໜຶ່ງ) ອາດໄດ້ຮັບເງິນລວມຈຳນວນໜຶ່ງ ຫຼື ອີງຕາມການຄິດໄລ່ເປັນຫົວໜ່ວຍສຳລັບຊັບສິນທີ່ເສຍໄປ ຕາມລາຄາສະເລ່ຍຂອງດິນໃນເຂດນັ້ນ.

### ກຳນົດສິດທີ່ຈະໄດ້ຮັບສຳລັບຜູ້ທີ່ໄດ້ຜົນກະທົບໜ້ອຍ

ໃນໂຄງການປັບປຸງໂຄງລ່າງໃນຕົວເມືອງ, ເມື່ອຜົນກະທົບຕໍ່ຊັບສິນທີ່ຢູ່ຕາມແລວໂຄງການມີຈຳນວນໜ້ອຍ ແຕ່ຈຳນວນຜູ້ທີ່ໄດ້ຮັບຜົນກະທົບມີຫຼາຍ, ຄ່າບໍລິຫານສຳລັບຄວາມຕ້ອງການຂອງແຜນເຖິງຈະຫຼາຍແຕ່ກໍບໍ່ສາມາດເຮັດໄດ້. ຄວນພະຍາຍາມໄຈ້ແຍກໃຫ້ລະອຽດ ລະຫວ່າງການສູນເສຍແບບຊົ່ວຄາວ ແລະ ການສູນເສຍແບບຖາວອນ ແລະ ລະຫວ່າງຜູ້ທີ່ໄດ້ຜົນກະທົບໜ້ອຍແລະຫຼາຍ. ມັນອາດຍັງຈຳເປັນທີ່ຈະດຳເນີນການສຳຫຼວດທາງດ້ານເສດຖະກິດ-ສັງຄົມໃຫ້ລະອຽດ ເພື່ອປະເມີນການສູນເສຍລາຍຮັບຕໍ່ທຸກໆທຸລະກິດຕາມແລວໂຄງການ. ບາດກ້າວທີ່ຄວນກຳນົດສິດທິ ທີ່ຈະໄດ້ຮັບຄ່າທົດແທນ ຈາກຜົນກະທົບໜ້ອຍມີດັ່ງນີ້:

(i) ກະກຽມບັນຊີລະອຽດຂອງຊັບສິນທີ່ແຕ່ລະຄົນເສຍໄປ;

(ii) ຈັດປະເພດຜູ້ທີ່ຖືກກະທົບ ຕາມການສູນເສຍຊັບສິນ (ຊົ່ວຄາວ, ໜ້ອຍ, ຫຼາຍ);

(iii) ກຳນົດສິດທິ ທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ສຳລັບຜູ້ທີ່ຖືກກະທົບ ແຕ່ລະປະເພດ; ແລະ

(iv) ກຳນົດຄ່າດິນສະເລ່ຍ ຕາມແລວໂຄງການ ໃຫ້ເປັນຈຳນວນລວມ ເພື່ອທົດແທນຄ່າເສຍຫາຍໜ້ອຍ.

## 19.5. ການຍົກຍ້າຍອອກຈາກໂຄງການ ໃນຕົວເມືອງ

### ຄິດໄລ່ມູນຄ່າຍົກຍ້າຍສຳລັບດິນໃນຕົວເມືອງ

ໃນບາງໂຄງການໃນຕົວເມືອງ, ການຊອກຫາທີ່ດິນ ແລະ ເຮືອນທົດແທນ ມັກເປັນອຸປະສັກອັນໃຫຍ່ຫຼວງ. ກ່ຽວກັບ ທີ່ດິນ, ການຄິດໄລ່ມູນຄ່າທົດແທນ ແມ່ນມີລັກສະນະສະລັບສັບຊ້ອນ ຍ້ອນຄວາມແຕກຕ່າງກັນໃນລາຄາທີ່ດິນ ແລະ ການຂາດຕະຫຼາດຊື້ຂາຍທີ່ດິນ. ຕາມຫຼັກການ ການທົດແທນຊັບສິນ ຫຼື ການທົດແທນໃນມູນຄ່າປ່ຽນແທນ, ລວມທັງການຮັບຮູ້ຄຸນນະພາບຂອງດິນທີ່ໄດ້ເວນຄືນ ແລະປັດໄຈອື່ນໆ (ເຊັ່ນທີ່ຕັ້ງ, ຄວາມສາມາດໃນການຜະລິດ) ແມ່ນປະກອບເປັນມູນຄ່າ. ຢ່າງໃດກໍຕາມ, ລາຄາທີ່ດິນໃນເຂດຕົວເມືອງ ແມ່ນຈະມີຄວາມແຕກຕ່າງກັນຫຼາຍ. ສຳລັບຜູ້ທີ່ຖືກຍົກຍ້າຍ, ການໄດ້ຢູ່ໃກ້ກັບບ່ອນເຮັດວຽກງານ ແລະ ບ່ອນມີລາຍຮັບໃຫ້ຄອບຄົວໄດ້ຢ່າງຕໍ່ເນື່ອງ ແມ່ນມີຄວາມສຳຄັນຫຼາຍກວ່າຈະໄດ້ຊັບສິນທີ່ມີມູນຄ່າສູງກວ່າ ແຕ່ຢູ່ໃນເຂດຊານເມືອງ. ໃນຕົວເມືອງໃຫຍ່ໆ ທີ່ດິນຈະເປັນບ່ອນຈັດສັນໃຫ້ໄດ້ຢູ່ໃນເຂດທີ່ໃກ້ກັບບ່ອນເຮັດວຽກ ແລະ ບ່ອນທີ່ຜູ້ທີ່ຖືກກະທົບຮັບໄດ້ນັ້ນ ແມ່ນບໍ່ມັກມີຫຼືຖ້າມີກໍມີລາຄາແພງຫຼາຍ. ເພື່ອໃຫ້ຖືກຕ້ອງຕາມດຳລັດ 192 ຄວນໃຫ້ມີການປະສົມປະສານ ລະຫວ່າງການທົດແທນຄ່າເສຍຫາຍ ແລະ ຜົນໄດ້ອື່ນໆ ຊຶ່ງລວມກັນເຂົ້າເປັນການປ່ຽນແທນທີ່ຮັບເອົາໄດ້ ຫຼື ການປົວແປງມາດຕະຖານຊີວິດການເປັນຢູ່ໃຫ້ຄືເກົ່າ. ຕົວຢ່າງ, ໃຫ້ດິນຕອນໜຶ່ງໃນເຂດຊານເມືອງ, ມີກຳມະສິດ ຢ່າງຄັກແນ່ ແລະ ມີເຮືອນທີ່ໄດ້ມາດຕະຖານ, ໂອກາດສ້າງລາຍຮັບ ແລະ ສາມາດເຂົ້າເຖິງໂຄງລ່າງ ແລະ ການບໍລິການສັງຄົມ ອາດທົດແທນກັບທີ່ດິນທີ່ໄດ້ເວນຄືນ ທີ່ມີລາຄາແພງ.

## ການແກ້ໄຂບັນຫາທີ່ຕັ້ງຂອງເຂດຈັດສັນ ໃນຕົວເມືອງ

ຄວາມພໍໃຈຂອງຜູ້ທີ່ຖືກກະທົບໃນຕົວເມືອງ ກ່ຽວກັບ ເຂດຍົກຍ້າຍຈັດສັນປະຊາຊົນ ອາດມີຄວາມແຕກຕ່າງກັນໄປ ຍ້ອນເຂົາເຈົ້າຕ້ອງການມີທີ່ທຳມາຫາກິນທີ່ດີ. ອີກດ້ານໜຶ່ງ, ທາງເລືອກກ່ຽວກັບເຂດຍົກຍ້າຍຈັດສັນໃໝ່ ແມ່ນຖືກຈຳກັດ ທາງດ້ານການເງິນ, ແຜນການນຳໃຊ້ທີ່ດິນ ແລະການແບ່ງເຂດຕົວເມືອງຫຼືຂໍ້ຈຳກັດອື່ນໆ. ເຂດຍົກຍ້າຍຈັດສັນປະຊາຊົນທີ່ຢູ່ໄກຈາກບ່ອນເຮັດວຽກ ອາດເຮັດໃຫ້ຄອບຄົວມີລາຍຈ່າຍເພີ້ມຂຶ້ນໃນການຂົນສົ່ງ. ນະໂຍບາຍ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ ຄວນໄດ້ພະຍາຍາມຮ່າງຍຸດທະສາດໃດໜຶ່ງ ເພື່ອຫຼຸດຜ່ອນຄ່າຂົນສົ່ງດັ່ງກ່າວ. ນອກນັ້ນ, ຄອບຄົວທີ່ໄດ້ຍົກຍ້າຍ ກໍອາດບໍ່ໄດ້ບູລິມະສິດໃນການນຳໃຊ້ການບໍລິການທີ່ໄດ້ປັບປຸງໃຫ້ດີຂຶ້ນ ແລະ ເງື່ອນໄຂທີ່ມີທີ່ຢູ່ອາໄສໃນເຂດຍົກຍ້າຍມາຢູ່ນັ້ນ ໂດຍສະເພາະຫາກຕ້ອງມີລາຍຈ່າຍເພີ້ມຂຶ້ນ. ໃນກໍລະນີເສຍວຽກເຮັດງານທຳຍ້ອນໂຄງການ ແມ່ນຕ້ອງໄດ້ເລືອກເອົາເຂດຈັດສັນ ທີ່ຮັບປະກັນໃຫ້ມີວຽກເຮັດງານທຳ ຫຼື ໂອກາດຫາລາຍຮັບຢູ່ເຂດໃກ້ຄຽງນັ້ນ. ອັນທີ່ດີ, ຄວນມີພື້ນທີ່ກວ້າງຂວາງພຽງພໍ ສຳລັບຊຸມຊົນ ເພື່ອເຮັດກິດຈະກຳດ້ານເສດຖະກິດ ແບບບໍ່ເປັນລະບົບໃນເຂດຍົກຍ້າຍມາຢູ່ໃໝ່. ດັ່ງນັ້ນ, ການມີຫຼາຍທາງເລືອກ ກ່ຽວກັບ ສະຖານທີ່ນັ້ນ ຈະຊ່ວຍເຮັດໃຫ້ຄວາມມັກຄວາມພໍໃຈຂອງຄອບຄົວທີ່ຖືກກະທົບ ແລະ ອາດສົ່ງເສີມໃຫ້ມີການນຳໃຊ້ໂອກາດທີ່ຫາຍາກນັ້ນ ມີປະສິດທິພາບຫຼາຍຂຶ້ນ.

## ຍຸດທະສາດການມີເຮືອນຢູ່

ການມີເຮືອນປ່ຽນແທນ ສ່ວນໃຫຍ່ແມ່ນເປັນປັດໄຈສຳຄັນທີ່ສຸດ ໃນການວາງແຜນການຍົກຍ້າຍຈັດສັນປະຊາຊົນໃນຕົວເມືອງ. ການແກ້ໄຂສ່ວນຫລາຍ ແມ່ນການປະສານຂອງສອງແບບພື້ນຖານຄື: ການຍົກຍ້າຍໄປຢູ່ເຂດອື່ນ (ພ້ອມທັງມີການຟື້ນຟູລາຍຮັບ), ຫຼື ການເຂົ້າໄປຢູ່ໃນດິນເປົ່າຫວ່າງ ຫຼື ເຮືອນລັດທີ່ກະຈາຍກັນຢູ່ໃນຫຼາຍໆເຂດ. ຍຸດທະສາດການຍົກຍ້າຍຈັດສັນ ໂດຍລວມແລ້ວ ແມ່ນມີສາມປະເພດ: (i) ການມີເຮືອນຢູ່ເປັນທາງເລືອກ; (ii) ການພັດທະນາເຮືອນຢູ່ກັບທີ່ ແລະ (iii) ເຂດຈັດສັນໃໝ່.

## ເຮືອນຢູ ທີ່ເປັນທາງເລືອກ

ບົດຮຽນຜ່ານມາ ໄດ້ຊີ້ໃຫ້ເຫັນວ່າ ຫຼາຍບັນຫາໃນຍຸດທະສາດສະໜອງທີ່ຢູ່ອາໄສ ເຊັ່ນ ເຮືອນລັດລາຄາຖືກ, ເຮືອນເຊົ່າ ແລະ ການພັດທະນາເຮືອນຢູ່ຂອງລັດ. ເຮືອນຊຸດທີ່ມີການອຸດໜູນຂອງລັດ ສຳລັບກຸ່ມທີ່ມີລາຍຮັບຕ່ຳກໍເອົາໄປຂາຍໃຫ້ຜູ້ມີລາຍຮັບສູງ. ບັນຫາທີ່ຕິດພັນກັບຍຸດທະສາດດັ່ງກ່າວມີຄື: (i) ບູລິມະສິດສຳລັບເລື້ອງເຮືອນຢູ່ຍັງຕ່ຳ; (ii) ຄວາມສາມາດຈ່າຍ; ແລະ (iii) ຄວາມເໝາະສົມຂອງທີ່ຕັ້ງໂຄງການດັ່ງກ່າວ ກັບບ່ອນເຮັດວຽກແລະຢູ່ໃກ້ຍາດຕິພີ່ນ້ອງ.

ເມື່ອມີການທົດແທນເຮືອນລັດ ຫຼື ເອກກະຊົນ, ແຜນການຍົກຍ້າຍຈັດສັນປະຊາຊົນຕ້ອງໄດ້ແກ້ໄຂຄວາມເໝາະສົມ ແລະ ຄວາມສາມາດຊື້ໄດ້ ເພື່ອໃຫ້ມີທີ່ຢູ່ມາປ່ຽນແທນ ຊຶ່ງໂຄງການເປັນຜູ້ສະໜອງທຶນ ຫຼື ກໍ່ສ້າງໃຫ້. ວິທີການສະໜອງ ເຮືອນຢູ່ຂອງລັດສະເພາະ ອາດລວມເອົາທັງເຮືອນທີ່ມີລາຄາຖືກຂອງລັດ ຫຼື ເອກກະຊົນ ທີ່ເຈົ້າຂອງເຂົ້າມາຢູ່ແບບເຊົ່າ ຫຼື ຊື້ເອົາ ແລະ ການສ້າງບ່ອນຢູໃນອາຄານໃຫ້ເຊົ່າ. ປະເພດເຮືອນ ຄວນມີລາຄາຕ່ຳຫາປານກາງຈົນຮອດເຮືອນທີ່ມີລາຄາແພງ, ທັງໃນຕຶກຕ່ຳ ຫຼື ຕຶກສູງຂຶ້ນກັບສະຖານທີ່ ແລະ ປະເພດການກໍ່ສ້າງເຮືອນຢູ່. ການຍົກຍ້າຍຈັດສັນປະຊາຊົນທີ່ໄດ້ຮັບຜົນສຳເລັດຄາດວ່າຈະແມ່ນເຮືອນຢູ່ທີ່ຖືກກັບບູລິມະສິດ ແລະ ຄວາມພໍໃຈ ຂອງຜູ້ທີ່ຖືກກະທົບ ຕໍ່ລັກສະນະຂອງເຮືອນ, ຄວາມສາມາດທາງດ້ານການເງິນ ແລະ ສະຖານທີ່. ຄວນໃຫ້ມີຫຼາຍແບບຫຼາຍຊະນິດ ເພື່ອຖືກກັບບູລິມະສິດ ແລະ

ຄວາມພໍໃຈຂອງຜູ້ທີ່ຖືກກະທົບ. ການສຳຫຼວດທາງດ້ານເສດຖະກິດ-ສັງຄົມ ແລະ ທັດສະນະທ່າທີຂອງຄອບຄົວທີ່ຖືກກະທົບ ກ່ຽວກັບ ລັກສະນະຂອງເຮືອນ ແມ່ນຄວນໄດ້ຈັດຂຶ້ນກ່ອນຈະມີການວາງຍຸດທະສາດສະໜອງເຮືອນຢູ່ເພື່ອປ່ຽນແທນ:

- ຂະໜາດຂອງເຮືອນ ແລະ ລາຍຮັບສະເລ່ຍຂອງແຕ່ລະຄອບຄົວປະຈຳເດືອນ, ຈາກແຫຼ່ງລາຍຮັບຕົ້ນຕໍ ແລະ ສຳຮອງ;
- ສະພາບກຳມະສິດ;
- ປະເພດວຽກເຮັດງານທຳ, ທັງຕົ້ນຕໍ ແລະ ສຳຮອງ;
- ໄລຍະທາງໄປເຮັດວຽກ ແລະ ສິ່ງອຳນວຍຄວາມສະດວກຂອງລັດອັນຕົ້ນຕໍ;
- ເວລາ ແລະ ຄ່າຂົນສົ່ງໄປເຮັດວຽກ ແລະ ໄປຫາສິ່ງອຳນວຍຄວາມສະດວກຂອງລັດ (ເຊັ່ນໂຮງຮຽນ, ໂຮງ ໝໍ ແລະ ອື່ນໆ);
- ການໃຊ້ຈ່າຍສະເລ່ຍສຳລັບເຮືອນຢູ່ (ລວມທັງຄ່າເຊົ່າຖ້າຫາກໄລ່ໄດ້) ແລະ ການບໍລິການອື່ນໆ;
- ຊອກເບິ່ງຜົນໄດ້ປຽບຈາກທີ່ຢູ່ຕໍ່ວຽກເຮັດງານທຳອັນຕົ້ນຕໍ ແລະ ສຳຮອງ;
- ຊອກຮູ້ວ່າແຕ່ລະຄອບຄົວ ຕ້ອງການຈ່າຍ ຫຼື ບໍ່ ແລະ ເພີ້ມຫຼາຍເທົ່າໃດເພື່ອປັບປຸງສິ່ງອຳນວຍຄວາມສະດວກ, ການບໍລິການຂອງລັດ ແລະ ການມີກຳມະສິດຄອບຄອງໃຫ້ດີຂຶ້ນ ແລະ ໃນຈຳນວນເທົ່າໃດ, ຖ້າເຮັດໄດ້;
- ແຫຼ່ງສະໜອງທຶນຮອນ ແລະ ຄ່າຫຼຸ້ຍຫຸ້ງນທີ່ມີຢູ່.

## ການພັດທະນາທີ່ຢູ່ອາໄສກັບທີ່

ການພັດທະນາທີ່ຢູ່ອາໄສກັບທີ່ ຈະເປັນໂອກາດທີ່ຈະເຮັດໃຫ້ການຍົກຍ້າຍຈັດສັນປະຊາຊົນໄປຕາມຂະບວນການພັດທະນາຕົວເມືອງ ໂດຍມີການເຄື່ອນຍ້າຍປະຊາຊົນໜ້ອຍທີ່ສຸດ. ການພັດທະນາເຮືອນຢູ່ກັບທີ່ ອາດກວມເອົາຍຸດທະສາດຕ່າງໆ ເຊັ່ນປັບປຸງຊະລຳ, ສ້າງຕົວເມືອງໃໝ່ ແລະ ຈັດສັນທີ່ດິນ. ຢ່າງໃດກໍຕາມ, ຍ້ອນຄວາມຕ້ອງການ ໃນການການພັດທະນາຕົວເມືອງເພີ້ມຂຶ້ນເລື້ອຍໆ ແລະ ອຸປະສັກທີ່ມີທີ່ດິນໜ້ອຍສຳລັບໂຄງລ່າງ ແລະ ການບໍລິການລວມໝູ່, ຮູບແບບຂອງການພັດທະນາທີ່ຢູ່ອາໄສກັບທີ່ຈຶ່ງບໍ່ສາມາດເຮັດໄດ້ເລື້ອຍໆ. ຍຸດທະສາດທັງສອງດ້ານ ຄືການສ້າງຕົວເມືອງໃຫ້ໃໝ່ ແລະ ການປັບປຸງການນຳໃຊ້ທີ່ດິນ ແມ່ນຍ້າຍຄອບຄົວທີ່ຖືກກະທົບນັ້ນ ໃຫ້ມີໜ້ອຍທີ່ສຸດໂດຍຈັດສັນທີ່ດິນໃໝ່ ເພື່ອເອົາໄປສ້າງສິ່ງອຳນວຍຄວາມສະດວກ ແລະ ການບໍລິການຂອງລັດ ຊຶ່ງນອກນີ້ແລ້ວ ແມ່ນບໍ່ສາມາດເຮັດໄດ້ຍ້ອນຮູບແລະຂະໜາດຂອງທີ່ດິນບໍ່ຄົງທີ່ແລະເພື່ອກະຈາຍຜົນປະໂຫຍດຈາກໂຄງການ ໃຫ້ປະຊາຊົນໃນຈຳນວນຫຼາຍ. ຍຸດທະສາດອັນໜຶ່ງຄວນເອົາມາໃຊ້, ເຖິງແມ່ນວ່າ ຈະໄດ້ຜົນໜ້ອຍແດ່ ກໍຕາມ, ນັ້ນຄືນຳໃຊ້ດິນເປົ່າຫວ່າງໃນເຂດທີ່ຢູ່ອາໄສທີ່ຍັງມີຢູ່. ປັດໄຈສຳຄັນ ທີ່ຈະເຮັດໃຫ້ຂອງຍຸດທະສາດເຫຼົ່ານີ້ບໍ່ໄດ້ຮັບຜົນສຳ ເລັດມີດັ່ງນີ້:

(i) ການປຶກສາຫາລື ແລະ ການເຂົ້າຮ່ວມຂອງປະຊາຊົນຢ່າງກ້ວາງຂວາງ ໃນການຮ່າງຈຸດປະສົງຂອງໂຄງການ ແລະ ໄລຍະຈັດຕັ້ງປະຕິບັດໂຄງການ;

(ii) ໂດຍທົ່ວໄປແລ້ວ ບໍ່ມີການເວນຄືນຊັບສິນແບບບໍ່ສະໝັກໃຈ. ຢ່າງໃດກໍຕາມ, ປະຊາຊົນ ຈະມີທາງເລືອກບໍ່ເອົາການທົດແທນຄ່າເສຍຫາຍໃນມູນຄ່າທົດແທນ ທີ່ໂຄງການສະໜອງໃຫ້ນັ້ນກໍໄດ້;

(iii) ຜົນປະໂຫຍດຫຼັງການພັດທະນາ ຕ້ອງແຈກຢາຍຢ່າງເປັນທຳ;

(iv) ໂຄງການ ໄດ້ຮັບປະກັນໃຫ້ມີກຳມະສິດໄລຍະຍາວ ແກ່ຜູ້ທີ່ຖືກກະທົບ ແລະ ຜູ້ທີ່ບໍ່ມີກຳມະສິດຫຍັງ;

## ເຂດຍົກຍ້າຍຈັດສັນປະຊາຊົນ

ການພັດທະນາເຂດຍົກຍ້າຍຈັດສັນປະຊາຊົນ ອາດຍັງສິ່ງເສີມວິທີການພັດທະນາທີ່ຢູ່ອາໄສຫຼາຍໆຢ່າງ. ອັນນີ້ມີທັງການເຮັດເປັນ "ເຂດທີ່ຢູ່ ແລະ ບໍລິການ" ຊຶ່ງທີ່ດິນສຳລັບເຮັດການບໍລິການຢ່າງເຕັມສ່ວນ ພ້ອມທັງຮັບປະກັນໃຫ້ກຳມະສິດໄດ້ຖືກມອບແກ່ຜູ້ທີ່ຖືກກະທົບໃນໄລຍະຍາວ ແລະ ເຮືອນຢູ່ແບບເຮືອນຫ້ອງແຖວ ຫລື ເຮືອນຢູ່ຕົ້ນຕໍ ແລະ ການສະໜອງການກໍ່ສ້າງເພີ້ມ. ວິທີການທີ່ດີ, ການເລືອກເອົາສະຖານທີ່ ແລະ ການຮ່າງວິທີການສະໜອງເຮືອນ ແມ່ນຄວນໄດ້ຈັດໃຫ້ມີການປຶກສາຫາລື ແລະ ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບຢ່າງກ້ວາງຂວາງ. ປັດໄຈທີ່ຕ້ອງໄດ້ພິຈາລະນາເພື່ອໃຫ້ການຍົກຍ້າຍຈັດສັນປະຊາຊົນໃນຕົວເມືອງໄປຢູ່ບ່ອນໃໝ່ໄດ້ຮັບຜົນສຳເລັດ ມີດັ່ງນີ້:

(i) ໄລຍະຫ່າງຈາກບ່ອນເຮັດວຽກ ແລະ ສະຖານທີ່ບໍລິການລວມໝູ່;

(ii) ໂອກາດໃນການເຮັດທຸລະກິດ ແລະ ກິດຈະການສ້າງລາຍຮັບ;

(iii) ຄວາມເໝາະສົມທາງດ້ານພື້ນຖານໂຄງລ່າງ;

(iv) ຄວາມປອດໄພໃນການມີກຳມະສິດໄລຍະຍາວ;

(v) ຖືກຕ້ອງກັບບູລິມະສິດ ແລະ ຄວາມສາມາດໃນດ້ານການເງິນ.

ແຜນການຍົກຍ້າຍຈັດສັນປະຊາຊົນ ຄວນມີຂໍ້ມູນຂ່າວສານກ່ຽວກັບເຂດຈັດສັນໃໝ່ ແລະ ວິທີການຕ່າງໆກ່ຽວກັບ ການປຸກເຮືອນຢູ່ໃນຂັ້ນສຸດທ້າຍ. ເພື່ອເລືອກເອົາເຂດຍົກຍ້າຍຈັດສັນ ແລະ ວິທີການທີ່ປຸກເຮືອນຢູ່ນັ້ນ, ແມ່ນຕ້ອງໄດ້ມີການເກັບກຳເອົາຂໍ້ມູນດັ່ງຕໍ່ໄປນີ້ ຈາກການສຳຫຼວດເສດຖະກິດ-ສັງຄົມ ແລະ ທັດສະນະທ່າທີຂອງຄອບຄົວທີ່ຖືກກະທົບ:

- ລາຍໄດ້ສະເລ່ຍຂອງແຕ່ລະຄອບຄົວປະຈຳເດືອນ;
- ປະເພດວຽກເຮັດງານທຳ, ທັງຕົ້ນຕໍ ແລະ ສຳຮອງ;
- ໄລຍະທາງໄປເຮັດວຽກ ແລະ ສິ່ງອຳນວຍຄວາມສະດວກຂອງລັດອັນຕົ້ນຕໍ;
- ເວລາ ແລະ ຄ່າຂົນສົ່ງໄປເຮັດວຽກ ແລະ ໄປຫາສິ່ງອຳນວຍຄວາມສະດວກຂອງລັດ (ເຊັ່ນໂຮງຮຽນ, ໂຮງໝໍ ແລະ ອື່ນໆ) ;
- ການໃຊ້ຈ່າຍສະເລ່ຍສຳລັບເຮືອນຢູ່ (ລວມທັງຄ່າເຊົ່າຖ້າຫາກຄິດໄລ່ໄດ້) ແລະ ການບໍລິການອື່ນໆ;
- ຊອກເບິ່ງຜົນໄດ້ປຽບ ຈາກການມີວຽກເຮັດງານທຳອັນຕົ້ນຕໍ ແລະ ສຳຮອງ;
- ທັດສະນະ ແລະ ຄວາມພໍໃຈ ກ່ຽວກັບ ທີ່ຕັ້ງຂອງເຂດຈັດສັນໃໝ່, ຖ້າມີ;
- ຊອກຮູ້ວ່າແຕ່ລະຄອບຄົວຈະສາມາດຈ່າຍເພີ່ມເທົ່າໃດເພື່ອປັບປຸງສິ່ງອຳນວຍຄວາມສະດວກ, ການບໍລິການຂອງລັດ ແລະ ການມີກຳມະສິດຄອບຄອງທີ່ດີຂຶ້ນ, ຖ້າເຮັດໄດ້.

## 19.6. ການຟື້ນຟູ ເສດຖະກິດ ສໍາລັບໂຄງການໃນຕົວເມືອງ

ການປັບປຸງຊີວິດການເປັນຢູ່ຂອງ ປະຊາຊົນທີ່ຖືກຍົກຍ້າຍໄປຢູ່ໃນເຂດຕົວເມືອງ ແມ່ນວຽກໜຶ່ງທີ່ສະລັບສັບຊ້ອນໃນການຍົກຍ້າຍຈັດສັນປະຊາຊົນ. ໃນຕົວຈິງ, ເຖິງວ່າໂຄງການໄດ້ມີການອອກແບບມາເປັນຢ່າງດີກໍຕາມ ເພື່ອປັບປຸງລາຍຮັບໃນຕົວເມືອງ ສ່ວນຫຼາຍມັກມີຄວາມຜິດພາດ ຍ້ອນວ່າຄວາມສະລັບສັບຊ້ອນທີ່ມີໃນຕົວເມືອງ.

ຍ້ອນເສດຖະກິດໃນຕົວເມືອງ ມີຄວາມຫຼາກຫຼາຍ ແລະ ຍ້ອນລາຍຮັບຂອງຄົນສ່ວນຫຼາຍ ມາຈາກວຽກເຮັດງານທໍາຫຼາຍກວ່າຈະນໍາໃຊ້ຊັບສິນບັດຄົງທີ່, ມາດຕະການທົດແທນ ຈຶ່ງມັກມີລັກສະນະເຮັດໃຫ້ຄົນທີ່ຖືກຍົກຍ້າຍໃນຕົວເມືອງເສຍຜົນປະໂຫຍດ. ບັນຫານີ້ ມີຄວາມເປັນຈິງທີ່ສຸດ ສໍາລັບຄົນທີ່ຢູ່ໃນຕົວເມືອງທີ່ມີອາຊີບຕິດພັນກັບວົງການເສດຖະກິດບໍ່ເປັນລະບົບ, ເປັນເງື່ອນໄຂຕົ້ນຕໍອັນທີສອງ ເພື່ອໃຫ້ມີລາຍຮັບໃນຕົວເມືອງ. ໃນເມື່ອມີການຈັດຕັ້ງຢ່າງຄັກແນ່ ເພື່ອຮັກສາລາຍຮັບໃນຕົວເມືອງ ທີ່ຍັງບໍ່ທັນມີຄວາມແນ່ນອນ, ຄວາມເອົາໃຈໃສ່ນໍາບັນຫາຕົວຈິງ ແລະ ທາງດ້ານເສດຖະກິດ-ສັງຄົມ ຈະເຮັດໃຫ້ການວາງແຜນນັ້ນ ເປັນທີ່ຖືກໃຈຫຼາຍຂຶ້ນ. ບາງບັນຫາສໍາຄັນມີດັ່ງຕໍ່ໄປນີ້:

### ໄລຍະຂອງບ່ອນຍົກຍ້າຍໄປຢູ່ ເປັນອຸປະສັກໃຫ້ແກ່ການຮັກສາລາຍຮັບ

ຍ້ອນເຂດປຸກເຮືອນທົດແທນທີ່ມີຢູ່ແລ້ວ ແລະ ສາມາດເຮັດໃຫ້ມີການລົງທຶນໄດ້ ສ່ວນຫຼາຍມັກມີຢູ່ອ້ອມເມືອງ ຫຼື ນອກເມືອງ, ການຍົກຍ້າຍເຂດທີ່ຢູ່ອາໄສໃນຕົວເມືອງ ຈຶ່ງມັກເຮັດໃຫ້ມີການຍົກຍ້າຍໄປໄກ, ໂດຍສະເພາະໃນຕົວເມືອງໃຫຍ່, ເຊິ່ງຍາກທີ່ຈະຮັກສາວຽກເຮັດງານທໍາ ຫຼື ລາຍຮັບຈາກທຸລະກິດໄວ້ໄດ້.

- <u>ສໍາລັບວຽກເຮັດງານທໍາ:</u> ທາງເລືອກອັນໜຶ່ງ ແມ່ນປະສານກັບການຂົນສົ່ງມວນຊົນ ເພື່ອຮັບປະກັນວ່າມີທາງໄປມາທີ່ສະດວກ. ໃນຕົວເມືອງ, ມັນເປັນການດີທີ່ຈະຫາ ຫຼື ສະໜອງວຽກເຮັດງານທໍາໃໝ່ ໃຫ້ຜູ້ທີ່ຖືກກະທົບ, ຫຼື ສະໜອງການຊຸກຍູ້ໃຫ້ເຂົາເຈົ້າມີໂອກາດສ້າງລາຍຮັບດ້ວຍຕົນເອງ. ໃນບາງໂຄງການ, ຜູ້ທີ່ຖືກກະທົບທີ່ຖືກຍົກຍ້າຍ ໄດ້ມີທາງເລືອກເຂົ້າໄປເຮັດວຽກລວມໝູ່. ໃນເສດຖະກິດບໍ່ເປັນລະບົບ, ການຍົກຍ້າຍໄປຢູ່ຫ່າງໄກ ອາດເຮັດໃຫ້ການອາໄສເຊິ່ງກັນ ແລະ ກັນ ລະຫວ່າງ ຄົນທຸກ ແລະ ຄົນຮັ່ງ, ເຊິ່ງໃນເມື່ອກ່ອນເຄີຍຢູ່ໃກ້ກັນສິ້ນສຸດລົງ.. ເຖິງແມ່ນວ່າຈະມີກົນໄກທີ່ພໍໃຈ ເພື່ອຟື້ນຟູວຽກເຮັດງານທໍາຢ່າງຖືກຕ້ອງກໍຕາມ ໃຫ້ແກ່ສະມາຊິກຜູ້ໜຶ່ງ ຫຼື ຫຼາຍຄົນ ສໍາລັບຄອບຄົວໜຶ່ງຫຼັງຈາກມີການຍົກຍ້າຍ, ລາຍຮັບບໍ່ເປັນລະບົບ ຫຼື ກິດຈະກໍາ ເພື່ອລ້ຽງຊີບປະຈໍາວັນອາດເບິ່ງຂ້າມ ຫຼື ຖືເບົາ, ອັນເຮັດໃຫ້ມີຄວາມທຸກຍາກລົງຕື່ມ ແລະ ບໍ່ສາມາດຊ່ວຍຕົນເອງໄດ້.
- <u>ສໍາລັບທຸລະກິດ:</u> ການສະໜອງສະຖານທີ່ຢູ່ຫ່າງໄກ ເພື່ອດໍາເນີນທຸລະກິດອາດບໍ່ພຽງພໍ ເພື່ອຮັບປະກັນການຮັກສາລາຍຮັບຄືເກົ່າຍ້ອນປັດໄຈຕ່າງໆ. ວິທີການທີ່ດີ, ເຈົ້າຂອງທຸລະກິດ ຄວນສະໜອງທາງເລືອກ ເພື່ອເຮັດໃຫ້ເຂົາເຈົ້າປະເມີນເອງໄດ້ວ່າທຸລະກິດທີ່ມີຢູ່ນັ້ນ ແມ່ນຈະສາມາດຟື້ນຟູໄດ້ບໍ່ ຫຼື ວ່າຄວນຈະເລືອກເອົາທຸລະກິດໃໝ່. ໃນກໍລະນີເສດຖະກິດທີ່ບໍ່ເປັນລະບົບ, ການຍົກຍ້າຍໄປຢູ່ໄກນັ້ນຈະເຮັດໃຫ້ຊາວຄ້າຂາຍ ອອກຈາກລະບົບການຄ້າທີ່ຕົນສ້າງຂຶ້ນແລ້ວ, ເຊິ່ງເຮັດໃຫ້ມີຄວາມສ່ຽງ ທີ່ຈະທຸກຍາກລົງ. ຖ້າບໍ່ໄດ້ຮັບອະນຸຍາດ ແລະ ກິດຈະກໍາຫາກເຄື່ອນຍ້າຍໄດ້, ຊາວຄ້າຂາຍອາດຈະບໍ່ມີຄວາມເສຍຫາຍຫຼາຍ ເພາະບໍ່ມີຊັບສິນຄົງທີ່ອັນໃດໄດ້ຖືກເສຍໄປ. ເຖິງວ່າເຂົາເຈົ້າສາມາດຍົກຍ້າຍອຸປະກອນໄປຢູ່ບ່ອນອື່ນໄດ້ກໍຕາມ, ເຂົາເຈົ້າກໍອາດ ຈະຍັງຫ່າງໄກຈາກສະຖານນີລົດເມ, ສະຖານທີ່ຊຸມນຸມຊົນ, ຫຼື ເຂດທີ່ມີລູກຄ້າຢູ່ໜາແໜ້ນ. ເມື່ອໂຄງການດັ່ງກ່າວ ບໍ່ສາມາດຮັບປະກັນໃຫ້ມີລາຍຮັບຕະ

ຫຼອດໄປ, ມັນອາດເປັນວິທີການທີ່ດີກວ່າ ທີ່ຈະເຮັດໃຫ້ຊາວຄ້າຂາຍເຫຼົ່ານີ້, ເຖິງຈະສູນເສຍຊັບສິນກໍຕາມ, ແຕ່ຍັງມີໂອກາດຮັກສາລາຍຮັບຄືເກົ່າ. ວິທີການ ທີ່ຈະບັນລຸເປົ້າໝາຍ ໂດຍກົງທີ່ສຸດນັ້ນ ແມ່ນການຈັດຫາຕະຫຼາດ ສຳລັບຊາວຄ້າຂາຍເຫຼົ່ານີ້ ຢູ່ໃກ້ຄຽງກັບເຂດທີ່ມີໂຄງລ່າງ ຫຼື ເຂດຈັດສັນ ຫຼື ທັງສອງບ່ອນ.

## ອຸປະສັກໃນເຂດຍົກຍ້າຍຈັດສັນ ເພື່ອຮັກສາລາຍຮັບຄືເກົ່າ

ເຖິງແມ່ນວ່າການວາງແຜນການຍົກຍ້າຍຈັດສັນປະຊາຊົນສາມາດກຳນົດ ແລະ ແກ້ໄຂບັນຫາຕ່າງໆຊຶ່ງບາງຄັ້ງ ກໍມີຜົນກະທົບຕໍ່ການຮັກສາລາຍຮັບເຂົາເຈົ້າ ຫຼັງຈາກການຍົກຍ້າຍ. ການອຸດໜູນ ສຳລັບ ໄລຍະຂ້າມຜ່ານ ຄວນລວມເຂົ້າໃນມູນຄ່າໂຄງການທັງໝົດ, ຄວນມີທາງເລືອກໃຫ້ ຖ້າການແບ່ງເຂດໃນບ່ອນຈັດສັນໃໝ່ ຫາກມີຜົນກະທົບຕໍ່ກິດຈະກຳການກໍ່ສ້າງລາຍຮັບຂະໜາດຫນ້ອຍ ແລະ ທີ່ດິນເອກກະຊົນ ຫຼືຂອງຊຸມຊົນ ເພື່ອ ທົດແທນດິນສວນຄົວ. ໃນບາງກໍລະນີ, ມັນເປັນວິທີການທີ່ດີ ທີ່ຈະກຳນົດໂອກາດ ຈາກການຍົກຍ້າຍຈັດສັນດັ່ງກ່າວ ເພື່ອປັບປຸງຖານະຂອງແມ່ຍິງ (ຮັບປະກັນໃຫ້ມີສິດຮ່ວມ ຕໍ່ຊັບສິນທີ່ປ່ຽນແທນ).

# ໝວດທີ 20 ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ແລະການຍົກຍ້າຍຈັດສັນປະຊາຊົນ

ດຳລັດ 192 ໄດ້ເນັ້ນໜັກເຖິງຄວາມຈຳເປັນ ທີ່ຈະຕ້ອງໃຫ້ການຊ່ວຍເຫຼືອພິເສດແກ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ທີ່ຖືກກະທົບຈາກໂຄງການພັດທະນາ. ກຸ່ມຄົນດັ່ງກ່າວທີ່ໄດ້ກຳນົດໄວ້ໃນດຳລັດມີຄື ດັ່ງນີ້:

- ຄອບຄົວຂອງຜູ້ທີ່ມີລະດັບຊີວິດການເປັນຢູ່ຕ່ຳກວ່າລະດັບຄວາມທຸກຍາກແຫ່ງຊາດ ແລະ ຜູ້ທີ່ຖືກກະທົບຢ່າງຫລວງຫລາຍຈາກໂຄງການ ແລະຄາດວ່າ ຈະຕົກທຸກໄດ້ຍາກລົງຕ່ຳກວ່າຂີດຄວາມທຸກຍາກແຫ່ງຊາດ;
- ຄອບຄົວຂອງຄົນເຖົ້າແກ່ ຊຶ່ງຂາດການຊ່ວຍເຫລືອ ແລະ ຄອບຄົວຂອງຄົນພິການ ໂດຍບໍ່ມີສະມາຊິກທີ່ມີລາຍຮັບ,
- ຄອບຄົວທີ່ບໍ່ມີຄວາມໝັ້ນຄົງຫລືມີໜ້ອຍ ໃນການມີສິດຄຸ້ມຄອງທີ່ດິນ,
- ຄອບຄົວທີ່ບໍ່ມີດິນ ແລະ ບໍ່ມີວິທີໄດ້ຮັບການສະໜັບສະໜູນແບບປະຈຳ ແລະໝັ້ນຄົງ,
- ຄອບຄົວແມ່ຮ້າງ-ນາງໝ້າຍ ທີ່ບໍ່ມີວິທີທາງໄດ້ຮັບການສະໜັບສະໜູນແບບໝັ້ນຄົງ.

ທຸກປະເພດທີ່ກ່າວມາຂ້າງເທິງນີ້ ມີລັກສະນະພົ້ນເດັ່ນອັນໜຶ່ງ ຄືຢູ່ໃນກຳລະນີຄົນທຸກຍາກ. ຄອບຄົວທີ່ບໍ່ໄດ້ມີການຊ່ວຍເຫຼືອ ຫຼື ຄອບຄົວທີ່ບໍ່ມີໃຜມີລາຍຮັບນັ້ນ ເຫັນວ່າຈະບໍ່ມີລາຍຮັບແບບໝັ້ນຄົງຫຍັງເລີຍ. ລາຍຮັບຂອງຄອບຄົວ, ຊັບສິນທີ່ມີ ແລະ ມາດຕະຖານຊີວິດເປັນຢູ່ ເປັນມາດຕະຖານສຳຄັນ ເພື່ອກຳນົດຄອບຄົວທີ່ບໍ່ສາມາດຊ່ວຍຕົນເອງໄດ້ ຍ້ອນຜົນກະທົບຈາກໂຄງການພັດທະນາໃນໄລຍະຍາວ. ຕໍ່ໄປນີ້ ຈະໄດ້ຍົກບັນຫາຂອງກຸ່ມຄົນທຸກຍາກໃນໂຄງການພັດທະນາ ແລະ ສະເໜີໃຫ້ເຫັນບາງມາດຕະການ ເພື່ອຫຼຸດຜ່ອນຄວາມທຸກຍາກໃນກຸ່ມຄົນດັ່ງກ່າວ.

## 20.1. ກຸ່ມຄົນທຸກຍາກ

ດຳລັດ 192 ເມື່ອສຸມໃສ່ແກ້ໄຂບັນຫາຜົນກະທົບທາງລົບຈາກໂຄງການພັດທະນາ ຍ້ອນການເວນຄືນຊັບສິນ, ໄດ້ລວມເອົາບັນຫາຢ່າງກ້ວາງຂວາງທາງດ້ານສັງຄົມ. ການຫຼຸດຜ່ອນຄວາມທຸກຍາກ ແລະ ເຮັດໃຫ້ຜູ້ທີ່ຖືກກະທົບສາມາດປັບປຸງລາຍຮັບ ແລະ ຊີວິດການປັນຢູ່ນັ້ນ ເປັນຄາດໝາຍລວມ. ຄວາມທຸກຍາກແມ່ນມີຫຼາຍດ້ານນັບຕັ້ງແຕ່ມີລາຍຮັບຕ່ຳທາການບໍລິໂພກ, ການຂາດເຂີນການບໍລິການດ້ານສຸກຂະພາບ ແລະ ການສຶກສາຈົນຮອດຄວາມສະຫວັດດີພາບທາງດ້ານຈິດໃຈເຊັ່ນ ຄວາມບໍ່ປອດໄພ, ຄວາມບໍ່ມີສິດ ແລະ ການຢູ່ນອກສັງຄົມ. ມັນແມ່ນພື້ນຖານທີ່ສຸດຂອງຄວາມທຸກຍາກ ຄືການຂາດຊັບສິນດ້ານວັດຖຸ, ດ້ານສັງຄົມ ແລະ ດ້ານຈິດໃຈ. ຢ່າງໃດກໍຕາມ, ໃນຕົວຈິງລະດັບລາຍຮັບ, ການເຂົ້າເຖິງການສຶກສາພື້ນຖານ ແລະ ສຸຂະພາບ, ນ້ຳ ແລະ ສຸຂະອະນາໄມ, ການມີວຽກເຮັດງານທຳ ແລະ ຄ່າແຮງງານ ແມ່ນມາດຕະການຈັດຕັ້ງປະຕິບັດຕົວຈິງ ແລະ ຖືວ່າເປັນອົງປະກອບທີ່ສຳຄັນສຳລັບການວາງແຜນການຮອບດ້ານ ເພື່ອຫຼຸດຜ່ອນຄວາມທຸກຍາກ. ສ່ວນການທົດແທນຄ່າເສຍຫາຍ, ການອຸດໜູນ ແລະ ການຊ່ວຍເຫຼືອອື່ນໆ ອາດໄດ້ແກ້ໄຂທັນທີກັບບັນຫາການສູນເສຍຊັບສິນໃນໂຄງການໃດໜຶ່ງ. ມາດຕະການຟື້ນຟູເສດຖະກິດ ແນໃສ່ການລົງທຶນທາງດ້ານວັດຖຸ ໂດຍມີຈຸດສຸມສູງຂຶ້ນ ເພື່ອລົບ ລ້າງຄວາມທຸກຍາກ ແລະ

ບັນລຸຄາດໝາຍໃນໄລຍະຍາວ ໃນການປັບປຸງລາຍຮັບ ແລະ ມາດຕະຖານຊີວິດຂອງຄອບຄົວແບບໝັ້ນຄົງ. ດັ່ງນັ້ນ, ຈິດໃຈຂອງດຳລັດ 192 ຈຶ່ງມີບົດບາດສຳຄັນ ໃນການແກ້ໄຂບັນຫາຄວາມທຸກຍາກໃນໂຄງການທີ່ມີບັນຫາການຍົກຍ້າຍຈັດສັນປະຊາຊົນ.

ດຳລັດ 192 ໄດ້ກຳນົດຄວາມຈຳເປັນທີ່ຕ້ອງເອົາໃຈໃສ່ເປັນພິເສດ ຕໍ່ຄວາມຕ້ອງການ ຂອງຜູ້ທີ່ຖືກກະທົບທີ່ທຸກຍາກທີ່ສຸດ ຄືຜູ້ທີ່ບໍ່ມີໃບຢັ້ງຢືນກຳມະສິດຂອງຊັບສິນໃດໜຶ່ງ, ຄອບຄົວແມ່ຮ້າງນາງໝ້າຍ ແລະ ກຸ່ມຄົນອື່ນໆ ທີ່ບໍ່ສາມາດຊ່ວຍຕົນເອງໄດ້ ລວມທັງກຸ່ມຊົນເຜົ່າ ແລະ ການຊ່ວຍເຫຼືອອື່ນໆທີ່ເໝາະສົມ ເພື່ອຊ່ວຍເຂົາເຈົ້າປັບປຸງສະພາບຂອງຕົນໃຫ້ດີຂຶ້ນ. ດັ່ງນັ້ນ ດຳລັດ 192 ຈຶ່ງໄດ້ມີການການຊ່ວຍເຫຼືອເພີ້ມແກ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ລວມທັງຜູ້ທີ່ຢູ່ໃນກຸ່ມຄົນທຸກຍາກ ນອກຈາກຄວາມຈຳເປັນຕ້ອງການມີການສ້າງລາຍຮັບ. ອີກດ້ານໜຶ່ງ, ລັດຖະບານ ສປປລາວ ຍັງໄດ້ມີຍຸດທະສາດການຫຼຸດຜ່ອນຄວາມທຸກຍາກ ເພື່ອແກ້ໄຂຄວາມທຸກຍາກ ໃນທົ່ວປະເທດ. ມັນມີຄວາມຈຳເປັນອັນຈະແຈ້ງ ເຊິ່ງນະໂຍບາຍ ແລະ ຂັ້ນຕອນການຍົກຍ້າຍຈັດສັນປະຊາຊົນ ຕ້ອງໄດ້ມີການເຊື່ອມຍົງຢ່າງສະໜິດແໜ້ນກັບ ຍຸດທະສາດລົບລ້າງຄວາມທຸກຍາກຂອງ ສປປລາວ. ຍັງໄດ້ມີຍຸດທະສາດການຫຼຸດຜ່ອນຄວາມທຸກຍາກຂອງ ສ ປປ ລາວ. ໄປພ້ອມໆກັບຄວາມເອົາໃຈໃສ່ນຳການຫລຸດຜ່ອນຄວາມທຸກຍາກ, ຂັ້ນຕອນປະຕິບັດງານ ແມ່ນຄວນໄດ້ກຳນົດຄວາມຈຳເປັນທີ່ຕ້ອງມີຄວາມພະຍາຍາມທີ່ມີຈຸດສຸມ ເພື່ອປັບປຸງສະພາບຂອງຄົນທຸກແລະກຸ່ມຄົນອື່ນໆທີ່ບໍ່ສາມາດຊ່ວຍຕົນເອງໄດ້ ໃຫ້ຢູ່ໃນລະດັບຕ່ຳສຸດທີ່ຮັບໄດ້. ການວາງຄາດໝາຍທີ່ວັກແທກໄດ້ ເພື່ອປັບປຸງບັນຫາດັ່ງກ່າວ ຈະຊ່ວຍໃຫ້ມີການປະກອບທຶນຮອນທີ່ພຽງພໍ ແລະ ມີແຜນການເຄື່ອນໄຫວ ທີ່ເໝາະສົມໃນໂຄງການ.

ດຳລັດ 192 ຍັງໄດ້ກຳນົດວ່າ ເພື່ອເຮັດໃຫ້ການເຄື່ອນໄຫວທີ່ມີເປົ້າໝາຍໄດ້ຮັບຜົນດີ ແລະ ເພື່ອແກ້ໄຂບັນຫາສັງຄົມອື່ນໆໃນໂຄງການໜຶ່ງ, ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ຈາກຜົນກະທົບທີ່ໄດ້ຮັບແມ່ນຈະຕ້ອງ ໄດ້ກຳນົດໃຫ້ອອກມາໃຫ້ລະອຽດ, ຂໍ້ມູນຂ່າວສານທີ່ຈຳເປັນທີ່ໄດ້ເກັບກຳມາ, ແລະ ສະພາບເສດຖະກິດ-ສັງຄົມ ຂອງເຂົາເຈົ້າໃຫ້ຮັບຮູ້ໄວ້ ແຕ່ໄລຍະຕົ້ນໆຂອງການກະກຽມໂຄງການ. ຕົວຊີ້ວັດສຳລັບຄວາມສ່ຽງທາງດ້ານເສດຖະກິດ ແລະ ສັງຄົມ ຈາກການຍົກຍ້າຍຈັດສັນປະຊາຊົນ ຄວນຖືເປັນທິດທາງ ເພື່ອຊອກຮູ້ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ແລະ ເພື່ອເກັບກຳເອົາຂໍ້ມູນຂ່າວສານທີ່ກ່ຽວຂ້ອງ. ມັນຈຳເປັນຕ້ອງໄດ້ດຳເນີນການສຳຫຼວດພົນລະເມືອງ ແລະ ການສຳຫຼວດພື້ນຖານຢ່າງຖືກຕ້ອງ ເພື່ອເອົາມາວິໄຈເລິກເຊິ່ງ ທາງດ້ານລັກສະນະເສດຖະກິດ ແລະ ສັງຄົມ ຂອງກຸ່ມຄົນດັ່ງກ່າວ ລວມທັງກຸ່ມຄົນທຸກຍາກ. ເພື່ອບັນລຸຈຸດປະສົງທີ່ວາງໄວ້ໃນນະໂຍບາຍຂອງໂຄງການໃດໜຶ່ງ, ມັນຈຳເປັນຕ້ອງເຮັດໃຫ້ແຜນການ ມີລັກສະນະດີ ທັງມີຈຸດສຸມເພື່ອຫຼີກລ້ຽງຄວາມສ່ຽງທາງດ້ານສັງຄົມທີ່ອາດເກີດຂຶ້ນນອກຈາກມາດຕະການ ຫຼຸດຜ່ອນຜົນກະທົບທີ່ຕ້ອງໄດ້ເຮັດ. ແຜນການເຄື່ອນໄຫວດັ່ງກ່າວ ຄວນຈັດໃຫ້ປົກອ້ອມ 4 ບັນຫາລວມ ດັ່ງຕໍ່ໄປນີ້:

(i) ຫຼຸດຜ່ອນຄວາມທຸກຍາກໃນການເຂົ້າເຖິງໂອກາດ ແລະ ການຂະຫຍາຍໂອກາດໃຫ້ແກ່ຜູ້ທຸກຍາກ ສາມາດເຂົ້າເຖິງຕະຫຼາດ, ການຄ້າ ແລະ ການມີວຽກເຮັດງານທຳ;

(ii) ປັບປຸງການເຂົ້າເຖິງ ແລະ ສະໜອງການບໍລິການທາງດ້ານສັງຄົມ ອັນຈຳເປັນໃຫ້ແກ່ເຂົາເຈົ້າ;

(iii) ສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າ ດ້ວຍການບໍລິຫານທີ່ດີ, ຂະບວນການມີສ່ວນຮ່ວມທີ່ຖືກຕ້ອງ ແລະ ການຈັດຕັ້ງທີ່ມີປະສິດທິພາບຂອງຄົນທຸກຍາກ; ແລະ

(iv) ເພີ່ມຄວາມອາດສາມາດຊ່ວຍເຫລືອຕົນເອງໃຫ້ຄົນທຸກຍາກມີຫລາຍຂື້ນ ໂດຍກໍ່ສ້າງພື້ນຖານວັດຖຸຂອງສັງຄົມ ຕົວຢ່າງ ຍຸດທະສາດກໍ່ສ້າງພື້ນຖານວັດຖຸ ເຊັ່ນ ເອົາດິນມາແທນດິນ, ສ້າງເຮືອນປ່ຽນແທນ ແລະ ເພີ່ມຄວາມປອດໄພຕໍ່ກຳມະສິດຄອບຄອງຫຼາຍຂື້ນ.

ການວາງແຜນການ ຄວນມີການເຂົ້າຮ່ວມແລະການປຶກສາຫາລືຢ່າງກ້ວາງຂວາງກັບຜູ້ທຸກຍາກ ເພື່ອຮັບປະກັນວ່າ ທຸກໆຄວາມຕ້ອງການ, ບູລິມະສິດ ແລະ ຄວາມມັກຄວາມພໍໃຈຂອງເຂົາເຈົ້າ ໄດ້ຖືກແກ້ໄຂ ແລະ ມີຄວາມໂປ່ງໃສ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມ ແລະ ຜູ້ກ່ຽວຂ້ອງຕົ້ນຕໍ.

## ແຜນການດຳເນີນກິດຈະກຳທີ່ຄວນປະຕິບັດ

ແຜນການເພື່ອແກ້ໄຂຄວາມທຸກຍາກ ຕາມກອບຂອງດຳລັດ 192 ແມ່ນອາດຂື້ນກັບກິນໄກທີ່ມີຢູ່ ເພື່ອລວມເອົາຍຸດທະສາດທີ່ອີງໃສ່ທີ່ດິນ ແລະ ຍຸດທະສາດ ບໍ່ອີງໃສ່ທີ່ດິນນັ້ນເຂົ້ານຳກັນ ເພື່ອກຳນົດການໃຫ້ສິດທິໄດ້ຮັບການທົດແທນຄ່າເສຍຫາຍ ແລະ ການອຸດໜູນ, ມາດຕະການສ້າງລາຍຮັບ, ການຮັກສາສາຍພົວພັນທາງດ້ານສັງຄົມ ແລະ ຮີດຄອງປະເພນີທີ່ມີຢູ່, ແລະ ຟື້ນຟູໂຄງລ່າງຂອງຊຸມຊົນ. ຍຸດທະສາດທີ່ອີງໃສ່ທີ່ດິນຈະເນັ້ນໜັກການຮັບປະກັນຄວາມປອດໄພໃນກຳມະສິດໃຫ້ມີຫຼາຍຂື້ນ, ການສະໜອງທີ່ດິນ ແລະ ເຮືອນ ຕາມມາດຕະຖານທີ່ຮັບໄດ້ຕ່ຳສຸດ, ມີຄວາມສະດວກໃນການເຂົ້າເຖິງສິ່ງອຳນວຍຄວາມສະດວກ ແລະ ການບໍລິການຂອງລັດ ຫຼາຍກວ່າເກົ່າ ຢ່າງໜ້ອຍກໍໃຫ້ໄດ້ມາດຕະຖານທີ່ສາມາດຮັບຮອງເອົາໄດ້ ແລະ ວິທີເອົາດິນມາປ່ຽນດິນໃຫ້ຜູ້ທີ່ຖືກກະທົບຫລາຍ ຍ້ອນສູນເສຍທີ່ດິນທຳມາຫາກິນ.

ໃນຕົວເມືອງ, ແຜນການດຳເນີນກິດຈະກຳ ຍັງຕ້ອງລວມເອົາທັງການປັບປຸງໂຄງລ່າງຂອງລັດ ໃນເຂດທີ່ປະຊາຊົນມີລາຍຮັບຕ່ຳ ແລະ ເຂດທີ່ມີຄົນລັກລອບເຂົ້າມາຢູ່ ຕາມຍຸດທະສາດປັບປຸງເຂດດັ່ງກ່າວໃຫ້ດີຂື້ນ, ສະໜອງເຮືອນໃໝ່ແທນໃນມາດຕະຖານທີ່ ສັງຄົມຮັບເອົາໄດ້ຕ່ຳສຸດ ແລະ ຄວາມປອດໄພຂອງກຳມະສິດ.

ຍຸດທະສາດທີ່ອີງໃສ່ອາຊີບອື່ນ ນອກຈາກນຳໃຊ້ທີ່ດິນ ອາດລວມເອົາທັງຄວາມເອົາໃຈໃສ່ນຳສິດທິຕາມປະເພນີ ແລະ ຮີດຄອງທາງດ້ານວັດທະນະທຳຂອງຊົນເຜົ່າ, ການສະໜອງເສັ້ນທາງໄປມາຫາສູ່ທີ່ໄດ້ຮັບການປັບປຸງໃຫ້ດີຂື້ນ ກັບການສະໜອງທຶນຮອນຂະໜາດນ້ອຍ ແລະ ໃຫ້ສິນເຊື່ອຂະໜາດນ້ອຍທີ່ສາມາດຮັບເອົາໄດ້, ດຳເນີນການຝຶກອົບຮົມ ສຳລັບວຽກໃໝ່ ແລະ ປັບປຸງການເຂົ້າເຖິງຕະຫຼາດ ແລະ ບ່ອນເຮັດວຽກ. ຈາກການພັດທະນາສະເພາະ, ອາດມີໂອກາດຫຼີກລ້ຽງຄວາມສ່ຽງທາງດ້ານເສດຖະກິດ ແລະ ສັງຄົມ ທີ່ໂຄງການອາດສ້າງຂື້ນ ແລະ ລວມເອົາວຽກຍົກຍ້າຍຈັດສັນປະຊາຊົນ ເຂົ້າໃນຂະບວນການພັດທະນາ.

(i) ໃນໂຄງການ ທີ່ມີການສູນເສຍບ່ອນຜະລິດ, ຜູ້ທີ່ຖືກກະທົບຫຼາຍ ຊຶ່ງອາດແມ່ນຜູ້ທີ່ສູນເສຍທີ່ດິນ ທັງໝົດແມ່ນຄວນໄດ້ຮັບທີ່ດິນປ່ຽນແທນ ໂດຍມີຜະລິດຕະພາບເທົ່າທຽມກັບອັນເກົ່າ. ຄອບຄົວຖືກກະທົບຫລຸດລົງແດ່ ຍ້ອນທີ່ດິນທີ່ຍັງເຫຼືອມີໜ້ອຍ ກໍຄວນໄດ້ຮັບທີ່ດິນໃໝ່ ໃນຂະໜາດພຽງພໍ ແລະ ສາມາດຜະລິດໄດ້ ເພື່ອໃຫ້ຄອບຄົວທີ່ຖືກກະທົບນັ້ນ ສາມາດມີລາຍຮັບໃນລະດັບຕ່ຳສຸດທີ່ຮັບໄດ້ ແລະ ເຮັດໃຫ້ຊີວິດການເປັນຢູ່ເຂົາເຈົ້າມີຄວາມໝັ້ນຄົງ.

(ii) ເມື່ອເຮັດໄດ້, ຊາວຜູ້ກະສິກອນທີ່ບໍ່ມີທີ່ດິນຫຼືຜູ້ເຊົ່າທີ່ດິນປູກຝັງ ກໍຄວນໄດ້ຮັບທີ່ດິນໃນຂະໜາດພຽງພໍສາມາດທຳມາຫາກິນໄດ້ໃນລະດັບຕ່ຳສຸດ ພ້ອມທັງໃຫ້ກຳມະສິດທີ່ດິນແກ່ເຂົາເຈົ້າ. ເມື່ອບໍ່ມີທີ່ດິນໃຫ້, ກໍຄວນຊ່ວຍໃຫ້ພວກກ່ຽວ ສາມາດສ້າງລາຍຮັບໄດ້ ໂດຍຊອກຫາວຽກເຮັດງານທຳໃໝ່ໃຫ້.

(iii) ໂຄງການທີ່ອອກແບບ ເພື່ອເລັ່ງໃສ່ລົບລ້າງຄວາມທຸກຍາກໃນຕົວເມືອງ ອາດລວມເອົາເຂດຕົວເມືອງ ບ່ອນຄົນມີລາຍຮັບຕໍ່າ ຫຼື ເຂດທີ່ມີການຂະຫຍາຍຕົວຕາມມີຕາມເກີດແບບຄວບຄຸມບໍ່ໄດ້. ຍຸດທະສາດ ເພື່ອແກ້ໄຂຄວາມທຸກຍາກໃນຕົວເມືອງ ໃນໂຄງການດັ່ງກ່າວ ອາດລວມເອົາການປັບປຸງໂຄງລ່າງ ແລະ ການບໍລິການ ໃຫ້ມວນຊົນໂດຍແມ່ນ "ຈັດສັນທີ່ດິນ" ຫຼື ວິທີການອື່ນໆທີ່ຄ້າຍຄືກັນນີ້ ແລະ ການພັດທະນາທີ່ອີງໃສ່ຊຸມຊົນ. ໃນໂຄງການທີ່ສຸມໃສ່ການປັບປຸງເຂດທີ່ມີຄົນລັກລອບເຂົ້າມາຢູ່, ຍຸດທະສາດ ອາດ ລວມເອົາການປັບປຸງໂຄງລ່າງ ແລະ ການບໍລິການໃຫ້ມວນຊົນກັບທີ່ ແລະ ຮັບປະກັນການໃຫ້ກໍາມະສິດຕໍ່ທີ່ດິນແກ່ເຂົາເຈົ້າ.

(iv) ໃນໂຄງການ ທີ່ບໍ່ສາມາດຫຼີກລ້ຽງການຍົກຍ້າຍ ແລະ ຈັດສັນພວກທີ່ລັກລອບເຂົ້າມາຢູ່ດິນລັດ ຍ້ອນໄດ້ຮັບຜົນກະທົບ, ການທົດແທນຄ່າເສຍຫາຍ ສໍາລັບໂຄງລ່າງຕາມມູນຄ່າປ່ຽນແທນເປັນເງິນສົດ ຫຼື ເອົາເຮືອນມາປ່ຽນ.ກໍຄວນໄດ້ຮັບປະກັນໃຫ້ມີເຮືອນນັ້ນ ຢູ່ໃນມາດຕະຖານທີ່ຮັບເອົາໄດ້ເຖິງແມ່ນວ່າຄ່າທົດແທນອາດລື່ນມູນຄ່າປ່ຽນແທນ.ຄວນຮ່າງຍຸດທະສາດຂຶ້ນບົນພື້ນຖານ "ຄວາມມັກຄວາມພໍໃຈທີ່ໄດ້ບອກມາ" ຂອງຜູ້ທີ່ຖືກກະທົບ.

(v) ເມື່ອໂຄງການ ຫາກກວມລວມເອົາການພັດທະນາເຂດຍົກຍ້າຍຈັດສັນປະຊາຊົນ ໂດຍແມ່ນໂຄງການປຸກເຮືອນໃຫ້, ຄຸນນະພາບ ແລະ ຂະໜາດຂອງເຮືອນ ແລະ ດິນ ກໍຄວນຢູ່ໃນມາດຕະຖານທີ່ຮັບເອົາໄດ້ ໃນທ້ອງຖິ່ນ ແລະ ເຂດຈັດສັນໃໝ່ນັ້ນ ແລະ ກໍຄວນມີສິ່ງອໍານວຍຄວາມສະດວກທາງດ້ານນໍ້າໃຊ້ ແລະ ການສຸກຂາອະນາໄມ ທີ່ໄດ້ມາດຕະຖານຕໍ່າສຸດ. ເມື່ອຜູ້ທີ່ຖືກກະທົບເຫັນດີນໍາແລ້ວ, ຈໍານວນ ທີ່ ເປັນການທົດແທນຄ່າເສຍຫາຍ ສໍາລັບໂຄງສ້າງທີ່ຖືກກະທົບ ແລະ ຊັບສິນຄົງທີ່ອື່ນໆ, ກໍອາດນໍາໃຊ້ຖືວ່າເອົາມາຈ່າຍຄ່າພັດທະນາ ແລະ ການປຸກເຮືອນ. ເຂດຍົກຍ້າຍຈັດສັນປະຊາຊົນ, ດີແທ້ຄວນມີວຽກເຮັດງານທໍາ ແລະ ກິດຈະກໍາ ທີ່ເປັນການສ້າງລາຍຮັບ.

(vi) ສໍາລັບຄອບຄົວທີ່ທຸກຍາກທີ່ສຸດ, ການຊ່ວຍເຫຼືອຟື້ນຟູເສດຖະກິດ ທີ່ບໍ່ກ່ຽວຂ້ອງກັບທີ່ດິນກໍບໍ່ຄວນຈໍາກັດແຕ່ການຟື້ນຟູລາຍຮັບເທົ່ານັ້ນ. ກົງກັນຂ້າມໂຄງການ ກໍຄວນແນໃສ່ປັບປຸງໂອກາດ ເພື່ອສະໜອງວຽກເຮັດງານທໍາ ແລະ ລາຍຮັບໃຫ້ແກ່ຄອບຄົວທຸກຍາກທີ່ຖືກກະທົບ ໃນລະດັບທີ່ສູງກວ່າຂີດຂອງຄວາມທຸກຍາກ. ຄ່າແຮງງານກໍຄວນໃຫ້ລື່ນ ຫຼື ຢ່າງໜ້ອຍກໍໃຫ້ເທົ່າກັບອັດຕາຕໍ່າສຸດໃນລະດັບທ້ອງຖິ່ນ.

(vii) ນອກຈາກ ການທົດແທນຄ່າເສຍຫາຍ ແລະ ການຮັບສິດຟື້ນຟູລາຍຮັບ ສໍາລັບຄອບຄົວທີ່ທຸກຍາກຫຼາຍໃນເຂດໂຄງການ. ຄວນມີການການຊ່ວຍເຫຼືອຕື່ມໃນໄລຍະຂ້າມຜ່ານ. ອັນນີ້ອາດກວມເອົາການໃຫ້ບູລິມະສິດ ໃນການເຂົ້າເຮັດວຽກຈາກໂຄງການ.

(viii) ເມື່ອໂຄງການໜຶ່ງສ້າງຄວາມເສຍຫາຍຕໍ່ຊັບສິນຂອງຊຸມຊົນ ຫຼື ຄວາມສ່ຽງ ທີ່ຈະເຮັດໃຫ້ສັງຄົມປ່ຽນແປງ, ຄວນມີມາດຕະການຮັກສາສາຍພົວພັນສັງຄົມທີ່ມີຢູ່ ແລະ ຟື້ນຟູຊັບສິນຂອງຊຸມຊົນ.

ທຸກແຜນການດໍາເນີນກິດຈະກໍາທີ່ສະເໜີມາ ແມ່ນນອນໃນກອບຂອງດໍາລັດ 192. ລາຍລະອຽດທີ່ກ່າວມານີ້ແມ່ນຍັງບໍ່ຄົບຖ້ວນເທື່ອ. ຍຸດທະສາດສະເພາະອາດມີຄວາມແຕກຕ່າງກັນໄປອີກ ອີງຕາມສະຖານທີ່ ແລະ ປະເພດຂອງໂຄງການ ແລະ ຜົນກະທົບຂອງມັນ. ຄວນສ້າງຍຸດທະສາດ ແລະ ທາງເລືອກທີ່ດີ ໂດຍການປຶກສາຫາລືກັບຜູ້ທີ່ຖືກກະທົບ ແລະ ການຕົກລົງເອົາຍຸດທະສາດຂັ້ນສຸດທ້າຍ ກໍຄວນໄດ້ອີງໃສ່ຄວາມມັກຄວາມພໍໃຈຂອງຜູ້ທີ່ຖືກກະທົບ ທີ່ໄດ້ບອກຂໍ້ມູນໃຫ້ຮູ້ເຊັ່ນດຽວກັນ.

# ເອກກະສານຄັດຕິດ

Àອ¡ະສານຄັດຕòດ 1

# ການສຶກສາຜົນກະທົບຕໍ່ສັງຄົມ ເບື້ອງຕົ້ນ[8]

# ລາຍການກວດກາຂໍ້ມູນຂ່າວສານກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ

ໂຄງການ: ________________________________________

ທີ່ຕັ້ງ: __________________________________________

**ຄາດຄະເນຈຳນວນປະຊາຊົນທີ່ຖືກກະທົບ[9] :** ____________________

**ປະເພດຜົນກະທົບ (ຄວາມສ່ຽງທາງດ້ານສັງຄົມ ແລະ ເສດຖະກິດ)[10]:**

| ຜົນກະທົບດ້ານສັງຄົມ | ແມ່ນ / ບໍ່ແມ່ນ / ອາດເປັນໄປໄດ້ / ບໍ່ກ່ຽວຂ້ອງ | ບ່ອນໃດເປັນໄປໄດ້,ໃຫ້ລາຍລະອຽດ (ຈ/ນ ຄອບຄົວ, ພື້ນທີ່ດິນ, ປະເພດສິ່ງປຸກສ້າງທີ່ ອາດຖືກກະທົບ) |
|---|---|---|
| • ການເວນຄືນທີ່ດິນ ມີຄວາມຈຳເປັນບໍ່[11] | | |
| • ມີຜູ້ອາໄສຢູ່ທີ່ດິນລັດທີ່ບໍ່ໄດ້ອະນຸຍາດບໍ່ | | |
| • ການສູນເສຍສິ່ງປຸກສ້າງ ຍ້ອນການຍົກຍ້າຍ | | |
| • ການຍົກຍ້າຍເນື່ອງຈາກສູນເສຍບ່ອນຜະລິດ | | |
| • ປະຊາຊົນທີ່ສູນເສຍວິທີທຳມາຫາກິນແລະລາຍໄດ້ (ຊົ່ວຄາວ/ຖາວອນ) | | |
| • ມີຄວາມສ່ຽງໃດແດ່ ທີ່ຈະເຮັດໃຫ້ຜູ້ຖືກກະທົບມີເສດຖະກິດຕົກຕ່ຳລົງ | | |
| • ຈະເຂົ້າຫາສິ່ງອຳນວຍຄວາມສະດວກ/ການບໍລິການພື້ນຖານ ຍາກບໍ່ (ຊົ່ວຄາວ/ຖາວອນ) | | |
| • ຜົນກະທົບຕໍ່ຜົນລະປູກ, ຕົ້ນໄມ້ແລະຊັບສິນຄົງທີ່ຕ່າງໆ | | |
| • ຜູ້ຢູ່ອາໄສ/ຜູ້ເຊົ່າ ທີ່ສູນເສຍຊັບສິນຄົງທີ່ອັນໃດໜຶ່ງ | | |

---

8 ຂໍ້ມູນຂ່າວສານສຳລັບການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ ຕ້ອງໄດ້ເກັບກຳໂດຍປຶກສາຫາລືແລະປະສານງານກັບເຈົ້າຂອງໂຄງການ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ຜູ້ນຳຂອງຊຸມຊົນທີ່ຖືກກະທົບ. ເມື່ອເຮັດໄດ້, ຕ້ອງໃຫ້ເວລາພຽງພໍສຳລັບການສົນທະນາກັບຊຸມຊົນທີ່ອາດໄດ້ຮັບຜົນກະທົບຈາກໂຄງການ.

9 ຈຳນວນປະຊາຊົນ ທີ່ອາດໄດ້ຮັບຜົນກະທົບຈາກໂຄງການ ໃຫ້ອີງໃສ່ວິທີການປະເມີນຜົນແບບເລັ່ງລັດ.

10 ມັນບໍ່ສາມາດເກັບກຳຂໍ້ມູນກ່ຽວກັບຜົນກະທົບບາງປະເພດທີ່ກ່າວມາເທິງນີ້ ສະເໝີໄປ ໃນໄລຍະເຮັດການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ. ແຕ່ວ່າຊ່ຽວຊານ ຄວນເອົາໃຈໃສ່ເປັນພິເສດຕໍ່ຜົນກະທົບປະເພດນີ້ ໃນຊ່ວງໄລຍະກະກຽມໂຄງການ.

11 ໃຫ້ມີແຜນທີ່ທີ່ຊີ້ແຈງ ສະຖານທີ່ແລະເຂດແດນຂອງໂຄງການ, ພື້ນທີ່ທັງໝົດ, ທາງເຂົ້າອອກ, ການນຳໃຊ້ທີ່ດິນຂ້າງຄຽງແລະອື່ນໆ.

| | | |
|---|---|---|
| • ການສູນເສຍຊັບສິນລວມຂອງຊຸມຊົນ | | |
| • ການສູນເສຍ ສາຍພົວພັນທາງດ້ານສັງຄົມ ແລະ ຂອງຊຸມຊົນທີ່ມີຢູ່ປັດຈຸບັນ | | |
| • ການສູນເສຍຊັບສິນທາງດ້ານວັດທະນະທຳ, ການສູນເສຍສະຖານທີ່ປະຫວັດສາດ ຫຼື ບ່ອນທີ່ເປັນສັກກາລະ ບູຊາ | | |

**ຜົນກະທົບຕໍ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້, ຖ້າມີ:**

| **ຜົນກະທົບດ້ານສັງຄົມ** | **ແມ່ນ / ບໍ່ແມ່ນ / ອາດເປັນໄປໄດ້ / ບໍ່ກ່ຽວຂ້ອງ** | **ໝາຍເຫດ: ເມື່ອເປັນໄປໄດ້ ບອກຈຳນວນຄອບຄົວແລະຈຳນວນຄົນ** |
|---|---|---|
| • ກຸ່ມຜູ້ທຸກຍາກທີ່ຖືກກະທົບ | | |
| • ຄອບຄົວແມ່ຮ້າງນາງໝ້າຍ ທີ່ຖືກກະທົບ | | |
| • ຊົນເຜົ່າ ທີ່ຖືກກະທົບ | | |
| • ກຸ່ມອື່ນໆ[12] ທີ່ຖືກກະທົບ | | |

**ຂໍ້ຈຳກັດທາງດ້ານການຈັດຕັ້ງ, ຖ້າມີ:**

| **ຜົນກະທົບດ້ານສັງຄົມ** | **ແມ່ນ / ບໍ່ແມ່ນ / ອາດເປັນໄປໄດ້ / ບໍ່ກ່ຽວຂ້ອງ** | **ໝາຍເຫດ** |
|---|---|---|
| • ຕ້ອງມີການປະສານງານກັບ ອົງການປົກຄອງ ລະດັບທ້ອງຖິ່ນ ບໍ | | |
| • ເຈົ້າຂອງໂຄງການ ມີຄວາມສາມາດໃນການຍົກຍ້າຍຈັດສັນປະຊາຊົນ ຫຼື ບໍ. | | |
| • ມີຄວາມຕ້ອງການຝຶກອົບຮົມແລະສ້າງຄວາມສາມາດແນວໃດແດ່ ກ່ອນຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ /ແຜນພັດທະນາຊົນເຜົ່າ | | |

ອະທິບາຍຫຍໍ້ກ່ຽວກັບໂຄງການ ທີ່ສະແດງເຖິງການມີກຳມະສິດຕໍ່ທີ່ດິນ ແລະ ເຂດໂຄງການ[13]:

---

[12] ກຸ່ມນີ້ ອາດລວມເອົາ ຜູ້ເສຍອົງຄະ, ແຮງງານເດັກ, ແຮງງານແບບຂ້າທາດແລະອື່ນໆ.

[13] ຖ້າວ່າທີ່ດິນໄດ້ຄອບຄອງແລ້ວ ໃຫ້ບອກປີທີ່ໄດ້ມາ, ຈຳນວນເຈົ້າຂອງ, ສິ່ງປຸກສ້າງແລະຊັບສິນຄົງທີ່ອື່ນໆ, ອັດຕາທີ່ໄດ້ຈ່າຍມາ, ຖ້າມີ, ລວມທັງການອຸດໜູນແລະຊ່ວຍເຫຼືອອື່ນໆທີ່ໄດ້ຕອບສະໜອງ ໃຫ້ເຈົ້າຂອງ. ໃນກໍລະນີ ທີ່ທີ່ດິນຂອງລັດທີ່ 'ຖືກເວນເອົາໃຫ້ລັດຄືນ' ຈາກຜູ້ອື່ນ, ໃຫ້ບອກປີທີ່ລັດໄດ້ເວນ ຄືນ, ໃຫ້ລາຍລະອຽດກ່ຽວກັບ ການນຳໃຊ້ທີ່ດິນໃນເມື່ອກ່ອນ, ຈຳນວນຜູ້ຄອບຄອງ, ຜູ້ຄອບຄອງທີ່ດິນ ມີການສູນເສຍລາຍໄດ້ແລະມີການທົດແທນຄ່າເສຍຫາຍ ຫຼື ການຊ່ວຍເຫຼືອເຂົາເຈົ້າຈາກການສູນເສຍ ດັ່ງກ່າວ, ຖ້າມີ.

# ລາຍການທົ່ວໄປສຳລັບຂໍ້ມູນຂ່າວສານທີ່ຕ້ອງການເພື່ອເຮັດແຜນການຍົກຍ້າຍຈັດສັນປະຊາຊົນ

- ຊື່ແລະທີ່ຢູ່ຂອງຜູ້ທີ່ຖືກກະທົບຈາກໂຄງານ (ມີຮູບຈະເປັນການດີຫຼາຍ)
- ຂະໜາດຂອງຄອບຄົວ
- ພື້ນທີ່ດິນທັງໝົດທີ່ຖືກກະທົບ ຈັດຕາມປະເພດ ແລະ ການນຳໃຊ້
- ຈຳນວນ, ລວມ, ແລະ ຈຳນວນຫຼັງເຮືອນທັງໝົດ ແລະ ສິ່ງປຸກສ້າງອື່ນໆ ທີ່ຖືກກະທົບ
- ຖານະດ້ານການຄອບຄອງທີ່ດິນ ແລະ ສິ່ງປຸກສ້າງ
- ປະເພດເອກະສານ ທີ່ຢັ້ງຢືນການຄອບຄອງທີ່ດິນ
- ການສູນເສຍຕົ້ນໄມ້ ຈັດຕາມແຕ່ລະຊະນິດ ແລະ ຜົນລະປູກ
- ສິ່ງປຸກສ້າງທີ່ຖືກກະທົບ (ຖາວອນ, ເຄິ່ງຖາວອນ, ຊົ່ວຄາວ) ລວມທັງລາຍລະອຽດກ່ຽວກັບວັດສະດຸທີ່ເອົາມາສ້າງ
- ຖານະໃນດ້ານຄອບຄອງກຳມະສິດ ຂອງຄົນງານ, ເຈົ້າຂອງຫຼືກຳມະກອນ, ຖ້າມີ
- ການສູນເສຍລາຍຮັບແລະວຽກເຮັດງານທຳ
- ກຳນົດການສູນເສຍຕ່າງໆ ທີ່ມີລັກສະນະຊົ່ວຄາວແລະຖາວອນ
- ຈຳນວນຄອບຄົວທີ່ຖືກກະທົບໜ້ອຍທີ່ຄາດຄະເນໄວ້
- ຈຳນວນຄອບຄົວທີ່ຖືກກະທົບໜັກໜ່ວງແລະຕ້ອງໄດ້ຍົກຍ້າຍ
- ຄວາມມັກບ່ອນຍ້າຍໄປຢູ່ຂອງປະຊາຊົນທີ່ຖືກກະທົບ
- ອາຊີບຫຼັກ ແລະ ລາຍໄດ້ປະຈຳເດືອນຂອງຄອບຄົວ ຈາກແຫຼ່ງຕົ້ນຕໍ
- ໄລຍະເວລາທີ່ອາໄສຢູ່ໃນເຂດນັ້ນ ແລະ ໃນເຮືອນ-ອາຄານ
- ຄ່າເຊົ່າຫຼືຄ່າມັດຈຳ ຂອງຜູ້ທີ່ຢູ່ໃນທີ່ດິນ/ຜູ້ເຊົ່າ
- ຄວາມສາມາດນຳໃຊ້ໄດ້ຕໍ່ໄປ ຂອງທີ່ດິນແລະອາຄານທີ່ເຫຼືອຢູ່
- ຈຳນວນ ທຸລະກິດທີ່ຖືກກະທົບ, ຖ້າມີ ໃຫ້ຈັດຕາມປະເພດ
- ລາຄາດິນ ທີ່ຊື້ຂາຍກັນໃນບໍລິເວນໃກ້ຄຽງ ສຳລັບທີ່ດິນທີ່ມີຄຸນນະພາບຜະລິດຄືກັນ ແລະ ຖານະການຄອບຄອງ
- ລາຄາສຳລັບສິ່ງປຸກສ້າງຕ່າງໆ ທີ່ກົມກອງຫຼືແຂວງ ໄດ້ກຳນົດໃຫ້
- ລາຄາຕະຫຼາດໂດຍສົມທຽບສຳລັບສິ່ງປຸກສ້າງປະເພດ ແລະ ລະດັບຄືກັນ
- ເອກະສານຢັ້ງຢືນກຳມະສິດຕໍ່ທີ່ດິນແລະເຈົ້າຂອງເຮືອນ/ອາຄານ ແລະໃບຈ່າຍພາສີ
- ລັກສະນະເສດຖະກິດ-ສັງຄົມຂອງປະຊາຊົນໃນບ້ານເຈົ້າພາບ
- ຂະໜາດ ແລະລັກສະນະຂອງບ່ອນທີ່ຈະຍ້າຍໄປຢູ່
- ຂໍ້ມູນຂ່າວສານ ກ່ຽວກັບແຜນຟື້ນຟູລາຍຮັບຢູ່ໃນເຂດອ້ອມແອ້ມໂຄງການ

**ເອກກະສານຄັດຕິດ 3**

# ໂຄງຮ່າງລວມກ່ຽວກັບແຜນການຍົກຍ້າຍຈັດສັນປະຊາຊົນ

## 1) ຄຳນຳ

- ອະທິບາຍກ່ຽວກັບສ່ວນປະກອບຕ່າງໆຂອງໂຄງການ.
- ສັງລວມລາຍລະອຽດກ່ຽວກັບຜົນກະທົບທາງລົບ ແລະ ການເວນຄືນເອົາຊັບສິນ.
- ກຳນົດຜູ້ມີສ່ວນຮ່ວມຫຼັກ ລວມທັງກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ຊຶ່ງອາດຈະທຸກຍາກລົງ ຫຼື ຍິ່ງອ່ອນແອລົງ.
- ຊີ້ແຈງມາດຕະການຕ່າງໆທີ່ຕ້ອງໄດ້ດຳເນີນ ເພື່ອຫຼຸດຜ່ອນຜົນກະທົບທາງລົບໃຫ້ໜ້ອຍສຸດ.

## 2. ຜົນການສຳຫຼວດພົນລະເມືອງ ແລະ ການສຳຫຼວດເສດຖະກິດ-ສັງຄົມ

- ການທົບທວນຄືນຄຸນລັກສະນະທາງດ້ານເສດຖະກິດ-ສັງຄົມຂອງຜູ້ທີ່ຖືກກະທົບຈາກໂຄງການ ເຊັ່ນ: ການກະແຈກກະຈາຍຕາມພື້ນທີ່, ຂະໜາດແລະໂຄງປະກອບຂອງຄອບຄົວ; ໂຄງຮ່າງເກນອາຍຸ-ເພດ; ລະດັບລາຍໄດ້ ລວມທັງອາຊີບຕົ້ນຕໍ, ແຫຼ່ງລາຍໄດ້ສຳຮອງ ແລະ ກິດຈະການຄອງຊີບຕ່າງໆ; ຖານະການຄອບຄອງແລະກຳມະສິດ (ທີ່ດິນແລະສິ່ງປຸກສ້າງ); ລັກສະນະຂອງການຈັບຈອງທີ່ດິນລວມໝູ່ ລວມທັງຂະໜາດ ແລະ ຄຸນນະພາບຂອງມັນ; ລັກສະນະຂອງສິ່ງປຸກສ້າງ ລວມທັງປະເພດຂອງສິ່ງກໍ່ສ້າງ.
  (ຂໍ້ມູນຂ່າວສານຕ້ອງໃດ້ສະໜອງໂດຍແຍກຕາມແຕ່ລະຊົນເຜົ່າ ແລະເພດໄວ, ຖ້າມີ)
- ປະເພດ ແລະ ຈຳນວນຜູ້ທີ່ຖືກກະທົບຈາກໂຄງການ ຕາມປະເພດ ແລະລະດັບຂອງຜົນກະທົບ ເຊັ່ນ:
  ກ) ຄອບຄົວທີ່ຖືກກະທົບຫຼວງຫຼາຍ ເນື່ອງຈາກສູນເສຍຊັບສິນເພື່ອທຳການຜະລິດ ແລະ ຕ້ອງໄດ້ຍົກຍ້າຍ.
  ຂ) ຄອບຄົວທີ່ຖືກກະທົບຫຼວງຫຼາຍ ເນື່ອງຈາກສູນເສຍທີ່ຢູ່ອາໄສ, ບ່ອນເຮັດທຸລະກິດ
  ຄ) ຄອບຄົວທີ່ຖືກກະທົບສ່ວນໃດສ່ວນໜຶ່ງ ຊຶ່ງອາດຖືກເບິ່ງຂ້າມ ເນື່ອງຈາກສູນເສຍທີ່ດິນ, ເຮືອນຢູ່, ຫຼື ບ່ອນເຮັດທຸລະກິດ ແຕ່ບໍ່ຈຳເປັນຕ້ອງໄດ້ຍົກຍ້າຍ.
  ງ) ຄອບຄົວທີ່ຖືກກະທົບພຽງເລັກໜ້ອຍ ຊຶ່ງໄດ້ຮັບການທົດແທນຄ່າເສຍຫາຍສຳລັບໃຫ້ຄວາມສະດວກ ຫຼື ການຊ່ວຍເຫຼືອໃນການ 'ຖອຍອອກ' ເທົ່ານັ້ນ.
  ຈ) ຜູ້ທີ່ອາໄສຢູ່ໃນທີ່ດິນ, ຄົນງານ, ກຳມະກອນ, ຫຼື ຜູ້ອື່ນໆ ທີ່ບໍ່ມີທີ່ດິນ ທີ່ຖືກກະທົບ ຫຼວງຫຼາຍ ຈາກໂຄງການ.

## 3. ມາດຕະຖານການໃຫ້ສິດທົດແທນຄ່າເສຍຫາຍ

- ອະທິບາຍ ກ່ຽວກັບຈຸດປະສົງຂອງນະໂຍບາຍການທົດແທນຄ່າເສຍຫາຍ.
- ມາດຕະຖານ ທີ່ກຳນົດສຳລັບຜູ້ມີສິດໄດ້ຮັບການທົດແທນຄ່າເສຍຫາຍ, ລວມທັງ ວັນເລີ້ມຕົ້ນໂຄງການ, ຖ້າຈຳເປັນ.

- ອະທິບາຍການໃຫ້ສິດໄດ້ຮັບການທົດແທນຄ່າເສຍຫາຍ ແລະຮູບການຊ່ວຍເຫຼືອອື່ນໆ ສຳລັບຜູ້ທີ່ຖືກກະທົບໃນແຕ່ລະປະເພດ.
- ໃຫ້ລາຍລະອຽດ ກ່ຽວກັບມາດຕະການພິເສດ ເພື່ອຫຼຸດຜ່ອນຜົນກະທົບທາງລົບຕໍ່ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ (ຖ້າກ່ຽວຂ້ອງ).
- ຕາຕະລາງການຈ່າຍທົດແທນຄ່າເສຍຫາຍ ທີ່ສອດຄ່ອງກັບບັນຫາຕ່າງໆຂ້າງເທິງນີ້.

**4. ແຜນການຍົກຍ້າຍຈັດສັນປະຊາຊົນ (ຖ້າຈຳເປັນ)**

- ການທົບທວນຄືນຄວາມເໝາະສົມຂອງພື້ນທີ່ ທີ່ເລືອກໄວ້ເປັນບ່ອນຕັ້ງບ້ານໃໝ່.
- ມາດຖານສຳລັບການຄັດເລືອກພື້ນທີ່.
- ການທົບທວນຄືນແຜນການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມໃນເຂດຍົກຍ້າຍໄປຢູ່ໃໝ່.
- ທາງເລືອກເບື້ອງຕົ້ນ ເພື່ອຍົກຍ້າຍຜູ້ທີ່ຖືກກະທົບຈາກໂຄງການ.
- ທົບທວນຄືນທາງເລືອກໃນການສ້າງເຮືອນຢູ່, ໂຄງລ່າງແລະການບໍລິການດ້ານສັງຄົມ
- ທົບທວນຄືນຂັ້ນຕອນການປຶກສາຫາລືກັບ ຜູ້ທີ່ຖືກກະທົບຈາກໂຄງການ ກ່ຽວກັບທາງເລືອກສຳລັບບ່ອນຕັ້ງ ບ້ານໃໝ່ ໃນໄລຍະຈັດຕັ້ງປະຕິບັດໂຄງການ.
- ຂໍ້ມູນຂ່າວສານດ້ານເສດຖະກິດ-ສັງຄົມຂອງປະຊາຊົນເຈົ້າພາບ, ຖ້າກ່ຽວຂ້ອງ.

**5. ມາດຕະການຟື້ນຟູລາຍໄດ້ (ຕາມຄວາມຈຳເປັນ)**

- ອະທິບາຍມາດຖານທີ່ເໝາະສົມສຳລັບມາດຕະການຟື້ນຟູລາຍໄດ້.
- ສຶກສາຄວາມເປັນໄປໄດ້ ກ່ຽວກັບທາງເລືອກຂອງແຜນງານຟື້ນຟູລາຍໄດ້ຕ່າງໆ ລວມທັງການທົດແທນຄ່າເສຍຫາຍທີ່ດິນລວມໝູ່, ຄວາມຕ້ອງການໃນດ້ານການຝຶກອົບຮົມ ຜູ້ທີ່ຖືກກະທົບຈາກໂຄງການ ໃນສະພາບທີ່ມີໂອກາດມີວຽກເຮັດງານທຳ ແລະ ຄວາມຕ້ອງການ ຂອງຕະຫຼາດ, ຄວາມສາມາດເຂົ້າຫາສິນເຊື່ອ ແລະການສະໜັບສະໜູນ ເພື່ອປະກອບການຂະໜາດນ້ອຍ ໃຫ້ຜູ້ທີ່ຖືກກະທົບ ທີ່ສົນໃຈໃນການພັດທະນາທຸລະກິດຂະໜາດນ້ອຍ.
- ການຈັດຕັ້ງທີ່ຮັບຜິດຊອບການໃຫ້ທຶນ ແລະ ຄຸ້ມຄອງແຜນງານຟື້ນຟູລາຍໄດ້ຕ່າງໆ.

**6. ການມີສ່ວນຮ່ວມຂອງມວນຊົນ, ການປຶກສາຫາລື ແລະ ກົນໄກໃນການແກ້ໄຂຂໍ້ຂັດແຍ່ງ**

- ວຽກງານການປຶກສາຫາລືກັບມວນຊົນ ທີ່ໄດ້ດຳເນີນໃນໄລຍະກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ (ໃຫ້ລາຍລະອຽດ). ລວມທັງການປຶກສາຫາລືສະເພາະກ່ຽວກັບຄວາມສະເໝີພາບຍິງຊາຍແລະການເຜີຍແຜ່ຂໍ້ມູນຂ່າວສານ. ບັນຫາອັນນີ້ຄວນໄດ້ເອົາໃຈໃສ່ ເພື່ອຮັບປະກັນຊັບສິນ, ກຳມະສິດແລະສິດທິໃນການນຳໃຊ້ທີ່ດິນຂອງແມ່ຍິງ ແລະ ຮັບປະກັນການຟື້ນຟູລາຍໄດ້ ແລະ ມາດຕະຖານຊີວິດການເປັນຢູ່.
- ລາຍລະອຽດ ກ່ຽວກັບໂອກາດຂອງຜູ້ທີ່ຖືກກະທົບ ໃນການເຂົ້າຮ່ວມການວາງແຜນ ແລະ ຈັດຕັ້ງປະຕິບັດວຽກຍົກຍ້າຍຈັດສັນປະຊາຊົນ.
- ຂັ້ນຕອນທີ່ນຳໃຊ້ ໃນແກ້ໄຂຂໍ້ຂັດແຍ່ງ, ການທົບທວນຄືນ ແລະ ການຕັດສິນບັນຫາ.

- ຂັ້ນຕອນເພື່ອເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການທົດແທນຄ່າເສຍຫາຍ ແລະ ທາງເລືອກໃນການຍົກຍ້າຍຈັດສັນປະຊາຊົນ ໃນຮູບແບບແລະພາສາທີ່ເຂົາເຈົ້າເຂົ້າໃຈ.

**7. ການຈັດຕັ້ງ**

- ການຈັດຕັ້ງລະບົບບໍລິຫານ ແລະແຜນການເພື່ອຈັດການຝຶກອົບຮົມ ແລະ ສ້າງຄວາມສາມາດຕາມຄວາມຕ້ອງການ.

**8. ການຕິດຕາມກວດກາ ແລະ ການຊີ້ນຳ**

- ສ້າງລາຍການຈຳນວນຕົວຊີ້ວັດ ໃນການດຳເນີນການຕິດຕາມກວດກາ.
- ຄວາມຮັບຜິດຊອບ ທາງດ້ານການຈັດຕັ້ງ ແລະ ຂັ້ນຕອນໃນການຕິດຕາມກວດກາພາຍໃນ.
- ປຶກສາຫາລື ກ່ຽວກັບບົດບາດ ຂອງອົງການຈັດຕັ້ງຊຸມຊົນ ແລະອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ, ຖ້າມີ.
- ເນື້ອໃນ ແລະໄລຍະເວລາ ຂອງການເຮັດບົດລາຍງານການຕິດຕາມກວດກາ.

**9. ຄາດຄະເນມູນຄ່າ ແລະ ງົບປະມານ**

- ຄາດຄະເນມູນຄ່າລວມຂອງແຕ່ລະປະເພດຊັບສິນທີ່ເສຍຫາຍ.
- ຄາດຄະເນມູນຄ່າ ສຳລັບແຜນງານຟື້ນຟູລາຍໄດ້, ການບໍລິຫານ, ການຊີ້ນຳ ແລະ ການຕິດຕາມກວດກາ.
- ລາຍງານກ່ຽວກັບຄວາມຮັບຜິດຊອບດ້ານການເງິນ ສຳລັບມູນຄ່າທີ່ກ່ຽວຂ້ອງກັບວຽກງານຍົກຍ້າຍຈັດສັນປະຊາຊົນ ທັງໝົດ.
- ແຮສຸກເສີນ ດ້ານກາຍຍະພາບ ແລະ ລາຄາ.

**10. ກົນໄກການຈັດຕັ້ງປະຕິບັດ**

- ຕາຕະລາງຈັດຕັ້ງປະຕິບັດວຽກງານຍົກຍ້າຍຈັດສັນປະຊາຊົນທັງໝົດ ແມ່ນໃຫ້ຕິດພັນກັບຕາຕະລາງເວລາຂອງແຕ່ລະໂຄງການຍ່ອຍ.
- ຂັ້ນຕອນການຈັດຕັ້ງປະຕິບັດ ຫຼື ເຮັດໃຫ້ອົງປະກອບຕ່າງໆສຳເລັດ ຕາມທີ່ກ່ຽວຂ້ອງ ເຊັ່ນ:
    - ກ) ການທົບທວນຄືນກົນໄກການທົດແທນແບບ ດິນປ່ຽນດິນ, ລວມທັງຕາຕະລາງເວລາ ແລະ ການສະໜອງທຶນຮອນ ສຳລັບການພັດທະນາເຂດຈັດສັນຕັ້ງບ້ານໃໝ່ ແລະສະຖານທີ່ບໍລິການ ທີ່ຈຳເປັນ ຫຼື ປັດໄຈນຳເຂົ້າອື່ນໆ.
    - ຂ) ການທົບທວນຄືນຂັ້ນຕອນໃນການຈ່າຍຄ່າທົດແທນຄ່າເສຍຫາຍຕ່າງໆ.
    - ຄ) ຂັ້ນຕອນ ການປະເມີນຄວາມເໝາະສົມຂອງຄ່າທົດແທນຄວາມເສຍຫາຍ.
    - ງ) ຂັ້ນຕອນປະຕິບັດງານ ໃນການຈັດຫາວຽກເຮັດງານທຳ, ການສະໜອງການເງິນຂະໜາດນ້ອຍ ຫຼື ແຜນງານຟື້ນຟູລາຍຮັບຕ່າງໆ.

ຈ) ຂໍ້ຜູກມັດທາງດ້ານກົດໝາຍເພື່ອເອົາເຂົ້າໃນສັນຍາວຽກກໍ່ສ້າງຕ່າງໆ.

Àອ¡¡ະສານຄກົດຕòດ 4

## ການວິໃຈເບື້ອງຕົ້ນກ່ຽວກັບຊົນເຜົ່າ

ເວລາໃດຈຶ່ງດຳເນີນການວິໃຈ: ເວລາດຳເນີນການປຶກສາຫາລືຄັ້ງທຳອິດກັບຊົນເຜົ່ານັ້ນ.

ຕ້ອງເກັບກຳຂໍ້ມູນຂ່າວສານຫຍັງແດ່: ການວິໃຈ ແມ່ນຈະຕ້ອງໄດ້ມີການເກັບກຳຂໍ້ມູນກ່ຽວກັບພົນລະເມືອງຂອງຊົນເຜົ່າທີ່ດຳລົງຊີວິດຢູ່ໃນເຂດທີ່ໄດ້ຮັບອິດທິພົນຈາກໂຄງການ.

ຈະເກັບກຳຂໍ້ມູນຂ່າວສານແນວໃດ: ສາມາດເກັບກຳໄດ້ຈາກຜູ້ນຳຂອງຊົນເຜົ່າ, ນາຍບ້ານ ແລະອົງການປົກຄອງທ້ອງຖິ່ນ.

ໃຜເປັນຜູ້ດຳເນີນການວິໃຈ: ຊ່ຽວຊານທີ່ປຶກສາ ຫຼື ພະນັກງານເມືອງທີ່ໄດ້ຮັບການຝຶກອົບຮົມ

ແຂວງ:__________ ເມືອງ: ____________ ບ້ານ: ______________ໂຄງການຍ່ອຍ: __________

| ຊື່ບ້ານ ແລະ ຊຸມຊົນຢູ່ຕາມເຂດທີ່ຮັບອິດທິພົນຈາກໂຄງການ | ຊື່ຂອງຊົນເຜົ່າຢູ່ຕາມເຂດ ໄດ້ຮັບອິດທິພົນ ຈາກໂຄງການ | ຊື່ຂອງຄອບຄົວຊົນເຜົ່າທີ່ອາໃສຢູ່ຕາມເຂດທີ່ໄດ້ຮັບອິດທິພົນ ຈາກໂຄງການ | ຈຳນວນພົນຂອງຊົນເຜົ່າ ທີ່ອາໄສຢູ່ຕາມເຂດ ທີ່ໄດ້ຮັບອິດທິພົນ ຈາກໂຄງການ | |
|---|---|---|---|---|
| | | | ຍິງ | ຊາຍ |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |

**ເອກກະສານຄັດຕິດ 5**

# ການປະເມີນຜົນກະທົບຕໍ່ສັງຄົມແບບລະອຽດສຳລັບຊົນເຜົ່າ

| |
|---|
| <u>ເວລາໃດຈຶ່ງດຳເນີນການ ປະເມີນຜົນກະທົບຕໍ່ສັງຄົມ:</u> ຖ້າວ່າຜົນການວິໃຈ ຊີ້ໃຫ້ເຫັນວ່າມີກຸ່ມຊົນເຜົ່າອາໄສຢູ່ຕາມເຂດທີ່ຖືກກະທົບຈາກໂຄງການ ກໍລະນີນີ້ແມ່ນຕ້ອງໄດ້ເຮັດການປະເມີນຜົນກະທົບຕໍ່ສັງຄົມ ສຳລັບຊົນເຜົ່າ.<br><u>ຕ້ອງເກັບກຳຂໍ້ມູນຂ່າວສານຫຍັງແດ່:</u> ການປະເມີນຜົນກະທົບຕໍ່ສັງຄົມ ສຳລັບຊົນເຜົ່າ ແມ່ນຈະໄດ້ມີການເກັບກຳ ຂໍ້ມູນກ່ຽວກັບຕົວເລກຂອງພົນລະເມືອງ, ສະພາບທາງດ້ານສັງຄົມ, ວັດທະນະທຳແລະເສດຖະກິດ; ແລະ ຜົນກະທົບ ທາງບວກແລະທາງລົບຈາກໂຄງການ.<br><u>ຈະເກັບກຳຂໍ້ມູນຂ່າວສານແນວໃດ:</u> ຂໍ້ມູນຈະເກັບກຳໄດ້ຈາກກອງປະຊຸມ ໂດຍແບ່ງຕາມກຸ່ມ ເຊັ່ນ: 1) ຜູ້ນຳເຜົ່າ; 2) ຊົນເຜົ່າຊາຍ; 3) ຊົນເຜົ່າຍິງ, ໂດຍສະເພາະ ຜູ້ທີ່ອາໃສໃນເຂດ ທີ່ໄດ້ຜົນກະທົບຈາກໂຄງການ.<br><u>ໃຜເປັນຜູ້ດຳເນີນການວິໃຈ:</u> ຊ່ຽວຊານທີ່ປຶກສາ ຫຼື ພະນັກງານເມືອງທີ່ໄດ້ຮັບການຝຶກອົບຮົມມາ.<br><u>ເວລາທີ່ຕ້ອງການ:</u> ການເກັບຂໍ້ມູນສຳລັບແຕ່ລະກຸ່ມ ສຳລັບການປະເມີນຜົນກະທົບຕໍ່ສັງຄົມ ແມ່ນຈະໃຊ້ເວລາປະມານ 2 ຫາ 3 ວັນ ແລະ ອາດຈະໃຊ້ເວລາຕື່ມອີກ ປະມານ 2-3 ວັນ ເພື່ອວິໃຈຂໍ້ມູນ ແລະ ຂຽນບົດ ລາຍງານ. |

.

ແຂວງ:__________ ເມືອງ: ______________ ບ້ານ: ____________ໂຄງການຍ່ອຍ: __________

## ກ. ສະພາບທາງວັດທະນະທຳສັງຄົມແລະ ເສດຖະກິດ

1. ຈຳນວນສ່ວຍຮ້ອຍຂອງຄອບຄົວຊົນເຜົ່າ ທີ່ມີລາຍຮັບຕ່ຳກວ່າລະດັບຄວາມທຸກຍາກ ________
2. ຈຳນວນເດັກນ້ອຍຍິງຊົນເຜົ່າ ທີ່ໄດ້ເຂົ້າໂຮງຮຽນປະຖົມ ________
3. ຈຳນວນເດັກນ້ອຍຊາຍຊົນເຜົ່າ ທີ່ໄດ້ເຂົ້າໂຮງຮຽນປະຖົມ _________
4. ຈຳນວນເດັກນ້ອຍຍິງຊົນເຜົ່າ ທີ່ໄດ້ເຂົ້າໂຮງຮຽນມັດທະຍົມ _________
5. ຈຳນວນເດັກນ້ອຍຊາຍຊົນເຜົ່າ ທີ່ໄດ້ເຂົ້າໂຮງຮຽນມັດທະຍົມ _________
6. ຈຳນວນຄັ້ງທີ່ໄດ້ໄປໂຮງໝໍຂອງແຕ່ລະຄອບຄົວຊົນເຜົ່າຕໍ່ປີ ________
7. ການມີນ້ຳສະອາດໃຊ້ຈາກແຫຼ່ງຕ່າງໆ (ນ້ຳສ້າງ, ນ້ຳກ໊ອກ, ອື່ນໆ) ໃນຊຸມຊົນ
   ມີ: ________; ບໍ່ມີ: _______
8. ຊຸມຊົນມີໄຟຟ້າໃຊ້ ມີ: ________; ບໍ່ມີ: _______
9. ຈຳນວນຄອບຄົວ ທີ່ມີໄຟຟ້າໃຊ້ __________
10. ຂໍ້ມູນກ່ຽວກັບເສດຖະກິດຂອງຊົນເຜົ່າ

*ກ) ປະເພດຊັບພະຍາກອນທຳມະຊາດໃນພື້ນທີ່:*

| ຊັບພະຍາກອນ | ກວດສອບ | ຊັບພະຍາກອນທຳມະຊາດ | ກວດ |
|---|---|---|---|
| i. ປ່າໄມ້ | | iv. | |
| ii. ໜອງບຶງ, ແມ່ນ້ຳ | | v. | |

| | | | |
|---|---|---|---|
| iii. ແຮ່ທາດ | | vi. | |

*ຂ) ເສດຖະກິດ ແລະ ລະບົບການທຳມາຫາກິນ*

| ກິດຈະການຫຼັກ | % ຄອບຄົວ ຊົນເຜົ່າ | ກິດຈະການສຳຮອງ | % ຊົນເຜົ່າ |
|---|---|---|---|
| i. ກະສິກຳຄົງທີ່ | | i. ກະສິກຳຄົງທີ່ | |
| ii. ຖາງປ່າເຮັດໄຮ່ | | ii. ຖາງປ່າເຮັດໄຮ່ | |
| iii. ກະສິກອນທີ່ບໍ່ມີທີ່ດິນ | | iii. ກະສິກອນທີ່ບໍ່ມີທີ່ດິນ | |
| iv. ການໄປເຮັດວຽກທາງນອກ | | iv. ການໄປເຮັດວຽກທາງນອກ | |
| v. ພະນັກງານລັດ | | v. ພະນັກງານລັດ | |
| vi. | | vi. | |

11. *ລະບົບການຄອບຄອງທີ່ດິນ*ຂອງຊົນເຜົ່າຕົ້ນຕໍ: ອະທິບາຍຫຍໍ້ກ່ຽວກັບກຳມະສິດ ແລະລະບົບການຄອບຄອງທີ່ດິນ (ເຊັ່ນ ກຳມະສິດສ່ວນລວມ, ກຳມະສິດສ່ວນຕົວ, ຄວາມແຕກຕ່າງລະຫວ່າງຍິງ-ຊາຍ ໃນການມີກຳມະສິດ, ອື່ນໆ).

___

___

___

12. ຂໍ້ມູນດ້ານສັງຄົມຂອງຊົນເຜົ່າ

*ລະບົບສັງຄົມແລະວັດທະນະທຳ*ຂອງຊົນເຜົ່າຕົ້ນຕໍ:ເຊັ່ນ

ແມ່ນຈະມີຜົນກະທົບຕໍ່ແມ່ຍິງເປັນສ່ວນໃຫຍ່. ບັນຫາເຫລົ່ານີ້ ຕ້ອງໄດ້ຮັບການພິຈາລະນາ ແລະ ກໍານົດເຂົ້າໃນແຜນການຍົກຍ້າຍຈັດສັນປະຊາຊົນ.

**ຄໍາຖາມສໍາຄັນ**

- ມີຄວາມຕ້ອງການແຍກ ບ່ອນອາບນ້ຳ, ສຸຂະອະນາໄມ, ແລະ ບ່ອນລ້າງສ່ວຍສໍາລັບແມ່ຍິງບໍ?
- ຮູບແບບ ແລະ ບ່ອນໃດ ຈຶ່ງດີສໍາລັບສິ່ງເຫຼົ່ານີ້?
- ຫ້ອງວິດລວມຈະຢູ່ໃສ? ມີຈັກຄອບຄົວຕໍ່ຫ້ອງນ້ຳໜຶ່ງ?
- ຄວາມສໍາຄັນ ທີ່ບ້ານຈະຕ້ອງໄດ້ມີຄວາມຮັບຜິດຊອບ ໃນການບູລະນະວິດຖ່າຍ. ແມ່ຍິງມີບົດບາດຫຍັງແດ່?
- ຈໍາເປັນຕ້ອງມີການໃຕ້ໄຟຢູ່ຫ້ອງວິດ ແລະອ້ອມແອ້ມບໍ ເພື່ອຄວາມປອດໄພຂອງແມ່ຍິງ?
- ກົນໄກເພື່ອບໍາບັດຂີ້ເຫຍື້ອ ແລະ ນ້ຳເປື້ອນມີຫຍັງແດ່ ແລະ ບົດບາດຂອງບ້ານມີຫຍັງແດ່?
- ໃນເຮືອນຈະມີຫ້ອງນ້ຳບໍ? ຫຼື ມີຫ້ອງນ້ຳລວມ? ມີຫຼາຍຄອບຄົວບໍຈະໃຊ້ຫ້ອງນ້ຳລວມ? ກົນໄກບົວລະບັດຮັກສາມີຫຍັງແດ?

**ຍຸດທະສາດສໍາຄັນ**

- ວາງແຜນ ແລະ ອອກແບບຫ້ອງວິດ ແລະ ຫ້ອງອາບນ້ຳໂດຍ ໄດ້ມີການປຶກສາຫາລື ກັບແມ່ຍິງ;
- ຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍມີຄວມຮັບຜິດຊອບຮ່ວມກັນໃນການຄຸ້ມຄອງ ແລະບໍາບັດຂີ້ເຫຍື້ອ ແລະ ນ້ຳເປື້ອນ;
- ການຝຶກອົບຮົມ ຫຼື ການແນະນໍາ ກ່ຽວກັບ ວຽກງານຄຸ້ມຄອງ ແລະ ບໍາບັດຂີ້ເຫຍື້ອ ຄວນມີແມ່ຍິງ ເຂົ້າຮ່ວມນໍາ.

## ການສຶກສາ

**ບັນຫາສຳຄັນ**

- ໃນເວລາຍົກຍ້າຍແບບບໍ່ສະໝັກໃຈ, ການປຸກໂຮງຮຽນໃຫ້ ໂດຍບໍ່ໃຫ້ປະຊາຊົນເສຍ ຄ່າເປັນໂຄງສ້າງທີ່ຕ້ອງໄດ້ສ້າງຂຶ້ນໄປຄຽງຄູ່ກັບການປຸກເຮືອນ ແລະ ບ່ອນອະນາໄມ.

**ຄຳຖາມສຳຄັນ**

- ມີຈຳນວນເດັກນ້ອຍທີ່ໄປຮຽນນັ້ນຫຼາຍປານໃດ ?
- ໃນປະຈຸບັນໂຮງຮຽນໄກປານໃດ?
- ບ່ອນທີ່ຈະຍ້າຍໄປຢູ່ນັ້ນມີໂຮງຮຽນແລ້ວບໍ?ເຊັ່ນ: ໂຮງຮຽນປະຖົມ ຫຼືມັດທະຍົມ?
- ຜູ້ໄປຢູ່ໃໝ່ຈະໄປໄດ້ບໍ?
- ໂຮງຮຽນທີ່ມີຢູ່ນັ້ນຮັບເອົາເດັກນ້ອຍທີ່ມາຢູ່ໃໝ່ອີກໄດ້ບໍ?
- ຖ້າບໍ່ໄດ້, ຈະເຮັດແນວໃດເພື່ອໃຫ້ມີບ່ອນຮຽນ?

**ຍຸດທະສາດສຳຄັນ**

- ປະເມີນເບິ່ງຄວາມຕ້ອງການໂຮງຮຽນ ແລະ ລະດັບການສຶກສາທີ່ຕ້ອງການ.
- ຮັບປະກັນວ່າ ຕ້ອງສ້າງໂຮງຮຽນໃຫ້. ໝາຍເຫດ: ຄ່າສ້າງໂຮງຮຽນຄວນແມ່ນພາລະ ຂອງເຈົ້າຂອງໂຄງການ ສ່ວນການຄຸ້ມຄອງໂຮງຮຽນ ແມ່ນລັດເປັນຜູ້ຮັບຜິດຊອບ.

## ສຸກຂະພາບ

**ບັນຫາສຳຄັນ**

- ການຍົກຍ້າຍຈັດສັນແບບບໍ່ໄດ້ສະມັກໃຈ ແມ່ນອາດເຮັດໃຫ້ມີການເຈັບເປັນຫຼາຍຂຶ້ນ, ມັນອາດແຕະຕ້ອງທາງຮ່າງກາຍ ແລະ ຈິດໃຈ. ການສູນເສຍທີ່ດິນ ແລະ ການທຳມາຫາກິນອາດເຮັດໃຫ້ເສຍສັກສີສຳລັບຜູຊາຍ ຊຶ່ງບາງຄັ້ງອາດຫັນມາໃຊ້ຄວາມຮຸນແຮງກັບເມຍ ແລະ ລູກ;
- ຜົນກະທົບດ້ານສິ່ງແວດລ້ອມຂອງໂຄງການ ອາດແຕະຕ້ອງຕໍ່ຜູ້ທີ່ຖືກຍົກຍ້າຍອີກ ຖ້າຫາກບໍ່ມີການຄຸ້ມ ຄອງແຕ່ຫົວທີ. ໂຄງການສ້າງເຂື່ອນ ເຄີຍກໍ່ໃຫ້ເກີດພະຍາດໃບໄມ້ໃນເລືອດ ແລະ ຂາດຟະລູອໍ, ສ່ວນໂຮງງານໄຟຟ້າທີ່ໃຊ້ຖານຫີນ ມັກເຮັດໃຫ້ເກີດພະຍາດວັນນະໂລກ ຫຼື ຫຼອດລົມອັກເສບ;
- ໂຮງໝໍທີ່ມີຄວາມສາມາດທັງປົວ ແລະ ປ້ອງກັນພະຍາດ ແມ່ນຕ້ອງໄດ້ມີການວາງແຜນກັນຢ່າງຄັກແນ່;
- ການຫຼຸດໜ້ອຍລົງ ຫຼື ການສູນເສຍບ່ອນທຳມາຫາກິນ ແມ່ນອາດເຮັດໃຫ້ມີບັນຫາໂພສະນາການໃຫຍ່ຕໍ່ແມ່ຍິງ ແລະ ເດັກນ້ອຍ.

**ຄຳຖາມສຳຄັນ**

- ພະຍາດຫຍັງທີ່ພົບທົ່ວໄປກັບແມ່ຍິງທີ່ອາໄສຢູ່ໃນເຂດນີ້?
- ມັນພົວພັນກັບເງື່ອນໄຂດຳລົງຊີວິດ ໃນປະຈຸບັນບໍ່?
- ສະພາບໂຮງໝໍເປັນແນວໃດ ໃນປະຈຸບັນ?
- ຕ້ອງໄດ້ມີການປັບປຸງບໍ ສຳລັບຜູ້ທີ່ບໍ່ໄດ້ຍົກຍ້າຍໄປ?
- ເຂດທີ່ຈັດສັນໃໝ່ ມີໂຮງໝໍບໍ?
- ມີພຽງພໍກັບຜູ້ຍ້າຍມາຢູ່ໃໝ່ບໍ?
- ມັນມີຄວາມເປັນໄປໄດ້ບໍ ທີ່ຈະນຳເອົາພະຍາດໃໝ່ເຂົ້າມາໃນເຂດນີ້?
- ແມ່ຍິງ ແລະ ເດັກນ້ອຍໄປໂຮງໝໍໄດ້ບໍ?

**ຍຸດທະສາດສຳຄັນ**

- ປະເມີນບັນຫາສຸຂະພາບ ທີ່ມີຢູ່ ແລະ ແຜນການແກ້ໄຂ;
- ເຊື່ອມໂຍງກັບລະບົບສາທາລະນະສຸກຂອງລັດຖະບານ;
- ແຜນສຸຂະພາບຈະເລີນພັນ ສຳລັບແມ່ຍິງ;
- ສ້າງກົນໄກຕິດຕາມກວດກາເພື່ອຊອກຮູ້ພະຍາດໃໝ່ທີ່ເກີດຂຶ້ນ;
- ຮັບປະກັນໃຫ້ມີໂຮງໝໍຢູ່ໃກ້;
- ຮັບປະກັນໃຫ້ມີງົບປະມານ ແລະ ທຶນຮອນເພື່ອບົວລະບັດຮັກສາໂຮງໝໍໃໝ່;

## ສູນລ້ຽງເດັກ (ອະນຸບານ)

**ບັນຫາສຳຄັນ**

ສ່ວນຫຼາຍເດັກນ້ອຍແມ່ຍິງອາດບໍ່ສາມາດໄປໂຮງຮຽນໄດ້ປົກກະຕິ ເພາະຕ້ອງໄດ້ດູແລນ້ອງນ້ອຍ. ດັ່ງນັ້ນ, ຕອ້ງໄດ້ມີການສ້າງສູນລ້ຽງເດັກ ຊຶ່ງມັນຈະເປັນຜົນດີໃຫ້ແມ່ຍິງສາມາດໄປຫາເຮັດວຽກ ແລະຫາລາຍຮັບ. ການສ້າງໂຮງຮຽນອະນຸບານ ອາດຈະເປັນປັບປຸງຊີວິດການເປັນຢູ່ຂອງແມ່ຍິງ.

**ຄຳຖາມສຳຄັນ**

- ມີເດັກນ້ອຍອາຍຸ ແຕ່ 0-6 ປີ ຈັກຄົນ?
- ມີກົນໄກເບິ່ງແຍງເດັກນ້ອຍ ແນວໃດ?
- ເຂົາເຈົ້າ ຈະໄດ້ຮັບຜົນກະທົບ ຈາກການຍົກຍ້າຍບໍ? ແນວໃດ?
- ວິທີການລ້ຽງ ແລະ ເບິ່ງແຍງເດັກນ້ອຍ ມີຄືແນວໃດ?
- ປະຊາຊົນຢາກຫາວິທີທາງເລືອກອື່ນບໍ?
- ແມ່ຍິງຢາກເອົາລູກໄປຝາກບໍ?
- ແມ່ຍິງໃນຊຸມຊົນຢາກຈັດຕັ້ງ ຫຼື ຄຸ້ມຄອງສູນລ້ຽງເດັກບໍ?
- ແມ່ຍິງຢາກຈ່າຍຄ່າຝາກລູກບໍ?

**ຍຸດທະສາດສຳຄັນ**

- ປະເມີນຄວາມຈຳເປັນຕ້ອງສ້າງສູນລ້ຽງເດັກ;

- ປະເມີນຄວາມຕ້ອງການປະກອບສ່ວນ ແລະ ມີຄວາມຮັບຜິດຊອບ ເພື່ອເບິ່ງແຍງເດັກນ້ອຍ;
- ຊອກເບິ່ງແຜນ ແລະ ໂຄງການຂອງລັດທີ່ມີຢູ່.

## ບັນຫາໄລຍະຂ້າມຜ່ານ

### ບັນຫາສຳຄັນ

- ແມ່ຍິງຕ້ອງໄດ້ຮັບການຊ່ວຍເຫຼືອພິເສດ ໃນການຂົນສົ່ງ ແລະ ໃນໄລຍະຂ້າມຜ່ານ;
- ເມື່ອຍ້າຍໄປຢູ່ບ່ອນຈັດສັນໃໝ່ແລ້ວໄລຍະຂ້າມຜ່ານ ໃນລະຫວ່າງມ້າງເຮືອນເກົ່າ ຫຼື ຫາ ຂື້ນຢູ່ເຮືອນໃໝ່ ແມ່ນເປັນໄລຍະທີ່ສຳຄັນທີ່ສຸດ;
- ການຈັດການຊົ່ວຄາວແມ່ນບໍ່ເປັນການແກ້ໄຂໄດ້ໝົດບັນຫາຂອງແມ່ຍິງ ແລະ ເດັກນ້ອຍ ເຊັ່ນ: ການອະນາໄມ. ການຕອບສະໜອງນ້ຳກິນນ້ຳໃຊ້ ແລະ ໂຮງຮຽນ.

### ຄຳຖາມສຳຄັນ

- ແມ່ຍິງໄດ້ມີການປຶກສາຫາລື ກ່ຽວກັບ ບັນຫາທາງດ້ານການຂົນສົ່ງ ແລະ ບັນຫາຕ່າງໆ ໃນໄລຍະຂ້າມຜ່ານນີ້ບໍ?
- ໄດ້ຊ່ວຍຂົນສົ່ງບໍ? ແມ່ຍິງໄດ້ສົນໃຈນຳເລື້ອງຂົນສົ່ງບໍ?
- ແມ່ຍິງ ແລະ ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ອື່ນໆອາດຕ້ອງການຊ່ວຍເຫຼືອ, ຊອກເບິ່ງວ່າມີຫຍັງແດ່?
- ມີເວລາພຽງພໍບໍເພື່ອສ້ອມແປງເຮືອນເກົ່າ ແລະ ປຸກເຮືອນໃໝ່ ໂດຍສະເພາະຄອບ ຄົວແມ່ຮ້າງນາງໝ້າຍ ແລະ ຜູ້ເຖົ້າ?
- ມີການຈັດການອັນໃດ ທີ່ຈະຮັບປະກັນໃຫ້ມີສິ່ງອຳນວຍຄວາມສະດວກພື້ນຖານ, ມີໂຮງຮຽນໃຫ້ເດັກນ້ອຍ ໃນໄລຍະຂ້າມຜ່ານນີ້?

### ຍຸດທະສາດສຳຄັນ

- ຄວນຊ່ວຍດ້ານການຂົນສົ່ງທີ່ເໝາະສົມໃຫ້ແກ່ແມ່ຍິງ ໂດຍສະເພາະພວກໂສດ, ແມ່ມານ, ຜູ້ເຖົ້າ ແລະຄອບຄົວແມ່ຮ້າງນາງໝ້າຍ.
- ເຮັດໃຫ້ບັນຫາໃນໄລຍະຂ້າມຜ່ານນີ້ ເປັນໄປແບບນຸ້ມນວນ ແລະ ບໍ່ມີຜົນສະທ້ອນຮ້າຍ ແຮງຫຼາຍ, ຮັບປະກັນວ່າເຮືອນໃໝ່ ແລະ ບ່ອນຢູ່ຊົ່ວຄາວ ມີສິ່ງອຳນວຍຄວາມສະ ດວກຂັ້ນພື້ນຖານ.
- ຮັບປະກັນວ່າທຸກຄອບຄົວໄດ້ເຄື່ອນຍ້າຍອອກໄປພ້ອມໆກັນ.

ແຫຼ່ງຂໍ້ມູນ: ລາຍການເພື່ອກວດເບິ່ງເລື້ອງສະເໝີພາບຍິງຊາຍ, ການຍົກຍ້າຍຈັດສັນປະຊາຊົນ, ທະນາຄານພັດທະນາອາຊີ, ເດືອນ ກຸມພາ 2003, ໜ້າ 27

**ເອກກະສານຄັດຕິດ 23**

# ການກວດກາບົດບາດຍິງຊາຍ: ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນໃນການຍົກຍ້າຍຈັດສັນ

**ບັນຫາສຳຄັນ**

- ປັດໄຈທາງດ້ານເສດຖະກິດ-ສັງຄົມ ແມ່ນອາດເຮັດໃຫ້ແມ່ຍິງບໍ່ໄດ້ເຂົ້າຮ່ວມຢ່າງຈິງຈັງ ໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການດຳເນີນວຽກຍົກຍ້າຍຈັດສັນປະຊາຊົນ. ຄວນມີຄວາມພະຍາຍາມພິເສດ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມ;
- ສ່ວນຫຼາຍນັກວາງແຜນ ມັກເຮັດວຽກກັບຜູ້ຊາຍ ຊຶ່ງອາດບໍ່ເປັນຕົວແທນຂອງຊຸມຊົນທັງໝົດ ໂດຍສະເພາະແມ່ຍິງ;
- ຖ້າບໍ່ຮັບປະກັນໃຫ້ແມ່ຍິງເຂົ້າຮ່ວມ, ລະບົບປົກຄອງ ແລະນິຕິກຳ ທີ່ໃຫ້ຄວາມສຳຄັນແກ່ຜູ້ຊາຍ ອາດແຕະຕ້ອງສິດທິຂອງແມ່ຍິງໃນສະຖາບັນຂອງປະເພນີ ໂດຍສະເພາະ ແມ່ຍິງທີ່ບໍ່ສາມາດ ຊ່ວຍຕົນເອງໄດ້ ແລະ ເສຍປຽບ. ຄອບຄົວແມ່ຮ້າງນາງໝ້າຍ, ຜູ້ເຖົ້າ, ແລະຄອບຄົວທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ແມ່ນອາດໄດ້ຮັບຜົນສະທ້ອນ ຈາກສະພາບການດັ່ງກ່າວ;
- ບັນຫາການເຂົ້າຮ່ວມຂອງປະຊາຊົນ ແມ່ນຂໍ້ມູນຂ່າວສານ ຕ້ອງໃຫ້ເຂົາເຈົ້າຄົບຖ້ວນ. ຖ້າຫາກວ່າຜູ້ທີ່ໄດ້ ຮັບຜົນກະທົບຫາກໃຊ້ສິດຂອງຕົນໃນການຟື້ນຟູເສດຖະກິດ, ເຂົາເຈົ້າແມ່ນມີຄວາມຈຳເປັນຕ້ອງໄດ້ຮູ້ ຂໍ້ມູນຂ່າວສານຄົບຖ້ວນ.

**ຄຳຖາມສຳຄັນ**

- ແມ່ຍິງ ທີ່ເປັນຕົວແທນຂອງເສດຖະກິດ-ສັງຄົມໜຶ່ງ ໄດ້ຖືກປຶກສາຫາລືກ່ຽວກັບໂຄງການແລ້ວບໍ?
- ແມ່ຍິງ ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ໂຄງການຄົບຖ້ວນແລ້ວບໍ?
- ແມ່ຍິງ ໄດ້ຖືກປຶກສາຫາລື ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນແລ້ວບໍ?
- ແມ່ຍິງ ໄດ້ເຂົ້າຮ່ວມໃນການວາງແຜນການຍົກຍ້າຍຈັດສັນປະຊາຊົນ ແລະໄດ້ພິຈາລະນາຄຳເຫັນເຂົາເຈົ້າແລ້ວບໍ?
- ແມ່ຍິງ ໄດ້ຖືກປຶກສາຫາລືໃນການກຳນົດຜູ້ທີ່ຖືກກະທົບແລ້ວບໍ?
- ແຜນການ ຈະເອົາມາແລກປ່ຽນຄຳເຫັນກັບແມ່ຍິງທີ່ຖືກກະທົບມຄືແນວໃດ?
- ມີກົນໄກແນວໃດທີ່ຈະໃຫ້ແມ່ຍິງໄດ້ເຂົ້າຮ່ວມໃນແຕ່ລະໄລຍະຂອງໂຄງການ?
- ຈະມີກອງປະຊຸມຕ່າງຫາກສຳລັບແມ່ຍິງບໍ?

**ຍຸດທະສາດສຳຄັນ**

- ຮັບປະກັນການມີຕົວແທນ ແລະມີໜ້າຂອງແມ່ຍິງ ຈາກແຕ່ລະກຸ່ມເສດຖະກິດ-ສັງຄົມ;
- ຮັບປະກັນຄວາມເປັນເອກະພາບດ້ານຈຳນວນຍິງຊາຍ ແລະ ມີແມ່ຍິງເປັນຕົວແທນເຖິງ 50% ໃນໄລຍະວາງແຜນ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ຖາມຄຳເຫັນຈາກເຂົາເຈົ້າຕໍ່ແຜນການດັ່ງກ່າວ;
- ພິຈາລະນາຈັດກອງປະຊຸມກັບແມ່ຍິງຕ່າງຫາກ ໂດຍໃຫ້ແມ່ຍິງເປັນຜູ້ດຳເນີນ ເພື່ອໄດ້ຄຳເຫັນຈາກເຂົາເຈົ້າ ໂດຍສະເພາະບັນຫາລະອຽດ ເຊັ່ນຫ້ອງນ້ຳ, ອະນາໄມ, ນ້ຳແລະຜັງເຮືອນ.

ແຫຼ່ງຂໍ້ມູນ: ລາຍການເພື່ອກວດເບິ່ງເລື້ອງສະເໝີພາບຍິງຊາຍ, ການຍົກຍ້າຍຈັດສັນປະຊາຊົນ, ທະນາຄານພັດທະນາອາຊີ, ເດືອນ ກຸມພາ 2003, ໜ້າ 7

¡ານ¯¡ສາ¹າລື Áລະ ¡ານມີສÈ¸ນຮÈ¸ມ ຂອງມ¸ນຊöນ

ÃນÁຫÈລະÄລຍະຂອງ¸öງຈອນÂຄງ¡ານ

| | |
|---|---|
| *ກຳນົດໂຄງການແລະສຶກສາເບື້ອງຕົ້ນ* | *ກິດຈະກຳ 1. ການພົບປະລະຫວ່າງເຈົ້າຂອງໂຄງການກັບອົງການປົກຄອງທ້ອງຖິ່ນ ເພື່ອ:*<br>• ປຶກສາຫາລື ກ່ຽວກັບ ຄວາມຄິດທົ່ວໄປຕໍ່ສ່ວນປະກອບຂອງໂຄງການ;<br>• ປຶກສາຫາລື/ອະທິບາຍ ກ່ຽວກັບ ຄວາມຈຳເປັນຂອງໂຄງການ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມທີ່ອາດຈະເກີດຂຶ້ນ;<br>• ສະເໜີແຜນການເຮັດວຽກເບື້ອງຕົ້ນ;<br>• ສ້າງຈິດສຳນຶກ ແລະ ສ້າງຄວາມພໍໃຈ ໃຫ້ອົງການປົກຄອງທ້ອງຖິ່ນ ຕໍ່ໂຄງການ;<br>• ກຳນົດ ພາກສ່ວນທີ່ກ່ຽວຂ້ອງ;<br>• ວາງລາຍການປະຊຸມກັບຜູ້ທີ່ມີສ່ວນກ່ຽວຂ້ອງ ໃນລະດັບທ້ອງຖິ່ນ. |
| | *ກິດຈະກຳ 2. ການພົບປະກັບຊຸມຊົນ ແລະ ຜູ້ທີ່ກ່ຽວຂ້ອງຕົ້ນຕໍ ເພື່ອ:*<br>• ສະເໜີສະພາບລວມ ແລະ ຈຸດປະສົງລວມ ຂອງໂຄງການ;<br>• ແຈ້ງໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງ ຮູ້ກ່ຽວກັບບັນຫາສິ່ງແວດລ້ອມ ແລະ ສັງຄົມ ແລະ ຜົນໄດ້ຮັບຈາກໂຄງການ;<br>• ສະເໜີຕາຕະລາງເວລາ ສຳລັບວຽກສຳຄັນ;<br>• ປຶກສາຫາລືກັນ ເພື່ອຮັບຟັງຄຳເຫັນ ແລະ ຂໍ້ສະເໜີຈາກຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຊຸມຊົນ;<br>• ສະເໜີຄວາມຕ້ອງການ ທີ່ຢາກໃຫ້ຊຸມຊົນ ມີບົດບາດໃນວຽກງານທີ່ກ່າວມາເທິງນີ້.<br><br>ອີງໃສ່ຄຳເຫັນ ແລະ ຂໍ້ສະເໜີຈາກຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຊຸມຊົນ ຕ້ອງໄດ້ມີການປັບປຸງ ການອອກແບບໂຄງການແມ່ນຕ້ອງໄດ້ເຮັດຢ່າງເອົາໃຈໃສ່ເພື່ອຫຼີກລ້ຽງ ຫຼື ຫຼຸດຜ່ອນຜົນກະທົບດ້ານລົບໃຫ້ໜ້ອຍທີ່ສຸດ.. |
| | *ກິດຈະກຳ 3. ເຮັດການເຜີຍແຜ່ໂຄສະນາ ກ່ອນຈະລົງມືສຳຫຼວດພົນລະເມືອງ ແລະ ຂຶ້ນບັນຊີຊັບສິນ ແລະ ການສຳຫຼວດເສດຖະກິດ, ເມື່ອຈຳເປັນ. ດັ່ງນັ້ນ ຕ້ອງໄດ້ເຜີຍແຜ່ຂໍ້ມູນຂ່າວສານດັ່ງຕໍ່ໄປນີ້:*<br>• ລາຍລະອຽດ ຂອງໂຄງການ, ປະເພດຜົນກະທົບຕ່າງໆ, ເນື້ອໃນ ແລະ ເວລາ ດຳເນີນການສຳຫຼວດພົນລະເມືອງ ແລະ ການຂຶ້ນບັນຊີຊັບສິນ<br>• ສະເໜີໃຫ້ປະຊາຊົນ ກະກຽມເອກກະສານທີ່ຈຳເປັນ ກ່ຽວກັບ ການມີສິດຄອບຄອງ ແລະ ນຳໃຊ້ທີ່ດິນ, ຊັບສິນຕ່າງໆ ລວມທັງໃບເສຍພາສີ ແລະ ອື່ນໆ<br><br>ວິທີການທີ່ດີ ແມ່ນອອກຂ່າວກ່ຽວກັບຈຸດປະສົງຂອງໂຄງການ ຜ່ານສື່ |

| | |
|---|---|
| | ມວນຊົນ (ໜັງສືພິມ, ວິທະຍຸ, ໂທລະທັດ..) ແລະຄວນຈັດກອງປະຊຸມກັບປະຊາຊົນ ໃນລະດັບບ້ານ. |
| *ໄລຍະກະກຽມໂຄງການ* | ***ກິດຈະກຳ 1. ເຜີຍແຜ່ຂໍ້ມູນຂ່າວສານ ແລະ ປຶກສາຫາລືກັບຜູ້ທີ່ຖືກກະທົບ ໃນໄລຍະດຳເນີນການສຳຫຼວດ:***<br>• ລາຍລະອຽດ ຂອງໂຄງການ ແລະ ຜົນກະທົບທີ່ອາດເກີດຂຶ້ນ;<br>• ຈຸດປະສົງ ແລະ ເນື້ອໃນຂອງການສຳຫຼວດ;<br>• ເນື້ອໃນຂອງນະໂຍບາຍທົດແທນຄ່າເສຍຫາຍ;<br>• ຂະບວນ ແລະ ຂັ້ນຕອນ ຂອງການມີສ່ວນຮ່ວມ;<br>• ທາງເລືອກໃນການຍົກຍ້າຍຈັດສັນປະຊາຊົນ (ການປັບປຸງໃນທີ່ດິນໃນສ່ວນທີ່ຍັງເຫຼືອ ແລະ ການຍົກຍ້າຍອອກໄປຢູ່ເຂດຍົກຍ້າຍຈັດສັນ ທີ່ກະກຽມໄວ້ ຫຼື ການທົດແທນເປັນເງິນສົດ)<br>• ຂັ້ນຕອນແກ້ໄຂຂໍ້ຂັດແຍ້ງ;<br>• ເມື່ອເປັນໄປໄດ້, ກໍຄວນໄດ້ປຶກສາຫາລື ກ່ຽວກັບ ການເຂົ້າຮ່ວມ ໃນກິດຈະການສ້າງລາຍຮັບ.<br>ວິທີການທີ່ດີ ແມ່ນກະກຽມປຶ້ມໂຄສະນາຂໍ້ມູນຂ່າວສານໃຫ້ມວນຊົນເພື່ອແຈກຢາຍໃຫ້ຜູ້ທີ່ຖືກກະທົບທັງໝົດ. ປຶ້ມດັ່ງກ່າວ ຈະຕ້ອງໄດ້ສະເໜີ ຫຍໍ້ຈຸດປະສົງ, ຜົນໄດ້ຮັບ ແລະ ຜົນກະທົບ, ເນື້ອໃນຂອງນະໂຍບາຍຍົກຍ້າຍຈັດສັນປະຊາຊົນ ແລະ ວິທີການແກ້ໄຂຂໍ້ຂັດແຍ້ງຕ່າງໆ. |
| | ***ກິດຈະກຳ 2. ເຜີຍແຜ່ຂໍ້ມູນຂ່າວສານໃຫ້ອົງການປົກຄອງທ້ອງຖິ່ນ ຫຼັງຈາກສຳເລັດການສຳຫຼວດພົນລະເມືອງ ແລະ ການຂຶ້ນບັນຊີຊັບສິນ ແລະ ໃນໄລຍະກະກຽມການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ/ແຜນການຍົກຍ້າຍຈັດສັນປະຊາຊົນ/ແຜນພັດທະນາຊົນເຜົ່າ***<br>• ສ່ວນປະກອບຍ່ອຍ ຂອງໂຄງການ;<br>• ນະໂຍບາຍ ແລະ ຂັ້ນຕອນ ລວມທັງ ຍຸດທະສາດ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ;<br>• ສະຫຼຸບບັນດາຜົນກະທົບ;<br>• ຂໍ້ສະເໜີ ເພື່ອເລືອກຫາເຂດຍົກຍ້າຍຈັດສັນປະຊາຊົນ, ຖ້າຈຳເປັນ<br>• ຮ່າງຕາຕະລາງຈັດຕັ້ງປະຕິບັດ;<br>• ບົດບາດແລະຄວາມຮັບຜິດຊອບ ຂອງເຈົ້າຂອງໂຄງການ ແລະອົງການປົກຄອງທ້ອງຖິ່ນ. |

*ກິດຈະກຳ 3. ການປຶກສາຫາລື ກັບຊຸມຊົນ ແລະ ຜູ້ກ່ຽວຂ້ອງຕົ້ນຕໍ*

- ໃຫ້ຄຳເຫັນຄືນ ກ່ຽວກັບເຂດຍົກຍ້າຍຈັດສັນປະຊາຊົນ;
- ຄວາມມັກຄວາມພໍໃຈ ກ່ຽວກັບວິທີການການທົດແທນຄ່າເສຍຫາຍ ສຳລັບຊັບສິນບັດຄົງທີ່ ທີ່ຖືກກະທົບ (ເຊັ່ນເງິນສົດ ຫຼື ດິນແທນດິນ);
- ໃນກໍລະນີ ທີ່ຊົນເຜົ່າໜຶ່ງ ຈະຖືກກະທົບຈາກໂຄງການ, ການປຶກສາຫາລື ຍັງຈະຍົກເລື້ອງວັດທະນະທຳ-ສັງຄົມ ທີ່ມີໃນຮ່າງແຜນຍົກຍ້າຍຈັດສັນປະຊາຊົນ/ແຜນພັດທະນາຊົນເຜົ່າ ຂອງໂຄງການອີກດ້ວຍ;
- ເມື່ອຮ່າງແຜນການຍົກຍ້າຍຈັດສັນ/ແຜນພັດທະນາຊົນເຜົ່າ ສຳເລັດແລ້ວ ກໍຕ້ອງສົ່ງໃຫ້ຜູ້ກ່ຽວຂ້ອງຕົ້ນຕໍ ໂດຍໃຫ້ມີພາສາລາວ ແລະ ເອົາໄວ້ໃນສະຖານທີ່ສາທາລະນະ. ເພື່ອໃຫ້ເຂົາເຈົ້າໄດ້ປະກອບຄຳເຫັນ ແລະ ສັງລວມເຂົ້າໃນເອກະສານສຸດທ້າຍ;
- ການປຶກສາຫາລື ກ່ຽວກັບ ລັກສະນະສະເພາະຂອງແມ່ຍິງ ແມ່ນຄວນໄດ້ເອົາໃຈໃສ່ຕື່ມ ເພື່ອຮັບປະກັນກຳມະສິດ, ຊັບສິນ ແລະ ສິດທິນຳໃຊ້ທີ່ດິນຂອງແມ່ຍິງ ແລະ ຮັບປະກັນໃຫ້ມີການຟື້ນຟູລາຍຮັບ ແລະ ມາດຖານຊີວິດຂອງເຂົາເຈົ້າ.

<u>ວິທີການທີ່ດີ</u> ແມ່ນສ້າງເປັນເອກກະສານທີ່ມີລາຍລະອຽດຂອງກອງປະຊຸມຮ່ວມກັບປະຊາຊົນ ພ້ອມທັງວັນທີ, ສະຖານທີ່ ແລະຂໍ້ມູນຂ່າວສານທີ່ມີຢູ່ ແລະບັນຫາສຳຄັນທີ່ພົ້ນເດັ່ນຂຶ້ນ. ຄວນໃຫ້ແຜນການຍົກຍ້າຍຈັດສັນປະຊາຊົນ ແລະເອກກະສານອື່ນໆ ມີບັນຊີເລື້ອງດັ່ງກ່າວ ແລະ ເຮັດເປັນເອກກະສານຄັດຕິດ. ເມື່ອແຈ້ງຂ່າວໃຫ້ປະຊາຊົນແລ້ວ, ລາຍລະອຽດ ລວມທັງເນື້ອໃນຂອງການແຈ້ງຂ່າວນັ້ນແມ່ນຄວນໄດ້ຕິດໄວ້ໃນເອກກະສານນັ້ນ.

ຫຼາຍຊົນເຜົ່າມີການຈັດຕັ້ງຂອງຕົນ ທີ່ອາດຈະເປັນລະບົບ ເພື່ອສື່ສານກ່ຽວກັບຄວາມມັກຄວາມພໍໃຈຂອງເຂົາເຈົ້າ. ເຈົ້າກົກເຈົ້າເຫຼົ່ານັ້ນຈະມີຖານະເປັນໃຈກາງ ເພື່ອປຸກລະດົມປະຊາຊົນ ແລະ ຄວນໄດ້ສະເໜີໃຫ້ພວກເຂົາເຈົ້າໄດ້ເຂົ້າຮ່ວມ ໃນຂະບວນການວາງແຜນ ເພື່ອໃຫ້ມີຕົວແທນຂອງປະຊາຊົນບັນດາເຜົ່າອັນແທ້ຈິງ. ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ກໍອາດມີເພື່ອນຮ່ວມໃນການພັດທະນາດ້ານນີ້.

ຮ່າງແຜນການຍົກຍ້າຍຈັດສັນປະຊາຊົນ/ ແຜນພັດທະນາຊົນເຜົ່າ/ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ແມ່ນຄວນເອົາມາປຶກສາຫາລື ກັບອົງການປົກຄອງທ້ອງຖິ່ນ ແລະ ຄວນເກັບຮັກສາເອກກະສານດັ່ງກ່າວໄວ້ ຢູ່ຫ້ອງການບ້ານ ແລະເມືອງ. ຄວນແຈ້ງຂ່າວໃຫ້ຜູ້ທີ່ຖືກກະທົບຊາບ ກ່ຽວກັບ ເອກະສານດັ່ງກ່າວ ຊຶ່ງມີຢູ່ໃນຫ້ອງການເມືອງ ແລະ ບ້ານ. ຮ່າງແຜນດັ່ງກ່າວ ຄວນໄດ້ເຜີຍແຜ່ໃຫ້ຜູ້ທີ່ຖືກກະທົບຊາບ ໃນຮູບແບບ ແລະ ພາສາທີ່ເຂົາເຈົ້າເຂົ້າໃຈງ່າຍ. ອັນນີ້ອາດເປັນແຜ່ນພັບ, ບົດສະຫຼຸບ ຫຼື ເອກໍາສານຄົບຊຸດ ກ່ຽວກັບ ການຍົກຍ້າຍຈັດສັນປະຊາຊົນ. ຮ່າງແຜນການຍົກຍ້າຍຈັດສັນປະຊາຊົນ/ ແຜນພັດທະນາຊົນເຜົ່າ/ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ສະບັບສຸດທ້າຍ ຄວນໄດ້ນຳເອົາມາເຜີຍແຜ່ໃຫ້ຜູ້ທີ່ຖືກກະທົບຊາບ.

| | |
|---|---|
| *ການຈັດຕັ້ງປະຕິບັດ* | ***ກິດຈະກຳ 1. ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການຝຶກອົບຮົມ ພາຍຫຼັງຮ່າງແຜນການຍົກຍ້າຍຈັດສັນປະຊາຊົນ/ ແຜນພັດທະນາຊົນເຜົ່າ ໄດ້ຮ່າງສຳເລັດ***<br>- ຕາຕະລາງ ເພື່ອເລີ້ມວຽກ;<br>- ຈັດການຝຶກອົບຮົມ ກ່ຽວກັບ ການເກັບແລະນຳໃຊ້ສິ່ງເສດເຫຼືອຄືນໃໝ່ ແລະ ບົດບາດຂອງຊຸມຊົນ ຕໍ່ແຜນການຄຸ້ມຄອງສິ່ງແວດລ້ອມ ຖ້າເຮັດໄດ້;<br>- ກະກຽມການຝຶກອົບຮົມໃຫ້ພະນັກງານທ້ອງຖິ່ນ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນປະຊາຊົນ (ຜູ້ຕາງໜ້າເຈົ້າຂອງໂຄງການ ຄວນໄດ້ເຂົ້າຮ່ວມ) ແລະ ການຝຶກອົບຮົມ ກ່ຽວກັບ ບັນຫາຕ່າງໆທີ່ພົວພັນກັບແຕ່ລະການຈັດຕັ້ງ ໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ;<br>- ເຜີຍແຜ່ຂໍ້ມູນຂ່າວສານລະອຽດ ກ່ຽວກັບ ນະໂຍບາຍຂອງໂຄງການ ແລະ ຂັ້ນຕອນຈັດຕັ້ງປະຕິບັດ. |
| | ***ກິດຈະກຳ 2. ການພົບປະກັບປະຊາຊົນ: ເຜີຍແຜ່ຂ່າວສານໃຫ້ຜູ້ທີ່ຖືກກະທົບ ກ່ຽວກັບ***<br>- ສິດທິຂອງຜູ້ທີ່ຖືກກະທົບ ທີ່ຈະໄດ້ການທົດແທນຄ່າເສຍຫາຍ;<br>- ກົນໄກ ໄກ່ເກ່ຍຂໍ້ຂັດແຍ່ງ ແລະ ຂະບວນການອຸທອນ;<br>- ສິດທິການມີສ່ວນຮ່ວມ ແລະ ໄດ້ຮັບການປຶກສາຫາລື;<br>- ຕາຕະລາງເວລາເຄື່ອນໄຫວກິດຈະກຳຍົກຍ້າຍຈັດສັນປະຊາຊົນ ແລະ ຕິດຕາມ ເພື່ອຕໍ່ອາຍຸບັນຊີຊັບສິນ ແລະ ກຳນົດເງື່ອນໄຂທີ່ໄດ້ຮັບການຊ່ວຍເຫຼືອ;<br>- ຄວາມຮັບຜິດຊອບຂອງອົງການຈັດຕັ້ງຕ່າງໆ;<br>- ແຜນການຍົກຍ້າຍຈັດສັນປະຊາຊົນ/ ແຜນພັດທະນາຊົນເຜົ່າ ແລະ ກົນໄກການຈັດຕັ້ງ;<br><br>ຄວນມີເວລາເໝາະສົມ ໃຫ້ອົງການປົກຄອງທ້ອງຖິ່ນເພື່ອພົວພັນ ແລະ ແຈ້ງໃຫ້ຜູ້ທີ່ຖືກກະທົບທຸກຄົນ ໄດ້ຮັບຊາບກ່ຽວກັບຈຸດປະສົງ, ເວລາ ແລະສະຖານທີ່ປະຊຸມ. ທັງຜູ້ຊາຍ ແລະ ແມ່ຍິງ ຈາກຄອບຄົວຂອງຜູ້ທີ່ຖືກກະທົບ ຄວນໃຫ້ເຂົ້າມາຮ່ວມ. ການອະທິບາຍຄວນເຮັດໃຫຈະແຈ້ງ ແລະ ມີຮູບພາບ ປະກອບນຳ. ຄວນສ້າງໂອກາດທີ່ເໝາະສົມໃຫ້ແກ່ຜູ້ທີ່ຖືກກະທົບ ເພື່ອໃຫ້ເຂົາເຈົ້າສາມາດມີຄຳເຫັນຄືນ, ວາງຄຳຖາມ ແລະ ສ້າງແນວຄວາມຄິດໃຫ້ເຂົາ ເຈົ້າສາມາດມີກິດຈະກຳສ້າງລາຍຮັບ ແລະ ທາງເລືອກໃນການຟື້ນຟູເສດຖະກິດ. ຄວນຮັກສາບັນຊີລະອຽດຂອງຜູ້ທີ່ຖືກກະທົບທີ່ມາປະຊຸມ, ບັນດາຄຳຖາມ, ຄຳເຫັນ, ຄຳສະເໜີ ແລະ ຂໍ້ຕົກລົງ ທີ່ໄດ້ດຳເນີນໃນກອງປະຊຸມນີ້. |
| ***ການຈັດຕັ້ງປະຕິບັດ(ຕໍ່)*** | *ກິດຈະກຳ 3. ຂຶ້ນແຜນລົງຢ້ຽມຢາມຜູ້ທີ່ຖືກກະທົບ ເພື່ອ:* |

| | |
|---|---|
| | - ຕໍ່ອາຍຸບັນຊີ ແລະ ກຳນົດເງື່ອນໄຂ ທີ່ຈະໃຫ້ການຊ່ວຍເຫຼືອ;<br>- ສະເໜີບັນຊີສຸດທ້າຍ ແລະ ສິດທິດັ່ງກ່າວ ໃຫ້ຜູ້ທີ່ຖືກກະທົບເຫັນດີນຳ;<br>- ຕື່ມຟອມການທົດແທນຄ່າເສຍຫາຍ ສຳລັບຜູ້ທີ່ຖືກກະທົບ ແຕ່ລະຄົນ ແລະ ໃຫ້ເຂົາເຈົ້າລົງລາຍເຊັນໃນຟອມນັ້ນ;<br>- ບັນທຶກການໄກ່ເກ່ຍ ກ່ຽວກັບ ບັນຊີແລະສິດທິດັ່ງກ່າວ;<br>- ບັນທຶກຄວາມມັກຄວາມພໍໃຈຂອງເຂົາເຈົ້າ ວ່າຈະເອົາເງິນສົດຫຼື ເອົາດິນແທນດິນ ແລະ ມາດຕະການຊ່ວຍເຫຼືອໃນການຟື້ນຟູເສດຖະກິດ. ປະກອບເອກະສານ ກ່ຽວກັບ ຄວາມມັກຄວາມພໍໃຈ ເພື່ອເອົາເຂົ້າໃນການວາງຜັງເຂດຍົກຍ້າຍຈັດສັນປະຊາຊົນ ແລະ ມາດຕະການ ທີ່ເໝາະສົມໃນການຊ່ວຍເຫຼືອຟື້ນຟູເສດຖະກິດ;<br>- ສະເໜີຄວາມເຫັນດີນຳເຂົາເຈົ້າ ກ່ຽວກັບ ຈຳນວນເງິນ ທີ່ຈະຕ້ອງໄດ້ຈ່າຍສຳລັບການບໍລິການສິ່ງເສີມ ໃນໂຄງການຍ່ອຍ.<br><br>ວິທີທີ່ດີ ເພື່ອຈະມອບຟອມທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ຖືກກະທົບແຕ່ລະຄົນ, ໃນນັ້ນ ຈະຕ້ອງໄດ້ມີການບັນທຶກຊັບສົມບັດຄົງທີ່ ທີ່ຖືກ ເສຍຫາຍ, ສິດທິທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ແລະ ມູນຄ່າຂອງການທົດແທນຄ່າເສຍຫາຍ. ສະເໜີຜູ້ທີ່ຖືກກະທົບ ໃຫ້ເຊັນຟອມດັ່ງກ່າວ ເພື່ອຢັ້ງຢືນ ວ່າເຫັນດີນຳບັນຊີດັ່ງກ່າວ ແລະ ສິດທິທີ່ຈະໄດ້ຮັບ ແລະ ມູນຄ່າຂອງການທົດແທນຄ່າເສຍຫາຍ. |
| | *ກິດຈະກຳ 4: ຂໍ້ມູນຂ່າວສານ ກ່ຽວກັບ ການທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ຖືກກະທົບ*<br>ຄວນສົ່ງຈົດໝາຍແຈ້ງການໃຫ້ຜູ້ທີ່ຖືກກະທົບແຕ່ລະຄົນຮັບຊາບ ກ່ຽວກັບ ເວລາ, ຂັ້ນຕອນ ແລະ ສະຖານທີ່ ທີ່ຈະຈ່າຍການທົດແທນຄ່າເສຍຫາຍ. ຜູ້ທີ່ຖືກກະທົບ ຄວນໄດ້ຮັບຂ່າວລ່ວງໜ້າ ກ່ຽວກັບ ເອກະສານຕ່າງໆ (ເອກະສານທາງການ, ສຳມະໂນຄົວ, ບັດປະຊາຊົນ, ໃບຕາດິນ ແລະ ອື່ນໆ...) ຊຶ່ງຈະໄດ້ຖືມານຳ ເພື່ອເປັນການຢັ້ງຢືນໃນການທົດແທນ.<br>ເກັບຮັກສາບັນຊີການໄກ່ເກ່ຍຂໍ້ຂັດຂ້ອງ ແລະ ວຽກທີ່ໄດ້ດຳເນີນມາ. |
| | *ກິດຈະກຳ 5: ການປຶກສາຫາລື ກັບຜູ້ທີ່ຖືກກະທົບ ເພື່ອໃຫ້ເຂົາເຈົ້າຢັ້ງຢືນຄວາມມັກຄວາມພໍໃຈ ທີ່ຢາກໄດ້ການຊ່ວຍເຫຼືອໃນ ການຟື້ນຟູເສດຖະກິດ (ຟື້ນຟູລາຍຮັບ)*<br>ຜູ້ທີ່ຖືກກະທົບ ທີ່ມີສິດໄດ້ຮັບການຊ່ວຍເຫຼືອຟື້ນຟູເສດຖະກິດ ແລະລາຍຮັບ ຄວນຈະມາຢັ້ງຢືນຄວາມມັກຄວາມພໍໃຈຂອງຕົນເອງ ວ່າຈະເອົາປະເພດໃດ ແລະ ເວລາທີ່ຕ້ອງການ ການຊ່ວຍເຫຼືອນັ້ນ.<br>ວິທີການທີ່ດີ ແມ່ນໃຫ້ຜູ້ທີ່ຖືກກະທົບບອກຄວາມມັກຄວາມພໍໃຈ ໃນເວລາຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງໂຄງການ ເພື່ອໃຫ້ເຂົາເຈົ້າມີແຫລ່ງລາຍຮັບເພີ້ມ ໃນໄລຍະຈັດຕັ້ງປະຕິບັດໂຄງການ. |

| | |
|---|---|
| *ການຈັດຕັ້ງປະຕິບັດ (ຕໍ່)* | *ກິດຈະກຳ 6: ການເຜີຍແຜ່ຂໍ້ມູນຂ່າວສານໃຫ້ຜູ້ທີ່ຖືກກະທົບ ກ່ຽວກັບ ການຍົກຍ້າຍຈັດສັນ ແລະ ການບຸກເບີກສະຖານທີ່, ເມື່ອເຮັດໄດ້.*<br>ຜູ້ທີ່ຖືກກະທົບ ຄວນໄດ້ປຶກສາຫາລືແລະແຈ້ງ ກ່ຽວກັບ ເວລາຍົກຍ້າຍຈັດສັນ ແລະ ການບຸກເບີກສະຖານທີ່ຕ່າງໆ ແລະ ການປະສານງານກັບວຽກກໍ່ສ້າງ. ຜູ້ທີ່ຖືກກະທົບ ຄວນມີເວລາພຽງພໍ ເພື່ອເກັບກ່ຽວຜົນລະປູກ ແລະ ຈັດການມ້າງເອົາຊັບສິນ ກ່ອນຈະເລີ້ມວຽກກໍ່ສ້າງ, ໃນບ່ອນທີ່ຈຳເປັນ. |
| | *ກິດຈະກຳ 7: ການເຜີຍແຜ່ຂໍ້ມູນຂ່າວສານໃຫ້ມວນຊົນ ແລະ ຜູ້ທີ່ຖືກກະທົບ ກ່ຽວກັບ ເວລາເລີ້ມວຽກກໍ່ສ້າງ*<br>ເຈົ້າຂອງໂຄງການ, ອົງການປົກຄອງທ້ອງຖິ່ນ ແມ່ນຄວນແຈ້ງຂ່າວໃຫ້ມວນຊົນ ທີ່ຢູ່ໃກ້ ຫຼືຢູ່ໃນເຂດໂຄງການຮັບຊາບ ກ່ຽວກັບ ເວລາເລີ້ມກໍ່ສ້າງ. ຄວນແຈ້ງຂ່າວໃຫ້ມວນຊົນໂດຍຜ່ານທາງໜັງສືພິມ, ວິທະຍຸ ແລະ ໂທລະພາບ.<br>ວິທີການທີ່ດີ ແມ່ນສ້າງກົນໄກໃຫ້ຜູ້ທີ່ຖືກກະທົບ ໄດ້ເຂົ້າຮ່ວມໃນການຕິດຕາມກວດກາການຍົກຍ້າຍຈັດສັນປະຊາຊົນ ແລະ ກິດຈະກຳອື່ນໆ ເພື່ອຈັດຕັ້ງປະຕິບັດ ໂຄງການໃນພາກສ່ວນຕ່າງໆ. ການເຂົ້າຮ່ວມຂອງຜູ້ທີ່ຖືກກະທົບ ໃນການຕິດຕາມກວດກາ ແມ່ນຈະເຮັດໃຫ້ວຽກງານຄຸ້ມຄອງໂຄງການ ໄດ້ສະແດງໃຫ້ເຫັນຈະແຈ້ງ ປະຕິກິລິຍາ ແລະ ຄວາມນຶກຄິດຂອງຜູ້ທີ່ຖືກກະທົບ. |
| | *ກິດຈະກຳ 8: ການຊ່ວຍເຫຼືອໃນເວລາຍົກຍ້າຍຈັດສັນ*<br>ຜູ້ທີ່ຖືກກະທົບ ຄວນໄດ້ຮັບການຊ່ວຍເຫຼືອ ໃນການຍົກຍ້າຍໄປຢູ່ບ່ອນໃໝ່ ໂດຍໃຫ້ການສະໜັບສະໜູນໃນການຂົນສິ່ງ ແລະ ຂຶ້ນຢູ່ເຮືອນໃໝ່. ອັນນີ້ ອາດໃຫ້ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລເຂົ້າຊ່ວຍ ກໍອາດເປັນໄປໄດ້ ໂດຍຮ່ວມມືກັບພະນັກງານທ້ອງຖິ່ນ ແລະ ພະນັກງານໂຄງການ. |
| | *ກິດຈະກຳ 9: ການບັນທຶກ ແລະ ຕອບທຸກບັນຫາທີ່ກ່ຽວຂ້ອງກັບສິ່ງແວດລ້ອມ*<br>ກຸ່ມຜູ້ທີ່ຖືກກະທົບ ແລະ ມວນຊົນທົ່ວໄປ ຄວນມີກົນໄກເພື່ອຮ້ອງທຸກ ກ່ຽວກັບ ບັນຫາສິ່ງແວດລ້ອມທີ່ສົ່ງຜົນກະທົບເຖິງເຂົາເຈົ້າ. (ລວມທັງສຽງດັງ ແລະ ການລົບກວນອື່ນໆ) ເຈົ້າຂອງໂຄງການ ຄວນແກ້ໄຂຄຳຮ້ອງທຸກ ແລະ ບັນທຶກການຮ້ອງທຸກ ພ້ອມທັງການແກ້ໄຂ ຊຶ່ງເປັນພາກສ່ວນໜຶ່ງຂອງບົດລາຍງານທີ່ຕ້ອງໄດ້ເຮັດ ສົ່ງໄປຫາອົງການຈັດຕັ້ງທີ່ຖືກຕ້ອງ. |
| *ການຕີລາຄາ ຫຼັງສ້າງໂຄງການ* | ການຕີລາຄາຫຼັງສ້າງໂຄງການ ແມ່ນມີຄວາມຈຳເປັນຕ້ອງປຶກສາຫາລືກັບຜູ້ທີ່ໄດ້ຮັບຜົນກະທົບ, ຜູ້ກ່ຽວຂ້ອງຕົ້ນຕໍ ແລະ ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ.<br>ວິທີການທີ່ດີ ກໍຄືວ່າ ປຶກສາຫາລືກັບຜູ້ທີ່ຖືກກະທົບ ໃນການວາງແຜນການ ແລະ ຈັດຕັ້ງປະຕິບັດ ການຕີລາຄາດັ່ງກ່າວ, ໂດຍສະເພາະ ກ່ຽວກັບ ຈຸດປະສົງພື້ນຖານຂອງການຍົກຍ້າຍຈັດສັນປະຊາຊົນ ເຊັ່ນ ການຟື້ນຟູລາຍຮັບ ແລະ ມາດຖານຊີວິດການເປັນຢູ່ ໂດຍສະເພາະ ແມ່ນແຜນຕິດຕາມກວດກາ ຫຼື ມາດຕະການແກ້ໄຂທີ່ຈະນຳໄປຈັດຕັ້ງປະຕິບັດ. |

ເອກກະສານຄັດຕິດ 25

## ຕົວແບບຂອງແຜນການປຶກສາຫາລືກັບປະຊາຊົນແລະເຜີຍແຜ່ຂໍ້ມູນຂ່າວສານ

| ກິດຈະກຳ | ໜ້າວຽກ | ເວລາ (ວັນທີ/ໄລຍະ) | ຈ/ນ ຄົນ | ອົງການ ຈັດຕັ້ງ | ຄຳເຫັນ/ ບັນຫາ ທີ່ຍົກ ຂຶ້ນ | ໝາຍ ເຫດ |
|---|---|---|---|---|---|---|
| ກຳນົດຜູ້ມີສ່ວນຮ່ວມ | ແຕ້ມເຂດໂຄງການ ເຂົ້າໃນແຜນທີ່ | | | | | |
| ເຜີຍແຜ່ຂໍ້ມູນຂ່າວສານຂອງໂຄງການ | ແຈກຢາຍແຜ່ນພັບໃຫ້ຜູ້ທີ່ຖືກກະທົບ | | | | | |
| ກອງປະຊຸມປຶກສາຫາລືກັບຜູ້ທີ່ຖືກກະທົບໃນໄລຍະກອບວຽກ | ປຶກສາຫາລືຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ | | | | | |
| ແຈ້ງຂ່າວມວນຊົນ | ເຜີຍແຜ່ບັນຊີທີ່ດິນ/ເຂດທີ່ຖືກກະທົບໃນໜັງສືພິມທ້ອງຖິ່ນ, ກຳນົດມື້ເລີ້ມໂຄງການ | | | | | |
| ການສຳຫຼວດເສດຖະກິດ-ສັງຄົມ | ເກັບກຳຂໍ້ມູນ ກ່ຽວກັບ ຜູ້ທີ່ຖືກກະທົບ ດ້ານເສດຖະກິດ-ສັງຄົມ ລວມທັງ ທັດສະນະຂອງເຂົາເຈົ້າຕໍ່ໂຄງການ | | | | | |
| ກອງປະຊຸມປຶກສາຫາລືກ່ຽວກັບມາດຕະການຫຼຸດຜ່ອນການຍົກຍ້າຍ | ປຶກສາຫາລື ກ່ຽວກັບ ການໄດ້ຮັບສິດທິ, ອັດຕາການທົດແທນຄ່າເສຍຫາຍ, ການຟື້ນຟູລາຍຮັບ, ການເລືອກເອົາບ່ອນຍົກຍ້າຍຈັດສັນ, ກົນໄກແກ້ໄຂຂໍ້ຂັດແຍ່ງ | | | | | |
| ພິມໂຄສະນາແຜນຍົກຍ້າຍຈັດສັນປະຊາຊົນ | ແຈກຢາຍແຜ່ນພັບ ຫຼື ປຶ້ມນ້ອຍ ເປັນພາສາທ້ອງຖິ່ນ | | | | | |
| ເຜີຍແຜ່ທັງໝົດແຜນຍົກຍ້າຍຈັດສັນປະຊາຊົນໃຫ້ຜູ້ທີ່ຖືກກະທົບ | ແຈກຢາຍແຜນການຍົກຍ້າຍຈັດສັນປະຊາຊົນ ເປັນພາສາທ້ອງຖິ່ນ | | | | | |
| ເອົາແຜນການຍົກຍ້າຍຈັດສັນປະຊາຊົນ ອອກໃນອິນເຕີແນັດ | ເອົາແຜນການຍົກຍ້າຍຈັດສັນປະຊາຊົນ ອອກໃນເວບໄຊຂອງຜູ້ໃຫ້ທຶນ ຫຼື ເຈົ້າຂອງໂຄງການ | | | | | |
| ກອງປະຊຸມປຶກສາຫາລືໃນໄລຍະ ສຳຫຼວດວັດ | ປະຊຸມປຶກສາຫາລື ກັບປະຊາຊົນ ໃຫ້ຜູ້ທີ່ຖືກກະທົບ | ໃນໄລຍະສຳ | | | | |

| | | | | | | |
|---|---|---|---|---|---|---|
| ແທກລະອຽດ | | ຫຼວດ ວັດ ແທກ ລະອຽດ | | | | |
| ເຜີຍແຜ່ຫຼັງຈາກສຳ ຫຼວດວັດແທກລະອຽດ | ເຜີຍແຜ່ ແຜນການຍົກຍ້າຍຈັດ ສັນປະຊາຊົນທີ່ໄດ້ປັບປຸງ ໃຫ້ ປະຊາຊົນໃຫ້ຜູ້ທີ່ຖືກກະທົບ | ພາຍຫຼັງ ສຳຫຼວດ ວັດ ແທກ ລະອຽດ | | | | |
| ເອົາແຜນການຍົກຍ້າຍ ຈັດສັນປະຊາຊົນທີ່ໄດ້ ປັບປຸງມາ ອອກໃນອິນ ເຕີແນັດ | ເອົາແຜນການຍົກຍ້າຍຈັດສັນ ປະຊາຊົນ ທີ່ໄດ້ປັບປຸງມາ ອອກ ໃນເວບໄຊຂອງຜູ້ໃຫ້ທຶນ ຫຼື ເຈົ້າ ຂອງໂຄງການ | | | | | |
| ປຶກສາຫາລື ແລະ ເຜີຍ ແຜ່ກົນໄກ ກ່ຽວກັບ (i)ການ ຈັດຕັ້ງ ປະຕິບັດ,(ii)ການ ຕິດຕາມກວດກາ | | | | | | |

# ການກວດກາບັນຫາບົດບາດຍິງຊາຍ: ກົນໄກແກ້ໄຂຂໍ້ຂັດແຍ່ງໃນ ວຽກຍົກຍ້າຍຈັດສັນປະຊາຊົນ

**ບັນຫາສຳຄັນ**

- ກົນໄກທີ່ສັບສົນ ທີ່ນຳໃຊ້ລະບົບຂອງສານ ປາກົດວ່າມັກຂັດກັບແມ່ຍິງ, ຍ້ອນແມ່ຍິງສ່ວນຫຼາຍບໍ່ລຶ້ງກັບສະຖາບັນດັ່ງກ່າວ;
- ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ຕ້ອງສ້າງຂຶ້ນຢ່າງເໝາະສົມ ເພື່ອແກ້ໄຂເລື້ອງຄວາມສະເໝີພາບຍິງຊາຍທີ່ອາດຍົກຂຶ້ນ ແລະ ມີກົນໄກເພື່ອໃຫ້ການບໍລິການໃຫ້ແກ່ແມ່ຍິງ.

**ຄຳຖາມສຳຄັນ**

- ກົນໄກແກ້ໄຂຂໍ້ຂັດແຍ່ງ ໄດ້ມີໂຄງສ້າງທີ່ຈະແກ້ໄຂເລື້ອງຄວາມສະເໝີພາບຍິງຊາຍບໍ?
- ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ມີຈິດສຳນຶກ ກ່ຽວກັບ ເລື້ອງຄວາມສະເໝີພາບຍິງຊາຍຢູ່ບໍ?
- ຄະນະເອົາໃຈໃສ່ນຳບັນຫາທີ່ແມ່ຍິງພົບ ຢູ່ບໍ?
- ມີແມ່ຍິງເປັນສະມາຊິກຂອງຄະນະດັ່ງກ່າວ ຫຼື ອົງການອື່ນໆ ທີ່ສ້າງຂຶ້ນແລ້ວ ແລະ ຈະສ້າງຂຶ້ນ?

**ຍຸດທະສາດສຳຄັນ**

- ປຶກສາຫາລື ກ່ຽວກັບ ໂຄງຮ່າງການຈັດຕັ້ງຂອງກົນໄກແກ້ໄຂຂໍ້ຂັດແຍ່ງ ກັບແມ່ຍິງ;
- ແມ່ຍິງສາມາດເຂົ້າເຖິງ ແລະ ນຳໃຊ້ກົນໄກດັ່ງກ່າວບໍ?
- ຮັບປະກັນໃຫ້ມີແມ່ຍິງເປັນສະມາຊິກຂອງຄະນະດັ່ງກ່າວ ຫຼື ອົງການອື່ນໆທີ່ກ່ຽວຂ້ອງທັງອັນທີ່ເປັນທາງການ ແລະ ບໍ່ເປັນທາງການ;
- ຄວນຈັດການຝຶກອົບຮົມພະນັກງານຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ໃນການແກ້ໄຂບັນຫາທີ່ລະອຽດອ່ອນ ກັບແມ່ຍິງ;
- ເມື່ອພໍເຮັດໄດ້, ກົນໄກຄວນສ້າງຂຶ້ນ ທີ່ຈະບໍ່ເຮັດໃຫ້ແມ່ຍິງຂຶ້ນສານ ຍ້ອນໂດຍທົ່ວໄປແລ້ວມັນຍາກສຳລັບແມ່ຍິງທີ່ຈະນຳໃຊ້ກົນໄກດັ່ງກ່າວ.

ແຫຼ່ງຂໍ້ມູນ: ລາຍການເພື່ອກວດເບິ່ງເລື້ອງສະເໝີພາບຍິງຊາຍ, ການຍົກຍ້າຍຈັດສັນປະຊາຊົນ, ທະນາຄານພັດທະນາອາຊີ, ເດືອນ ກຸມພາ 2003, ໜ້າ 31

**ເອກະສານຄັດຕິດ 27**

# ການກວດກາບັນຫາບົດບາດຍິງຊາຍ: ການຕິດຕາມກວດກາ ແລະ ຕີລາຄາ ໃນວຽກຍົກຍ້າຍຈັດສັນປະຊາຊົນ

**ບັນຫາສໍາຄັນ**

- ຕົວຊີ້ວັດສໍາລັບການຕິດຕາມກວດກາ ແລະ ຕີລາຄາ ຄວນມີຄໍາຖາມສະເພາະ ແລະ ຕົວຊີ້ວັດສໍາລັບຄວາມສະເໝີພາບຍິງຊາຍ ການຕິດຕາມກວດກາ ແລະ ຕີລາຄາ ຄວນຮ່ວມກັນເຮັດລະຫວ່າງອົງການຮັບຜິດຊອບໂຄງການ, ຜູ້ຕິດຕາມກວດກາຈາກພາຍນອກ ແລະ ຊຸມຊົນ

**ຄໍາຖາມສໍາຄັນ**

- ຕົວຊີ້ວັດສໍາລັບການຕິດຕາມກວດກາແລະຕີລາຄາ ໄດ້ມີເລື້ອງການຟື້ນຟູຊີວິດການເປັນຢູ່, ຄວາມປອດໄພ, ການຢູ່ໄດ້ແລະບັນຫາອື່ນໆຂອງແມ່ຍິງ ທີ່ຍົກຂຶ້ນໃນລາຍການກວດກາສະບັບນີ້ບໍ?
- ອົງການທີ່ມອບໝາຍ ມີຈິດສໍານຶກກ່ຽວກັບເລື້ອງຄວາມສະເໝີພາບຍິງຊາຍຢູ່ບໍ?
- ມີງົບປະມານພຽງພໍບໍ?
- ຂໍ້ມູນພື້ນຖານກ່ຽວກັບການຕິດຕາມກວດກາ ແລະ ຕີລາຄາ ມີເລື້ອງຄວາມສະເໝີພາບຍິງຊາຍຢູ່ບໍ?
- ມີການສ້າງກົນໄກທີ່ເໝາະສົມ ເພື່ອໃຫ້ມີການເຂົ້າຮ່ວມ ແລະ ແມ່ຍິງກໍລວມໃນນັ້ນບໍ?
- ເລື້ອງຄວາມສະເໝີພາບຍິງຊາຍ ໄດ້ມີໃນແຜນໜ້າວຽກ ຂອງຫົວໜ້າທີ່ປຶກສາບໍ?

**ຍຸດທະສາດສໍາຄັນ**

- ສົ່ງເສີມການເຂົ້າຮ່ວມຂອງແມ່ຍິງໃນການວາງແຜນ, ອອກແບບແລະຈັດຕັ້ງປະຕິບັດ ການຕິດຕາມກວດກາແລະຕີລາຄາ;
- ຮັບປະກັນວ່າ ກົນໄກການຈັດຕັ້ງ ທີ່ໄດ້ສ້າງຂຶ້ນທັງໃນອົງການຮັບຜິດຊອບໂຄງການ ແລະ ໃນຊຸມຊົນນັ້ນ ລວມເອົາແມ່ຍິງເຂົ້າໃນທີມງານ;
- ຮັບປະກັນ ການຕິດຕາມກວດກາແລະຕີລາຄາ ໄດ້ລວມເອົາຄໍາເຫັນສະເພາະຂອງແມ່ຍິງ;
- ຮັບປະກັນ ກົນໄກການຈັດຕັ້ງທີ່ອີງໃສ່ຊຸມຊົນ ໄດ້ມີຕົວແທນແມ່ຍິງຢ່າງສົມສ່ວນ;
- ລວມເອົາເລື້ອງຄວາມສະເໝີພາບຍິງຊາຍ ເຂົ້າໃນໃນແຜນໜ້າວຽກ ຂອງທີ່ປຶກສາ;
- ຮັບປະກັນ ໄດ້ມີການທົບທວນຄືນການຈັດຕັ້ງປະຕິບັດວຽກທີ່ພົວພັນກັບຄວາມສະເໝີພາບຍິງຊາຍ ແລະ ໄດ້ມີການລາຍງານຈາກພະນັກງານທີ່ເຮັດວຽກງານດັ່ງກ່າວ.

ແຫຼ່ງຂໍ້ມູນ: ລາຍການເພື່ອກວດເບິ່ງເລື້ອງສະເໝີພາບຍິງຊາຍ, ການຍົກຍ້າຍຈັດສັນປະຊາຊົນ, ທະນາຄານພັດທະນາອາຊີ, ເດືອນ ກຸມພາ 2003, ໜ້າ 33

**ເອກະສານຄັດຕິດ 28**

ຕ໐̈¸µÈາງຂອງÁຜນ¸ຼ¡ສ¿ລັບ¡ານຕ໋ດຕາມ¡¸ດ¡າ ¡ານຈັດຕ˜ງ¯ະຕ໋ບັດ

Áຜນຍ໐̈¡ຍÉາຍຈັດສັນ¯ະຊາຊ໐̈ນ ຈາ¡²າຍນອ¡

**1. ຄວາມເປັນມາຂອງໂຄງການ**

**2. ສະຫຼຸບຫຍໍ້ ຜົນກະທົບຂອງໂຄງການ**

**3. ການຕິດຕາມກວດກາ ຈາກພາຍນອກ**

## ຈຸດປະສົງ

ຈຸດປະສົງໃຫຍ່ ຂອງການຕິດຕາມກວດກາ ມີດັ່ງນີ້:

1.) ເພື່ອເປັນເຄື່ອງມືທີ່ດີສຳລັບການນຳຂອງໂຄງການ ໃນການປະເມີນການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດ ໃນໄລຍະຕ່າງໆ ແລະເພື່ອກຳນົດເບິ່ງບັນຫາ ແລະ ມາດຕະການແກ້ໄຂ ເພື່ອຈັດຕັ້ງປະຕິບັດນະໂຍບາຍໃຫ້ມີປະສິດທິຜົນ;

2.) ເພື່ອປະເມີນປະສິດທິພາບຂອງ "ການຟື້ນຟູລາຍຮັບ" ແລະມາດຕະການອື່ນໆ ສຳລັບຄອບຄົວ/ຊຸມຊົນ ທີ່ຖືກກະທົບ.

## ຄາດໝາຍ ແລະໜ້າທີ່ຂອງການຕິດຕາມກວດກາ

ຄາດໝາຍແລະໜ້າທີ່ຂອງການຕິດຕາມກວດກາ ມີດັ່ງນີ້:

1.) ທົບທວນຂໍ້ມູນພື້ນຖານທີ່ມີຢູ່ ກັບຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມທີ່ເກັບມາໄດ້ເພີ້ມ, ຖ້າຈຳເປັນ, ຈາກຄອບຄົວຕົວແບບ ທີ່ໄດ້ຮັບການທົດແທນຄ່າເສຍຫາຍຈາກຊັບສິນທີ່ສູນເສຍທັງໝົດ ຫຼື ຈາກການຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່;

2.) ຕິດຕາມກວດກາ ການຈັດຕັ້ງປະຕິບັດນະໂຍບາຍການທົດແທນຄ່າເສຍຫາຍແລະການເຜີຍແຜ່ຂໍ້ມູນຂ່າວສານໃຫ້ມວນຊົນ;

3.) ກຳນົດຂໍ້ຂາດຕົກບົກຜ່ອງ ລະຫວ່າງສະພາບຕົວຈິງ ກັບຈິດໃຈຂອງນະໂຍບາຍລວມທັງການໄກ່ເກ່ຍຂໍ້ຂັດແຍ່ງໃນລະດັບທ້ອງຖິ່ນ, ຖ້າມີ;

4.) ໃຫ້ຄຳແນະນຳ ເພື່ອປັບປຸງການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ.

## ວິທີການ

ວິທີການຕິດຕາມກວດກາ ຈະປະກອບດ້ວຍ:

1.) ທົບທວນເອກກະສານ ກ່ຽວກັບການເວນຄືນທີ່ດິນ ແລະການທົດແທນຄ່າເສຍຫາຍເພື່ອຮັບປະກັນວ່າ ມັນໄດ້ຖືກປະຕິບັດຕາມນະໂຍບາຍຢ່າງຄົບຖ້ວນ. ການທົບ

ທວນດັ່ງກ່າວ ຄວນກວມລວມເອົາທັງຕົວແບບຂອງຜູ້ທີ່ໄດ້ຮັບສິດທິດແທນຈາກໂຄງການ ໃຫ້ໄດ້ປະມານ 30%;

2.) ລົງກວດກາພາກສະໜາມ ບ່ອນທີ່ມີການເວນຄືນທີ່ດິນ, ເພື່ອໃຫ້ມີຄວາມໝັ້ນໃຈວ່າການທົດແທນຄ່າເສຍຫາຍ ໄດ້ຈ່າຍຄົບຖ້ວນກ່ອນເລີ້ມວຽກກໍ່ສ້າງ, ການທົດແທນຄ່າເສຍຫາຍ ຕ້ອງໄດ້ຖືກປະເມີນບົນຫຼັກການ "ມູນຄ່າປ່ຽນແທນຄືນ" ແລະຂໍ້ຂັດແຍ່ງຕ້ອງໄດ້ແກ້ໄຂ, ຖ້າຫາກມັນເກີດຂຶ້ນ. ກິດຈະກຳດັ່ງກ່າວ ແມ່ນຈະກວມເອົາຈຳນວນ 20% ຂອງຄອບຄົວທີ່ກ່ຽວຂ້ອງໃນແຕ່ລະປີ. ເພື່ອໄດ້ຕາມຈຸດປະສົງດັ່ງກ່າວ, ການຕິດຕາມກວດກາ ແມ່ນຈະໄດ້ກວມລວມເອົາບາງລັກສະນະສຳຄັນດັ່ງນີ້:

- ບັນຊີຊັບສິນທີ່ຖືກຜົນກະທົບ;
- ການປະເມີນການທົດແທນຄ່າເສຍຫາຍ ຂອງຊັບສິນທຸກປະເພດ ໂດຍອີງໃສ່ຫຼັກການມູນຄ່າປ່ຽນແທນ;
- ການທົດແທນຄ່າເສຍຫາຍ ແມ່ນຈ່າຍກ່ອນເລີ້ມການກໍ່ສ້າງ.

3.) ການສຶກສາພິເສດ ແມ່ນແນໃສ່ການຢັ້ງຢືນຄວາມເໝາະສົມຂອງການທົດແທນຄ່າເສຍຫາຍ ຈາກການເວນຄືນທີ່ດິນ ແລະ/ຫຼື ຊັບສົມບັດຄົງທີ່ອື່ນໆ ໂດຍສົມທຽບກັບລາຄາຕະຫຼາດ;

4.) ລົງສະໜາມສຳຫຼວດເປັນໄລຍະ, ຢ່າງໜ້ອຍກໍທຸກໆ 3 ເດືອນ, ເພື່ອໝັ້ນໃຈວ່າຜູ້ທີ່ຖືກກະທົບ ໄດ້ຮູ້ຈຸດປະສົງ, ຜົນກະທົບ, ນະໂຍບາຍການທົດແທນຄ່າເສຍ ຫາຍ ແລະສິດທິ ທີ່ຈະໄດ້ຮັບຄ່າທົດແທນຢ່າງເໝາະສົມ ຈາກການໂຄສະນາຂ່າວ ສານໃຫ້ມວນຊົນ. ກິດຈະກຳດັ່ງກ່າວ ຄວນກວມເອົາຢ່າງໜ້ອຍ 30% ຂອງຜູ້ທີ່ຖືກກະທົບ ໃນແຕ່ລະປີ;

5.) ລົງພາກສະໜາມແຕ່ລະໄລຍະ, ຢ່າງໜ້ອຍທຸກໆ 3 ເດືອນ, ເພື່ອປະເມີນເບິ່ງວ່າຂະບວນການໄກ່ເກ່ຍຂໍ້ຂັດແຍ່ງ ໄດ້ມີອະທິບາຍໃຫ້ຜູ້ທີ່ຖືກກະທົບ ແລະໄດ້ຮັບການຈັດຕັ້ງປະຕິບັດ ເປັນຢ່າງດີ. ກິດຈະກຳດັ່ງກ່າວ ຄວນກວມລວມເອົາຢ່າງໜ້ອຍ 30% ຂອງຜູ້ທີ່ຖືກກະທົບ.

## ຕົວແບບ

ຢັ້ງຢືນຄວາມຖືກຕ້ອງ ລັກສະນະຂອງການຈັດຕັ້ງປະຕິບັດທາງດ້ານປະລິມານ, ຄວນດຳເນີນການສຳຫຼວດຜົນກະທົບດ້ານຕ່າງໆທີ່ເປັນຕົວແບບ. ບັນຫາ ແມ່ນຈະໄດ້ກວມລວມເອົາກຸ່ມເປົ້າໝາຍຂອງແຕ່ລະປະເພດ ເຊັ່ນເຈົ້າຂອງທີ່ດິນ, ເຈົ້າຂອງເຮືອນ, ຜູ້ເຊົ່າເຮືອນຫຼືກຳມະກອນ. ການປະເມີນວຽກເວນຄືນທີ່ດິນທາງດ້ານປະລິມານ ກໍຕ້ອງຄວນໄດ້ປະເມີນທຸກແຂວງ.

## ວິທີເກັບກຳຂໍ້ມູນ

ຂໍ້ມູນຂ່າວສານ ຈະເກັບກຳໄດ້ມາຈາກ:

- ແບບສອບຖາມ, ໄປຫາແຕ່ບຸກຄົນ;
- ສຳພາດຜູ້ທີ່ຖືກກະທົບໂດຍກົງ;

- ສຳພາດກຸ່ມຄົນສະເພາະ ແນໃສ່ເບິ່ງບັນຫາຂອງກຸ່ມ ເຊັ່ນຜູ້ປະກອບການ, ຊາວກະສິກອນ, ກຳມະກອນ ທີ່ຖືກກະທົບຍ້ອນຂາດວຽກເຮັດງານທຳ, ຜູ້ເຊົ່າເຮືອນ ຍ້ອນບໍ່ມີບ່ອນຢູ່, ຫົວໜ້າຄອບຄົວ ແລະອື່ນໆ;
- ການພົບປະກັບຊຸມຊົນ ເພື່ອປຶກສາຫາລືບັນຫາທີ່ກ່ຽວຂ້ອງແລະຫາວິທີການແກ້ໄຂ;
- ພະນັກງານໂຄງການໃນພາກສະໜາມ.

## ການວິໄຈຂໍ້ມູນ

ຂໍ້ມູນຂ່າວສານທີ່ເກັບກຳມາໄດ້ ແມ່ນໂຄງການເປັນຜູ້ວິໄຈ ໃນນັ້ນ ອາດມີເຂດທີ່ຖືກກະທົບ, ເຂດຍົກຍ້າຍຈັດສັນປະຊາຊົນ, ລະດັບການທົດແທນຄ່າເສຍຫາຍ, ຜົນກະທົບປະເພດຕ່າງໆ ແລະ ອື່ນໆ.

## ການເກັບຮັກສາຂໍ້ມູນ

ຄະນະຕິດຕາມກວດກາ ແມ່ນຈະເປັນຜູ້ຮັກສາຖານຂໍ້ມູນກ່ຽວກັບການຕິດຕາມກວດກາການຍົກຍ້າຍຈັດສັນປະຊາຊົນ ແລະ ຈະໄດ້ມີການປັບປຸງທຸກໆ 3 ເດືອນ. ມັນຈະຖືກເກັບຮັກສາໄວ້ໃນຄອມພິວເຕີ ກ່ຽວກັບຂໍ້ມູນຄອບຄົວທີ່ຖືກກະທົບ ແລະຈະໄດ້ປັບປຸງຂໍ້ມູນທີ່ເກັບກຳໄດ້ໃນແຕ່ລະຄັ້ງ. ຖານຂໍ້ມູນທັງໝົດ ແມ່ນສາມາດໃຫ້ເຈົ້າຂອງໂຄງການເຂົ້າໄປນຳໃຊ້ໄດ້.

## ຕົວຊີ້ວັດການຕິດຕາມກວດກາ

ເນື້ອໃນຂອງນະໂຍບາຍທີ່ມີກ່ຽວກັບການຍົກຍ້າຍຈັດສັນປະຊາຊົນດັ່ງຕໍ່ໄປນີ້ ແມ່ນຈະໄດ້ມີການຕິດຕາມກວດກາ ໂດຍອີງການຕິດຕາມກວດກາ:

*ການຈ່າຍຄາທົດແທນຄວາມເສຍຫາຍ*

1.) ການປະເມີນເບິ່ງວ່າການທົດແທນຄ່າເສຍຫາຍຊັບສິນທຸກປະເພດ ໂດຍສະເພາະທີ່ດິນໄດ້ອີງໃສ່ລາຄາຕະຫຼາດຫຼືບໍ່;
2.) ການທົດແທນຄ່າເສຍຫາຍສຳລັບໂຄງລ່າງທີ່ຖືກກະທົບ ຄວນເທົ່າກັບມູນຄ່າປ່ຽນແທນຂອງວັດສະດຸແລະແຮງງານ ຕາມມາດຕະຖານແລະລັກສະນະພິເສດຂອງການກໍ່ສ້າງ ແລະບໍ່ໃຫ້ຫັກຄ່າວັດສະດຸຫັກພັງຫຼືເກົ່າແກ່ ອອກ;
3.) ການຈ່າຍເຕັມຄ່າ ໃຫ້ຄອບຄົວທີ່ຖືກກະທົບທັງໝົດກ່ອນການເວນຄືນທີ່ດິນ;
4.) ການຈ່າຍຄ່າອຸດໜູນໃຫ້ຜູ້ທີ່ຖືກກະທົບ ກ່ອນຈະເລີ້ມການກໍ່ສ້າງ ແລະການຍົກຍ້າຍຈັດສັນໄປຢູ່ບ່ອນໃໝ່, ໃນບ່ອນທີ່ມີ.

*ສາຍພົວພັນກັບການຍົກຍ້າຍຈັດສັນປະຊາຊົນ ແລະການກໍ່ສ້າງ*

ຜົນສຳເລັດຂອງກິດຈະກຳເວນທີ່ດິນຄືນແລະຍົກຍ້າຍຈັດສັນປະຊາຊົນ ໃນໄລຍະແລະຊ່ວງໃດໜຶ່ງຂອງໂຄງການ ກ່ອນເລີ້ມວຽກກໍ່ສ້າງຕົວຈິງຢູ່ໃນໄລຍະແລະຊ່ວງນັ້ນ 1 ເດືອນ.

*ການແກ້ໄຂ ເຂດຍົກຍ້າຍຈັດສັນປະຊາຊົນ*

1.) ຜູ້ທີ່ຖືກກະທົບທີ່ຖືກເອົາດິນມາປຸ່ນແທນ ແລະຍ້າຍໄປຢູ່ເຂດຍົກຍ້າຍຈັດສັນປະຊາຊົນ ແລະໄດ້ເລືອກໄປຢູ່ເຂດນັ້ນ ແມ່ນຈະຕ້ອງໄດ້ຮັບການປຶກສາຫາລືກ່ຽວກັບບ່ອນໃໝ່;
2.) ທີ່ຕັ້ງ, ການອອກແບບ, ໂຄງລ່າງ ແລະດິນທີ່ມອບໃຫ້ ແມ່ນຄວນເຮັດໃຫ້ຜູ້ທີ່ຖືກກະທົບສາມາດຟື້ນຟູມາດຕະຖານຊີວິດການເປັນຢູ່ຂອງເຂົາເຈົ້າໄດ້.

*ຈັດຝຶກອົບຮົມ, ຫາວຽກເຮັດງານທຳ ແລະໃຫ້ສິນເຊື່ອ*

1.) ການຝຶກອົບຮົມ ຄວນຈັດໃຫ້ມີຜູ້ໜຶ່ງ ໃນແຕ່ລະຄອບຄົວທີ່ຖືກກະທົບ ຍ້ອນຖືກຍົກຍ້າຍ, ຖ້າເຂົາເຈົ້າຫາກເຫັນດີເຂົ້າຮ່ວມ;
2.) ປະເພດການຝຶກອົບຮົມ ແມ່ນຈະຂຶ້ນກັບຄວາມມັກຂອງຜູ້ທີ່ຖືກກະທົບແລະຜູ້ຈະຈັດໃຫ້;
3.) ຄວນມີທາງເລືອກ ທີ່ຈະໃຫ້ການຊ່ວຍເຫຼືອເປັນສິນເຊື່ອ ເພື່ອໄປຍົກລະດັບໃຫ້ແກ່ຜູ້ທີ່ຖືກກະທົບ ໃນດອກເບ້ຍຕ່ຳ ແລະໃຫ້ສິດແກ່ກຸ່ມຄົນທີ່ບໍ່ໄດ້ຮັບສິດ ເຊັ່ນ ແມ່ຍິງແລະຜູ້ມີລາຍຮັບຕ່ຳ;
4.) ການຝຶກອົບຮົມ ຄວນຈັດ ພາຍໃນ 3 ເດືອນ ນັບແຕ່ມື້ຍົກຍ້າຍມາ;
5.) ການຈັດວຽກໃຫ້ຜູ້ທີ່ມີສິດ ຄວນເຮັດພາຍໃນ 2 ເດືອນ ນັບແຕ່ມື້ໄດ້ເວນຄືນທີ່ດິນ.

*ການປຶກສາຫາລືກັບປະຊາຊົນ*

1.) ຜູ້ທີ່ຖືກກະທົບ ຄວນໄດ້ຮັບຂໍ້ມູນຂ່າວສານແລະຮັບການປຶກສາຫາລື ກ່ຽວກັບວຽກຍົກຍ້າຍຈັດສັນປະຊາຊົນ ເຊັ່ນ ເວລາ, ການຍົກຍ້າຍຜູ້ທີ່ຖືກກະທົບອອກຈາກບ້ານເກົ່າ, ເບິ່ງເຂດຍ້າຍໄປຢູ່ໃໝ່, ສະຖານທີ່ແລະດິນທີ່ມອບໃຫ້;
2.) ຄະນະຕິດຕາມກວດກາ ຄວນເຂົ້າຮ່ວມຢ່າງໜ້ອຍໜຶ່ງຄັ້ງ ໃນກອງປະຊຸມປຶກສາຫາລືໃນແຕ່ລະເດືອນ ເພື່ອຕິດຕາມກວດກາຂະບວນການດັ່ງກ່າວ, ບັນຫາແລະເລື້ອງ ທີ່ຍົກຂຶ້ນໃນກອງປະຊຸມ ແລະວິທີການແກ້ໄຂທີ່ເຂົາເຈົ້າສະເໜີມາ.

*ລະດັບຄວາມພໍໃຈ*

1.) ລະດັບຄວາມພໍໃຈ ຂອງຜູ້ທີ່ຖືກກະທົບກັບແຜນການຍົກຍ້າຍຈັດສັນປະຊາຊົນ ໃນດ້ານຕ່າງໆ ຄວນໄດ້ມີການຕິດຕາມກວດກາ ແລະບັນທຶກໄວ້;
2.) ຄວນຕິດຕາມກວດກາຄວາມສັກສິດຂອງກົນໄກແກ້ໄຂຂໍ້ຂັດແຍ່ງ ແລະຄວາມວ່ອງໄວຂອງວຽກດັ່ງກ່າວ.

*ມາດຖານຊີວິດການເປັນຢູ່ຂອງປະຊາຊົນ*

1.) ຕະຫຼອດຂະບວນການຈັດຕັ້ງປະຕິບັດ, ຄວນສັງເກດເບິ່ງທ່າອ່ຽງຂອງມາດຖານຊີວິດານເປັນຢູ່ ແລະ ຄວນໄດ້ກຳນົດ ແລະລາຍງານບັນຫາທີ່ສຳຄັນ ໃນການຟື້ນຟູມາດຖານຊີວິດການເປັນຢູ່ ຂອງປະຊາຊົນນັ້ນ;

*ຈິດສຳນຶກກ່ຽວກັບນະໂຍບາຍຍົກຍ້າຍຈັດສັນປະຊາຊົນ*

1.) ຕ້ອງຕີລາຄາເບິ່ງຈິດສຳນຶກ ກ່ຽວກັບນະໂຍບາຍຍົກຍ້າຍຈັດສັນປະຊາຊົນແລະສິດທິທີ່ຈະໄດ້ຮັບຂອງຜູ້ທີ່ຖືກກະທົບ;
2.) ການປະເມີນເບິ່ງຈິດສຳນຶກຕໍ່ທາງເລືອກຕ່າງໆ ທີ່ຈະສະເໜີໃຫ້ຜູ້ທີ່ຖືກກະທົບ ຄືໄດ້ກຳນົດໃນດຳລັດ 192.

*ຜົນໄດ້ ທີ່ຄາດວ່າ ຈະໄດ້ຈາກວຽກດັ່ງກ່າວ*

ບົດລາຍງານສະຫຼຸບເບື້ອງຕົ້ນທາງດ້ານວິຊາການ ແມ່ນຕ້ອງໄດ້ສະເໜີໃຫ້ຜູ້ຈັດການໂຄງການ ແລະ ສຳເນົານຳສົ່ງໃຫ້ອົງການຮັບຜິດຊອບໂຄງການພາຍໃນ 1 ເດືອນນັບແຕ່ມື້ເລີ້ມມອບວຽກດັ່ງກ່າວ.

## ບົດລາຍງານ ທີ່ຕ້ອງເຮັດ

### ບົດລາຍງານ:

ອົງການຕິດຕາມກວດກາຈາກພາຍນອກ ຈະໄດ້ກະກຽມແລະສະເໜີໃຫ້ ບົດລາຍງານດັ່ງຕໍ່ໄປນີ້ ແນວລະ 6 ສະບັບໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງ:

<u>ບົດລາຍງານເບື້ອງຕົ້ນ:</u> ຈະສົ່ງໃນ 30 ວັນ ນັບແຕ່ເລີ້ມວຽກ, ບົດລາຍງານ ຈະໄດ້ສັງລວມວຽກງານລວມໂດຍຫຍໍ້ ແລະໄດ້ກຳນົດຕາຕະລາງເວລາ ເພື່ອເຄື່ອນໄຫວວຽກໃຫ້ສຳເລັດ ໂດຍນຳໃຊ້ບົດລາຍງານທີ່ມີແລ້ວ;

<u>ບົດລາຍງານປະຈຳເດືອນ:</u> ໃນແຕ່ລະເດືອນ, ຕ້ອງເຮັດບົດລາຍງານຄວາມຄືບໜ້າຂອງວຽກງານ ໂດຍສະຫຼຸບບັນດາວຽກຂອງຕົນທີ່ເຮັດຢູ່ໃນປະຈຸບັນ ຫຼືເຮັດແລ້ວໃນເດືອນຜ່ານມາ;

<u>ບົດລາຍງານປະຈຳໄຕມາດ ຫຼື ພິເສດ:</u> ອົງການຕິດຕາມກວດກາ ຈະຕ້ອງໄດ້ກະກຽມບົດລາຍງານຮອບດ້ານ ທີ່ສັງລວມເອົາໝົດການເຄື່ອນໄຫວທີ່ໄດ້ເຮັດຜ່ານມາແຕ່ລະໄຕມາດ ແລະບົດລາຍງານອື່ນໆ ເມື່ອອົງການຕິດຕາມກວດກາດັ່ງກ່າວ ຫາກສຳເລັດການສຳຫຼວດຫຼືການເກັບຕົວຢ່າງ, ແລະການວິໄຈຕົວຢ່າງ ແລະຜົນໄດ້.

### ໝາຍເຫດ:

ບົດລາຍງານຕິດຕາມກວດກາປະຈຳໄຕມາດ ແມ່ນຄວນໄດ້ກະກຽມແລະສະເໜີຕໍ່ອົງການຮັບຜິດຊອບໂຄງການ ແລະສະບັບໜຶ່ງສົ່ງໃຫ້ ສະຖາບັນການເງິນ ໃນມື້ສຸດທ້າຍຂອງງວດ. ບົດລາຍງານດັ່ງກ່າວ ຈະມີ:

1.) ບົດລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນປະຊາຊົນໃນທຸກດ້ານ;
2.) ອາດບໍ່ໄປຕາມແຜນການ, ຖ້າມີ ຕາມເນື້ອໃນ ແລະຫຼັກການຂອງດຳລັດ 192,
3.) ກຳນົດບັນຫາ ແລະວິທີການແກ້ໄຂ ເພື່ອໃຫ້ເຈົ້າຂອງໂຄງການໄດ້ຮັບຊາບກ່ຽວກັບສະພາບທີ່ມີຢູ່ ແລະສາມາດແກ້ໄຂບັນຫາໄດ້ຢ່າງທັນການ;
4.) ຄວາມຄືບໜ້າຂອງບົດລາຍງານ ກ່ຽວກັບການຕິດຕາມບັນຫາແລະເລື້ອງຕ່າງໆ ທີ່ໄດ້ຍົກຂຶ້ນໃນບົດລາຍງານສະບັບກ່ອນ.

ບົດລາຍງານ 6 ເດືອນ ແລະບົດລາຍງານປະຈຳປີ ແມ່ນຈະໄດ້ສະຫຼຸບທຸກວຽກງານທີ່ໄດ້ເຮັດຜ່ານມາໃນ 6 ເດືອນກ່ອນໜ້າ ຫຼືໃນໄລຍະປີໜຶ່ງ ແລະຂໍ້ສະເໜີກ່ຽວກັບບັນຫາ, ວິທີການແກ້ໄຂແລະສະພາບການສຸດທ້າຍ.

**ເອກະສານຄັດຕິດ 29**

# ໂຄງຮ່າງລວມ ສໍາລັບບົດລາຍງານຕິດຕາມກວດກາ ຈາກພາຍນອກ

## 1. ຄໍານໍາ

### 1.1. ອະທິບາຍໂຄງການ

### 1.2.ແຜນການຍົກຍ້າຍຈັດສັນປະຊາຊົນ

ໄດ້ສ້າງມາຍາມໃດ? ຈໍານວນຜູ້ທີ່ຖືກກະທົບ?

ແຜນເບື້ອງຕົ້ນ ທີ່ຈະເວນຄືນທີ່ດິນ ແລະດໍາເນີນການຍົກຍ້າຍຈັດສັນປະຊາຊົນ ໃຫ້ສໍາເລັດ?

## 2. ຄວາມຄືບໜ້າ

### 2.1. ຄວາມຄືບໜ້າຂອງວຽກ (ເຮັດເປັນຕາຕະລາງ)

ຈໍານວນຜູ້ທີ່ຖືກກະທົບ ທັງໝົດ ຈັດຕາມປະເພດຂອງການສູນເສຍ, ຄວາມຄືບໜ້າ ໃນໄລຍະຕົ້ນ ແລະ ໄລຍະການດໍາເນີນຕິດຕາມກວດກາ ນີ້ຢູ່;

### 2.2. ບັນຫາ ທີ່ພົບພໍ້ ( ການແກ່ຍາວເວລາ, ອື່ນໆ...).

## 3. ການຕິດຕາມກວດກາ

### 3.1.ການກວດກາ ເອກະສານ (ໃຫ້ໄດ້ 30% ຂອງຕົວຢ່າງ);

1.) ຂະໜາດຂອງຕົວຢ່າງ ທີ່ໄດ້ກວມເອົາໃນໄລຍະດໍາເນີນວຽກມາ (ອີງໃສ່ຊ່ວງຄອງ, ເມືອງ ແລະແຂວງ);

2.) ຕົວຊີ້ວັດ;

- ຟອມບັນທຶກ;
- ກໍານົດຜົນກະທົບໜ້ອຍສຸດ/ຫຼາຍສຸດ (ລວມເອົາ 1 ຫາ 1 ແບບຟອມ ທີ່ໄດ້ຈັດເຂົ້າໃນເອກະສານຂັດຕິດ);
- ການມີສິດທິ ໄດ້ຮັບຄ່າທົດແທນ;
- ການປະເມີນການທົດແທນຄ່າເສຍຫາຍ: ວ່າໄດ້ເຮັດຕາມຂະບວນການ ປະເມີນການທົດແທນຄ່າ ເສຍຫາຍໃນມູນຄ່າປ່ຽນແທນນັ້ນ ເໝາະສົມຫຼືບໍ່;
- ບັນຊີໃຊ້ຈ່າຍ.

3.) ບັນຫາ ທີ່ໄດ້ພົບພໍ້.

### 3.2. ການສໍາຫຼວດພາກສະໜາມ (ໃບສອບຖາມ)

1.) ຂະໜາດຂອງຕົວຢ່າງ ທີ່ໄດ້ກວມເອົາ (ໃຫ້ບ່ອນອີງສໍາລັບເຂດຄອງນໍ້າ, ຂົວ, ເມືອງ ແລະແຂວງ- ຟອມສໍາຫຼວດສອບຖາມ ທີ່ເຮັດແລ້ວ)

ແບ່ງຕົວຢ່າງ ອອກເປັນແຕ່ລະປະເພດ ທີ່ກວມເອົາ : ເຈົ້າຂອງທີ່ດິນ, ເຈົ້າຂອງເຮືອນ, ຜູ້ເຊົ່າ, ຜູ້ຮ່ວມຢູ່ນໍາໝູ່, ຜູ້ທີ່ຖືກກະທົບໜ້ອຍ (<20%), ຫຼາຍ (>20%), ບໍ່ຖືກຕ້ອງຕາມກົດໝາຍ;

2.) ຕົວຊີ້ວັດຂອງການຕິດຕາມກວດກາ;

- ກະກຽມປື້ມບັນຊີ;
- ສິດທິ ທີ່ໄດ້ຮັບການທົດແທນແລະການປະເມີນການທົດແທນຄ່າເສຍຫາຍ;
- ການເຂົ້າຮ່ວມ ແລະການມີສ່ວນຮ່ວມຂອງປະຊາຊົນ;
- ຈິດສໍານຶກ;
- ລະດັບຄວາມພໍໃຈລວມຕໍ່ຄວາມເໝາະສົມຂອງຄ່າທົດແທນແລະການຈ່າຍຄ່າທົດແທນຄ່າເສຍຫາຍ;
- ຂໍ້ມູນຂ່າວສານທີ່ໄດ້ມາຫຼືລະດັບຄວາມພໍໃຈ ກັບຂັ້ນຕອນຈ່າຍສໍາລັບເປັນການທົດແທນຄ່າເສຍຫາຍ;
- ລະດັບຄວາມພໍໃຈ;
- ຄວາມຮູ້ ກ່ຽວກັບຂັ້ນຕອນແກ້ໄຂຂໍ້ຂັດແຍ່ງ.

3.) ບັນຫາ ທີ່ໄດ້ພົບພໍ້.

### 3.3. ການຊີ້ນໍາວຽກງານພາກສະໜາມ

1.) ກິດຈະກໍາ ທີ່ໄດ້ຊີ້ນໍາໃນໄລຍະຕິດຕາມກວດກາ

- ອະທິບາຍວຽກ ທີ່ໄດ້ຮັບການຊີ້ນໍາ;
- ການພົບປະກັບປະຊາຊົນແລະຂໍ້ມູນຂ່າວສານ;
- ກະກຽມປື້ມບັນຊີ;
- ການປະເມີນການທົດແທນຄ່າເສຍຫາຍແລະການເຈລະຈາ;
- ການຈ່າຍ ສໍາລັບເປັນການທົດແທນຄ່າເສຍຫາຍ.

2.) ບັນຫາ ທີ່ໄດ້ພົບພໍ້.

## 4. ບັນຫາ ທີ່ມາຈາກການລາຍງານຄັ້ງກ່ອນ

### 4.1. ບັນຫາທີ່ພົບພໍ້ແລະຂໍ້ສະເໜີ

### 4.2. ວຽກທີ່ໂຄງການ ໄດ້ເຮັດ

### 4.3. ບັນຫາແລະເລື້ອງເດັ່ນ

## 5. ສະຫຼຸບ ແລະຂໍ້ສະເໜີ

Àອ¡ະສານຄກັດຕòດ 30

³ອມມøນຄÈາສ¿ລກັບ¡ານຍö¡ຍÉາຍຈກັດສກັນ¯ະຊາຊöນ

| ລາຍລະອຽດ | ຈຳນວນ ເຮືອນ | ຫົວໜ່ວຍ | ລາຄາ ຫົວໜ່ວຍ | ຈຳນວນ | ມູນຄ່າ ເປັນກີບ | ມູນຄ່າ ເປັນໂດລາ |
|---|---|---|---|---|---|---|
| **ທົດແທນຄ່າເສຍຫາຍ ດ້ວຍທີ່ດິນແລະ ສິ່ງປຸກສ້າງ ແລະ ຊັບສິນບັດຄົງທີ່ອື່ນໆ**<br>ດິນ<br>ກະສິກຳ<br>ປຸກສ້າງ<br>ຄ້າຂາຍ | | | | | | |
| **ໂຄງລ່າງ** (ປຸກສ້າງ ແລະ ຮ້ານຄ້າ)<br>ຖາວອນ<br>ເຄິ່ງຖາວອນ<br>ຊົ່ວຄາວ | | <br>ມ²<br>ມ²<br>ມ² | | | | |
| **ຊັບສິນບັດຄົງທີ່ອື່ນໆ**:<br>ຮົ້ວແບ່ງເຂດແດນ, ນ້ຳສ້າງ, ລົດ/ກວຽນ ລໍ້, ບ່ອນຈອດລົດ, ຄອກສັດ ແລະອື່ນໆ. | | | ລວມ | ລວມ | | |
| **ເງິນອຸດໜູນ ເພື່ອເປັນຄ່າສ້ອມແປງ:**<br>(ດິນປຸກສ້າງ+ຮ້ານຄ້າ+ອື່ນໆ.)<br>ຖາວອນ<br>ເຄິ່ງຖາວອນ<br>ຊົ່ວຄາວ | | <br><br>ຄຄ<br>ຄຄ<br>ຄຄ | | | | |
| **'ທົດແທນຄ່າເສຍຫາຍ ສຳລັບ ໄຟຟ້າແລະນ້ຳໃຊ້** | | **ຄຄ** | | | | |
| **'ທົດແທນຄ່າເສຍຫາຍ ສຳລັບກະ ກຽມດິນ** | | ມ² | | | | |
| ເງິນອຸດໜູນຄ່າເຊົ່າ | | ຄຄ | | | | |
| ຜົນລະປູກ/ຕົ້ນໄມ້<br>ຜົນລະປູກ<br>ຕົ້ນໄມ້ | | <br>ມ²<br>ຈຳນວນ | | | | |
| **ລວມຍ່ອຍ** | | | | | | |
| ເງິນອຸດໜູນຄ່າຢູ່ກິນ | | ຄຄ | | | | |
| ເງິນອຸດໜູນ ໃນຄວາມບໍ່ສະດວກ | | ຄຄ | | | | |
| ການຊ່ວຍເຫລືອໃນການຟື້ນຟູລາຍຮັບ | | ຄຄ | | | | |

| | | | | | | |
|---|---|---|---|---|---|---|
| ເງິນອຸດໜູນ ເພື່ອຍົກຍ້າຍຜູ້ທີ່ໄດ້ ຖືກຮັບຜົນກະທົບ | | ຄຄ | | | | |
| **ລວມຍ່ອຍ** | | | | | | |
| ຖັງນໍ້າ | | ຈຳນວນ | | | | |
| ສາລາ | | ຈຳນວນ | | | | |
| ໂຮງໝໍ | | ຈຳນວນ | | | | |
| ລວມຍ່ອຍ | | | | | | |
| ການຕິດຕາກວດກາແບບອິດສະລະ ແລະການຕີລາຄາຫລັງຈາກມີການ ຈັດຕັ້ງປະຕິບັດ | | ລວມ | | | | |
| ລວມ | | | | | | |
| ຄ່າຄຸ້ມຄອງ 0,4%<br>ເງິນແຮອື່ນໆ 15% | | | | | | |
| **ລວມຍອດ** | | | | | | |

ໝາຍເຫດ: 1. ການອຸດໜູນ ສຳລັບຄ່າກໍ່ສ້າງ ແມ່ນຍັງໄດ້ກວມລວມເອົາທັງການສ້ອມແປງຊັບສິນບັດຄົງທີ່ ນອກຈາກເຮືອນຢູ່ ຫລື ຮ້ານຄ້າແລ້ວ.

**ເອກະສານຄັດຕິດ 31**

## ລາຍການກວດສອບບັນຫາບົດບາດຍິງຊາຍ ສໍາລັບ ງົບປະມານຂອງວຽກຍົກຍ້າຍຈັດສັນປະຊາຊົນ

**ຄໍາຖາມສໍາຄັນ**

- ແຜນການຍົກຍ້າຍຈັດສັນປະຊາຊົນ ໄດ້ມີທຶນຮັບສໍາລັບວຽກທີ່ແນໃສ່ບົດບາດຍິງຊາຍ ແລ້ວບໍ?
- ມີຮ່ວງສະເພາະ ເພື່ອແກ້ໄຂເລື້ອງຄວາມສະເໝີພາບຍິງຊາຍ ໃນງົບປະມານແລ້ວບໍ?

**ຍຸດທະສາດສໍາຄັນ**

- ຮັບປະກັນວ່າ ງົບປະມານສໍາລັບການຍົກຍ້າຍຈັດສັນປະຊາຊົນ ມີພຽງພໍສໍາລັບວຽກທີ່ແນໃສ່ບົດບາດຍິງຊາຍ.
- ຖ້າເປັນໄປໄດ້ ໃຫ້ແຍກງົບປະມານສໍາລັບວຽກທີ່ແນໃສ່ບົດບາດຍິງຊາຍ ໂດຍສະເພາະ.
- ພະຍາຍາມແຍກງົບປະມານສໍາລັບແກ້ໄຂບັນຫາສະເພາະຂອງແມ່ຍິງ.
- ຕິດຕາມການໃຊ້ຈ່າຍ ແລະ ຮັບປະກັນວ່າໄດ້ໃຊ້ຈ່າຍທຶນຮອນຢ່າງຖືກຕ້ອງ.

ແຫລ່ງຂໍ້ມູນ: ລາຍການເພື່ອກວດເບິ່ງເລື້ອງສະເໝີພາບຍິງຊາຍ, ການຍົກຍ້າຍຈັດສັນປະຊາຊົນ, ທະນາຄານພັດທະນາອາຊີ, ເດືອນ ກຸມພາ 2003, ໜ້າ 32

**ເອກະສານຄັດຕິດ 32**

## ເງື່ອນໄຂ ສຳລັບການຄິດໄລ່ມູນຄ່າຍົກຍ້າຍຈັດສັນປະຊາຊົນໃນເງິນກູ້ຢືມ

| ອ/ດ | ປະເພດ | ລາຍລະອຽດ | ວິທີຈ່າຍສຳລັບການທົດແທນຄ່າເສຍຫາຍ | ມີເງື່ອນໄຂ ໄດ້ຮັບທຶນຮອນຈາກທະນາຄານ |
|---|---|---|---|---|
| 01. | ທົດແທນຄ່າເສຍຫາຍ | ດິນ | ເງິນສົດ ຫລື ດິນ | ບໍ່ໄດ້ |
| | | ສິ່ງປຸກສ້າງ | ເງິນສົດ | ບໍ່ໄດ້* |
| | | | ວັດຖຸກໍ່ສ້າງ | ຄ່າວັດຖຸກໍ່ສ້າງ ແລະ ແຮງງານ ແມ່ນໄດ້ |
| | | | ປຸກເຮືອນ | ໄດ້. ຄ່າປຸກເຮືອນໃຫ້ປະຊາຊົນ ແທນ ຄ່າສິ່ງປຸກສ້າງທີ່ຖືກກະທົບ ສາມາດຂໍເປັນເງິນກູ້ຢືມຈາກທະນາຄານໄດ້ |
| | | ຜົນລະປູກ/ຕົ້ນໄມ້ | ເງິນສົດ | ບໍ່ໄດ້* |
| 02. | ການອຸດໜູນ | ຂ້າມຜ່ານ<br>ຢູ່ກິນ<br>ເງິນອຸດໜູນ | ເງິນສົດ ຫລື ວັດຖຸ | ບໍ່ໄດ້* |
| | | ເງິນອຸດໜູນ<br>ຄ່າຝຶກອົບຮົມ | ຈ່າຍໃຫ້ສະຖາບັນການຝຶກອົບຮົມ<br>ຈ່າຍໃຫ້ປະຊາຊົນ ໃນເວລາຝຶກອົບຮົມ | ໄດ້<br>ບໍ່ໄດ້* |
| | | ເງິນອຸດໜູນທຸລະກິດ | ເງິນສົດ | ບໍ່ໄດ້* |
| | | ຄ່າສ້ອມແປງ | ເງິນສົດ | ບໍ່ໄດ້* |
| | | ຂົນສົ່ງ | ວັດຖຸ | ໄດ້. ຈ່າຍ**ເປັນ**ເງິນສົດບໍ່ໄດ້ |
| 03. | ເຂດຍົກຍ້າຍຈັດສັນປະຊາຊົນ | ວຽກກໍ່ສ້າງ | | ໄດ້ |
| | | ຄ່າຈ່າຍໃຫ້ທີ່ປຶກສາ ມາເຮັດວຽກສຳຫຼວດ, ວາງຜັງເຂດຍົກຍ້າຍຈັດສັນ ແລະ ອອກແບບເຕັກນິກ ໃນໄລຍະຈັດຕັ້ງປະຕິບັດໂຄງການ | | ໄດ້ |
| | | ຄ່າຄຸ້ມຄອງແລະຄຸມງານ ໃຫ້ທີ່ປຶກສາໃນໄລຍະຈັດຕັ້ງປະຕິບັດໂຄງການ | | ໄດ້ |
| | | ຈ່າຍໃຫ້ກົມກອງທີ່ດຳເນີນການທົບທວນ ແລະ ຮັບຮອງເອົາແຜນການແລະການອອກແບບ | | ບໍ່ໄດ້ |
| 04. | ກະກຽມແຜນການຍົກຍ້າຍຈັດສັນປະຊາຊົນ | ຄ່າໃຊ້ຈ່າຍແມ່ນເປັນພາລະຂອງອົງການຈັດຕັ້ງປະຕິບັດ | | ໄດ້ ໂດຍຜ່ານການກະກຽມໂຄງການ |

| | | | |
|---|---|---|---|
| 05. | ສິ່ງປຸກສ້າງ ແລະ ໂຄງລ່າງຂອງລັດ | ຄ່າສ້າງໂຄງລ່າງໃໝ່ແທນ | ໄດ້ |
| 06. | ຄ່າທຳນຽມແລະພາສີ | ຄ່າທຳນຽມແລະພາສີ ຈ່າຍໃຫ້ອົງການຈັດຕັ້ງລັດຕ່າງໆ ຫລື ເພື່ອກວດຜ່ານການອອກແບບ ແລະ ແຜນການຍົກຍ້າຍຈັດສັນປະຊາຊົນ | ບໍ່ໄດ້ |
| 07. | ການຈັດຕັ້ງປະຕິບັດ ແລະການຊີ້ນຳ ແຜນການຍົກຍ້າຍຈັດສັນປະຊາຊົນ | ຄ່າໃຊ້ຈ່າຍແມ່ນເປັນພາລະຂອງອົງການຈັດຕັ້ງປະຕິບັດ | ມີແຕ່ໄດ້ຄ່າເພີ້ມ ນອນໃນຄ່າຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນປະຊາຊົນ |
| 08. | ການຕິດຕາມກວດກາ ໂດຍຝ່າຍທີສາມ | ຄ່າບໍລິການຈ່າຍໃຫ້ອົງການຕິດຕາມກວດກາ ຫລື ທີ່ປຶກສາ | ໄດ້ |

*ອີງໃສ່ມາດຖານໃນໂຄງການ ທີ່ໄດ້ຮັບທຶນຈາກທະນາຄານໂລກ

**ເອກະສານຄັດຕິດ 33**

## ກິດຈະກຳ ແລະ ເປົ້າໝາຍຂອງການຍົກຍ້າຍຈັດສັນປະຊາຊົນ

| ອ/ດ | ກິດຈະກຳຈັດຕັ້ງປະຕິບັດແຜນດຳເນີນງານ ຍົກຍ້າຍຈັດສັນປະຊາຊົນ | ຄອງ A | ຄອງ B | ຄອງ C |
|---|---|---|---|---|
| | **ຈຳນວນ** | **643** | **504** | **1341** |
| | ຜູ້ທີ່ຖືກກະທົບທີ່ມີສິດໄດ້ຮັບຄ່າທົດແທນຄວາມເສຍຫາຍ | 639 | 504 | 1341 |
| 1 | ໝາຍເຂດ | X | X | X |
| 2 | ການວັດແທກຕົວຈິງ ແລະເຮັດບັນຊີລະອຽດ | X | X | X |
| 3 | ແຈກປື້ມຂໍ້ມູນຂ່າວສານມວນຊົນ | X | X | X |
| 4 | ກຳນົດສຸດທ້າຍ ລາຄາຕາມຕະຫລາດໃຫ້ແລ້ວສົມບູນ | X | X | X |
| 5 | ປຸງແຕ່ງຂໍ້ມູນ | X | X | X |
| 6 | ກະກຽມແຜນທີ່ | X | X | X |
| 7 | ກຳນົດສິດທິທີ່ຜູ້ທີ່ຖືກກະທົບແຕ່ລະຄົນຈະໄດ້ຮັບ | X | X | X |
| 8 | ກວດຄືນຄັ້ງສຸດທ້າຍສິທິແລະປະເມີນມູນຄ່າທີ່ມີສິດໄດ້ຮັບການທົດແທນ ແລະສະຫລຸບໂດຍເມືອງ ແລະບ້ານ | X | X | X |
| 9 | ຂໍ້ມູນຂ່າວສານແລະປຶກສາຫາລືກ່ຽວກັບສິດທີ່ຈະໄດ້ຮັບທົດແທນ | X | X | X |
| 10 | ແຈກຟອມ ກ່ຽວັບສິດທີ່ຈະໄດ້ຮັບຂອງແຕ່ລະຄົນ | X | X | X |
| 11 | ຢັ້ງຢືນທາງເລືອກກ່ຽວກັບການຍົກຍ້າຍ (ສ່ວນຕົວ, ລວມໝູ່) ເງິນສົດ ຫລື ດິນປ່ຽນດິນ | X | X | X |
| 12 | ຈ່າຍຄ່າທົດແທນຄວາມເສຍຫາຍ: | | | |
| | a. ເບື້ອງຕົ້ນ 70% | 4 ຍັງເຫຼືອ. | X | X |
| | b. ໄລຍະສອງ 30% | X | X | X |
| | c. ຄ່າສ້ອມແປງ & **ຈຳນວນ**ຜູ້ທີ່ຖືກກະທົບ | X | X | X |
| | ລວມ | 146 | 6 | 31 |
| 13 | ກຳນົດສຸດທ້າຍເຂດຍົກຍ້າຍຈັດສັນປະຊາຊົນໃຫ້ແລ້ວ ໂດຍປຶກສາຫາລືກັບຜູ້ທີ່ຖືກກະທົບ | X | X<br>2 ແຫ່ງ | ບໍ່ມີ |
| 14 | ອອກແບບສຸດທ້າຍເຂດຍົກຍ້າຍຈັດສັນປະຊາຊົນໃຫ້ແລ້ວ ແລະກຳນົດມູນຄ່າ ແລະຮັບຮອງໂດຍການນຳ | X<br>21 ຄົນ | X<br>54 ຄົນ | ບໍ່ມີ |
| 15 | ປຶກສາຫາລືກັບປະຊາຊົນກ່ຽວກັບການອອກແບບເຂດຍົກຍ້າຍ | X | X | ບໍ່ມີ |
| 16 | ມອບທີ່ດິນເປັນເຂດຍົກຍ້າຍຈັດສັນປະຊາຊົນ | X | X | ບໍ່ມີ |

| | | | | |
|---|---|---|---|---|
| 17 | ພັດທະນາ ເຂດຍົກຍ້າຍຈັດສັນປະຊາຊົນ ພ້ອມດ້ວຍໄຟຟ້າແລະນ້ຳປະປາ | ຍັງໄຟຟ້າ | ຍັງນ້ຳປະປາ | ບໍ່ມີ |
| 18 | ປຶກສາຫາລືກັບປະຊາຊົນ ກ່ຽວກັບການພັດທະນາ ເຂດຍົກຍ້າຍຈັດສັນປະຊາຊົນ ກຳນົດໝາຍການຍົກຍ້າຍຈັດສັນ | X | X | ບໍ່ມີ |
| 19 | ຈັດຕັ້ງແລະຍົກຍ້ານໄປຢູ່ເຂດຍົກຍ້າຍຈັດສັນປະຊາຊົນ | X | X | ບໍ່ມີ |
| 20 | ມອບໃບອະນຸຍາດນຳໃຊ້ດິນແລະເຮືອນ ໃຫ້ຜູ້ທີ່ຖືກກະທົບ | X | X | ບໍ່ມີ |
| 21 | ມອບທີ່ດິນ ເປັນເຂດກໍ່ສ້າງ | X | X | X |
| 22 | ການຊ່ວຍເຫຼືອຟື້ນຟູເສດຖະກິດ: | | | |
| | i. ບັນຊີ ແລະຈຳນວນ ຜູ້ທີ່ຖືກກະທົບທີ່ໄດ້ຮັບສິດ: | *116* | *305* | *231* |
| | i.1. ການສູນເສຍທຸລະກິດຫຼວງຫຼາຍ | 18 | 14 | 11 |
| | i.2. ການສູນເສຍລາຍຮັບທາງດ້ານກະສິກຳຫຼວງຫຼາຍ | 0 | 168 | 0 |
| | i.3. ຍ້າຍຜູ້ທີ່ຖືກກະທົບ ຍ້ອນເສຍເຮືອນຢູ່ | 98 | 123 | 220 |
| | ii. ປຶກສາຫາລືກັບຜູ້ທີ່ຖືກກະທົບ ກ່ຽວກັບ ປະເພດຂອງການຊ່ວຍເຫລືອ | | | |
| | iii. ກຳນົດສຸດທ້າຍກ່ຽວກັບປະເພດຂອງການຊ່ວຍເຫລືອຟື້ນຟູເສດຖະກິດໃຫ້ແລ້ວ | | | |
| 23 | **ຈຳນວນ**ຜູ້ທີ່ຖືກກະທົບ ທີ່ຢາກເຂົ້າຮ່ວມການອົບຮົມ | 42 | 29 | 63 |
| 24 | ຜູ້ທີ່ຖືກກະທົບ ທີ່ຢາກໄດ້ການຊ່ວຍເຫລືອທາງເຄື່ອງມືກະສິກຳ ແລະການຊ່ວຍເຫລືອປະເພດອື່ນ | | | |
| 25 | ກະກຽມບົດລາຍງານກ່ຽວກັບການຟື້ນຟູເສດຖະກິດເພື່ອກວດກາ ແລະພິຈາລະນາ | | | |
| 26 | ຈັດຕັ້ງວຽກຟື້ນຟູເສດຖະກິດ | | | |
| 27 | ກວດຄືນ ການວັດແທກຕົວຈິງ ເພື່ອໃຫ້ການອຸດໜູນແລະດຸ່ນດ່ຽງການທົດແທນຄ່າເສຍຫາຍ ສຳລັບສ່ວນເຫລືອທີ່ໃຊ້ການຕໍ່ບໍ່ໄດ້ ໃຫ້ ຜູ້ທີ່ຖືກກະທົບ | X | | |
| 28 | ກວດຄືນການວັດແທກຕົວຈິງ ເພື່ອຂໍການອຸດໜູນແລະດຸ່ນດ່ຽງການທົດແທນຄ່າເສຍຫາຍ ສຳລັບສ່ວນເຫລືອທີ່ໃຊ້ການຕໍ່ບໍ່ໄດ້ ໃຫ້ ຜູ້ທີ່ຖືກກະທົບ | | | |

# ໂຄງການກໍ່ສ້າງແລວເດີນເຮືອ ແລະຟື້ນຟູທ່າເຮືອ ທີ່ຫວຽດນາມ

ແຂວງ ________________

ເມືອງ ________________

ບ້ານ ________________

## ບົດບັນທຶກ ກ່ຽວກັບການທົດແທນຄ່າເສຍຫາຍ ຂອງຊັບສິນຕ່າງໆ

ທ່ານ: ________________ ປື້ມສຳມະໂນຄົວເລກທີ່: _____ ຢູ່ບ້ານ _______ ເມືອງ ___________ ແຂວງ ______________________

ໂດຍອີງໃສ່ອັດຕາຄ່າທົດແທນ ແລະເງິນອຸດໜູນທີ່ຄະນະປົກຄອງແຂວງ ______________ ໄດ້ອອກ ໃນວັນທີ ______________________

ພວກຂ້າພະເຈົ້າ,

1. ທ່ານ ______________________, ຜູ້ຕາງໜ້າໜ່ວຍງານຄຸ້ມຄອງໂຄງການກໍ່ສ້າງແລວເດີນເຮືອ
2. ທ່ານ ______________________, ຜູ້ຕາງໜ້າຄະນະກຳມະການຍົກຍ້າຍຈັດສັນປະຊາຊົນ ຂອງ ເມືອງ ______________________ ແຂວງ ______________________
3. ທ່ານ ____________________, ຜູ້ຕາງໜ້າການເງິນຂອງເມືອງ ______________________
4. ທ່ານ ____________, ຫົວໜ້າຄອບຄົວຫຼືຜູ້ຕາງໜ້າຫົວໜ້າຄອບຄົວ _______________

ໄດ້ເຫັນດີເປັນເອກະພາບນຳລາຍລະອຽດຂອງການທົດແທນຄ່າເສຍຫາຍ, ສິດທິ ທີ່ຈະໄດ້ຮັບການຊ່ວຍເຫຼືອແລະເງິນອຸດໜູນ ຊຶ່ງມອບໃຫ້ແຕ່ລະຄອບຄົວມີຄືດັ່ງນີ້:

I. <u>ການທົດແທນຄ່າເສຍຫາຍ ຂອງຊັບສິນ ທີ່ສູນເສຍ:</u>

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ | ອັດຕາ (ດົງ) | ລວມ (ດົງ) |
|---|---|---|---|---|---|
| 1. | ເຮືອນໃຫຍ່ | | | | |
| 2. | ເຮືອນນ້ອຍ 1 | | | | |
| 3. | ເຮືອນນ້ອຍ 2 | | | | |
| 4. | ການນຳໃຊ້ດິນ | | | | |
| 5. | ໂຄງລ່າງ | | | | |
| 6. | ຕົ້ນໄມ້ ແລະພືນລະປູກ | | | | |
| ລວມຍ່ອຍ (I) : | | | | | |

ໝາຍເຫດ: ລາຍລະອຽດຂອງການທົດແທນຄ່າເສຍຫາຍ ສຳລັບໂຄງຮ່າງ, ພືນລະປູກ ແລະຕົ້ນໄມ້ ແມ່ນມີຕ່າງຫາກ

II. ການຊ່ວຍເຫຼືອ ແລະອຸດໜູນ

- ຄ່າຢູ່ກິນ: ______________________
- ຄ່າຂົນສົ່ງ: ______________________
- ຄ່າຝຶກອົບຮົມ: ______________________
- ຄ່າຢູ່ກິນເວລາຝຶກອົບຮົມ: ______________________
- ການສະໜັບສະໜູນອື່ນໆ
  ຍ້ອນເສຍລາຍຮັບ: ເຮັດສວນ/ຜົນຜະລິດ: ______________________
  ຮ້ານຄ້າ: ______________________
- ຊ່ວຍເຫຼືອໃນການຂະຫຍາຍການປູກຝັງ: ______________________

**ລວມຍ່ອຍ** (II) : ______________________

III. <u>ນະໂຍບາຍ ຊ່ວຍເຫຼືອພິເສດ</u>

- ແມ່ວິລະຊົນ: ______________________
- ຄອບຄົວນັກລົບ ທີ່ໄດ້ເສຍອົງຄະ ຫຼືເສຍຊີວິດ: ______________________
- ຄອບຄົວຜູ້ເຖົ້າໂດດດ່ຽວ: ______________________
- ຄອບຄົວທຸກຍາກຫຼາຍ: ______________________

**ລວມຍ່ອນ** (III) ______________________

**ລວມຍ່ອຍ** (I)+ (II)+ (III) : ______________________

IV. **<u>ຄວາມມັກຂອງ</u>** <u>ຜູ້ທີ່ຖືກກະທົບ:</u> (ຂີດວົງອ້ອມ)

1. ເປັນເງິນສົດ, ຍ້າຍເອງໄປຢູ່ບ່ອນອື່ນ, ບໍ່ເອົາ " ດິນແທນດິນ";
2. ປັບປຸງດິນທີ່ຍັງເຫຼືອ;
3. ປຸກເຮືອນເອງ ເມື່ອໄດ້ດິນໃໝ່;
4. ຢາກໄດ້ເຮືອນໃໝ່.

ທ່ານ ______________________ ສັນຍາວ່າ ພາຍຫຼັງທີ່ໄດ້ຮັບການທົດແທນຄ່າເສຍຫາຍແລ້ວ, ບໍ່ສ້າງ ຫຼືເຂົ້າຢູ່ໃນເຂດບຸກເບີກ ທີ່ຈະມອບໃຫ້ຄະນະກຳມະການຍົກຍ້າຍຈັດສັນປະຊາຊົນ ເມືອງ

ໃນວັນທີ / /

ບົດບັນທຶກດັ່ງກ່າວມີ 7 ສະບັບຕົ້ນ ແລະຈະສົ່ງໃຫ້:

- ກະຊວງຂົນສົ່ງ ແລະຄົມມະນາຄົມ 1 ສະບັບ
- ກະຊວງການເງິນ 1 ສະບັບ
- ໜ່ວຍງານຄຸ້ມຄອງ ໂຄງການ 1 ສະບັບ
- ຄະນະກຳມະການຍົກຍ້າຍຈັດສັນປະຊາຊົນ ເມືອງ 1 ສະບັບ
- ຜູ້ທີ່ຖືກກະທົບ 1 ສະບັບ

ໜ່ວຍຄຸ້ມຄອງໂຄງການ　　　　　　　　　　　　　　　ຄະນະຍົກຍ້າຍຈັດສັນປະຊາຊົນເມືອງ

ຫ້ອງການການເງິນເມືອງ　　　　　　　　　　　　　ຫົວໜ້າຄອບຄົວ/ ຜູ້ຕາງໜ້າຜູ້ທີ່ຖືກກະທົບ

## ລາຍລະອຽດຂອງການທົດແທນຄ່າເສຍຫາຍ ສໍາລັບໂຄງລ່າງ, ຜົນລະປູກ ແລະຕົ້ນໄມ້

| ລ/ດ | ປະເພດໂຄງລ່າງ ແລະຕົ້ນໄມ້ | ຫົວໜ່ວຍ | ຈໍານວນ | ອັດຕາ | ລວມ |
|---|---|---|---|---|---|
| | 1. ໂຄງລ່າງ | | | | |
| | | | | | |
| | | | | | |
| | | | | | |
| | ລວມຍ່ອຍ | | | | |
| | 2. ຜົນລະປູກ | | | | |
| | | | | | |
| | | | | | |
| | | | | | |
| | ລວມຍ່ອຍ | | | | |
| | 3. ຕົ້ນໄມ້ | | | | |
| | | | | | |
| | | | | | |
| | ລວມຍ່ອຍ | | | | |